ໂຄງການສາຍສົ່ງໄຟຟ້າແຮງສູງ 500KV ຂອງໂຄງການຜະລິດໄຟຟ້າຈາກກັງຫັນລົມ 600 ເມກາວັດ ທີ່ ເມືອງດາກຈຶງ, ແຂວງ ເຊກອງ

ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ

(ສະບັບປັບປຸງ)



ສະເໜີເຖິງ

ກົມສິ່ງແວດລ້ອມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ສະເໜີໂດຍ

ຜູ້ພັດທະນາໂຄງການ	**ບໍລິສັດທີ່ປຶກສາສິ່ງແວດລ້ອມ**
ບໍລິສັດ ອິມແພັກ ເອັນເນີຈີ ເອເຊຍ ດີວີລົບເມັ້ນ ຈຳກັດ	ບໍລິສັດ ອິນໂນກຣີນ ເອັນຈິເນຍລິ່ງ ຈຳກັດ

ຄຳສັບຫຍໍ້ ແລະ ນິຍາມຄຳສັບ

ຄຳສັບຫຍໍ້

ບປຜສ	ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ
ບສຕສ	ບົດລາຍງານສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບສິ່ງແວດລ້ອມ
ຜຄຕສ	ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ
ກຊສ	ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ກສລ	ກົມສິ່ງແວດລ້ອມ
ກຄຕມ	ກົມຄວບຄຸມ ແລະ ຕິດຕາມກວດກາມົນລະພິດ
ພຊສ	ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມນະຄອນຫຼວງ/ແຂວງ
ຫຊສ	ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ
ສພຊ	ສະພາແຫ່ງຊາດ
ລບ	ລັດຖະບານ
ສປປ ລາວ	ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ຄຄ	ຄອບຄົວ
EMU	Environmental management Unit (ໜ່ວຍງານຄຸ້ມຄອງສິ່ງແວດລ້ອມ)
UXO	ລູກລະເບີດບໍ່ທັນແຕກ
USD	ໂດລາສະຫະລັດ
GDP	ຍອດຜະລິດຕະພັນພາຍໃນ

ຫົວໜ່ວຍ

ກມ, km	ກິໂລແມັດ
ມ, m	ແມັດ
ມມ, mm	ມິນລີແມັດ
ຊມ, cm	ຊັ້ງຕີແມັດ
ຮຕ, ha	ເຮັກຕາ
ກມ^2, km^2	ກິໂລແມັດມົນທົນ
ມ^3, m^3	ແມັດກ້ອນ
m^3/min	ແມັດກ້ອນ/ນາທີ
m/s	ແມັດ/ວິນາທີ
kg	ກິໂລກຼາມ
dB(A)	ດີຊິເບລ
ກວ, KV	ກິໂລໂວນ
MW	ເມກາວັດ

<u>ຄວາມໝາຍຄຳສັບ</u>

ສິ່ງແວດລ້ອມ	ໝາຍເຖິງ ທຸກສິ່ງທຸກຢ່າງ ທີ່ມີຊີວິດ ແລະ ບໍ່ມີຊີວິດ ເຊິ່ງເກີດຂຶ້ນຕາມທຳມະຊາດ ຫຼື ຍ້ອນມະນຸດສ້າງຂຶ້ນ ທີ່ຢູ່ອ້ອມເປົ້າໝາຍໃດໜຶ່ງ ເຊັ່ນ: ຄົນ, ສັດ, ພືດ ແລະ ອື່ນໆ ທີ່ມີສາຍກ່ຽວພັນ ແລະ ສິ່ງຜົນສະທ້ອນເຊິ່ງກັນ ແລະ ກັນ ທັງທາງບວກ ແລະ ທາງລົບ ຕໍ່ການດຳລົງຊີວິດ, ການຜະລິດ, ການຄົງຕົວ, ການຂະຫຍາຍຕົວຂອງມະນຸດ ແລະ ທຳມະຊາດ. ສິ່ງແວດລ້ອມປະກອບດ້ວຍ: ສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ;
ສິ່ງແວດລ້ອມສັງຄົມ	ໝາຍເຖິງ ທຸກສິ່ງທຸກຢ່າງ ຫຼື ອົງປະກອບສິ່ງແວດລ້ອມ ທີ່ມະນຸດສ້າງຂຶ້ນ ເຊິ່ງກ່ຽວພັນ ແລະ ສິ່ງຜົນສະທ້ອນເຊິ່ງກັນ ແລະ ກັນ ທັງທາງບວກ ແລະ ທາງລົບ ຕໍ່ການດຳລົງຊີວິດ , ການຜະລິດ, ການຄົງຕົວ ແລະ ການຂະຫຍາຍຕົວ ຂອງມະນຸດ ແລະ ທຳມະຊາດ;
ສິ່ງແວດລ້ອມທຳມະຊາດ	ໝາຍເຖິງ ທຸກສິ່ງທຸກຢ່າງ ຫຼື ອົງປະກອບສິ່ງແວດລ້ອມ ທີ່ເກີດຂຶ້ນຕາມທຳມະຊາດ ເຊິ່ງມີສາຍກ່ຽວພັນ ແລະ ສິ່ງຜົນສະທ້ອນເຊິ່ງກັນ ແລະ ກັນ ທັງທາງບວກ ແລະ ທາງລົບ ຕໍ່ການດຳລົງຊີວິດ, ການຜະລິດ, ການຄົງຕົວ ແລະ ການຂະຫຍາຍຕົວ ຂອງມະນຸດ ແລະ ທຳມະຊາດ;
ຜົນກະທົບຕໍ່ ສິ່ງແວດລ້ອມ	ໝາຍເຖິງ ສິ່ງກະທົບທັງດ້ານບວກ, ດ້ານລົບ, ທາງກົງ ຫຼື ທາງອ້ອມ ໃນໄລຍະສັ້ນ ຫຼື ໄລຍະຍາວ ທີ່ເກີດຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ຕໍ່ລະບົບນິເວດ, ຊັບພະຍາກອນທຳມະຊາດ, ການປ່ຽນແປງດິນຟ້າອາກາດ, ມໍລະດົກທາງດ້ານທຳມະຊາດ, ມໍລະດົກທາງວັດທະນະທຳ, ຊີວິດ, ສຸຂະ ພາບ, ຊັບສິນ, ການດຳລົງຊີວິດ, ທີ່ຢູ່ອາໄສ ແລະ ອື່ນໆ;
ໃບຢັ້ງຢືນກ່ຽວກັບ ສິ່ງແວດລ້ອມ	ໝາຍເຖິງ ໜັງສືຢັ້ງຢືນການຮັບຮອງກ່ຽວກັບສິ່ງແວດລ້ອມ ທີ່ອອກໃຫ້ແກ່ໂຄງການລົງທຶນ ແລະ ກິດຈະການຕ່າງໆ.
ແຜນຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມ	ໝາຍເຖິງ ແຜນການທີ່ໄດ້ສັງລວມເອົາບັນດາໜ້າວຽກຕົ້ນຕໍ ດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ກຳນົດວິທີການ ແລະ ມາດຕະການປ້ອງກັນ, ຫຼຸດຜ່ອນ ແລະ ແກ້ໄຂ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ໄດ້ສຶກສາໄວ້ໃນບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ ພ້ອມທັງກຳນົດການຈັດຕັ້ງ, ຄວາມຮັບຜິດຊອບ, ຕາຕະລາງເວລາ ແລະ ງົບປະມານໃຫ້ພຽງພໍ ເພື່ອຈັດຕັ້ງປະຕິບັດແຜນການດັ່ງກ່າວ;
ການມີສ່ວນຮ່ວມ ຂອງສັງຄົມ	ໝາຍເຖິງ ການມີສ່ວນຮ່ວມຂອງສັງຄົມ ແມ່ນຂະບວນການປຶກສາຫາລື, ການສະໜອງ ຂໍ້ມູນຂ່າວສານ ແລະ ຮັບຄຳຄິດຄຳເຫັນ ຂອງທຸກພາກສ່ວນຂອງສັງຄົມ ກ່ຽວກັບ ໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນໄລຍະສ້າງ ແລະ ພິຈາລະນາບົດສຶກສາ ເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ພ້ອມທັງ ຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສິ່ງແວດລ້ອມ ໃນແຕ່ລະ

	ໄລຍະ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ເພື່ອຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ.;
ຜົນກະທົບແບບສະສົມ	ໝາຍເຖິງ ຜົນກະທົບຕໍ່ສິ່ງແວດລ້ອມ ທີ່ເກີດຂຶ້ນຢ່າງຕໍ່ເນື່ອງ, ເພີ່ມຫຼາຍຂຶ້ນ, ມີການໂຮມກັນຂອງຜົນກະທົບທັງທາງກົງ, ທາງອ້ອມ, ໄລຍະສັ້ນ ແລະ/ຫຼື ໄລຍະຍາວ ທີ່ເກີດຈາກກິດຈະກຳຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ມີໃນອະດີດ, ປະຈຸບັນ ແລະ ອະນາຄົດ ນອກຈາກຜົນກະທົບຈາກໂຄງການ ທີ່ກຳລັງສະເໜີ;
ເຈົ້າຂອງໂຄງການ	ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນ ຫຼື ຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ສຶກສາ, ສຳຫຼວດ, ອອກແບບ, ກໍ່ສ້າງ ແລະ ດຳເນີນໂຄງການລົງທຶນ ຫຼື ກິດຈະການຕ່າງໆ ຢູ່ ສປປ ລາວ;
ຜູ້ໄດ້ຮັບຜົນກະທົບ	ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ແບບຖາວອນ ຫຼື ແບບຊົ່ວຄາວ, ທາງກົງ, ທາງອ້ອມ, ໄລຍະສັ້ນ ແລະ/ຫຼື ໄລຍະຍາວ;
ຜູ້ມີສ່ວນຮ່ວມ	ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຄວາມສົນໃຈ, ມີສ່ວນກ່ຽວຂ້ອງ ຫຼື ມີຜົນໄດ້ຜົນເສຍ ໃນໂຄງການລົງທຶນ ແລະ ກິດຈະການຕ່າງໆ;
ຜົນກະທົບທາງກົງ	ໝາຍເຖິງ ຜົນກະທົບທີ່ເກີດຈາກການດຳເນີນກິດຈະກຳຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ໂດຍກົງຕໍ່ຊີວິດ, ສຸຂະພາບ, ຊັບພະຍາກອນທຳມະຊາດ, ລະບົບນິເວດ, ການສູນເສຍຊັບສິນ, ການຍ້າຍຖິ່ນຖານ, ການດຳລົງຊີວິດຂອງປະຊາຊົນ;
ຜົນກະທົບທາງອ້ອມ	ໝາຍເຖິງ ຜົນກະທົບທີ່ເກີດຈາກການດຳເນີນກິດຈະກຳຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ເຊິ່ງບໍ່ແມ່ນຜົນກະທົບທາງກົງ ເປັນຕົ້ນ: ຜົນກະທົບທາງດ້ານຈິດໃຈ, ຄວາມເຊື່ອຖື, ຮີດຄອງປະເພນີ, ສູນເສຍເວລາ ແລະ ໂອກາດໃນການທຳມາຫາກິນ, ການປ່ຽນແປງດິນຟ້າອາກາດ, ມົນລະພິດ;
ຜົນກະທົບທາງບວກ	ໝາຍເຖິງ ການເພີ່ມຄວາມສະດວກສະບາຍ ແລະ ສ້າງໂອກາດທີ່ດີໃຫ້ແກ່ປະຊາຊົນ ຜູ້ທີ່ຖືກຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ເປັນຕົ້ນ: ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງໃຫ້ດີຂຶ້ນກວ່າເກົ່າ, ການສ້າງວຽກເຮັດງານທຳ, ໂຄງລ່າງພື້ນຖານ, ລະບົບການສຶກສາ, ລະບົບສາທາລະນະສຸກ ໄດ້ຮັບການພັດທະນາ;
ຜົນກະທົບທາງລົບ	ໝາຍເຖິງ ຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ແລະ ປະຊາຊົນ ຜູ້ທີ່ຖືກຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ເປັນຕົ້ນ: ສິ່ງແວດລ້ອມເສື່ອມໂຊມ, ຊີວິດການເປັນຢູ່ຂອງປະຊາຊົນມີຄວາມທຸກຍາກລົງກວ່າເກົ່າ, ໂຄງລ່າງພື້ນຖານໄດ້ຮັບຄວາມເສຍຫາຍ;
ຂໍ້ມູນພື້ນຖານ	ໝາຍເຖິງ ສະພາບຂໍ້ມູນພື້ນຖານຂອງພື້ນທີ່ ທີ່ອາດຈະໄດ້ຮັບຜົນກະທົບຈາກໂຄງການທີ່ສະເໜີ ຊຶ່ງມີຢູ່ກ່ອນການເລີ່ມຕົ້ນໂຄງການ. ຂໍ້ມູນພື້ນຖານທີ່ມີຢູ່ ໄດ້ຖືກສ້າງຂຶ້ນກ່ອນການ ກະກຽມການກໍ່ສ້າງ, ການກໍ່ສ້າງ ແລະ ດຳເນີນງານ ຂອງໂຄງການທີ່ສະເໜີ ເພື່ອສາມາດປະເມີນ ຜົນກະທົບຕໍ່ສິ່ງແວດລ້ອມ;
ການຊົດເຊີຍ ແລະ ທົດແທນ	ໝາຍເຖິງການທົດແທນ ຫຼື ຊົດເຊີຍ ເປັນທີ່ດິນ, ວັດຖຸ ຫຼື ເປັນເງິນ ສຳລັບທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ, ສັດລ້ຽງ ແລະ ລາຍຮັບ ທີ່ໄດ້ຮັບຜົນກະທົບຈາກໂຄງການ

ການເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບ ໂຄງການ	ໝາຍເຖິງ ປະຊາຊົນ ໄດ້ຮັບຄວາມຮູ້ ຢ່າງເຕັມສ່ວນ ກ່ຽວກັບ ໂຄງການ ແລະ ຜົນກະທົບ ແລະ ຜົນຮັບຕາມມາ ຂອງໂຄງການ;
ການເວນຄືນທີ່ດິນ	ໝາຍເຖິງ ຂະບວນການ ເຊິ່ງວ່າ ບຸກຄົນໜຶ່ງ ໄດ້ສູນເສຍທີ່ດິນ ທັງໝົດ ຫຼື ສ່ວນໜຶ່ງ ທີ່ຕົນເປັນເຈົ້າຂອງ ຫຼື ຄອບຄອງ ໃຫ້ຜູ້ພັດທະນາໂຄງການ ໂດຍມີການຫົດແທນຄືນ;
ການຍັບຍ້າຍ	ໝາຍເຖິງ ການຍົກຍ້າຍປະຊາຊົນ ອອກຈາກເຂດທີ່ຢູ່ອາໄສເດີມ ໄປເຂດໃກ້ຄຽງ ທີ່ພົ້ນຈາກພື້ນທີ່ ໄດ້ຮັບຜົນກະທົບຈາກໂຄງການ;
ກຸ່ມຄົນທີ່ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້	ແມ່ນກຸ່ມຄົນສະເພາະ ຜູ້ທີ່ອາດໄດ້ຮັບຜົນກະທົບ ບໍ່ເຕັມສ່ວນ ຫຼື ປະເຊີນກັບຄວາມສ່ຽງ ທີ່ຈະຖືກປ່ອຍປະໃຫ້ໂດດດ່ຽວ ຈາກຜົນກະທົບ ຂອງການຍົກຍ້າຍຈັດສັນ ເຊິ່ງລວມມີສະເພາະ: (1) ຄົວເຮືອນ ທີ່ມີຫົວໜ້າຄອບຄົວ ເປັນຜູ້ຍິງ, ຜູ້ເຖົ້າ ຫຼື ຄົນພິການ, (2) ຊີວິດການເປັນຢູ່ຂອງຄົວເຮືອນ ຕ່ຳກວ່າມາດຕະຖານຄວາມທຸກຍາກ; (3) ບໍ່ມີທີ່ດິນ; ແລະ (4) ກຸ່ມຊົນເຜົ່າ;
ຄົວເຮືອນ	ໝາຍເຖິງ ບຸກຄົນທັງໝົດ ທີ່ອາໄສ ແລະ ກິນຢູ່ຮ່ວມກັນ ເປັນຫົວໜ່ວຍສັງຄົມໜຶ່ງ;
ຜົນກະທົບຕໍ່ຊີວິດການເປັນຢູ່ ຫຼື ຜົນກະທົບຕໍ່ເສດຖະກິດ	ໝາຍເຖິງການສູນເສຍ ລາຍຮັບ ທີ່ເກີດຈາກຊັບສິນ ຫຼື ການເຂົ້າເຖິງ ລາຍຮັບ ທີ່ເກີດຈາກຊັບສິນ; ການສູນເສຍ ແຫຼ່ງລາຍຮັບ ຫຼື ຊີວິດການເປັນຢູ່, ເຖິງແມ່ນວ່າ ຜູ້ທີ່ໄດ້ຮັບຜົນກະທົບ ຕ້ອງໄດ້ຍົກຍ້າຍ ໄປສະຖານທີ່ອື່ນ ຫຼືບໍ່ ແລະ ລວມເອົາ ການສູນເສຍ ຫຼື ການຈຳກັດ ການເຂົ້າເຖິງ ເຂດພັດທະນາໂຄງການ ທີ່ເປັນສາເຫດ ໃຫ້ເກີດຜົນກະທົບຕໍ່ຊີວິດການເປັນຢູ່ ຂອງຜູ້ທີ່ໄດ້ຮັບຜົນກະທົບ;
ມູນຄ່າປ່ຽນແທນ	ໝາຍເຖິງມູນຄ່າທີ່ຄິດໄລ່ເປັນ ວັດຖຸ, ເງິນ ຫຼືທີ່ດິນທີ່ຈຳເປັນຕ້ອງນຳໃຊ້ເພື່ອປ່ຽນແທນ ທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ, ສັດລ້ຽງ ແລະ ລາຍຮັບທີ່ໄດ້ຮັບຜົນກະທົບຈາກໂຄງການ.

ສາລະບານ

ຄຳສັບຫຍໍ້ ແລະ ນິຍາມຄຳສັບ.....i
ສາລະບານ..... v
ສາລະບານຕາຕະລາງ..... xi
ສາລະບານຮູບພາບ..... xii
ພາກທີ 1 ພາບລວມຂອງໂຄງການ.....1-1
1.1 ການນຳສະເໜີຄວາມເປັນມາຂອງໂຄງການ.....1-1
1.2 ໂຄງການພັດທະນາ ແລະ ການສຶກສາດ້ານສິ່ງແວດລ້ອມ.....1-2
1.3 ຈຸດປະສົງ ແລະ ຂອບເຂດຂອງການປະເມີນຜົນກະທົບດ້ານສິ່ງແວດລ້ອມ.....1-2
1.4 ລາຍລະອຽດ ກ່ຽວກັບ ເຈົ້າຂອງໂຄງການ ແລະ ທີ່ປຶກສາດ້ານສິ່ງແວດລ້ອມ ທີ່ສ້າງ ບົດປະເມີນຜົນ ກະທົບຕໍ່ສິ່ງແວດລ້ອມແບບລະອຽດ.....1-3
1.4.1 ຜູ້ພັດທະນາໂຄງການ.....1-3
1.4.2 ບໍລິສັດທີ່ປຶກສາສິ່ງແວດລ້ອມ.....1-3
1.5 ຂໍ້ຜູກມັດຕໍ່ເຈົ້າຂອງໂຄງການ.....1-4
1.5.1 ໜ້າທີ່ຮັບຜິດຊອບຂອງບໍລິສັດ.....1-4
1.5.2 ຄວາມຮັບຜິດຊອບຂອງໂຄງການຕໍ່ ບປຜສ.....1-5
1.6 ໂຄງຮ່າງຂອງ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ.....1-6
ພາກທີ 2 ນະໂຍບາຍ, ກົດໝາຍ ທີ່ກ່ຽວຂ້ອງ.....2-1
2.1 ນະໂຍບາຍດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງເຈົ້າຂອງໂຄງການ.....2-1
2.2 ກົດໝາຍ ແລະ ລະບຽບການ.....2-2
2.2.1 ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ເລກທີ 29/ສພຊ, ປີ2012).....2-3
2.2.2 ກົດໝາຍວ່າດ້ວຍໄຟຟ້າ (ສະບັບປັບປຸງ ເລກທີ 19/ສພຊ, ປີ 2017).....2-4
2.2.3 ກົດໝາຍວ່າດ້ວຍທີ່ດິນ (ເລກທີ 07/ສພຊ 2019).....2-5
2.2.4 ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງເລກທີ 64/ສພຊ 2019).....2-6
2.2.5 ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ, ສະບັບປັບປຸງ (2017).....2-6
2.2.6 ກົດໝາຍວ່າດ້ວຍການກໍ່ສ້າງ (05/ສພຊ, 2009).....2-7
2.2.7 ກົດໝາຍວ່າດ້ວຍ ການອະນາໄມ ແລະ ສິ່ງເສີມສຸຂະພາບ (ເລກທີ 73/ສພຊ, 2019).....2-7
2.2.8 ກົດໝາຍວ່າດ້ວຍແຮງງານ (ເລກທີ 021/ສພຊ, 2013).....2-8
2.2.9 ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ (ເລກທີ 07/ສພຊ, 2008).....2-9
2.2.10 ກົດໝາຍວ່າດ້ວຍການຂົນສົ່ງທາງບົກ (ເລກທີ 036/ສພຊ, 2012).....2-9
2.2.11 ກົດໝາຍວ່າດ້ວຍການສົ່ງເສີມລົງທຶນພາຍໃນ ແລະ ຕ່າງປະເທດ (02/ສພຊ, 2009).....2-10
2.3 ສັນຍາ ແລະ ສົນທິສັນຍາສາກົນ ທີ່ຕິດພັນກັບຜົນກະທົບຂອງການໂຄງການ.....2-10
2.3.1 ສົນທິສັນຍາສະຫະປະຊາຊາດກ່ຽວກັບຊີວະນາໆພັນ (1996).....2-10
2.3.2 ສົນທິສັນຍາໄພແຫ້ງແລ້ງ.....2-10
2.3.3 ສົນທິສັນຍາກ່ຽວກັບການປ່ຽນແປງດິນຟ້າອາກາດ.....2-10

2.4 ໂຄງຮ່າງການຈັດຕັ້ງຂອງ ລັດຖະບານ ສປປ ລາວ 2–11
2.4.1 ກົມ ແລະ ກະຊວງກ່ຽວຂ້ອງ 2–11
2.4.2 ອົງການຈັດຕັ້ງລັດຖະບານ 2–11
2.5 ດຳລັດ, ນະໂຍບາຍ, ບົດແນະນຳວິຊາການ ແລະ ມາດຕະຖານສາກົນ 2–13
2.5.1 ຂໍ້ຕົກລົງ (ເລກທີ 8056/ກຊສ, ລົງວັນທີ 17 ທັນວາ 2013). 2–13
2.5.2 ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (ເລກທີ 21/ລບ, 2019) 2–13
2.5.3 ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ (84/ລບ, 2016) 2–14
2.5.4 ມາດຕະຖານເຕັກນິກໄຟຟ້າ 052/ອຫ ລົງວັນທີ 12 ກຸມພາ 2004 2–15
2.5.5 ຂໍ້ຕົກລົງ (ເລກທີ 707/ກຊສ ລົງວັນທີ 5/12/2013) 2–15
2.5.6 ຂໍ້ຕົກລົງວ່າດ້ວຍມາດຕະຖານສິ່ງແວດລ້ອມແຫ່ງຊາດ, ສະບັບປັບປຸງໃໝ່ (81/ລບ, 2017) 2–16
2.5.7 ດຳລັດວ່າດ້ວຍການເຊົ່າ ຫຼື ໃຫ້ສຳປະທານດິນລັດ (ເລກທີ 135/ນຍ, 2009) 2–16
2.5.8 ນະໂຍບາຍການປ້ອງກັນຂອງ ADB (ADB Safeguard Policy Statement) 2–17
2.5.9 ມາດຕະຖານຂອງ IFC (ສະບັບປັບປຸງ, ປີ 2012) 2–18
2.5.1 ມາດຕະຖານຂອງ ISO 14001 2–19
ພາກທີ 3 ລາຍລະອຽດຂອງໂຄງການ 3–1
3.1 ນຳສະເໜີ ໂຄງການ 3–1
3.1.1 ຄວາມເປັນມາ ແລະ ເຫດຜົນ ຂອງໂຄງການ 3–1
3.1.2 ທີ່ຕັ້ງໂຄງການ 3–1
3.2 ທາງເລືອກຂອງໂຄງການ 3–4
3.2.1 ວິທີການ 3–4
3.2.2 ການປຽບທຽບ ແລະ ການຄັດເລືອກ ຂອງທາງເລືອກ 3–4
3.2.3 ການອະທິບາຍທາງເລືອກທີ່ໄດ້ຄັດເລືອກ 3–5
3.3 ການອອກແບບລາຍລະອຽດ 3–5
3.3.1 ລັກສະນະຂອງສາຍສົ່ງ 3–5
3.3.1.1 ເສົາໄຟຟ້າແຮງສູງ 3–6
3.3.1.2 ສາຍສົ່ງໄຟຟ້າແຮງສູງ 3–7
3.3.1.3 ດອກກັນໄຟຟ້າຊອດ ຫຼື ລູກຖ້ວຍ (Insulators) 3–7
3.3.2 ຄາດຄະເນວັດຖຸ ແລະ ອຸປະກອນທີ່ໃຊ້ 3–7
3.3.3 ແຮງງານຂອງໂຄງການ 3–8
3.3.4 ເຂດເກັບມ້ຽນວັດສະດຸ ແລະ ແຄ້ມພັກທຳມະກອນ 3–8
3.3.5 ເສັ້ນທາງການຂົນສົ່ງ 3–8
3.4 ກິດຈະກຳຂອງໂຄງການ 3–9
ພາກທີ 4 ການອະທິບາຍດ້ານສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ 4–1
4.1 ຂໍ້ກຳນົດຂໍ້ຈຳກັດການສຶກສາ 4–1
4.2 ວິທີການເກັບກຳຂໍ້ມູນ 4–1
4.3 ອົງປະກອບທາງກາຍຍະພາບ 4–1

4.3.1 ສະພາບອາກາດ/ອຸຕຸນິຍົມ....4-2
4.3.2 ພູມສັນຖານ....4-3
4.3.3 ທໍລະນີສາດ/ແຜ່ນດິນໄຫວ....4-5
4.3.4 ດິນ....4-6
4.3.5 ໄພທຳມະຊາດ....4-6
4.3.6 ການເຊາະເຈື່ອນ ແລະ ການຕົກຕະກອນ....4-7
4.3.7 ຊັບພະຍາກອນແຮ່ທາດ....4-7
4.3.8 ສຽງ ແລະ ການສັ່ນສະເທືອນ....4-8
4.4 ອົງປະກອບທາງຊີວະພາບ....4-9
4.4.1 ນິເວດວິທະຍາເທິງບົກ/ສັດປ່າ....4-9
4.4.2 ປ່າໄມ້ ແລະ ການປົກຄຸມຂອງພືດພັນ....4-13
4.4.3 ພື້ນທີ່ຊຸ່ມນ້ຳ....4-13
4.4.4 ປ່າສະຫງວນ-ພື້ນທີ່ປ້ອງກັນ....4-14
4.5 ອົງປະກອບທາງເສດຖະກິດ-ສັງຄົມ....4-15
4.5.1 ອົງການປົກຄອງ ແລະ ຂໍ້ຈຳກັດ....4-15
4.5.2 ການນຳໃຊ້ທີ່ດິນ....4-17
4.5.2.1 ການນຳໃຊ້ທີ່ດິນໃນເຂດແລວສາຍສົ່ງ....4-18
4.5.3 ຂໍ້ມູນທາງສັງຄົມ....4-21
4.5.3.1 ຊຸມຊົນ ແລະ ປະຊາກອນ....4-24
4.5.3.2 ຊົນເຜົ່າ ແລະ ສາສະໜາ....4-25
4.5.3.3 ການສຶກສາ....4-25
4.5.3.4 ຄອບຄົວທຸກຍາກ ແລະ ກຸ່ມທີ່ມີຄວາມສ່ຽງ....4-26
4.5.3.5 ສະຖານະພາບຍິງ-ຊາຍ....4-27
4.5.3.6 ອົງການຈັດຕັ້ງທາງສັງຄົມ ແລະ ການເມືອງ....4-28
4.5.4 ຂໍ້ມູນດ້ານສຸຂະພາບ....4-28
4.5.4.1 ສະພາບທາງດ້ານສາທາລະນະສຸກຂອງເມືອງ....4-29
4.5.4.2 ສະພາບທາງດ້ານສາທາລະນະສຸກໃນເຂດພື້ນທີ່ໂຄງການ....4-29
4.5.5 ຂໍ້ມູນທາງເສດຖະກິດ....4-31
4.5.5.1 ການຈ້າງງານໃນທ້ອງຖິ່ນ....4-31
4.5.5.2 ລາຍໄດ້ຂອງຄົວເຮືອນ....4-31
4.5.5.3 ຄ່າຄອງຊີບ....4-32
4.5.5.4 ສິດການເປັນເຈົ້າຂອງທີ່ດິນ....4-32
4.5.5.5 ທຸລະກິດທ້ອງຖິ່ນ....4-32
4.5.5.6 ກິດຈະກຳການຜະລິດ....4-33
4.5.6 ສິ່ງອຳນວຍຄວາມສະດວກໂຄງລ່າງພື້ນຖານ....4-34
4.5.6.1 ຖະໜົນຫົນທາງ....4-35

4.5.6.2 ການເດີນເຮືອ ແລະ ທ່າເຮືອ 4–36
4.5.6.3 ສະໜາມບິນ 4–36
4.5.6.4 ສາຍສົ່ງໄຟຟ້າ 4–37
4.5.6.5 ທໍ່ສົ່ງ 4–37
4.5.6.6 ໂຮງໝໍ ແລະ ສຸກສາລາ 4–37
4.5.6.7 ໂຮງຮຽນ ແລະ ສູນກາງການສຶກສາ 4–37
4.5.6.8 ວັດ ແລະ ສຸສານ (ປ່າຊ້າ) 4–37
4.5.7 ແຫຼ່ງນ້ຳ, ການນຳໃຊ້ ແລະ ການສະໜອງ 4–37
4.5.8 ການຈັດການຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ 4–38
4.5.9 ແຫຼ່ງພະລັງງານ, ການນຳໃຊ້ ແລະ ການສະໜອງ 4–38
4.5.10 ລະເບີດບໍ່ທັນແຕກ 4–39
4.6 ອົງປະກອບທາງວັດທະນະທຳ 4–40
4.6.1 ສະຖານທີ່ທາງປະຫວັດສາດ ແລະ ທາງວັດທະນະທຳ 4–40
4.7 ທັດສະນີຍະພາບສັນຖານ ແລະ ຈຸດທີ່ໜ້າສົນໃຈ 4–41
4.8 ການສ້າງແຜນທີ່ 4–41
ພາກທີ 5 ການປະເມີນຜົນກະທົບ ແລະ ມາດຕະການຫຼຸດຜ່ອນ 5–1
5.1 ວິທີການປະເມີນຜົນກະທົບ 5–1
5.2 ຂອບເຂດຂອງການປະເມີນ 5–3
5.3 ຜົນກະທົບທາງດ້ານກາຍຍະພາບ 5–3
5.3.1 ສະພາບອາກາດ/ອຸຕຸນິຍົມ 5–3
5.3.2 ພູມສັນຖານ 5–5
5.3.3 ອຸທົກກະສາດ ແຫຼ່ງນ້ຳ 5–6
5.3.4 ການເຊາະເຈື່ອນ ແລະ ການຕົກຕະກອນ 5–7
5.3.5 ຄຸນນະພາບນ້ຳ 5–9
5.3.6 ຊັບພະຍາກອນແຮ່ທາດ 5–10
5.3.7 ສຽງ ແລະ ການສັ່ນສະເທືອນ 5–11
5.3.8 ຄຸນນະພາບອາກາດ 5–12
5.4 ຜົນກະທົບທາງດ້ານຊີວະພາບ 5–14
5.4.1 ປ່າໄມ້ 5–14
5.4.2 ສັດປ່າ 5–15
5.4.3 ສັດນ້ຳ ແລະ ສິ່ງອາໄສໃນນ້ຳ 5–17
5.4.4 ພື້ນທີ່ສະຫງວນ - ປ້ອງກັນ 5–18
5.5 ການປະເມີນຜົນກະທົບດ້ານເສດຖະກິດ-ສັງຄົມ ແລະ ວັດທະນະທຳ 5–19
5.5.1 ການນຳໃຊ້ທີ່ດິນ 5–19
5.5.2 ການປະເມີນຜົນກະທົບດ້ານສັງຄົມ 5–23
5.5.2.1 ຊຸມຊົນ ແລະ ປະຊາກອນ 5–23

5.5.2.2 ການເວນຄືນທີ່ດິນ ແລະ ຊັບສິນຂອງປະຊາຊົນ 5–25
5.5.2.3 ຊົນເຜົ່າ ແລະ ສາສະໜາ 5–26
5.5.2.4 ການສຶກສາ 5–28
5.5.2.5 ຄອບຄົວທຸກຍາກ ແລະ ກຸ່ມຄວາມສ່ຽງ 5–29
5.5.2.6 ສະຖານະບົດບາດຍິງ-ຊາຍ 5–29
5.5.3 ການປະເມີນຜົນກະທົບດ້ານສຸຂະພາບ 5–30
5.5.3.1 ດ້ານສາທາລະນະສຸກເຂດພື້ນທີ່ໂຄງການ 5–30
5.5.3.2 ສຸຂະພາບ ແລະ ຄວາມປອດໄພ 5–31
5.5.4 ການປະເມີນທາງດ້ານເສດຖະກິດ 5–33
5.5.4.1 ການຈ້າງງານ ແລະ ລາຍໄດ້ຂອງຄົວເຮືອນ 5–33
5.5.4.2 ທຸລະກິດທ້ອງຖິ່ນ 5–34
5.5.4.3 ກິດຈະກຳການຜະລິດ 5–35
5.5.5 ການປະເມີນຜົນກະທົບຕໍ່ສິ່ງອຳນວຍຄວາມສະດວກໂຄງລ່າງພື້ນຖານ 5–35
5.5.6 ແຫຼ່ງນ້ຳ, ການນຳໃຊ້ ແລະ ການສະໜອງ 5–36
5.5.7 ແຫຼ່ງພະລັງງານ, ການນຳໃຊ້ ແລະ ການສະໜອງ 5–37
5.5.8 ການຈັດການຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ 5–38
5.5.9 ລະເບີດບໍ່ທັນແຕກ 5–39
5.5.10 ສະຖານທີ່ທາງປະຫວັດສາດ ແລະ ວັດທະນະທຳ 5–40
5.5.11 ທັດສະນີຍາພາບ 5–42
5.6 ການມີສ່ວນຮ່ວມຂອງຊຸມຊົນ 5–43
5.7 ສັງລວມຜົນກະທົບ ແລະ ມາດຕະການຫຼຸດຜ່ອນ 5–44
ພາກທີ 6 ແຜນການຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມ 6–1
6.1 ເນື້ອໃນແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ 6–1
ພາກທີ 7 ການປຶກສາຫາລື ແລະ ມີສ່ວນຮ່ວມ 7–1
7.1 ພາກສະເໜີ 7–1
7.2 ຈຸດປະສົງຂອງການມີສ່ວນຮ່ວມຂອງມວນຊົນ 7–1
7.3 ຂໍ້ກຳນົດ ຂອງ ສປປ ລາວ 7–2
7.4 ຂັ້ນຕອນ ແລະ ວິທີການ 7–3
7.4.1 ການມີສ່ວນຮ່ວມຂອງສັງຄົມ ໃນໄລຍະກະກຽມ ແລະ ວາງແຜນໂຄງການ 7–3
7.4.2 ການມີສ່ວນຮ່ວມຂອງສັງຄົມ ໃນໄລຍະກໍ່ສ້າງ ແລະ ດຳເນີນໂຄງການ 7–4
7.4.3 ວິທີການ ແລະ ແນວທາງ 7–4
7.5 ການກຳນົດຜູ້ມີສ່ວນຮ່ວມ ແລະ ກຸ່ມຄົນຜູ້ໄດ້ຮັບຜົນກະທົບ 7–5
7.6 ຜົນຂອງການຈັດກອງປະຊຸມປຶກສາຫາລື 7–6
7.6.1 ການເຜີຍແຜ່ຂໍ້ມູນ ແລະ ປຶກສາຫາລືຂັ້ນບ້ານ 7–6
7.6.2 ກອງປະຊຸມປຶກສາຫາລືຂັ້ນເມືອງ ແລະ ຂັ້ນວິຊາການ 7–8
7.6.3 ກອງປະຊຸມປຶກສາຫາລືຂັ້ນແຂວງ/ສູນກາງ 7–14

7.7 ການເປີດເຜີຍຂໍ້ມູນ 7-14
7.8 ກົນໄກການຮ້ອງທຸກ ແລະ ການແກ້ໄຂຂໍ້ຮ້ອງທຸກ 7-15
ພາກທີ 8 ສະຫຼຸບ ແລະ ຄຳແນະນຳ 8-1
8.1 ສະຫຼຸບ 8-1
8.2 ຄຳແນະນຳ 8-3

ສາລະບານຕາຕະລາງ

ຕາຕະລາງ 2-1: ກົດໝາຍ ແລະ ລະບຽບການ 2-2
ຕາຕະລາງ 3-1: ຕຳແໜ່ງທີ່ຕັ້ງເສົາສາຍສົ່ງໄຟຟ້າ 3-1
ຕາຕະລາງ 3-2: ລັກສະນະຂອງສາຍສົ່ງ 3-6
ຕາຕະລາງ 3-3: ແຜນການດຳເນີນງານແຕ່ລະກິດຈະກຳ 3-9
ຕາຕະລາງ 4-1: ອຸນຫະພູມສະເລ່ຍໃນເຂດພື້ນທີ່ໂຄງການ ສະຖານີ ເມືອງດາກຈຶງ (ຫົວໜ່ວຍ ° C) 4-2
ຕາຕະລາງ 4-2: ປະລິມານນ້ຳຝົນແຕ່ລະປີໃນເຂດພື້ນທີ່ໂຄງການ (mm) 4-3
ຕາຕະລາງ 4-3: ຜົນການວັດແທກຄຸນນະພາບສຽງໃນເຂດພື້ນທີ່ໂຄງການ 4-8
ຕາຕະລາງ 4-4: ປະເພດສັດປ່າທີ່ມັກພົບເຫັນໃນເຂດພື້ນທີ່ ແລະ ອ້ອມຂ້າງໂຄງການ 4-11
ຕາຕະລາງ 4-5: ແລວສາຍສົ່ງທີ່ຜ່ານເຂດປ່າປ້ອງກັນແຫ່ງຊາດ 4-14
ຕາຕະລາງ 4-6: ໂຄງປະກອບຂອງການປົກຄອງ 4-16
ຕາຕະລາງ 4-7: ການນຳໃຊ້ທີ່ດິນໃນເຂດພື້ນທີ່ໂຄງການ 4-17
ຕາຕະລາງ 4-8: ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ເຂດເສົາສາຍສົ່ງໄຟຟ້າ 4-18
ຕາຕະລາງ 4-9: ເນື້ອທີ່ປ່າໄມ້ ແລະ ດິນນຳໃຊ້ຕາມຂອບເຂດແລວສາຍສົ່ງ 70 ແມັດ 4-20
ຕາຕະລາງ 4-10: ວິທີການເກັບກຳຂໍ້ມູນທາງສັງຄົມ 4-21
ຕາຕະລາງ 4-11: ປະເພດຂໍ້ມູນທາງດ້ານ ເສດຖະກິດ-ສັງຄົມ ແລະ ວັດທະນາທຳທີ່ໄດ້ເກັບກຳ 4-22
ຕາຕະລາງ 4-12: ຈຳນວນປະຊາກອນໃນແຕ່ລະບ້ານເຂດພື້ນທີ່ໂຄງການ 4-24
ຕາຕະລາງ 4-13: ກຸ່ມຊົນເຜົ່າໃນບັນດາບ້ານເຂດໂຄງການ 4-25
ຕາຕະລາງ 4-14: ການສຶກສາໃນເຂດພື້ນທີ່ໂຄງການ 4-25
ຕາຕະລາງ 4-15: ຈຳນວນຄອບຄົວທີ່ທຸກຍາກໃນແຕ່ລະບ້ານ 4-27
ຕາຕະລາງ 4-16: ການນຳໃຊ້ວິດຖ່າຍໃນແຕ່ລະບ້ານເຂດໂຄງການ 4-30
ຕາຕະລາງ 4-17: ຈຳນວນສັດລ້ຽງຂອງປະຊາຊົນໃນເຂດພື້ນທີ່ໂຄງການ 4-34
ຕາຕະລາງ 4-18: ສິ່ງອຳນວຍຄວາມສະດວກໂຄງລ່າງພື້ນຖານຂອງແຕ່ລະບ້ານ 4-35
ຕາຕະລາງ 4-19: ການນຳໃຊ້ໄຟຟ້າໃນບັນດາບ້ານເຂດພື້ນທີ່ໂຄງການ 4-38
ຕາຕະລາງ 5-1: ຕາຕະລາງ ຄະແນນຊີ້ບອກລະດັບຜົນກະທົບ 5-2
ຕາຕະລາງ 5-2: ການຈັດແບ່ງລະດັບຄວາມສ່ຽງຂອງຜົນກະທົບ 5-2
ຕາຕະລາງ 5-3: ຜົນກະທົບຕໍ່ການນຳໃຊ້ທີ່ດິນ ແລະ ປ່າໄມ້ເຂດຕີນເສົາສາຍສົ່ງໄຟຟ້າ 5-20
ຕາຕະລາງ 5-4: ຜົນກະທົບຕໍ່ເນື້ອທີ່ປ່າໄມ້ ແລະ ດິນນຳໃຊ້ຕາມຂອບເຂດແລວສາຍສົ່ງ 70 ແມັດ 5-21
ຕາຕະລາງ 5-5: ຈຳນວນຄອບຄົວທີ່ຖືກຜົນກະທົບ 5-25
ຕາຕະລາງ 5-6: ສັງລວມຜົນກະທົບ ແລະ ມາດຕະການຫຼຸດຜ່ອນທີ່ສຳຄັນ 5-46
ຕາຕະລາງ 5-7: ລາຍລະອຽດຂອງຜົນກະທົບຕາມແລວສາຍສົ່ງ ແລະ ຕີນເສົາ 5-72
ຕາຕະລາງ 7-1: ຄວາມຄິດເຫັນ ແລະ ຂໍ້ສະເໜີຂອງແຕ່ລະບ້ານ 7-7

ສາລະບານຮູບພາບ

ຮູບທີ 3-1: ແຜນທີ່ສະແດງທີ່ຕັ້ງຂອງໂຄງການ 3-3
ຮູບທີ 3-2: ແຜນທີ່ປຽບທຽບແລວທາງເລືອກຂອງໂຄງການ 3-5
ຮູບທີ 3-3: ເຂດເກັບມ້ຽນວັດສະດຸ ແລະ ແຄ້ມພັກກຳມະກອນຮັບໃຊ້ໂຄງການສາຍສົ່ງ 3-8
ຮູບທີ 4-1: ສະພາບລັກສະນະພູມສັນຖານຂອງເມືອງດາກຈຶງ 4-4
ຮູບທີ 4-2: ແຜນທີ່ສະແດງຂໍ້ມູນກ່ຽວກັບວົງແຫວນໄຟ ແລະ ການເກີດແຜນດິນໄຫວ 4-5
ຮູບທີ 4-3: ການເຊາະເຈື່ອນຕາມແຄມນ້ຳ 4-7
ຮູບທີ 4-4: ເສັ້ນສະແດງລະດັບສຽງນັນ 4-9
ຮູບທີ 4-5: ແຜນທີ່ສະແດງ 3 ປະເພດປ່າໃນເຂດໂຄງການ 4-15
ຮູບທີ 4-6: ການຕັ້ງຖິ່ນຖານໃນເຂດພື້ນທີ່ໂຄງການ 4-24
ຮູບທີ 4-7: ສະພາບການສຶກສາໃນເຂດພື້ນທີ່ໂຄງການ 4-26
ຮູບທີ 4-8: ການນຳໃຊ້ນ້ຳຂອງບ້ານເຂດໂຄງການ 4-30
ຮູບທີ 4-9: ທຸລະກິດທ້ອງຖິ່ນໃນເຂດພື້ນທີ່ໂຄງການ 4-33
ຮູບທີ 4-10: ການກະສິກຳໃນເຂດພື້ນທີ່ໂຄງການ 4-33
ຮູບທີ 4-11: ການລ້ຽງສັດໃນເຂດພື້ນທີ່ໂຄງການ 4-34
ຮູບທີ 4-12: ສະພາບເສັ້ນທາງຂອງບ້ານໃນເຂດພື້ນທີ່ໂຄງການ 4-36
ຮູບທີ 4-13: ແຜນທີ່ສະແດງຈຸດຖິ້ມລະເບີດ ຂອງແຂວງເຊກອງ 4-40
ຮູບທີ 4-14: ທັດສະນີຍະພາບໃນເຂດພື້ນທີ່ໂຄງການ 4-41
ຮູບທີ 5-1: ແຜນທີ່ການນຳໃຊ້ທີ່ດິນ 5-71
ຮູບທີ 7-1: ການປຶກສາຫາລືຂັ້ນບ້ານ ກັນຍາ 2020 7-8
ຮູບທີ 7-2: ການສຳຫຼວດພາກສະໜາມເຂດທີ່ຈະວາງແຜນກໍ່ສ້າງ ສະຖານີສາຍສົ່ງ 7-11
ຮູບທີ 7-3: ກອງປະຊຸມປຶກສາຫາລື ຂັ້ນເມືອງ ແລະ ຂັ້ນວິຊາການ ເພື່ອຜ່ານບົດລາຍງານຂອງ 7-12
ຮູບທີ 7-4: ແຜນວາດຂະບວນການໄກ່ເກ່ຍ ແລະ ແກ້ໄຂຂໍ້ຮ້ອງທຸກ 7-16

ພາກທີ 1 ພາບລວມຂອງໂຄງການ

1.1 ການນຳສະເໜີຄວາມເປັນມາຂອງໂຄງການ

ສະພາບການຂອງໂລກໃນປັດຈຸບັນບັນດາກິດຈະກຳຕ່າງໆ ຂອງມະນຸດ ໄດ້ເຮັດໃຫ້ເກີດທາດອາຍພິດເຮືອນແກ້ວ ເພີ່ມຂຶ້ນເປັນຈຳນວນຫຼາຍ ສິ່ງຜົນເຮັດໃຫ້ຊັ້ນບັນຍາກາດມີຄວາມສາມາດ ໃນການເກັບລັງສີຄວາມຮ້ອນຫຼາຍຂຶ້ນ. ດັ່ງນັ້ນ, ກາສຄາບອນໄດອີກໄຊ (CO2) ຈຶ່ງເປັນປັດໃຈສຳຄັນເຮັດໃຫ້ເກີດພາວະໂລກຮ້ອນ ເຮັດໃຫ້ໃນຫຼາຍໆ ປະເທດໄດ້ມີການຫາພະລັງງານແບບໃໝ່ຂຶ້ນມາທົດແທນພະລັງງານງານຈາກເຊື້ອໄຟຟອສຊິວ (Fossil) ໄດ້ແກ່: ພະລັງງານທົດແທນ (Renewable Energy) ເຊິ່ງເປັນພະລັງງານທີ່ໃຊ້ແລ້ວບໍ່ໝົດໄປ ສາມາດນຳເອົາມາໃຊ້ຄືນໃໝ່ ໄດ້ ແລະ ມີຜົນກະທົບຕໍ່ສິ່ງແວດລ້ອມໜ້ອຍໃນປັດຈຸບັນ ອີກຢ່າງໜຶ່ງພະລັງງານເຫຼົ່ານີ້ເປັນພະລັງງານທີ່ສະອາດ ແລະ ບໍ່ກໍ່ໃຫ້ເກີດມົນລະພິດ ເຊັ່ນ: ພະລັງງານແສງອາທິດ, ພະລັງງານລົມ ແລະ ພະລັງງານນ້ຳ.

ລັດຖະບານແຫ່ງ ສປປ ລາວ ໄດ້ວາງນະໂຍບາຍດ້ານພະລັງງານ, ການສົ່ງເສີມຂີດຄວາມສາມາດໃນການສະໜອງ ແລະ ຄວາມໝັ້ນຄົງທາງດ້ານພະລັງງານ ເພື່ອແນ່ໃສ່ເຮັດໃຫ້ເສດຖະກິດ ແລະ ສັງຄົມ ຂອງປະເທດມີການ ຂະຫຍາຍຕົວຢ່າງໄວວາ ແລະ ໝັ້ນຄົງ, ການສົ່ງອອກກະແສໄຟຟ້າ ແລະ ປັບປຸງເງື່ອນໄຂການດຳລົງຊີວິດຂອງ ປະຊາຊົນລາວ ໃຫ້ມີຊີວິດການເປັນຢູ່ທີ່ດີຂຶ້ນ. ໃນໄລຍະທີ່ຜ່ານມາ ລັດຖະບານແຫ່ງ ສປປ ລາວ ໄດ້ມີນະໂຍບາຍ ເພື່ອສົ່ງເສີມໃຫ້ມີການລົງທຶນ ໃນໂຄງການດ້ານພະລັງງານໄຟຟ້າຕ່າງໆ, ໂດຍນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ແລະ ລາຍບຸກຄົນ ເພື່ອເຮັດໃຫ້ການພັດທະນາດ້ານທ່າແຮງກ່ຽວກັບພະລັງງານໃນປະເທດລາວ ໃຫ້ ເກີດຜົນປະໂຫຍດສູງສຸດ ແລະ ຍືຍງຕາມທິດສີຂຽວ.

ອີງໃສ່ນະໂຍບາຍທາງດ້ານພະລັງງານຂອງ ລັດຖະບານ ທີ່ກ່າວມາຂ້າງເທິງ ບໍລິສັດ ອິມແພັກ ເອັນເນີຈີ ເອເຊຍ ດີວີ ລັບເມັ້ນ ຈຳກັດ (Impact Energy Asia Development Limited) ຈຶ່ງມີແຜນທີ່ຈະສ້າງຕັ້ງ ໂຄງການໂຮງໄຟຟ້າ ພະລັງງານລົມ ທີ່ມີກຳລັງການຜະລິດ 600 ເມກາວັດ (600 MV) ເຊິ່ງພື້ນທີ່ໂຄງການສ່ວນໃຫຍ່ແມ່ນນອນຢູ່ໃນ ຂອບເຂດຂອງເມືອງ ດາກຈຶງ ແຂວງເຊກອງ ແລະ ອີກບາງສ່ວນແມ່ນນອນຢູ່ໃນຂອບເຂດຂອງເມືອງ ຊານໄຊ ແຂວງອັດຕະປື ໂດຍທາງບໍລິສັດ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ກັບລັດຖະບານ ສປປ ລາວ ຕັ້ງແຕ່ປີ 2011 ແລະ ເຊັນສັນຍາໃນການພັດທະນາໂຄງການ (PDA) ໃນວັນທີ 07 ສິງຫາ 2015 (ຕໍ່ເທື່ອທີ 4 ສະບັບເລກທີ 981/ກຜທ ລົງວັນທີ 25 ມີຖຸນາ 2021, ປັດຈຸບັນແມ່ນກຳລັງຄົ້ນຄວ້າຮ່າງສັນຍາສຳປະທານ (CA). ສຳລັບ ໂຄງການຜະລິດກະແສໄຟຟ້າຈາກພະລັງງານລົມ ຂະໜາດກຳລັງການຜະລິດ 600 ເມກາວັດ ອາຍຸສຳປະທານ 25 ປີ ຫຼັງຈາກຂາຍໄຟຟ້າໃນທາງການຄ້າ.

ໂຄງການຜະລິດກະແສໄຟຟ້າຈາກພະລັງງານລົມ ທີ່ສະເໜີຂ້າງເທິງ ກໍ່ແມ່ນໜຶ່ງທີ່ຈະເປັນທ່າແຮງສຳຄັນໃນການສະ ໜອງພະລັງງານໄຟຟ້າໃນເຂດພາກໃຕ້ຂອງ ສປປ ລາວ, ກໍ່ຄືແຂວງເຊກອງ, ອັດຕະປື ແລະ ໂດຍສະເພາະແມ່ນເປັນ ທ່າແຮງທີ່ສຳຄັນທີ່ຈະສະໜອງກະແສໄຟຟ້າໃຫ້ກັບ ສສ ຫວຽດນາມ. ໂດຍໃນວັນທີ 13 ກັນຍາ 2019 ທາງການ ໄຟຟ້າ ສສ ຫວຽດນາມ ແລະ ບໍລິສັດ ອິມແພັກ ເອັນເນີຈີ ເອເຊຍ ດີວີລັບເມັ້ນ ຈຳກັດ ໄດ້ລົງນາມບົດບັນທຶກຄວາມ ເຂົ້າໃຈເລື່ອງລາຄາຮັບຊື້ໄຟຟ້າ ແລະ ໃນວັນທີ 1 ເມສາ 2020 ນາຍົກລັດຖະມົນຕີແຫ່ງ ສສ ຫວຽດນາມ ໄດ້ ອະນຸມັດລາຄາຮັບຊື້ໄຟຟ້າຈາກໂຄງການໃນປະເທດລາວ ໃນລາຄາ 6.95 C/kWh ແລະ ໃນເດືອນ ສິງຫາ ປີ 2020

ນາຍົກລັດຖະມົນຕີຂອງ ສສ ຫວຽດນາມ ໄດ້ອະນຸມັດການນຳເຂົ້າ ພະລັງງານໄຟຟ້າຈາກໂຄງການພະລັງງານລົມ. ເພື່ອເຊື່ອມຕໍ່ກະແສໄຟຟ້າທີ່ຜະລິດໄດ້ ຈາກໂຄງການພະລັງງານລົມເຂົ້າສູ່ລະບົບຕາຂ່າຍໄຟຟ້າ, ໂດຍອີງໃສ່ສັນຍາຮັບຊື້ໄຟຈາກ ສສ ຫວຽດນາມ ແລະ ອີງໃສ່ຈຸດພິເສດທີ່ຕັ້ງຂອງໂຄງການພະລັງງານລົມ ທີ່ຕັ້ງຢູ່ເມືອງດາກຈຶງ ທີ່ມີຊາຍແດນຕິດກັບ ສສ ຫວຽດນາມ. ດັ່ງນັ້ນ, ທາງໂຄງການຈຶ່ງມີຄວາມຈຳເປັນຈະຕ້ອງກໍ່ສ້າງສາຍສົ່ງໄຟຟ້າຂະໜາດ 500 ກວ ຈາກສະຖານີຫຼັກຂອງໂຄງການຜະລິດໄຟຟ້າຈາກພະລັງງານລົມເມືອງດາກຈຶງ ສົ່ງອອກໄປເຊື່ອມຕໍ່ກັບສະຖານີໄຟຟ້າ 500 ກວ ຂອງ ສສ ຫວຽດນາມ (ສະຖານີ Thanh My) ໂດຍມີຄວາມຍາວຂອງແລວສາຍສົ່ງທັງໝົດປະມານ 66 ກິໂລແມັດ. ເຊິ່ງໃນການສຶກສານີ້ແມ່ນຈະກວມເອົາສະເພາະຊ່ວງທີ່ຢູ່ຝັ່ງຊາຍແດນຂອງ ສປປ ລາວ ເຊິ່ງມີຄວາມຍາວທັງໝົດປະມານ 21 ກິໂລແມັດ.

1.2 ໂຄງການພັດທະນາ ແລະ ການສຶກສາດ້ານສິ່ງແວດລ້ອມ

ເພື່ອໃຫ້ໂຄງການກໍ່ສ້າງສາຍສົ່ງໄຟຟ້າຂະໜາດ 500 ກວ ຂອງໂຄງການພະລັງງານລົມ ທີ່ສະເໜີນີ້ ດຳເນີນໄປຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ, ທີ່ມີຈຸດປະສົງເພື່ອປົກປ້ອງສິ່ງແວດລ້ອມ ຈາກໂຄງການພັດທະນາ ແລະ ກິດຈະການຕ່າງໆໃນ ສປປ ລາວ, ເປັນຕົ້ນແມ່ນ ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 21/ລບ ລົງວັນທີ 31 ມັງກອນ 2019 ໂດຍເນື້ອໃນຂອງດຳດັດ ສະບັບນີ້ ແມ່ນການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ເນື້ອໃນທີ່ກຳນົດໄວ້ໃນ ມາດຕາ 21, 22 ຂອງກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012 ເພື່ອແນ່ໃສ່ເຮັດໃຫ້ທຸກໂຄງການລົງທຶນ ແລະ ກິດຈະການຕ່າງໆ ຂອງລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການຢູ່ພາຍໃນ ສປປ ລາວ ທີ່ກໍ່ໃຫ້ເກີດ ຫຼື ຈະກໍ່ໃຫ້ເກີດ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ໄດ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ ໃນການຈັດຕັ້ງປະຕິບັດ ຂະບວນປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃຫ້ໄດ້ຢ່າງມີປະສິດທິຜົນ ແລະ ຕັ້ງໜ້າປະກອບສ່ວນ ເຂົ້າໃນການພັດທະນາເສດຖະກິດ - ສັງຄົມຂອງຊາດ ໃຫ້ມີຄວາມຍືນຍົງ.

ດັ່ງນັ້ນ ທາງຜູ້ພັດທະນາໂຄງການ ກໍ່ຄື ບໍລິສັດ ອິມແພັກ ເອັນເນີຈີ ເອເຊຍ ດີວີລົບເມັ້ນ ຈຳກັດ ຈຶ່ງໄດ້ມີສັນຍາມອບໝາຍໃຫ້ກັບ ບໍລິສັດ ທີ່ປຶກສາ ອິນໂນກຣິນ ເອັນຈິເນຍລິງ ຈຳກັດ ເຊິ່ງເປັນ ບໍລິສັດ ທີ່ປຶກສາ ດ້ານສິ່ງແວດລ້ອມ ແລະ ສັງຄົມ ໃຫ້ມາສຶກສາ-ສຳຫຼວດ ແລະ ຂຽນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ສຳລັບໂຄງການດັ່ງກ່າວ. ເຊິ່ງຂັ້ນຕອນການສຶກສາ ແລະ ສຳຫຼວດທຸກຢ່າງ ແມ່ນດຳເນີນຕາມລະບຽບ ແລະ ບົດແນະນຳຂອງກະຊວງ ກຊສ ວາງອອກ, ມີການຈັດກອງປະຊຸມເຜີຍແຜ່ຂໍ້ມູນ-ປຶກສາຫາລື ແລະ ການມີສ່ວນຮ່ວມຈາກທຸກພາກສ່ວນ ເຊິ່ງເລີ່ມຕົ້ນຈາກລະດັບໝູ່ບ້ານ ລຽບຕາມແລວສາຍສົ່ງຂອງໂຄງການ ທີ່ຄາດວ່າຈະໄດ້ຮັບຜົນກະທົບໂດຍກົງ ແລະ ທາງອ້ອມ ແລະ ກອງປະຊຸມປຶກສາຫາລືຂັ້ນເມືອງ/ວິຊາການ/ແຂວງຕາມລຳດັບ.

1.3 ຈຸດປະສົງ ແລະ ຂອບເຂດຂອງການປະເມີນຜົນກະທົບດ້ານສິ່ງແວດລ້ອມ

ຈຸດປະສົງ ແລະ ຂອບເຂດຂອງການປະເມີນຜົນກະທົບຕໍ່ສິ່ງແວດລ້ອມນີ້ ແມ່ນໄດ້ເນັ້ນໃສ່ການສຶກສາ ແລະ ປະເມີນຜົນກະທົບທີ່ອາດຈະເກີດຂຶ້ນຈາກກິດຈະກຳ ແລະ ໜ້າວຽກທີ່ພົວພັນການກໍ່ສ້າງ ແລະ ການດຳເນີນງານ ຂອງໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລົມ. ເຊິ່ງການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຈະກວມເອົາຜົນກະທົບທາງດ້ານກາຍຍະພາບ, ຊີວະພາບ, ດ້ານເສດຖະກິດ ແລະ ດ້ານວັດທະນະທຳ - ສັງຄົມ ໃນເຂດໂຄງການລຽບຕາມແລວສາຍສົ່ງ ແລະ ອ້ອມຂ້າງ. ນອກນີ້ ຍັງຈະໄດ້ກຳນົດທາງເລືອກມາດຕະການຫຼຸດຜ່ອນທີ່ເໝາະ

ສົມ ເພື່ອຫຼຸດຜ່ອນຜົນກະທົບທີ່ອາດຈະເກີດຂຶ້ນຈາກກິດຈະກຳ, ໜ້າວຽກຂອງໂຄງການ, ໂດຍຈຸດປະສົງອັນຕົ້ນຕໍ ແມ່ນ:

- ເພື່ອສຶກສາລາຍລະອຽດ, ກິດຈະກຳການຈັດຕັ້ງປະຕິບັດ ແລະ ການດຳເນີນງານ, ຕະຫຼອດຮອດສິ່ງອຳນວຍຄວາມສະດວກຕ່າງໆຂອງໂຄງການ.
- ເພື່ອສຶກສາຂໍ້ມູນພື້ນຖານສະພາບແວດລ້ອມປັດຈຸບັນໃນການດຳເນີນໂຄງການຜ່ານມາ ແລະ ສະພາບແວດລ້ອມບໍລິເວນພື້ນທີ່ເຂດອ້ອມຂ້າງໂຄງການ ດ້ານກາຍຍະພາບ, ຊີວະພາບ, ຄຸນຄ່າການນຳໃຊ້ປະໂຫຍດຂອງມະນຸດ ແລະ ສະພາບການດຳລົງຊີວິດຂອງປະຊາຊົນ.
- ເພື່ອເຜີຍແຜ່ຂໍ້ມູນກ່ຽວກັບໂຄງການ, ສຳຫຼວດປຶກສາຫາລື, ຄວາມຄິດເຫັນຂອງປະຊາຊົນໃນພື້ນທີ່ອ້ອມຂ້າງໂຄງການ.
- ເພື່ອປະເມີນຜົນກະທົບສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ເກີດຂຶ້ນ ຫຼື ອາດຈະເກີດຂຶ້ນຈາກການ ການພັດທະນາໂຄງການ.
- ເພື່ອສະເໜີມາດຕະການປ້ອງກັນ, ແກ້ໄຂ, ຫຼຸດຜ່ອນຜົນກະທົບສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ. ຕະຫຼອດຈົນຮອດມາດຕະການຕິດຕາມກວດກາຄຸນະພາບສິ່ງແວດລ້ອມ ແລະ ແຜນຄຸ້ມຄອງດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການ.
- ເພື່ອໃຫ້ການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມຂໍ້ກຳນົດ, ລະບຽບການ ແລະ ກົດໝາຍ ທີ່ກ່ຽວຂ້ອງຂອງ ສປປ ລາວ.

1.4 ລາຍລະອຽດ ກ່ຽວກັບ ເຈົ້າຂອງໂຄງການ ແລະ ທີ່ປຶກສາດ້ານສິ່ງແວດລ້ອມ ທີ່ສ້າງ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ

1.4.1 ຜູ້ພັດທະນາໂຄງການ

ເພື່ອເຊື່ອມຕໍ່ໄຟຟ້າທີ່ຈະຜະລິດໄດ້ຈາກໂຄງການພະລັງງານລົມເຂົ້າສູ່ລະບົບຕາຂ່າຍໄຟຟ້າແຫ່ງຊາດ ກໍ່ຄືການສົ່ງອອກໄຟຟ້າເພື່ອໄປເຊື່ອມຕໍ່ກັບ ສະຖານີໄຟຟ້າ 500 ກວ ຂອງ ສສ ຫວຽດນາມ (ສະຖານີ Thanh My) ທີ່ກ່າວມາຂ້າງເທິງ. ດັ່ງນັ້ນ, ໂຄງການກໍ່ສ້າງແລວສາຍສົ່ງໄຟຟ້າ 500 ກວ ຂອງໂຄງການພະລັງງານລົມທີ່ສະເໜີນີ້ ແມ່ນນອນຢູ່ໃນແຜນການກໍ່ສ້າງ ຂອງບໍລິສັດ ອິມແພັກ ເອັນເນີຈີ ເອເຊຍ ດີວີລົບເມັ້ນ ຈຳກັດ ເຊິ່ງເປັນ ບໍລິສັດທີ່ຈະໄດ້ຮັບອະນຸຍາດໃນການສຶກສາພັດທະນາໂຄງການຈາກລັດຖະບານ ສປປ ລາວ ໃນການກໍ່ສ້າງໂຄງການຜະລິດໄຟຟ້າຈາກພະລັງງານລົມ ທີ່ມີກຳລັງການຜະລິດ 600 ເມກາວັດ.

ບໍລິສັດ ອິມແພັກ ເອັນເນີຈີ ເອເຊຍ ດີວີລົບເມັ້ນ ຈຳກັດ ເປັນບໍລິສັດທີ່ລົງທຶນໃນການພັດທະນາ ໂຄງການພະລັງງານທົ່ວເອເຊຍ ປາຊີຟິກ ການພັດທະນາໂຄງການພະລັງງານຂອງບໍລິສັດ ໂດຍສ່ວນຫຼາຍແລ້ວ ແມ່ນລົງທຶນໃສ່ການພັດທະນາ ພະລັງງານສະອາດກໍ່ຄື ພະລັງງານແສງຕາເວັນ ແລະ ພະລັງງານລົມ. ບໍລິສັດ ມີສຳນັກງານຕັ້ງຢູ່ Registered office: 25A, United Centre, 95 Queensway, Admiralty, Hong Kong.

1.4.2 ບໍລິສັດທີ່ປຶກສາສິ່ງແວດລ້ອມ

ອີງຕາມການປຶກສາຫາລືກັນທັງສອງຝ່າຍຄື ຜູ້ພັດທະນາໂຄງການ ບໍລິສັດ ອິມແພັກ ເອັນເນີຈີ ເອເຊຍ ພັດທະນາ ຈຳກັດ ເຫັນດີວ່າ ຕົກລົງໃຫ້ບໍລິສັດທີ່ປຶກສາສິ່ງແວດລ້ອມ ກໍ່ຄື ບໍລິສັດ ອິນໂນກຣີນ ເອັນຈີເນຍລິງ ຈຳກັດ ເປັນຕົວແທນຂອງບໍລິສັດ ໃນການດຳເນີນການສຶກສາ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ສຳລັບ

ໂຄງການຜະລິດໄຟຟ້າພະລັງງານລິມ 600 ເມກາວັດ ທີ່ໄດ້ດຳເນີນມາກ່ອນໜ້ານີ້ແລ້ວ ແລະ ລວມທັງ ມອບໝາຍໃຫ້ດຳເນີນການສຶກສາ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ສຳລັບ ໂຄງການກໍ່ສ້າງແລວສາຍສົ່ງໄຟຟ້າ 500 ກວ ຂອງໂຄງການພະລັງງານລິມດັ່ງກ່າວ.

ບໍລິສັດ ອິນໂນກຣີນ ເອັນຈີເນຍລິງ ຈຳກັດ ເປັນບໍລິສັດດຳເນີນທຸລະກິດທີ່ປຶກສາດ້ານສິ່ງແວດລ້ອມ ໄດ້ຈົດທະບຽນດ້ານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໂດຍກະຊວງ ຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ. ຕາມໃບອະນຸຍາດ ເລກທີ 0159/ກຊສ.ກສສ ລົງວັນທີ 25 ກຸມພາ 2019. ບໍລິສັດ ອິນໂນກຣີນ ເອັນຈີເນຍລິງ ຈຳກັດ ມີສຳນັກງານຕັ້ງຢູ່ເຮືອນເລກທີ 122, ໜ່ວຍ 5, ບ້ານດົງປ່າລານທົ່ງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ໂທລະສັບ 021-264575, 030-7770669, ແຟັກ 021-264575,
ອີເມລ: info@innogreelao.com, http://www.innogreenlao.com

1.5 ຂໍ້ຜູກມັດຕໍ່ເຈົ້າຂອງໂຄງການ

1.5.1 ໜ້າທີ່ຮັບຜິດຊອບຂອງບໍລິສັດ

ຕ້ອງໃຫ້ຄຳໝັ້ນສັນຍາກັບຜູ້ທີ່ມີສ່ວນຮ່ວມທຸກພາກສ່ວນທີ່ກ່ຽວກັບການດຳເນີນງານຂອງບໍລິສັດ ໂດຍມີຈຸດປະສົງເພີ່ມທະວີຜົນປະໂຫຍດທາງດ້ານສັງຄົມ ແລະ ສິ່ງແວດລ້ອມໃນທ້ອງຖິ່ນ ເພື່ອໃຫ້ມີການຂະຫຍາຍຕົວທາງດ້ານເສດຖະກິດ, ມີຄວາມສົມດຸນ ແລະ ຮັບປະກັນການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ເກີດຈາກກິດຈະກຳການກໍ່ສ້າງ ແລະ ການດຳເນີນງານຂອງໂຄງການ.

1. ຈັນຍາບັນທາງທຸລະກິດ: ການດຳເນີນທຸກກິດຈະກຳທາງທຸລະກິດຂອງບໍລິສັດທັງໝົດທີ່ກ່ຽວຂ້ອງກັບໂຄງການ ຕ້ອງຍຶດໝັ້ນ ໃຫ້ຄວາມເຊື່ອຖືຕໍ່ຜູ້ວ່າຈ້າງ, ບັນດາຜູ້ຮ່ວມທຸລະກິດ ແລະ ຜູ້ຮັບເໝົາ, ການດຳເນີນງານທັງໝົດຕ້ອງສອດຄ່ອງກັບລະບຽບກົດໝາຍ ແລະ ຮີດຕອງປະເພນີຂອງແຕ່ລະທ້ອງຖິ່ນທີ່ດຳເນີນທຸລະກິດ.
2. ຄວາມປອດໄພ: ທາງບໍລິສັດຕ້ອງໄດ້ໃຫ້ຄວາມສຳຄັນດ້ານຄວາມປອດໄພ, ດ້ານສຸຂະພາບ ແລະ ສະຫວັດດີການໃນທຸກດ້ານ ຂອງການດຳເນີນທຸກກິດຈະກຳຂອງໂຄງການ. ນະໂຍບາຍຂອງບໍລິສັດ ແມ່ນເພື່ອຮັບປະກັນການດຳເນີນການຈັດຕັ້ງປະຕິບັດທຸກວຽກງານ ໃຫ້ສອດຄ່ອງກັບລະບຽບກົດໝາຍ ທີ່ກ່ຽວຂ້ອງຂອງສາກົນ ແລະ ຂອງລັດຖະບານແຫ່ງ ສປປ ລາວ, ມາດຕະການທັງໝົດທີ່ປະຕິບັດແມ່ນຕ້ອງສົມເຫດສົມຜົນ ໂດຍແນ່ໃສ່ຫຼີກລ່ຽງຄວາມສ່ຽງທີ່ອາດສົ່ງຜົນກະທົບຕໍ່ພະນັກງານ ແລະ ຊຸມຊົນ.
3. ການຝຶກອົບຮົມ ແລະ ການພັດທະນາ: ການຝຶກອົບຮົມໃຫ້ແກ່ພະນັກງານຂອງບໍລິສັດ ແລະ ການພັດທະນາສີມືແຮງງານແມ່ນເປົ້າໝາຍ ແລະ ນະໂຍບາຍທີ່ສຳຄັນຂອງບໍລິສັດ ເພື່ອຮັບປະກັນໃຫ້ພະນັກງານທຸກຄົນມີໂອກາດໄດ້ສຶກສາຮຽນຮູ້ຈາກເຕັກນິກວິທີການຂອງບໍລິສັດ.
4. ສະພາບແວດລ້ອມ: ທາງບໍລິສັດຕ້ອງໃຫ້ຄວາມສຳຄັນໃນການຄຸ້ມຄອງສິ່ງແວດລ້ອມ ໂດຍການເອົາໃຈໃສ່ປະຕິບັດຕາມມາດຕະການຫຼຸດຜ່ອນຜົນກະທົບ ແລະ ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ພັນທະສິ່ງແວດລ້ອມອື່ນໆທີ່ກ່ຽວຂອງ, ເອົາໃຈໃສ່ປັບປຸງ ແລະ ຟື້ນຟູສະພາບແວດລ້ອມ ໃນເຂດທີ່ໄດ້ຮັບຜົນກະທົບຈາກກິດຈະກຳຂອງໂຄງການຢ່າງເຂັ້ມງວດ.

5. ການຫຼຸດຜ່ອນສິ່ງເສດເຫຼືອ: ຕ້ອງນຳໃຊ້ການຫຼຸດຜ່ອນ, ການໝູນວຽນຄືນ ແລະ ການກຳຈັດໃຫ້ຖືກວິທີ ຕາມຫຼັກການ ເຊິ່ງຕ້ອງໄດ້ເຮັດເປັນລະບົບຕ່ອງໂສ້, ປະຕິບັດຕາມລະບົບກົນລະສາດສິ່ງເສດເຫຼືອ ແລະ ປັບປຸງລະບົບການຄຸ້ມຄອງສິ່ງເສດເຫຼືອໃຫ້ມີປະສິດທິຜົນ.
6. ຊຸມຊົນ: ປະກອບທຶນໃນການພັດທະນາຊຸມຊົນ ແລະ ໃຫ້ຄວາມຊ່ວຍເຫຼືອທາງດ້ານວິຊາການ ໃຫ້ແກ່ຊຸມ ຊົນ ເພື່ອຫຼຸດຜ່ອນຜົນກະທົບຈາກທຸກກິດຈະກຳການກໍ່ສ້າງ ແລະ ດຳເນີນງານຂອງໂຄງການ.

1.5.2 ຄວາມຮັບຜິດຊອບຂອງໂຄງການຕໍ່ ບປຜສ

ບໍລິສັດ ອິມແພັກ ເອັນເນີຈີ ເອເຊຍ ດີວີລົບເມັ້ນ ຈຳກັດ ໃນນາມເຈົ້າຂອງໂຄງການສາຍສົ່ງໄຟຟ້າ 500 KV ຂອງ ໂຄງການພະລັງງານລົມ 600 MW ເມືອງດາກຈຶງ ຂໍຢັ້ງຢືນວ່າ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ (ບປຜສ) ແລະ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມ (ຜຄຕສ) ໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລົມ 600 MW ເມືອງດາກຈຶງ ທີ່ຜ່ານການສຶກສາ ແລະ ສ້າງເປັນບົດລາຍງານ ໂດຍ ບໍລິສັດທີ່ປຶກສາ ບໍລິສັດ ອິນໂນກຣິນ ເອັນຈີເນຍລິງ ຈຳກັດ ແມ່ນໄດ້ມີການສຶກສາຢ່າງລະອຽດຄົບຖ້ວນ ໂດຍ ສອດຄ່ອງກັບ ກົດໝາຍ ຂອງ ສປປ ລາວ ຢ່າງເຂັ້ມງວດ ໂດຍສະເພາະກົດໝາຍປົກປັກຮັກສາສິ່ງແວດລ້ອມ, ສະບັບ ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012 ແລະ ດຳລັດວ່າດ້ວຍ ການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ສະບັບເລກທີ 21/ລບ, ວັນທີ 31 ມັງກອນ 2019, ບົດແນະນຳວິຊາການ ກ່ຽວກັບ ການສ້າງ ບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຂອງ ໂຄງການລົງທຶນ ແລະ ກົດຈະການຕ່າງໆ ຢູ່ໃນ ສປປ ລາວ ຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສະນັ້ນ ບໍລິສັດ ອິມແພັກ ເອັນເນີຈີ ເອເຊຍ ດີວີລົບເມັ້ນ ຈຳກັດ ໃນນາມເຈົ້າຂອງໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລົມ 600 MW ເມືອງດາກຈຶງ ຈຶ່ງ ສາມາດຢັ້ງຢືນຕໍ່ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ດັ່ງນີ້:

(1) ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ (ບປຜສ) ແລະ ແຜນການຄຸ້ມຄອງ ແລະ ຕິດຕາມ ກວດກາ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ (ຜຄຕສ) ຂອງໂຄງການສາຍສົ່ງໄຟຟ້າ 500 KV ຂອງ ໂຄງການພະລັງງານລົມ 600 MW ເມືອງດາກຈຶງ ແມ່ນໄດ້ສຶກສາ ໂດຍມີເນື້ອໃນລະອຽດຄົບຖ້ວນ ແລະ ມີຂໍ້ມູນທີ່ຖືກຕ້ອງ ແລະ ສອດຄ່ອງກັບສະພາບຕົວຈິງ ແລະ ສອດຄ່ອງກັບບົດລາຍງານການກຳນົດຂອບ ເຂດການສຶກສາ ແລະ ຂອບເຂດໜ້າວຽກ ສຳລັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດທີ່ ຖືກຮັບຮອງຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

(2) ບໍລິສັດ ອິມແພັກ ເອັນເນີຈີ ເອເຊຍ ດີວີລົບເມັ້ນ ຈຳກັດ ຈະປະຕິບັດທຸກຂັ້ນຕອນຂອງການປະເມີນຜົນ ກະທົບຕໍ່ສິ່ງແວດລ້ອມແບບລະອຽດ ຕາມທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍ ການປົກປັກຮັກສາ ສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012, ໂດຍສະເພາະ ດຳລັດວ່າ ດ້ວຍ ການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ສະບັບເລກທີ 21/ລບ, ວັນທີ 31 ມັງກອນ 2019 ໂດຍຮັບປະກັນໃຫ້ໄດ້ຮັບໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ສຳລັບຮັບຮອງເອົາບົດລາຍງານ ການປະເມີນ ຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ (ບປຜສ) ຈາກ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

(3) ບໍລິສັດ ອິມແພັກ ເອັນເນີຈີ ເອເຊຍ ດີວີລົບເມັ້ນ ຈຳກັດ ແມ່ນຮັບຮູ້ ແລະ ມີຄວາມຮັບຜິດຊອບ ຢ່າງເຕັມ ສ່ວນ ຕໍ່ພັນທະທັງໝົດ ຕາມທີ່ກຳນົດໄວ້ຢູ່ໃນບົດລາຍງານ ບປຜສ ແລະ ຜຄຕສ ຂອງໂຄງການສາຍສົ່ງ ໄຟຟ້າ 500 KV ຂອງໂຄງການພະລັງງານລົມ 600 MW ເມືອງດາກຈຶງ.

1.6 ໂຄງຮ່າງຂອງ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ

ບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ໂດຍທົ່ວໄປ ເປັນໄປຕາມ ບົດແນະນຳ ແລະ ລະບຽບການທີ່ກ່ຽວຂ້ອງທີ່ ກຊສ ວາງອອກ, ໂດຍໂຄງຮ່າງໃນການປະເມີນສິ່ງແວດລ້ອມແບບລະອຽດ (ບປຜສ) ຈະປະກອບມີ 8 ພາກ ແລະ ໄດ້ມີການແຍກບົດແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄຕສ) ອອກຕ່າງຫາກ. ສ່ວນບົດ ບປຜສ ທັງ 8 ພາກແມ່ນມີຄືດັ່ງ:

ພາກທີ 1 ພາບລວມຂອງໂຄງການ	ລະບຸຫຍໍ້ເຖິງພາບລວມຂອງໂຄງການ ລວມມີ ພາບລວມຄວາມເປັນມາຂອງໂຄງການ, ຈຸດປະສົງຂອງການສຶກສາປະເມີນຜົນກະທົບ, ຂອບເຂດຂອງການສຶກສາ, ລວມທັງທີມງານ ແລະ ແຜນດຳເນີນງານການສຶກສາປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ.
ພາກທີ 2 ນະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ	ກ່າວເຖິງນະໂຍບາຍ, ລະບຽບ, ກົດໝາຍ, ດຳລັດ ແລະ ສົນທິສັນຍາຕ່າງໆ ທີ່ກ່ຽວຂ້ອງກັບໂຄງການເຊັ່ນ: ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍການຂົນສົ່ງທາງບົກ, ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 21/ລບ, ລົງວັນທີ 31 ມັງກອນ 2019 ແລະ ອື່ນໆທີ່ກ່ຽວຂ້ອງກັບໂຄງການ.
ພາກທີ 3 ລາຍລະອຽດຂອງໂຄງການ	ການນຳສະເໜີລາຍລະອຽດຂອງໂຄງການ ຈະຊ່ວຍໃຫ້ເຂົ້າໃຈຊັດເຈນກ່ຽວກັບໂຄງການໃນແງ່ທາງກາຍຍະພາບ ແລະ ອົງປະກອບຕ່າງໆທາງດ້ານສະພາບແວດລ້ອມຂອງໂຄງການ, ອະທິບາຍລາຍລະອຽດກ່ຽວກັບທາງເລືອກ ແລະ ເຫດຜົນຂອງໂຄງການ, ສະຖານທີ່ການສຶກສາ, ຮູບແບບ, ຂະໜາດຂອງໂຄງການ ແລະ ລາຍລະອຽດອື່ນໆ.
ພາກທີ 4 ລາຍລະອຽດຂອງສະພາບແວດລ້ອມ ແລະ ສັງຄົມໃນພື້ນທີ່ໂຄງການ	ສະໜອງຂໍ້ມູນພື້ນຖານທີ່ກ່ຽວຂ້ອງກັບບັນຫາສິ່ງແວດລ້ອມ ແລະ ສັງຄົມທີ່ມີຢູ່ແລ້ວພາຍໃນ ແລະ ທົ່ວເຂດພື້ນທີ່ຂອງໂຄງການເຊິ່ງລວມມີ: ✓ ສິ່ງແວດລ້ອມທາງກາຍຍະພາບ: ພູມສັນຖານ, ສະພາບອາກາດ, ຄຸນະພາບອາກາດ, ສຽງນັນ, ຄຸນນະພາບນ້ຳ. ✓ ສິ່ງແວດລ້ອມທາງຊີວະພາບ ສະພາບປ່າໄມ້, ພັນພືດ, ສັດປ່າ, ສັດນ້ຳ ແລະ ລະບົບນິເວດ ✓ ສະພາບດ້ານເສດຖະກິດສັງຄົມ ແລະ ວັດທະນະທຳ: ປະຊາກອນ, ຊຸມຊົນ, ການສຶກສາ, ການນຳໃຊ້ທີ່ດິນ, ເສດຖະກິດ, ສຸຂະພາບ ແລະ ອື່ນໆ
ພາກທີ 5 ການປະເມີນຜົນກະທົບ ແລະ ມາດຕະການຫຼຸດຜ່ອນ	ວິເຄາະ ແລະ ລະບຸລາຍລະອຽດວິທີ, ຂັ້ນຕອນ ແລະ ປະເມີນຜົນກະທົບທີ່ອາດຈະຂຶ້ນທາງກາຍຍະພາບ, ຊີວະພາບ ແລະ ດ້ານເສດຖະກິດສັງຄົມ ແລະ ວັດທະນະທຳ ພ້ອມທັງກຳນົດມາດຕະການເພື່ອຫຼຸດຜ່ອນຜົນກະທົບໃນແຕ່ລະໄລຍະຄື: ໄລຍະການກໍ່ສ້າງໂຄງການ, ໄລຍະດຳເນີນໂຄງການ.

ພາກທີ 6 ແຜນຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມ ແລະ ສັງຄົມ (ຜຄຕສ)	ອະທິບາຍຫຍໍ້ເນື້ອໃນຂອງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ສັງຄົມ (ຜຄຕສ)
ພາກທີ 7 ການປຶກສາຫາລືກັບຜູ້ມີສ່ວນຮ່ວມ	ຈະກ່າວເຖິງພາບລວມຂອງໂຄງການ ໂດຍອະທິບາຍເຖິງຈຸດປະສົງ, ລາຍລະອຽດ, ຜົນປະໂຫຍດທີ່ຈະໄດ້ຮັບຈາກໂຄງການ ໂດຍມີການເຂົ້າຮ່ວມຂອງປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ, ການສະແດງຄຳຄິດ-ຄຳເຫັນ ແລະ ການສະເໜີ ຂອງ ປະຊາຊົນ ແລະ ຜູ້ນຳຂອງຊຸມຊົນ. ສະຫຼຸບຄຳຄິດເຫັນຂອງປະຊາຊົນ ແລະ ຜົນການ ປະຊຸມ ແລະ ປຶກສາຫາລືແຕ່ລະຂັ້ນ.
ພາກທີ 8 ສະຫຼຸບ ແລະ ຄຳແນະນຳ	ເປັນການສະຫຼຸບ ແລະ ສະເໜີແນະໃຫ້ກັບໂຄງການ

ພາກທີ 2 ນະໂຍບາຍ, ກົດໝາຍ ທີ່ກ່ຽວຂ້ອງ

ໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລິມ 600 MW ເມືອງດາກຈຶງ ທີ່ສະເໜີນີ້ ແມ່ນຈະໄດ້ມີການເລີ່ມດຳເນີນການກະກຽມບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ, ໂດຍອີງໃສ່ບັນດານະໂຍບາຍ, ລະບຽບກົດໝາຍ ແລະ ຂໍ້ກຳນົດຕ່າງໆທີ່ກ່ຽວຂ້ອງ ເຊິ່ງປະກອບດ້ວຍ: ລາຍລະອຽດຂອງກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳແນະນຳ, ມາດຕະຖານ ແລະ ສົນທິສັນຍາຕ່າງໆ ທີ່ພົວພັນກັບການຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ມີຜົນບັງຄັບໃຊ້ ແລະ ເປັນບ່ອນອີງໃຫ້ແກ່ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ, ເຊິ່ງກິດຈະກຳຕ່າງໆຂອງໂຄງການແມ່ນ ຈະຕ້ອງປະຕິບັດຕາມຂໍ້ກຳນົດຕ່າງໆທີ່ໄດ້ລະບຸໄວ້ໃນນິຕິກຳດັ່ງກ່າວ, ໂດຍຈະແມ່ນການຈັດຕັ້ງຂອງພາກສ່ວນລັດທີ່ກ່ຽວຂ້ອງ ເປັນຜູ້ມີໜ້າທີ່ອອກນະໂຍບາຍ ແລະ ກົດໝາຍຕ່າງໆທີ່ພົວພັນຕໍ່ຜົນກະທົບດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ. ສຳລັບກອບທາງດ້ານນະໂຍບາຍຕ່າງໆ ແມ່ນມີຈຸດປະສົງນຳໃຊ້ເຂົ້າໃນການຫຼຸດຜ່ອນຜົນກະທົບທີ່ອາດຈະເກີດຂຶ້ນຕໍ່ຊຸມຊົນ ແລະ ສິ່ງແວດລ້ອມ ຈາກກິດຈະກຳການດຳເນີນໂຄງການດັ່ງກ່າວ. ນອກນັ້ນ, ຍັງເປັນການຮັບປະກັນໃຫ້ການຈັດຕັ້ງປະຕິບັດໂຄງການສອດຄ່ອງກັບການພັດທະນາແບບຍືນຍົງສີຂຽວ ແລະ ສອດຄ່ອງກັບນະໂຍບາຍການພັດທະນາເສດຖະກິດ - ສັງຄົມ ຂອງພັກ ແລະ ລັດຖະບານ ທີ່ວາງອອກອີກດ້ວຍ.

2.1 ນະໂຍບາຍດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງເຈົ້າຂອງໂຄງການ

ເປົ້າໝາຍ ແລະ ວິໄສທັດທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງເຈົ້າຂອງໂຄງການ ແມ່ນຍຶດໝັ້ນແນວຄວາມຄິດທີ່ສະແດງໃຫ້ເຫັນເຖິງການບໍລິຫານຂອງບໍລິສັດທີ່ຮັບຜິດຊອບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ, ຈຸດປະສົງຂອງນະໂຍບາຍສິ່ງແວດລ້ອມແມ່ນເພື່ອຮັບປະກັນການປະຕິບັດມາດຕະການຫຼຸດຜ່ອນຜົນກະທົບຈາກກິດຈະກຳຂອງ ບໍລິສັດ ແລະ ການພັດທະນາແບບຍືນຍົງສີຂຽວ. ບັນດາມາດຕະການໃນການຈັດຕັ້ງປະຕິບັດນະໂຍບາຍທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງມີດັ່ງນີ້:

- ✓ ບໍລິຫານຈັດການກິດຈະກຳການກໍ່ສ້າງ ແລະ ການດຳເນີນງານຂອງໂຄງການດ້ວຍຄວາມຮອບຄອບ ແລະ ຮັບຮູ້ເປົ້າໝາຍສຳຄັນໃນການປົກປັກຮັກສາສິ່ງແວດລ້ອມ ແລະ ຫຼຸດຜ່ອນບັນດາຜົນກະທົບຈາກການກໍ່ສ້າງ ແລະ ການດຳເນີນງານຂອງໂຄງການ ໂດຍນຳໃຊ້ກົນໄກການຄຸ້ມຄອງທີ່ດີ;
- ✓ ແນ່ໃສ່ການພັດທະນາໂຄງການ ໂດຍການນຳໃຊ້ເຕັກໂນໂລຊີທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ ເພື່ອສາມາດຫຼີກລ່ຽງ, ແກ້ໄຂ ແລະ ຫຼຸດຜ່ອນ ບັນຫາຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຈາກການຈັດຕັ້ງປະຕິບັດໂຄງການ ໄດ້ຢ່າງມີປະສິດທິພາບສູງ;
- ✓ ການດຳເນີນໂຄງການ ຕ້ອງຮັບປະກັນການມີສ່ວນຮ່ວມຂອງອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນ ເພື່ອປະກອບສ່ວນໃນການປະຕິບັດຕາມ ແຜນການພັດທະນາທ້ອງຖິ່ນ ເພື່ອປະກອບສ່ວນຢ່າງຕັ້ງໜ້າຕໍ່ແຜນການພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ;
- ✓ ຮັບປະກັນຄວາມຮັບຜິດຊອບຕໍ່ຄວາມເສຍຫາຍ ທາງດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ເກີດຈາກການດຳເນີນໂຄງການ;
- ✓ ເອົາໃຈໃສ່ໃນການປະຕິບັດພັນທະປົກປັກຮັກສາສິ່ງແວດລ້ອມ ໂດຍຖືເອົາການປ້ອງກັນ, ປັບປຸງ, ບູລະນະຟື້ນຟູ, ຄວບຄຸມ, ຕິດຕາມກວດກາສິ່ງແວດລ້ອມ, ບໍ່ສ້າງຜົນກະທົບ, ບໍ່ເຮັດໃຫ້ສິ່ງແວດລ້ອມເຊື່ອມໂຊມ,

ບໍ່ສ້າງ ແລະ ປ່ອຍມົນລະພິດ ເກີນມາດຕະຖານ ຄອບຄຸມມົນລະພິດ ແລະ ມາດຕະຖານສິ່ງແວດລ້ອມ ແຫ່ງຊາດ ເພື່ອປະກອບສ່ວນສົ່ງເສີມຄຸນນະພາບສິ່ງແວດລ້ອມທີ່ດີ ແລະ ການພັດທະນາຕາມທິດສີຂຽວ ແລະ ຍືນຍົງ;

- ✓ ຮັບປະກັນ ການຄຸ້ມຄອງສິ່ງເສດເຫຼືອ, ສຽງດັງ, ຄຸນນະພາບນ້ຳ ແລະ ຄຸນນະພາບອາກາດ ທີ່ເກີດຈາກ ໂຄງການ ບໍ່ເກີນມາດຕະຖານສິ່ງແວດລ້ອມ ແຫ່ງຊາດລາວ;
- ✓ ເອົາໃຈໃສ່ການຕິດຕາມກວດກາ ແລະ ລາຍງານ ກ່ຽວກັບບັນຫາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໂດຍສອດຄ່ອງກັບລະບຽບກົດໝາຍ;
- ✓ ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ແກ່ອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ໃນການຄຸ້ມຄອງ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງສິ່ງແວດລ້ອມໂຄງການ.

2.2 ກົດໝາຍ ແລະ ລະບຽບການ

ໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລົມ 600 MW ເມືອງດາກຈຶງ ທີ່ສະເໜີນີ້ ແມ່ນຈະໄດ້ມີ ການເລີ່ມດຳເນີນການກະກຽມບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ໂດຍອີງໃສ່ບັນດາກົດໝາຍ ແລະ ນະໂຍບາຍຕ່າງໆທີ່ກ່ຽວຂ້ອງ ເຊິ່ງປະກອບດ້ວຍ: ລາຍລະອຽດຂອງກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳແນະນຳ ແລະ ສົນທິສັນຍາຕ່າງໆ ທີ່ພົວພັນກັບການຄຸ້ມຄອງສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ, ເຊິ່ງກິດຈະກຳຕ່າງໆ ຂອງໂຄງການແມ່ນ ຈະຕ້ອງປະຕິບັດຕາມຂໍ້ກຳນົດຕ່າງໆທີ່ໄດ້ລະບຸໄວ້ໃນນິຕິກຳດັ່ງລຸ່ມນີ້:

ຕາຕະລາງ 2-1: ກົດໝາຍ ແລະ ລະບຽບການ

ລ/ດ	ນະໂຍບາຍ, ກົດໝາຍ ທີ່ກ່ຽວຂ້ອງ
ກົດໝາຍ ແລະ ນິຕິກຳ	
1	ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ (ເລກທີ 29/ສພຊ, 2012)
2	ກົດໝາຍວ່າດ້ວຍໄຟຟ້າ ສະບັບປັບປຸງ (ເລກທີ 19/ສພຊ, 2017)
3	ກົດໝາຍວ່າດ້ວຍທີ່ດິນ (ເລກທີ 07/ສພຊ 2019)
4	ກົດໝາຍວ່າດ້ວຍປ່າໄມ້ ສະບັບປັບປຸງ (ເລກທີ 64/ສພຊ 2019)
5	ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ (ສະບັບປັບປຸງ ເລກທີ 23/ສພຊ, 2017)
6	ກົດໝາຍວ່າດ້ວຍການກໍ່ສ້າງ (ເລກທີ 05/ສພຊ, 2009)
7	ກົດໝາຍວ່າດ້ວຍ ການອະນາໄມ ແລະ ສິ່ງເສີມສຸຂະພາບ (ເລກທີ 73/ສພຊ, 2019)
8	ກົດໝາຍວ່າດ້ວຍແຮງງານ (ເລກທີ 43/ສພຊ, 2013)
9	ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ (ເລກທີ 07/ສພຊ, 2008)
10	ກົດໝາຍວ່າດ້ວຍການຂົນສົ່ງທາງບົກ (ເລກທີ 036/ສພຊ, 2012)
11	ກົດໝາຍວ່າດ້ວຍການສົ່ງເສີມລົງທຶນພາຍໃນ ແລະ ຕ່າງປະເທດ (ເລກທີ 02/ສພຊ, 2009)
12	ກົດໝາຍອື່ນໆທີ່ກ່ຽວຂ້ອງ
ດຳລັດ, ນະໂຍບາຍ ແລະ ລະບຽບການທີ່ກ່ຽວຂ້ອງ	

1	ຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ບັນຊີໂຄງການລົງທຶນ ແລະ ກິດຈະການຕ່າງໆທີ່ຈະຕ້ອງດຳເນີນການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ (ເລກທີ 8056/ກຊສ ລົງວັນທີ 17 ທັນວາ 2013)
2	ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (ເລກທີ 21/ລບ, 2019)
3	ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນ (ເລກທີ 84/ລບ, 2016).
4	ມາດຕະຖານເຕັກນິກໄຟຟ້າ (ເລກທີ 052/ອຫ ວັນທີ 12 ກຸມພາ 2004)
5	ຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ການປະກາດໃຊ້ບົດແນະນຳວ່າດ້ວຍການມີສ່ວນຮ່ວມຂອງມວນຊົນໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຂອງໂຄງການລົງທຶນ (ເລກທີ 707/ກຊສ ລົງ ວັນທີ 12/2013)
6	ດຳລັດວ່າດ້ວຍການເອົາທີ່ດິນຂອງລັດໃຫ້ເຊົ່າ ຫຼື ສຳປະທານ (ເລກທີ 135/ນຍ, ປີ 2009)
7	ມາດຕະຖານເຕັກນິກໄຟຟ້າ 052/ອຫ ລົງວັນທີ 12 ກຸມພາ 2004
8	ຂໍ້ຕົກລົງວ່າດ້ວຍ ມາດຕະຖານສິ່ງແວດລ້ອມແຫ່ງຊາດ (ເລກທີ 81/ລບ, 2017)
ມາດຕະຖານສາກົນ	
1	ນະໂຍບາຍການປ້ອງກັນຂອງ ADB
2	ມາດຕະຖານ ISO 14001
3	ມາດຕະຖານຂອງ IFC
ສົນທິສັນຍາ ແລະ ຂໍ້ຕົກລົງລະຫວ່າງປະເທດ	
1	ສົນທິສັນຍາຫະປະຊາຊາດກ່ຽວກັບຊີວະນາໆພັນ (1996)
2	ສົນທິສັນຍາກ່ຽວກັບໄພແຫ້ງແລ້ງ
3	ສົນທິສັນຍາກ່ຽວການປ່ຽນແປງສະພາບຂອງດິນຟ້າອາກາດ

2.2.1 ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ ເລກທີ 29/ສພຊ, ປີ2012)

ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມສະບັບປຸງນີ້ ແມ່ນມີຈຸດປະສົງໃນການປົກປັກຮັກສາ, ຄຸ້ມຄອງ, ກວດສອບ ແລະ ຟື້ນຟູ ສິ່ງແວດລ້ອມ ໂດຍໄດ້ກຳນົດຫຼັກການ ແລະ ລະບຽບການຕ່າງໆ ເພື່ອຫຼຸດຜ່ອນຜົນກະທົບ ແລະ ມົນລະພິດ ທີ່ເກີດຂຶ້ນດ້ວຍການກະທຳຂອງຄົນ ຫຼື ຕາມທຳມະຊາດ, ແນ່ໃສ່ເຮັດໃຫ້ສິ່ງແວດລ້ອມ - ສັງຄົມ ແລະ ທຳມະຊາດມີຄວາມສົມດຸນ ແລະ ຍືນຍົງ, ເຊິ່ງປະກອບມີ 13 ພາກໃຫຍ່, ໃນນັ້ນ, ລວມທັງໝົດມີ 99 ມາດຕາ ແລະ ໃນມາດຕາ 22 (ປັບປຸງ) ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ອາດຈະເກີດຂຶ້ນຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຈາກໂຄງການລົງທຶນ ຫຼື ກິດຈະການຕ່າງໆ ຕ້ອງໄດ້ສ້າງບົດລາຍງານ ຄຽງຄູ່ກັບແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ເຊິ່ງຕ້ອງໄດ້ຮັບການຮັບຮອງ ຈາກກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກ່ອນຈະດຳເນີນການກໍ່ສ້າງໂຄງການລົງທຶນ ແລະ ກິດຈະການຕ່າງ, ມາດຕາ 25 (ປັບປຸງ) ການຈຳກັດຜົນກະທົບ ຈາກການກໍ່ສ້າງ ແລະ ກິດຈະການອື່ນ ຕ້ອງມີວິທີການ ແລະ ມາດຕະການປ້ອງກັນ ຫຼື ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ ກ່ຽວກັບ ມາດຕະຖານຄຸ້ມນະພາບສິ່ງແວດລ້ອມແຫ່ງຊາດ ແລະ ມາດຕາ 48 (ໃໝ່) ການມີສ່ວນຮ່ວມ ຂອງມວນຊົນ: ການ

ປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ການສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມ, ການຄວບຄຸມມົນລະພິດ ແລະ ອື່ນໆ ຕ້ອງມີການເຂົ້າຮ່ວມຂອງການຈັດຕັ້ງ, ອົງການປົກຄອງ ທ້ອງຖິ່ນ ແລະ ປະຊາຊົນ ທີ່ກ່ຽວຂ້ອງໂດຍສະເພາະຜູ້ທີ່ໄດ້ຮັບຜົນກະທົບໂດຍກົງ ຫຼື ທາງອ້ອມ.

2.2.2 ກົດໝາຍວ່າດ້ວຍໄຟຟ້າ (ສະບັບປັບປຸງ ເລກທີ 19/ສພຊ, ປີ 2017)

ຈຸດປະສົງຂອງກົດໝາຍສະບັບນີ້ ໄດ້ໃສ່ການກຳນົດຫຼັກການ, ລະບຽບການ, ມາດຕະການກ່ຽວກັບການຈັດຕັ້ງ ປະຕິບັດ, ການເຄື່ອນໄຫວວຽກງານ, ການຄຸ້ມຄອງ ພ້ອມທັງຕິດຕາມກວດກາວຽກງານໄຟຟ້າ ເພື່ອເຮັດໃຫ້ການດຳ ເນີນກິດຈະການໄຟຟ້າ ແລະ ທຸລະກິດໄຟຟ້າໃຫ້ມີປະສິດທິຜົນສູງ ເຮັດໃຫ້ສອດຄ່ອງກັບທ່າແຮງການຜະລິດໄຟຟ້າ ໃຫ້ມີຄວາມຍືນຍົງ, ຮັກສາສິ່ງແວດລ້ອມ. ເຊິ່ງຈະຕ້ອງປະຕິບັດຕາມມາດຕາຕ່າງໆລຸ່ມນີ້.

ມາດຕາ 6: ຫຼັກການກ່ຽວກັບວຽກງານໄຟຟ້າ.

ການດຳເນີນກິດຈະການ ແລະ ທຸລະກິດທີ່ກ່ຽວເນື່ອງໃນການເຂື່ອນໄຟຟ້າດ້ວຍພະລັງງານນ້ຳແມ່ນຕ້ອງໄດ້ປະຕິບັດ ຕາມຫຼັກການສຳຄັນດັ່ງນີ້:

1. ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ.
2. ການພັດທະນາການຜະລິດໄຟຟ້າໃຫ້ສະອາດ ແລະ ເປັນມິດກັບສິ່ງແວດລ້ອມ.
3. ໃຫ້ປົກປັກຮັກສາສິ່ງແວດລ້ອມ - ສັງຄົມ ແລະ ທຳມະຊາດ (ເປັນຕົ້ນແມ່ນ: ຊຸມຊົນ, ປ່າໄມ້ ແລະ ແຫຼ່ງນ້ຳ).
4. ໃຫ້ຮັບປະກັນຄວາມປອດໄພໃນທຸກໆດ້ານ.
5. ນຳໃຊ້ໄຟຟ້າຢ່າງປະຢັດ ແລະ ມີປະສິດທິຜົນ

ມາດຕາ 60: ການປະເມີນຜົນກະທົບສິ່ງແວດລ້ອມ - ສັງຄົມ ແລະ ທຳມະຊາດ

ການປະເມີນຜົນກະທົບສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ ແມ່ນຊ່ວຍໃນການດຳເນີນກິດຈະການຜະລິດ ໄຟຟ້າບໍ່ໃຫ້ມີຜົນກະທົບຕໍ່ສະພາບແວດລ້ອມ ແລະ ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ ຕ້ອງປະຕິບັດຕາມ ລະບຽບກຳນົດໄວ້ດັ່ງນີ້:

1. ຜົນເສຍຫາຍ, ການຍົກຍ້າຍປະຊາຊົນ ແລະ ປ່າສັກສິດທີ່ໄດ້ຮັບຜົນກະທົບຈາກການພັດທະນາໂຄງການ ລວມທັງການຈັດສັນທີ່ດິນທຳການຜະລິດ, ການຊົດເຊີຍ, ຮັກສາສິດ ແລະ ຜົນປະໂຫຍດຂອງຜູ້ໄດ້ຮັບຜົນ ກະທົບ, ແຜນຟື້ນຟູເພື່ອຊີວິດທີ່ດີຂຶ້ນ.
2. ຕ້ອງມີມາດຕະການແກ້ໄຂ ຫຼື ຫຼຸດຜ່ອນຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມເຊັ່ນ: ຜົນກະທົບຕໍ່ແຫຼ່ງນ້ຳ, ຊັບພະຍາກອນດິນ, ລະບົບນິເວດວິທະຍາ, ຊີວະນາໆພັນ ແລະ ທີ່ຢູ່ອາໄສຂອງສັດນ້ຳ ແລະ ສັດປ່າ.
3. ປະເມີນ ແລະ ວິໄຈອື່ນໆ ຕາມຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງພະລັງງານ ແລະ ບໍ່ແຮ່ກຳນົດ.
4. ໂຄຍບົດລາຍງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ ຕ້ອງໄດ້ຮັບການທົບທວນ ແລະ ຮັບຮອງເອົາ ໂດຍຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ບົນພື້ນຖານປະສານສົມທົບ ກັບຂະແໜງການພະລັງງານ ແລະ ບໍ່ແຮ່, ພ້ອມຂະແໜງການທີ່ກ່ຽວຂ້ອງ.

ມາດຕາ 75: ການນຳໃຊ້ທີ່ດິນສຳລັບໂຄງການໄຟຟ້າ. ເພື່ອເປັນການຄຸ້ມຄອງທີ່ດິນຂອງປະຊາຊົນ ແລະ ຜູ້ພັດທະນາໂຄງການສຳລັບການນຳໃຊ້ທີ່ດິນ, ໃຫ້ຖືກຕ້ອງຕາມລະບຽບ ແລະ ນະໂຍບາຍຕາມກົດໝາຍຂອງລາວ ດັ່ງນີ້:

1. ຜູ້ພັດທະນາໂຄງການ ຕ້ອງກຳນົດຢ່າງຈະແຈ້ງກ່ຽວກັບຂອບເຂດການນຳໃຊ້ທີ່ດິນ, ຈະຕ້ອງສຶກສາ ຫຼື ສຳຫຼວດຜົນກະທົບທີ່ອາດຈະເກີດຂຶ້ນ ແລະ ມາດຕະການຫຼຸດຜ່ອນ, ຜົນກະທົບຕໍ່ສິ່ງແວດລ້ອມ - ສັງຄົມ ແລະ ທຳມະຊາດ.
2. ຂະແໜງງານຕ່າງໆທີ່ກ່ຽວຂ້ອງ ຕ້ອງມີການພົວພັນຮ່ວມມືກັນ ເພື່ອວາງແຜນນຳໃຊ້ເນື້ອທີ່ດິນໃນຂອບເຂດໄດ້ຮັບສຳປະທານ.
3. ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕ້ອງອອກເອກະສານກ່ຽວກັບການມອບສິດນຳໃຊ້ທີ່ດິນໃຫ້ບໍລິສັດໂຄງການ ຕາມກົດໝາຍວ່າດ້ວຍທີ່ດິນ ພາຍຫຼັງທີ່ໄດ້ຮັບອະນຸຍາດ.
4. ຫາກກິດຈະກຳຂອງໂຄງການໄຟຟ້າມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ທຳມະຊາດ, ຂະແໜງການທີ່ກ່ຽວຂ້ອງ ຕ້ອງຕີລາຄາຜົນເສຍຫາຍ ເພື່ອລາຍງານອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ, ລັດຖະບານ ຕາມແຕ່ລະຂັ້ນ ເພື່ອພິຈາລະນາຕາມແຕ່ລະກໍລະນີ.

2.2.3 ກົດໝາຍວ່າດ້ວຍທີ່ດິນ (ເລກທີ 07/ສພຊ 2019)

ກົດໝາຍທີ່ດິນສະບັບນີ້ ແມ່ນກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ແລະ ການປົກປັກຮັກສາ, ການນຳໃຊ້ທີ່ດິນໃຫ້ມີປະສິດທິ ໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ.

ມາດຕາ 25 (ປັບປຸງ): ການຫັນປ່ຽນປະເພດດິນຈາກປະເພດໜຶ່ງເປັນອີກປະເພດອື່ນ ຈະດຳເນີນໄດ້ກໍຕໍ່ເມື່ອ ຫາກເຫັນວ່າມີຄວາມຈຳເປັນນຳໃຊ້ເຂົ້າໃນເປົ້າໝາຍອື່ນ ເພື່ອຮັບໃຊ້ຜົນປະໂຫຍດສູງສຸດຂອງຊາດ ໂດຍສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ, ເຊິ່ງການຫັນປ່ຽນຕ້ອງໄດ້ຮັບອະນຸຍາດຈາກອົງການທີ່ມີສິດຕົກລົງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28, 29 ແລະ 30 ຂອງກົດໝາຍສະບັບນີ້.

ມາດຕາ 119 (ໃໝ່): ການເຊົ່າ ແລະ ສຳປະທານທີ່ດິນຂອງລັດຕ້ອງຜ່ານປະຊຸມ ແລະ ດຳເນີນໃນເຂດທີ່ດິນຂອງຂອງລັດທີ່ລັດໄດ້ຈັດສັນໄວ້. ຜູ້ເຊົ່າ ຫຼື ຜູ້ສຳປະທານ ຕ້ອງດຳເນີນການສຶກສາຜົນກະທົບ ຫຼື ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງສ້າງແຜນຄຸ້ມຄອງ ແລະ ຄິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 154 (ໃໝ່): ການທົດແທນຄ່າເສຍຫາຍຈາກກິດຈະກຳການລົງທຶນ ເມື່ອມີຄວາມຈຳເປັນຕ້ອງໄດ້ນຳໃຊ້ທີ່ດິນຂອງບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງເຂົ້າໃນກິດຈະການລົງທຶນ, ການເຊົ່າ ຫຼື ສຳປະທານທີ່ດິນ ຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ລັດຈະໂອນເອົາສິດນຳໃຊ້ທີ່ດິນນັ້ນຄືນ ໂດຍລັດຕ້ອງໃຊ້ແທນຄ່າເສຍຫາຍໃຫ້ຜູ້ກ່ຽວເປັນຕົ້ນແມ່ນ ໂຄງການ ກະສິກຳ, ການຂຸດຄົ້ນແຮ່ທາດ, ການພັດທະນາແຫຼ່ງພະລັງງານໄຟຟ້າ, ຖະໜົນຫົນທາງ ແລະ ອື່ນໆ, ເຊິ່ງໃນການທົດທາຍຄ່າເສຍຫາຍ ຕ້ອງແຕ່ງຕັ້ງຄະນະກຳມະການປະເມີນຄວາມເສຍຫາຍຊັບສິນເທິງໜ້າດິນ ແລະ ລາຄາທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 109 ຂອງກົດໝາຍສະບັບນີ້.

2.2.4 ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງເລກທີ 64/ສພຊ 2019)

ກົດໝາຍວ່າດ້ວຍປ່າໄມ້ສະບັບນີ້ ແມ່ນໄດ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການພື້ນຖານກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ ແລະ ກວດກາຊັບພະຍາກອນປ່າໄມ້, ສົ່ງເສີມເສີມການຟື້ນຟູ ແລະ ຂະຫຍາຍຊັບພະຍາກອນປ່າໄມ້ ເພື່ອເຮັດໃຫ້ຊັບພະຍາກອນປ່າໄມ້ມີຄວາມອຸດົມສົມບູນ ປະກອບສ່ວນ ເຂົ້າໃນການພັດທະນາເສດຖະກິດ - ສັງຄົມຂອງຊາດ. ຕະຫຼອດຈົນຮອດການກຳນົດປະເພດປ່າໄມ້, ການໃຫ້ເຊົ່າ ຫຼື ສຳປະທານ ແລະ ການຫັນປ່ຽນທີ່ດິນປ່າໄມ້ ດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 81 (ປັບປຸງ) ການຫັນປ່ຽນ ແລະ ລັກສະນະການຫັນປ່ຽນ ທີ່ດິນປ່າໄມ້: ການຫັນປ່ຽນທີ່ດິນປ່າໄມ້ ເປັນທີ່ດິນປະເພດອື່ນ ຈະດຳເນີນໄດ້ກໍຕໍ່ເມື່ອເປັນການຮັບໃຊ້ຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ, ກຳນົດຢູ່ໃນແຜນຈັດສັນທີ່ດິນແຫ່ງຊາດ ແລະ ທ້ອງຖິ່ນ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການນຳໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ ໂດຍບໍ່ມີຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ແລະ ຕ້ອງປະຕິບັດຫຼັກການ ເຊົ່າ ຫຼື ສຳປະທານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 87 ຂອງກົດໝາຍສະບັບນີ້.

ມາດຕາ 87 (ປັບປຸງ) ການເຊົ່າ ແລະ ສຳປະທານທີ່ດິນປ່າໄມ້ ຕ້ອງໄດ້ປະຕິບັດຕາມຫຼັກການ ແລະ ໃຫ້ດຳເນີນໃນເຂດທີ່ໄດ້ຈັດສັນໄວ້ເທົ່ານັ້ນ ແລະ ປະຕິບັດຕາມຫຼັກການດັ່ງນີ້:

- ສຶກສາຂໍ້ມູນທາງດ້ານເສດຖະກິດ-ສັງຄົມ, ຄວາມເໝາະສົມທາງທຳມະຊາດເຊັ່ນ: ດິນ, ອາກາດ, ຄວາມສູງຈາກລະດັບໜ້ານ້ຳທະເລ, ປະລິມານນ້ຳຝົນ, ແຫຼ່ງນ້ຳ, ສິດນຳໃຊ້ ຫຼື ໃຊ້ທີ່ດິນ, ແຮງງານທ້ອງຖິ່ນ, ສຳຫຼວດສະພາບປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ປຶກສາຫາລືເປັນເອກະພາບການກັບປະຊາຊົນທ້ອງຖິ່ນ.
- ສ້າງບົດວິພາກເສດຖະກິດ-ເຕັກນິກ ໂດຍຜ່ານການຮັບຮອງຈາກຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.
- ສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງມາດຕະການແກ້ໄຂຢ່າງເໝາະສົມ ໂດຍການຢັ້ງຢືນຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ
- ສ້າງແຜນດຳເນີນງານໂດຍເນັ້ນໃສ່ການປົກປັກຮັກສາແຫຼ່ງນ້ຳ ແລະ ສິ່ງແວດລ້ອມ, ການບຸກເບີກເນື້ອທີ່, ການພັດທະນາບ້ານ, ການສົ່ງເສີມປະຊາຊົນມີສ່ວນຮ່ວມໃນການດຳເນີນການຜະລິດ, ການນຳໃຊ້ເຕັກໂນໂລຊີ ແລະ ອື່ນໆ ຕະຫຼອດເຖິງການແບ່ງປັນຜົນປະໂຫຍດ.

ຜູ້ທີ່ໄດ້ຮັບອະນຸຍາດໃຫ້ເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ຕ້ອງໄດ້ຈ່າຍຄ່າເຊົ່າ ຫຼື ຄ່າສຳປະທານ ແລະ ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆເຊັ່ນ: ຄ່າການບໍລິການທາງດ້ານວິຊາການ, ຄ່າປັບໜ້າດິນ, ຄ່າປູກຕົ້ນໄມ້, ຄ່າຟື້ນຟູປ່າທົດແທນຄືນ ແລະ ຄ່າທຳນຽມອື່ນໆຕາມກົດໝາຍ.

ໄມ້ ແລະ ຊັບພະຍາກອນປ່າໄມ້ ທີ່ມີຢູ່ໃນເຂດໃຫ້ເຊົ່າ ຫຼື ສຳປະທານ ແມ່ນເປັນກຳມະສິດຂອງລັດ ຍົກເວັ້ນໄມ້ປູກທີ່ເປັນຂອງບຸກຄົນ ຫຼື ການຈັດຕັ້ງອື່ນ.

2.2.5 ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ, ສະບັບປັບປຸງ (2017)

ກົດໝາຍສະບັບນີ້ໄດ້ກຳນົດອອກເປັນ 14 ພາກ, ກວມເອົາ 103 ມາດຕາ. ເຊິ່ງໃນແຕ່ລະມາດຕາຂອງກົດໝາຍສະບັບນີ້ ແມ່ນຈະໄດ້ຄວບຄຸມກ່ຽວກັບ ການນຳໃຊ້ແຫຼ່ງນ້ຳຕ່າງໆໃນແຕ່ລະພື້ນທີ່ໃຫ້ເກີດປະໂຫຍດສູງສຸດ ໂດຍຈະ

ມີການກຳນົດແຜນຍຸດທະສາດການຄຸ້ມຄອງ, ການບໍລິຫານ ແລະ ການນຳໃຊ້ແຫຼ່ງນ້ຳ ແລະ ຊັບພະຍາກອນນ້ຳ. ນອກນັ້ນ, ຍັງໄດ້ເນັ້ນເຖິງ ມາດຕະຖານຄຸນນະພາບນ້ຳເປື້ອນ ກ່ອນທີ່ຈະປ່ອຍລົງສູ່ແຫຼ່ງນ້ຳທຳມະຊາດ ການນຳໃຊ້ ແລະ ການບໍລິການ ກ່ຽວກັບນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ, ການປ້ອງກັນແຫຼ່ງນ້ຳໃນການຕ້ານຜົນເສຍຫາຍ - ການບູລະນະຟື້ນຟູແຫຼ່ງນ້ຳ. ເຊິ່ງກົດໝາຍນີ້ແມ່ນມີຜົນໃນການຄວບຄຸມການນຳໃຊ້ແຫຼ່ງນ້ຳໃນທຳມະຊາດເຂົ້າໃນໂຄງການພັດທະນາ, ເພື່ອການນຳໃຊ້ໃຫ້ເກີດປະໂຫຍດສູງສຸດ.

2.2.6 ກົດໝາຍວ່າດ້ວຍການກໍ່ສ້າງ (05/ສພຊ, 2009)

ກົດໝາຍວ່າດ້ວຍການກໍ່ສ້າງ ແມ່ນຮັບປະກັນຄຸນນະພາບ, ສອດຄ່ອງກັບແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ, ພື້ນຖານໂຄງລ່າງ ໃຫ້ມີຄວາມປອດໄພ ແລະ ບໍ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ - ສັງຄົມ. ໃນນີ້ ມາດຕາທີ 5 ຂອງກົດໝາຍສະບັບນີ້ ການພັດທະນາຕ້ອງຄຽງຄູ່ກັບການອະນຸລັກ, ການປົກປັກຮັກສາມໍລະດົກທາງ ວັດທະນະທຳ, ປະຫວັດສາດ. ວັດສະດຸກໍ່ສ້າງຕ້ອງໃຫ້ໄດ້ມາດຕະຖານ, ຖ້າຫາກພື້ນທີ່ການພັດທະນາໂຄງການຖືກ ດິນຂອງບຸກຄົນ ຫຼື ປະຊາຊົນ ຕ້ອງພົວພັນເຖິງໜ່ວຍງານທີ່ກ່ຽວຂ້ອງ ແລະ ເສຍຄ່າຕອບແທນຕາມຄວາມເໝາະສົມ.

ມາດຕາ 34: ການປ້ອງກັນຄວາມປອດໄພ.

ການປ້ອງກັນຄວາມປອດໄພໃນກໍລະນີທົ່ວໄປ ໃຫ້ນຳໃຊ້ມາດຕະການຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງເປັນຕົ້ນແມ່ນ ມີປ້າຍເຕືອນໄພ, ມີຮົ້ວອ້ອມສະໜາມກໍ່ສ້າງ, ມີເຄື່ອງປ້ອງກັນແຮງງານເຊັ່ນ: ໝວກກັນ ກະທົບ, ເກີບ, ຖົງມື, ແວ່ນຕາກັນແສງ. ໃນເວລາດຳເນີນການກໍ່ສ້າງໂຄງການໃດໜຶ່ງຖ້າຫາກມີເຫດສຸດວິໄສເກີດຂຶ້ນ ເຊັ່ນ: ນ້ຳຖ້ວມ, ລົມພະຍຸ, ໄຟໄໝ້, ແຜ່ນດິນໄຫວ, ດິນຖະຫຼົ່ມ ຫຼື ໄພພິບັດອື່ນທີ່ກະທົບຕໍ່ການດຳເນີນໂຄງການ ກໍ່ສ້າງນັ້ນ ຜູ້ຮັບເໝົາຕ້ອງມີມາດຕະຖານ ປ້ອງກັນ ແລະ ແກ້ໄຂຢ່າງທັນການດັ່ງນີ້:

1. ສັນຍາເຕືອນໄພໃນສະໜາມກໍ່ສ້າງ.

2. ຢຸດເຊົາການກໍ່ສ້າງຊົ່ວຄາວແລ້ວນຳໃຊ້ມາດຕະການແກ້ໄຂທີ່ເໝາະສົມໃຫ້ທັນເວລາ ເພື່ອຮັບປະກັນຄວາມປອດ ໄພ ໃຫ້ແກ່ຜູ້ອອກແຮງງານ ແລະ ປົກປັກຮັກສາຊັບສິນຂອງໂຄງການກໍ່ສ້າງ.

3. ລາຍງານເຫດການໃຫ້ເຈົ້າຂອງໂຄງການ, ເຈົ້າໜ້າທີ່ທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນຢ່າງຮີບດ່ວນເພື່ອມີ ມາດຕະການແກ້ໄຂຢ່າງທັນການ.

2.2.7 ກົດໝາຍວ່າດ້ວຍ ການອະນາໄມ ແລະ ສິ່ງເສີມສຸຂະພາບ (ເລກທີ 73/ສພຊ, 2019)

ການພັດທະນາໂຄງການກໍ່ສ້າງ ຕ້ອງປະຕິບັດຕາມກົດໝາຍ ລະບຽບການ ແລະ ມາດຕະການໃນການຮັກສາຄວາມ ສະອາດ, ກັນພະຍາດທີ່ອາດຈະເກີດຈາກການດຳເນີນໂຄງການ ຜູ້ພັດທະນາໂຄງການ ຕ້ອງສົ່ງເສີມສຸຂະພາບເພື່ອ ເຮັດໃຫ້ພົນລະເມືອງມີສຸຂະພາບທີ່ສົມບູນ, ຄຸນນະພາບທີ່ດີ ພ້ອມທັງປຸກລະດົມໃຫ້ຄວາມສຳຄັນໃນການ ອະນາໄມ, ປົກປັກຮັກສາສິ່ງແວດລ້ອມທຳມະຊາດໃຫ້ອຸດົມສົມບູນສວຍງາມ ແນ່ໃສ່ຫຼຸດຜ່ອນອັດຕາການເຈັບປ່ວຍ , ເສຍຊີວິດ ແລະ ຕ້ານກັບເຊື້ອພະຍາດຕ່າງໆ. ການອະນາໄມໃນການປະກອບອາຊີບ ມາດຕາ 26 ຜູ້ໃຊ້ແຮງງານ ຕ້ອງປະກອບອຸປະກອນ ປ້ອງກັນໄພແຮງງານໃຫ້ແກ່ຜູ້ອອກແຮງງານ ລວມທັງຮັບປະກັນຫຼັກການອະນາໄມຂອງ ສະຖານທີ່ອອກແຮງງານເປັນຕົ້ນ ຕ້ອງໃຫ້ມີແສງສະຫວ່າງ, ມີອາກາດຖ່າຍເທຢ່າງພຽງພໍ, ມີອຸນຫະພູມ, ມີຄວາມ

ປຽກຊຸ່ມ, ມີຄວາມສັ່ນສະເທືອນ, ມີສຽງດັງ, ມີກິ່ນ ແລະ ຂີ້ຝຸ່ນ ບໍ່ໃຫ້ເກີນມາດຕະຖານຕາມທີ່ໄດ້ກຳນົດ ໄວ້ໃນ ລະບຽບການ. ຜູ້ອອກແຮງງານ ແລະ ຜູ້ປະກອບວິຊາຊີບ ເປັນຕົ້ນໃນຂະແໜງວຽກງານທີ່ເປັນອັນຕະລາຍຕໍ່ ສຸຂະພາບຕ້ອງ ໄດ້ຮັບການປ້ອງກັນ, ການກວດ, ປິ່ນປົວ, ເບິ່ງແຍງສຸຂະພາບຕາມກົດລະບຽບ.

2.2.8 ກົດໝາຍວ່າດ້ວຍແຮງງານ (ເລກທີ 021/ສພຊ, 2013)

ຈຸດປະສົງຂອງກົດໝາຍສະບັບນີ້ ແນ່ໃສ່ເຮັດໃຫ້ ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ໄດ້ຮັບການປົກປ້ອງສິດ, ການດຳເນີນບົນພື້ນຖານສັນຍາແຮງງານ ລະຫວ່າງ ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ, ຮັບປະກັນຕ່າງຝ່າຍຕ່າງໄດ້ ຮັບຜົນປະໂຫຍດ ໂດຍບໍ່ມີການຈຳແນກ ຜົນປະໂຫຍດອັນຊອບທຳ ບໍ່ອະນຸຍາດໃຫ້ນຳໃຊ້ແຮງງານດ້ວຍການບັງຄັບ ທຸກຮູບແບບ ຖ້າຫາກມີການຈ້າງແຮງງານຕ່າງດ້າວໃນໜຶ່ງຫົວໜ່ວຍແຮງງານ ດ້ວຍການໃຫ້ບູລິມະສິດແຮງງານລາວ ກ່ອນ. ເວລາພັກວຽກຕ້ອງປະຕິບັດຕາມນະໂຍບາຍຂອງລັດ.

ການກຳນົດເວລາເຮັດວຽກ ແລະ ເວລາພັກຜ່ອນ ໃຫ້ຜູ້ອອກແຮງງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍ ສອດຄ່ອງກັບສະຖານທີ່ຕັ້ງ ຂອງຫົວໜ່ວຍແຮງງານ ແລະ ເງື່ອນໄຂຕົວຈິງຂອງວຽກທີ່ໄດ້ກຳນົດໄວ້ໃນມາດຕາ 51 ໃນທຸກຫົວໜ່ວຍແຮງງານ ແມ່ນບໍ່ໃຫ້ເກີນ ຫົກວັນຕໍ່ອາທິດ ຫຼື ອາທິດໜຶ່ງ ບໍ່ໃຫ້ເກີນ ສີ່ສິບແປດຊົ່ວໂມງ ແລະ ເວລາພັກຜ່ອນເພື່ອຮັບປະທານອາຫານທ່ຽງ ບໍ່ໃຫ້ ໜ້ອຍ 1 ຊົ່ວໂມງຕໍ່ວັນ.

ການກຳນົດເງິນເດືອນ ຫຼື ຄ່າແຮງງານຕ່ຳສຸດຕ້ອງປະຕິບັດຕາມລະບຽບການໃນມາດຕາ 108 ລັດ ເປັນຜູ້ປະກາດໃຊ້ ລະດັບເງິນເດືອນ ຫຼື ຄ່າແຮງງານຂັ້ນຕ່ຳສຸດ ໃນແຕ່ລະໄລຍະ ໂດຍອີງຕາມຜົນຂອງການປຶກສາຫາລື ຂອງອົງການ ສາມຝ່າຍ.

ມາດຕາ 68: (ປັບປຸງ) ການຮັບເອົາແຮງງານຕ່າງປະເພດ

ຜູ້ໃຊ້ແຮງງານມີໜ້າທີ່ໃນການສ້າງແຜນຄວາມຕ້ອງການນຳໃຊ້ແຮງງານ ຢູ່ໃນຫົວໜ່ວຍແຮງງານຂອງຕົນ ດ້ວຍການ ໃຫ້ບູລິມະສິດແກ່ແຮງງານລາວກ່ອນ, ແຕ່ຫາກເຫັນວ່າມີຄວາມຈຳເປັນ ເຊິ່ງບໍ່ສາມາດຊອກຫາແຮງງານລາວໄດ້ຢ່າງ ພຽງພໍກັບຄວາມຕ້ອງການນັ້ນ ກໍມີສິດໃນການສະເໜີຂໍນຳໃຊ້ແຮງງານຕ່າງປະເທດໄດ້.

ອັດຕາສ່ວນການຮັບເອົາແຮງງານຕ່າງປະເທດ ເຂົ້າມາເຮັດວຽກໃນຫົວໜ່ວຍແຮງງານໃຫ້ປະຕິບັດດັ່ງນີ້:

1. ສິບຫ້າສ່ວນຮ້ອຍ ຂອງຈຳນວນຜູ້ອອກແຮງງານລາວທັງໝົດ ໃນຫົວໜ່ວຍແຮງງານນັ້ນ ສຳລັບຜູ້ມີວິຊາສະເພາະ ທີ່ອອກແຮງງານທາງດ້ານຮ່າງກາຍ.

2. ຊາວຫ້າສ່ວນຮ້ອຍ ຂອງຈຳນວນຜູ້ອອກແຮງງານລາວທັງໝົດ ໃນຫົວໜ່ວຍແຮງງານນັ້ນ ສຳລັບຜູ້ມີວິຊາສະເພາະ ທີ່ອອກແຮງງານທາງມັນສະໝອງ.

ສຳລັບໂຄງການຂະໜາດໃຫຍ່, ໂຄງການບູລິມະສິດຂອງລັດຖະບານ ທີ່ມີເວລາແຕ່ຫ້າປີລົງມາ ການນຳໃຊ້ແຮງງານ ຕ່າງປະເທດ ໃຫ້ປະຕິບັດຕາມສັນຍາລະຫວ່າງເຈົ້າຂອງໂຄງການກັບລັດຖະບານ.

ສຳລັບຜູ້ອອກແຮງງານຕາມອາຊີບທີ່ສາມາດເຄື່ອນຍ້າຍໃນຂອບການຮ່ວມມືກັບບັນດາປະເທດ ເປັນຕົ້ນ ປະເທດ ອາຊີບເວັນອອກສ່ຽງໃຕ້ ຖ້າມີກໍ່ໃຫ້ປະຕິບັດຕາມລະບຽບການສະເພາະ.

ແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກ ຢູ່ ສປປ ລາວ ຈະໄດ້ຮັບການປົກປ້ອງ ແລະ ຄຸ້ມຄອງ ຕາມກົດໝາຍສະບັບ ນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງຂອງ ສປປ ລາວ.

2.2.9 ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ (ເລກທີ 07/ສພຊ, 2008)

ການພັດທະນາໂຄງການທີ່ໃກ້ກັບແຫຼ່ງນ້ຳທຳມະຊາດຕ້ອງໃຊ້ກົດໝາຍ ລະບຽບການ ແລະ ມາດຕະການກ່ຽວກັບ ວຽກງານ ສັດນ້ຳ ແລະ ສັດປ່າທຳມະຊາດ ເພື່ອສົ່ງເສີມປົກປັກຮັກສາ, ການຂະຫຍາຍພັນ ແລະ ການນຳໃຊ້ສັດນ້ຳ ແລະ ສັດປ່າ ຢ່າງຍາວນານໂດຍບໍ່ໃຫ້ມີຜົນກະທົບຕໍ່ທຳມະຊາດ, ຖິ່ນຢູ່ອາໄສ, ຈຳກັດການຫຼຸດລົງ ແລະ ການສູນພັນ ຂອງສັດນ້ຳ ແລະ ສັດປ່າພ້ອມທັງປຸກລະດົມທົ່ວປວງຊົນໂດຍອ້າງອີງໃນມາດຕານີ້ ໃຫ້ເຫັນໄດ້ຄວາມສຳຄັນ, ເຊີດຊູ ສະຕິຮັກ, ຫວງແຫນ, ຖະໜອມ ແລະ ເປັນເຈົ້າການຮ່ວມໃນການຄຸ້ມຄອງ, ກວດກາ, ອານຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ສັດນ້ຳ ແລະ ສັດປ່າ ແບບຍືນຍົງ ແນ່ໃສ່ຮັບປະກັນຄວາມອຸດົມສົມບູນຂອງລະບົບນິເວດທຳ ມະຊາດ ປະກອບສ່ວນຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ ແລະ ເປັນທ່າແຮງໃນການ ພັດທະນາເສດຖະກິດ - ສັງຄົມ ແຫ່ງຊາດ.

2.2.10 ກົດໝາຍວ່າດ້ວຍການຂົນສົ່ງທາງບົກ (ເລກທີ 036/ສພຊ, 2012)

ການຮັກສາຄວາມເປັນລະບຽບ ແລະ ປອດໄພການຂົນສົ່ງທາງບົກ ແມ່ນປະຕິບັນຕາມຂໍ້ກຳນົດມາດຕະການ. ການ ຄຸ້ມຄອງ ແລະ ການຕິດຕາມກວດກາ ບັນດາກິດຈະການຕ່າງໆ ທີ່ກ່ຽວຂ້ອງກັບການຂົນສົ່ງທາງບົກ.

ມາດຕາ 5: (ໃໝ່) ຫຼັກການກ່ຽວກັບວຽກງານຂົນສົ່ງທາງບົກ.

1. ຮັບປະກັນ ຄວາມສອດຄ່ອງກັບແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ, ປະສິດທິຜົນ, ຄວາມຍືນຍົງ ທາງ ດ້ານເສດຖະກິດ - ສັງຄົມ, ການປ້ອງກັນຊາດ - ການປ້ອງກັນຄວາມສະຫງົບ ແລະ ການປົກປັກຮັກສາສິ່ງແວດ ລ້ອມ.

2. ຮັບປະກັນຄຸນນະພາບ, ຄວາມສະດວກ, ຄວາມສະບາຍ, ຄວາມວ່ອງໄວ ແລະ ຄວາມປອດໄພທາງດ້ານຊີວິດ, ສຸຂະພາບ, ຊັບສິນ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ໃຊ້ບໍລິການ ແລະ ຜູ້ໃຫ້ບໍລິການ.

3. ຮັບປະກັນຄວາມໂປ່ງໃສ, ຄວາມຍຸຕິທຳ ແລະ ມີມາລະຍາດໃນການບໍລິການ.

4. ຮັບປະກັນການນຳໃຊ້ໝາຍທາງດ້ານເສດຖະກິດ - ເຕັກນິກ, ເຕັກໂນໂລຊີທີ່ທັນສະໄໝ, ມາດຕະຖານທາງດ້ານ ບໍລິການ ກ່ຽວກັບການຂົນສົ່ງທາງບົກ.

5. ປະສານສົມທົບລະຫວ່າງ ບັນດາຂະແໜງ, ອົງການປົກຄອງທ້ອງຖິ່ນ ແລະ ການມີສ່ວນຮ່ວມຂອງສັງຄົມ ໃນ ການຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານຂົນສົ່ງທາງບົກ.

ສ່ວນພັນທະຂອງຜູ້ດຳເນີນການຂົນສົ່ງທາງບົກ ແມ່ນຕ້ອງມີພັນທະເຄົາລົບລະບຽບກົດໝາຍກ່ຽວກັບການຂົນສົ່ງ, ຮັກສາຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ, ປົກປັກຮັກສາເສັ້ນທາງ, ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ, ສຶກສາອົບຮົມພະນັກງານຂອງຕົນ ລວມທັງປະຕິບັດພັນທະອື່ນທີ່ໄດ້ກຳນົດໄວ້ໃນມາດຕາ 5 ກ່ຽວກັບການ ຂົນສົ່ງຕາມລະບຽບກົດໝາຍ.

2.2.11 ກົດໝາຍວ່າດ້ວຍການສົ່ງເສີມລົງທຶນພາຍໃນ ແລະ ຕ່າງປະເທດ (ເລກທີ 02/ສພຊ, 2009)

ກົດໝາຍສະບັບນີ້ ແນ່ໃສ່ການພັດທະນາເສດຖະກິດການຄ້າອອກໄປສູ່ຊົນນະບົດ ເຊິ່ງມີລະບຽບການ ແລະ ມາດຕະການກ່ຽວກັບການສົ່ງເສີມ, ການຄຸ້ມຄອງການລົງທຶນພາຍໃນ ແລະ ຕ່າງປະເທດ ເພື່ອຮັບປະກັນສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ, ຂອງລັດ ແລະ ຂອງປະຊາຊົນ. ໃນມາດຕາ 4 ລັດມີນະໂຍບາຍໃນການສົ່ງເສີມການລົງທຶນໄວ້ວ່າ: ລັດສົ່ງເສີມໃຫ້ລົງທຶນເຂົ້າໃສ່ທຸກຂະແໜງການ, ທາງດ້ານອຸດສາຫະກຳ, ການກະສິກຳ ແລະ ກິດຈະການອື່ນໆ ທຸກເຂດແຄ້ວນໃນທົ່ວປະເທດ ເວັ້ນເສຍແຕ່ເຂດ ແລະ ກິດຈະການທີ່ແຕະຕ້ອງເຖິງຄວາມໝັ້ນຄົງ ແລະ ຄວາມສະຫງົບຂອງຊາດ, ຜົນສະທ້ອນອັນຮ້າຍແຮງຕໍ່ສິ່ງແວດລ້ອມໃນປັດຈຸບັນ ແລະ ຍາວນານ, ຕໍ່ສຸຂະພາບຂອງປະຊາຊົນ ແລະ ວັດທະນະທຳອັນດີງາມຂອງຊາດ.

2.3 ສັນຍາ ແລະ ສົນທິສັນຍາສາກົນ ທີ່ຕິດພັນກັບຜົນກະທົບຂອງການໂຄງການ

2.3.1 ສົນທິສັນຍາສະຫະປະຊາຊາດກ່ຽວກັບຊີວະນາໆພັນ (1996)

ພາຍໃຕ້ສົນທິສັນຍານີ້ ສປປ ລາວ ໄດ້ຕົກລົງທີ່ຈະ:

- ພັດທະນາການອະນຸລັກຊີວະນາໆພັນແຫ່ງຊາດ ແລະ ຍຸດທະສາດການນຳໃຊ້ແບບຍືນຍົງ.
- ການພັດທະນານິຕິກຳສຳລັບການປົກປ້ອງຊະນິດພັນ ແລະ ປະຊາກອນທີ່ຖືກຄຸກຄາມ.
- ປະສົມປະສານກັບການອະນຸລັກ ແລະ ການນຳໃຊ້ແບບຍືນຍົງຂອງຊັບພະຍາກອນຊີວະພາບເຂົ້າໃນການຕັດສິນໃຈຂອງປະເທດ.
- ດຳເນີນການປະເມີນຜົນສິ່ງແວດລ້ອມ ສຳລັບໂຄງການການພັດທະນາ ເພື່ອຫຼຸດຜ່ອນຜົນກະທົບທາງລົບ.

2.3.2 ສົນທິສັນຍາໄພແຫ້ງແລ້ງ

ສົນທິສັນຍາກ່ຽວກັບໄພແຫ້ງແລ້ງ (Desertification Convention) ມີຈຸດປະສົງເພື່ອຕ້ານ ແລະ ຫຼຸດຜ່ອນ ຜົນກະທົບຂອງໄພແຫ້ງແລ້ງໃນປະສົບໄພແຫ້ງແລ້ງທີ່ຮ້າຍແຮງ, ໂດຍສະເພາະແມ່ນຢູ່ໃນ ອາຟຣິກາ ພິອພັນກັບທຸກລະດັບ, ໂດຍຜ່ານການຮ່ວມມືຈາກພາກສ່ວນທີ່ກ່ຽວຂ້ອງ ຢູ່ໃນທຸກລະດັບ ແລະ ອີງການຈັດຕັ້ງສາກົນໃນຂອບຂອງການປະສົມປະສານ ບັນດາປະເທດ ວິທີການທີ່ສອດຄ່ອງກັບວາລະທີ 21 ຂອງກອງປະຊຸມ, ປະກອບຄຳເຫັນເຂົ້າເພື່ອການບັນລຸເປົ້າໝາຍ ການພັດທະນາແບບຍືນຍົງ ໃນເຂດພື້ນທີ່ ທີ່ຖືກກະທົບ. ເພື່ອບັນລຸຈຸດປະສົງນີ້ ຕ້ອງໄດ້ມີການຮ່ວມມື ໃນໄລຍະຍາວ ເພື່ອປະສົມປະສານບັນຍຸດທະສາດ ເພື່ອແກ້ໄຂບັນຫາໄປພ້ອມກັນ. ໃນເຂດທີ່ຖືກກະທົບ, ການປັບປຸງ ແລະ ຟື້ນຟູທີ່ດິນຜະລິດ, ການອະນຸລັກ ແລະ ການຄຸ້ມຄອງແບບຍືນຍົງ ຂອງຊັບພະຍາກອນດິນ ແລະ ນ້ຳ ອັນເຮັດໃຫ້ສະພາບການດຳລົງຊີວິດ ຂອງຊຸມຊົນດີຂຶ້ນ. ສປປ ລາວ ໄດ້ເຊັນສົນທິສັນຍານີ້ ໃນວັນທີ 30 ສິງຫາ 1995 ແລະ ໄດ້ຮັບການຍອມຮັບໃນ ວັນທີ 20 ກັນຍາ 1996 ທີ່ມີຜົນບັງຄັບໃຊ້ ໃນວັນທີ 26 ທັນວາ 1996.

2.3.3 ສົນທິສັນຍາກ່ຽວກັບການປ່ຽນແປງດິນຟ້າອາກາດ

ຫຼາຍທົດສະວັດກ່ອນໜ້ານີ້, ບັນດາປະເທດທີ່ໄດ້ເຂົ້າຮ່ວມເປັນສົນທິສັນຍາສາກົນ ທີ່ກ່ຽວກັບການປ່ຽນແປງຂອງດິນຟ້າອາກາດ (United Nations Framework Convention on Climate change / UNFCCC) ເລີ່ມຕົ້ນພິຈາລະນາສິ່ງທີ່ສາມາດ ແລະ ຄວນເຮັດເພື່ອຫຼຸດຜ່ອນພາວະໂລກຮ້ອນ ແລະ ການຮັບມືກັບສິ່ງໃດກໍ່ຕາມ ທີ່ມີສາເຫດມາຈາກອຸນຫະພູມເພີ່ມຂຶ້ນ. ໃນໄລຍະຜ່ານມານີ້ຫຼາຍຊາດໄດ້ຮັບຮອງເອົາສົນທິສັນຍາ Kyoto, ເຊິ່ງມີອຳ

ນາດ ທາງດ້ານກົດໝາຍຫຼາຍກອງເລຂາ UNFCCC ສະໜັບສະໜຸນໃຫ້ບັນດາສະຖາບັນຕ່າງໆມີສ່ວນຮ່ວມໃນ ຂະບວນການປ່ຽນແປງດິນຟ້າອາກາດ.

ສົນທິສັນຍາກ່ຽວກັບການປ່ຽນແປງຂອງສະພາບອາກາດທີ່ກຳນົດເປັນໂຄງຮ່າງ ໂດຍລວມສຳລັບລັດຖະບານ ເພື່ອ ຮັບມືກັບບັນຫາຕ່າງໆທີ່ເກີດຈາກການປ່ຽນແປງສະພາບອາກາດ ເປັນທີ່ຮັບຮູ້ວ່າລະບົບການສະພາບອາກາດແມ່ນ ເປັນຊັບພະຍາກອນຮ່ວມກັນ, ສາມາດຮັບຜົນກະທົບໂດຍການປ່ອຍອາຍພິດອຸດສາຫະກຳ ແລະ ອື່ນໆຂອງຄາບອນ ແລະ ທາດອາຍຜິດເຮືອນແກ້ວອື່ນໆ.

ພາຍໃຕ້ສົນທິສັນຍາ, ລັດຖະບານ:

- ເກັບກຳ ແລະ ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການປ່ອຍອາຍພິດເຮືອນແກ້ວ, ນະໂຍບາຍແຫ່ງຊາດ ແລະ ການແກ້ໄຂທີ່ດີທີ່ສຸດ;
- ເປີດຍຸດທະສາດແຫ່ງຊາດສຳລັບການແກ້ໄຂບັນຫາການປ່ອຍອາຍພິດເຮືອນແກ້ວ ແລະ ດັດປັບກັບຜົນ ກະທົບປະເມີນໄວ້, ລວມທັງການສະໜອງ/ສະໜັບສະໜຸນ ເງື່ອນໄຂດ້ານການເງິນ ແລະ ເຕັກໂນໂລຊີ ໃຫ້ ກັບບັນດາປະເທດທີ່ກຳລັງພັດທະນາ;
- ໃຫ້ຄວາມຮ່ວມມືປະຕິບັດງານໃນການກະກຽມສຳລັບການຮັບຮອງເອົາຜົນກະທົບຂອງການປ່ຽນແປງດິນ ຟ້າອາກາດ.

2.4 ໂຄງຮ່າງການຈັດຕັ້ງຂອງ ລັດຖະບານ ສປປ ລາວ

2.4.1 ກົມ ແລະ ກະຊວງກ່ຽວຂ້ອງ

ລັດຖະບານເປັນຜູ້ຄຸ້ມຄອງວຽກງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດຢ່າງລວມສູນ ແລະ ເປັນ ເອກະພາບໃນທົ່ວປະເທດ ໂດຍມອບໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກົມ ສິ່ງແວດລ້ອມ) ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການໃນການປະສານສົມທົບກັບບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ. ການສຶກສາບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບ ລະອຽດ(ບປຜສ) ແມ່ນຈະໄດ້ນຳໄປສະເໜີ ແລະ ລາຍງານໃຫ້ບັນດາກະຊວງທີ່ກ່ຽວຂ້ອງໃນຂັ້ນສູນກາງ, ແຂວງ/ ນະຄອນ, ເມືອງ ແລະ ຊຸມຊົນໃກ້ຄຽງ ເພື່ອມີສ່ວນຮ່ວມ ໃນການພັດທະນາໂຄງການ ໂດຍສະເພາະແມ່ນກ່ຽວກັບ ການຄຸ້ມຄອງ ແລະ ຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ ທີ່ເກີດຂຶ້ນ ຫຼື ອາດຈະເກີດຂຶ້ນຈາກການດຳເນີນກິດຈະ ກຳຕ່າງໆ ທີ່ພົວພັນນຳໂຄງການ ເພື່ອກ້າວໄປຫາ ການຮັບຮອງເອົາບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບ ລະອຽດຂອງໂຄງການ; ເຊິ່ງບັນດາກະຊວງທີ່ກ່ຽວຂ້ອງຫຼັກແມ່ນປະກອບມີ: ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກົມສິ່ງແວດລ້ອມ, ກົມຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກົມ ທີ່ດິນ...), ກະຊວງພະລັງງານ ແລະ ບໍ່ແຮ່ (ກົມທຸລະກິດພະລັງງານ, ສະຖາບັນພະລັງງານທົດແທນ, ກົມແຜນການ ...), ກະຊວງກະສິກຳ ແລະ ປ່າໄມ້ (ກົມປ່າໄມ້..) ນອກຈາກນັ້ນຍັງມີບັນດາກະຊວງອ້ອມຂ້າງກ່ຽວຂ້ອງອື່ນໆ ທີ່ຂຶ້ນ ກັບລັດຖະບານ ສປປ ລາວ ເພື່ອມີສ່ວນຮ່ວມນຳ.

2.4.2 ອົງການຈັດຕັ້ງລັດຖະບານ

ອົງການຈັດຕັ້ງລັດ ແມ່ນເຮັດໜ້າທີ່ຕິດຕາມກວດກາ ທີ່ຕິດພັນໂດຍກົງກັບການຈັດຕັ້ງປະຕິບັດມາດຕະການ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ພາຍໃຕ້ ບົດປະເມີນຜົນ

ກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ເງື່ອນໄຂຕ່າງໆ ກຳນົດໄວ້ໃນໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ, ເຊິ່ງລາຍລະອຽດ ກ່ຽວກັບໜ້າທີ່ຂອງແຕ່ລະພາກສ່ວນ ໃນການຕິດຕາມກວດກາ ມີດັ່ງ:

ກ. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ: ມີໜ້າທີ່ເປັນເຈົ້າການຫຼັກ ໃນການຕິດຕາມກວດກາ ການຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ພາຍໃຕ້ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມ ເຊິ່ງລວມເອົາການລົງພາກສະໜາມຕິດຕາມກວດກາດ້ວຍຕົນເອງ ແລະ ການຄົ້ນຄວ້າ ປະກອບຄຳເຫັນ ຕໍ່ບົດລາຍງານສະພາບການຕິດຕາມກວດກາ ຂອງເຈົ້າຂອງໂຄງການ.

ຂ. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ: ມີໜ້າທີ່ຕິດຕາມກວດກາ ການຈັດຕັ້ງ ປະຕິບັດມາດຕະການຫຼຸດຜ່ອນ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ພາຍໃຕ້ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມ ຕາມຂອບເຂດ ແບ່ງປັນຄວາມຮັບຜິດຊອບ; ສະຫຼຸບ ແລະ ລາຍງານ ກ່ຽວກັບສະພາບການຕິດຕາມກວດກາສິ່ງແວດລ້ອມໂຄງການ ໃຫ້ການນຳແຂວງ/ນະຄອນຫຼວງ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອຮັບຊາບ ແລະ ໃຫ້ທິດເປັນແຕ່ລະໄລຍະ ແລະ ປະຕິບັດໜ້າທີ່ ໃນການຕິດຕາມກວດກາ ຕາມທີ່ໄດ້ຮັບການມອບໝາຍຈາກຂັ້ນເທິງ ໃຫ້ພະແນກຕົນຮັບຜິດຊອບ.

ຄ. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ: ມີໜ້າທີ່ເປັນໃຈກາງຫຼັກ ໃນວຽກງານຕິດຕາມກວດກາ ການຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ພາຍໃຕ້ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຕາມຂອບເຂດແບ່ງປັນຄວາມຮັບຜິດຊອບ ແລະ ສະຫຼຸບ ແລະ ລາຍງານ ກ່ຽວກັບ ສະພາບການຕິດຕາມກວດກາສິ່ງແວດລ້ອມໂຄງການ ໃຫ້ການນຳເມືອງ/ເທດສະບານ ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ເພື່ອຮັບຊາບ ເປັນແຕ່ລະໄລຍະ ແລະ ປະຕິບັດໜ້າທີ່ ໃນການຕິດຕາມກວດກາ ຕາມທີ່ໄດ້ຮັບການມອບໝາຍຈາກຂັ້ນເທິງ.

ງ. ຂະແໜງການອື່ນທີ່ກ່ຽວຂ້ອງ ທັງໃນລະດັບ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ: ມີໜ້າທີ່ເຂົ້າຮ່ວມນຳຄະນະຕິດຕາມກວດກາ ໂດຍມີຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມທີ່ກ່ຽວຂ້ອງ ເປັນການຈັດຕັ້ງຫຼັກ ໃນການເຄື່ອນໄຫວວຽກງານຕິດຕາມກວດກາ ການຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ທີ່ຕິດພັນກັບຂອບເຂດຂະແໜງການຕົນຮັບຜິດຊອບ; ຄົ້ນຄວ້າ ປະກອບວິຊາການ ເຂົ້າໃນໜ່ວຍງານຄຸ້ມຄອງສິ່ງແວດລ້ອມໂຄງການຕາມການສະເໜີ; ສະຫຼຸບ ແລະ ລາຍງານ ກ່ຽວກັບ ສະພາບການຕິດຕາມກວດກາສິ່ງແວດລ້ອມໂຄງການ ໃນຂອບເຂດຂະແໜງການຕົນຮັບຜິດຊອບ ໃຫ້ການນຳຂະແໜງການຕົນຮັບຊາບ ເປັນແຕ່ລະໄລຍະ;

ຈ. ຂະແໜງການທີ່ຮັບຜິດຊອບຫຼັກໂຄງການລົງທຶນ: ນອກຈາກ ມີໜ້າທີ່ເຂົ້າຮ່ວມນຳຄະນະຕິດຕາມກວດກາ ໂດຍມີຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມທີ່ກ່ຽວຂ້ອງ ເປັນການຈັດຕັ້ງຫຼັກ ໃນ

ການເຄື່ອນໄຫວວຽກງານຕິດຕາມກວດກາ ແມ່ນຍັງສາມາດເຮັດໜ້າທີ່ຕິດຕາມກວດກາດ້ວຍຕົນເອງໂດຍກົງ ບົນ ພື້ນຖານລະບຽບກົດໝາຍ ແລະ ສັນຍາ.

2.5 ດຳລັດ, ນະໂຍບາຍ, ບົດແນະນຳວິຊາການ ແລະ ມາດຕະຖານສາກົນ

2.5.1 ຂໍ້ຕົກລົງ (ເລກທີ 8056/ກຊສ, ລົງທີ 17 ທັນວາ 2013).

ຂໍ້ຕົກລົງວ່າດ້ວຍ ການປະກາດໃຊ້ ບັນຊີການລົງທຶນ ແລະ ກົດຈະການຕ່າງໆທີ່ຈະຕ້ອງດຳເນີນການສຶກສາເບື້ອງຕົ້ນ ກ່ຽວກັບການປະເມີນຜົນກະທົບສິ່ງແວດລ້ອມ ແລະ ການປະເມີນຜົນກະທົບສິ່ງແວດລ້ອມທາງສັງຄົມ ຫຼື ທຳມະ ຊາດ (ເລກທີ 8056/ກຊສ, ລົງທີ 17 ທັນວາ 2013). ແມ່ນເປັນເອກະສານຮັບຮອງ ແລະ ປະກາດໃຊ້ ໃນບັນຊີ ໂຄງການລົງທຶນ ຫຼື ກົດຈະກຳຕ່າງໆ ທີ່ຈະຕ້ອງດຳເນີນການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບສິ່ງແວດລ້ອມ ແລະ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ.

ສຳລັບໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລົມ 600 MW ເມືອງດາກຈຶງ. ແມ່ນເປັນໂຄງການ ລົງທຶນ ແລະ ກົດຈະກຳຕ່າງໆທີ່ນອນຢູ່ໃນຂະແໜງພະລັງງານ ຈັດຢູ່ໃນໝວດ ການພັດທະນາທາງດ້ານລະບົບສາຍ ສົ່ງໄຟຟ້າແຮງສູງ ທີ່ໄດ້ກຳນົດໄວ້ ໃນຫົວຂໍ້ ການກໍ່ສ້າງສາຍສົ່ງໄຟຟ້າແຮງສູງຂະໜາດ ໃຫ່ຍກວ່າ ຫຼື ເທົ່າກັບ 230 ກິ ໂລໂອມ ແມ່ນຈະຖືກຈັດໃນກຸ່ມ 2 ທີ່ຈະຕ້ອງໄດ້ດຳເນີນ ການສ້າງ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບ ລະອຽດ (ບປຜສ).

2.5.2 ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (ເລກທີ 21/ລບ, 2019)

ດຳລັດສະບັບນີ້ແມ່ນຈະມາປ່ຽນແທນ ຄຳແນະນຳວ່າດ້ວຍຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຈາກໂຄງການລົງທຶນ ແລະ ກົດຈະການຕ່າງໆ ຄຳແນະນຳ (ເລກທີ 8030/ກຊສ), ແລະ ຄຳແນະ ນຳ (ເລກທີ 8029/ກຊສ) ໂດຍເນື້ອໃນຂອງດຳລັດ ສະບັບນີ້ ມີຈຸດປະສົງເພື່ອກຳນົດຫຼັກການ, ວິທີການ, ມາດ ຕະການຕ່າງໆທີ່ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ເພື່ອໃຫ້ ວຽກງານດັ່ງກ່າວດຳເນີນຢ່າງຖືກຕ້ອງ, ໂປ່ງໃສ ແລະ ເອກະພາບ ເພື່ອປ້ອງກັນ, ຫຼຸດຜ່ອນ, ແກ້ໄຂຜົນກະທົບທາງລົບ ຕໍ່ສິ່ງແວດລ້ອມ, ຮັບປະກັນການທົດແທນຄ່າເສຍຫາຍຢ່າງສົມເຫດສົມຜົນ ແລະ ຟື້ນຟູຊີວິດການເປັນຢູ່ຂອງຜູ້ໄດ້ ຮັບຜົນກະທົບໃຫ້ດີຂຶ້ນກວ່າເກົ່າ. ມີທັງໝົດ 8 ພາກ 87 ມາດຕາ. ໃນນີ້, ໃນນີ້ພາກທີ III ໝວດ 2 ແມ່ນໄດ້ກຳນົດ ລະອຽດກ່ຽວກັບຫຼັກການ, ຂັ້ນຕອນໃນການສ້າງ, ທົບທວນ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳ ມະຊາດ, ໝວດທີ 4 ການມີສ່ວນຮ່ວມຂອງສັງຄົມ, ໃນມາດຕາ 36 ການມີສ່ວນຮ່ວມຂອງສັງຄົມ ໄດ້ກຳນົດໄວ້ວ່າ: ການມີສ່ວນຮ່ວມຂອງສັງຄົມ ແມ່ນຂະບວນການປຶກສາຫາລື, ສະໜອງຂໍ້ມູນຂ່າວສານ ແລະ ຮັບຄຳຄິດເຫັນຂອງ ທຸກພາກສ່ວນຂອງສັງຄົມ ກ່ຽວກັບໂຄງການລົງທຶນ ແລະ ກົດຈະການຕ່າງໆ ໃນໄລຍະສ້າງ ແລະ ພິຈາລະນາບົດສຶກ ສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນ ຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ພ້ອມທັງຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານການຄຸ້ມ ຄອງສິ່ງແວດລ້ອມ ໃນແຕ່ລະໄລຍະຂອງໂຄງການລົງທຶນ ແລະ ກົດຈະການຕ່າງໆ ເພື່ອຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ.

2.5.3 ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ (ເລກທີ 84/ລບ, 2016)

ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ (ເລກທີ 84/ລບ, 2016) ສະບັບນີ້ ໄດ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ເພື່ອໃຫ້ໂຄງການພັດທະນາ ນຳໄປຈັດຕັ້ງ ປະຕິບັດໃຫ້ຖືກຕ້ອງ ແລະ ມີປະສິດທິຜົນ ແນ່ໃສ່ຮັບປະກັນຜູ້ໄດ້ຮັບຜົນກະທົບ ໄດ້ຮັບການແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ, ການຊ່ວຍສ້າງອາຊີບທີ່ໝັ້ນຄົງ, ການປັບປຸງຊີວິດການເປັນຢູ່ ໃຫ້ດີຂຶ້ນກວ່າເກົ່າ ຫຼື ເທົ່າເດີມ ພ້ອມທັງເຮັດໃຫ້ໂຄງການດັ່ງກ່າວ ໄດ້ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ - ສັງຄົມ. ສຳລັບ ມາດຕາທີ່ ກ່ຽວຂ້ອງກັບໂຄງການ ແມ່ນມີລັກສະນະດັ່ງນີ້:

ມາດຕາ 8: ການປະຕິບັດແຜນການທົດແທນຄ່າເສຍຫາຍ

ການທົດທົນຄ່າເສຍຫາຍຈາກການພັດທະນາໂຄງການໃນຫຼາຍໆກໍລະນີທີ່ກ່ຽວຂ້ອງ ສິດນຳໃຊ້ທີ່ດິນ ແລະ ຊັບສິນ ສິ່ງກໍ່ສ້າງຂອງບຸກຄົນ, ນິຕິບຸກຄົນ ຢ່າງຖືກຕ້ອງຕາມກົດໝາຍ ຫາກສູນເສຍທີ່ດິນສ່ວນໃດສ່ວນໜຶ່ງໄປ ແລະ ດິນ ສ່ວນທີ່ເຫຼືອບໍ່ສາມາດນຳໃຊ້ໄດ້ ເຈົ້າຂອງໂຄງການຕ້ອງທົດແທນຄ່າເສຍຫາຍທັງໝົດ, ໂດຍຈັດສັນທີ່ດິນບ່ອນໃໝ່ ທົດແທນ ຕາມມູນຄ່າປ່ຽນແທນທີ່ຄິດໄລ່ໄວ້ ແລະ ໃຫ້ໄດ້ຮັບເອກະສານ ກ່ຽວກັບ ສິດນຳໃຊ້ທີ່ດິນຕອນນັ້ນ ພ້ອມ ທັງຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ເພື່ອໄດ້ຮັບເອກະສານດັ່ງກ່າວ. ສ່ວນຖ້າຫາກການຈັດສັນທີ່ດິນທີ່ບໍ່ເໝາະສົມທົດ ແທນໃຫ້ ຫຼື ມີມູນຄ່າປ່ຽນແທນໜ້ອຍກ່ວາມູນຄ່າດິນ ທີ່ຜູ້ຮັບຜົນກະທົບສູນເສຍ ຜູ້ພັດທະນາໂຄງການຕ້ອງຫາວິທີ ແກ້ໄຂທົດແທນຄ່າເສຍຫາຍດ້ວຍຮູບການອື່ນຕາມມູນຄ່າປ່ຽນແທນ. ສ່ວນການສູນເສຍໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ແກ່ຊຸມຊົນ, ເຈົ້າຂອງໂຄງການຈະຕ້ອງໄດ້ສ້ອມແປງຄືນ ໃຫ້ຢູ່ໃນສະພາບເກົ່າ ແລະ ຕ້ອງເອົາໃຈໃສ່ເປັນພິເສດ.

ໃນກໍລະນີ ຜູ້ໄດ້ຮັບຜົນກະທົບ ບໍ່ມີເອກະສານທີ່ກ່ຽວຂ້ອງ ກັບການນຳໃຊ້ທີ່ດິນຕາມທີ່ໄດ້ກຳນົດໄວ້ ຕາມຂ້າງເທິງ ຂອງມາດຕານີ້ ຈະບໍ່ໄດ້ຮັບການທົດແທນຄ່າເສຍຫາຍຕໍ່ການສູນເສຍທີ່ດິນດັ່ງກ່າວ, ແຕ່ຈະໄດ້ຮັບການທົດແທນຄ່າ ເສຍຫາຍຕໍ່ ສິ່ງປຸກສ້າງ, ຕົ້ນໄມ້ ແລະ ຜົນລະປູກ ຈາກເຈົ້າຂອງໂຄງການ ຕາມມູນຄ່າປ່ຽນແທນຜູ້ໄດ້ຮັບຜົນກະທົບ ຕ້ອງຮັບຮູ້ວ່າ ກິດຈະການໃດໆ ທີ່ດຳເນີນການພາຍຫຼັງວັນຂຶ້ນທະບຽນສິດຂອງຜູ້ໄດ້ຮັບຜົນກະທົບນັ້ນ ຈະບໍ່ໄດ້ຮັບ ການທົດແທນຄ່າເສຍຫາຍ ຈາກເຈົ້າຂອງໂຄງການ, ຍົກເວັ້ນໃນກໍລະນີ ແຜນການທົດແທນຄ່າເສຍຫາຍ ຫາກບໍ່ໄດ້ ຮັບການຈັດຕັ້ງປະຕິບັດຕາມ ກຳນົດເວລາ ທີ່ໄດ້ກຳນົດໄວ້ໃນຂໍ້ 2 ຂອງມາດຕານີ້;

ເຈົ້າຂອງໂຄງການ ຕ້ອງປະຕິບັດ ແຜນການທົດແທນຄ່າເສຍຫາຍໃຫ້ສຳເລັດພາຍໃນ ຊາວສີ່ເດືອນ ນັບແຕ່ວັນເວລາ ດັ່ງກ່າວ ໄດ້ຖືກຮັບຮອງເອົາຢ່າງເປັນທາງການ. ຖ້າເຈົ້າຂອງໂຄງການ ຫາກບໍ່ສຳເລັດການທົດແທນຄ່າເສຍຫາຍ ພາຍ ໃນໄລຍະເວລາທີ່ກຳນົດໄວ້, ເຈົ້າຂອງໂຄງການສາມາດສະເໜີຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ ພິຈາລະນາຂະຫຍາຍໄລຍະເວລາ ເພີ່ມຕື່ມບໍ່ເກີນ ສິບສອງເດືອນ ເພື່ອປະຕິບັດການທົດແທນຄ່າເສຍຫາຍໃຫ້ສຳເລັດ. ຖ້າຍັງບໍ່ສຳເລັດຕ້ອງມີການປະເມີນຄືນມູນຄ່າທົດແທນຄ່າເສຍ ຫາຍ ທີ່ປະຕິບັດບໍ່ສຳເລັດນັ້ນ ແລ້ວນຳສະເໜີພິຈາລະນາຄືນໃໝ່;

ໃນກໍລະນີຜ່ານການປະເມີນຕີລາຄາ ຂອງຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ ປະຊາຊົນແຂວງ, ນະຄອນ ເຫັນວ່າ ແຜນການທົດແທນຄ່າເສຍຫາຍບໍ່ໄດ້ຮັບການຈັດຕັ້ງປະຕິບັດ ພາຍໃນສິບສອງ ເດືອນ ພາຍຫຼັງວັນຂຶ້ນທະບຽນສິດຂອງຜູ້ໄດ້ຮັບຜົນກະທົບແລ້ວ ຕ້ອງມີການປະເມີນຄືນໃໝ່ມູນຄ່າທົດແທນຄ່າ ເສຍຫາຍ ທີ່ບໍ່ໄດ້ຈັດຕັ້ງປະຕິບັດນັ້ນ ແລ້ວນຳສະເໜີພິຈາລະນາຄືນ.

ມາດຕາ 9: ການຕີລາຄາ ແລະ ປະເມີນມູນຄ່າປ່ຽນແທນ

ເຈົ້າຂອງໂຄງການ ໂດຍປະສານສົມທົບກັບ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນ ຍົກຍ້າຍປະຊາຊົນທ້ອງຖິ່ນ ກ່ຽວຂ້ອງ ຕ້ອງດຳເນີນການຕີລາຄາ ແລະ ປະເມີນມູນຄ່າປ່ຽນແທນ ສຳລັບທີ່ດິນ, ສິ່ງ ປຸກສ້າງ, ຜົນລະປູກ, ສັດລ້ຽງ ແລະ ລາຍຮັບທີ່ຕ້ອງໄດ້ຮັບ ການທົດແທນຄ່າເສຍຫາຍ ພ້ອມທັງປຶກສາຫາລື ເປັນ ເອກະພາບກັບຜູ້ໄດ້ຮັບຜົນກະທົບ ໂດຍການກຳນົດເອົາທາງເລືອກຖືກຕ້ອງ ແລະ ເໝາະສົມ ບົນພື້ນຖານການປະ ເມີນລາຄາຂອງລັດ, ລາຄາການຊື້-ຂາຍໃນທ້ອງຕະຫຼາດ ຫຼື ເປັນລາຄາສະເລ່ຍໃນໄລຍະນັ້ນ ຂອງແຕ່ລະເຂດ, ແຕ່ລະ ປະເພດ, ແລະ ແຕ່ລະທ້ອງຖິ່ນ. ສຳລັບລາຄາຂອງລັດ (ລາຄາກາງ) ແມ່ນໄດ້ກຳນົດໄວ້ໃນລະບຽບການສະພາະ ໂດຍ ມອບໝາຍໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດ ຢ່າງຖືກຕ້ອງ ແລະ ເໝາະ ສົມ.

2.5.4 ມາດຕະຖານເຕັກນິກໄຟຟ້າ 052/ອຫ ລົງວັນທີ 12 ກຸມພາ 2004

ຈຸດປະສົງຂອງມາດຕະຖານເຕັກນິກໄຟຟ້າ ແມ່ນໄດ້ລະບຸຄວາມຮຽກຮ້ອງຕ້ອງການພື້ນຖານສຳລັບອຸປະກອນ ແລະ ສິ່ງປະກອບສ້າງດ້ານກຳລັງໄຟຟ້າ ແລະ ບັນດາເນື້ອໃນທາງດ້ານເຕັກນິກ ເພື່ອຕອບສະໜອງຄວາມຮຽກຮ້ອງ ຕ້ອງການພື້ນຖານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍວ່າດ້ວຍໄຟຟ້າ ແລະ ຍັງໄດ້ກຳນົດຫຼັກການ ແລະ ມາດຕະຖານຕ່າງໆສຳລັບການກໍ່ສ້າງສາຍສົ່ງໄຟຟ້າ.

2.5.5 ຂໍ້ຕົກລົງ (ເລກທີ 707/ກຊສ ລົງວັນທີ 5/12/2013)

ຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ການປະກາດໃຊ້ບົດແນະນຳວ່າດ້ວຍການມີສ່ວນຮ່ວມຂອງ ມວນຊົນໃນ ຂະບວນການປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມຂອງໂຄງການລົງທຶນ (ເລກທີ 707/ກຊສ ລົງວັນທີ 5/12/2013) ນີ້ ແມ່ນມີຈຸດປະສົງເພື່ອຮັບປະກັນການຈັດຕັ້ງປະຕິບັດການມີສ່ວນຮ່ວມຂອງມວນຊົນໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມລະບຽບຫຼັກການ, ມີຄວາມໂປ່ງໃສ ແລະ ທົ່ວເຖິງ ໂດຍສະເພາະແມ່ນ ການເຂົ້າຮ່ວມຂອງປະຊາຊົນ ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ໃນຂະບວນການມີສ່ວນຮ່ວມດັ່ງກ່າວ ເພື່ອໃຫ້ເຂົາເຈົ້າໄດ້ຮັບຄວາມເປັນ ທຳໃນການແກ້ໄຂຜົນກະທົບທີ່ເກີດຈາກໂຄງການລົງທຶນຢ່າງສົມເຫດສົມຜົນ.

ຂໍ້ຕົກລົງນີ້ມີເປົ້າໝາຍເພື່ອເປີດໂອກາດໃຫ້ມວນຊົນໄດ້ມີສ່ວນຮ່ວມໃນການວາງແຜນ ແລະ ການຕັດສິນບັນຫາ ກ່ຽວກັບໂຄງການລົງທຶນລວມທັງການແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຜົນປະໂຫຍດທີ່ຈະໄດ້ຮັບ ຈາກໂຄງການຢ່າງເປັນທຳ ແລະ ເພື່ອຫຼີກລ່ຽງ ຫຼື ຫຼຸດຜ່ອນການເກີດຂໍ້ຂັດແຍ່ງຕ່ຳກັບການພັດທະນາໂຄງການລົງທຶນ, ເປີດໂອກາດໃຫ້ເຂົາເຈົ້າໄດ້ສະເໜີຄວາມຄິດເຫັນກ່ຽວກັບການຈັດຕັ້ງປະຕິບັດໂຄງການ; ພ້ອມກັນນັ້ນກໍໄດ້ຮຽນຮູ້

ແລະ ແລກປ່ຽນບົດຮຽນກັບພາກສ່ວນທີ່ກ່ຽວຂ້ອງໃນການພັດທະນາອາຊີບ, ເສດຖະກິດທ້ອງຖິ່ນ, ການປົກປັກຮັກສາ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ.

2.5.6 ຂໍ້ຕົກລົງວ່າດ້ວຍມາດຕະຖານສິ່ງແວດລ້ອມແຫ່ງຊາດ, ສະບັບປັບປຸງໃໝ່ (ເລກທີ 81/ລບ, 2017)

ຂໍ້ຕົກລົງວ່າດ້ວຍມາດຕະຖານສິ່ງແວດລ້ອມແຫ່ງຊາດສະບັບນີ້ ແມ່ນໃຊ້ເພື່ອເປັນບ່ອນອີງໃນການຕິດຕາມກວດກາສິ່ງແວດລ້ອມ ແລະ ຄວບຄຸມມົນລະພິດທາງນ້ຳ, ດິນ, ອາກາດ ແລະ ສຽງ ຈະແບ່ງອອກເປັນ 6 ໝວດ 18 ມາດຕາ ເຊິ່ງຈະມີລາຍລະອຽດກ່ຽວກັບ ມາດຕະຖານສິ່ງແວດລ້ອມ, ມາດຕະຖານການປ່ອຍມົນລະພິດ, ປະເພດຂອງມົນລະພິດ, ປະລິມານຄ່າຄວາມເຂັ້ມຂຸ້ນ, ໂຕວັດແທກ ແລະ ຄ່າຊີ້ບອກຄວາມເຂັ້ມຂຸ້ນໃນການວັດແທກ ທີ່ເປັນມາດຕະຖານໃນການຊ່ວຍຄວບຄຸມມົນລະພິດ ທີ່ຈະປ່ອຍອອກສູ່ສິ່ງແວດລ້ອມທີ່ອາດຈະເກີດຜົນກະທົບຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ ແລະ ລະບົບນິເວດຈາກໂຄງການພັດທະນາ.

2.5.7 ດຳລັດວ່າດ້ວຍການເຊົ່າ ຫຼື ໃຫ້ສຳປະທານດິນລັດ (ເລກທີ 135/ນຍ, 2009)

ດຳລັດສະບັບນີ້ແມ່ນແນ່ໃສ່ເພື່ອການຮັບປະກັນໃຫ້ມີການຄຸ້ມຄອງ ແລະ ມີການນຳໃຊ້ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ເຮັດໃຫ້ທີ່ດິນຂອງລັດໄດ້ຮັບການພັດທະນາ, ຫັນທີ່ດິນເປັນທຶນ ທັງເປັນການສົ່ງເສີມການລົງທຶນເຂົ້າໃນການຜະລິດເປັນສິນຄ້າ, ການບໍລິການ ແລະ ການສ້າງແຫຼ່ງລາຍຮັບເຂົ້າງົບປະມານແຫ່ງລັດ.

ມາດຕາ 7: ຮູບແບບການເຊົ່າ ແລະ ສຳປະທານທີ່ດິນຂອງລັດ

ການເຊົ່າ ແລະ ສຳປະທານທີ່ດິນຂອງລັດມີ 2 ຮູບແບບຄື:

1. ຮູບແບບການເຊົ່າ ແລະ ສຳປະທານທີ່ມີລັກສະນະການບໍລິການ ແມ່ນລັດມອບໃຫ້ຄູ່ສັນຍາດຳເນີນການກ່ຽວກັບການບໍລິການໃດໜຶ່ງເຊັ່ນ: ການໄຟຟ້າ, ນ້ຳປະປາ, ການກໍ່ສ້າງ, ການໂທລະຄົມມະນາຄົມ, ສວນສາທາລະນະ, ໂຮງງານ, ໂຮງໝໍ, ຕະຫຼາດ, ສະໜາມເດັກຫຼິ້ນ, ສະຖານີລົດຂົນສົ່ງຜູ້ໂດຍສານ, ສະຖານີລົດຂົນສົ່ງສິນຄ້າ, ສູນຟື້ນຟູສຸຂະພາບ ແລະ ອື່ນໆ.

2. ຮູບການສຳປະທານທີ່ມີລັກສະນະການຄ້າເຊັ່ນ: ທີ່ດິນປູກໄມ້, ທີ່ດິນກະສິກຳ, ທີ່ດິນພະລັງງານໄຟຟ້າ, ທີ່ດິນແຮ່ທາດ ແລະ ທີ່ດິນປະເພດອື່ນໆ ຕາມການຈັດສັນຂອງລັດ ເພື່ອດຳເນີນກິດຈະການຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

ຜູ້ສຳປະທານທີ່ດິນທີ່ພົວພັນກັບການນຳໃຊ້ຊັບພະຍາກອນທຳມະຊາດ ນອກຈາກຈະຕ້ອງເສຍຄ່າສຳປະທານແລ້ວ ຍັງຕ້ອງເສຍຄ່າຊັບພະຍາກອນ, ອາກອນ, ພາສີ ແລະ ຄ່າທຳນຽມຕ່າງໆ ຕາມທີ່ກົດໝາຍໄດ້ກຳນົດໄວ້.

ມາດຕາ 36: ກຳນົດໄລຍະເວລາການກໍ່ສ້າງກິດຈະການ ຫຼື ດຳເນີນໂຄງການ

ການກຳນົດໄລຍະເວລາການກໍ່ສ້າງກິດຈະການ ຫຼື ດຳເນີນໂຄງການຕ້ອງໃຫ້ສຳເລັດພາຍໃນກຳນົດເວລາຕາມເງື່ອນໄຂຂະໜາດຂອງກິດຈະການດັ່ງນີ້:

1. ກິດຈະການຂະໜາດນ້ອຍ ໄລຍະເວລາການກໍ່ສ້າງກິດຈະການ ຫຼື ດຳເນີນໂຄງການ ຕ້ອງໃຫ້ສຳເລັດພາຍໃນ ຫົກເດືອນ ຫາ ໜຶ່ງປີ ນັບແຕ່ມື້ເຊັນສັນຍາເປັນຕົ້ນໄປ

2. ກິດຈະການຂະໜາດກາງ ໄລຍະເວລາການກໍ່ສ້າງກິດຈະການ ຫຼື ດຳເນີນໂຄງການ ຕ້ອງໃຫ້ສຳເລັດພາຍໃນ ໜຶ່ງປີ ຫາ ສອງປີ ນັບແຕ່ມື້ເຊັນສັນຍາເປັນຕົ້ນໄປ

3. ກິດຈະການຂະໜາດໃຫ່ຍ ໄລຍະເວລາການກໍ່ສ້າງກິດຈະການ ຫຼື ດຳເນີນໂຄງການ ຕ້ອງໃຫ້ສຳເລັດພາຍໃນ ສອງ ຫາ ສາມປີ ນັບແຕ່ມື້ເຊັນສັນຍາເປັນຕົ້ນໄປ

ມາດຕາ 39: ພັນທະຂອງຜູ້ເຊົ່າ ແລະ ຜູ້ສຳປະທານທີ່ດິນຂອງລັດ
ຜູ້ເຊົ່າ ແລະ ຜູ້ສຳປະທານທີ່ດິນຂອງລັດມີພັນທະດັ່ງນີ້:

- ໃຊ້ທີ່ດິນໂດຍຖືກຕ້ອງຕາມເປົ້າໝາຍ ແລະ ຕ້ອງຮັບປະກັນປະສິດທິຜົນຂອງການດຳເນີນກິດຈະການ
- ຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນຂອງລັດທີ່ເຊົ່າ ຫຼື ສຳປະທານ ບໍ່ໃຫ້ມີການເຊາະເຈື່ອນ, ຍຸບລົງ, ເສື່ອມໂຊມ, ຮັກສາຄຸນນະພາບໃຫ້ເໝາະສົມແຕ່ລະປະເພດດິນ ແລະ ບໍ່ເຮັດເນື້ອທີ່ດິນແຕ່ລະປະເພດຫຼຸດລົງ ໂດຍບໍ່ໄດ້ຮັບອະນຸຍາດ
- ບໍ່ສ້າງຄວາມເສຍຫາຍໃຫ້ແກ່ຄຸນນະພາບດິນ, ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມທຳມະຊາດ ຫຼື ສັງຄົມ
- ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ
- ປະຕິບັດສະພາວະຄວາມເປັນຈິງຕ້ອງຍອມຮັບຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ
- ເສຍຄ່າເຊົ່າທີ່ດິນ, ຄ່າສຳປະທານ, ຄ່າຊົດພະຍາກອນທຳມະຊາດ, ອາກອນ, ພາສີ ແລະ ຄ່າທຳນຽມອື່ນໆ ກ່ຽວກັບທີ່ດິນຢ່າງຄົບຖ້ວນ
- ຜູ້ເຊົ່າບໍ່ມີສິດຫັນປ່ຽນສະພາບຂອງດິນ ແລະ ສິ່ງປຸກສ້າງຢູ່ເທິງໜ້າດິນ ເວັ້ນເສຍກໍລະນີຈຳເປັນ ແຕ່ຕ້ອງມີການຕົກລົງກັນໃນສັນຍາລະຫວ່າງອົງການຄຸ້ມຄອງທີ່ດິນ ແລະ ຜູ້ເຊົ່າ
- ເມື່ອໝົດກຳນົດໄລຍະເວລາການເຊົ່າ ຫຼື ສຳປະທານ ຫຼື ມີການຍົກເລີກສັນຍາເຊົ່າ ຫຼື ສຳປະທານທີ່ດິນຂອງລັດກ່ອນກຳນົດເວລາ ຜູ້ເຊົ່າ ຫຼື ສຳປະທານຕ້ອງໄດ້ປ່ອແປງ ຫຼື ບູລະນະທີ່ດິນ ແລະ ສິ່ງແວດລ້ອມໃຫ້ຢູ່ໃນສະພາບເດີມ ແລະ ໃຫ້ສາມາດໃຊ້ໄດ້ຕາມປົກກະຕິ ຕາມເງື່ອນໄຂຂອງສັນຍາທີ່ໄດ້ຕົກລົງກັນ
- ປະຕິບັດຕາມລະບຽບການ ແລະ ເງື່ອນໄຂຂອງການເຊົ່າ ຫຼື ການສຳປະທານຢ່າງຄົບຖ້ວນ.

2.5.8 ນະໂຍບາຍການປ້ອງກັນຂອງ ADB (ADB Safeguard Policy Statement)

ນະໂຍບາຍການປ້ອງກັນຂອງ ADB ອອກໃນປີ 2009 ແລະ ນຳໄປໃຊ້ກັບທຸກໆໂຄງການທີ່ໄດ້ຮັບທຶນຈາກ ADB ຕັ້ງແຕ່ວັນທີ 20 ມັງກອນ 2010 ປະກອບດ້ວຍ ສາມນະໂຍບາຍຄື: ການດຳເນີນງານກ່ຽວກັບນະໂຍບາຍວ່າດ້ວຍສິ່ງແວດລ້ອມ, ນະໂຍບາຍວ່າດ້ວຍຄົນພື້ນເມືອງ, ນະໂຍບາຍວ່າດ້ວຍການຕັ້ງຖິ່ນຖານຄືນໃໝ່ແບບບໍ່ສະໝັກໃຈ. ຈຸດປະສົງຂອງການປ້ອງກັນທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ຂອງ ADB ແມ່ນ: (i) ເພື່ອຫຼີກລ່ຽງຜົນກະທົບດ້ານລົບຂອງໂຄງການ ຕໍ່ສິ່ງແວດລ້ອມ ແລະ ຜູ້ໄດ້ຮັບຜົນກະທົບ, ຖ້າເປັນໄປໄດ້; (ii) ຫຼຸດຜ່ອນ, ບັນເທົາ ຫຼື ຊົດເຊີຍໂຄງການທີ່ສ້າງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ ຜູ້ໄດ້ຮັບຜົນກະທົບ ເມື່ອບໍ່ສາມາດຫຼີກລ່ຽງໄດ້; (iii) ຊ່ວຍເຫຼືອຜູ້ກູ້ຍືມ ຫຼື ລູກຄ້າ ເພື່ອເສີມສ້າງລະບົບການປ້ອງກັນ ແລະ ພັດທະນາຄວາມສາມາດຂອງເຂົາເຈົ້າ ໃນການຈັດການຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສັງຄົມ. ເອກະສານດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການ ຍັງໄດ້ແນ່ໃສ່ການປະຕິບັດຕາມນະໂຍບາຍ ແລະ ມາດຕະຖານການປະຕິບັດງານ ຂອງ IFC ກ່ຽວກັບຄວາມຍືນຍົງທາງດ້ານສັງຄົມ ແລະ ສິ່ງແວດລ້ອມ.

2.5.9 ມາດຕະຖານຂອງ IFC (ສະບັບປັບປຸງ, ປີ 2012)

IFC (International Finance Corporation) ເປັນບໍລິສັດ ເງິນທຶນລະຫວ່າງປະເທດ ຫຼື ເປັນອົງກອນໃນກຸ່ມ ທະນາຄານໂລກ ທີ່ມີເປົ້າໝາຍເພື່ອພັດທະນາເອກະຊົນ ແລະ ຊ່ວຍປະເທດທີ່ກຳລັງພັດທະນາ ຜ່ານການລົງທຶນ ແລະ ລະດົມທຶນໃນປະເທດຕ່າງໆ ໂດຍການປ່ອຍເງິນກູ້ໃຫ້ກັບໂຄງການຂະໜາດໃຫຍ່ ແຕ່ຕ້ອງຄຳນຶງເຖິງສັງຄົມ ແລະ ສິ່ງແວດລ້ອມ ເພື່ອສ້າງມາດຕະຖານ ແລະ ຫຼຸດຜ່ອນຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມຂອງໂຄງການ. ເພາະມາດຕະຖານການປະຕິບັດງານ IFC ແມ່ນສ່ວນໜຶ່ງຂອງແຜນວຽກເພື່ອຄວາມຍືນຍົງ ແລະ ໄດ້ຮັບການຮັບຮູ້ ໃນທົ່ວໂລກວ່າ ເປັນເກນມາດຕະຖານສຳລັບການຄຸ້ມຄອງຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສັງຄົມໃນພາກ ເອກະຊົນ, ໂດຍໄດ້ລວມເອົາບັນດາ ການຄຸ້ມຄອງທຸກຂັ້ນຕອນ, ການໃຊ້ຊັບພະຍາກອນທຳມະຊາດຢ່າງມີ ປະສິດທິພາບ, ການປ່ຽນແປງດິນຟ້າອາກາດ, ທຸລະກິດ ແລະ ສິດທິມະນຸດ.

ໃນມາດຕະຖານດັ່ງກ່າວນີ້, ກໍ່ຈະມີການດຳເນີນງານຢູ່ 8 ຂັ້ນຕອນ ທີ່ຄອບຄຸມເອົາທຸກກິດຈະການໂຄງການລົງທຶນ ຕ່າງໆ ທີ່ເປັນໂຄງການພັດທະນາ ກ່ຽວກັບ ເສດຖະກິດ - ສັງຄົມ ແລະ ທຳມະຊາດ ສ່ວນລາຍລະອຽດແມ່ນມີດັ່ງນີ້:

- ມາດຖານ 1: ແມ່ນຈະຄອບຄຸມເຖິງ ການປະເມີນ ແລະ ການຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບທາງດ້ານ ສິ່ງແວດລ້ອມ ແລະ ສັງຄົມ.
- ມາດຖານ 2: ແມ່ນຈະຄອບຄຸມເຖິງ ສະພາບແຮງງານ ແລະ ສະພາບເງື່ອນໄຂຂອງການເຮັດວຽກ.
- ມາດຖານ 3: ແມ່ນຈະຄອບຄຸມເຖິງ ປະສິດທິພາບຂອງ ຊັບພະຍາກອນທຳມະຊາດ ແລະ ການປ້ອງກັນມົນ ລະພິດ.
- ມາດຖານ 4: ແມ່ນຈະຄອບຄຸມເຖິງ ສຸຂະພາບ, ຄວາມປອດໄພ ແລະ ການປ້ອງກັນຄວາມສະຫງົບຂອງຊຸມ ຊົນ.
- ມາດຖານ 5: ແມ່ນຈະຄອບຄຸມເຖິງ ການໄດ້ມາຂອງ ທີ່ດິນ ແລະ ການຍົກຍ້າຍປະຊາຊົນແບບບໍ່ສະໝັກໃຈ.
- ມາດຖານ 6: ແມ່ນຈະຄອບຄຸມເຖິງ ການອະນຸລັກຊີວະນາໆພັນ ແລະ ການຄຸ້ມຄອງຊັບພະຍາກອນທຳມະ ຊາດ ທີ່ມີຊີວິດແບບຍືນຍົງ.
- ມາດຖານ 7: ແມ່ນຈະຄອບຄຸມເຖິງ ຊົນເຜົ່າພື້ນເມືອງ (ການມີສ່ວນຮ່ວມ ແລະ ການສະແດງຄຳຄິດເຫັນ ຂອງປະຊາຊົນໃນແຕ່ລະທ້ອງຖິ່ນທີ່ໂຄງການພັດທະນາຕັ້ງຢູ່).
- ມາດຖານ 8: ແມ່ນຈະຄອບຄຸມເຖິງ ມໍລະດົກທາງວັດທະນະທຳ (ການຮັກສາຮີດຄອງປະເພນີ ແລະ ມູນເຊື້ອ ອັນດີງາມຂອງຊຸມຊົນໃນແຕ່ລະທ້ອງຖິ່ນທີ່ກ່ຽວຂ້ອງກັບໂຄງການ).

ອົງການການເງິນສາກົນ (IFC) ແມ່ນປຸກລະດົມພາກສ່ວນເອກະຊົນ ໃຫ້ມີສ່ວນຮ່ວມໃນແຜນງານການຜະລິດ ແລະ ແຈກຢາຍໄຟຟ້າຢູ່ ສປປ ລາວ ເພື່ອພັດທະນາດ້ານພະລັງງານໄຟຟ້າໃຫ້ມີຄວາມຍືນຍົງຫຼາຍຂຶ້ນ, ນອກນັ້ນ, ຍັງຊ່ວຍ ຄຸ້ມຄອງຄວາມສ່ຽງດ້ານການລົງທຶນໃນໂຄງການດ້ານພະລັງງານໄຟຟ້າໃຫ້ດີກວ່າເກົ່າ ແລະ ໃຫ້ຄຳປຶກສາແກ່ບັນດາ ບໍລິສັດໄຟຟ້າກ່ຽວກັບວິທີການເພື່ອປັບປຸງການດຳເນີນທຸລະກິດ, ເພາະເປັນການສົ່ງເສີມການຮ່ວມມື ລະຫວ່າງ ພາກ ລັດ - ພາກເອກະຊົນ (public–private partnerships) ເພື່ອຊຸກຍູ້ໃຫ້ບັນດາບໍລິສັດເອກະຊົນລົງທຶນ ແລະ ເຮັດ ວຽກຮ່ວມກັບລັດຖະບານ ເພື່ອກໍ່ສ້າງພື້ນຖານໂຄງລ່າງທີ່ມີຄຸນນະພາບສູງ ແລະ ມີນະໂຍບາຍທີ່ຈະຜັກດັນສະຖາ

ບັນການເງິນໃຫ້ມີການນຳມາດຕະຖານດ້ານສັງຄົມ ແລະ ສິ່ງແວດລ້ອມຂອງ IFC ມາປະຍຸກໃຊ້ໃນໂຄງການ ໂດຍ ສະເພາະແມ່ນ ໂຄງການ ທີ່ສະເໜີນີ້.

2.5.1 ມາດຕະຖານຂອງ ISO 14001

ມາດຕະຖານ ISO 14001 ແມ່ນໃຊ້ເປັນມາດຕະຖານໜຶ່ງກ່ຽວກັບການຄຸ້ມຄອງທາງດ້ານສິ່ງແວດລ້ອມ ແລະ ເປັນ ສ່ວນໜຶ່ງຂອງລະບົບຄຸ້ມຄອງທົ່ວໄປທີ່ບັນຈຸໂຄງການຈັດຕັ້ງ, ແຜນການເຄື່ອນໄຫວ, ຄວາມຮັບຜິດຊອບ, ການ ປະຕິບັດຕົວຈິງ, ວິທີການດຳເນີນການ, ຂະບວນການ ແລະ ແຫຼ່ງຊັບພະຍາກອນທຳມະຊາດເພື່ອການພັດທະນາ ແລະ ບຳລຸງຮັກສາມະໂຍບາຍກ່ຽວກັບສິ່ງແວດລ້ອມ. ໂດຍມາດຕະຖານສະບັບນີ້ ແມ່ນໄດ້ອ້າງເກນສຳລັບລະບົບ ການຄຸ້ມຄອງສິ່ງແວດລ້ອມ ແລະ ສາມາດຖືກຮັບຮອງໄດ້, ທີ່ໄດ້ກ່າວເຖິງບັນດາເງື່ອນໄຂສຳລັບການດຳເນີນງານທາງ ດ້ານສິ່ງແວດລ້ອມ ໃນການວາງໂຄງຮ່າງການເຮັດວຽກອອກມາ ໂດຍທີ່ ບໍລິສັດ ຫຼື ອົງການ ສາມາດຕິດຕາມກວດກາ ໄດ້ ເພື່ອຕິດຕັ້ງລະບົບການຄຸ້ມຄອງສິ່ງແວດລ້ອມ ທີ່ມີປະສິດທິພາບ, ການໃຊ້ມາດຕະຖານຂອງ ISO 14001 ແມ່ນ ສາມາດຕອບສະໜອງການຮັບປະກັນໃຫ້ແກ່ການຄຸ້ມຄອງບໍລິສັດ ແລະ ຜູ້ທີ່ມີສ່ວນໄດ້ສ່ວນເສຍພາຍນອກ ໂດຍທີ່ ຜົນກະທົບທາງດ້ານສິ່ງແວດລ້ອມ ແມ່ນສາມາດວັດແທກ ແລະ ປັບປຸງໃຫ້ດີຂຶ້ນໄດ້. ເຊິ່ງມາດຕະຖານນີ້ກໍ່ເປັນອີກ ສ່ວນໜຶ່ງ ທີ່ເປັນຫຼັກການພື້ນຖານໃຫ້ໂຄງການທີ່ສະເໜີນີ້ໄດ້ປະຕິບັດຕາມເງື່ອນໄຂຂອງມາດຕະຖານດັ່ງກ່າວນີ້ ເພື່ອເຮັດໃຫ້ເກີດປະໂຫຍດສູງສຸດໄດ້ໃນອະນາຄົດ.

ພາກທີ 3 ລາຍລະອຽດຂອງໂຄງການ

3.1 ນຳສະເໜີ ໂຄງການ

3.1.1 ຄວາມເປັນມາ ແລະ ເຫດຜົນ ຂອງໂຄງການ

ດັ່ງທີ່ໄດ້ສະເໜີມາກ່ອນໜ້ານີ້ ໂຄງການຜະລິດກະແສໄຟຟ້າຈາກພະລັງງານລົມ 600 ເມກາວັດ ກໍ່ແມ່ນໜຶ່ງທີ່ຈະເປັນທ່າແຮງສຳຄັນໃນການສະໜອງພະລັງງານໄຟຟ້າໃນເຂດພາກໃຕ້ຂອງ ສປປ ລາວ, ກໍ່ຄືແຂວງເຊກອງ, ອັດຕະປື ແລະ ໂດຍສະເພາະແມ່ນເປັນທ່າແຮງທີ່ສຳຄັນທີ່ຈະສະໜອງກະແສໄຟຟ້າໃຫ້ກັບ ສສ ຫວຽດນາມ ຕາມສັນຍາຊື້ຂາຍໄຟຟ້າລະຫວ່າງ ສອງຝ່າຍ. ດັ່ງນັ້ນ, ເພື່ອເຊື່ອມຕໍ່ກະແສໄຟຟ້າທີ່ຜະລິດໄດ້ຈາກໂຄງການພະລັງງານລົມ 1,707 GWh/ປີ ສົ່ງອອກ ສສ ຫວຽດນາມ ຕາມສັນຍາຮັບຊື້ໄຟຈາກ ສສ ຫວຽດນາມ ແລະ ອີງໃສ່ຈຸດພິເສດທີ່ຕັ້ງຂອງໂຄງການພະລັງງານລົມ ທີ່ຕັ້ງຢູ່ເມືອງດາກຈຶງ ທີ່ມີຊາຍແດນຕິດຈອດ ກັບ ສສ ຫວຽດນາມ. ດັ່ງນັ້ນ, ທາງໂຄງການຈຶ່ງມີຄວາມຈຳເປັນຈະຕ້ອງກໍ່ສ້າງສາຍສົ່ງໄຟຟ້າຂະໜາດ 500 ກວ ຈາກສະຖານີຫຼັກຂອງໂຄງການຜະລິດໄຟຟ້າຈາກພະລັງງານລົມເມືອງດາກຈຶງ ສົ່ງອອກໄປເຊື່ອມຕໍ່ກັບ ສະຖານີໄຟຟ້າ 500 ກວ ຂອງ ສສ ຫວຽດນາມ (ສະຖານີ Thanh My) ໂດຍມີຄວາມຍາວຂອງແລວສາຍສົ່ງທັງໝົດປະມານ 66 ກິໂລແມັດ. ເຊິ່ງໃນການສຶກສານີ້ແມ່ນຈະກວມເອົາສະເພາະຊ່ວງທີ່ຢູ່ຝັ່ງຊາຍແດນຂອງ ສປປ ລາວ ເຊິ່ງມີຄວາມຍາວທັງໝົດປະມານ 21 ກິໂລແມັດ.

3.1.2 ທີ່ຕັ້ງໂຄງການ

ໂຄງການກໍ່ສ້າງສາຍສົ່ງໄຟຟ້າຂະໜາດ 500 ກວ ຂອງໂຄງການຜະລິດໄຟຟ້າຈາກພະລັງງານລົມ ທີ່ສະເໜີນີ້ ແມ່ນເລີ່ມຈາກສະຖານີ 500KV ຂອງໂຄງການຜະລິດໄຟຟ້າຈາກພະລັງງານລົມ 600 ເມກາວັດ ທີ່ຈະມີການສ້າງຢູ່ເຂດບ້ານດາກບອງ ແລ້ວແລວສາຍສົ່ງຈະລຽບຕາມເສັ້ນທາງຫຼວງ 16B ສົ່ງອອກໄປຊາຍແດນເພື່ອໄປເຊື່ອມຕໍ່ກັບ ສະຖານີໄຟຟ້າ 500 ກວ ຂອງ ສສ ຫວຽດນາມ (ສະຖານີ Thanh My) ໂດຍມີຄວາມຍາວຂອງແລວສາຍສົ່ງທັງໝົດປະມານ 66 ກິໂລແມັດ. ສະເພາະຊ່ວງທີ່ຢູ່ຝັ່ງຊາຍແດນຂອງ ສປປ ລາວ ເຊິ່ງມີຄວາມຍາວທັງໝົດປະມານ 21 ກິໂລແມັດ. ໃນນີ້ແລວສາຍສົ່ງດັ່ງກ່າວຈະຜ່ານເຂດຄຸ້ມຄອງຂອງ 5 ບ້ານ ທີ່ຂຶ້ນກັບເມືອງດາກຈຶງ, ແຂວງເຊກອງ ຄື: ບ້ານດາກບອງ, ບ້ານງອນດອນ, ບ້ານດາກມອນ, ບ້ານດາກຕະອອກນ້ອຍ ແລະ ບ້ານດາກໂດມ ເຊິ່ງຈະກວມເອົາເນື້ອທີ່ປະມານ 147 ເຮັກຕາ (ກວ້າງ 70 ແມັດ x ແລວສາຍສົ່ງຍາວ 21 ກມ) ເຊິ່ງແລວສາຍສົ່ງດັ່ງກ່າວນີ້ ມີຈຳນວນເສົາທັງໝົດ 47 ເສົາ (ເປັນເສົາມຸມ 12 ເສົາ ແລະ ເສົາຊື່ 35 ເສົາ).

ຕາຕະລາງ 3-1: ຕຳແໜ່ງທີ່ຕັ້ງເສົາສາຍສົ່ງໄຟຟ້າ

ເສົາສາຍສົ່ງ	ຄ່າພິກັດ		ເສົາສາຍສົ່ງ	ຄ່າພິກັດ		ເສົາສາຍສົ່ງ	ຄ່າພິກັດ	
	X	Y		X	Y		X	Y
1	741474	1705532	17	744702	1711085	33	749609	1715672
2	741718	1705546	18	745019	1711497	34	749880	1715994
3	742125	1705734	19	745268	1711820	35	750036	1716179
4	742573	1705940	20	745464	1712074	36	750644	1716899
5	742983	1706129	21	745812	1712526	37	750834	1717125
6	743191	1706578	22	746137	1712948	38	751090	1717581

ເສົາສາຍສົ່ງ	ຄ່າພິກັດ		ເສົາສາຍສົ່ງ	ຄ່າພິກັດ		ເສົາສາຍສົ່ງ	ຄ່າພິກັດ	
	X	Y		X	Y		X	Y
7	743361	1706944	23	746448	1713352	39	751340	1718028
8	743544	1707338	24	746922	1713487	40	751568	1718435
9	743690	1707653	25	747455	1713638	41	751843	1718926
10	743889	1708081	26	747935	1713774	42	751993	1719194
11	744103	1708544	27	748263	1713867	43	752186	1719539
12	744168	1708980	28	748780	1714220	44	752457	1720123
13	744224	1709361	29	749175	1714489	45	752552	1720328
14	744274	1709693	30	749693	1714842	46	752665	1720573
15	744366	1710318	31	749545	1715284	47	753546	1720734
16	744427	1710728	32	749470	1715507			

ແຫຼ່ງຂໍ້ມູນ: IEAD



ຮູບທີ 3-1: ແຜນທີ່ສະແດງທີ່ຕັ້ງຂອງໂຄງການ

3.2 ທາງເລືອກຂອງໂຄງການ

3.2.1 ວິທີການ

ການພິຈາລະນາຫາທາງເລືອກອື່ນສຳລັບໂຄງການ ແມ່ນບາດກ້າວລິເລີ່ມເບື້ອງຕົ້ນອັນສຳຄັນກ່ຽວກັບການຍົກສູງການປະເມີນຜົນດ້ານສິ່ງແວດລ້ອມຂອງໂຄງການທີ່ອອກແບບ ໂດຍຜ່ານການສຶກສາຫາທາງເລືອກອື່ນທີ່ດີ ແທນທີ່ຈະແນ່ໃສ່ພຽງແຕ່ການປ້ອງກັນບັນຫາ ເພື່ອຫຼຸດຜ່ອນຜົນກະທົບຂອງການອອກແບບໂຄງການ ທີ່ອອກແບບໄວ້ແຕ່ທາງດຽວ. ສິ່ງນີ້ມັນຮຽກຮ້ອງເຖິງລະບົບການສົມທຽບທາງເລືອກທີ່ເປັນໄປໄດ້ ສຳລັບທີ່ຕັ້ງຂອງໂຄງການທີ່ສະເໜີ, ແລະ ທາງເລືອກດ້ານການດຳເນີນໂຄງການ. ບັນດາທາງເລືອກດັ່ງກ່າວແມ່ນຕ້ອງໄດ້ຖືກປຽບທຽບ ໃນແງ່ວິສະວະກຳ, ແນວໂນ້ມຂອງຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ, ຕົ້ນທຶນ ແລະ ມູນຄ່າໃນປະຈຸບັນ, ຄວາມເໝາະສົມພາຍໃຕ້ເງື່ອນໄຂໃນປະຈຸບັນ, ແລະ ຄວາມຕ້ອງການໃນການຕິດຕາມ. ສຳລັບແຕ່ລະທາງເລືອກທີ່ກ່າວມານັ້ນ ຜົນປະໂຫຍດ ແລະ ມູນຄ່າດ້ານສິ່ງແວດລ້ອມ ຕ້ອງຜ່ານເກນທີ່ສາມາດເຮັດໄດ້; ມູນຄ່າດ້ານເສດຖະກິດຕ້ອງຕິດພັນກັບສິ່ງສາມາດຄາດຄະເນໄດ້ ແລະ ພື້ນຖານຂອງໂຄງການທີ່ຖືກເລືອກນັ້ນຕ້ອງສາມາດສະແດງເຫດຜົນໄດ້.

3.2.2 ການປຽບທຽບ ແລະ ການຄັດເລືອກ ຂອງທາງເລືອກ

ອີງຕາມການສຶກສາອອກແບບເບື້ອງຕົ້ນຂອງແລວສາຍສົ່ງໄຟຟ້າແຮງສູງ ກ່ຽວກັບການສຳຫຼວດເກັບກຳຂໍ້ມູນໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລິມ 600 MW ເມືອງດາກຈຶງ, ການສຳຫຼວດແບ່ງອອກເປັນ 2 ທາງເລືອກຄື:

ທາງເລືອກທີ 1: ມີຄວາມຍາວຂອງແລວສາຍສົ່ງ 21 km, ເບື້ອງຕົ້ນປະກອບດ້ວຍເສົາທັງໝົດ 47 ເສົາ ໃນນັ້ນມີ 12 ເສົາມຸມ.

<u>ດ້ານເຕັກນິກ ວິສະວະກຳ:</u>

ລັກສະນະພູມສັນຖານເປັນເຂດພູສູງຈຳນວນໜຶ່ງ ແລະ ພູພຽງເປັນສ່ວນໃຫຍ່, ມີເງື່ອນໄຂໃນຊ່ວງກໍ່ສ້າງ ແລະ ການບຳລຸງຮັກສາ ສະດວກ ເນື່ອງຈາກວ່າແລວສາຍສົ່ງຈະເນັ່ງໄປຕາມໜ່ວຍພູລຽບເສັ້ນທາງຫຼວງ ຈະເຮັດໃຫ້ການຕັດເສັ້ນທາງເຂົ້າຫາຕົ້ນເສົາງ່າຍ, ບໍ່ຍາວຫຼາຍ ແລະ ສະດວກໃນການກໍ່ສ້າງການດຶງສາຍລະຫວ່າງເສົາ.

ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ:

ແລວສາຍສົ່ງແມ່ນຈະຜ່ານເຂດປ່າປ້ອງກັນ 5 Km, ຜ່ານເຂດພື້ນທີ່ທຳການຜະລິດຂອງປະຊາຊົນຈຳນວນບໍ່ຫຼາຍ ແລະ ບໍ່ມີການຍົກຍ້າຍເຮືອນ ແລະ ສິ່ງປຸກສ້າງອອກຈາກແລວສາຍສົ່ງ, ມີພຽງເຂດສະຫງວນຂອງແລວສາຍສົ່ງທີ່ໄປກວມເຂົ້າໃນເຂດປ່າຊ້າຂອງ

ທາງເລືອກທີ 2: ມີຄວາມຍາວຂອງແລວສາຍສົ່ງ 20 km, ປະກອບມີເສົາທັງໝົດ 42 ເສົາ ແລະ ເສົາມຸມ 10 ເສົາ

<u>ດ້ານເຕັກນິກ ວິສະວະກຳ:</u>

ລັກສະນະສະພາບພູມສັນຖານຕາມແລວສາຍສົ່ງ ແມ່ນມີຄວາມຄ້າຍຄືກັນ ແຕ່ໃນຊ່ວງໃກ້ກັບເຂດຊາຍແດນ ແມ່ນຈະເນັ່ງໄປທາງດ້ານຝ່າກຊ້າຍ ຂອງເສັ້ນທາງຫຼວງ ແລະ ເຊິ່ງການເຂົ້າຫາຍາກ ເຊິ່ງຕ້ອງໄດ້ມີການຕັດເສັ້ນທາງເຂົ້າຫາ ທີ່ມີຄວາມຫຍຸ້ງຍາກໃນການກໍ່ສ້າງ ການບຳລຸງຮັກສາໄລຍະຍາວ ໃນຊ່ວງເຂດຊາຍແດນຝັ່ງ ສປປ ລາວ ແລະ ຝັ່ງ ສສ ຫວຽດນາມ.

ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ:

ແລວສາຍສົ່ງແມ່ນຈະຜ່ານເຂດປ່າປ້ອງກັນ 5 Km, ເຊັ່ນດຽວກັນ, ຜ່ານເຂດພື້ນທີ່ທຳການຜະລິດຂອງປະຊາຊົນຈຳນວນຫຼາຍກວ່າວທາງເລືອກທີ 1 ແລະ ໃນເຂດບ້ານອົມດອນ ຈະຕ້ອງໄດ້ສ້າງທາງເຂົ້າຫາຕີນເສົາທີ່ຜ່ານເຂດທຳການຜະລິດ (ສວນກາເຟ) ຈຳນວນຫຼາຍກວ່າ ແລະ ຈະມີຜົນກະທົບການຍົກຍ້າຍເຮືອນ ແລະ

ບ້ານດາກບອງ ເລັກໜ້ອຍ ໂດຍທາງໂຄງການເຫັນດີ ທີ່ຈະມີການປັບປ່ຽນຕາມຮີດຄອງປະເພນີຂອງບ້ານ. ສິ່ງປຸກສ້າງອອກຈາກແລວສາຍສົ່ງ ຈຳນວນ 2 ຫຼັງຄາ ເຮືອນ ໃນເຂດບ້ານດາກບອງ.

3.2.3 ການອະທິບາຍທາງເລືອກທີ່ໄດ້ຄັດເລືອກ

ອີງຕາມການປຽບທຽບ ທັງ 2 ທາງເລືອກ, ທາງເລືອກທີ 1 ຈະມີຄວາມຍາວແລວສາຍສົ່ງຫຼາຍກວ່າທາງເລືອກທີ 2 ເທົ່າກັບ 1.2 km ແລະ ມີເສົາມຸມຫຼາຍກວ່າ 1 ຕົ້ນ, ແຕ່ພູມສັນຖານຕາມແລວທາງເລືອກທີ 1 ແມ່ນມີຄວາມສະດວກ ແລະ ຮັບປະກັນຄວາມປອດໄພຕໍ່ກັບພື້ນທີ່ຕັ້ງເສົາຫຼາຍກວ່າ, ການກໍ່ສ້າງກໍ່ສະດວກກວ່າ ແລະ ຍັງບໍ່ສົ່ງຜົນກະທົບຕໍ່ການຍົກຍ້າຍ-ຍັບຍ້າຍເຮືອນຂອງປະຊາຊົນ ຈຶ່ງສະເໜີພິຈາລະນາທາງເລືອກທີ 1 ເປັນທາງເລືອກແລວສາຍສົ່ງຂອງການກໍ່ສ້າງໂຄງການແລວສາຍສົ່ງ 500 ກວ ຈາກສະຖານີຍ່ອຍຂອງໂຄງການ ຫາ ສະຖານີ 500 kV ເມືອງແທງມີ.



ຮູບທີ 3-2: ແຜນທີ່ປຽບທຽບແລວທາງເລືອກຂອງໂຄງການ

3.3 ການອອກແບບລາຍລະອຽດ

3.3.1 ລັກສະນະຂອງສາຍສົ່ງ

ລະບົບສາຍສົ່ງກຳລັງໄຟຟ້າ (Transmission Line) ແມ່ນລະບົບທີ່ເຊື່ອມໂຍງລະຫວ່າງລະບົບການຜະລິດກັບລະບົບຈຳໜ່າຍໄຟຟ້າເຂົ້າດ້ວຍກັນ ຫຼື ມີໜ້າທີ່ຂົນສົ່ງພະລັງງານໄຟຟ້າຈາກສະຖານີໜຶ່ງໄປອີກສະຖານີອື່ນ ຫຼື ຈາກແຫຼ່ງຜະລິດໄປສູ່ສູນກາງການຈຳໜ່າຍ ສຳລັບລະບົບສາຍສົ່ງກະແສໄຟຟ້າແຮງສູງຍັງສາມາດຫຼຸດຜ່ອນການສູນເສຍພະລັງງານ ເນື່ອງຈາກຄວາມຕ້ານທານຂອງສາຍໄຟ ຕ້ອງພິຈາລະນາປະລິມານຂອງກະແສໄຟທີ່ຖືກສົ່ງໄປຕາມສາຍເປືອຍແຮງສູງ ແລະ ຂະໜາດຂອງສາຍເປືອຍ ເພື່ອຫຼຸດຜ່ອນປະລິມານການສູນເສຍຂອງກະແສໄຟຟ້າ.

ສາຍສົ່ງໄຟຟ້າແຮງສູງ ເປັນລະບົບສົ່ງຂົນສົ່ງພະລັງງານໄຟຟ້າທີ່ໄດ້ຮັບມາຈາກແຫຼ່ງຜະລິດກະແສໄຟຟ້າສົ່ງຜ່ານຈາກສາຍສົ່ງໄຟແຮງສູງໄປຫາໝໍ້ແປງລະບົບຈຳໜ່າຍ ໂດຍການສົ່ງໄປຫາສະຖານີໄຟຟ້າຍ່ອຍອື່ນໆ ລະບົບສາຍສົ່ງໄຟຟ້າຈະຮັບແຮງດັນຕັ້ງແຕ່ 22 ກິໂລໂວມ, 115 ກິໂລໂວມ, 230 ກິໂລໂວມ ແລະ 500 ກິໂລໂວມ. ລະບົບໄຟຟ້າແຮງສູງບໍ່ສາມາດນຳໄປໃຊ້ກັບເຄື່ອງໃຊ້ໄຟຟ້າທົ່ວໄປໄດ້ ເນື່ອງຈາກຕ້ອງຜ່ານການດັດແປງລະບົບການສົ່ງກະແສໄຟຟ້າສະລັບ (AC) ອຸປະກອນແປງໄຟ (DC) ກ່ອນ ໂດຍສົ່ງຜ່ານໝໍ້ແປງອີກເທື່ອໜຶ່ງເພື່ອຫຼຸດຜ່ອນແຮງດັນໄຟຟ້າລົງໃຫ້ພໍດີກັບລັກສະນະການໃຊ້ງານ.

ໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລົມ 600 MW ເປັນໂຄງການເຊື່ອມຕໍ່ຕາຂ່າຍໄຟຟ້າ ເຊິ່ງຜະລິດໄດ້ຈາກໂຄງການຜະລິດໄຟຟ້າຈາດພະລັງງານລົມ 600 ເມກາວັດ ເພື່ອໄປເຊື່ອມຕໍ່ກັບສະຖານີໄຟຟ້າ 500 ກວ ຂອງ ສສ ຫວຽດນາມ (ສະຖານີ Thanh My). ລະບົບສາຍສົ່ງຂອງໂຄງການມີຂະໜາດແຮງດັນ 500 ກິໂລໂວມ ເປັນກະແສໄຟຟ້າແຮງສູງບໍ່ສາມາດນຳໃຊ້ກັບເຄື່ອງໃຊ້ໄຟຟ້າທົ່ວໄປໄດ້, ໂດຍມີຄວາມຍາວຂອງແລວສາຍສົ່ງທັງໝົດປະມານ 66 ກິໂລແມັດ. ສະເພາະຊ່ວງທີ່ຢູ່ຝັ່ງຊາຍແດນຂອງ ສປປ ລາວ ເຊິ່ງມີຄວາມຍາວທັງໝົດປະມານ 21 ກິໂລແມັດ. ໃນນີ້ແລວສາຍສົ່ງດັ່ງກ່າວຈະຜ່ານເຂດຄຸ້ມຄອງຂອງ 5 ບ້ານ ທີ່ຂຶ້ນກັບເມືອງດາກຈຶງ, ແຂວງເຊກອງ ຄື: ບ້ານດາກບອງ, ບ້ານງອນດອນ, ບ້ານ ດາກມອນ, ບ້ານດາກຕະອອກນ້ອຍ ແລະ ບ້ານດາກໂດມ ເຊິ່ງຈະກວມເອົາເນື້ອທີ່ປະມານ 147 ເຮັກຕາ (ກວ້າງ 70 ແມັດ x ແລວສາຍສົ່ງຍາວ 21 ກມ) ເຊິ່ງແລວສາຍສົ່ງດັ່ງກ່າວນີ້ ມີຈຳນວນເສົາທັງໝົດ 47 ເສົາ (ເປັນເສົາມຸມ 12 ເສົາ ແລະ ເສົາຊື່ 35 ເສົາ).

ຕາຕະລາງ 3-2: ລັກສະນະຂອງສາຍສົ່ງ

ສາຍສົ່ງໄຟຟ້າແຮງສູງ 500 kv	
• ລະດັບແຮງດັນ	: 500 kv
• ຈຸດເລີ່ມຕົ້ນ	: ສະຖານີໄຟຟ້າ 115/500 kv ຂອງໂຄງການ, ບ້ານ ດາກບອງ, ເມືອງດາກຈຶງ
• ຈຸດສິ້ນສຸດຂອງແລວ	: ສະຖານີໄຟຟ້າ 500 kv ຂອງ ສສ ຫວຽດນາມ (ສະຖານີ Thanh My)
• ລວງຍາວທັງໝົດ	: 66 Km
• ລວງຍາວຢູ່ຝັ່ງ ສປປ ລາວ	: 21 Km
• ເຂດສະຫງວນແລວ	: 70 ແມັດ (ເບື້ອງລະ 35 ແມັດ)
• ຈຳນວນເສົາມຸມ PI	: 12 ເສົາ ຂະໜາດຕີນເສົາ ແລະ ເຂດສະຫງວນຕີນເສົາ 15 x15 ແມັດ
• ຈຳນວນເສົາຊື່ TT	: 35 ເສົາ ຂະໜາດຕີນເສົາ ແລະ ເຂດສະຫງວນຕີນເສົາ 12 x12 ແມັດ
• ລວງສູງຂອງເສົາ	: 58.7 – 68.7 ແມັດ
• ເສົາໄຟ	: ເສົາເຫຼັກສານ
• ຮາກຖານ (ຕີນເສົາ)	: ຮາກຖານເຮັດດ້ວຍເບຕົ້ງເສີມເຫຼັກ

3.3.1.1 ເສົາໄຟຟ້າແຮງສູງ

ການກຳນົດປະເພດຂອງເສົາທີ່ນຳໃຊ້ແມ່ນອີງຕາມມາດຕະຖານສາກົນ, ຕາມກຳລັງແຮງດັນໄຟຟ້າ ແລະ ສະພາບພື້ນທີ່ຂອງໂຄງການ ສຳລັບໂຄງການແມ່ນໃຊ້ເສົາຂະໜາດຮັບແລວສາຍສົ່ງ 500 ກວ ແລະ ບາງຈຸດເສົາມຸມ ຫຼື ພື້ນທີ່ລັກສະນະພູມສັນຖານເປັນພູສູງອາດຈະຕ້ອງໃຊ້ເສົາຂະໜາດໃຫຍ່ຕາມແບບມາດຕະຖານທີ່ເໝາະສົມ ກ່ອນທີ່ຈະເລີ່ມການຕິດຕັ້ງເສົາຈະຕ້ອງມີການບຸກເບີກ ແລະ ປັບພື້ນທີ່, ວາງຮາກຖານເສົາຕາມຂະໜາດທີ່ກຳນົດໄວ້ ແລະ ພື້ນ

ທີ່ໃຊ້ສຳລັບການປະກອບຊິ້ນສ່ວນອຸປະກອນ ແລະ ຍັງນຳໃຊ້ລົດໃນການຂົນສົ່ງອຸປະກອນ, ສາຍໄຟ, ເຄື່ອງຈັກດຶງ ສາຍອີກດ້ວຍ ພ້ອມທັງໃຊ້ແຮງງານຄົນ. ກ່ອນເລີ່ມການກໍ່ສ້າງ ຕົ້ນໄມ້ ແລະ ສິ່ງປຸກສ້າງຕ່າງໆ ທີ່ຢູ່ຕາມແລວສາຍສົ່ງ ແມ່ນຈະຖືກຕັດ ແລະ ມ້າງອອກ ເພື່ອບໍ່ໃຫ້ໃກ້ແລວສາຍໄຟ, ການຕິດຕັ້ງເສົາເລີ່ມຈາກການວາງຮາກຖານ ຄອນກຣີດເສີມເຫຼັກເພື່ອໃຫ້ແໜ້ນໜາ ແລະ ທົນທານ ແລ້ວປະກອບຊິ້ນສ່ວນຕ່າງໆຂອງເສົາເຂົ້າກັນ. ຫຼັງຈາກນັ້ນ, ກໍ່ຕິດຕັ້ງເສົາຈາກໜ້າດິນຂຶ້ນຫາເທິງສຸດແລ້ວຕິດຕັ້ງ ສາຍລໍ້ຟ້າ, ສາຍຈ່ອງເສົາ ແລະ ສາຍດິນ. ຫຼັງຈາກນັ້ນ, ຈຶ່ງຈະໄດ້ເລີ່ມການພາດສາຍໄຟຂຶ້ນແຕ່ລະເສົາ.

3.3.1.2 ສາຍສົ່ງໄຟຟ້າແຮງສູງ

ສາຍໄຟຟ້າອາດເປັນແບບຕັນເປັນແທ່ງ (Solid) ຫຼື ເປັນແບບກ້ຽວ (Stranded) ສາຍໄຟຟ້າຂະໜາດໃຫຍ່ຈະເປັນແບບກ້ຽວເພາະຖ້າເປັນສາຍຕັນຈະມີນ້ຳໜັກຫຼາຍ ແລະ ຫັກໄດ້ງ່າຍ ໂດຍໂຄງການສາຍໄຟຟ້າແຮງສູງທົ່ວໄປ ໃຊ້ລະບົບສາຍສົ່ງມີ 4 ຊະນິດຄື:

- ສາຍອະລູມິນຽມຕີກ້ຽວເປືອຍ (All Aluminium Conductor: AAC)
- ສາຍອະລູມິນຽມຕີກ້ຽວເປືອຍແກນເຫຼັກ (All Aluminium Conductor Steel Reinforced: ACSR)
- ສາຍອະລູມິນຽມຕີກ້ຽວເປືອຍ (All Aluminium Alloy Stranded Conductors: AA)
- ລວດເຫຼັກກ້າເຄືອບສັງກະສີຕີກ້ຽວ (Galvanize Steel Wire Strand: St)

3.3.1.3 ດອກກັນໄຟຟ້າຊອດ ຫຼື ລູກຖ້ວຍ (Insulators)

ເປັນອຸປະກອນທີ່ໃຊ້ຮອງຮັບສາຍໄຟ ເຮັດໜ້າທີ່ເປັນສະນວນ ແລະ ປ້ອງກັນບໍ່ໃຫ້ກະແສໄຟຟ້າຮົ່ວລົງດິນ ເພາະຖ້າປະລິມານກະແສໄຟຟ້າຮົ່ວລົງດິນ ຫຼື ລັດວົງຈອນຮົ່ວລົງດິນ ຖ້າປະລິມານກະແສໄຟຮົ່ວລົງດິນຈຳນວນຫຼາຍ ອຸປະກອນປ້ອງກັນທີ່ຕິດຕັ້ງໃນລະບົບຈຳໜ່າຍກໍ່ຈະຕັດວົງຈອນອອກເຮັດໃຫ້ການກະຈາຍໄຟຫຼຸດ. ດັ່ງນັ້ນ, ລູກຖ້ວຍຈຶ່ງມີຄວາມສຳຄັນຕໍ່ການກະຈາຍພະລັງງານໄຟຟ້າ ລວມທັງສາຍສົ່ງແຮງສູງ (Transmission line) ແລະ ລະບົບສາຍຈຳໜ່າຍ (Distribution line)

3.3.2 ຄາດຄະເນວັດຖຸ ແລະ ອຸປະກອນທີ່ໃຊ້

ທີ່ດິນທີ່ໄດ້ຮັບຜົນກະທົບຕາມແລວສາຍສົ່ງ ສ່ວນຫຼາຍແມ່ນ ດິນສວນ ແລະ ດິນປ່າຊຶມໃຊ້ລວມຂອງບ້ານ. ນອກຈາກນີ້, ແລວສາຍສົ່ງຍັງຜ່ານເຂດປ່າປ້ອງກັນແຫ່ງຊາດ ທີ່ຢູ່ບໍລິເວນເຂດດ່ານຊາຍແດນ. ໂດຍຜົນກະທົບຕໍ່ດິນຖາວອນແມ່ນຈຸດທີ່ຕັ້ງເສົາໄຟຟ້າແຮງສູງໂດຍມີຈຳນວນ ເສົາມຸມທັງໝົດ 12 ເສົາມຸມ ແລະ ເສົາຕາມແລວຊື່ 35 ເສົາ , ມີຄວາມຍາວທັງໝົດຂອງແລວສາຍສົ່ງ 21 km.

ການທົດແທນຄ່າເສຍຫາຍທີ່ເກີດຂຶ້ນຈາກໂຄງການ ແມ່ນຈະປະຕິບັດຕາມນະໂຍບາຍ ແລະ ລະບຽບກົດໝາຍທີ່ມີຂອງ ສປປ ລາວ. ເຖິງຢ່າງໃດກໍ່ຕາມ, ເນື້ອທີ່ດິນບາງສ່ວນແມ່ນຕ້ອງການ ເພື່ອການບຸກເບີກໃນໄລຍະຂອງການກໍ່ສ້າງ. ຖ້າຕົ້ນໄມ້ ທີ່ສູງກວ່າ 3 ແມັດ ຫຼື ສິ່ງປຸກສ້າງອື່ນໆ (ຖ້າມີ) ໃນເຂດສະຫງວນຂອງແລວສາຍສົ່ງ (RoW 70 ແມັດ) ແມ່ນຈຳເປັນຕ້ອງໄດ້ຍົກຍ້າຍອອກ. ການປູກພືດຕ່າງໆຢູ່ກ້ອງແລວສາຍສົ່ງ ແມ່ນສາມາດປະຕິບັດໄດ້ ຖ້າຫາກພືດດັ່ງກ່າວ ມີຄວາມສູງບໍ່ເກີນ 3 ແມັດ. ການປູກເຂົ້າ, ປູກກາເຟໃນເຂດນີ້ແມ່ນຈະບໍ່ມີຜົນກະທົບຕໍ່ສາຍສົ່ງ. ດັ່ງນັ້ນ, ການປູກເຂົ້າ, ປູກກາເຟແມ່ນປູກໄດ້ປົກກະຕິ.

3.3.3 ແຮງງານຂອງໂຄງການ

ອີງຕາມການວາງແຜນດ້ານບຸກຄະລາກອນຂອງ ຜູ້ພັດທະນາໂຄງການ ໃນໜ້າວຽກຕ່າງໆຂອງການກໍ່ສ້າງໂຄງການ ຄາດຄະເນວ່າຈະມີແຮງງານປະກອບດ້ວຍວິຊາການນາຍຊ່າງ, ວິຊາການພາກສະໜາມ, ພະນັກງານຂັບລົດ ຫຼື ພາຫະນະຂົນສົ່ງຕ່າງໆ ແລະ ກຳມະກອນທີ່ຈະເຂົ້າມາກໍ່ສ້າງສາຍສົ່ງໃນໄລຍະກໍ່ສ້າງ ຕາມນະໂຍບາຍຂອງຜູ້ ພັດທະນາໂຄງການມີແຜນຈະນຳໃຊ້ ແຮງງານທ້ອງຖິ່ນ 75% ຂອງຈຳນວນແຮງງານທັງໝົດ ລວມທັງວິຊາການ ແລະ ກຳມະກອນ.

3.3.4 ເຂດເກັບມ້ຽນວັດສະດຸ ແລະ ແຄ້ມພັກກຳມະກອນ

ໂຄງການກໍ່ສ້າງແລວສາຍສົ່ງໄຟຟ້າ 500 ກວ ຂອງໂຄງການພະລັງງານລິມທີ່ສະເໜີນີ້ ແມ່ນນອນຢູ່ໃນແຜນການ ກໍ່ສ້າງລວມຂອງໂຄງການພະລັງງານລິມ 600 ເມກາວັດ ເຊິ່ງໄດ້ມີການກຳນົດເຂດພື້ນທີ່ຊົ່ວຄາວສຳລັບການກໍ່ສ້າງ ເປັນຕົ້ນແມ່ນເຂດເກັບມ້ຽນວັດສະດຸ ແລະ ແຄ້ມພັກກຳມະກອນກໍ່ສ້າງ ໂດຍມີ 2 ຈຸດທີ່ຮັບໃຊ້ການກໍ່ສ້າງສາຍສົ່ງ 500 ກວ ຕາມສະແດງໃນແຜນທີ່ຂ້າງລຸ່ມນີ້:



ຮູບທີ 3-3: ເຂດເກັບມ້ຽນວັດສະດຸ ແລະ ແຄ້ມພັກກຳມະກອນຮັບໃຊ້ໂຄງການສາຍສົ່ງ

3.3.5 ເສັ້ນທາງການຂົນສົ່ງ

ການຂົນສົ່ງໃນຊ່ວງກໍ່ສ້າງຂອງໂຄງການປະກອບດ້ວຍ 2 ສ່ວນຄື: ການຂົນສົ່ງວັດສະດຸອຸປະກອນກໍ່ສ້າງ, ຄົນງານ ເສັ້ນທາງຫຼັກໃນເຂດພື້ນທີ່ໂຄງການແມ່ນເສັ້ນທາງ ເລກທີ 16B ເຊິ່ງເປັນເສັ້ນທາງເຊື່ອມຕໍ່ປະເທດ ສປປ ລາວ ກັບ ປະເທດໄທ ແລະ ປະເທດຫວຽດນາມ ຈາກທິຕາເວັນຕົກ ຫາ ທິດຕາເວັນອອກ ມີໄລຍະທາງຈາກເຫດສະບານ

ແຂວງເຊກອງ ເຖິງທີ່ຕັ້ງໂຄງການ ປະມານ 108 ກມ ສະພາບເສັ້ນທາງແມ່ນເປັນທາງປູຢາງຈາກຊາຍແດນ ລາວ-ໄທ ເຖິງຊາຍແດນ ລາວ-ຫວຽດນາມ.

3.4 ກິດຈະກຳຂອງໂຄງການ

ດັ່ງທີ່ໄດ້ກ່າວມາໃນຂ້າງເທິງ, ໂຄງການກໍ່ສ້າງແລວສາຍສົ່ງໄຟຟ້າ 500 ກວ ຂອງໂຄງການພະລັງງານລົມທີ່ສະເໜີນີ້ ແມ່ນນອນຢູ່ໃນແຜນການກໍ່ສ້າງລວມຂອງໂຄງການພະລັງງານລົມ 600 ເມກາວັດ ໂດຍມີແຜນການກໍ່ສ້າງ ສາຍສົ່ງ 500 ກວ ໃນເບື້ອງຕົ້ນແມ່ນຈະໃຊ້ເວລາທັງໝົດ 424 ມື້ ເລີ່ມຈາກ ວັນທີ 02/02/2023 ຫາ 01/04/2024. ເພື່ອໃຫ້ສຳເລັດໜ້າວຽກໃນການກໍ່ສ້າງ ສາຍສົ່ງໄຟຟ້າ 500 KV ແມ່ນຈະມີບັນດາກິດຈະກຳດັ່ງລຸ່ມນີ້:

ຕາຕະລາງ 3-3: ແຜນການດຳເນີນງານແຕ່ລະກິດຈະກຳ

ລ/ດ	ກິດຈະກຳການກໍ່ສ້າງ	ໄລຍະເວລາ											
		2023				2024				2025			
		Q1	Q2	Q3	Q4	Q1	Q2	Q3	Q4	Q1	Q2	Q3	Q4
ໄລຍະການກໍ່ສ້າງ													
1	ການບຸກເບີກເສັ້ນທາງເຂົ້າຫາຕີນເສົາ												
2	ການຕັດ ຫຼື ການຖາງ ເຂດສະຫງວນແລວສາຍສົ່ງ 70 ແມັດ												
3	ວຽກຮາກຖານເສົາສາຍສົ່ງໄຟຟ້າ												
4	ວຽກງານຕິດຕັ້ງເສົາສາຍສົ່ງໄຟຟ້າແຮງສູງ												
5	ວຽກງານພາດ ແລະ ດຶງສາຍສົ່ງໄຟຟ້າແຮງສູງ												
6	ວຽກງານກວດສອບ ແລະ ກວດກາຄັ້ງສຸດທ້າຍ												
7	ການທົດສອບ ແລະ ການມອບໃຫ້ແກ່ເຈົ້າຂອງໂຄງການ												
8	ສຳເລັດການກໍ່ສ້າງ ໂຄງການພະລັງງານລົມ												
ໄລຍະດຳເນີນງານ													
1	ການບຳລຸງຮັກສາ ແລະ ອະນາໄມ ຕາມເຂດສະຫງວນແລວສາຍສົ່ງ									ຕະຫຼອດອາຍຸສຳປະທານ			
2	ເລີ້ມດຳເນີນງານໂຄງການພະລັງງານລົມ												

ແຫຼ່ງຂໍ້ມູນຈາກ: IEAD

ພາກທີ 4 ການອະທິບາຍດ້ານສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ

4.1 ຂໍ້ກຳນົດຂໍ້ຈຳກັດການສຶກສາ

ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ສຳລັບໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລິມ 600 MW ແມ່ນຈະໄດ້ສຶກສາຂໍ້ມູນພື້ນຖານກວມເອົາອົງປະກອບດ້ານຕ່າງໆຄື: ອົງປະກອບດ້ານກາຍຍະພາບ, ອົງປະກອບດ້ານຊີວະພາບ, ອົງປະກອບດ້ານເສດຖະກິດ - ສັງຄົມ, ອົງປະກອບດ້ານວັດທະນະທຳ ແລະ ທັດສະນີຍະພາບຂອງພື້ນທີ່ຕັ້ງໂຄງການໃນປັດຈຸບັນ.

4.2 ວິທີການເກັບກຳຂໍ້ມູນ

ໃນການສຶກສາສະພາບແວດລ້ອມປັດຈຸບັນ ອ້ອມຂ້າງໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລິມ 600 MW ທີ່ສະເໜີນີ້ ແມ່ນໄດ້ມີການສຶກສາໂດຍການທົບທວນຂໍ້ມູນ ຈາກບົດລາຍງານທີ່ກ່ຽວຂ້ອງທີ່ມີການສຶກສາຜ່ານມາ, ບັນດາຂໍ້ມູນມີສອງຈາກຂະແໜງການຕ່າງໆຂອງເມືອງດາກຈຶງ, ຂະແໜງການທີ່ກ່ຽວຂ້ອງຂອງແຂວງເຊກອງ, ການສຳຫຼວດຕົວຈິງພາກສະໜາມກ່ຽວກັບ ການເກັບຕົວຢ່າງວັດແທກຄຸນນະພາບສິ່ງແວດລ້ອມ (ຄຸນນະພາບອາກາດ, ຄຸນນະພາບນ້ຳໜ້າດິນ, ນ້ຳໃຕ້ດິນ, ສຽງດັງ...), ພ້ອມທັງການເປີດກອງປະຊຸມເຜີຍແຜ່ຂໍ້ມູນ, ສຳພາດສອບຖາມ ແລະ ຮັບຟັງຄຳຄິດເຫັນຂອງປະຊາຊົນອ້ອມຂ້າງທີ່ມີຕໍ່ແຜນການດຳເນີນງານຂອງໂຄງການ. ເຊິ່ງລາຍລະອຽດຂອງການສຶກສາແມ່ນຈະກວມເອົາອົງປະກອບດ້ານຕ່າງໆຄື: ອົງປະກອບດ້ານກາຍຍະພາບ, ອົງປະກອບດ້ານຊີວະພາບ, ອົງປະກອບດ້ານເສດຖະກິດ - ສັງຄົມ, ອົງປະກອບດ້ານວັດທະນະທຳ ແລະ ທັດສະນີຍະພາບຂອງພື້ນທີ່ຕັ້ງໂຄງການໃນປັດຈຸບັນ ໂດຍຫົວຂໍ້ໃນແຕ່ລະດ້ານແມ່ນອີງຕາມ ບົດແນະນຳວິຊາການກ່ຽວກັບການສ້າງ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດຂອງໂຄງການລົງທຶນ ແລະ ກົດຈະກຳຕ່າງໆ ໃນ ສປປ ລາວ ສະບັບເລກທີ 2796.1/ກຊສ.ກປສສ.ພຄຕ. ນະຄອນຫຼວງວຽງຈັນ, ສະບັບລົງວັນທີ 19 ທັນວາ 2016. ເຖິງຢ່າງໃດກໍ່ຕາມ ໃນການສຶກສາສະຂໍ້ມູນພາບແວດລ້ອມປັດຈຸບັນສຳລັບໂຄງການດັ່ງກ່າວນີ້ ອາດຈະບໍ່ເປັນໄປຕາມທຸກໆຂັ້ນຕອນ ຫຼື ທຸກໆຫົວຂໍ້ ທີ່ໄດ້ກຳນົດໄວ້ໃນສາລະບານ ຂອງບົດແນະນຳວິຊາການດັ່ງກ່າວ, ເນື່ອງຈາກວ່າບົດແນະນຳ ແມ່ນເພື່ອການນຳໃຊ້ ໃຫ້ແກ່ທຸກປະເພດຂອງໂຄງການ ທີ່ມີການສຶກສາສະພາບແວດລ້ອມເພື່ອນຳໄປປະເມີນຜົນກະທົບທີ່ມີຄວາມແຕກຕ່າງກັນ ເຊິ່ງຂຶ້ນກັບຂະບວນການ ແລະ ຂັ້ນຕອນ ຂອງໂຄງການນັ້ນໆ.

4.3 ອົງປະກອບທາງກາຍຍະພາບ

ການສຶກສາສະພາບປັດຈຸບັນດ້ານອົງປະກອບສິ່ງແວດລ້ອມທາງກາຍຍະພາບຂອງເຂດທີ່ຕັ້ງໂຄງການທີ່ສະເໜີນີ້ ເປັນການສຶກສາທີ່ຄອບຄຸມເອົາຫົວຂໍ້ຕ່າງໆໄດ້ແກ່: ສະພາບພູມສັນຖານ, ສະພາບພູມອາກາດ, ຄຸນນະພາບອາກາດ, ດິນ ແລະ ການເຊາະເຈື່ອນ, ແຫຼ່ງນ້ຳ/ຄຸນນະພາບນ້ຳ, ສຽງດັງ/ການສັ່ນສະເທືອນ ແລະ ອື່ນໆ. ໂດຍມີການສຶກສາຂໍ້ມູນໃນອະດີດຈົນເຖິງປັດຈຸບັນກ່ອນມີໂຄງການ ເພື່ອນຳເອົາຜົນການສຶກສາທີ່ໄດ້ມາວິເຄາະ ແລະ ນຳໄປປະເມີນຜົນກະທົບທີ່ຄາດວ່າຈະເກີດຂຶ້ນຈາກການກໍ່ສ້າງ ແລະ ດຳເນີນໂຄງການ. ເຊິ່ງຜົນຂອງການສຶກສາສະພາບແວດລ້ອມປັດຈຸບັນທາງດ້ານກາຍຍະພາບແມ່ນຖືວ່າເປັນຂໍ້ມູນສຳຄັນສ່ວນໜຶ່ງໃນການປະເມີນຜົນກະທົບ, ການວາງມາດຕະການຫຼຸດຜ່ອນຜົນກະທົບ ຫຼື ກຳນົດມາດຕະການໃນການຕິດຕາມກວດກາສິ່ງແວດລ້ອມຂອງໂຄງການ ເພື່ອໃຫ້ການດຳເນີນໂຄງການບັນລຸຕາມຈຸດປະສົງທີ່ກຳນົດໄວ້ ແລະ ກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມໜ້ອຍທີ່ສຸດ

ຕະຫຼອດຈົນເພື່ອໃຫ້ເປັນການພັດທະນາໂຄງການໃນລັກສະນະຄຽງຄູ່ກັບການອະນຸລັກສິ່ງແວດລ້ອມແບບຍືນຍົງ ໃນອະນາຄົດ. ເຊິ່ງບັນດາຂໍ້ມູນພື້ນຖານທີ່ໄດ້ມີການສຶກສາແມ່ນມີດັ່ງນີ້:

4.3.1 ສະພາບອາກາດ/ອຸຕຸນິຍົມ

1) ວິທີການ

ຂໍ້ມູນພື້ນຖານທາງດ້ານສະພາບອາກາດ ແລະ ອຸຕຸນິຍົມ ແມ່ນເປັນຕົວຊີ້ວັດທີ່ສຳຄັນທີ່ຄອບຄຸມການແຜ່ກະຈາຍ ຂອງມົນລະພິດທາງອາກາດ ຈາກແຫຼ່ງກຳເນີດໄປຫາຜູ້ຮັບທີ່ມີຄວາມອ່ອນໄຫວ ທີ່ຢູ່ໃກ້ຄຽງເຂດພື້ນທີ່ການສຶກສາ. ດັ່ງນັ້ນ, ການສຶກສາຂໍ້ມູນພື້ນຖານກ່ຽວກັບເງື່ອນໄຂສະພາບອາກາດ ແລະ ອຸຕຸນິຍົມ ແມ່ນເປັນພື້ນຖານສຳລັບການ ປະເມີນຜົນກະທົບທີ່ອາດຈະເກີດຂຶ້ນຕໍ່ຄຸນນະພາບຂອງອາກາດໂດຍສະເພາະຊ່ວງການກໍ່ສ້າງໂຄງການ. ເຊິ່ງມີການ ສຶກສາແມ່ນຈະໄດ້ອີງໃສ່ຂໍ້ມູນຂອງສະຖານີອຸຕຸນິຍົມທີ່ມີຢູ່ໃນເຂດພື້ນທີ່ໂຄງການ ແລະ ເຂດໃກ້ຄຽງ.

2) ການອະທິບາຍ

- **ອຸນຫະພູມ**

ອ້າງອີງຂໍ້ມູນຈາກສະຖານີວັດແທກສະພາບອາກາດ ດ້ານອຸຕຸນິຍົມ ຂອງເມືອງດາກຈຶງ ທີ່ເປັນສະຖານີອຸຕຸນິຍົມທີ່ຢູ່ ໃກ້ຄຽງໃນເຂດພື້ນທີ່ໂຄງການທີ່ສຸດ ເຫັນວ່າ ອຸນຫະພູມສະເລ່ຍໄລຍະ 5 ປີຜ່ານມາເຫັນວ່າອຸນຫະພູມຄ້ອນຂ້າງສູງ ໃນຊ່ວງເດືອນ ເມສາ ຫາ ຕຸລາ ຂອງທຸກປີ ອຸນຫະພູມມີຄ່າສະເລ່ຍສູງສຸດໃນເດືອນ ຕຸລາ 2016, ຄ່າສະເລ່ຍ 25.6 ° C, ອຸນຫະພູມສະເລ່ຍຕ່ຳສຸດໃນເດືອນ ມັງກອນ 2015, ຄ່າສະເລ່ຍ 14.1 ° C, ປີທີ່ມີອຸນຫະພູມສູງສຸດຄ່າສະເລ່ຍ ໝົດປີ 21.3 ° C ແມ່ນປີ 2016 ແລະ ປີທີ່ມີອຸນຫະພູມຕ່ຳສຸດຄ່າສະເລ່ຍໝົດປີ 20.1 ° C ແມ່ນປີ 2018. ເນື່ອງ ຈາກສະພາບພູມສັນຖານເມືອງ, ພື້ນທີ່ເຂດໂຄງການແມ່ນຕັ້ງຢູ່ເຂດພູສູງ ແລະ ໄດ້ຮັບອິດທິພົນຈາກລົມມໍລະສຸມ ພັດຜ່ານ ດັ່ງນັ້ນຈຶ່ງເຮັດໃຫ້ໄດ້ຮັບອາຍນ້ຳ ແລະ ຄວາມຊຸ່ມຫຼາຍ ເຮັດໃຫ້ອຸນຫະພູມສະເລ່ຍບໍ່ສູງຫຼາຍໃນລະດູຮ້ອນ ແລະ ມີອາກາດໜາວເຢັນເກືອບຕະຫຼອດປີ.

ຕາຕະລາງ 4-1: ອຸນຫະພູມສະເລ່ຍໃນເຂດພື້ນທີ່ໂຄງການ ສະຖານີ ເມືອງດາກຈຶງ (ຫົວໜ່ວຍ °C)

Years	Jan	Feb	Mar	Apr	May	Jun	Jul	Aug	Sep	Oct	Nov	Dec	Total Average
2015	14.1	17.3	20.9	22.6	23.5	22.8	21.3	22.8	22.4	21.1	20.1	18.7	20.6
2016	18.6	16.5	20.6	24.0	23.1	22.8	22.4	22.5	22.7	25.6	19.9	16.6	21.3
2017	17.5	17.4	20.4	22.3	22.7	23.0	21.6	22.8	23.1	20.4	18.7	15.9	20.5
2018	16.7	16.8	19.1	21.4	22.7	22.0	21.3	21.1	22.7	20.1	19.8	18.0	20.1
2019	16.8	20.9	22.7	23.6	23.5	23.9	22.3	21.6	21.3	20.9	18.3	16.1	21.0
Max	18.6	20.9	22.7	24.0	69	23.9	22.4	22.8	23.1	25.6	20.1	18.7	21.3
Min	14.1	16.5	19.1	21.4	22.7	22.0	21.3	21.1	21.3	20.1	18.3	15.9	20.1

ແຫຼ່ງຂໍ້ມູນ: ຈາກສະຖານີວັດແທກອຸຕຸນິຍົມ ເມືອງດາກຈຶງ

- **ປະລິມານນ້ຳຝົນ**

ຂໍ້ມູນປະລິມານນ້ຳຝົນໃນເຂດພື້ນທີ່ໂຄງການ ໂດຍອີງຈາກສະຖານີວັດແທກໃກ້ຄຽງຂອງເມືອງດາກຈຶງ, ປະລິມານນ້ຳຝົນ 5 ປີ ຜ່ານມາ ປີ 2015 ຫາ 2019, ເຫັນວ່າປະລິມານນ້ຳຝົນສູງສຸດ 371.6 mm ຂອງເດືອນ ກັນຍາ 2019, ປະລິມານນ້ຳຝົນມີຕ່ຳສຸດ 0.0 mm ໃນເດືອນມີນາ 2016 ແລະ ເດືອນກຸມພາ 2019. ລວມປີທີ່ມີ

ປະລິມານນ້ຳຝົນສູງສຸດທັງປີ 1795.9 mm ແມ່ນປີ 2018, ສ່ວນລວມປີທີ່ມີປະລິມານນ້ຳຝົນຕ່ຳສຸດ 1134.7 mm ຂອງປີ 2015. ຊ່ວງທີ່ມີປະລິມານນ້ຳຝົນຫຼາຍແມ່ນຊ່ວງເດືອນເມສາ ຫາ ເດືອນຕຸລາ ຂອງທຸກໆປີ ເຊິ່ງເມືອງດາກຈຶງ ຕັ້ງຢູ່ຕິດກັບຊາຍແດນປະເທດຫວຽດນາມ ຈຶ່ງໄດ້ຮັບອິດທິພົນລະດູຝົນທັງ 2 ປະເທດ.

ຕາຕະລາງ 4-2: ປະລິມານນ້ຳຝົນແຕ່ລະປີໃນເຂດພື້ນທີ່ໂຄງການ (mm)

Years	Jan	Feb	Mar	Apr	May	Jun	Jul	Aug	Sep	Oct	Nov	Dec	Total
2015	17.2	45.5	34.8	110.8	70.9	219.4	156.4	139.2	170.9	88.5	74.3	6.8	1134.7
2016	31.1	1.5	0.0	64.1	241.7	191.1	226.6	173.6	320.6	174.9	196.0	117.5	1738.7
2017	53.4	29.7	40.3	62.8	160.0	83.2	296.5	71.8	120.9	200.3	306.1	64.4	1489.4
2018	44.0	19.8	140.4	155.7	253.0	166.7	291.1	284.7	263.4	63.1	32.1	81.9	1795.9
2019	30.3	0.0	57.9	142.8	275.2	128.2	140.4	361.4	371.6	110.9	89.5	14.1	1722.3
Max	53.4	45.5	140.4	155.7	275.2	219.4	296.5	361.4	371.6	200.3	306.1	117.5	1795.9
Min	17.2	0.0	0.0	62.8	70.9	83.2	140.4	71.8	120.9	63.1	32.1	6.8	1134.7

ແຫຼ່ງຂໍ້ມູນ: ຈາກສະຖານີວັດແທກອຸຕຸນິຍົມ ເມືອງດາກຈຶງ

- **ຄວາມຊຸ່ມ**

ພື້ນທີ່ໂຄງການເປັນເຂດພູມສັນຖານສູງເນື້ອທີ່ສ່ວນຫຼາຍປົກຄຸມດ້ວຍປ່າໄມ້ ສະພາບອາກາດໜາວເຢັນເກືອບຕະຫຼອດປີ ໄດ້ຮັບອິດທິພົນລົມມໍລະສຸມເຂດຮ້ອນທີ່ພັດຜ່ານມາທາງປະເທດຫວຽດນາມ ເຮັດໃຫ້ມີປະລິມານຄວາມຊຸ່ມຫຼາຍ ຊ່ວງເວລາຕອນເຊົ້າ ແລະ ຕອນແລງຈະເຫັນໝອກມີທົ່ວທຸກບ່ອນຕາມພື້ນທີ່ປ່າໄມ້, ຕາມສັນພູຕ່າງໆ ປະລິມານເກີດມີການລະເຫີຍອາຍຂອງນ້ຳຕົກຂ້າງຫຼາຍ.

- **ຄວາມໄວລົມ**

ອັດຕາຄວາມໄວລົມໃນເຂດພື້ນທີ່ໂຄງການທີ່ທາງໂຄງການໄດ້ມີການຕິດເສົາວັດແທກລົມຫຼາຍຈຸດເລີ່ມແຕ່ດຳເນີນສຶກສາໂຄງການຈົນຮອດປັດຈຸບັນແມ່ນມີຫຼາຍຈຸດ ໃນເຂດພື້ນທີ່ໂຄງການ ເພື່ອນຳຂໍ້ມູນມາປະກອບໃນການສຶກສາຄວາມເໝາະສົມ ໂດຍເສົາວັດແທກລົມທີ່ຕິດຕັ້ງດັ່ງກ່າວມີຄວາມສູງ 100 ແມັດ ມີການບັນທຶກຂໍ້ມູນ ໂດຍອຸປະກອນ SecondWind Nomad2, WindSensor P2546A ແລະ Vector w200P ມີລາຍລະອຽດຕື່ອຊີ້ວັດໃນການວັດແທກ, ຄວາມໄວລົມບັນທຶກສະເລ່ຍທຸກໆເດືອນ ຮອດປັດຈຸບັນ ເຫັນວ່າຄວາມໄວສະເລ່ຍທັງໝົດເລີ່ມຕັ້ງແຕ່ເລີ່ມວັດແທກແຕ່ປີ 2012 ເປັນຕົ້ນມາ 6.326 m/s, ຄວາມໄວລົມສະເລ່ຍສູງສຸດ 11.609 m/s ຂອງເດືອນທັນວາ ແລະ ຄວາມໄວລົມສະເລ່ຍຕ່ຳສຸດ 3.876 m/s ຂອງເດືອນພຶດສະພາ.

4.3.2 ພູມສັນຖານ

1) ວິທີການ

- ສຶກສາກ່ຽວກັບສະພາບພູມສັນຖານປະຈຸບັນ ແລະ ລັກສະນະທາງກາຍຍະພາບຂອງພື້ນທີ່ ໂຄງການ ແລະ ອ້ອມຮອບ, ໂດຍອີງໃສ່ຂໍ້ມູນມືສອງ ເຊັ່ນແຜນທີ່ພູມສັນຖານ, ແຜນທີ່ທໍລະນີສາດ ແລະ ຊັ້ນດິນ ຈາກກົມແຜນທີ່ແຫ່ງຊາດ ແລະ ຂໍ້ມູນມືສອງຕ່າງໆ;
- ສຳຫຼວດພາກສະໜາມ ໂດຍການສັງເກດສະພາບເງື່ອນໄຂພູມສັນຖານພາຍໃນພື້ນທີ່ໂຄງການ.

2) ລາຍລະອຽດ

ເມືອງດາກຈຶງ ຕັ້ງຢູ່ທິດຕາເວັນອອກຂອງແຂວງເຊກອງ ມີເນື້ອທີ່ທັງໝົດ 273,220.59 ຮຕ ກວມເອົາ 34,64% ຂອງເນື້ອທີ່ທັງໝົດຂອງແຂວງ. ເຊິ່ງລະດັບຄວາມສູງຈາກໜ້ານ້ຳທະເລ ສະເລ່ຍປະມານ 1,200 m, ຈຸດຕ່ຳສຸດແມ່ນ 529 m ແລະ ສູງສຸດແມ່ນ 1,397 m ແລະ ນອນຢູ່ໃນເສັ້ນຂະໜານເໜືອທີ: 19° 52' 02" N ຫາ 20° 49' 40" N ແລະ ເສັ້ນແວງຕາເວັນອອກທີ: 103° 06' 27" E ຫາ 103° 42' 21" E. ມີຊາຍແດນຕິດຈອດກັບບັນດາແຂວງ ພາຍໃນປະເທດ ແລະ ປະເທດເພື່ອນບ້ານຄື: ທິດເໜືອຕິດກັບເມືອງກະລຶມ ແຂວງເຊກອງ ມີເສັ້ນຊາຍແດນຄວາມຍາວ 22 ກິໂລແມັດ, ທິດໃຕ້ຕິດກັບເມືອງຊານໄຊ ແຂວງອັດຕະປື ມີຄວາມຍາວ 96 ກິໂລແມັດ, ທິດຕາເວັນອອກຕິດກັບເມືອງໄຕຢາງ ແຂວງກວາງນາມ ແລະ ເມືອງດັກໄລ ແຂວງກອນຕຸມ ຂອງ ສສ ຫວຽດນາມ ມີຄວາມຍາວ 177 ກິໂລແມັດ ແລະ ທິດຕາເວັນຕົກຕິດກັບ ເມືອງລະມາມ ແຂວງເຊກອງ ມີຄວາມຍາວ 65 ກິໂລແມັດ. ເນື້ອທີ່ສ່ວນໃຫ່ຍ ເປັນເຂດພູດອຍ-ພູສູງ ກວມເອົາ 95% ແລະ ພູພຽງ ກວມເອົາ 5%, ອຸນຫະພູມສະເລ່ຍຕ່ຳສຸດ 5 ອົງສາ , ສະເລ່ຍສຸງສຸດ 30 ອົງສາ, ປະລິມານນ້ຳຝົນວັດແທກໄດ້ 1,629 ມິລິແມັດ.

ສະພາບພູມສັນຖານຂອງເມືອງແມ່ນເປັນພູແຕ່ຕ່ຳ ຫາ ພູສູງຊັນ ສະຫຼັບຊັບຊ້ອນກັນເປັນສ່ວນຫຼາຍ ໂດຍຕັດແບ່ງດ້ວຍບັນດາສາຍນ້ຳ ແລະ ຫ້ວຍຮ່ອງຢ່າງຫຼວງຫຼາຍ. ເຊິ່ງໄດ້ແບ່ງສະພາບພື້ນທີ່ຂອງເມືອງອອກເປັນ 2 ລັກສະນະຕົ້ນຕໍຄື:

ສະພາບໂນນພູຕ່ຳ (ຄ້າຍພູພຽງ): ພື້ນທີ່ດັ່ງກ່າວແມ່ນກະຈາຍຢູ່ທົ່ວໄປ ແຕ່ສ່ວນຫຼາຍແມ່ນເຂດເທດສະບານເມືອງ, ເຂດຊຽງຫຼວງ ແລະ ດາກຕາອອກໃຫຍ່ຈຳນວນໜຶ່ງ. ສະພາບພື້ນທີ່ດັ່ງກ່າວ ສ່ວນໃຫຍ່ແມ່ນປົກຄຸ້ມດ້ວຍປ່າເຫຼົ່າ, ປ່າປະສົມ, ທົ່ງຫຍ້າທຳມະຊາດ ແລະ ຈຳນວນໜຶ່ງແມ່ນທຳການຜະລິດກະສິກຳເຊັ່ນ: ໄຮ່ປູກເຂົ້າ, ກາເຟ, ມັນຕົ້ນ, ສາລີ ແລະ ປູກພືດກະສິກຳອື່ນໆ.

ສະພາບພື້ນທີ່ພູສູງ: ມີເນື້ອທີ່ຫຼາຍກວ່າໝູ່ ແລະ ກະຈາຍຢູ່ທົ່ວເມືອງ, ເນື້ອທີ່ດັ່ງກ່າວສ່ວນໃຫຍ່ແມ່ນປົກຄຸມດ້ວຍປ່າໄມ້ທຳມະຊາດ ເຊິ່ງສ່ວນຫຼາຍແມ່ນເຂດປ່າສະຫງວນແຫ່ງຊາດ, ເຂດປ່າປ້ອງກັນແຫ່ງຊາດ, ເຂດປ່າຜະລິດແຫ່ງຊາດ ແລະ ປູກພືດໄຮ່ຈຳນວນໜຶ່ງ.

ຮູບທີ 4-1: ສະພາບລັກສະນະພູມສັນຖານຂອງເມືອງດາກຈຶງ

4.3.3 ທໍລະນີສາດ/ແຜ່ນດິນໄຫວ

1) ວິທີການ

ສຶກສາ ແລະ ທົບທວນຂໍ້ມູນມືສອງທີ່ກ່ຽວຂ້ອງໄດ້ແກ່: ຂໍ້ມູນທາງດ້ານທໍລະນີວິທະຍາ ຂອງຂົງເຂດທີ່ກົງກັບ ເອກະສານຂອງລາວ ແລະ ສາກົນ, ແຫຼ່ງຂໍ້ມູນມືສອງຕ່າງໆທີ່ມີກ່ຽວກັບ ແລວທີ່ເຄຍເກີດແຜ່ນດິນໄຫວໃນລາວ.

2) ລາຍລະອຽດ

ປະເທດລາວເປັນປະເທດໜຶ່ງທີ່ນອນໃນທະວີບອາຊີ ຕັ້ງຢູ່ພາກກາງຂອງແຫຼມອິນດູຈີນ ລະຫວ່າງເສັ້ນຂະໜານທີ 13°54'– 22°30' ເໜືອ ແລະ ເສັ້ນແວງ 100°05' – 107°59' ຕາເວັນອອກ ເຊິ່ງຢູ່ຫ່າງຈາກບໍລິເວນຂອບຂອງ ແຜ່ນເປືອກໂລກ, ແນວຮອຍເລື່ອນຕ່າງໆຂອງເປືອກໂລກ ແລະ ວົງແຫວນໄຟ ຈຶ່ງເຮັດໃຫ້ມີປະກົດການເກີດ ແຜ່ນດິນໄຫວແຕ່ອາດີດຈົນປະຈຸບັນຢູ່ໃນລະດັບຕ່ຳ.

ອີງຕາມຂໍ້ມູນຈາກພະແນກຕາໜ່າງສະຖານີອຸຕຸນິຍົມ ແລະ ແຜ່ນດິນໄຫວ, ກົມອຸຕຸນິຍົມ ແລະ ອຸທົກກະສາດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແມ່ນເຫັນວ່າ ເຫດການແຜ່ນດິນໄຫວທີ່ເຄີຍເກີດຂຶ້ນໃນ ສປປ ລາວ ເຄີຍເກີດຂຶ້ນຮຸນແຮງໃນປີ 2007 ທີ່ແຂວງໄຊຍະບູລີ ແລະ ລ່າສຸດກໍ່ແມ່ນປີ 2019 ທີ່ຜ່ານມາເກີດເຫດ ແຜ່ນດິນໄຫວທີ່ສາມາດຮັບຮູ້ໄດ້ຂຶ້ນອີກ ຢູ່ເຂດເມືອງຫົງສາ ແຂວງໄຊຍະບູລີ. ສຳລັບໃນແຂວງເຊກອງ ແລະ ແຂວງ ອັດຕະປື ກໍ່ຄືເຂດພື້ນທີ່ໂຄງການທີ່ສະເໜີ ໃນໄລຍະທີ່ຜ່ານມາແມ່ນບໍ່ມີການບັນທຶກວ່າມີປະກົດການແຜ່ນດິນ ໄຫວ. ແຕ່ເຖິງຢ່າງໃດກໍ່ຕາມໃນການອອກແບບເສົາກັ້ງຫັນລົມຂອງໂຄງການກໍ່ໄດ້ມີການອອກແບບຕາມ ມາດຕະຖານທີ່ສາມາດຮອງຮັບເຫດການໄດ້.



ແຜນທີ່ເຂດວົງແຫວນໄຟຂອງໂລກ.



ແຜນທີ່ການເກີດແຜ່ນດິນໄຫວ ແຕ່ປີ 1900 ຫາ ມີນາ 2012 (Seismicity Map 1900-March 2012)

ແຫຼ່ງຂໍ້ມູນ: http://www.enchantedlearning.com/subjects/volcano/ringoffire/, United States Geological Survey (USGS),

ຮູບທີ 4–2: ແຜນທີ່ສະແດງຂໍ້ມູນກ່ຽວກັບວົງແຫວນໄຟ ແລະ ການເກີດແຜ່ນດິນໄຫວ

4.3.4 ດິນ

1) ວິທີການ

ສຶກສາ ແລະ ທົບທວນຂໍ້ມູນມືສອງທີ່ກ່ຽວຂ້ອງໄດ້ແກ່: ຂໍ້ມູນທາງດ້ານດິນ ຂອງຂົງເຂດທີ່ກົງກັບເອກະສານຂອງ ລາວ ແລະ ສາກົນ, ແຫຼ່ງຂໍ້ມູນມືສອງຕ່າງໆທີ່ມີກ່ຽວກັບດິນ

2) ລາຍລະອຽດ

ອີງຕາມຂໍ້ມູນຈາກບົດລາຍງານຜົນການສຳຫຼວດກຳນົດແບ່ງເຂດຜະລິດກະສິກຳ ແລະ ປ່າໄມ້ ເມືອງດາກຈຶງ, ແຂວງ ເຊກອງ ຮອດປີ 2020 ເຫັນວ່າ ຢູ່ໃນເຂດເມືອງດາກຈຶງ ແມ່ນມີໝວດດິນທີ່ຈັດຕາມລະບົບຂອງອົງການ FAO/UNESCO ປີ 1990 ແລະ ຜົນຂອງການສຳຫຼວດຈຳແນກດິນທົ່ວປະເທດປີ 1995. ແບ່ງເປັນ 6 ໝວດດິນ ແລະ ຈຳແນກເປັນ 9 ປະເພດດິນຕາມຫີນຕົ້ນກຳເນີດ, ສະພາບພື້ນທີ່, ຊັ້ນຊີ້ບົ່ງ ແລະ ຄຸນລັກສະນະຊີ້ບົ່ງຂອງດິນ ດັ່ງນີ້: ARENOSOLS, ACRISOLS, ALISOLS, REGOSOLS, LUVISOLS ແລະ CAMBISOLS.

- ເນື້ອດິນສ່ວນຫຼາຍແມ່ນເນື້ອທີ່ດິນໜຽວໜັກ (Heavy clay), ຖັດລົງມາແມ່ນເນື້ອທີ່ດິນຕົມແກມໜຽວ (Clay loam) ແລະ ໜ້ອຍກວ່າໝູ່ແມ່ນເນື້ອທີ່ດິນຊາຍແກມຕົມ (Loamy sand).
- ຄວາມເລິກຂອງຊັ້ນດິນສ່ວນຫຼາຍແມ່ນຊັ້ນດິນເລິກທີ່ສຸດ (D) > 100 cm ນັບຈາກໜ້າດິນ, ຮອງລົງມາ ແມ່ນຊັ້ນດິນປານກາງ (M) 75 - 100 cm, ຊັ້ນດິນຕື້ນ (S) ແຕ່ 30 - 50 cm, ຊັ້ນດິນບາງ (T) ແຕ່ 50-75 cm ນັບຈາກໜ້າດິນ.

4.3.5 ໄພທຳມະຊາດ

1) ວິທີການ

ໄພທຳມະຊາດເປັນໄພຂົ່ມຂູ່ທີ່ອັນຕະລາຍທີ່ສຸດຕໍ່ການພັດທະນາໂຄງການ ໄດ້ແກ່ໄພນ້ຳຖ້ວມ, ແຜ່ນດິນໄຫວ ແລະ ດິນຖະຫຼົ່ມ. ດັ່ງນັ້ນ, ການສຶກສາຂໍ້ມູນພື້ນຖານກ່ຽວກັບໄພທຳມະຊາດຈະເປັນປະໂຫຍດ ສຳລັບການອອກແບບ ແລະ ການດຳເນີນການກໍ່ສ້າງຕ່າງໆຂອງໂຄງການ. ໂດຍຈະໄດ້ສັງລວມຂໍ້ມູນມືສອງກ່ຽວກັບປະຫວັດການເກີດ ໄພທຳມະຊາດຈາກຂະແໜງການກ່ຽວຂ້ອງຂອງແຂວງ, ຫ້ອງການກ່ຽວຂ້ອງຂອງເມືອງ, ເອກະສານອື່ນໆທີ່ ກ່ຽວຂ້ອງ ແລະ ການສຳພາດສອບຖາມກ່ຽວກັບໄພທຳມະຊາດໃນເຂດພື້ນທີ່ການສຶກສາ.

2) ລາຍລະອຽດ

ໄພນ້ຳຖ້ວມ: ລັກສະນະພູມສັນຖານຂອງເຂດພື້ນທີ່ໂຄງການ ແລະ ເຂດໃກ້ຄຽງສ່ວນຫຼາຍແມ່ນເປັນເຂດພູຕ່ຳ ຫາ ພູສູງ ແລະ ບໍ່ມີແມ່ນ້ຳໃຫຍ່ ທີ່ກໍ່ໃຫ້ເກີດໄພນ້ຳຖ້ວມໃນເຂດດັ່ງກ່າວ.

ດິນຖະຫຼົ່ມ: ຝົນຕົກແມ່ນປັດໃຈຕົ້ນຕໍຂອງການເກີດດິນຖະຫຼົ່ມ (ດິນເຈື່ອນ) ສ່ວນປັດໃຈອື່ນໆທີ່ມີອິດທິພົນຕໍ່ການ ເຈື່ອນຂອງດິນແມ່ນຄວາມຄ້ອຍຊັນຂອງດິນ, ເງື່ອນໄຂຂອງຫີນ ແລະ ສະພາບການນຳໃຊ້ທີ່ດິນທີ່ບໍ່ເໝາະສົມ.

ແຜ່ນດິນໄຫວ: ດັ່ງທີ່ກ່າວມາຂ້າງເທິງສຳລັບໃນແຂວງເຊກອງ ກໍ່ຄືເຂດພື້ນທີ່ໂຄງການທີ່ສະເໜີ ໃນໄລຍະທີ່ຜ່ານມາ ແມ່ນບໍ່ມີການບັນທຶກວ່າມີປະກົດການແຜ່ນດິນໄຫວ. ແຕ່ເຖິງຢ່າງໃດກໍ່ຕາມໃນການອອກແບບເສົາສາຍສົ່ງ ຂອງ ໂຄງການກໍ່ໄດ້ມີການອອກແບບຕາມມາດຕະຖານທີ່ສາມາດຮອງຮັບເຫດການໄດ້.

4.3.6 ການເຊາະເຈື່ອນ ແລະ ການຕົກຕະກອນ

1) ວິທີການ

ການບຸກເບີກພື້ນທີ່ທາງເຂົ້າຕົນເສົາກັ້ງຫັນລີມ ແລະ ເຂດຕົນເສົາ ອາດກໍ່ໃຫ້ເກີດການສູນເສຍເນື້ອທີ່ປ່າທຳມະຊາດ, ເນື້ອທີ່ກະສິກຳຈຳນວນໜຶ່ງ ແລະ ອາດໃຫ້ດິນເຊາະເຈື່ອນ ຫຼື ຍຸບຕົວ ໃນຊ່ວງຂອງການກະກຽມພື້ນທີ່. ດັ່ງນັ້ນ, ມັນມີຄວາມຈຳເປັນທີ່ຕ້ອງໄດ້ຮູ້ ຄຸນລັກສະນະດິນ ແລະ ການເຊາະເຈື່ອນໃນເຂດພື້ນທີ່ຢ່າງກວ້າງໆ ທາງດ້ານຄວາມອາດສາມາດ ແລະ ຂໍ້ຈຳກັດຂອງດິນດັ່ງກ່າວສຳລັບການນຳໃຊ້ໃນອະນາຄົດ. ໂດຍການສຶກສາຈາກຂໍ້ມູນທີ່ມີຢູ່ແລ້ວ, ບົດລາຍງານການສຶກສາທີ່ກ່ຽວຂ້ອງ ແລະ ການສຳຫຼວດສັງເກດພາກສະໜາມກ່ຽວກັບການເຊາະເຈື່ອນ.

2) ລາຍລະອຽດ

ການເຊາະເຈື່ອນ ແລະ ການຕົກຕະກອນ ໂດຍທົ່ວໄປແລ້ວ ແມ່ນເກີດຈາກການປ່ຽນແປງທາງທຳມະຊາດຄື ການເພີ່ມຂຶ້ນຂອງລະດັບນ້ຳ ການເຊາະເຈື່ອນຂອງເຂດພູລົງສູ່ພື້ນຮາບພຽງ, ຄື້ນລົມພະຍຸທີ່ຮຸນແຮງ. ສ່ວນສາເຫດເກີດຈາກກິດຈະກຳ ການນຳໃຊ້ທີ່ດິນທີ່ບໍ່ເໝາະສົມ, ການກໍ່ສ້າງເຂື່ອນ ລວມທັງ ການດູດແຮ່ຊາຍ, ແຮ່ຫີນ ເພື່ອນຳມາໃຊ້ໃນການກໍ່ສ້າງຕ່າງໆ. ສຳລັບການເຊາະເຈື່ອນ ແລະ ການຕົກຕະກອນໃນເຂດຂອງໂຄງການນີ້ ແມ່ນສັງເກດເຫັນວ່າ ສ່ວນຫຼາຍແມ່ນເກີດຈາກກິດຈະກຳການນຳໃຊ້ທີ່ດິນຂອງປະຊາຊົນເປັນຫຼັກ ເປັນຕົ້ນແມ່ນ ການເຮັດກະສິກຳ ເຊິ່ງມີການຂຸດ, ໄຖ, ຄາດໜ້າດິນເປັນປະຈຳ ຈຶ່ງເຮັດໃຫ້ມີການເຊາະເຈື່ອນຂອງດິນລົງສູ່ສາຍນ້ຳ ໂດຍສະເພາະໃນລະດູຝົນ.

ຮູບທີ 4-3: ການເຊາະເຈື່ອນຕາມແຄມນ້ຳ

4.3.7 ຊັບພະຍາກອນແຮ່ທາດ

1) ວິທີການ

ໂຄງການສາຍສົ່ງໄຟຟ້າ 500 KV ຜະລິດໄຟຟ້າຈາກກັ້ງຫັນລີມ 600 MW ກໍ່ເປັນໂຄງການຊະນິດໜຶ່ງ ທີ່ມີຄວາມສຳຄັນທາງດ້ານຜົນກະທົບຕໍ່ຊັບພະຍາກອນແຮ່ທາດ (ຖ້າກໍລະນີຖ້າເຂດໂຄງການມີແຮ່ທາດຕ່າງໆ), ໂດຍສະເພາະ ເຂດທີ່ຕັ້ງຂອງເສົາສາຍສົ່ງ ຫຼື ອົງປະກອບຕ່າງໆຂອງໂຄງການ ຖ້າມີແມ່ນບໍ່ສາມາດຂຸດຄົ້ນ ຫຼື ຂຸດຄົ້ນໄດ້ຍາກ ເນື່ອງຈາກຈະຕ້ອງໄດ້ທັບມ້າງເສົາກັ້ງຫັນລີມ ແລະ ອົງປະກອບຕ່າງໆຂອງໂຄງການ ຫຼື ຈະຕ້ອງໄດ້ລໍຖ້າ ຈົນກວ່າໂຄງການນັ້ນຈະສິ້ນສຸດ. ການສຶກສາຈະໄດ້ລວບລວມຂໍ້ມູນທາງທໍລະນີຂອງພື້ນທີ່ ແລະ ຊັບພະຍາກອນແຮ່ທາດ ຈາກເອກະສານຂອງລາວ ແລະ ຕ່າງປະເທດ, ແຜນທີ່ດ້ານທໍລະນີສາດ ມາດຕະສ່ວນຂະໜາດ 1:200,000, ທີ່ໄດ້ຮ່ວມກັນເຮັດ ລະຫ່ວ່າງບໍ່ແຮ່ຂອງລາວ ແລະ ສະຫະພັນ-ຄະນະກຳມະການບໍ່ແຮ່ ກິດຈະການດ້ານເສດຖະກິດ ແລະ ສັງຄົມ ຂອງເອເຊຍປາຊິຟິກ, ບົດສຶກສາຂອງໂຄງການທີ່ຢູ່ໃກ້ຄຽງ, ຂໍ້ມູນບົດສະຫຼຸບປະຈຳປີຂອງຂະແໜງການພະລັງງານ ແລະ ບໍ່ແຮ່ ຂອງແຂວງ, ເມືອງ.

2) ລາຍລະອຽດ

ແຂວງເຊກອງ ເປັນແຂວງທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ເຊິ່ງນອກຈາກຈະມີຄວາມອຸດົມດ້ວຍຊັບພະຍາກອນປ່າໄມ້, ດິນ ແລະ ແຫຼ່ງນ້ຳແລ້ວ ຢູ່ພື້ນດິນຍັງມີແຮ່ທາດຫຼາຍຊະນິດທີ່ຍັງບໍ່ທັນໄດ້ຂຸດຄົ້ນເຊັ່ນ: ຄຳ, ທອງ, ເຫຼັກ, ຖ່ານຫີນ, ບົກຊິດ ແລະ ອື່ນໆ ເຊິ່ງເປັນອີກໜຶ່ງທ່າແຮງທີ່ສຳຄັນ. ສຳລັບແຮ່ທາດຢູ່ເມືອງດາກຈຶງ ແມ່ນໄດ້ກວມເອົາ 765 ກິໂລແມັດ ກວມເອົາ 28% ຂອງເນື້ອທີ່ທັງໝົດທົ່ວເມືອງ, ທົ່ວເມືອງມີ ແຮ່ຄຳ, ແຮ່ບົກຊິດ ແລະ ແຮ່ເຫຼັກ ເຊິ່ງໄດ້ມີຫຼາຍບໍລິສັດເຂົ້າມາສຳປະທານຂຸດຄົ້ນຫຼາຍບໍລິສັດ. ສ່ວນໃນເຂດພື້ນທີ່ໂຄງການສາຍສົ່ງທີ່ສະເໜີນີ້ ອີງຕາມການລົງສຳຫຼວດເກັບກຳຂໍ້ມູນຕົວຈິງແມ່ນເຫັນວ່າ ໂຄງການບໍ່ໄດ້ນອນໃນພື້ນທີ່ທີ່ມີທ່າແຮງ ຫຼື ການາ ຫຼວດຊອກຄົ້ນຂອງບັນດາໂຄງການໃດຢູ່ໃນເມືອງດາກຈຶງ.

4.3.8 ສຽງ ແລະ ການສັ່ນສະເທືອນ

1) ວິທີການ

ການກໍ່ສ້າງໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລົມ 600 MW ທີ່ສະເໜີນີ້ ອາດຈະກໍ່ໃຫ້ເກີດຜົນກະທົບທາງດ້ານສຽງ ແລະ ການສັ່ນສະເທືອນລົບກວນຊຸມຊົນໃນເຂດພື້ນທີ່ໂຄງການ ແລະ ເຂດໃກ້ຄຽງ ໂດຍສະເພາະແມ່ນໃນຊ່ວງການກໍ່ສ້າງ ເຊິ່ງມີຄວາມຈຳເປັນຕ້ອງ ນຳໃຊ້ເຄື່ອງກົນຈັກໜັກ ເພື່ອການຂົນສົ່ງ ແລະ ນຳໃຊ້ເຂົ້າໃນ ກິດຈະກຳການກໍ່ສ້າງຕ່າງໆເຊັ່ນ: ສຽງຈາກການບຸກເບີກພື້ນທີ່, ກິດຈະກຳການກໍ່ສ້າງ, ການຂົນສົ່ງຕ່າງຕ່າງ ລ້ວນແລ້ວແຕ່ເປັນແຫຼ່ງກຳເນີດທາງສຽງ ແລະ ແຮງສັ່ນສະເທືອນ.

2) ລາຍລະອຽດ

ໂດຍອີງໃສ່ຂໍ້ມູນການວັດແທກສຽງ ຈາກບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ຂອງໂຄງການພະລັງງານລົມ 600 MW ເມືອງດາກຈຶງ ເຊິ່ງຢູ່ໃນເຂດພື້ນທີ່ດຽວກັນ ມາເປັນຂໍ້ມູນໃນບົດລາຍງານສະບັບນີ້. ເຊິ່ງໃນການສຶກສາດັ່ງກ່າວ ທາງທີມງານບໍລິສັດທີ່ປຶກສາສິ່ງແວດລ້ອມ ອິນໂນກຣີນ ໄດ້ມີການ ວັດແທກລະດັບສຽງດັງເພີ່ມຕື່ມໃນເຂດໂຮງໝໍເມືອງດາກຈຶງ, ບ້ານດາກບອງ, ເມືອງດາກຈຶງ, ຢູ່ໃນລະຫວ່າງວັນທີ 09 – 12/08/2021 ເຊິ່ງອີງຕາມຜົນການວັດແທກຄຸນນະພາບສຽງຂອງ ແມ່ນເຫັນວ່າມີຄ່າວັດແທກທີ່ບໍ່ເກີນມາດຕາມຕາມທີ່ໄດ້ກຳນົດໄວ້.

ຕາຕະລາງ 4-3: ຜົນການວັດແທກຄຸນນະພາບສຽງໃນເຂດພື້ນທີ່ໂຄງການ

Date	Time	LeqA	L5	L10	L50	L90	L95
8/9/2021 12:00-18:00	ກາງເວັນ	42.6	46.2	42.8	35	30.8	30.2
8/9-10/2021 18:00-06:00	ກາງຄືນ	43	45.1	44.1	40.1	37.9	36.4
8/10/2021 06:00-18:00	ກາງເວັນ	51.7	48.8	44.8	34.4	30.8	30.2
8/10-11/2021 18:00-06:00	ກາງຄືນ	48.8	50.4	45.9	41.3	39.4	37.9
8/11/2021 06:00-18:00	ກາງເວັນ	40.1	44.7	41.8	35	32	31
8/11-12/2021 18:00-06:00	ກາງຄືນ	42.9	48.2	45.3	39.7	37.6	36.5
8/12/2021 06:00-12:00	ກາງເວັນ	40.6	43.9	41.8	33.6	30.6	29.8
ຄ່າມາດຕະຖານ ສິ່ງແວດລ້ອມແຫ່ງຊາດ		70					



ຮູບທີ 4-4: ເສັ້ນສະແດງລະດັບສຽງນັ້ນ

4.4 ອົງປະກອບທາງຊີວະພາບ

4.4.1 ນິເວດວິທະຍາເທິງບົກ/ສັດປ່າ

1) ວິທີການ

ສັດປ່າທີ່ຈະສຶກສານັ້ນມີຢູ່ 4 ຈຳພວກຄື : ສັດເລືອຄານ, ສັດເຄິ່ງບົກເຄິ່ງນ້ຳ, ສັດປີກ ແລະ ສັດລ້ຽງລູກດ້ວຍນ້ຳນົມ. ການເກັບກຳຂໍ້ມູນຈະສຸມໃສ່ສັດປ່າໃນເຂດພື້ນທີ່ໂຄງການ. ຫົວຂໍ້ການສຶກສາ ແມ່ນກວດກາຄວາມຫຼາກຫຼາຍ, ຄວາມອຸດົມສົມບູນ, ການແຈກຢາຍ, ການນຳໃຊ້ ແລະ ສະຖານະປັດຈຸບັນຂອງສັດປ່າໃນເຂດໂຄງການ. ການສຶກສາກ່ຽວກັບສັດປ່າແມ່ນຈະຕ້ອງໄດ້ສຶກສາທັງສອງທາງໄປພ້ອມກັນ.

✓ ການລວບລວມຂໍ້ມູນມືສອງ

ເບິ່ງຄືນການສຶກສາທີ່ຜ່ານມາກ່ຽວກັບ ສະຖານະຂອງສັດປ່າໃນຂົງເຂດນັ້ນ. ໃນການກວດຄືນນັ້ນຈະຕ້ອງໄດ້ເບິ່ງຄືນເອກະສານການສຶກສາຂອງນັກຄົ້ນຄວ້າ ຈາກປະເທດລາວ, ຫວຽດນາມ, ໄທ ແລະ ຕ່າງປະເທດອື່ນໆ.

✓ ການສຳຫຼວດປະຊາກອນສັດປ່າ

ການນັບທາງກົງ: ວິທີການນີ້ແມ່ນຂຶ້ນກັບຮ່ອງຮອຍ ທີ່ນັກຄົ້ນຄວ້າເຫັນເວລາສຳຫຼວດພາກສະໜາມ. ເຊິ່ງລວມມີ: ສັດທີ່ສັງເກດເຫັນ, ຮອຍຕີນ, ຮັງ, ໂພງ, ຂົນ, ຄາບ ແລະ ສຽງ.

ການນັບທາງອ້ອມ: ວິທີການນີ້ປະກອບມີ 2 ແບບໃນການສຳຫຼວດຄື ການສຳຫຼວດຈາກປົດລາຍງານທີ່ຜ່ານມາໃນພື້ນທີ່ນັ້ນ ແລະ ເຂດໃກ້ຄຽງ. ແລະ ສອບຖາມປະຊາຊົນທ້ອງຖິ່ນທີ່ອາໄສຢູ່ເຂດນັ້ນເປັນເວລາຍາວນານ. ເມື່ອຮູ້ຊະນິດພັນຂອງສັດແລ້ວ ຈະຕ້ອງຖາມລະອຽດຕື່ມອີກເຊັ່ນ: ສີ, ພຶດຕິກຳ, ທີ່ຢູ່ອາໄສ. ບາງເທື່ອ ຈະຕ້ອງມີຮູບຖ່າຍຂອງສັດມາສະແດງເພື່ອເປັນການຢັ້ງຢືນ. ສິ່ງເຫຼົ່ານີ້ ແມ່ນຫຼີກລ່ຽງບໍ່ໄດ້ ເພື່ອໃຫ້ໄດ້ລັກສະນະຮູບຮ່າງທີ່ຖືກຕ້ອງຂອງສັດທີ່ກ່າວເຖິງ. ການສອບຖາມຄືນເພື່ອຄວາມຊັດເຈນຂອງຂໍ້ມູນ ແມ່ນຈຳເປັນໃນບາງກໍລະນີ.

ນອກຈາກນີ້ແລ້ວຂໍ້ມູນສຳພາດກ່ຽວກັບການວິທີການລ່າ ຫຼື ໃສ່ແຮ້ວທີ່ຜິດກົດໝາຍ, ການລັກລອບຕັດໄມ້, ແລະ ຜົນປະໂຫຍດຂອງສັດດັ່ງກ່າວທີ່ມີຕໍ່ຊຸມຊົນ. ປັດໃຈທີ່ພົວພັນກັບດ້ານນິເວດວິທະຍາ ເຊັ່ນວ່າ: ພືດທີ່ເປັນອາຫານ, ພືດທີ່ໃຊ້ເປັນບ່ອນລີ້ຊ່ອນ, ແຫຼ່ງນ້ຳ ແລະ ເຂດທີ່ມັກພົບສັດດັ່ງກ່າວກໍ່ຈະຖືກສຶກສາເຊັ່ນກັນ.

ຂໍ້ມູນກ່ຽວກັບສັດປ່າທັງໝົດທີ່ໄດ້ຈາກການນັບໂດຍກົງ ແລະ ການສຳພາດແມ່ນຈະໄດ້ປະກອບເຂົ້າກັນເປັນຄືເຄື່ອງມືສຳລັບກວດກາ ຂອງສັດປ່າທີ່ມີຢູ່ປະຈຸບັນໃນເຂດພື້ນທີ່ຂອງໂຄງການ, ເຊິ່ງຖືກຈັດແບ່ງອອກເປັນຢ່ 5 ກຸ່ມຄືດັ່ງທີ່ໄດ້ເວົ້າມາ. ໃນແຕ່ລະກຸ່ມ ຈະປະກອບມີຄວາມອຸດົມສົມບູນ, ສະຖານະພາບ, ຮູບແບບຖິ່ນທີ່ຢູ່ອາໄສຂອງພວກມັນ ລະບຸຢູ່ນຳ. ສຳລັບສັດຈຳພວກນົກ ທັງທີ່ອົບພະຍົບເຂົ້າມາ ແລະ ອາໄສຢູ່ເຂດນັ້ນແມ່ນຈະໄດ້ຖືກເກັບກຳ.

ສະຖານະພາບຂອງສັດຕ່າງໆອາດສາມາດຈັດຢູ່ໃນ 4 ປະເພດຄືດັ່ງລຸ່ມນີ້:

- ▪ ບໍ່ເປັນອັນຕະລາຍ (Indetermine) ສັດຈຳພວກທີ່ ຈຳນວນປະຊາກອນຂອງພວກມັນຍັງມີຢ່າງພຽງພໍ ສຳລັບການຢູ່ລອດ;
- ▪ ສ່ຽງ ຫຼື ມີຄວາມສ່ຽງ (Threatened or Vulnerable) ສັດຈຳພວກທີ່ຈຳນວນປະຊາກອນຂອງພວກມັນມີການຫຼຸດລົງ ເນື່ອງຈາກການລ່າ ແລະ ຖິ່ນທີ່ຢູ່ອາໄສຖືກທຳລາຍ
- ▪ ສ່ຽງຕໍ່ການສູນພັນ (Endangered) ສັດຈຳພວກທີ່ຈຳນວນປະຊາກອນຂອງພວກມັນເກືອບໃກ້ສູນພັນ ແລະ ຈຳເປັນຕ້ອງມີມາດຕະການອັນຮີບດ່ວນເພື່ອປົກປັກຮັກສາພວກມັນເອົາໄວ້
- ▪ ສັດທີ່ຫາຍາກ (Rare) ສັດຈຳພວກທີ່ ຈຳນວນປະຊາກອນຂອງພວກມັນຢູ່ໃນຂັ້ນວິກິດ ແຕ່ບໍ່ຢູ່ໃນຄວາມສ່ຽງຂອງການສູນພັນເທື່ອ, ຫາກແຕ່ວ່າພວກມັນມີຄວາມສ່ຽງທີ່ຈະຢູ່ລອດ.

ຜົນການສຳຫຼວດທີ່ກ່າວມາທັງໝົດຂ້າງເທິງນັ້ນ ຈະຖືກໃຊ້ເຂົ້າໃນການປະເມີນຜົນກະທົບຕໍ່ສັດປ່າອັນເນື່ອງມາຈາກການພັດທະນາໂຄງການ ແລະ ເພື່ອການນຳສະເໜີມາດຕະການຫລຸດຜ່ອນຜົນກະທົບທີ່ເໝາະສຳລັບໂຄງການ.

2) ລາຍລະອຽດ

ອີງຕາມການລົງສຳຫຼວດ ແລະ ການສອບຖາມຂໍ້ມູນກັບຊາວບ້ານ ໃນເຂດພື້ນທີ່ ແມ່ນເຫັນວ່າສັດປ່າທີ່ມັກພົບເຫັນໃນເຂດພື້ນທີ່ ແລະ ເຂດອ້ອມຂ້າງຂອງໂຄງການ ແມ່ນຍັງມີສັດຫຼາຍຈຳພວກ ທີ່ອາໄສຢູ່ຕາມປ່າດົງຕົບໜາຕ່າງໆ, ເຊັ່ນ: ລີງ, ຟານ, ກວາງ, ໝູປ່າ ແລະ ສັດທີ່ຫາຍາກອື່ນໆ ແມ່ນຈະພົບເຫັນຢູ່ຕາມປ່າດົງຕົບໜາທີ່ຫ່າງໄກເຂດພື້ນທີ່ໂຄງການ. ເຖິງຢ່າງໃດກໍ່ຕາມ, ສະພາບສັດປ່າກໍ່ຄື ສະພາບປ່າໄມ້ແມ່ນໄດ້ຫຼຸດໜ້ອຍຖອຍລົງ, ເຖິງຊາວບ້ານຫຼາຍຄົນ ຈະບອກວ່າ ເຄີຍພົບເຫັນສັດປ່າຫຼາຍຊະນິດ, ແຕ່ສ່ວນຫຼາຍສັດໃຫຍ່ ແມ່ນຫາຍາກ ແລະ ພົບເຫັນເປັນສ່ວນໜ້ອຍ , ສັດປ່າ ທີ່ຍັງມີປະຊາຊົນໝູ່ບ້ານເຄີຍພົບເຫັນ ແລະ ເຄີຍລ່າໄດ້ມາເປັນອາຫານ ສ່ວນຫຼາຍແມ່ນ ສັດນ້ອຍ ຫຼື ບາງຊະນິດສັດປ່າທີ່ບໍ່ຫາຍາກ ເຊັ່ນວ່າ : ໝູປ່າ, ຟານ, ກະຮອກ, ກະແຕ, ໄກ້ປ່າ ແລະ ສັດເລືອຄານບາງຊະນິດ.

ຕາຕະລາງ 4-4: ປະເພດສັດປ່າທີ່ມັກພົບເຫັນໃນເຂດພື້ນທີ່ ແລະ ອ້ອມຂ້າງໂຄງການ

ຊື່ພາສາລາວ	ຊື່ພາສາອັງກິດ	ຊື່ວິທະຍາສາດ	ເຂດໂຄງການ	ພື້ນທີ່ໃກ້ຄຽງ	ບັນຊີປະເພດສັດປ່າທີ່ຫວງຫ້າມ[1]	ບັນຊີ IUCN[2]
ສັດລ້ຽງລູກດ້ວຍນ້ຳນົມ						
ເຫງັນຫາງກ່ານ	Large Spotted Civet	*Viverra megaspila*	R2	R1	ຫວງຫ້າມ ບັນຊີ 1	-
ກະເລັນ	Irrawaddy Squirrel	*Callosciurus pygerythrus*	R2	R1	ທົ່ວໄປ ບັນຊີ 3	-
ກະແຕ	Northern Treeshrew	*Tupaia belangeri*	R2	¤ R1	-	LC
ກະຮອກ	Red-cheeked Squirrel	*Dremomys rufigenis*	R2	R1	ທົ່ວໄປ ບັນຊີ 3	LC
ອີ້ນໃຫຍ່	Large Bamboo Rat	*Rhizomys sumatrensis*	R2	R1	ຄຸ້ມຄອງ ບັນຊີ 2	LC
ລີງ	Monkey	*Macaca* spp	-	R2	ຄຸ້ມຄອງ ບັນຊີ 2	–
ຟານ	Red Muntjac	*Muntiacus muntjac*	-	R2	ຄຸ້ມຄອງ ບັນຊີ 2	LC
ລີງລົມ	Asian Slow Loris	*Nycticebus bengalensis*	-	R2	ຫວງຫ້າມ ບັນຊີ 1	VU
ລີ່ນ	Chinese Pangolin	*Manis Pintadactyla*	-	R2	ຫວງຫ້າມ ບັນຊີ 1	EN
ໜູຫວາຍ		Leopodamys edwardsi	R1	R1	–	–
ໝູປ່າ	Wild boar	*Sus scrofa*	R2	R2	ທົ່ວໄປ ບັນຊີ 3	LC
ສັດເລືອຄານ ແລະ ສັດເຄິ່ງບົກເຄິ່ງນ້ຳ						
ງູຂຽວ	All green snake species	*Trimeresurus sp.*	R1	R1	ທົ່ວໄປ ບັນຊີ 3	
ແລນ	Bengal Monitor	*Varanus bengalensis*	R2	R1	ຄຸ້ມຄອງ ບັນຊີ 2	LC
ງູເຫຼືອມ	Reticulated Python	*Python reticulatus*	–	R2	ຫວງຫ້າມ ບັນຊີ 1	LC
ງູສາ	Radiated Ratsnake	*Elaphe radiata*	R1	R1	ທົ່ວໄປ ບັນຊີ 3	
ຄັນຄາກ	Common Asiatic Toad	*Bufo melanostictus*	R1	R1	ທົ່ວໄປ ບັນຊີ 3	
ກົບ -ຂຽດ	Common Lowland Frog	*Rana rugulosa*	R1	R1	ທົ່ວໄປ ບັນຊີ 3	
ຈີໂກະ		*Scincidae sp.*	R1	R1	ທົ່ວໄປ ບັນຊີ 3	
ກະປອມ	Forest Crested Lizard	*Calotes emma sp.*	R1	R1	ທົ່ວໄປ ບັນຊີ 3	
ຫອຍ ທຸກຊະນິດ	All Snail Species		R1	R1	ທົ່ວໄປ ບັນຊີ 3	

ຊື່ພາສາລາວ	ຊື່ພາສາອັງກິດ	ຊື່ວິທະຍາສາດ	ເຂດໂຄງການ	ພື້ນທີ່ໃກ້ຄຽງ	ບັນຊີປະເພດສັດປ່າທີ່ຫວງຫ້າມ[1]	ບັນຊີ IUCN[2]
ສັດປີກ						
ໄກ່ປ່າ	Red Junglefowl	*Gallus gallus*	R2	R1	ທົ່ວໄປ ບັນຊີ 3	LC
ນົກກົດ	Greater Coucal	*Centropus sinensis*	R2	R1	ຫວງຫ້າມ ບັນຊີ 1	LC
ນົກເຂົາ	Pale-capped Pigeon	*Columba Punicea*	R2	R1	ຄຸ້ມຄອງ ບັນຊີ 2	VU
ນົກຍາງ	All Egrets	*Egreetta sp*	R1	R1	ຄຸ້ມຄອງ ບັນຊີ 2	LC
ໄກ່ຂວາ	Siamese Fireback	*Lophura diardi*	R1	R1	ຫວງຫ້າມ ບັນຊີ 1	LC
ນົກກາ	Little Commorant	*Phalacrocorax niger*	R2	R1	ຫວງຫ້າມ ບັນຊີ 1	LC
ນົກອ້ຽງ	Common Myna	*Acridotheres tristis*	R1	R1	ຄຸ້ມຄອງ ບັນຊີ 2	-
ນົກກະປົດ	Scaly-breasted Munia	*Lonchura punctulata*	R1	R1	-	LC
ນົກມູມ	Green imperial pigeon	*Ducula aenea*	R2	R1	ຫວງຫ້າມ ບັນຊີ 1	LC
ນົກເປົ້າ	All green pigeons	*Treron sp*	R1	R1	ຄຸ້ມຄອງ ບັນຊີ 2	LC
ນົກກະຈິບ	Common Tailorbird	*Orthotomus sutorius*	R1	R1	–	-

R = Reports: ໄດ້ຈາກການສຳພາດປະຊາຊົນ: R1: ເຫັນຕະຫຼອດ, R2: ເຫັນເປັນບາງຄັ້ງຄາວ

(1) ມະຕິຕົກລົງຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງເອົາຈັດບັນຊີລາຍຊື່ ສັດນ້ຳ ແລະ ສັດປ່າ ປະເພດຫວງຫ້າມ ຫຼື ບັນຊີ I, ບັນຊີ II ແລະ ບັນຊີ III ລົງວັນທີ 13/08/2008 ບັນຊີປະເພດສັດປ່າທີ່ຫວງຫ້າມ, ກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 0360/MAF, ລົງວັນທີ 8 ທັນວາ 2003

(2) ບັນຊີປະເພດສັດປ່າ ທີ່ຂຶ້ນກັບ IUCN: • CR = ສັດຫວງຫ້າມເດັດຂາດ Critically Endangered, • EN = ສັດຫວງຫ້າມ Endangered, • VU = ສັດປະເພດອ່ອນໄຫວ Vulnerable, • NT = ໃກ້ຈະສູນພັນ Near Threatened, • LC = ຍັງມີຄວາມກັງວົນ Least Concern, • DD = ຂໍ້ມູນບໍ່ພຽງພໍ Data Deficient

4.4.2 ປ່າໄມ້ ແລະ ການປົກຄຸມຂອງພືດພັນ

1) ວິທີການ

- ສັງລວມຂໍ້ມູນມືສອງກ່ຽວກັບຊັບພະຍາກອນປ່າໄມ້ໃນເຂດພື້ນທີ່ການສຶກສາ ແລະ ເຂດໃກ້ຄຽງເຊັ່ນ: ບົດລາຍງານຂອງຂະແໜງການກະສິກຳ ແລະ ປ່າໄມ້, ຂໍ້ມູນເຫຼົ່ານີ້ໄດ້ຖືກນຳໃຊ້ເປັນຂໍ້ມູນພື້ນຖານສຳລັບການສຶກສາໃນອະນາຄົດ ແລະ ວິເຄາະສຳລັບການປະເມີນຜົນກະທົບທີ່ອາດຈະເກີດຂຶ້ນຈາກການດຳເນີນໂຄງການ
- ສຳຫຼວດເຂດພື້ນທີ່ໂຄງການ ແລະ ເຂດອ້ອມຂ້າງ, ສຳລັບເງື່ອນໄຂທາງດ້ານພູມສັນຖານ, ສະພາບປ່າໄມ້, ການນຳໃຊ້ທີ່ດິນປ່າໄມ້, ແຜນທີ່ພາບຖ່າຍດາວທຽມ ແລະ ແຜນທີ່ການນຳໃຊ້ທີ່ດິນປ່າໄມ້

2) ລາຍລະອຽດ

ອີງຕາມຂໍ້ມູນຈາກບົດລາຍງານແຜນພັດທະນາເສດຖະກິດສັງຄົມຂອງເມືອງ ເຫັນວ່າ ເມືອງດາກຈຶງເປັນເມືອງເສດຖະກິດເຕີບໂຕສີຂຽວທີ່ຕິດພັນກັບການພັດທະນາເຕີບໂຕຍືນຍົງ ປັດຈຸບັນຫຼາຍພາກສ່ວນລັດ ແລະ ອົງການຈັດຕັ້ງສາກົນໃຫ້ທຶນສະໜັບສະໜຸນຟື້ນຟູປ່າ ແລະ ແນະນຳໃຫ້ຄວາມຮູ້ປະຊາຊົນການຫັນປ່ຽນອາຊີບຈາກການເຮັດແບບເລື່ອນລອຍມາເປັນອາຊີບທີ່ຖາວອນ ເຊິ່ງເຮັດໃຫ້ເນື້ອທີ່ປ່າປົກຄຸ້ມຂອງປ່າທົ່ວເມືອງປີ 2015 ເນື້ອທີ່ປ່າປົກຄຸ້ມ 157,883 ເຮັກຕາ ກວມເອົາ 57.7% ໃນປີ 2019 ເນື້ອທີ່ປ່າໄມ້ປົກຄຸ້ມເພີ່ມຂຶ້ນ 177,593 ເຮັກຕາ ກວມເອົາ 65 % ຂອງພື້ນທີ່ທັງໝົດ, ເນື້ອທີ່ການຖາງປ່າເຮັດໄຮ່ 410 ເຮັກຕາໃນປີ 2015 ຫຼຸດລົງຍັງເຫຼືອ 232 ເຮັກຕາປີ 2019 ແລະ ເນື້ອທີ່ປ່າໄມ້ຟື້ນຟູດ້ວຍຕົວມັນເອງກວມເອົາປະມານ 15,274 ເຮັກຕາ.

ສະພາບການປົກຄຸ້ມຂອງປ່າໄມ້ໃນເຂດພື້ນທີ່ຈະພັດທະນາໂຄງການສາຍສົ່ງ 500 ກວ ຂອງໂຄງການຜະລິດໄຟຟ້າຈາກພະລັງງານລົມ 600 ເມກາວັດ. ໂດຍອີງໃສ່ແຜນທີ່ພາບຖ່າຍທາງອາກາດ ປີ 2019 ແລະ ການສຳຫຼວດຕົວຈິງພາກສະໜາມໃນຊ່ວງເດືອນກັນຍາ 2020 ແລະ ພະຈິກ 2021 ທີ່ຜ່ານມາ ແມ່ນເຫັນວ່າພື້ນທີ່ ທີ່ມີປ່າໄມ້ປົກຫຸ້ມສ່ວນຫຼາຍແມ່ນເປັນປ່າປະສົມ ທີ່ຂຶ້ນກັບເຂດປ່າປ້ອງກັນແຫ່ງຊາດຍອດນ້ຳເຊກອງ-ເຊກະໝານ ເຊິ່ງມີຄວາມຍາວທັງໝົດປະມານ 5 ກິໂລແມັດ ຈາກເສົາສາຍສົ່ງທີ 36 ຫາ 47 ທີ່ນອນໃນເຂດພື້ນທີ່ດັ່ງກ່າວ. ນອກຈາກນັ້ນແມ່ນນອນໃນເຂດປ່າຊົມໃຊ້ ແລະ ເຂດທຳການຜະລິດຂອງປະຊາຊົນເປັນຕົ້ນແມ່ນດິນສວນກາເຟ.

4.4.3 ພື້ນທີ່ຊຸ່ມນ້ຳ

1) ວິທີການ

ເກັບລວບລວມຂໍ້ມູນມືສອງຈາກແຫຼ່ງຕ່າງໆທີ່ກ່ຽວຂ້ອງໃນທ້ອງຖິ່ນ ເຊັ່ນ: ຂໍ້ມູນພື້ນທີ່ຊຸ່ມນ້ຳ, ດິນທາມ ແລະ ການນຳໃຊ້ພື້ນທີ່ດັ່ງກ່າວ

ສຳຫຼວດພາກສະໜາມ ແລະ ສຳພາດຈາກປະຊາຊົນທ້ອງຖິ່ນກ່ຽວກັບຄວາມຫຼາກຫຼາຍທາງດ້ານຊີວະວິທະຍາໃນເຂດພື້ນທີ່ຊຸ່ມນ້ຳ, ດິນທາມ ແລະ ການນຳໃຊ້.

2) ລາຍລະອຽດ

ເນື່ອງຈາກລັກສະນະພູມສັນຖານຂອງພື້ນທີ່ໂຄງການສ່ວນໃຫຍ່ເປັນເຂດພູຕ່ຳ-ພູສູງ ແລະ ມີຫ້ວຍນ້ຳແຕ່ນ້ອຍຫາໃຫຍ່ຫຼາຍສາຍໄຫຼຕາມຮ່ອມພູຈາກທີ່ສູງຫາທີ່ຕ່ຳ ຈຶ່ງບໍ່ປະກົດມີເຂດບຶງ ຫຼື ດິນທາມໃນເຂດພື້ນທີ່ໂຄງການ.

4.4.4 ປ່າສະຫງວນ-ພື້ນທີ່ປ້ອງກັນ

1) ວິທີການ

ເກັບລວບລວມຂໍ້ມູນມືສອງຈາກແຫຼ່ງຕ່າງໆທີ່ກ່ຽວຂ້ອງໃນທ້ອງຖິ່ນ ເຊັ່ນ: ຂໍ້ມູນປ່າສະຫງວນ, ປ່າປ້ອງກັນ, ແລະ ການນຳໃຊ້ພື້ນທີ່ດັ່ງກ່າວ

ສຳຫຼວດພາກສະໜາມ ແລະ ສຳພາດຈາກປະຊາຊົນທ້ອງຖິ່ນກ່ຽວກັບຄວາມຫຼາກຫຼາຍທາງດ້ານຊີວະວິທະຍາໃນ ເຂດພື້ນປ້ອງກັນ ແລະ ການນຳໃຊ້.

2) ລາຍລະອຽດ

ຈາກຜົນການສຶກສາເກັບກຳຂໍ້ມູນນຳພາກສ່ວນທີ່ກ່ຽວຂ້ອງ ແລະ ການເກັບກຳຂໍ້ມູນພາກສະໜາມ ເຫັນວ່າ ໂຄງການ ສາຍສົ່ງ 500 KV ຂອງໂຄງການພະລັງງານລົມ 600 MW ທີ່ສະເໜີນີ້ ແມ່ນບໍ່ມີພື້ນທີ່ປ່າສະຫງວນໃດໆ ຢູ່ໃກ້ຄຽງ ທີ່ຈະໄດ້ຮັບຜົນກະທົບຈາກການພັດທະນາໂຄງການ. ເຖິງຢ່າງໃດກໍ່ຕາມການພັດທະນາໂຄງການດັ່ງກ່າວນີ້ ອີງຕາມ ການອອກແບບແລວສາຍສົ່ງ ແມ່ນເຫັນວ່າຈະສົ່ງຜົນກະທົບຕໍ່ພື້ນທີ່ ປ່າປ້ອງກັນແຫ່ງຊາດ ຍອດນ້ຳເຊກອງ-ເຊກະ ໝານ (ຕາມຂອບເຂດຊາຍແດນລາວ-ຫວຽດນາມ) ປະມານ 5 ກິໂລແມັດ ຈາກເສົາສາຍສົ່ງທີ 36 ຫາ 47.

ພື້ນທີ່ທີ່ມີປ່າໄມ້ປົກຫຸ້ມສ່ວນຫຼາຍແມ່ນເປັນປ່າປະສົມ ທີ່ຂຶ້ນກັບເຂດປ່າປ້ອງກັນແຫ່ງຊາດຍອດນ້ຳເຊກອງ-ເຊກະ ໝານ ເຊິ່ງມີຈຳນວນເສົາສາຍສົ່ງຜ່ານທັງໝົດ 12 ເສົາ ກວມເອົາເນື້ອທີ່ປະມານ 39.67 ຮຕ.

ຕາຕະລາງ 4-5: ແລວສາຍສົ່ງທີ່ຜ່ານເຂດປ່າປ້ອງກັນແຫ່ງຊາດ

ລ/ດ	3 ປະເພດປ່າໃນ ເຂດໂຄງການ	ຈຳນວນເສົາ	ໄລຍະສາຍສົ່ງ (ກມ)	ເນື້ອທີ່ແລວສາຍສົ່ງ (ຮຕ)	ສະພາບປ່າໄມ້
1	ປ່າປ້ອງກັນແຫ່ງ ຊາດຍອດນ້ຳເຊ ກອງ-ເຊຂະໝານ	12	5.64	39.67	ຈຸດທີ່ຕັ້ງເສົາກ້ັງຫັນລົມ ສ່ວນຫຼາຍເປັນດິນໄຮ່ຂອງ ປະຊາຊົນໄປບຸກເບີກເຮັດ ການຜະລິດກະສິກຳ ແລະ ເປັນເຂດປ່າໄມ້ປະສົມ
2	ບໍ່ນອນຢູ່ໃນ 3 ປະເພດປ່າ	35	15.41	108.13	ເປັນເຂດສວນເຮືອ, ປ່າເຫຼົ້າ , ປ່າໄມ້ປະສົມ ແລະ ເຂດ ເຮັດການຜະລິດກະສິກຳ ບາງບ່ອນ
	ລວມທັງໝົດ	**47**	**21.05**	**147.80**	

ແຫຼ່ງຂໍ້ມູນ: ການເກັບຂໍ້ມູນພາກສະໜາມ ເດືອນພະຈິກ 2021



ຮູບທີ 4–5: ແຜນທີ່ສະແດງ 3 ປະເພດປ່າໃນເຂດໂຄງການ

4.5 ອົງປະກອບທາງເສດຖະກິດ-ສັງຄົມ

4.5.1 ອົງການປົກຄອງ ແລະ ຂໍ້ຈຳກັດ

ແຂວງເຊກອງ ມີເນື້ອທີ່ທັງໝົດ 7,750 ກມ^2 ປະກອບດ້ວຍ 4 ເມືອງຄື: ເມືອງ ລະມາມ, ເມືອງ ກະລຶມ, ເມືອງ ດາກຈຶງ ແລະ ເມືອງ ທ່າແຕ່ງ, ປະກອບມີ 197 ບ້ານ. ເມືອງເຫດສະບານ ຂອງແຂວງ ແມ່ນເມືອງລະມາມ ແລະ ໃນ ນີ້ສອງເມືອງເປັນເມືອງທຸກຍາກຂອງແຂວງຄື: ເມືອງກະລຶມ ແລະ ເມືອງ ດາກຈຶງ.

ເມືອງດາກຈຶງ ເປັນເມືອງໜຶ່ງທີ່ນອນໃນ 4 ຕົວເມືອງຂອງແຂວງເຊກອງ ແລະ ໃນປະຈຸບັນ ເມືອງດາກຈຶງ ປະກອບ ມີ 54 ບ້ານ ແບ່ງອອກເປັນ 9 ເຂດຄື: ເຂດເຫດສະບານ, ເຂດດາກປາຣ, ເຂດອາຢູນ, ເຂດເອກະລາດ, ເຂດດາກ ດຶມ, ເຂດຊຽງຫຼວງ, ເຂດນ້ຳແດ, ເຂດເຊກະໝານ ແລະ ເຂດຕາຕຶ, ມີຈຳນວນປະຊາກອນ 24,924 ຄົນ, ຍິງ 12,126 ຄົນ, ອັດຕາການເພີ່ມຂຶ້ນຂອງປະຊາກອນສະເລ່ຍ 2.4 % ຕໍ່ປີ, ເມືອງດາກຈຶງມີເນື້ອທີ່ທັງໝົດ 273,220 ຮຕ ເທົ່າກັບ 35.64 % ຂອງຈຳນວນເນື້ອທີ່ຂອງແຂວງເຊກອງ ສະເລ່ຍຄວາມໜາແໜ້ນ ຂອງປະຊາກອນເພີ່ມຂຶ້ນ 11 ຄົນຕໍ່ກິໂລຕາແມັດ.

ອົງການປົກຄອງທ້ອງຖິ່ນ ມີພາລະບົດບາດຄຸ້ມຄອງບໍລິຫານລັດ ທາງດ້ານການເມືອງ, ເສດຖະກິດ, ວັດທະນາທຳ-ສັງຄົມ, ການສ້າງ ແລະ ນຳໃຊ້ຊັບພະຍາກອນມະນຸດ, ການນຳໃຊ້ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນໆ; ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນທ້ອງຖິ່ນ ແລະ ວຽກງານ ການຕ່າງປະເທດຕາມການແບ່ງຂັ້ນຄຸ້ມຄອງ.

ພາຍໃນແຂວງມີຫ້ອງວ່າການປົກຄອງແຂວງ, ພະແນກ ແລະ ອົງການລັດທຽບເທົ່າພະແນກຂັ້ນແຂວງ. ຫ້ອງວ່າການປົກຄອງແຂວງ ແມ່ນໂຄງປະກອບກົງຈັກໜຶ່ງ ຂອງອົງການປົກຄອງແຂວງເຊິ່ງມີພາລະບົດບາດເປັນເສນາທິການໃຫ້ແກ່ເຈົ້າແຂວງ ໃນການອຳນວຍຄວບຄຸມ, ຊຸກຍູ້, ຕິດຕາມການບໍລິຫານວຽກງານຂອງແຂວງ, ສ້າງແຜນການ, ໂຄງການດຳເນີນງານ, ຄົ້ນຄວ້າສັງລວມ, ຄຸ້ມຄອງເອກະສານ, ເປັນໃຈກາງປະສານງານວຽກງານໃຫ້ແກ່ການນຳຂັ້ນແຂວງ ແລະ ຄຸ້ມຄອງບໍລິຫານວຽກງານພາຍໃນຂອງຕົນ. ພະແນກ ແລະ ອົງການທຽບເທົ່າພະແນກຂັ້ນແຂວງມີພາລະບົດບາດເປັນເສນາທິການໃຫ້ອົງການປົກຄອງແຂວງ, ກະຊວງ, ອົງການລັດທຽບເທົ່າກະຊວງ ທາງດ້ານວິຊາການ ແລະ ຄຸ້ມຄອງບໍລິຫານລັດຕາມການແບ່ງຂັ້ນຄຸ້ມຄອງ.

ໃນຂັ້ນເມືອງມີອົງການປົກຄອງຂັ້ນເມືອງ ເປັນອົງການບໍລິຫານລັດ ເຊິ່ງມີພາລະບົດບໍລິຫານວຽກງານລັດທາງດ້ານການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການປ້ອງກັນຄວາມສະຫງົບ, ສ້າງ ແລະ ນຳໃຊ້ຊັບພະຍາກອນມະນຸດ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນໆ ໃນທ້ອງຖິ່ນ, ຊີ້ນຳ, ກວດກາ ແລະ ຈັດຕັ້ງປະຕິບັດແຜນພັດທະນາບ້ານໃນຂອບເຂດການຄຸ້ມຄອງຂອງຕົນ. ແຕ່ລະເມືອງ ແມ່ນມີຫ້ອງວ່າການເມືອງ, ຫ້ອງການ, ອົງການລັດທຽບເທົ່າຫ້ອງການເມືອງ. ຫ້ອງວ່າການເມືອງ ມີພາລະບົດບາດເປັນເສນາທິການໃຫ້ເຈົ້າເມືອງໃນການອຳນວຍຄວບຄຸມ, ຊຸກຍູ້, ຕິດຕາມການບໍລິຫານວຽກງານຂອງເມືອງ, ສ້າງແຜນການ, ໂຄງການດຳເນີນງານ, ຄົ້ນຄວ້າສັງລວມ, ຄຸ້ມຄອງເອກະສານ, ເປັນໃຈກາງພົວພັນປະສານງານ, ບໍລິຫານຮັບໃຊ້ການເຄື່ອນໄຫວວຽກງານໃຫ້ແກ່ການນຳຂອງເມືອງ ແລະ ການຄຸ້ມຄອງບໍລິການວຽກງານພາຍໃນຂອງຕົນ.

ອົງການຈັດຕັ້ງຂັ້ນບ້ານມີ: ຫ້ອງການບ້ານ, ໜ່ວຍງານ ປກສ-ປກຊ ບ້ານ, ແມ່ຍິງ, ຊາວໜຸ່ມ, ແນວໂຮມ ໜ່ວຍງານເສດຖະກິດການເງິນໜູ່ບ້ານ, ໜ່ວຍງານໄກ່ເກ່ຍຂອງບ້ານ, ໜ່ວຍງານ ອສບ, ໜ່ວຍງານວັດທະນາທຳສັງຄົມບ້ານ, ໜ່ວຍງານຊ່ວຍເຫຼືອ, ກອງທຶນພັດທະນາໜູ່ບ້ານ. ໃນແຕ່ລະໜູ່ບ້ານອາດມີໜຶ່ງ ຫຼື ຫຼາຍໜ່ວຍງານ, ເຊິ່ງສາມາດສ້າງຕັ້ງໜ່ວຍງານເຫຼົ່ານີ້ຂຶ້ນໄດ້ຕາມສະພາບຄວາມຕ້ອງການ. ເຊິ່ງໂຄງຮ່າງການຈັດຕັ້ງຂອງ ການປົກຄອງພາຍໃນແຂວງ ແມ່ນໄດ້ສະແດງຢູ່ໃນ ຕາຕະລາງລຸ່ມນີ້:

ຕາຕະລາງ 4-6: ໂຄງປະກອບຂອງການປົກຄອງ

ອົງການປົກຄອງທ້ອງຖິ່ນ	ໂຄງຮ່າງການຈັດຕັ້ງ	ບຸກຄະລາກອນ
ອົງການປົກຄອງແຂວງ ເຊກອງ	• ຫ້ອງການວ່າການ ປົກຄອງແຂວງ • ພະແນການ ແລະ ອົງການລັດທຽບເທົ່າພະແນກຂັ້ນແຂວງ	• ເຈົ້າແຂວງ • ຮອງເຈົ້າແຂວງ • ຫົວໜ້າ ຫ້ອງວ່າການປົກຄອງແຂວງ • ຫົວໜ້າ ພະແນກ ຂອງແຂວງ ແລະ • ບຸກຄະລາກອນ ສັງກັດຢູ່ໃນ ອົງການປົກຄອງດັ່ງກ່າວ.
ການປົກຄອງ ລະດັບເມືອງ	• ຫ້ອງວ່າການເມືອງ; ແລະ ຫ້ອງການ ຂອງ	• ເຈົ້າເມືອງ; • ຮອງເຈົ້າເມືອງ

	ເມືອງ ຕາມສາຍ ກະຊວງ ແລະ ອົງ ການຈັດຕັ້ງທີ່ທຽບເທົ່າ ກະຊວງ	• ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງວ່າການ; • ຫົວໜ້າ ແລະ ຮອງຫົວໜ້າຫ້ອງການຕ່າງໆ ຕາມສາຍ ຢູ່ ຂັ້ນເມືອງ; ແລະ • ບຸກຄະລາກອນ ສັງກັດຢູ່ໃນ ອົງການປົກຄອງຂັ້ນເມືອງ ດັ່ງກ່າວ .
ການປົກຄອງ ຂັ້ນບ້ານ	ນາຍບ້ານແຕ່ລະບ້ານແມ່ນ ເປັນຫົວໜ້າໃນການປົກຄອງ ບ້ານ ແລະ ຕົວແທນຂອງ ຊາວບ້ານ. ມີໜ້າທີ່ ຮັບຜິດຊອບໃນການປົກຄອງ ຂອງເມືອງ ຫຼື ເທດສະບານ ແລະ ຕໍ່ຊາວບ້ານທັງໝົດ ໃນ ການຈັດຕັ້ງປະຕິບັດ ພາລະ ບົດບາດ, ສິດອຳນາດ ແລະ ໜ້າທີ່ຂອງຕົນ.	• ນາຍບ້ານ • ຮອງນາຍບ້ານ • ຫົວໜ້າໜ່ວຍ • ກຳມະການບ້ານ –ອົງການຈັດຕັ້ງຊາວໜຸ່ມ –ສະຫະພັນແມ່ຍິງບ້ານ –ແນວໂຮມບ້ານ –ປກຊ-ປກສ ບ້ານ - ພາສີ/ການເງິນບ້ານ

4.5.2 ການນຳໃຊ້ທີ່ດິນ

1) ວິທີການ

- ລວບລວມ ແລະ ກວດຄືນຂໍ້ມູນທີ່ກ່ຽວຂ້ອງ: ຂໍ້ມູນຈາກຫ້ອງການຕ່າງໆ, ແຜນການນຳໃຊ້ທີ່ດິນຂອງ ເມືອງ, ແຂວງ...
- ການສຶກສາພາບຖ່າຍທາງອາກາດຂອງພື້ນທີ່ ແລະ ກະກຽມຮ່າງແຜນທີ່ດິນນຳໃຊ້.
- ການສຳຫຼວດທີ່ດິນພາຍໃນເຂດພື້ນທີ່ໂຄງການ.
- ການກະກຽມແຜນທີ່ດິນນຳໃຊ້.

2) ລາຍລະອຽດ

ເມືອງດາກຈຶງ ແມ່ນຕັ້ງຢູ່ທິດຕາເວັນອອກຂອງແຂວງເຊກອງ ມີເນື້ອທີ່ທັງໝົດ 273,220.59 ຮຕ ກວມເອົາ 34,64% ຂອງເນື້ອທີ່ທັງໝົດຂອງແຂວງ, ສະພາບປ່າໄມ້ຂອງເມືອງດາກຈຶງ ເນື້ອທີ່ການປົກຫຸ້ມຂອງປ່າໄມ້ທົ່ວ ເມືອງມີ 157,833 ຮຕ ກວມເອົາ 56.77 % ຂອງເນື້ອທີ່ທົ່ວເມືອງ ໃນນັ້ນ, ປ່າດົງດິບມີເນື້ອທີ່ 50,212 ຮຕ ກວມ ເອົາ 18.06%, ປ່າປະສົມມີເນື້ອທີ່ 105,427 ຮຕ ກວມເອົາ 37.79%, ປ່າໄມ້ໃບກວ້າງປະສົມໃບເຂັມມີເນື້ອທີ່ 305 ກວມເອົາ 0,32% ແລະ ປ່າຊາວນາມີເນື້ອທີ່ 392 ຮຕ ກວມເອົາ 0,14%. ສຳລັບການນຳໃຊ້ທີ່ດິນ ຂອງທັງ 5 ບ້ານ ເຂດພື້ນທີ່ໂຄງການ ເຫັນວ່າ ບັນດາບ້ານດັ່ງກ່າວແມ່ນມີຂອບເຂດຊາຍແດນບ້ານ, ມີປ່າໄມ້ ແລະ ດິນນຳໃຊ້ຕ່າງໆ ຫຼາຍໜ້ອຍແຕກຕ່າງກັນ. ແຕ່ເຖິງຢ່າງໃດກໍ່ຕາມ, ອີງຕາມສະພາບຄວາມເປັນຈິງ ແລະ ອີງຕາມຂໍ້ມູນຈາກອຳນາດ ການປົກຄອງບ້ານ ແມ່ນສາມາດສັງລວມໄດ້ກ່ຽວກັບການນຳໃຊ້ທີ່ດິນຂອງແຕ່ລະບ້ານຄືດັ່ງຕາຕະລາງຂ້າງລຸ່ມນີ້:

ຕາຕະລາງ 4–7: ການນຳໃຊ້ທີ່ດິນໃນເຂດພື້ນທີ່ໂຄງການ

ລ/ດ	ບ້ານ	ການນຳໃຊ້ທີ່ດິນຂອງແຕ່ລະບ້ານ (ຮຕ)									
		ເນື້ອທີ່ ລວມ	ປ່າ ສະຫງວນ ບ້ານ	ປ່າປ້ອງ ກັນ	ປ່າຜະລິດ/ປ່າ ຊົມໃຊ້	ດິນທຳການ ຜະລິດ	ດິນນາ	ດິນໄຮ່	ສວນ	ດິນປຸກ ສ້າງ	ປ່າ ຊ້າ
1	ດາກບອງ	3159	628	174	681	1511.9	50.7	-	872.6	40.6	6
2	ດາກຕະ ອອກນ້ອຍ	6600	-	6	10	-	12	-	25	5	1
3	ງອນດອນ	2438	-	-	-	-	9.8	15.83	-	-	2
4	ດາກມອນ	3382	-	575	904	1662	7	-	1655.5	3.5	4
5	ດາກໂດມ	8788	-	3329	-	-	122	-	1390	10	3
ລວມ		**24367**	**628**	**4084**	**1,595**	**3173.9**	**201.5**	**15.83**	**3943.1**	**59.1**	**16**

ແຫຼ່ງຂໍ້ມູນ: ຈາກການສຳພາດອຳນາດການປົກຄອງບ້ານ ເດືອນກັນຍາ ປີ 2020.

4.5.2.1 ການນຳໃຊ້ທີ່ດິນໃນເຂດແລວສາຍສົ່ງ

ຕາມການສຶກສາຄວາມເປັນໄປໄດ້ຂອງ ບໍລິສັດ ຜູ້ພັດທະນາໂຄງການ ໂດຍອີງຕາມສະພາບຄວາມເໝາະສົມທາງ ດ້ານພື້ນທີ່ ແລະ ປັດໄຈທາງດ້ານຕ່າງໆທີ່ເຫັນວ່າ ມີຄວາມເໝາະສົມຕໍ່ກັບໂຄງການສ້າງສາຍສົ່ງໄຟຟ້າທີ່ສະເໜີນີ້, ຕາມຂໍ້ມູນທີ່ໄດ້ຈາກການວິເຄາະໃນໂຄງການ ແມ່ນຈະມີການສ້າງສະຖານີໃໝ່ຢູ່ເຂດບ້ານດາກບອງ ໃນເນື້ອທີ່ 225 ມ^2 ແລະ ປະກອບມີເສົາສາຍສົ່ງທັງໝົດ 47 ເສົາ, ມີ 12 ເສົາມູມ (15 x 15) ມ^2 ແລະ 35 ເສົານ້ອຍ (12 x 12) ມ^2, ສູງປະມານ 60 ແມັດ, ທີ່ເລີ່ມແຕ່ຈຸດທີ່ຕັ້ງຂອງສະຖານີ ເຂດບ້ານດາກບອງ ສະຖານີຍ່ອຍຂອງໂຄງການ ຫາ ສະຖານີ 500 kV ເມືອງແທງມີ (Thanh My) ປະເທດ ສສ ຫວຽດນາມ ໂດຍມີຄວາມຍາວຂອງແລວສາຍສົ່ງທັງ ໝົດປະມານ 66 ກມ, ເຊິ່ງໃນການສຶກສານີ້ແມ່ນຈະກວມເອົາສະເພາະຊ່ວງທີ່ຢູ່ຝັ່ງຊາຍແດນຂອງ ສປປ ລາວ ເຊິ່ງ ມີຄວາມຍາວທັງໝົດປະມານ 21 ກິໂລແມັດ. ແຕ່ລະເສົາແມ່ນຕັ້ງຢູ່ຫ່າງກັນປະມານ 200 - 300 ແມັດ (ສ່ວນ ໄລຍະຫ່າງຂອງແຕ່ລະເສົາແມ່ນຈະແຕກຕ່າງກັນເພາະຂຶ້ນກັບສະພາບພື້ນທີ່ ຫຼື ພູມສັນຖານຂອງແຕ່ລະເຂດບ້ານໃນ ພື້ນທີ່ໂຄງການ), ອີງຕາມຂໍ້ມູນທີ່ໄດ້ຈາກການລົງເກັບກຳຜົນກະທົບ ດ້ານສິ່ງແວດລ້ອມໃນໂຄງການຕາມສະພາບ ຂອງແຕ່ລະພື້ນທີ່ ແລະ ຕາມແລວສາຍສົ່ງທີ່ໄດ້ກຳນົດໄວ້ນັ້ນ ແມ່ນຈະມີລາຍລະອຽດດ້ານການນຳໃຊ້ທີ່ດິນໃນແຕ່ ລະຈຸດຕັ້ງເສົາດັ່ງລຸ່ມນີ້:

ຕາຕະລາງ 4-8: ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ເຂດເສົາສາຍສົ່ງໄຟຟ້າ

ລ/ດ	ປະເພດການນຳໃຊ້ທີ່ດິນ		ຈຳນວນເສົາໄຟ	ເນື້ອທີ່ຕີນເສົາ	ເນື້ອທີ່ລວມ(ມ2)
ບ້ານ ດາກບອງ					
1	ເສົາມູມ	ທົ່ງຫຍ້າ	1	225	225
2		ນາເຮື້ອ	1	225	225
3		ສວນກາເຟ	1	225	225
4		ສວນກາເຟເຮື້ອ	1	225	225
1	ເສົາຊື່	ຄັງລ້ຽງສັດ	1	144	144
2		ທົ່ງຫຍ້າ	1	144	144
3		ສວນກາເຟ	1	144	144

ລ/ດ	ປະເພດການນຳໃຊ້ທີ່ດິນ		ຈຳນວນເສົາໄຟ	ເນື້ອທີ່ຕີນເສົາ	ເນື້ອທີ່ລວມ(ມ2)
4		ສວນກາເຟເຮື້ອ	1	144	144
5		ນາເຮື້ອ	1	144	144
6		ສວນເຮື້ອ	3	144	432
7		ສວນມັນຕົ້ນ	1	144	144
8		ປ່າໄມ້ປະສົມ	1	144	144
9		ປ່າເຫຼົ່າ	1	144	144
ລວມ			**15**		**2484**
ບ້ານ ງອນດອນ					
1	ເສົາມຸມ	ສວນກາເຟເຮື້ອ	1	225	225
2		ດິນປຸກສ້າງ	1	225	225
3		ສວນເຮື້ອ	1	225	225
1	ເສົາຊື່	ສວນກາເຟ	2	144	288
2		ສວນເຮື້ອ	3	144	432
3		ດິນປຸກສ້າງ	1	144	144
4		ປ່າໄມ້ປະສົມ	1	144	144
ລວມ			**10**		**1,683**
ບ້ານ ດາກມອນ					
1	ເສົາມຸມ	ດິນປຸກສ້າງ	1	225	225
2		ປ່າໄມ້ປະສົມ	1	225	225
1	ເສົາຊື່	ສວນກາເຟ	1	144	144
2		ສວນມັນຕົ້ນ	1	144	144
3		ສວນເຮື້ອ	1	144	144
4		ປ່າໄມ້ປະສົມ	1	144	144
5		ປ່າເຫຼົ່າ	1	144	144
ລວມ			**7**		**1,170**
ບ້ານ ຕະອອກນ້ອຍ					
1	ເສົາມຸມ	ສວນກາເຟເຮື້ອ	1	225	225
1	ເສົາຊື່	ປ່າໄມ້ປະສົມ	5	144	720
ລວມ			**6**		**945**
ບ້ານ ດາກໂດມ					
1	ເສົາມຸມ	ປ່າປະສົມ	2	225	450

ລ/ດ	ປະເພດການນຳໃຊ້ທີ່ດິນ		ຈຳນວນເສົາໄຟ	ເນື້ອທີ່ຕີນເສົາ	ເນື້ອທີ່ລວມ(ມ2)
1	ເສົາຊື່	ປ່າປະສົມ	8	144	1152
ລວມ			**10**		**1,602**
ລວມທັງໝົດ		**ເສົາມຸມ**	**12**		**2,700**
		ເສົາຊື່	**35**		**5,184**
		ລວມ	**47**		**7,884**

ແຫຼ່ງຂໍ້ມູນ: ການເກັບຂໍ້ມູນພາກສະໜາມ ເດືອນພະຈິກ 2021

ຕາຕະລາງ 4-9: ເນື້ອທີ່ປ່າໄມ້ ແລະ ດິນນຳໃຊ້ຕາມຂອບເຂດແລວສາຍສົ່ງ 70 ແມັດ

ລ/ດ	ປະເພດດິນ (m^2)	ບ້ານທີ່ນອນໃນເຂດແລວສາຍສົ່ງ 500 kv					ລວມ
		ດາກບອງ	ງອນດອນ	ດາກມອນ	ດາກຕະອອກນ້ອຍ	ດາກໂດມ	
1	ສວນກາເຟ	90101.44	72285.031	79909.537	-	-	242296.01
2	ສວນກາເຟເຮື້ອ	41353.44	20226.377	15643.301	15705.07	-	92928.19
3	ດິນປຸກສ້າງ	4521.30	20292.38	3022.1502	-	-	27835.83
4	ສວນເຮື້ອ	145648.33	119245.55	57031.894	-	-	321925.78
5	ສວນມັນຕົ້ນ	14418.22	9442.154	7081.09	-	-	30941.47
6	ດິນນາ	29876.93	-	22246.751	-	-	52123.68
7	ດິນນາເຮື້ອ	40111.61	-	-	-	-	40111.61
8	ດິນໄຮ່	-	13927.355	-	-	-	13927.35
9	ດິນໄຮ່ເຮື້ອ	-	1819.833	-	-	-	1819.83
10	ເສັ້ນທາງເດີມ	1005.30	-	4731.85	-	-	5737.15
11	ທົ່ງຫຍ້າ	42687.45	-	-	-	-	42687.45
12	ຄັງລ້ຽງສັດ	5636.4036	12420.029	-	-	-	18056.43
13	ສວນກ້ວຍ	-	-	8438.9207	-	-	8438.92
14	ປ່າຊ້າ	2223.62	-	-	-	-	2223.62
15	ປ່າເຫຼົ່າ	18042.75	8358.5917	7441.45	-	-	33842.78
16	ປ່າໄມ້ປະສົມ	19818.29	14313.85	27622.92	178705.27	302662.14	543122.47
ລວມ (m^2)		**455445.08**	**292331.16**	**233169.86**	**194410.34**	**302662.14**	**1478018.58**
ລວມ (ha)		**45.5445**	**29.2331**	**23.3170**	**19.4410**	**30.2662**	**147.8019**
ໝາຍເຫດ: ເຂດສະຫງວນແລວສາຍສົ່ງ 70 ແມັດ, ຄວາມຍາວ 21.05 ກິໂລແມັດ, ລວມເນື້ອທີ່ທັງໝົດ 147.80 ເຮັກຕາ, ໃນນັ້ນຜົນກະທົບຖາວອນ ເຂດຕີນເສົາ 7,884 ຕາແມັດ							

ແຫຼ່ງຂໍ້ມູນ: ການເກັບຂໍ້ມູນພາກສະໜາມ ເດືອນພະຈິກ 2021

4.5.3 ຂໍ້ມູນທາງສັງຄົມ

1) ວິທີການ

ຂໍ້ມູນກ່ຽວກັບ ສະພາບເສດຖະກິດ-ສັງຄົມ ຢູ່ໃນພື້ນທີ່ຂອງໂຄງການ ແມ່ນໄດ້ມາຈາກ ຂໍ້ມູນຂັ້ນສອງ ແລະ ແຫຼ່ງຂໍ້ມູນເບື້ອງຕົ້ນ. ຂໍ້ມູນເບື້ອງຕົ້ນ ແມ່ນໄດ້ເກັບກຳ ຈາກການສຳຫຼວດພາກສະໜາມ, ການສັງເກດການຕົວຈິງຢູ່ພາກສະໜາມ, ການສຳພາດຜູ້ທີ່ໃຫ້ຂໍ້ມູນທີ່ກ່ຽວຂ້ອງ ແລະ ການສຳພາດຂອງຄົວເຮືອນ. ເພື່ອເຮັດໃຫ້ການວິເຄາະຜົນກະທົບດ້ານສິ່ງແວດລ້ອມເສດຖະກິດ-ສັງຄົມ ມີຄວາມຖືກຕ້ອງ ແລະ ຊັດເຈນທີ່ສຸດ, ຂໍ້ມູນພື້ນຖານດ້ານເສດຖະກິດ-ສັງຄົມຕ່າງທີ່ຈະຕ້ອງໄດ້ນຳໃຊ້ເຂົ້າໃນການວິເຄາະຜົນກະທົບຈຶ່ງໄດ້ຖືກເກັບກຳ ແລະ ສຳຫຼວດ ເຊິ່ງ ສັງລວມໄວ້ໃນຕາຕະລາງດ້ານລຸ່ມນີ້:

ຕາຕະລາງ 4–10: ວິທີການເກັບກຳຂໍ້ມູນທາງສັງຄົມ

ວິທີການການເກັບຂໍ້ມູນ	ຫົວໜ່ວຍນຳໃຊ້ໃນການເກັບຂໍ້ມູນ	ປະເພດການຄົ້ນຄວ້າ
ສຳຫຼວດເພື່ອເກັບຂໍ້ມູນພື້ນຖານດ້ານເສດຖະກິດ-ສັງຄົມ	ລະດັບຄົວເຮືອນ	ເກັບຂໍ້ມູນດ້ານປະລິມານ ແລະ ຄຸນນະພາບ ໂດຍນຳໃຊ້ແບບສອບຖາມ
ສຳຫຼວດ ຊັບສິນ/ພື້ນທີ່ຂອງປະຊາຊົນທີ່ອາດຈະຖືກນຳໃຊ້ໃນການພັດທະນາໂຄງການ	ດິນ ແລະ ຊັບສິນຕ່າງໆ ທີ່ເປັນຂອງຄົວເຮືອນ, ຊັບພະຍາກອນຕ່າງໆທີ່ຄົວເຮືອນນຳໃຊ້ໃນເຂດພື້ນທີ່ທີ່ຈະໃຊ້ເປັນເຂດພັດທະນາໂຄງການ	ເຮັດບັນຊີເຄື່ອງໃຊ້ຊັບສິນຕ່າງໆດ້ານສັງຄົມ ແລະ ເສດຖະກິດຂອງເຈົ້າຂອງຊັບສິນ ຫຼື ຜູ້ນຳໃຊ້ຊັບພະຍາກອນຕ່າງໆທີ່ນອນໃນເຂດພື້ນທີ່ທີ່ຈະໃຊ້ເປັນເຂດພັດທະນາໂຄງການ.
ສົນທະນາເປັນກຸ່ມ	ເກັບຂໍ້ມູນສະເພາະທີ່ກ່ຽວກັບກຸ່ມຄົນຕ່າງໆ (ຍິງ, ຊາຍ, ໄວໜຸ່ມ, ຜູ້ສູງອາຍຸ, ກຸ່ມອາຊີບຕ່າງໆ, ຊົນເຜົ່າຕ່າງໆ, ອື່ນໆ).	ເກັບຂໍ້ມູນດ້ານປະລິມານກ່ຽວກັບຫົວຂໍ້ຕ່າງໆ.
ສຳພາດບຸກຄົນທີ່ສຳຄັນ	ເກັບຂໍ້ມູນສະເພາະຂອງບຸກຄົນຕ່າງໆ	ເກັບຂໍ້ມູນດ້ານປະລິມານກ່ຽວກັບຫົວຂໍ້ຕ່າງໆ.
ທົບທວນເອກະສານທີ່ກ່ຽວຂ້ອງຕ່າງໆ ແລະ ບົດວິເຄາະຕ່າງທີ່ຜ່ານມາທີ່ກ່ຽວຂ້ອງເພື່ອເປັນຂໍ້ມູນພື້ນຖານໃຫ້ການວິເຄາະ	ຂໍ້ມູນມະຫາພາກ ແລະ ຈຸລະພາກ ໃນແຕ່ລະໄລຍະ, ແຕ່ລະລະດູການ, ແລະ ແນວໂນ້ມການປ່ຽນແປງດ້ານຕ່າງໆໃນແຕ່ລະໄລຍະເພື່ອວິເຄາະການປ່ຽນແປງໃນອະນາຄົດ	ການອ້າງອີງໃສ່ການອະທິບາຍດ້ານປະລິມານ ແລະ ຄຸນນະພາບຂອງຂໍ້ມູນ.

ຕົວຢ່າງລາຍລະອຽດຂໍ້ມູນທີ່ຈະຕ້ອງເກັບ ເພື່ອນຳໃຊ້ໃນການເຮັດເປັນຂໍ້ມູນພື້ນຖານໃຫ້ແກ່ການວິເຄາະ ສະຫຼຸບໄວ້ໃນຕາຕະລາງດ້ານລຸ່ມນີ້:

ຕາຕະລາງ 4-11: ປະເພດຂໍ້ມູນທາງດ້ານ ເສດຖະກິດ-ສັງຄົມ, ສຸຂະພາບ ແລະ ວັດທະນະທຳທີ່ໄດ້ເກັບກຳ

ກຸ່ມຂໍ້ມູນ	ຂໍ້ມູນພື້ນຖານດ້ານສັງຄົມ, ສຸຂະພາບ, ວັດທະນະທຳ ແລະ ເສດຖະກິດ

ຂໍ້ມູນດ້ານສັງຄົມ ລວມທັງຕົວຊີ້ວັດທີ່ສຳຄັນດ້ານ ປະຊາກອນຂອງບ້ານ ທີ່ອາດຈະໄດ້ຮັບຜົນ ກະທົບ, ສົມທຽບກັບ ຕົວຊີ້ວັດຂອງເມືອງ ແລະ ແຂວງ	- ຈຳນວນປະຊາກອນ ແລະ ຄອບຄົວທັງໝົດ ທີ່ມີຢູ່ໃນ 5 ບ້ານ ແລະ ຈຳນວນ ຄອບຄົວທີ່ຈະຖືກຜົນກະທົບຈາກໂຄງການ;
	- ຈຳນວນປະຊາກອນທັງໝົດທີ່ອາໄສຢູ່ໃນບ້ານ ແລະ ເມືອງ;
	- ຄວາມໜາແໜ້ນຂອງປະຊາກອນ;
	- ອັດຕາການເອື່ອຍອີງ (ອັດຕາຂອງເດັກ ແລະ ຈຳນວນຜູ້ເຖົ້າ ທີ່ບໍ່ໄດ້ເຮັກວຽກ ຕໍ່ ຈຳນວນປະຊາກອນຜູ້ໃຫຍ່ ທີ່ສາມາດສ້າງລາຍຮັບໄດ້) ຕາມແຕ່ລະຊົນເຜົ່າ;
	- ລັກສະນະຂອງຄອບຄົວ (ເຊັ່ນ: ຄົວເຮືອນທີ່ມີຄອບຄົວດຽວ ກັບຄົວເຮືອນທີ່ມີຫຼາຍ ຄອບຄົວອາໄສຢູ່ນຳກັນ, ຫຼື ທັງສອງ; ພໍ່ແມ່ທີ່ຢ່າຮ້າງ ກັບຄອບຄົວທີ່ແຕ່ງງານ “ ຄອບຄົວທີ່ມີພໍ່ແມ່ ແລະ ລູກ”) ຕາມແຕ່ລະຊົນເຜົ່າ;
	- ບັນຫາທາງດ້ານປະຊາກອນ ເຊັ່ນວ່າ ມີອັດຕາການເຄື່ອນຍ້າຍເຂົ້າມາຢູ່ຫຼາຍ ຫຼື ຍ້າຍ ອອກຫຼາຍ;
	- ອົງການຈັດຕັ້ງທາງການເມືອງ ແລະ ສັງຄົມ;
	- ການສຶກສາ:
	  - ລະບົບການສຶກສາແບບປົກກະຕິ ແລະ ທາງເລືອກຕ່າງໆ ຫຼື ລະບົບການສຶກ ສາສົມບູນ (ເຊັ່ນ ການສຶກສາທາງດ້ານສາສະໜາ);
	  - ລະດັບຈົບການສຶກສາສະເລ່ຍຂອງຜູ້ໃຫຍ່ ແລະ ລະດັບການຮູ້ໜັງສືຂອງຜູ້ ໃຫຍ່ ຂອງປະຊາກອນທັງໝົດ;
	  - ການເຂົ້າເຖິງການບໍລິການດ້ານການສຶກສາ ແລະ ຂໍ້ຈຳກັດດ້ານການສຶກສາ ຕ່າງໆ.
	- ສະພາບຂອງເຮືອນ;
	- ບັນຫາບົດບາດຍິງ-ຊາຍ;
	- ກຸ່ມຄົນທີ່ມີຄວາມສ່ຽງ;
	- ຄວາມກັງວົນ ແລະ ຄວາມຄິດເຫັນຂອງຊຸມຊົນທ້ອງຖິ່ນ, ໂດຍສະເພາະແມ່ນ ປະຊາຊົນທີ່ໄດ້ຮັບຜົນກະທົບ.

ຂໍ້ມູນດ້ານສຸຂະພາບ ຂອງຊຸມຊົນໃນເຂດ ພື້ນທີ່ສຳຫຼວດ. ຕົວຊີ້ ວັດດ້ານສຸຂະພາບ ຄວນຖືກສົມທຽບກັບ ຄ່າຕ່າງໆຂອງເມືອງ ແລະ ສູນກາງ	- ອັດຕາການເກີດ ແລະ ການຕາຍ;
	- ການເກີດຂຶ້ນຂອງພະຍາດ:
	  ✓ ພະຍາດທີ່ກ່ຽວຂ້ອງກັບພາຫະນຳເຊື້ອ
	  ✓ ການຕິດເຊື້ອທາງເດີນຫາຍໃຈຮຸນແຮງ
	  ✓ ພະຍາດຕິດຕໍ່ທາງເພດສຳພັນ
	  ✓ ອາຫານ ແລະ ໂພຊະນາການ: ການເຕີບໂຕຂອງເດັກຕ່ຳ, ເດັກອ່ອນແອ, ພະຍາດເລືອດຈາງ, ພະຍາດທາງດ້ານຈຸລະພາກສານອາຫານອື່ນໆ;
	- ອຸບັດເຫດ ແລະ ການບາດເຈັບ: ອຸບັດເຫດ ແລະ ການບາດເຈັບທີ່ກ່ຽວຂ້ອງກັບການ ສັນຈອນບົນທ້ອງຖະໜົນ, ອຸບັດເຫດຈາກລະເບີດທີ່ບໍ່ທັນແຕກ, ການຣົ່ວໄຫຼ ແລະ ການລະບາຍຕ່າງໆ, ຈາກການກໍ່ສ້າງ ແລະ ການຈົມນ້ຳ;

ກຸ່ມຂໍ້ມູນ	ຂໍ້ມູນພື້ນຖານດ້ານສັງຄົມ, ສຸຂະພາບ, ວັດທະນະທຳ ແລະ ເສດຖະກິດ
	- ສຸຂະພາບທາງດ້ານຈິດໃຈ - ພຶດຕິກຳການຊອກຫາວິທີປິ່ນປົວພະຍາດ - ແຜນງານການຮັກສາສຸຂະພາບໃນເຂດພື້ນທີ່ - ການບໍລິການດ້ານການຮັກສາສຸຂະພາບທີ່ມີຢູ່ ລວມທັງການນຳສົ່ງຄົນເຈັບ, ລະບົບ ແລະ ການເຂົ້າເຖິງຢາປົວພະຍາດ; - ການເຂົ້າເຖິງລະບົບນ້ຳສະອາດ, ສຸຂາພິບານ ແລະ ການຄຸ້ມຄອງສິ່ງເສດເຫຼືອ; - ສະພາບຂອງບັນຫາລະເບີດທີ່ບໍ່ທັນແຕກ (UXOs)
ສະພາບເສດຖະກິດ ຂອງທ້ອງຖິ່ນ, ເມືອງ ແລະ ແຂວງ	- ຂະແໜງການຕ່າງໆທີ່ສ້າງວຽກເຮັດງານທຳ ແລະ ລະດັບການຫວ່າງງານ; - ລະບົບການຜະລິດແບບທ້ອງຖິ່ນ ລວມທັງບົດບາດຍິງ-ຊາຍ; - ການນຳໃຊ້ປ່າໄມ້ ແລະ ຊັບພະຍາກອນທຳມະຊາດອື່ນໆ; - ລາຍຮັບຂອງຄົວເຮືອນ; - ຄ່າຄອງຊີບ; - ການຄອບຄອງທີ່ດິນ; - ທຸລະກິດຂອງທ້ອງຖິ່ນ.
ການນຳໃຊ້ທີ່ດິນໃນ ປະຈຸບັນ ແລະ ແຜນ ໃນອະນາຄົດ ໂດຍອີງ ໃສ່ແຜນພັດທະນາ ແຫ່ງຊາດ, ແຂວງ ແລະ ເມືອງ, ແລະ ອີງ ໃສ່ກົດໝາຍ, ດຳລັດ ແລະ ນະໂຍບາຍ ຕ່າງໆ ທີ່ບັງຄັບໃຊ້	- ການຕັ້ງບ້ານເຮືອນທີ່ມີຢູ່, ເຂດຕົວເມືອງ ແລະ ເຂດທີ່ຢູ່ອາໄສ, ໂຄງການພັດທະນາ ເຂດທີ່ຢູ່ອາໄສ; - ເຂດອຸດສາຫະກຳ ແລະ ແຜນການພັດທະນາໃນອະນາຄົດ; - ເຂດກະສິກຳ, ການຜະລິດກະສິກຳ, ຊົນລະປະທານ ແລະ ການລະບາຍນ້ຳ; - ເຂດປ່າໄມ້; - ເຂດຕ່າງໆ ທີ່ມີຄຸນຄ່າທາງດ້ານການພັກຜ່ອນຢ່ອນອາລົມ, ການສຶກສາ, ປະຫວັດສາດ ຫຼື ຄຸນຄ່າທາງດ້ານທິວທັດ; - ໂຄງລ່າງພື້ນຖານສາທາລະນະ ແລະ ການເຂົ້າເຖິງການບໍລິການສາທາລະນະຕ່າງໆ; - ເສັ້ນທາງ, ທ່າເຮືອ ແລະ ສະໜາມບິນ; - ແລວສາຍສົ່ງໄຟຟ້າ ແລະ ທໍ່ສົ່ງ; - ວຽກງານກ່ຽວກັບນ້ຳ ແລະ ລະບົບການແຈກຈ່າຍນ້ຳປະປາ; - ທໍ່ລະບາຍນ້ຳເປື້ອນ; - ໂຮງໝໍ; - ໂຮງຮຽນ ແລະ ໂຮງຮຽນອະນຸບານ; - ວັດ; - ປ່າຊ້າ; - ສະໜາມຖົ້ມຂີ້ເຫຍື້ອ;
ອົງປະກອບຕ່າງໆດ້ານ ວັດທະນະທຳ	- ພື້ນທີ່ທາງດ້ານບູຮານຄະດີ; - ເຂດທີ່ອາດຈະມີບູຮານຄະດີ; - ເຂດທີ່ມີຄວາມສຳຄັນທາງດ້ານວັດທະນະທຳ, ປະເພນີ ແລະ / ຫຼື ການທ່ອງທ່ຽວ; - ສ່ວນອື່ນໆທີ່ມີຄວາມສຳຄັນທາງດ້ານມໍລະດົກ.

ກຸ່ມຂໍ້ມູນ	ຂໍ້ມູນພື້ນຖານດ້ານສັງຄົມ, ສຸຂະພາບ, ວັດທະນະທຳ ແລະ ເສດຖະກິດ
ອົງປະກອບດ້ານຮູບພາບ (ລວມທັງອົງປະກອບຕ່າງໆຈາກກຸ່ມຂໍ້ມູນອື່ນໆ)	- ລັກສະນະຂອງຕົວເມືອງ ແລະ ທົ່ວທັດ; - ສະຖານທີ່ສຳຄັນທາງດ້ານສະຖາປັດຍະກຳ.

2) ລາຍລະອຽດ

4.5.3.1 ຊຸມຊົນ ແລະ ປະຊາກອນ

ເມືອງດາກຈຶງ ມີຈຳນວນປະຊາກອນທັງໝົດ 24,924 ຄົນ, ຍິງ 12,126 ຄົນ ອັດຕາການເພີ່ມຂຶ້ນຂອງປະຊາກອນ ສະເລ່ຍ 2.4 % ຕໍ່ປີ, ອັດຕາຄວາມໜາແໜ້ນ ສະເລ່ຍຂອງຈຳນວນປະຊາກອນ 11 ຄົນຕໍ່ກິໂລຕາແມັດ, ມີຈຳນວນ ຄອບຄົວທັງໝົດ 4,751 ຄອບຄົວ, ມີຈຳນວນຫຼັງຄາເຮືອນທັງໝົດ 3,728 ຫຼັງຄາເຮືອນ ແລະ ສຳລັບການຕັ້ງຊຸມ ຊົນ ໃນບັນດາບ້ານຕ່າງໆໃນເຂດພື້ນທີ່ໂຄງການ ແມ່ນມີລັກສະນະຄ້າຍຄືກັນ ກໍ່ຄືການຕັ້ງຖິ່ນຖານຢູ່ກັນເປັນກຸ່ມ, ຕາມແຄມທາງຫຼວງ, ລັກສະນະຂອງບ້ານເຮືອນແມ່ນ ມີຮູບແບບຕາມຍຸກສະໄໝ ແລະ ແບບດັ້ງເດີມ, ສ່ວນຈຳ ນວນປະຊາກອນໃນແຕ່ລະບ້ານແມ່ນມີລາຍລະອຽດດັ່ງນີ້:

ຕາຕະລາງ 4-12: ຈຳນວນປະຊາກອນໃນແຕ່ລະບ້ານເຂດພື້ນທີ່ໂຄງການ

ລ/ດ	ເມືອງ	ບ້ານ	ຈຳນວນຄອບຄົວ	ຈຳນວນຫຼັງຄາເຮືອນ	ຈຳນວນປະຊາກອນ	
					ລວມ	ຍິງ
1	ດາກຈຶງ	ດາກບອງ	244	233	1222	591
2		ດາກຕະອອກນ້ອຍ	44	38	221	107
3		ງອນດອນ	99	90	512	277
4		ດາກມອນ	78	65	391	179
5		ດາກໂດມ	56	42	280	142
ລວມ			521	468	2626	1296

ແຫຼ່ງຂໍ້ມູນ: ຈາກການສຳພາດອຳນາດການປົກຄອງບ້ານ ເດືອນກັນຍາ ປີ 2020.

ຮູບທີ 4-6: ການຕັ້ງຖິ່ນຖານໃນເຂດພື້ນທີ່ໂຄງການ

4.5.3.2 ຊົນເຜົ່າ ແລະ ສາສະໜາ

ອີງຕາມຂໍ້ມູນຈາກບົດລາຍງານແຜນພັດທະນາເສດຖະກິດ-ສັງຄົມ ຂອງເມືອງດາກຈຶງ ເຊິ່ງໃນທົ່ວເມືອງປະກອບມີ 4 ຊົນເຜົ່າ ກໍຄື: ຊົນເຜົ່າຕຣຽງ ເຊິ່ງກວມເອົາ 54.05 %, ຊົນເຜົ່າກະຕູ ກວມເອົາ 22.28 %, ຊົນເຜົ່າແຢະ ກວມ ເອົາ 21.77 % ແລະ ເຜົ່າລາວ ກວມເອົາ 1.42 % ຂອງປະຊາກອນທັງໝົດ, ສ່ວນການນັບຖືສາສະໜາ ແລະ ຮີດຄອງປະເພນີ ປະຊາຊົນສ່ວນຫຼາຍແມ່ນນັບຖືຜີ ແລະ ຮອງລົງມາແມ່ນນັບຖືສາສະໜາພຸດ ເຊັ່ນດຽວກັນກັບ ບັນດາບ້ານທັງ 5 ບ້ານເຂດພື້ນທີ່ໂຄງການ ເຊິ່ງຊົນເຜົ່າຕຣຽງ ກວມເອົາ 73.7%, ຊົນເຜົ່າແຢະ ກວມເອົາ 16.12 %, ເຜົ່າລາວລຸ່ມ ກວມເອົາ 6.53 %, ຊົນເຜົ່າກະຕູ ກວມເອົາ 3.65 %, ແລະ ມີລາຍລະອຽດດັ່ງລຸ່ມນີ້:

ຕາຕະລາງ 4-13: ກຸ່ມຊົນເຜົ່າໃນບັນດາບ້ານເຂດໂຄງການ

ລ/ດ	ເມືອງ	ບ້ານ	ຈຳນວນ ຄອບຄົວ	ກຸ່ມຊົນເຜົ່າ							
				ຕຣຽງ		ແຢະ		ລາວລຸ່ມ		ກະຕູ	
				ຄອບຄົວ	%	ຄອບຄົວ	%	ຄອບຄົວ	%	ຄອບຄົວ	%
1	ດາກຈຶງ	ດາກບອງ	244	113	46.31	84	34.43	28	11.48	19	7.79
2		ດາກຕະອອກນ້ອຍ	44	44	100	-	-	-	-	-	-
3		ງອນດອນ	99	93	93.94	-	-	6	6.06	-	-
4		ດາກມອນ	78	78	100	-	-	-	-	-	-
5		ດາກໂດມ	56	56	100	-	-	-	-	-	-
ລວມ			521	384	73.70	84	16.12	34	6.53	19	3.65

ແຫຼ່ງຂໍ້ມູນ: ຈາກການສຳພາດອຳນາດການປົກຄອງບ້ານ ເດືອນກັນຍາ ປີ 2020.

4.5.3.3 ການສຶກສາ

ທົ່ວເມືອງມີໂຮງຮຽນທັງໝົດ 78 ແຫ່ງ, ມີຫ້ອງຮຽນທັງໝົດ 307 ຫ້ອງ, ມີຄູສອນທັງໝົດ 388 ຄົນ, ຍິງ 195 ຄົນ ແລະ ມີນັກຮຽນທັງໝົດ 8,527 ຄົນ, ໃນນັ້ນມີນັກຮຽນອະນຸບານຈຳນວນ 5 ແຫ່ງ, ມີຫ້ອງຮຽນລ້ຽງເດັກອະນຸບານ 18 ຫ້ອງ, ຫ້ອງກຽມຕິດແປະປະຖົມ 32 ຫ້ອງ, ມີຄູສອນ 56 ຄົນ, ມີນັກຮຽນທັງໝົດ 1,193 ຄົນ, ຍິງ 621 ຄົນ, ມີໂຮງຮຽນຊັ້ນປະຖົມ 61 ແຫ່ງ, ມີຫ້ອງຮຽນ 197 ຫ້ອງ, ມີຄູສອນ 183 ຄົນ, ຍິງ 76 ຄົນ, ມີນັກຮຽນທັງໝົດ 4,815 ຄົນ, ຍິງ 3,226 ຄົນ, ມີໂຮງຮຽນມັດທະຍົມຕົ້ນ 9 ແຫ່ງ, ມີຫ້ອງຮຽນ 55 ຫ້ອງ, ມີຄູສອນ 92 ຄົນ, ຍິງ 34 ຄົນ, ມີນັກຮຽນທັງໝົດ 1,836 ຄົນ, ຍິງ 915 ຄົນ, ມີໂຮງຮຽນມັດທະຍົມປາຍ 2 ແຫ່ງ, ມີຫ້ອງຮຽນ 17 ຫ້ອງ , ມີຄູສອນ 39 ຄົນ, ຍິງ 15 ຄົນ, ມີນັກຮຽນທັງໝົດ 568 ຄົນ, ຍິງ 252 ຄົນ. ສຳລັບການສຶກສາໃນບັນດາບ້ານ ເຂດພື້ນທີ່ໂຄງການແມ່ນມີລາຍລະອຽດດັ່ງລຸ່ມນີ້:

ຕາຕະລາງ 4-14: ການສຶກສາໃນເຂດພື້ນທີ່ໂຄງການ

ລ/ດ	ບ້ານ	ໂຮງຮຽນອະນຸບານ				ໂຮງຮຽນປະຖົມ				ໂຮງຮຽນມັດທະຍົມ			
		ຫ້ອງຮຽນ	ຄູສອນ	ນັກຮຽນ	ຍິງ	ຫ້ອງຮຽນ	ຄູສອນ	ນັກຮຽນ	ຍິງ	ຫ້ອງຮຽນ	ຄູສອນ	ນັກຮຽນ	ຍິງ
1	ດາກບອງ	3	4	72	32	5	6	126	64	5	14	102	20
2	ດາກຕະອອກນ້ອຍ	0	0	0	0	5	2	34	0	0	0	0	0
3	ງອນດອນ	1	0	0	0	4	0	0	0	0	0	0	0
4	ດາກມອນ	0	0	0	0	5	0	0	0	0	0	0	0
5	ດາກໂດມ	0	0	0	0	5	3	51	27	0	0	0	0
ລວມ		4	4	72	32	24	11	211	91	5	14	102	20

ແຫຼ່ງຂໍ້ມູນ: ຈາກການສຳພາດອຳນາດການປົກຄອງບ້ານ ເດືອນກັນຍາ ປີ 2020.

ຮູບທີ 4-7: ສະພາບການສຶກສາໃນເຂດພື້ນທີ່ໂຄງການ

4.5.3.4 ຄອບຄົວທຸກຍາກ ແລະ ກຸ່ມທີ່ມີຄວາມສ່ຽງ

ສປປ ລາວ ແມ່ນປະເທດໜຶ່ງທີ່ນອນໃນບັນດາປະເທດ ທີ່ມີອັດຕາຄວາມທຸກຍາກສູງ ໃນຂົງເຂດປະເທດອາຊີ ຕາເວັນອອກ ແລະ ປາຊີຟິກ. ສະພາບຄວາມທຸກຍາກດັ່ງກ່າວແມ່ນຂ້ອນຂ້າງຮຸນແຮງໃນເຂດຊົນນະບົດ ແລະ ເຂດ ຫ່າງໄກສອກຫຼີກ, ໂດຍສະເພາະເຂດທີ່ບໍ່ມີເສັ້ນທາງເຂົ້າເຖິງ, ເຂດພູດອຍ ເປັນຕົ້ນແມ່ນຢູ່ໃນເຂດຈຸດສຸມບຸລິມະສິດ ທາງພາກເໜືອ ແລະ ພາກໃຕ້.

ໂດຍຍຶດໝັ້ນໃນອຸດົມການ ແລະ ຄາດໝາຍສູ້ຊົນຂອງພັກ - ລັດ ທີ່ພະຍາຍາມຫຼຸດຜ່ອນຄວາມທຸກຍາກຂອງ ປະຊາຊົນໃຫ້ໄດ້ໂດຍພື້ນຖານ ເພື່ອນຳພາປະເທດຊາດຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ. ດັ່ງນັ້ນ, ວຽກງານ ແກ້ໄຂຄວາມທຸກຍາກໄດ້ກາຍເປັນພາລະກິດ ແລະ ເປັນໜຶ່ງໃນບຸລິມະສິດຂອງລັດຖະບານແຫ່ງ ສປປ ລາວ. ກອບ ວຽກງານຂອງຍຸດທະສາດລຶບລ້າງຄວາມທຸກຍາກ ແລະ ການເຕີບໂຕແຫ່ງຊາດລວມມີ 4 ຂະແໜງການໃຫຍ່ຄື: 1) ກະສິກຳ - ປ່າໄມ້, 2) ການສຶກສາ, 3) ສຸຂະພາບ ແລະ 4) ພື້ນຖານໂຄງລ່າງ ໂດຍສະເພາະແມ່ນການກໍ່ສ້າງເສັ້ນທາງ ໃນເຂດຊົນນະບົດຫ່າງໄກສອກຫຼີກ. ນອກຈາກນັ້ນ ການຫຼຸດຜ່ອນຄວາມທຸກຍາກຍັງຕິດພັນກັບວຽກງານພັດທະນາ ຊົນນະບົດ ກໍ່ຄືວຽກງານ 3 ສ້າງໃນຂອບເຂດທົ່ວປະເທດ.

ເມືອງດາກຈຶງ ຍັງເປັນເມືອງໜຶ່ງ ທີ່ຍັງມີບັນຫາດ້ານຄວາມທຸກຍາກ ເຊິ່ງທາງພາກລັດກໍໄດ້ພາຍາຍາມສົ່ງເສີມດ້ານ ຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ດີຂຶ້ນ ເຊິ່ງອັດຕາຄວາມທຸກຍາກ ຂອງປະຊາຊົນບັນດາເຜົ່າຍັງກວມເອົາອັດຕາ ສ່ວນສູງເຖິງ 23 % ຂອງຈຳນວນຄົນທັງໝົດ, ຄວາມຄວາມທຸກຍາກ 16.57 % ຂອງຈຳຄອບຄົວທັງໝົດ ໂດຍ ສະເພາະແມ່ນປະຊາຊົນທີ່ຢູ່ຫ່າງໄກສອກຫຼີກ ແລະ ຍັງຕິດພັນກັບທຳມະຊາດເປັນສ່ວນໃຫ່ຍ.

ສ່ວນເຂດພື້ນທີ່ໂຄງການເປີເຊັນຄວາມທຸກຍາກແມ່ນເຫັນວ່າຍັງມີບ້ານບ້ານທີ່ຍັງມີຈຳນວນຄອບຄົວທຸກຍາກ ເຊິ່ງ ໃນເຂດພື້ນທີ່ໂຄງການຈາກການໃຫ້ຂໍ້ມູນຂອງອຳນາດການປົກຄອງບ້ານທັງ 5 ບ້ານ ແມ່ນເຫັນວ່າມີປະມານ 58 ຄອບຄົວ ທີ່ຍັງທຸກຍາກ. ໃນນີ້, ມາດຕະຖານການຈັດຄອບຄົວທຸກຍາກໃນບັນດາບ້ານຕ່າງໆໃນເຂດໂຄງການແມ່ນ ອີງໃສ່ບັນດາຄອບຄົວທີ່ຂາດເຂົ້າກິນ (ປີໜຶ່ງ ຢ່າງໜ້ອຍ 3 – 4 ເດືອນຂຶ້ນໄປ), ເຄື່ອງນຸ່ງຫົ່ມຂາດເຂີນບໍ່ພຽງພໍ, ເຮືອນຊານບໍ່ຖາວອນ, ບໍ່ມີສັດລ້ຽງ ແລະ ກຸ່ມສ່ຽງ (ຄອບຄົວທີ່ມີແມ່ຍິງ, ຜູ້ເຖົ້າ ຫຼື ຄົນປ່ຽວພອຍ ເປັນຫົວໜ້າ ຄອບຄົວ) ເປັນຕົ້ນ. ຄອບຄົວທຸກຍາກດັ່ງກ່າວເກືອບທັງໝົດ ແມ່ນອາໄສການກະສິກຳ ເປັນຫຼັກ ເຊິ່ງຜົນຜະລິດ ຂອງເຂົາເຈົ້າ ແມ່ນບໍ່ກຸ້ມກິນຕະຫຼອດປີ, ອີກບັນຫາໜຶ່ງເຊິ່ງເປັນບັນຫາທີ່ສຳຄັນກໍ່ຄື ການຊອກຫາວຽກເຮັດງານທຳ

ແມ່ນມີໜ້ອຍ, ການຂະຫຍາຍເນື້ອທີ່ທຳການຜະລິດແມ່ນຖືກຈຳກັດ ແລະ ໄພທຳມະຊາດສົ່ງຜົນກະທົບການຜະລິດ ເຊິ່ງເປັນສາເຫດໜຶ່ງຂອງຄອບຄົວທຸກຍາກ.

ຕາຕະລາງ 4–15: ຈຳນວນຄອບຄົວທີ່ທຸກຍາກໃນແຕ່ລະບ້ານ

ລ/ດ	ເມືອງ	ບ້ານ	ຈຳນວນ ຄອບຄົວ	ຈຳນວນ ຫຼັງຄາ ເຮືອນ	ຈຳນວນຄອບຄົວທຸກຍາກ		ແມ່ຍິງເປັນຫົວໜ້າ ຄຄ		ຄຄ ພິການ,ປ່ຽວພອຍ	
					ຄຄ ທຸກຍາກ	ເປີເຊັນ	ຈຳນວນ	ເປີເຊັນ	ຈຳນວນ	ເປີເຊັນ
1	ດາກຈຶງ	ດາກບອງ	244	233	23	9.43	24	9.84	-	-
2		ດາກຕະອອກນ້ອຍ	44	38	-	-	9	20.45	-	-
3		ງອນດອນ	99	90	30	30.3	5	5.05	2	2.02
4		ດາກມອນ	78	65	-	-	12	15.38	1	1.28
5		ດາກໂດມ	56	42	5	8.93	2	3.57	3	5.36
ລວມ			521	468	58	12.39	52	11.11	6	1.28

ແຫຼ່ງຂໍ້ມູນ: ຈາກການສຳພາດອຳນາດການປົກຄອງບ້ານ ເດືອນກັນຍາ ປີ 2020.

4.5.3.5 ສະຖານະບົດບາດຍິງ-ຊາຍ

ຄວາມສະເໝີພາບລະຫວ່າງຍິງ - ຊາຍ ແມ່ນໜຶ່ງເປົ້າໝາຍຫຼັກຂອງການພັດທະນາ ແລະ ເປັນພື້ນຖານຂອງການພັດທະນາເສດຖະກິດທີ່ມີຫົວຄິດປະດິດສ້າງ. ການເພີ່ມຄວາມສະເໝີພາບລະຫວ່າງຍິງ - ຊາຍ ສາມາດຊ່ວຍຍົກລະດັບສະມັດຕະພາບຂອງການຜະລິດ, ປັບປຸງໝາກຜົນຂອງການພັດທະນາ ເພື່ອຄົນລຸ້ນຕໍ່ໄປ ແລະ ເຮັດໃຫ້ເກີດມີຄວາມເທົ່າທຽມກັນລະຫວ່າງ ຍິງ - ຊາຍ ໃນບັນດາກົງຈັກການຈັດຕັ້ງຕ່າງໆ ຫຼາຍຂຶ້ນ. ໃນຂະນະທີ່ປະເທດ ພວມສືບຕໍ່ມີ ການພັດທະນາ, ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກ ຍິ່ງຈະກາຍເປັນຂໍ້ກຸນແຈທີ່ສຳຄັນໃນການໝູນໃຊ້ການເຕີບໂຕທາງເສດຖະກິດຂອງປະເທດ ແລະ ກຳລັງແຮງສັງລວມຂອງຊາວໜຸ່ມ ເພື່ອປັບປຸງມາດຖານການດຳລົງຊີວິດໃຫ້ດີຂຶ້ນ. ໃນນັ້ນ, ແມ່ຍິງ ແລະ ຜູ້ຊາຍ ກໍ່ຈະໄດ້ຮັບຜົນປະໂຫຍດໄປພ້ອມໆກັນ.

ສະນັ້ນ, ທາງພາກລັດຈຶ່ງໄດ້ໃຫ້ຄວາມສຳຄັນ ກ່ຽວກັບ ບົດບາດຍິງ - ຊາຍ ໃຫ້ມີສິດທິເທົ່າທຽມກັນຫຼາຍຂຶ້ນເຫັນໄດ້ວ່າ ອົງການຈັດຕັ້ງຂອງລັດທຸກຂັ້ນ ແມ່ນມີແມ່ຍິງຈາກຫຼາຍຊົນເຜົ່າ, ລັດຖະບານຈຶ່ງໄດ້ສ້າງຕັ້ງອົງການ ຈັດຕັ້ງທີ່ສຳຄັນໜຶ່ງຂຶ້ນ ສຳລັບເພດຍິງໂດຍສະເພາະເຊິ່ງມີຊື່ເປັນທາງການວ່າ: ວັນສ້າງຕັ້ງສະຫະພັນແມ່ຍິງລາວ ເຊິ່ງກົງກັບ ວັນທີ 20 ເດືອນກໍລະກົດ ຂອງທຸກໆປີ ຈະເປັນວັນທີ່ໃຫ້ສະເພາະ ເພດຍິງ ພັກຊິດເຊີຍອີກມື້ໜຶ່ງ, ເພີ່ມຈາກ ວັນທີ 08 ເດືອນມີນາ ຂອງທຸກໆປີເຊັ່ນດຽວກັນ. ອົງການຈັດຕັ້ງດັ່ງກ່າວ ແມ່ນມີການຈັດຕັ້ງປະຕິບັດ ຢູ່ທຸກອົງການຈັດຕັ້ງຂອງພາກລັດທຸກຂັ້ນ ແລະ ມີຢູ່ທຸກອົງການຈັດຕັ້ງຂອງພາກເອກະຊົນທຸກລະດັບ. ຈຸດປະສົງຫຼັກໆຂອງ ວັນດັ່ງກ່າວ ແມ່ນເພື່ອຍົກສູງ ແລະ ຊີ້ແຈງໃຫ້ຮູ້ວ່າ ແມ່ຍິງລາວ ກໍ່ມີຄວາມຮູ້ຄວາມສາມາດໃນການເຮັດວຽກ ແລະ ມີສິດທິເທົ່າທຽມກັບເພດຊາຍເຊັ່ນກັນ.

ສຳລັບໃນເຂດໂຄງການປັດຈຸບັນ ຫຼັງຈາກທີ່ຜ່ານການລົງເກັບຂໍ້ມູນທີ່ໄດ້ມີການສອບຖາມ, ການປຶກສາຫາລື ກັບ ປະຊາຊົນທັງ ຍິງ - ຊາຍ ເຊິ່ງເຫັນໄດ້ວ່າ ບົດບາດຍິງ - ຊາຍ ໃນບັນດາບ້ານຕ່າງໆແມ່ນຕິດພັນກັບຮີດຄອງປະເພນີທີ່ເຄີຍປະຕິບັດກັນມາຕັ້ງແຕ່ບູຮານນະການ, ຕິດພັນກັບການດຳລົງຊີວິດປະຈຳວັນ ແລະ ຄ່ອຍມີການປ່ຽນແປງໄປຕາມຍຸກສະໄໝເຊິ່ງຖືວ່າມີຄວາມເທົ່າທຽມກັນ, ສັງເກດໄດ້ຈາກໂອກາດທາງດ້ານການສຶກສາເຫັນວ່າຈຳນວນນັກຮຽນປະຖົມໃນບັນດາບ້ານຕ່າງໆ ແມ່ນມີອັດຕາເພດຍິງ ແລະ ຊາຍເກືອບເທົ່າໆກັນ, ການເຮັດໜ້າວຽກຕ່າງໆ

ແມ່ນມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນເຊັ່ນ: ເຮັດນາ, ເຮັດສວນ, ທຳມາຫາກິນໂດຍການຄ້າຂາຍ, ຮັບຈ້າງທົ່ວໄປ , ເອົາລູກ, ເຮັດວຽກເຮືອນ... ບໍ່ວ່າຈະເປັນຜູ້ຍິງ ຫຼື ຜູ້ຊາຍ ແມ່ນສາມາດເຮັດວຽກຕ່າງໆໄດ້ເທົ່າທຽມກັນໝົດ. ຖ້າ ມີຄວາມແຕກຕ່າງກໍ່ຈະແມ່ນແຕກຕ່າງພຽງເລັກນ້ອຍເຊັ່ນວ່າ: ຜູ້ຊາຍ ແມ່ນຈະເຮັດວຽກທີ່ໜັກ, ສ່ວນຜູ້ຍິງ ແມ່ນ ຈະເຮັດວຽກເບົາ. ນອກນີ້ຢູ່ບາງບ້ານແມ່ນເຫັນວ່າມີ ແມ່ຍິງ ເຮັດວຽກເປັນຄະນະບ້ານ ແລະ ມີອົງການຈັດຕັ້ງ ສະຫະພັນແມ່ຍິງ ເຊິ່ງເປັນວຽກງານຂອງແມ່ຍິງໂດຍສະເພາະອີກດ້ວຍ.

4.5.3.6 ອົງການຈັດຕັ້ງທາງສັງຄົມ ແລະ ການເມືອງ

ຂໍ້ມູນຈາກການສຳຫຼວດພາກສະໜາມ ໂດຍການສຳພາດ ແລະ ສອບຖາມເກັບຂໍ້ມູນເຫັນວ່າ: ການບໍລິຫານ ແລະ ອົງການຈັດຕັ້ງທາງສັງຄົມ ຂອງບັນດາບ້ານຕ່າງໆໃນເຂດພື້ນທີ່ໂຄງການ ໄດ້ຖືກຈັດແບ່ງອົງຕາມມາດຕະຖານລະບົບ ບໍລິຫານໃນ ສປປ ລາວ ເຊິ່ງໃນໄລຍະຜ່ານມາໄດ້ມີການຈັດສັນເຕົ້າໂຮມບ້ານນ້ອຍທີ່ຢູ່ກະແຈກກະຈາຍໃຫ້ ກາຍເປັນບ້ານໃຫຍ່ ໃນແຕ່ລະບ້ານປະກອບດ້ວຍ ນາຍບ້ານ ແມ່ນເຈົ້າໜ້າທີ່ຕົ້ນຕໍຂອງບ້ານ ແລະ ແມ່ນສາຍພົວພັນ ຕົ້ນຕໍລະຫວ່າງບ້ານ ແລະ ເມືອງ, ນອກຈາກນີ້, ໂດຍປົກກະຕິແລ້ວຈະມີຮອງນາຍບ້ານ 2 ຫຼື 3 ຄົນ ແລະ ບົດບາດ ຂອງເຂົາເຈົ້າແມ່ນເພື່ອຊ່ວຍເຫຼືອນາຍບ້ານໃນການບໍລິຫານບ້ານ, ສ່ວນຕຳແໜ່ງອື່ນໆໃນບ້ານແມ່ນລວມມີ: ກອງ ຫຼວນບ້ານ, ຕຳຫຼວດກຸ່ມບ້ານ ມີໜ້າທີ່ໃນການເບິ່ງແຍງ, ປ້ອງກັນຄວາມສະຫງົບໃນທ້ອງຖິ່ນຂອງຕົນ, ຊາວໜຸ່ມບ້ານ , ສະຫະພັນແມ່ຍິງບ້ານ ຮັບຜິດຊອບວຽກງານຊາວໜຸ່ມ, ແມ່ຍິງໃນໝູ່ບ້ານ ແລະ ຍັງມີແມ່ບົດໂຮມບ້ານ ມີບົດບາດໃນ ການພົວພັນໃນບ້ານ, ປຸກລະດົມເຕົ້າໂຮມຄວາມສາມັກຄີ ແລະ ອື່ນໆ ນອກຈາກນີ້ແລ້ວບາງບ້ານສ່ວນຫຼາຍຍັງມີທີ່ ດິນບ້ານ ມີບົດບາດໃນການເກັບພາສີທີ່ດິນບ້ານ, ອາສາສະໝັກ ດ້ານສຸຂະອະນາໄມຂັ້ນບ້ານ ຫຼື ຖົງຢາບ້ານ ແລະ ໝໍ ຕຳແຍ ທີ່ເບິ່ງແຍງບັນຫາທາງດ້ານສຸຂະພາບຂອງປະຊາຊົນໃນບ້ານ. ເຊິ່ງຂຶ້ນກັບ ແຕ່ລະໝູ່ບ້ານວ່າຈະມີການຈັດສັນ ການຈັດຕັ້ງທາງສັງຄົມ ແລະ ການເມືອງ ໃນເຂດບ້ານຫຼາຍ ຫຼື ໜ້ອຍພຽງໃດ, ເພື່ອໃຫ້ຄອບຄຸມໃນແຕ່ລະພື້ນທີ່ຂອງ ແຕ່ລະໝູ່ບ້ານ.

4.5.4 ຂໍ້ມູນດ້ານສຸຂະພາບ

1) ວິທີການ

ໄດ້ເກັບຂໍ້ມູນ ມີສອງກ່ຽວກັບສຸຂະພາບສາທາລະນະຊົນ ຈາກສະຖານທີ່ອຳນວຍຄວາມສະດວກດ້ານ ສາທາລະນະ ສຸກທີ່ມີຢູ່ໃນພື້ນທີ່. ຂໍ້ມູນເຫຼົ່ານີ້ແມ່ນລວມມີ

- ✓ ຊັບພະຍາກອນດ້ານສາທາລະນະສຸກ
- ✓ ອັດຕາການເຈັບປ່ວຍ ແລະ ອັດຕາການຕາຍ
- ✓ ເຫດການຂອງພະຍາດຕິດຕໍ່
- ✓ ອາຫານ ແລະ ໂພຊະນາການ
- ✓ ພຶດຕິດກຳການປິ່ນປົວສຸຂະພາບ
- ✓ ການເຂົ້າເຖິງການບໍລິການດ້ານສຸຂະພາບ
- ✓ ການເຂົ້າເຖິງນ້ຳດື່ມ, ສຸຂາພິບານ ແລະ ການຄຸ້ມຄອງສິ່ງເສດເຫຼືອ

ເຕັກນິກການສຳພາດກຸ່ມຈຸດສຸມໄດ້ຖືກນຳໃຊ້ກັບ ພະນັກງານສາທາລະນະສຸກໃນພື້ນທີ່ການສຶກສາ. ການສຳຫຼວດພາກສະໜາມ ແມ່ນດຳເນີນໃນລະຫວ່າງເດືອນ ກັນຍາ 2020

2) ລາຍລະອຽດ

4.5.4.1 ສະພາບທາງດ້ານສາທາລະນະສຸກຂອງເມືອງ

ອີງຕາມບົດລາຍງານແຜນພັດທະນາເສດຖະກິດ-ສັງຄົມ ຂອງເມືອງດາກຈຶງ ແມ່ນສາມາດສະຫຼຸບໄດ້ວ່າ ທົ່ວເມືອງມີໂຮງໝໍເມືອງ 1 ແຫ່ງ ແລະ ມີສຸກສາລາ 10 ແຫ່ງ, ມີຕຽງນອນ 48 ຕຽງ, ມີຮ້ານຂາຍຢາ 3 ຮ້ານ, ມີຖົງຢາປະຈຳບ້ານ 25 ບ້ານ, ສ້າງ ອສບ ບ້ານ 54 ບ້ານ, ໃນນັ້ນໂຮງໝໍຊຸມຊົນເມືອງມີຕຽງນອນ 28 ຕຽງ, ມີລັດຖະກອນແພດທັງໝົດ 27 ຄົນ, ສຸກສາລາມີຕຽງ 20 ຕຽງ, ມີແພດທັງໝົດ 16 ຄົນ. ສ້າງຊຸມຊົນເປັນເຈົ້າຂອງດ້ານສຸຂະອະນາໄມ (ຊຈສ) ແລະ ສ້າງບ້ານບ້ານສາທາລະນະສຸກແບບຢ່າງ 32 ບ້ານ, ມີອັດຕາການນຳໃຊ້ນຳສະອາດ 88.77%, ຄອບຄົວຊົມໃຊ້ນຳສະອາດ 4,214 ຄອບຄົວ ກວມເອົາ 88.7%, ບ້ານຊົມໃຊ້ວິດຖ່າຍ 37 ບ້ານ ກວມເອົາ 68.3 %, ຄອບຄົວນຳໃຊ້ວິດຖ່າຍ 3,245 ຄອບຄົວ ກວມເອົາ 68.3%.

4.5.4.2 ສະພາບທາງດ້ານສາທາລະນະສຸກໃນເຂດພື້ນທີ່ໂຄງການ

(1) ສະພາບທົ່ວໄປ

ສາທາລະນະສຸກໃນເຂດພື້ນທີ່ໂຄງການທັງ 5 ບ້ານ ອີງຕາມການເກັບກຳຂໍ້ມູນນຳອຳນາດການປົກຄອງບ້ານຂອງແຕ່ລະບ້ານ ແມ່ນເຫັນວ່າ ມີພຽງບ້ານດາກມອນ ທີ່ມີສຸກສາລາປະຈຳບ້ານ, ສ່ວນບ້ານອື່ນແມ່ນບໍ່ມີສຸກສາລາ ເວລາເຈັບເປັນແມ່ນອາໄສໄປຮັກສາຢູ່ສຸກສາລາທີ່ຢູ່ໃກ້ ແລະ ໄປຮັກສາຢູ່ໂຮງໝໍເມືອງ ເນື່ອງຈາກບ້ານດາບ້ານດັ່ງກ່າວ ແມ່ນໃກ້ເຂດເທດສະບານເມືອງ, ແຕ່ກໍຍັງມີປະຊາຊົນບາງຈຳນວນ ທີ່ເວລາເຈັບເປັນ ແມ່ນຮັກສາປິ່ນປົວກັນເອງຢູ່ໃນກໍລະນີທີ່ບໍ່ເຖິງຂັ້ນຮຸນແຮງ, ເປັນຕົ້ນແມ່ນ ການນຳໃຊ້ຢາພື້ນເມືອງຈາກທຳມະຊາດຈາກຜູ້ທີ່ຮູ້ ແລະ ເຄີຍປິ່ນປົວຢູ່ພາຍໃນໝູ່ບ້ານດຽວກັນ ແລະ ການຊື້ຢາມາເກັບຮັກສາໄວ້ເວລາເຈັບເປັນເລັກໜ້ອຍເທົ່ານັ້ນ.

(2) ສຸຂະສຶກສາ

ຄວາມຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບດ້ານສຸກຂະສຶກສາຂອງປະຊາຊົນໃນໝູ່ບ້ານເຂດໂຄງການ ກໍ່ຄືໝູ່ບ້ານອື່ນໆໃນເຂດຊົນນະບົດ, ໂດຍສະເພາະໝູ່ບ້ານທີ່ຢູ່ຫ່າງໄກຈາກເທດສະບານ. ປະຊາຊົນສ່ວນຫຼາຍຍັງບໍ່ຕື່ນຕົວ ແລະ ບໍ່ຄ່ອຍເອົາໃຈໃສ່ ດູແລສຸຂະພາບຂອງຕົວເອງ, ເມື່ອເວລາເຈັບເປັນ ກໍບໍ່ຄ່ອຍສົນໃຈຫາສາເຫດ. ເຖິງແມ່ນວ່າໃນແຕ່ລະປີ ທາງໜ່ວຍງານສາທາລະນະສຸກຂອງເມືອງກໍ່ໄດ້ລົງສູ່ຂັ້ນຮາກຖານ ແລະ ນຳເອົາທິດສະດີ ແລະ ພຶດຕິກຳອັນໃໝ່ ໃນການຕອບໂຕ້ຕໍ່ພະຍາດທີ່ມັກເກີດຕາມລະດູການ ໃນເຂດຊົນນະບົດ ແລະ ຕົວເມືອງ ແລະ ເປັນໃຈກາງຂອງການພັດທະນາສາທາລະນະສຸກ ເພື່ອເຮັດໃຫ້ປະຊາຊົນບັນດາເຜົ່າຮັບຮູ້ຂໍ້ມູນຂ່າວສານ, ຮູ້ວິທີປ້ອງກັນພະຍາດ ແລະ ຮັກສາສຸຂະພາບຂອງຕົນ ແລະ ຄອບຄົວ ໂດຍການແນະນຳກ່ຽວກັບສຸຂະສຶກສາຂັ້ນບ້ານ ເຊັ່ນວ່າ: ນອນຕ້ອງກາງມຸ້ງ, ຕົ້ມນ້ຳກິນ ແລະ ກິນອາຫານທີ່ປຸງສຸກເປັນຕົ້ນ, ແລະ ທາງເມືອງກໍໄດ້ໄປຝຶກອົບຮົມກ່ຽວກັບສຸຂະພາບປະຈຳປີໃຫ້ບັນດາບ້ານດັ່ງກ່າວ. ນອກນີ້ຢູ່ໃນໂຮງຮຽນປະຖົມຂອງແຕ່ລະບ້ານ ນອກຈາກຄູຈະສອນໜັງສື ທີ່ເປັນຄວາມຮູ້ທົ່ວໄປແລ້ວ ຄູຍັງສອນໃຫ້ເດັກນັກຮຽນຮູ້ກ່ຽວກັບສຸຂະສຶກສາ, ໃຫ້ຮູ້ຈັກການອະນາໄມເບື້ອງຕົ້ນ ຕາມຫຼັກສູດຂອງກະຊວງສຶກສາວາງອອກ.

(3) ການນຳໃຊ້ນ້ຳສະອາດ

ການນຳໃຊ້ນ້ຳສະອາດຂອງບ້ານຕ່າງໆໃນເຂດພື້ນທີ່ໂຄງການ ນີ້ ຜ່ານການລົງເກັບກຳຂໍ້ມູນ ແລະ ສຳຫຼວດຕົວຈິງ ແມ່ນ ເຫັນວ່າ ໃນແຕ່ລະບ້ານແມ່ນໄດ້ຊົມໃຊ້ນ້ຳ ຈາກນ້ຳບາດານ ແລະ ນຳໃຊ້ນ້ຳລິນ, ລັກສະນະການນຳໃຊ້ນ້ຳຂອງປະຊາຊົນ ແຕ່ລະຄົວເຮືອນແມ່ນໃຊ້ເພື່ອແຕ່ງຢູ່ຄົວກິນ, ໃຊ້ອາບ ແລະ ໃຊ້ຊັກລ້າງໃນປະຈຳວັນ. ສຳລັບແຫຼ່ງນ້ຳທີ່ໃຊ້ເພື່ອດື່ມກິນ ຂອງປະຊາຊົນໃນເຂດພື້ນທີ່ໂຄງການ ແມ່ນໄດ້ຊົມໃຊ້ນ້ຳ ດື່ມຕຸກຈາກໂຮງງານ, ເພື່ອການບໍລິໂພກ ເນື່ອງຈາກການ ໃຊ້ນ້ຳດື່ມຕຸກ ແມ່ນມີຄວາມສະດວກສະບາຍ, ມີຄວາມ ສະອາດ ແລະ ຖືກຫຼັກອະນາໄມ, ແຕ່ກໍຍັງມີບາງສ່ວນທີ່ຍັງ ບໍລິໂພກນ້ຳ ຈາກນ້ຳບາດານໂດຍນຳມາຕົ້ມເພື່ອບໍລິໂພກ.

ຮູບທີ 4-8: ການນຳໃຊ້ນ້ຳຂອງບ້ານເຂດ ໂຄງການ

(4) ການນຳໃຊ້ວິດຖ່າຍ

ການນຳໃຊ້ວິດຖ່າຍຂອງແຕ່ລະຄົວເຮືອນຂອງແຕ່ລະບ້ານໃນເຂດໂຄງການ ເຫັນວ່າມີເປີເຊັນຂອງຜູ້ຊົມໃຊ້ຢູ່ໃນ ລະດັບດີ ແຕ່ກໍ່ຍັງມີບາງຄົວເຮືອນໃນບາງບ້ານທີ່ຍັງບໍ່ມີວິດຖ່າຍ ເຊິ່ງມີຫຼາຍສາເຫດຄື: ບໍ່ມີທຶນເຮັດ, ເປັນຄອບຄົວ ອອກເຮືອນໃໝ່ ແລະ ສາເຫດອື່ນໆ ເຊິ່ງບັນດາຄົວເຮືອນດັ່ງກ່າວແມ່ນມີການໃຊ້ວິດຖ່າຍນຳຄົວເຮືອນພີ່ນ້ອງທີ່ມີ ວິດຖ່າຍ ຫຼື ຖ່າຍຕາມສອນ ຫຼື ປ່າບໍລິເວນອ້ອມຂ້າງຂອງບ້ານ, ເຊິ່ງໂຄງການສາທາລະນະສຸກ (ການສັກຢາກັນ ພະຍາດ ແລະ ສົ່ງເສີມການກິນຢູ່ສະອາດ) ໄດ້ລົງມາເຜີຍແຜ່ໃນແຕ່ລະບ້ານເກືອບທຸກປີ.

ຕາຕະລາງ 4-16: ການນຳໃຊ້ວິດຖ່າຍໃນແຕ່ລະບ້ານເຂດໂຄງການ

ລ/ດ	ເມືອງ	ບ້ານ	ຈຳນວນຄອບຄົວ	ຈຳນວນຫຼັງ ຄາເຮືອນ	ການຊົມໃຊ້ວິດຖ່າຍ	
					ມີ	ບໍ່ມີ
1	ເມືອງ ດາກຈຶງ	ດາກບອງ	244	233	233	–
2		ດາກຕະອອກນ້ອຍ	44	38	-	38
3		ງອນດອນ	99	90	90	-
4		ດາກມອນ	78	65	61	4
5		ດາກໂດມ	56	42	42	-
ລວມ			521	468	426	42

ແຫຼ່ງຂໍ້ມູນ: ຈາກການສຳພາດອຳນາດການປົກຄອງບ້ານ ເດືອນກັນຍາ ປີ 2020.

(5) ການກຳຈັດຂີ້ເຫຍື້ອ

ການກຳຈັດຂີ້ເຫຍື້ອ ກໍ່ເປັນບັນຫາໜຶ່ງທີ່ກ່ຽວຂ້ອງ ກັບດ້ານສາທາລະນະສຸກຂອງບ້ານ, ການກຳຈັດຂີ້ເຫຍື້ອຂອງ ບັນດາບ້ານໃນເຂດພື້ນທີ່ໂຄງການ ແມ່ນສັງເກດເຫັນວ່າ ຍັງບໍ່ທັນມີຄວາມເຂົ້າໃຈ ແລະ ຍັງບໍ່ທັນມີການກຳຈັດຢ່າງ ຖືກວິທີ, ສ່ວນຫຼາຍແມ່ນນຳໄປຈູດ ແລະ ຖິ້ມຊະຊາຍຕາມແຄມບ້ານເຮືອນ ຫຼື ປ່າໃກ້ບ້ານ ເຊິ່ງກໍ່ໃຫ້ເກີດມີກິ່ນ ເໝັນຈາກຊາກເໜົ່າເປື່ອຍຂອງຂີ້ເຫຍື້ອ ແລະ ເປັນວິທີທີ່ປະຕິບັດກັນມາຕັ້ງແຕ່ດຶກດຳບັນ.

(6) ພະຍາດທີ່ມັກເກີດ

ຈາກການສອບຖາມປະຊາຊົນໃນເຂດດັ່ງກ່າວເຫັນວ່າພະຍາດທີ່ມັກເກີດຂຶ້ນໃນບັນດາບ້ານຢູ່ໃນເຂດໂຄງການສ່ວນຫຼາຍແມ່ນ ພະຍາດໄຂ້ຫວັດ ແລະ ພະຍາດຖອກທ້ອງ. ເຊິ່ງສາເຫດຂອງພະຍາດໄຂ້ຫວັດແມ່ນເກີດຕາມສະພາບອາກາດເຊັ່ນ: ສະພາບອາກາດປ່ຽນແປງໄວເຮັດໃຫ້ຮ່າງກາຍປັບໂຕບໍ່ທັນ, ສ່ວນພະຍາດຖອກທ້ອງແມ່ນເກີດຈາກການກິນຢູ່ບໍ່ສະອາດ, ບໍ່ຖືກຫຼັກອະນາໄມ ເຊິ່ງສ່ວນຫຼາຍຈະມັກເກີດຂຶ້ນກັບເດັກນ້ອຍ. ນອກນີ້, ຍັງມີພະຍາດໄຂ້ຍຸງ ເຊິ່ງສາເຫດມາຈາກປະຊາຊົນບໍ່ເອົາໃຈໃສ່ໃນການປ້ອງກັນ ແລະ ທຳລາຍບ່ອນເກີດ ຍຸງລາຍ ເຮັດພະຍາດນີ້ລະບາດທຸກໆປີ. ນອກຈາກພະຍາດທີ່ເກີດຂຶ້ນກັບປະຊາຊົນແລ້ວກໍ່ມີພະຍາດເກີດຂຶ້ນກັບສັດລ້ຽງຂອງປະຊາຊົນ ເປັນຕົ້ນ ແມ່ນ ພະຍາດປາກເປື່ອຍລີ້ນເລັບ, ເຕົ້າໂຮມເລືອດ, ພະຍາດຕາຍຮ່າ ແລະ ພະຍາດອື່ນໆ ເຊິ່ງມີສາເຫດມາຈາກສັດລ້ຽງບໍ່ໄດ້ຮັບການສັກຢາ ແລະ ສ່ວນຫຼາຍກໍ່ແມ່ນເກີດຂຶ້ນຕາມລະດູການ.

(7) ການປິ່ນປົວ

ໂດຍທົ່ວໄປການຮັກສາປິ່ນປົວອາການເຈັບເປັນຂອງປະຊາຊົນໃນເຂດໂຄງການ ແມ່ນຈະອາໄສການຊື້ຢາກິນເອງກ່ອນ ຖ້າອາການບໍ່ດີຂຶ້ນແມ່ນຈະໄປຫາສຸກສາລາຂັ້ນບ້ານ ຫຼື ໂຮງໝໍເມືອງ ແລະ ໂຮງໝໍແຂວງຕາມລຳດັບຂອງການເຈັບເປັນ. ນອກນີ້ຍັງໃຊ້ຢາພື້ນເມືອງ ທີ່ຫາໄດ້ຕາມທຳມະຊາດທ້ອງຖິ່ນ, ຈາກຜູ້ທີ່ຮູ້ ແລະ ເຄີຍປິ່ນປົວ ຢູ່ພາຍໃນໝູ່ບ້ານດຽວກັນ ແລະ ບາງບ້ານຍັງຮັກສາຕາມວິທີທາງໄສຍະສາດທີ່ເຄີຍນັບຖືກັນມາ.

4.5.5 ຂໍ້ມູນທາງເສດຖະກິດ

4.5.5.1 ການຈ້າງງານໃນທ້ອງຖິ່ນ

ໃນປະຈຸບັນເມືອງດາກຈຶງ ມີພົນລະເມືອງໃນອາຍຸອອກແຮງງານທັງໝົດ 18,274 ຄົນ, ຍິງ 9,605 ຄົນ ໃນນີ້ ແຮງງານທີ່ຜ່ານ ການຝຶກອົບຮົມຕາມສາຂາວິຊາອາຊີບທັງໝົດ 6 ຄົນ, ຍິງ 09 ຄົນ, ເຊິ່ງໄດ້ແຍກ ຕາມຂະແໜງການຄື: ຂະແໜງກະສິກຳມີ 21 ຄົນ, ຍິງ 06 ຄົນ, ຂະແໜງການບໍລິຫານ, ບັນຊີ, ການຕະຫຼາດ, ປຸງແຕ່ງອາຫານລວມມີ 14 ຄົນ, ຍິງ 3 ຄົນ. ສຳລັບການຈ້າງງານໃນເຂດພື້ນທີ່ໂຄງການ ຈາກການລົງເກັບກຳຂໍ້ມູນບ້ານເຫັນວ່າ ການຈ້າງງານຂອງປະຊາຊົນໃນເຂດນີ້ແມ່ນມີໜ້ອຍ ເນື່ອງຈາກເປັນເຂດ ທີ່ບໍ່ມີໂຄງການລົງທຶນຈາກຕ່າງປະເທດຫຼາຍ ແລະ ປະຊາຊົນສ່ວນຫຼາຍແມ່ນມີ ອາຊີບເຮັດກະສິກຳ ເປັນຫຼັກ, ເຊິ່ງເປັນທຸລະກິດສະເພາະຂອງແຕ່ລະຄອບຄົວ ເປັນຕົ້ນ ແມ່ນ ການເຮັດໄຮ່, ເຮັດນາ, ແລະ ເຮັດສວນກາເຟ, ສ່ວນອາຊີບສຳຮອງໃນບາງຄອບຄົວກໍ່ເຂົ້າເປັນແຮງງານຊ່ວຍເຫຼືອວຽກງານໃຫ້ແກ່ພັກ ແລະ ລັດຖະບານ, ເປັນຕົ້ນແມ່ນ: ພະນັກງານລັດ, ຫ້ອງການ, ພະນັກງານຄູ, ທ່ານໝໍ, ພະຍາບານ ຫຼື ກຳມກອງສຳລັບຜູ້ທີ່ເປັນທະຫານປ້ອງກັນອານາເຂດໃນພາກສ່ວນຕ່າງໆຂອງເມືອງ ແລະ ແຂວງ. ນອກນັ້ນ, ບາງຄອບຄົວທີ່ມີທຶນຮອນກໍ່ຈະມີການຫັນມາເຮັດອາຊີບເສີມໂດຍການເຮັດງານການບໍລິການ ອື່ນໆເຊັ່ນ: ເຮືອນພັກ, ຮ້ານອາຫານ, ຮ້ານຂາຍເຄື່ອງຍ່ອຍ ແລະ ອື່ນໆ.

4.5.5.2 ລາຍໄດ້ຂອງຄົວເຮືອນ

ອີງຕາມການລົງເກັບກຳຂໍ້ມູນດ້ານເສດຖະກິດ - ສັງຄົມ ຂອງບັນດາບ້ານໃນເຂດໂຄງການ ການດຳລົງຊີວິດຂອງປະຊາຊົນໃນບັນດາບ້ານ ການຜະລິດກະສິກຳ (ປູກຝັງ - ລ້ຽງສັດ) ແມ່ນຖືເປັນອາຊີບຫຼັກໂດຍມີພື້ນຖານທາງດ້ານພູມສັນຖານທີ່ດີມີຄວາມສະດວກ ແລະ ເໝາະສົມ, ໂດຍສະເພາະແມ່ນການປູກເຂົ້າ ແລະ ປູກກາເຟ ເຊິ່ງແມ່ນເປັນລາຍໄດ້ຫຼັກຂອງແຕ່ລະຄອບຄົວໃນທ້ອງຖິ່ນ ແລະ ນອກຈາກນີ້, ບາງຄອບຄົວກໍ່ມີລາຍໄດ້ຈາກເງິນອຸດໜຸນເປັນຕົ້ນ ແມ່ນ ພະນັກງານຄູ, ທະຫານ ແລະ ພະນັກງານຕ່າງໆ ພ້ອມດຽວກັນນັ້ນ ກໍ່ມີອາຊີບ ເຮັດກະສິກຳໄປພ້ອມໆກັນ.

4.5.5.3 ຄ່າຄອງຊີບ

ດັ່ງທີ່ກ່າວມາຂ້າງເທິງບັນດາບ້ານໃນເຂດໂຄງການແມ່ນຕັ້ງຢູ່ເຂດເທດສະບານເມືອງ ແລະ ອ້ອມຂ້າງເຊິ່ງບໍ່ໄກຈາກເທດສະບານເມືອງຫຼາຍ ການເຂົ້າຫາກໍ່ຂ້ອນຂ້າງທີ່ສະດວກພໍສົມຄວນ, ດັ່ງນັ້ນ ລາຄາສິນຄ້າຕ່າງໆກໍ່ສູງພໍສົມຄວນ ອາດເວົ້າໄດ້ວ່າທຽບເທົ່າກັບລາຄາສິນຄ້າໃນທ້ອງຕະຫຼາດໃນເທດສະບານເມືອງ ແຕ່ຍ້ອນບັນດາບ້ານໃນເຂດໂຄງການບາງບ້ານແມ່ນມີຄວາມສາມາດໃນການຜະລິດສິນຄ້າກະສິກຳເປັນຕົ້ນແມ່ນກາເຟ ແລະ ພືດຜັກຕ່າງໆ ສົ່ງເຂົ້າມາຕະຫຼາດໃນເທດສະບານເມືອງ ຍ້ອນທ່າແຮງຂອງການຜະລິດຂອງບັນດາບ້ານດັ່ງກ່າວທີ່ມີຢູ່ຈຶ່ງເຮັດໃຫ້ໄດ້ປຽບໃນລາຄາພືດຜັກບາງຊະນິດ. ອີງຕາມການສຳພາດຂໍ້ມູນບ້ານໃນພື້ນທີ່ໂຄງການ ແລະ ໃກ້ຄຽງໂຄງການ. ການດຳລົງຊີວິດຂອງປະຊາຊົນແມ່ນອາໄສການເຮັດກະສິກຳເປັນຫຼັກເຊັ່ນ: ເຮັດສວນກາເຟ, ປູກພືດຜັກຊະນິດຕ່າງໆ. ນອກນີ້ກໍ່ມີການລ້ຽງສັດນ້ອຍໃຫຍ່, ດັ່ງນັ້ນ ຈຶ່ງເຮັດໃຫ້ປະຊາຊົນໃຊ້ຈ່າຍສະເພາະສິ່ງທີ່ຈຳເປັນໃນຄອບຄົວເທົ່ານັ້ນເຊັ່ນ: ຄ່າໃຊ້ຈ່າຍຫຼັກໆແມ່ນການລົງທຶນເຮັດກະສິກຳປູກຝັງ, ຢາປົວພະຍາດ, ການຮຽນຂອງລູກຫຼານ, ເຄື່ອງນຸ່ງຫົ່ມ, ວັດສະດຸກໍ່ສ້າງທີ່ຈຳເປັນ, ງານປະເພນີຕ່າງໆ, ຍານພາຫະນະ, ເຄື່ອງໃຊ້ສອຍຄົວເຮືອນທີ່ຈຳເປັນ, ແລະ ເຄື່ອງໃຊ້ອື່ນໆທີ່ມີຄວາມຈຳເປັນ.

4.5.5.4 ສິດການເປັນເຈົ້າຂອງທີ່ດິນ

ສິດໃນການຄອບຄອງ ແລະ ນຳໃຊ້ທີ່ດິນຂອງບັນດາບ້ານທີ່ຢູ່ໃນເຂດພື້ນທີ່ໂຄງການ ອີງຕາມການສຳຫຼວດເກັບຂໍ້ມູນໂດຍການສອບຖາມນຳບ້ານ ໃນເດືອນກັນຍາ 2020 ແລະ ອີງຕາມຂໍ້ມູນບົດລາຍງານແຜນຈັດສັນນຳໃຊ້ດິນ ແລະ ປ່າໄມ້ ຈາກຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂອງເມືອງ ເຫັນວ່າ ທັງ 5 ບ້ານ ໄດ້ມີການຈັດສັນການແບ່ງດິນ ແລະ ປ່າແລ້ວ. ເຖິງຢ່າງໃດກໍ່ຕາມໃນບົດລາຍງານດັ່ງກ່າວ ບໍ່ໄດ້ມີການລະບຸການແບ່ງດິນນຳໃຊ້ແບບລະອຽດ ໃຫ້ແຕ່ລະຄົວເຮືອນເທື່ອ, ບົດລາຍງານໄດ້ລະບຸເຖິງຂອບເຂດດິນ ແລະ ປ່າໄມ້ ໂດຍລວມຂອງບ້ານເທົ່ານັ້ນ, ເຊິ່ງໃນນັ້ນໄດ້ມີການໄຈ້ແຍກດິນ ແລະ ປ່າໄມ້ຂອງແຕ່ລະປະເພດທີ່ນອນຢູ່ໃນຂອບເຂດຂອງບ້ານ. ສິດໃນການຄອບຄອງທີ່ດິນແມ່ນມີພຽງໃບນຳໃຊ້ ຫຼື ໃບເສຍພາສີທີ່ດິນເທົ່ານັ້ນ. ເຊິ່ງປັດຈຸບັນໃນບັນດາບ້ານໂດຍສະເພາະແມ່ນບ້ານເຂດອ້ອມຂ້າງເທດສະບານແມ່ນພວມມີໂຄງການອອກໃບຕາດິນຂອງທາງແຂວງ, ທາງເມືອງລົງໄປສຳຫຼວດ - ຈັດສັນອອກໃບຕາດິນໃຫ້ໃນບາງບ້ານ ຫຼື ບາງ ຄົວເຮືອນ.

4.5.5.5 ທຸລະກິດທ້ອງຖິ່ນ

ຈາກການລົງສຳຫຼວດເກັບກຳຂໍ້ມູນໃນສະພາບພື້ນທີ່ຕົວຈິງທັງ 5 ບ້ານໃນເຂດໂຄງການທີ່ສະເໜີນີ້ ແມ່ນເຫັນວ່າ ທຸລະກິດໃນທ້ອງຖິ່ນໃນເຂດນີ້ ແມ່ນມີລັກສະນະທີ່ຄ້າຍຄືກັນ ເປັນຕົ້ນແມ່ນການເຮັດກະສິກຳ ປູກຝັງ ແລະ ລ້ຽງສັດ ເປັນຫຼັກ ເນື່ອງຈາກຄວາມເໝາະສົມທາງດ້ານສະພາບພູມສັນຖານທີ່ມີລັກສະນະເປັນເຂດພູພຽງ-ພູສູງ ແລະ ເຂດທົ່ງພຽງ, ຮອງລົງມາກໍ່ແມ່ນການເຮັດທຸລະກິດຂະໜາດນ້ອຍ ກໍຄືການຄ້າຂາຍເຄື່ອງຍ່ອຍ, ຮ້ານສ້ອມແປງລົດ ແລະ ອື່ນໆ.

ຮູບທີ 4-9: ທຸລະກິດທ້ອງຖິ່ນໃນເຂດພື້ນທີ່ໂຄງການ

4.5.5.6 ກິດຈະກຳການຜະລິດ

<u>ການປູກຝັງ</u>

ອີງຕາມແຜນພັດທະນາເສດຖະກິດ-ສັງຄົມ ຂອງເມືອງດາກຈຶງ ເຫັນວ່າພາຍໃນເມືອງມີເນື້ອທີ່ປູກພືດສະບຽງອາຫານ 1,405 ຮຕ ຜົນຜະລິດໄດ້ 5,651 ໂຕນ, ໃນນັ້ນ ປູກເຂົ້າ 1,316 ຮຕ, ຜົນຜະລິດໄດ້ 4,230 ໂຕນ/ປີ, ເນື້ອທີ່ປູກເຂົ້ານາປີ 854 ຮຕ, ຜົນຜະລິດ 3,076 ໂຕນ/ປີ, ເນື້ອທີ່ປູກເຂົ້ານາແຊງ 229 ຮຕ, ຜົນຜະລິດໄດ້ 689 ໂຕນ/ປີ, ເນື້ອທີ່ໄຮ່ໝຸນວຽນ 232 ຮຕ, ຜົນຜະລິດໄດ້ 464 ໂຕນ/ປີ, ເນື້ອທີ່ປູກສາລີ 57 ຮຕ, ຜົນຜະລິດໄດ້ 125 ໂຕນ/ປີ, ເນື້ອທີ່ປູກມັນຕົ້ນ 488 ຮຕ, ຜົນຜະລິດໄດ້ 3,410 ໂຕນ/ປີ, ເນື້ອທີ່ປູກເຜືອກ 33.50 ຮຕ, ຜົນຜະລິດໄດ້ 251.25 ໂຕນ/ປີ, ເນື້ອທີ່ປູກພືດຜັກ 313 ຮຕ, ຜົນຜະລິດໄດ້ 655 ໂຕນ/ປີ, ເນື້ອທີ່ປູກຖົ່ວດິນ 6.50 ຮຕ, ຜົນຜະລິດໄດ້ 7.80 ໂຕນ/ປີ, ເນື້ອທີ່ປູກໝາກນັດ 20 ຮຕ, ຜົນຜະລິດໄດ້ 168 ໂຕນ/ປີ, ເນື້ອທີ່ປູກອ້ອຍ 5.3 ຮຕ , ຜົນຜະລິດໄດ້ 26.5 ໂຕນ/ປີ.

ສຳລັບ 5 ບ້ານເຂດພື້ນທີ່ໂຄງການ ອີງຕາມການສຳຫຼວດພື້ນທີ່ຕົວຈິ່ງ ເຫັນວ່າ ປະຊາຊົນສ່ວນຫຼວຍແມ່ນມີອາຊີບເຮັດກະສິກຳປູກຝັງລ້ຽງສັດເປັນຫຼັກ ເປັນຕົ້ນແມ່ນການເຮັດໄຮ່, ເຮັດນາ, ເຮັດສວນກາເຟ ແລະ ການປູກພືດຕ່າງໆ, ບາງຄອບຄົວແມ່ນສາມາດນຳໄປຂາຍເພື່ອເປັນລາຍຮັບໄດ້, ແຕ່ບາງຄອບຄົວແມ່ນພໍແຕ່ກຸ້ມກິນພາຍໃນຄອບຄົວເທົ່ານັ້ນ.

ຮູບທີ 4-10: ການກະສິກຳໃນເຂດພື້ນທີ່ໂຄງການ

ການລ້ຽງສັດ

ເຊິ່ງນອກຈາກການປູກພືດກະສິກຳທີ່ໄດ້ກ່າວມາຂ້າງເທິງນັ້ນແລ້ວ ການລ້ຽງສັດກໍ່ເປັນສິ່ງໜຶ່ງທີ່ສຳຄັນທີ່ຄຽງຄູ່ກັບການກະສິກຳ ໂດຍປົກກະຕິປະຊາຊົນບາງຄອບຄົວລ້ຽງເພື່ອເປັນອາຫານສະເພາະພາຍໃນຄົວເຮືອນ, ບາງຄອບຄົວລ້ຽງເພື່ອຂາຍ. ການລ້ຽງສັດກໍ່ເປັນທ່າແຮງໜຶ່ງໃນການພັດທະນາເສດຖະກິດຂອງເມືອງ, ບັນດາບ້ານທີ່ຢູ່ໃນເຂດພື້ນທີ່ໂຄງການ 5 ບ້ານ ແມ່ນມີການລ້ຽງສັດເປັນຈຳນວນໜຶ່ງເຊັ່ນ: ງົວ, ຄວາຍ, ໝູ, ເປັດ, ໄກ່. ເຊິ່ງການລ້ຽງກໍ່ຄືກັບເຂດອື່ນໆຄືສ່ວນຫຼວຍແມ່ນປ່ອຍຫາກິນຕາມທຳມະຊາດ ຫຼື ປ່ອຍຕາມເຂດນອກບ້ານ ແລະ ຕາມປ່າທີ່ມີທົ່ງຫຍ້າຫຼາຍ.

ຕາຕະລາງ 4-17: ຈຳນວນສັດລ້ຽງຂອງປະຊາຊົນໃນເຂດພື້ນທີ່ໂຄງການ

ລ/ດ	ເມືອງ	ບ້ານ	ຈຳນວນຄອບຄົວ	ຈຳນວນສັດລ້ຽງຂອງປະຊາຊົນ (ໂຕ)				
				ຄວາຍ	ງົວ	ໝູ	ແບ້	ສັດປີກ (ເປັດ+ໄກ່)
2	ດາກຈຶງ	ດາກບອງ	244	132	193	55	20	373
3		ດາກຕະອອກນ້ອຍ	44	50	7	10	5	50
4		ງອນດອນ	99	120	19	0	0	120
5		ດາກມອນ	84	30	10	5	0	0
6		ດາກໂດມ	56	84	27	0	11	421
ລວມ			527	416	256	70	36	964

ແຫຼ່ງຂໍ້ມູນ: ຈາກການສຳພາດອຳນາດການປົກຄອງບ້ານ ເດືອນກັນຍາ ປີ 2020.

ຮູບທີ 4-11: ການລ້ຽງສັດໃນເຂດພື້ນທີ່ໂຄງການ

4.5.6 ສິ່ງອຳນວຍຄວາມສະດວກໂຄງລ່າງພື້ນຖານ

ສິ່ງອຳນວຍຄວາມສະດວກດ້ານພື້ນຖານໂຄ່ງລ່າງຂອງ ເມືອງດາກຈຶງ ທີ່ນອນຢູ່ໃນເຂດ ແຂວງເຊກອງ ເຊິ່ງເປັນແຂວງທີ່ຢູ່ ພາກໃຕ້ ຂອງປະເທດລາວ ແລະ ສິ່ງອຳນວຍຄວາມສະດວກຕ່າງໆມີທ່ວງທ່າຂະຫຍາຍຕົວພາຍໃນເມືອງ ພໍສົມຄວນ ໂດຍສະເພາະ ແມ່ນບັນດາບ້ານໃນໂຄງການທີ່ຂຶ້ນກັບເຂດເທດສະບານເມືອງ ມີຄວາມສະດວກສະບາຍໃນຫຼາຍໆດ້ານຢູ່ແລ້ວເປັນຕົ້ນແມ່ນ: ເສັ້ນທາງຂອງທຸກບ້ານແມ່ນເຂົ້າເຖິງໄດ້ສະດວກສະບາຍ, ກຳລັງມີການຂະຫຍາຍຕົວທາງດ້ານເສດຖະກິດ - ສັງຄົມໄປເທື່ອລະກ້າວ, ສຳລັບບັນດາບ້ານຂອງເຂດໂຄງການ ແມ່ນຢູ່ໄກຈາກ

ເຂດເທດສະບານເມືອງ ເຫັນວ່າ ບາງສິ່ງທີ່ຈຳເປັນຕໍ່ເຂດບ້ານນັ້ນໆແມ່ນຍັງມີບໍ່ທັນຄົບຖ້ວນພໍປານໃດເຊັ່ນວ່າ: ຍັງມີເສັ້ນທາງ ດິນແດງ ເຖິງວ່າຈະເຂົ້າໄດ້ສະດວກ, ແຕ່ວ່າສະພາບປັດຈຸບັນແມ່ນຍັງມີການເປ່ເພໃນບາງຈຸດ, ບາງບ້ານກໍ່ຍັງບໍ່ທັນມີ ໂຮງຮຽນມັດທະຍົມຕອນຕົ້ນ - ຕອນປາຍ ທີ່ໃຊ້ໄອ້ຮອງຮັບ ຈຳນວນນັກຮຽນທີ່ເພີ່ມຂຶ້ນມາເລື້ອຍໆໃນແຕ່ລະປີ, ບາງບ້ານທີ່ຢູ່ຫ່າງໄກຈາກໂຮງໝໍເມືອງ ໃນກໍລະນີຈຳເປັນກໍ່ຍັງບໍ່ມີ ສຸກສາລາ ໄວ້ໃຫ້ການບໍລິການໃນຍາມສຸກເສີນ, ສ່ວນລາຍລະອຽດຂອງສິ່ງອຳນວຍຄວາມສະດວກຕ່າງໆຂອງແຕ່ລະບ້ານ ແມ່ນຈະສະແດງອອກໄວ້ລຸ່ມນີ້:

ຕາຕະລາງ 4-18: ສິ່ງອຳນວຍຄວາມສະດວກໂຄງລ່າງພື້ນຖານຂອງແຕ່ລະບ້ານ

ລ/ດ	ບ້ານ / ສິ່ງອຳນວຍຄວາມສະດວກ	ໂຄງການສາຍສົ່ງ 500 KV ຂອງໂຄງການພະລັງງານລົມ 600 MW ເມືອງ ດາກຈຶງ				
		ດາກບອງ	ຕະອອກນ້ອຍ	ງອນດອນ	ດາກມອນ	ດາກໂດມ
1	ໂຮງຮຽນອະນຸບານ	ມີ	ບໍ່ມີ	ມີ	ບໍ່ມີ	ບໍ່ມີ
2	ໂຮງຮຽນປະຖົມ	ມີ	ມີ	ມີ	ມີ	ມີ
3	ໂຮງຮຽນມັດທະຍົມຕົ້ນ	ບໍ່ມີ	ບໍ່ມີ	ບໍ່ມີ	ມີ	ບໍ່ມີ
4	ໂຮງຮຽນມັດທະຍົມປາຍ	ມີ	ບໍ່ມີ	ບໍ່ມີ	ບໍ່ມີ	ບໍ່ມີ
5	ໂຮງໝໍ / ສຸກສາລາ	ບໍ່ມີ	ບໍ່ມີ	ບໍ່ມີ	ມີ	ບໍ່ມີ
6	ໄຟຟ້າ	ທຸກບ້ານແມ່ນມີລະບົບຕາຂ່າຍໄຟຟ້າໃຊ້ເກືອບທຸກຄົວເຮືອນ				
7	ນ້ຳດື່ມ	ນ້ຳດື່ມຕຸກ/ນ້ຳລີນ				
	ນ້ຳໃຊ້	ນ້ຳນ້ຳບາດານ//ນ້ຳລີນ				
8	ຫ້ອງການບ້ານ	ມີ	ບໍ່ມີ	ມີ	ມີ	ບໍ່ມີ
9	ຊຸມລະປະທານ	ບໍ່ມີ	ບໍ່ມີ	ບໍ່ມີ	ບໍ່ມີ	3
10	ໂຮງສີເຂົ້ານ້ອຍ	ບໍ່ມີ	5	3	6	3
11	ຮ້ານຂາຍເຄື່ອງຍ່ອຍ	39	ບໍ່ມີ	4	7	ບໍ່ມີ
12	ຮ້ານອາຫານ ແລະ ຮ້ານກິນດື່ມນ້ອຍ	2	ບໍ່ມີ	ບໍ່ມີ	ບໍ່ມີ	ບໍ່ມີ
13	ຮ້ານສ້ອມແປງ	2	ບໍ່ມີ	ບໍ່ມີ	ບໍ່ມີ	ບໍ່ມີ
14	ຕະຫຼາດ	1	ບໍ່ມີ	ບໍ່ມີ	ບໍ່ມີ	ບໍ່ມີ
15	ລະບົບສື່ສານ	ທຸກໝູ່ບ້ານແມ່ນມີ ສັນຍານໂທລະສັບທຸກເຄືອຂ່າຍ				
16	ຫ້ອງນ້ຳ (ວິດຖ່າຍ)	ສ່ວນຫຼາຍແມ່ນ ມີ ແຕ່ກໍ່ມີບາງບ້ານຍັງບໍ່ມີ				
17	ວັດ	ບໍ່ມີ	ບໍ່ມີ	ບໍ່ມີ	ບໍ່ມີ	ບໍ່ມີ
18	ເສັ້ນທາງ	ດິນແດງ ແລະ ປູຢາງ				
19	ເຂດປ່າຊ້ຳ	ມີ	ມີ	ມີ	ມີ	ມີ
20	ເຂດສະຫງວນບ້ານ	ມີ	ບໍ່ມີ	ບໍ່ມີ	ບໍ່ມີ	ບໍ່ມີ

ແຫຼ່ງຂໍ້ມູນຈາກ: ການສຳພາດອຳນາດການປົກຄອງບ້ານ ເດືອນ ກັນຍາ 2020

4.5.6.1 ຖະໜົນຫົນທາງ

ໃນໄລຍະທີ່ຜ່ານມີທາງພາກລັດ ກໍໄດ້ສົ່ງເສີມຍົກລະດັບປັບປຸງກໍ່ສ້າງ ແລະ ສ້ອມແປງເສັ້ນທາງ, ເຊິ່ງມີລະບົບຕາໜ່າງເສັ້ນທາງຄົມມະນາຄົມທີ່ເປັນວົງແຫວນເຊື່ອມຈອດກັບບັນດາເມືອງທີ່ມີຊາຍແດນຕິດກັບທັງ 4 ທິດພາຍໃນ

ແລະ ຕ່າງປະເທດ, ເຊິ່ງຕົວເມືອງ ມີເສັ້ນທາງເຂົ້າເຖິງທຸກບ້ານ ກວມເອົາ 100 %, ໃນນັ້ນເສັ້ນທາງທີ່ທຽວໄດ້ສອງ ລະດູ 39 ບ້ານ ເທົ່າກັບ 72.22% ແລະ ເສັ້ນທາງທຽວໄດ້ລະດູດຽວ 15 ບ້ານ ເທົ່າກັບ 27.78% ຂອງຈຳນວນ ບ້ານທັງໝົດ, ທົ່ວເມືອງມີເສັ້ນທາງ 66 ເສັ້ນ, ເສັ້ນທາງຫຼວງແຫ່ງຊາດ ເລກທີ 16B ມີ 1 ເສັ້ນ, ເສັ້ນທາງຫຼວງຂອງ ເມືອງ 5 ເສັ້ນ, ເສັ້ນທາງເທດສະບານ 29 ເສັ້ນ, ເສັ້ນທາງຊົນນະບົດ 24 ເສັ້ນ, ເສັ້ນທາງສະເພາະ 7 ເສັ້ນ ແລະ ມີ ຄວາມຍາວທັງໝົດ 743 ກິໂລແມັດ.

ຕາມການລົງສຳຫຼວດເກັບກຳຂໍ້ມູນ ສຳລັບໃນເຂດພື້ນທີ່ໂຄງການທັງ 5 ບ້ານ ເຫັນວ່າ ເສັ້ນທາງ ແມ່ນເປັນໂຄງລ່າງ ພື້ນຖານຢ່າງໜຶ່ງທີ່ມີສ່ວນສຳຄັນເພື່ອໃຊ້ໃນການເຊື່ອມຕໍ່ ແລະ ຕິດຕໍ່ປະສານງານກັນຂອງປະຊາຊົນແຕ່ລະເມືອງທີ່ ພົວພັນທາງດ້ານທຸລະກິດ ແລະ ແລກປ່ຽນສິນຄ້າທັງພາຍໃນ ແລະ ຕ່າງປະເທດ, ສະພາບເສັ້ນທາງຂອງບ້ານ ຕາມ ການລົງເກັບກຳຂໍ້ມູນໂຕຈິງ ແລະ ສຳພາດນາຍບ້ານໃນພື້ນທີ່ໂຄງການແມ່ນ ສັງເກດທັງ 5 ບ້ານແມ່ນມີ 3 ບ້ານທີ່ຕັ້ງ ຢູ່ຕິດຕາມເສັ້ນທາງຫຼວງ 16B ຄື: ບ້ານດາກບອງ, ງອນດອນ ແລະ ດາກມອນ. ນອກຈາກນີ້ ບ້ານດາກຕະອອກນ້ອຍ ແລະ ບ້ານດາກໂດມ ແມ່ນມີເສັ້ນທາງເຂົ້າບ້ານເປັນທາງດິນແດງ ທີ່ສາມາດທຽວໄດ້ 2 ລະດູ ເຊິ່ງກວ້າງປະມານ 5 - 6 ແມັດ

ຮູບທີ 4-12: ສະພາບເສັ້ນທາງຂອງບ້ານໃນເຂດພື້ນທີ່ໂຄງການ

4.5.6.2 ການເດີນເຮືອ ແລະ ທ່າເຮືອ

ອີງໃສ່ສະພາບຕົວຈິງທາງດ້ານອຸທົກກະສາດ ແລະ ພູມສັນຖານຂອງແມ່ນ້ຳທີ່ຢູ່ເຂດບັນດາບ້ານໃນເຂດໂຄງການ ກໍມີ ແຫຼ່ງນ້ຳຢູ່ຫຼາຍແຫ່ງ ເປັນຕົ້ນແມ່ນ ແມ່ນ້ຳເຊກະໝານ ແລະ ເຫັນວ່າມີຄວາມກວ້າງແຄບແຕກຕ່າງກັນໃນແຕ່ລະ ບ່ອນ, ມີບາງບ່ອນເລິກ-ບາງບ່ອນຕື້ນ, ບາງບ່ອນນ້ຳໄຫຼແຮງຕາມແກ້ງ ແລະ ຫາດ, ນ້ຳໄຫຼຄ່ອຍ-ໄຫຼເລິກຕາມວັງ ນ້ອຍ-ໃຫຍ່. ດັ່ງນັ້ນ, ການເດີນເຮືອແມ່ນມີຢູ່ເຂດບ້ານ ຕະອອກນ້ອຍ ທີ່ນ້ຳເຊຂະໝານໄຫຼຜ່ານ ເຊິ່ງສ່ວນຫຼາຍແມ່ນ ການເດີນເຮືອເພື່ອການຫາປາເທົ່ານັ້ນ.

4.5.6.3 ສະໜາມບິນ

ໃນປັດຈຸບັນໃນເຂດພື້ນທີ່ໂຄງການ ແລະ ເຂດໃກ້ຄຽງ ແຂວງເຊກອງ ແມ່ນບໍ່ທັນມີສະໜາມບິນເທື່ອ ແລະ ການ ຂົນສົ່ງໃນເຂດດັ່ງກ່າວໂດຍຫຼັກແລ້ວແມ່ນຂົນສົ່ງທາງບົກ.

4.5.6.4 ສາຍສົ່ງໄຟຟ້າ

ເມືອງດາກຈຶງ ໄດ້ຂະຫຍາຍຕາໜ່າງໄຟຟ້າລົງສູ່ເຂດຊົນນະບົດ ແລະ ບ້ານທີ່ຢູ່ລຽບສາຍທາງ ເຮັດໃຫ້ໃນປະຈຸບັນມີອັດຕາການຊົມໃຊ້ໄຟຟ້າ 34 ບ້ານ ແລະ ເມືອງດາກຈຶງກໍເປັນເມືອງໜຶ່ງທີ່ຊື້ໄຟຟ້າຈາກປະເທດ ສສ ຫວຽດນາມ ແຕ່ມາຮອດປະຈຸບັນນຳໃຊ້ໄຟຟ້າທີ່ຜະລິດຢູ່ພາຍໃນແຂວງ ແຕ່ຍັງມີ 1 ຈຸດທີ່ຍັງໃຊ້ໄຟຟ້າຈາກປະເທດ ສສ ຫງວດນາມ ກໍຄື ດ່ານດາກຕະອອກ ຍ້ອນສັນຍາຊື້-ຂາຍຍັງບໍ່ທັງສິ້ນສຸດ. ເຖິງຢ່າງໃດກໍຕາມ ເມືອງດາກຈຶງກໍມີທ່າແຮງດ້ານຊັບພະຍາກອນນ້ຳທີ່ອຸດົມສົມບູນ ແລະ ມີແມ່ນ້ຳຫຼາຍສາຍ ທີ່ສາມາດສ້າງເຂື່ອນໄຟຟ້າຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫ່ຍຫຼາຍແຫ່ງ ເປັນຕົ້ນແມ່ນ ເຂື່ອນໄຟຟ້າ ອີມູນ ທີ່ມີກຳລັງການຕິດຕັ້ງ 133 ເມກາວັດ, ເຂື່ອນໄຟຟ້ານ້ຳບີ (1, 2, 3) ມີກຳລັງຕິດຕັ້ງ 135 ເມກາວັດ, ເຂື່ອນໄຟຟ້າ ເຊຂະໝານ 3 ທີ່ມີກຳລັງການຕິດຕັ້ງ 250 ເມກາວັດ ແລະ ໃນປະຈຸບັນແມ່ນມີສາຍສົ່ງໄຟຟ້າແຮງສູງ 115 ກວ ແລ່ນຜ່ານເຂດທີ່ຈະສະເໜີພັດທະນາໂຄງການ. ນອກຈາກນີ້ ສາຍສົ່ງໄຟຟ້າແຮງກາງ 22 ກວ ແມ່ນ ຕັ້ງຢູ່ລຽບຕາມແຄມເສັ້ນທາງ ທຸກສາຍ ທີ່ຜ່ານແຕ່ລະບ້ານ.

4.5.6.5 ທ່ໍສົ່ງ

ເຂດພື້ນທີ່ໂຄງການແມ່ນຍັງບໍ່ທັນມີລະບົບທ່ໍນ້ຳປະປາ, ລະບົບທ່ໍ ຂ້າງທາງ ແມ່ນມີພຽງທ່ໍລະບາຍໃນບາງຈຸດ ແລະ ນອກຈາກນີ້ ກ່ໍມີພຽງທ່ໍສຳລັບສາຍ ໄຍແກ້ວ ຢູ່ຕາມຂ້າງທາງຫຼວງແຫ່ງຊາດ 16B ເທ່ົານັ້ນ.

4.5.6.6 ໂຮງໝໍ ແລະ ສຸກສາລາ

ທົ່ວເມືອງດາກຈຶງມີໂຮງໝໍເມືອງ 1 ແຫ່ງ ແລະ ມີສຸກສາລາ 10 ແຫ່ງ, ມີຕຽງນອນ 48 ຕຽງ, ມີຮ້ານຂາຍຢາ 3 ຮ້ານ , ມີຖົງຢາປະຈຳບ້ານ 25 ບ້ານ, ສ້າງ ອສບ ບ້ານ 54 ບ້ານ, ສ່ວນບ້ານໃນເຂດພື້ນທີ່ໂຄງການທັງ 5 ບ້ານ ແມ່ນ ມີພຽງບ້ານດາກມອນ ທີ່ມີສຸກສາລາປະຈຳບ້ານ, ສ່ວນບ້ານອື່ນແມ່ນບໍ່ມີສຸກສາລາ ເວລາເຈັບເປັນແມ່ນອາໄສໄປຮັກສາຢູ່ສຸກສາລາທີ່ຢູ່ໃກ້ ແລະ ໄປຮັກສາຢູ່ໂຮງໝໍເມືອງ.

4.5.6.7 ໂຮງຮຽນ ແລະ ສູນກາງການສຶກສາ

ໃນເຂດພື້ນທີ່ໂຄງການ ເມືອງດາກຈຶງ ແຕ່ລະບ້ານທັງ 5 ບ້ານແມ່ນມີໂຮງຮຽນອະນຸບານ ແລະ ໂຮງຮຽນຊັ້ນປະຖົມ ປ1 ຮອດ ປ 5 ແລະ ມີບ້ານດາກບອງ ທີ່ມີໂຮງຮຽນຊັ້ນມັດທະຍົມ 1 ແຫ່ງ ເນື່ອງຈາກເປັນບ້ານທີ່ຢູ່ເຂດເທດສະບານເມືອງ.

4.5.6.8 ວັດ ແລະ ສຸສານ (ປ່າຊ້າ)

ວັດ ຫຼື ປ່າຊ້າ ແມ່ນເປັນອົງປະກອບໜຶ່ງທີ່ສຳຄັນ ທາງສາສະໜາ ໂດຍສະເພາະໃນບັນດາບ້ານຕ່າງໆໃນເຂດພື້ນທີ່ໂຄງການ ແມ່ນເຫັນວ່າປະກອບດ້ວຍປະຊາຊົນຫຼາຍຊົນເຜ່ົາ ເປັນຕົ້ນແມ່ນ ເຜ່ົາຕຣຽງ, ເຜ່ົາແຢະ, ເຜ່ົາກະຕູ ແລະ ເຜ່ົາລາວ ເຊິ່ງປະຊາຊົນສ່ວນຫຼາຍແມ່ນນັບຖືຜີ ຮອງລົງມາແມ່ນນັບຖືສາສະໜາພຸດ ແລະ ຕາມການລົງເກັບກຳຂໍ້ມູນໃນແຕ່ລະບ້ານ ແມ່ນມີຂອບເຂດພື້ນທີ່ທີ່ເປັນເຂດປ່າຊ້າ ເຊິ່ງກໍເປັນສ່ວນສຳຄັນທາງດ້ານສາສະໜາ ຫຼື ຮີດຄອງປະເພນີໃນເຂດດັ່ງກ່າວ.

4.5.7 ແຫ່ຼງນ້ຳ, ການນຳໃຊ້ ແລະ ການສະໜອງ

ຈາກຂໍ້ມູນການລົງສຳຫຼວດ ແລະ ເກັບກຳຂໍ້ມູນຕົວຈິງໃນເຂດເມືອງດາກຈຶງ ໃນເຂດໂຄງການທັງໝົດ 5 ບ້ານ ພາຍໃນພື້ນທີ່ໂຄງການ ແມ່ນສາມາດສັງລວມແຫ່ຼງນ້ຳໃຊ້ຂອງປະຊາຊົນແຕ່ລະບ້ານ ແມ່ນເຫັນວ່າໄດ້ນຳໃຊ້ນ້ຳ ຈາກນ້ຳສ້າງ/ນ້ຳບາດານ ເປັນສ່ວນໃຫ່ຍ ແລະ ຮອງລົງມາ ແມ່ນນຳໃຊ້ນ້ຳລິນ ແລະ ນ້ຳຈາກແມ່ນ້ຳຕ່າງໆ ເປັນຫຼັກ. ການນຳ

ໃຊ້ນ້ຳຂອງປະຊາຊົນແຕ່ລະຄົວເຮືອນແມ່ນໃຊ້ເພື່ອແຕ່ງຢູ່ຄົວກິນ, ໃຊ້ອາບ, ໃຊ້ຊັກລ້າງ ແລະ ໃຊ້ບໍລິໂພກປະຈຳ ວັນ. ສຳລັບແຫຼ່ງນ້ຳທີ່ໃຊ້ເພື່ອດື່ມກິນຂອງປະຊາຊົນໃນເຂດເທດສະບານເມືອງແມ່ນຊົມໃຊ້ນ້ຳຕຸກຈາກໂຮງງານເພື່ອ ການບໍລິໂພກ ເນື່ອງຈາກການໃຊ້ນ້ຳຕຸກ ແມ່ນມີຄວາມສະດວກສະບາຍ, ມີຄວາມສະອາດ ແລະ ຖືກຫຼັກອະນາໄມ. ແຕ່ສຳລັບບາງຄອບຄົວທີ່ທຸກຍາກ ແລະ ຫ່າງໄກຈາກເຂດເທດສະບານເມືອງໃນບາງບ້ານ ແມ່ນເຫັນວ່າ ຍັງມີການ ໃຊ້ ນ້ຳບາດານ ຫຼື ນ້ຳລິນມາຕົ້ມເພື່ອດື່ມກິນ ສາເຫດຫຼັກກໍ່ແມ່ນມາຈາກການໄປສົ່ງນ້ຳຕຸກບໍ່ຮອດ ຫຼື ບໍ່ເປັນປະຈຳ, ບາງຄອບຄົວທີ່ທຸກຍາກກໍ່ບໍ່ຊື້ກິນ ຫຼື ບໍ່ມີເງິນຊື້ນ້ຳຕຸກ ເພື່ອບໍລິໂພກ.

4.5.8 ການຈັດການຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ

ໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລົມ 600 MW ເມືອງດາກຈຶງ ທີ່ໄດ້ສຶກສາໃນລະດັບ ຄວາມຍາວ ປະມານ 21ກມ ກໍ່ຄາດວ່າຈະມີສິ່ງເສດເຫຼືອ ເປັນຈຳນວນຫຼາຍ ໂດຍສະເພາະໃນຊ່ວງທີ່ມີການກໍ່ສ້າງ ເຊັ່ນ: ສິ່ງເສດເຫຼືອຈາກການກໍ່ສ້າງ, ສິ່ງເສດເຫຼືອທີ່ເປັນອັນຕະລາຍ ຈາກວັດສະດຸທີ່ບັນຈຸນ້ຳມັນ ຂອງເຄື່ອງກົນຈັກ ຕ່າງໆ, ແລະ ສິ່ງເສດເຫຼືອຕ່າງໆ ຈາກການນຳໃຊ້ປະຈຳວັນ ຂອງພະນັກງານ ແລະ ຄົນງານທີ່ເຂົ້າມາເຮັດວຽກກໍ່ສ້າງ ແລວສາຍສົ່ງຂອງໂຄງການ. ດັ່ງນັ້ນ, ມີຄວາມຈຳເປັນ ຈະຕ້ອງມີການກຳຈັດ ແລະ ມີບ່ອນຖິ້ມຂີ້ເຫຍື້ອຢ່າງຖືກວິທີ ໃນເຂດຂອງແຕ່ລະເມືອງໄດ້ມີການຈັດສັນໃຫ້.

ການກຳຈັດຂີ້ເຫຍື້ອ ຂອງແຕ່ລະຄົວເຮືອນຕາມການສຳພາດຂໍ້ມູນຕົວຈິງກັບປະຊາຊົນຍັງໃຊ້ວິທີການຈູດແບບບໍ່ມີ ການຄັດແຍກຄື: ມີການຈູດໂຮມກັນ ລະຫ່ວາງ ສິ່ງເສດເຫຼືອອັນຕະລາຍ (ຖ້ຽຢາງພາລະສະຕິກ) ແລະ ສິ່ງເສດເຫຼືອ ທົ່ວໄປ. ບາງຄອບຄົວກໍ່ນຳເອົາສິ່ງເສດເຫຼືອຕ່າງໆໄປຖິ້ມຊະຊາຍ ຢ່າງບໍ່ມີລະບຽບ, ບາງບ່ອນກໍ່ມີຄວາມສ່ຽງຕໍ່ ແຫຼ່ງນ້ຳທຳມະຊາດເຊັ່ນ: ຫ້ວຍນ້ຳທີ່ຢູ່ໃກ້ບ້ານ ເຊິ່ງເປັນອັນຕະລາຍຕໍ່ການອຸປະໂພກ ແລະ ບໍລິໂພກຂອງຊຸມຊົນ. ດັ່ງ ທີ່ກ່າວຂ້າງເທິງ, ໂຄງການກໍ່ສ້າງສາຍສົ່ງ ກໍ່ຈະມີສິ່ງເສດເຫຼືອເປັນຈຳນວນບໍ່ໜ້ອຍ ບວກກັບສິ່ງເສດເຫຼືອທີ່ມີຢູ່ແລ້ວ ໃນ ຕົວເມືອງ. ດັ່ງນັ້ນ, ຈຶ່ງເປັນໂອກາດທີ່ດີ ລະຫວ່າງຫ້ອງການສິ່ງແວດລ້ອມທ້ອງຖິ່ນ ທີ່ຈະເຮັດວຽກຮ່ວມກັບ ໂຄງການ, ຊ່ວຍກັນຊອກຫາຊ່ອງທາງ ໃນການກຳຈັດສິ່ງເສດເຫຼືອໃຫ້ຖືກວິທີ ແລະ ໃຫ້ມີຜົນກະທົບໃຫ້ໜ້ອຍທີ່ ສຸດ. ລາຍລະອຽດຂອງການກຳຈັດຂີ້ເຫຍື້ອ ແມ່ນຈະອະທິບາຍໄວ້ ໃນພາກຕໍ່ໄປຄື ພາກຂອງ ການສຶກສາຜົນກະທົບ ແລະ ມາດຕະການຫຼຸດຜ່ອນໃຫ້ແກ່ໂຄງການ.

4.5.9 ແຫຼ່ງພະລັງງານ, ການນຳໃຊ້ ແລະ ການສະໜອງ

1) ການນຳໃຊ້ໄຟຟ້າ

ສຳລັບບ້ານໃນເຂດໂຄງການສາຍສົ່ງ 500 KV ຂອງໂຄງການພະລັງງານລົມ 600 MW ເມືອງດາກຈຶງນີ້ ເຫັນວ່າໃນ ແຕ່ລະບ້ານແມ່ນມີໄຟຟ້າເຂົ້າເຖິງ ເນື່ອງຈາກເປັນບ້ານທີ່ຢູ່ໃກ້ຄຽງ ແລະ ຢູ່ໃນເຂດເທດສະບານ ເຊິ່ງມີລາຍລະອຽດ ດັ່ງລຸ່ມນີ້:

ຕາຕະລາງ 4-19: ການນຳໃຊ້ໄຟຟ້າໃນບັນດາບ້ານເຂດພື້ນທີ່ໂຄງການ

ລ/ດ	ເມືອງ	ບ້ານ	ຈຳນວນຄອບຄົວ	ຈຳນວນຫຼັງ ຄາເຮືອນ	ການຊົມໃຊ້ໄຟຟ້າ	
					ໃຊ້ໄຟຟ້າ	ຍັງບໍ່ມີໄຟຟ້າ
1	ເມືອງ ດາກຈຶງ	ດາກບອງ	244	233	232	1

ລ/ດ	ເມືອງ	ບ້ານ	ຈຳນວນຄອບຄົວ	ຈຳນວນຫຼັງຄາເຮືອນ	ການຊົມໃຊ້ໄຟຟ້າ	
					ໃຊ້ໄຟຟ້າ	ຍັງບໍ່ມີໄຟຟ້າ
2		ດາກຕະອອກນ້ອຍ	44	38	38	-
3		ງອນດອນ	99	90	90	-
4		ດາກມອນ	78	65	65	-
5		ດາກໂດມ	56	42	42	-
ລວມ			521	468	467	1

ແຫຼ່ງຂໍ້ມູນຈາກ: ການສຳພາດອຳນາດການປົກຄອງບ້ານ ເດືອນ ກັນຍາ 2020

2) ແຫຼ່ງພະລັງງານ

ແຫຼ່ງພະລັງງານທີ່ໃຊ້ໃນ ສປປ ລາວ ສ່ວນຫຼາຍແມ່ນ ພະລັງງານໄຟຟ້າທີ່ຜະລິດໄດ້ຈາກນ້ຳຕົກຢູ່ພາຍໃນປະເທດ, ຖັດຈາກນັ້ນກໍ່ແມ່ນ ນ້ຳມັນເຊື້ອໄຟ ແລະ ແກັດສ໌ ທີ່ນຳເຂົ້າມາຈາກປະເທດໃກ້ຄຽງ. ເຖິງຢ່າງໃດກໍ່ຕາມພະລັງງານທີ່ໃຊ້ເຂົ້າໃນການແຕ່ງຢູ່ຄົວກິນປະຈຳຄົວເຮືອນ ຂອງປະຊາຊົນລາວທົ່ວປະເທດ ສ່ວນຫຼວງຫຼາຍແມ່ນຍັງໃຊ້ຟືນ, ຄືມີການໃຊ້ໄມ້ຟືນໂດຍກົງ ແລະ ເຜົ້າໄມ້ເປັນຖ່ານ. ຢູ່ບັນດາບ້ານໃນເຂດໂຄງການສາຍສົ່ງໄຟຟ້າ 500 KV ຂອງ ໂຄງການພະລັງງານລິມ 600 MW ເມືອງດາກຈຶງນີ້ ປະຊາຊົນທຸກຄົວເຮືອນແມ່ນພາກັນນຳໃຊ້ໄມ້ຟືນໂດຍກົງເພື່ອ ການແຕ່ງຢູ່ຄົວກິນ ແລະ ເພື່ອການນຳໃຊ້ອື່ນໆເຊັ່ນ: ເພື່ອແສງສະຫວ່າງ, ເພື່ອຄວາມອົບອຸ່ນໃນຍາມລະດູໜາວ, ໃຊ້ ດັ່ງໄຟໃຫ້ຄອກສັດ.

4.5.10 ລະເບີດບໍ່ທັນແຕກ

ດັ່ງທີ່ເຮົາຮູ້ ໃນໄລຍະປີ 1964-1973, ສ.ປ.ປ ລາວ ແມ່ນໄດ້ມີການສູ້ຮົບຢ່າງເຂັ້ມຂຸ້ນໃນພາກພື້ນດິນ ແລະ ການ ຖິ້ມລະເບີດຈາກທາງອາກາດແມ່ນມີການປະເມີນວ່າ ລູກລະເບີດອາດຫຼາຍກວ່າ 500,000 ລູກ ແລະ ຫຼາຍກວ່າ 2 ລ້ານໂຕນຂອງລູກປືນໃຫ່ຍໄດ້ຖິ້ມລົງມາໃສ່ແຜ່ນດິນຂອງ ສປປ ລາວ ໃນຊ່ວງປີ 1964 – 1973, ເຊິ່ງມີປະມານ 30% ແມ່ນຍັງບໍ່ທັນໄດ້ລະເບີດ, ຫຼາຍໆພື້ນທີ່ໃນໃນ ສປປ ລາວ ແມ່ນຍັງມີລູກລະເບີດທີ່ຍັງບໍ່ທັນໄດ້ແຕກຢ່າງ ຫຼວງຫຼາຍ. ລະເບີດທີ່ຍັງບໍ່ທັນໄດ້ແຕກແມ່ນກວມເອົາຈຳນວນ 15 ແຂວງຂອງ ສ.ປ.ປ ລາວ. ໃນນີ້, ແຂວງເຊກອງ ແລະ ແຂວງອັດຕະປື ກໍ່ຄືເຂດເມືອງດາກຈຶງ ກໍ່ແມ່ນເຂດໜຶ່ງໃນບັນດາເຂດທີ່ໄດ້ຮັບຜົນກະທົບຈາກລູກລະເບີດ ດັ່ງກ່າວ.

ຈາກການສອບຖາມປະຊາຊົນ ແລະ ອຳນາດການປົກຄອງຂອງແຕ່ລະບ້ານ ໃນການເກັບກຳຂໍ້ມູນຢູ່ເຂດພື້ນທີ່ ໂຄງການກ່ຽວກັບລະເບີດທີ່ບໍ່ທັນແຕກ ຫຼື (ລບຕ) ເຫັນວ່າໃນໄລຍະຜ່ານມາຢູ່ໃນບັນດາບ້ານຕ່າງໆແມ່ນເຄີຍມີການ ພົບເຫັນລູກລະເບີດບໍ່ທັນແຕກຢູ່ຕາມສວນຂອງປະຊາຊົນ ແລະ ເຂດປ່າໄມ້. ເຊິ່ງໃນໄລຍະຜ່ານມາກໍ່ຄືໃນປະຈຸບັນ ໃນເຂດເມືອງດາກຈຶງແມ່ນມີໜ່ວຍງານ ຫຼື ໂຄງການເກັບກູ້ລະເບີດແຫ່ງ ສປປ ລາວ ຫຼື (UXO – LAO) ໄດ້ມີການ ມາສຳຫຼວດ ແລະ ເກັບກູ້ທຳລາຍຢ່າງເປັນປະຈຳຕາມຈຸດທີ່ມີການພົບເຫັນ ແລະ ໄດ້ມີການລົງເຜີຍແຜ່ - ໃຫ້ຄວາມ ຮູ້ກ່ຽວກັບວິທີການປ້ອງກັນອັນຕະລາຍຈາກລູກລະເບີດບໍ່ທັນແຕກ. ເຊິ່ງຈາກການສອບຖາມເຫັນວ່າໃນປະຈຸບັນນີ້ ບັນຫາລະເບີດບໍ່ທັນແຕກແມ່ນບໍ່ຄ່ອຍພົບເຫັນແລ້ວ ເນື່ອງຈາກເນື້ອທີ່ດິນສ່ວນໃຫຍ່ແມ່ນສວນກາເຟຂອງ ປະຊາຊົນ. ເຖິງຢ່າງໃດກໍ່ຕາມແຜນການພັດທະນາໂຄງການພະລັງງານລິມ ທີ່ສະເໜີນີ້ກ່ອນມີການດຳເນີນການ

ກໍ່ສ້າງທາງຜູ້ພັດທະນາໂຄງການຈະໄດ້ມີການປະສານງານກັບໜ່ວຍງານທີ່ກ່ຽວຂ້ອງເພື່ອມາສຳຫຼວດ ແລະ ເກັບກູ້ ລະເບີດອອກກ່ອນເພື່ອຄວາມປອດໄພ.



ຮູບທີ 4-13: ແຜນທີ່ສະແດງຈຸດຖິ້ມລະເບີດ ຂອງແຂວງເຊກອງ

4.6 ອົງປະກອບທາງວັດທະນະທຳ

4.6.1 ສະຖານທີ່ທາງປະຫວັດສາດ ແລະ ທາງວັດທະນະທຳ

ດັ່ງທີ່ກ່າວມາເບື້ອງຕົ້ນ ໃນເຂດພື້ນທີ່ໂຄງການແມ່ນ ປະກອບດ້ວຍຫຼາຍຊົນເຜົ່າຄື: ເຜົ່າຕຣຽງ, ເຜົ່າກະຕູ, ເຜົ່າແຢະ ແລະ ເຜົ່າລາວ. ເຊິ່ງຊົນເຜົ່າແມ່ນມີຄວາມສຳຄັນຫຼາຍ ຕໍ່ກັບວັດທະນະທຳ ແລະ ປະຫວັດສາດບູຮານນະຄະດີ, ເນື່ອງ ຈາກແຕ່ລະຊົນເຜົ່າ ແມ່ນມີວັດທະນະທຳ ແລະ ຮີດຄອງປະເພນີທີ່ຄ້າຍຄືກັນ ແລະ ກໍແຕກຕ່າງກັນ, ເຊັ່ນວ່າຄວາມ ເຊື່ອຖື, ການສ້າງຫໍໂຮງ, ການທຳພິທີກຳ ຫຼື ການເຮັດບຸນປະເພນີທາງສາດສະໜາຕ່າງໆ, ວັນນະຄະດີການຂັບລຳ ຕ່າງໆ ລ້ວນແລ້ວແຕ່ເປັນເອກະລັກປະຈຳແຕ່ລະເຜົ່າທີ່ຄວນອະນຸລັກໄວ້.

ຜ່ານການລົງເກັບຂໍ້ມູນໃນພາກສະໜາມ ແລະ ຈາກການສຳພາດປະຊາຊົນແຕ່ລະບ້ານ ແມ່ນບໍ່ໄດ້ພົບເຫັນສິ່ງວັດຖຸ ກໍ່ສ້າງທີ່ສຳຄັນຫຍັງ ທາງດ້ານບູຮານນະຄະດີ, ເນື່ອງຈາກເປັນໝູ່ບ້ານຊົນນະບົດທຳມະດາ. ເຖິງຢ່າງໃດກໍ່ຕາມຈາກ ການໂອ້ລົມກັບຜູ້ເຖົ້າຜູ້ແກ່ ຫຼື ຜູ້ນຳຂອງຊົນເຜົ່າ ແລະ ອຳນາດການປົກຄອງຂອງບ້ານໃນເຂດພື້ນທີ່ໂຄງການໃນ ລະຫວ່າງການລົງເກັບກຳຂໍ້ມູນເສດຖະກິດສັງຄົມຂອງໂຄງການ ໄດ້ໃຫ້ຮູ້ວ່າ ແຕ່ໝູ່ບ້ານເຫຼົ່ານັ້ນແມ່ນມີຄວາມເຄັ່ງ ໃນດ້ານການເຊື່ອຖື, ໂດຍສະເພາະປ່າຊ້າຂອງບ້ານ, ການເຊື່ອຖືຜີບ້ານ-ຜີເມືອງ, ເຂດສັກສິດ ແລະ ເຂດຫວງຫ້າມ ຂອງບ້ານ ໃນແຕ່ລະປີຊາວບ້ານຈະມີພິທີກຳ ຕາມຄວາມເຊື່ອຂອງແຕ່ລະຊົນເຜົ່າທີ່ເຊື່ອຖືທາງດ້ານສາດສະໜາ

4.7 ທັດສະນີຍະພາບສັນຖານ ແລະ ຈຸດທີ່ໜ້າສົນໃຈ

ທັດສະນີຍະພາບຂອງເມືອງດາກຈຶງ ສ່ວນຫຼາຍເປັນເຂດພູດອຍ-ພູສູງ 95% ແລະ ເປັນເຂດພູພຽງ 5% ແລະ ຍັງຄົງມີຄວາມອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ, ປ່າໄມ້ ແລະ ສັດຫຼາຍຊະນິດ, ນອກນັ້ນພາຍໃນເມືອງດາກຈຶງ ກໍຍັງມີແຫຼ່ງທ່ອງທ່ຽວ ບໍ່ວ່າຈະເປັນແຫຼ່ງທ່ອງທ່ຽວທາງທຳມະຊາດ 15 ແຫ່ງ ເປັນຕົ້ນແມ່ນ ຕາດໂອກ ບ້ານ ດາກບອງ, ຕາດຈາກີ ບ້ານ ງອນດອນ, ພູຫີນແກ້ວ ບ້ານດາກຈຶງ, ແຫຼ່ງທອງທ່ຽວທາງປະຫວັດສາດ 7 ແຫຼ່ງ: ສຳນັກງານເຮັດວຽກຂອງ ທ່ານ ຄຳໄຕ ສີພັນດອນ ຢູ່ບ້ານ ດາກປຳ, ແຫຼ່ງທ່ອງທ່ຽວທາງວັດທະນະທຳ 10 ແຫຼ່ງ ເປັນຕົ້ນແມ່ນ ເຮືອນ 4 ຊົນເຜົ່າ ບ້ານ ດາກໂດມ ແລະ ບ່ອນອື່ນໆ ທີ່ເປັນຈຸດສົນໃຈໃນເຂດດັ່ງກ່າວ ແລະ ມີຍັງບັນດາຫ້ວຍນ້ຳຫຼາຍສາຍເຊັ່ນ ແມ່ນ້ຳເຊຂະໝານ, ຫ້ວຍປອງ, ຫ້ວຍຕະນາງ ແລະ ຫ້ວຍອື່ນໆ. ສຳລັບທັດສະນີຍະພາບໃນເຂດພື້ນທີ່ໂຄງການ ສ່ວນຫຼາຍແມ່ນເປັນພື້ນທີ່ດິນກະສິກຳທຳການຜະລິດຂອງປະຊາຊົນ ແລະ ເຂດປ່າຜະລິດຂອງບ້ານ ແລະ ປ່າປ້ອງກັນຂອບເຂດຊາຍແດນ.

ຮູບທີ 4-14: ທັດສະນີຍະພາບໃນເຂດພື້ນທີ່ໂຄງການ

4.8 ການສ້າງແຜນທີ່

ໃນການສ້າງແຜນທີ່ ທາງທີມງານ ສຶກສາ ໄດ້ນຳໃຊ້ໂປຣແກຣມ ການວິເຄາະ ແລະ ສ້າງແຜນທີ່ ArcGIS ເວີຊັ່ນ 10.8 ເພື່ອສ້າງແຜນທີ່ການນຳໃຊ້ທີ່ດິນເຂດພື້ນທີ່ໂຄງການ ແລະ ແຜນທີ່ອື່ນໆທີ່ກ່ຽວຂ້ອງກັບການເຮັດບົດສຶກສາ ແລະ ນຳສະເໜີຢູ່ໃນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດສຳລັບໂຄງການທີ່ສະເໜີນີ້.

ພາກທີ 5 ການປະເມີນຜົນກະທົບ ແລະ ມາດຕະການຫຼຸດຜ່ອນ

ການປະເມີນຜົນກະທົບ ຂອງໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລົມ 600 MW ເມືອງ ດາກຈຶງ ທີ່ສະເໜີນີ້ ແມ່ນຈະໄດ້ອີງໃສ່ ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 21/ ລບ 2019 ເປັນນິຕິກຳທີ່ສຳຄັນ. ດຳລັດ ສະບັບນີ້ ແມ່ນການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ເນື້ອໃນທີ່ກຳນົດ ໄວ້ໃນ ມາດຕາ 21 ແລະ 22 ຂອງ ກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012, ແລະ ນອກນີ້ກໍ່ຍັງໄດ້ອີງໃສ່ ຂໍ້ຕົກລົງ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ບົດແນະນຳວິຊາ ການ ວ່າດ້ວຍການສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ (ບປຜສ) ສະບັບເລກທີ 2796.1/ ກຊສ.ກປສສ.ພຄຕ. ນະຄອນຫຼວງວຽງຈັນ, ສະບັບລົງວັນທີ 19 ທັນວາ 2016.

ເຖິງຢ່າງໃດກໍ່ຕາມ ໃນການປະເມີນຜົນກະທົບ ແລະ ການກຳນົດມາດຕະການຫຼຸດຜ່ອນ ສຳລັບໂຄງການດັ່ງກ່າວ ອາດຈະບໍ່ເປັນໄປຕາມທຸກຂັ້ນຕອນ ຫຼື ທຸກໆຫົວຂໍ້ ທີ່ໄດ້ກຳນົດໄວ້ໃນສາລະບານ ຂອງບົດແນະນຳວິຊາການດັ່ງກ່າວ , ເນື່ອງຈາກວ່າບົດແນະນຳ ແມ່ນເພື່ອການນຳໃຊ້ ໃຫ້ແກ່ທຸກປະເພດຂອງໂຄງການ ທີ່ມີຜົນກະທົບແຕກຕ່າງກັນ ເຊິ່ງ ຂຶ້ນກັບຂະບວນການ ແລະ ຂັ້ນຕອນຂອງໂຄງການນັ້ນໆ. ດັ່ງນັ້ນ ການນຳໃຊ້ ບົດແນະນຳດ້ານວິຊາການດັ່ງກ່າວ ແມ່ນຈະປະຕິບັດຕາມຫົວຂໍ້ ທີ່ມີສ່ວນກ່ຽວຂ້ອງ ກັບຜົນກະທົບຕົວຈິງ ຂອງໂຄງການເທົ່ານັ້ນ. ການກຳນົດຂອບ ເຂດຂອງການປະເມີນຄືແນວນີ້ ແມ່ນຈະມີຜົນດີຕໍ່ການຂຽນບົດລາຍງານ ທີ່ຈະເຮັດໃຫ້ເນື້ອໃນຂອງບົດລາຍງານ ກະທັດຫັດ ແລະ ທັງງ່າຍຕໍ່ພາກສ່ວນທີ່ກ່ຽວຂ້ອງ ໃນການທົບທວນ ແລະ ການໃຫ້ຄຳແນະນຳເພື່ອປັບປຸງ.

5.1 ວິທີການປະເມີນຜົນກະທົບ

ເພື່ອເຮັດໃຫ້ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດຂອງໂຄງການສາຍສົ່ງໄຟຟ້າ 500 KV ຂອງ ໂຄງການພະລັງງານລົມ 600 MW ເມືອງດາກຈຶງ ທີ່ໄດ້ສະເໜີ ໄດ້ຮັບຜົນດີ ແລະ ສາມາດນຳໄປຈັດຕັ້ງປະຕິບັດໄດ້, ທາງທີມງານປະເມີນຜົນ ໄດ້ເອົາໃຈໃສ່ຕໍ່ ວິທີຂອງການປະເມີນ ໃນຮູບແບບທີ່ມີຄວາມສຳຄັນ ຕ່າງໆດັ່ງນີ້:

- ✓ ເບິ່ງຄືນຂໍ້ມູນພື້ນຖານ ດ້ານກາຍຍະພາຍ, ຊີວະພາບ ແລະ ເສດຖະກິດສັງຄົມ ທີ່ຢູ່ພາຍໃນ ແລະ ອ້ອມຂ້າງ ໃນເຂດພື້ນທີ່ຂອງໂຄງການ ໃນຂອບເຂດການສຶກສາ ທີ່ໄດ້ມາຈາກການລົງກວດກາພາກສະໜາມ, ໄຈ້ ແຍກເບິ່ງແຕ່ລະອົງປະກອບ ຂອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ຄາດວ່າຈະໄດ້ຮັບຜົນກະທົບ ຈາກໂຄງການ ດັ່ງກ່າວ,
- ✓ ປະເມີນຂັ້ນຕອນການດຳເນີນງານ ຂອງໂຄງການໃນແຕ່ລະໄລຍະວ່າມີກິດຈະກຳໃດແດ່ ຂອງໂຄງການທີ່ ຈະກໍ່ໃຫ້ເກີດຜົນກະທົບຕໍ່ລະບົບສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ,
- ✓ ພິຈາລະນາເຖິງພື້ນທີ່ອ້ອມຂ້າງໂຄງການ ທີ່ຄາດວ່າຈະຖືກກະທົບໂດຍກົງ ແລະ ສະພາບໂດຍລວມ ທີ່ຈະ ໄດ້ຮັບຜົນກະທົບໂດຍທາງອ້ອມ,
- ✓ ປະເມີນສະພາບແວດລ້ອມ ທີ່ມີຢູ່ໃນປະຈຸບັນ ກ່ອນໄລຍະການກໍ່ສ້າງຂອງໂຄງການ, ສະພາບແວດລ້ອມທີ່ ຈະໄດ້ຮັບຜົນກະທົບໃນໄລຍະທີ່ກຳລັງມີການກໍ່ສ້າງ ແລະ ໄລຍະດຳເນີນງານ,
- ✓ ປະເມີນການນຳໃຊ້ ມາດຕະການປ້ອງກັນ ແລະ ຫຼຸດຜ່ອນ, ໂດຍມີການທົບທວນ ດ້ານນິຕິກຳຕ່າງໆທີ່ ກ່ຽວຂ້ອງ, ມາດຕະຖານສິ່ງແວດລ້ອມແຫ່ງຊາດ ແລະ ມາດຕະຖານສາກົນທີ່ກ່ຽວຂ້ອງ.

ການປະເມີນຜົນກະທົບດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ອາດຈະເກີດຂຶ້ນເນື່ອງຈາກກິດຈະກຳຂອງໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລົມ 600 MW ເມືອງດາກຈຶງ ແມ່ນຈະໄດ້ອະທິບາຍຢູ່ໃນພາກນີ້, ບັນດາຜົນກະທົບຫຼັກ ດ້ານສິ່ງແວດລ້ອມ ທີ່ມີຄວາມເປັນຫ່ວງ ແລະ ມາດຕະການຫຼຸດຜ່ອນຜົນກະທົບຕ່າງໆ ແມ່ນໄດ້ຖືກລະບຸໄວ້ຢູ່ໃນພາກນີ້. ໂດຍລະດັບຂອງຜົນກະທົບທີ່ນຳມາປະເມີນໃນທີ່ນີ້ ແມ່ນເປັນການນຳໃຊ້ຫຼັກການແບບ "ມາຕຣິກ Matrix", ເຊິ່ງເປັນການປະເມີນໂດຍລວມອອກເປັນຕົວເລກ ເພື່ອຊີ້ບອກລະດັບຂອງຜົນກະທົບ. ການປະເມີນລະດັບຜົນກະທົບແມ່ນປະເມີນແຕ່ຜົນກະທົບທີ່ສຳຄັນ ແລະ ຄາດວ່າຈະເກີດຂຶ້ນ ເຊິ່ງວິທີການປະເມີນຈະໃຊ້ຄຳສັບ ທີ່ມີຄວາມໝາຍແຕກຕ່າງກັນຄື: ຄາດວ່າຈະເກີດ, ຄວາມສຳຄັນ, ໄວຕໍ່ການຮັບຮູ້ ແລະ ລະດັບຜົນກະທົບ. ດັ່ງອະທິບາຍໄວ້ລຸ່ມນີ້:

1) ຄາດວ່າຈະເກີດ (Occurrence): ມີຄວາມໝາຍວ່າມັນສາມາດເກີດຂຶ້ນ ຫຼື ບາງທີມັນກໍ່ອາດຈະເກີດຂຶ້ນ, ຫຼືເກີດຂຶ້ນໂດຍບໍ່ຄາດຄິດລ່ວງໜ້າ.
2) ຄວາມສຳຄັນ (Magnitude): ມີຄວາມໝາຍວ່າຜົນກະທົບນັ້ນມີຄວາມສຳຄັນ ຫຼື ມີຄວາມຮຸນແຮງຈາກຜົນກະທົບຕ່າງໆເຫຼົ່ານັ້ນທີ່ຄວນໄດ້ຮັບການແກ້ໄຂຢ່າງຈິງຈັງ.
3) ໄວຕໍ່ການຮັບຮູ້ (Sensitivity): ມີຄວາມໝາຍວ່າສັງຄົມ ແລະ ສິ່ງແວດລ້ອມຕ່າງໆໄວຕໍ່ການຮັບຮູ້ ຫຼື ໄດ້ຮັບຜົນກະທົບໄວຕໍ່ບັນຫາຜົນກະທົບທາງສິ່ງແວດລ້ອມທີ່ເກີດຂຶ້ນຈາກກິດຈະກຳຕ່າງໆເຫຼົ່ານັ້ນ.
4) ລະດັບຜົນກະທົບ (Ranking): ເປັນການຈັດອັນດັບຜົນກະທົບທີ່ໄດ້ຈາກຜົນ ຂອງການປະເມີນເປັນຕົວເລກສາມຢ່າງຂ້າງເທິງ ແລ້ວນຳມາຫານ 3, ເພື່ອຄິດໄລ່ຄ່າສະເລ່ຍລະດັບຂອງຜົນກະທົບຄືດັ່ງລຸ່ມນີ້:

$$\text{ລະດັບຜົນກະທົບ} = \frac{(\text{ຄາດວ່າຈະເກີດ} + \text{ຄວາມສຳຄັນ} + \text{ໄວຕໍ່ການຮັບຮູ້})}{3}$$

ຕາຕະລາງ 5-1: ຕາຕະລາງ ຄະແນນຊີ້ບອກລະດັບຜົນກະທົບ

ຂະໜາດຂອງຜົນກະທົບ	ຄາດວ່າຈະເກີດ	ຄວາມສຳຄັນ	ໄວຕໍ່ການຮັບຮູ້
0	ບໍ່ເກີດ	ບໍ່ມີຜົນກະທົບ	ບໍ່ມີຜົນກະທົບ
1	ບໍ່ໜ້າຈະເກີດ	ຜົນກະທົບໜ້ອຍ	ຕ່ຳ
2	ມີຄວາມເປັນໄປໄດ້	ຜົນກະທົບປານກາງ	ປານກາງ
3	ເປັນໄປໄດ້	ຜົນກະທົບແຮງ	ສູງ
4	ເປັນໄປໄດ້ສູງ	ຜົນກະທົບຮ້າຍແຮງ	ສູງຫຼາຍ

ຕາຕະລາງ 5-2: ການຈັດແບ່ງລະດັບຄວາມສ່ຽງຂອງຜົນກະທົບ

ຄ່າສະເລ່ຍຂອງຜົນກະທົບ	ສີບອກຂອງຜົນກະທົບ	ລະດັບຄວາມສ່ຽງ
≤ 0.5		ບໍ່ມີຄວາມສ່ຽງ
0.5 ຫາ <1.5		ມີຄວາມສ່ຽງຕ່ຳ
1.5 ຫາ <2.5		ມີຄວາມສ່ຽງປານກາງ
2.5 ຫາ < 3.5		ມີຄວາມສ່ຽງສູງ
≥ 3.5		ມີຄວາມສ່ຽງສູງຫຼາຍ

5.2 ຂອບເຂດຂອງການປະເມີນ

ຂອບເຂດຂອງການສຶກສາ ແມ່ນຈະໄດ້ປະເມີນຜົນກະທົບຕໍ່ສະພາບແວດລ້ອມສັງຄົມ ແລະ ທຳມະຊາດ ບໍ່ວ່າຈະເປັນທາງລົບ ຫຼື ທາງບວກ ທີ່ອາດຈະເກີດຂຶ້ນໃນໄລຍະດຳເນີນໂຄງການ, ລວມທັງໄລຍະກ່ອນກໍ່ສ້າງ, ໄລຍະກໍ່ສ້າງ, ໄລຍະດຳເນີນງານ. ຜົນຈາກການປະເມີນຈະເປັນຂໍ້ມູນເພື່ອໃຊ້ໃນການກຳນົດມາດຕະການປ້ອງກັນ ແລະ ຫຼຸດຜ່ອນກະທົບຕໍ່ສິ່ງແວດລ້ອມ, ພ້ອມທັງມາດຕະການເພື່ອຕິດຕາມກວດສອບຄຸນນະພາບສິ່ງແວດລ້ອມ. ໂດຍການປະເມີນຜົນກະທົບສິ່ງແວດລ້ອມທີ່ຄາດວ່າຈະເກີດຂຶ້ນຈາກໂຄງການ ໄດ້ພິຈາລະນາຈາກຂໍ້ມູນລາຍລະອຽດໂຄງການ ແລະ ແນວທາງການຄຸ້ມຄອງສິ່ງແວດລ້ອມຂອງໂຄງການທີ່ມີການກຳນົດ ຫຼື ອອກແບບໄວ້ແລ້ວໃນລາຍລະອຽດຂອງໂຄງການ ແລະ ສະພາບແວດລ້ອມໃນປັດຈຸບັນ, ຈາກຄຳຄິດເຫັນ ແລະ ຂໍ້ສະເໜີແນະນຳທີ່ໄດ້ຮັບຈາກການດຳເນີນກິດຈະກຳການມີສ່ວນຮ່ວມຂອງປະຊາຊົນໃນກອງປະຊຸມປຶກສາຫາລື.

5.3 ຜົນກະທົບທາງດ້ານກາຍຍະພາບ

5.3.1 ສະພາບອາກາດ/ອຸຕຸນິຍົມ

1) ໄລຍະກ່ອນການກໍ່ສ້າງ

ເຂດພື້ນທີ່ໂຄງການທີ່ນອນໃນເຂດເມືອງດາກຈຶງ ສະພາບອາກາດສ່ວນຫຼາຍແມ່ນໜາວເຢັນ ແລະ ຝົນຕົກ ເຊິ່ງເປັນຝົນຝອຍເກືອບຕະຫຼອດປີ, ລະດູຝົນເລີ່ມແຕ່ເດືອນ 3 ຫາເດືອນ 7. ສ່ວນລະດູແລ້ງເລີ່ມແຕ່ເດືອນ 8 ຫາເດືອນ 10 ແລະ ມີຝົນຝອຍເລີ່ມແຕ່ເດືອນ 11 ຫາເດືອນ 2 ຂອງທຸກປີ, ໃນຮອບ 5 ປີຜ່ານມາ ເຫັນວ່າອຸ່ນຫະພູມມີການປ່ຽນແປງເລັກໜ້ອຍ ເພີ່ມຂຶ້ນປະມານ 1–2 ອົງສາ.

ຄວາມເປັນໄປໄດ້ຂອງຜົນກະທົບ:

ໄລຍະກ່ອນການກໍ່ສ້າງໂຄງການ ແມ່ນບໍ່ມີຜົນກະທົບຫຍັງ ຕໍ່ສະພາບອາກາດ ແລະ ອຸຕຸນິຍົມ ເນື່ອງຈາກທາງໂຄງການບໍ່ໄດ້ມີກິດຈະກຳຫຍັງ ທີ່ຈະເຮັດສະພາບອາກາດ ແລະ ອຸຕຸນິຍົມມີການປ່ຽນແປງ. ແຕ່ຜົນກະທົບທີ່ເກີດຂຶ້ນ ຢູ່ໃນໄລຍະກ່ອນການກໍ່ສ້າງນີ້ແມ່ນກ່ຽວຂ້ອງ ກັບການຖາງປ່າເພື່ອເຮັດ ການກະສິກຳ ຂອງປະຊາຊົນທ້ອງຖິ່ນ ທີ່ຢູ່ອ້ອມຂ້າງຂອງໂຄງການ ແລະ ຂອງບັນດາບໍລິສັດລົງທຶນ ດັ່ງທີ່ກ່າວໃນພາກສະພາບແວດລ້ອມຂ້າງເທິງ, ພ້ອມດ້ວຍການພັດທະນາການກໍ່ສ້າງພື້ນຖານໂຄງລ່າງອື່ນໆ ກໍ່ມີສ່ວນທີ່ກໍ່ໃຫ້ເກີດຜົນກະທົບຕໍ່ອາກາດ ແລະ ອຸຕຸນິຍົມ ໂດຍລວມໃນພື້ນທີ່ໂຄງການ.

ມາດຕະການຫຼຸດຜ່ອນ:

ທາງໂຄງການແມ່ນບໍ່ທັນມີຄວາມຈຳເປັນ ດຳເນີນມາດຕະການຫຼຸດຜ່ອນຫຍັງ ຢູ່ໃນໄລຍະກ່ອນການກໍ່ສ້າງ ທີ່ກ່ຽວຂ້ອງກັບຜົນກະທົບຕໍ່ສະພາບອາກາດ ແລະ ອຸຕຸນິຍົມ ຂອງທ້ອງຖິ່ນໃນເຂດໂຄງການ. ສ່ວນການອອກແບບຂອງໂຄງການ ກໍ່ໄດ້ເອົາໃຈໃສ່ຕໍ່ການຕິດຕັ້ງອຸປະກອນ ແລະ ອົງປະກອບຕ່າງໆຂອງໂຄງການ ເພື່ອບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດດ້ານນີ້.

2) ໄລຍະການກໍ່ສ້າງໂຄງການ

ຄວາມເປັນໄປໄດ້ຂອງຜົນກະທົບ:

ສາເຫດທີ່ຈະພາໃຫ້ ສະພາບອາກາດ ແລະ ອຸຕຸນິຍົມ ໂດຍລວມມີການປ່ຽນແປງ ສ່ວນຫຼາຍແມ່ນຈະສືບເນື່ອງມາຈາກການທຳລາຍປ່າໄມ້ເປັນບໍລິເວນກວ້າງ, ການຈູດເຜົາໄໝ້ ຫຼື ມີການປ່ອຍຄວັນ (ການບອນໄດອ໊ອກໄຊ CO_2) ຂຶ້ນສູ່ອາກາດເກີນກວ່າມາດຕະຖານທີ່ກຳນົດເອົາໄວ້.

ກໍລະນີຂອງໂຄງການສາຍສົ່ງ 500 ກວ ຂອງພະລັງງານລົມ ທີ່ສະເໜີນີ້ ຈະມີຄວາມຍາວ 21 ກິໂລແມັດ ທີ່ຈະຕ້ອງມີການບຸກເບີກຖາງແລວຕາມຂອບເຂດສະຫງວນ 70 ແມັດ ເຊິ່ງການສູນເສຍເນື້ອທີ່ປ່າໄມ້ໃນເຂດແລວສາຍສົ່ງດັ່ງກ່າວອາດຈະເປັນສາເຫດທີ່ຈະພາໃຫ້ ສະພາບອາກາດ ແລະ ອຸຕຸນິຍົມໂດຍລວມ ທີ່ຈະມີການປ່ຽນແປງໄປ ແຕ່ກໍ່ຈະຢູ່ໃນລະດັບຕ່ຳ ຍ້ອນແລວສາຍສົ່ງແມ່ນມີຄວາມຈຳເປັນຕັດແຕ່ຕົ້ນໄມ້ທີ່ມີຄວາມສູງກວ່າ 3 ແມັດເທົ່ານັ້ນ ຫຼື ບໍ່ມີຄວາມຈຳເປັນຕ້ອງຕັດອອກເລີຍ ຖ້າຫາກແລວສາຍສົ່ງຜ່ານເຂດພູສູງ ກໍລະນີເສົາໄຟຕັ້ງຢູ່ລະຫວ່າງພູຫາພູ.

ອີກຢ່າງໜຶ່ງສະພາບອາກາດທີ່ຈະມີການປ່ຽນແປງ ໃນຊ່ວງການກໍ່ສ້າງນີ້ ແມ່ນຈະສືບເນື່ອງມາຈາກ ກິດຈະກຳການກໍ່ສ້າງຕ່າງໆ ໃນເຂດບໍລິເວນທີ່ມີການກໍ່ສ້າງຕີນເສົາ, ຂີ້ຝຸ່ນຈາກການຂຸດ-ການດຸດດິນ ແລະ ຈາກການຂົນສົ່ງວັດສະດຸກໍ່ສ້າງຕ່າງໆ, ຄວັນຈາກການນຳໃຊ້ເຄື່ອງກົນຈັກໜັກ ລວມທັງມີການເຜົາໄໝ້ຕ່າງໆ ທີ່ກ່ຽວຂ້ອງກັບກິດຈະກຳການກໍ່ສ້າງຂອງໂຄງການ ຈະກໍ່ໃຫ້ເກີດສານຊຸນເຟີໄດອັອກໄຊຍ໌ SO_2, ການບອນໂມໂນໄຊຍ໌ CO ແລະ ການບອນໄດອ໊ອກໄຊຍ໌ CO_2. ແຕ່ຈະຢູ່ໃນລະດັບຕ່ຳເຊັ່ນດຽວກັນເນື່ອງຈາກບໍ່ໄດ້ມີການກໍ່ສ້າງເປັນບໍລິເວນກວ້າງ.

ມາດຕະການຫຼຸດຜ່ອນ:

- ເຖິງແມ່ນວ່າ ສະພາບອາກາດ ແລະ ອຸຕຸນິຍົມໂດຍລວມ ຈະບໍ່ມີການປ່ຽນແປງຮ້າຍແຮງ ໃນຊ່ວງການກໍ່ສ້າງໂຄງການສາຍສົ່ງໄຟຟ້າ 500 ກວ, ແຕ່ທາງໂຄງການກໍ່ຕ້ອງລະມັດລະວັງ ໃນການຖາກຖາງ-ອະນາໄມ ພື້ນທີ່ເພື່ອການກໍ່ສ້າງຕີນເສົາ ແລະ ເຂດແລວສາຍສົ່ງ ຮັບປະກັນບໍ່ໃຫ້ມີການເຜົາໄໝ້ ທີ່ຈະກໍ່ໃຫ້ເກີດໄຟໄໝ້
- ຕ້ອງມີຄວາມລະມັດລະວັງໃນການກໍ່ສ້າງ ແລະ ບໍ່ໃຫ້ມີການຕັດໄມ້ ຫຼື ເອົາພັນພືດອອກຈາກນອກເຂດກໍ່ສ້າງຕີນເສົາ ແລະ ເຂດສະຫງວນ 70 ແມັດ.
- ມີການບຳລຸງຮັກສາເຄື່ອງກົນຈັກກໍ່ສ້າງໃຫ້ຢູ່ໃນສະພາບໃຊ້ງານຢູ່ສະເໝີບໍ່ໃຫ້ປ່ອຍ ການຄາບອນໄດອ໊ອກໄຊ CO_2 ເກີນກ່ວາມາດຕະຖານທີ່ກຳນົດໄວ້.
- ອອກລະບຽບຄວບຄຸມບໍ່ໃຫ້ພະນັກງານ ແລະ ກຳມະກອນ ຈູດຂີ້ເຫຍື້ອ ໃນເຂດພື້ນທີ່ກໍ່ສ້າງສາຍສົ່ງ

3) ໄລຍະດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຕະຫຼອດໄລຍະການດຳເນີນງານຂອງໂຄງການຈະຕ້ອງໄດ້ມີການອະນາໄມຕັດຕົ້ນໄມ້ ແລະ ພືດທີ່ສູງກວ່າ 3 ແມັດ ອອກຈາກແລວສາຍສົ່ງ 70 ແມັດ ທີ່ມີໄລຍະຍາວ 21 ກິໂລແມັດ, ເຊິ່ງເປັນການສູນເສຍພື້ນທີ່ສີຂຽວ ແລະ ກໍ່ຈະເປັນສາເຫດໜຶ່ງທີ່ຈະເຮັດໃຫ້ສະພາບອາກາດປ່ຽນແປງໃນບໍລິເວນຂອງໂຄງການ ຄືດັ່ງທີ່ໄດ້ກ່າວມາຂ້າງເທິງ.

ມາດຕະການຫຼຸດຜ່ອນ:

- ການອະນາໄມຖາກຖາງ ຫຼື ຕັດຕົ້ນໄມ້ ແລະ ພືດອອກຕາມແລວສາຍສົ່ງ ຕ້ອງຕັດແຕ່ສະເພາະໃນຂອບເຂດແລວສາຍສົ່ງ 70 ແມັດ ແລະ ພື້ນທີ່ ທີ່ມີຄວາມຈຳເປັນເທົ່ານັ້ນ, ບໍ່ໃຫ້ຕັດອອກນອກແລວ.

5.3.2 ພຸມສັນຖານ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ

ກິດຈະກຳກ່ອນການກໍ່ສ້າງໂຄງການ ແມ່ນການສຳຫຼວດ ແລະ ອອກແບບ, ວາງແລວສາຍສົ່ງ, ເພື່ອນຳມາອອກແບບ ທາງເລືອກໂຄງການ. ອີງຕາມກິດຈະກຳເຫຼົ່ານີ້ ແມ່ນບໍ່ມີຫຍັງທີ່ຈະກໍ່ໃຫ້ເກີດຜົນກະທົບຕໍ່ພຸມສັນຖານໃນເຂດ ໂຄງການ. ດັ່ງນັ້ນ, ໂຄງການບໍ່ມີຄວາມຈຳເປັນຫຍັງ ຕ້ອງດຳເນີນມາດຕະການຫຼຸດຜ່ອນ ເນື່ອງຈາກໄລຍະກ່ອນ ການກໍ່ສ້າງ ແມ່ນບໍ່ມີກິດຈະກຳຫຍັງທີ່ຈະກໍ່ໃຫ້ເກີດຜົນກະທົບຕໍ່ພຸມສັນຖານຂອງເຂດພື້ນທີ່ໂຄງການ.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ

ກິດຈະກຳຂອງໂຄງການໃນໄລຍະການກໍ່ສ້າງນີ້ແມ່ນມີຄວາມຈຳເປັນຕ້ອງໄດ້ຂຸດ ແລະ ດຸດດິນ ອອກຈາກພື້ນທີ່ໆຈະ ມີການກໍ່ສ້າງຕີນເສົາໄຟຟ້າ ແລະ ກິດຈະກຳການດຶງສາຍໄຟຕາມແລວແລວສາຍສົ່ງໄຟຟ້າ 500 ກວ ທີ່ມີຄວາມຍາວ 21ກິໂລແມັດ, ແມ່ນມີຄວາມຈຳເປັນຈະຕ້ອງໄດ້ຕັດຕົ້ນໄມ້ ແລະ ພືດ ອອກເປັນບາງຊ່ວງ ດ້ວຍຂະໜາດຄວາມ ກວ້າງຢ່າງໜ້ອຍ 70 ແມັດ ຕາມແລວສາຍສົ່ງ. ຈາກກິດຈະກຳການກໍ່ສ້າງດັ່ງກ່າວ ຈະເຮັດໃຫ້ພຸມສັນຖານທັດສະນີ ຍະພາບທ້ອງຖິ່ນ ໃນປະຈຸບັນປ່ຽນໄປຈາກເດີມ ດ້ວຍການປ່ຽນແທນສິ່ງແວດລ້ອມໃໝ່ ຂອງການກໍ່ສ້າງສາຍສົ່ງ ໄຟຟ້າ.

ມາດຕະການຫຼຸດຜ່ອນ:

- ການຖາກຖາງ ຫຼື ຕັດຕົ້ນໄມ້ ແລະ ພືດ ອອກຕາມແລວສາຍສົ່ງ ຕ້ອງຕັດແຕ່ສະເພາະໃນຂອບເຂດແລວ ສາຍສົ່ງ 70 ແມັດ ແລະ ພື້ນທີ່ໆ ມີຄວາມຈຳເປັນໃນການກໍ່ສ້າງເທົ່ານັ້ນ, ບໍ່ໃຫ້ຕັດ ຫຼື ບຸກເບີກອອກນອກ ແລວ ຫຼື ເຂດກໍ່ສ້າງ ເພື່ອຫຼຸດຜ່ອນ ບໍ່ໃຫ້ພຸມສັນຖານ ທີ່ເປັນທຳມະຊາດສີຂຽວ ທີ່ມີມາກ່ອນແລ້ວ ປ່ຽນ ໄປຈາກເດີມຫຼາຍ.
- ການຂຸດດິນດຸດດິນ ເພື່ອການກໍ່ສ້າງຕີນເສົາໄຟຟ້າ ແລະ ອົງປະກອບອື່ນໆຂອງໂຄງການໃນເຂດທີ່ມີຄວາມ ຄ້ອຍຊັນ ກໍ່ຕ້ອງມີຄວາມລະມັດລະວັງບໍ່ຄວນເຮັດໃຫ້ເກີດການເຊາະເຈື່ອນຫຼາຍ ທີ່ຈະເຮັດໃຫ້ພຸມ ສັນຖານການເບິ່ງເຫັນປ່ຽນແປງໄປ.
- ຫຼີກເວັ້ນການເຮັດໜ້າວຽກກ່ຽວກັບບຸກເບີກດິນ ໃນຊ່ວງເວລາທີ່ຝົນຕົກແຮງ ທີ່ຈະກໍ່ໃຫ້ເກີດການເຊາະ ເຈື່ອນໄດ້ງ່າຍ, ດິນທີ່ຖືກຂຸດ ແລະ ດຸດອອກ ພາຍຫຼັງກໍ່ສ້າງແລ້ວ ຄວນປູກຫຍ້າໃສ່ ຫຼື ປະໃຫ້ພືດທີ່ເປັນ ສີຂຽວຂຶ້ນແທນ.

3) ໄລຍະດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ:

ໄລຍະການດຳເນີນງານຂອງໂຄງການ ຈະເປັນໄລຍະການກໍ່ສ້າງ ອົງປະກອບຕ່າງໆຂອງໂຄງການ ທີ່ສຳເລັດ ໝົດແລ້ວ , ເປັນຊ່ວງທີ່ຈະສົ່ງກະແສໄຟຟ້າທີ່ຜະລິດໄດ້ຈາກໂຄງການພະລັງງານລິມ ເພື່ອສົ່ງໄປຂາຍທີ່ຈະໄປເຊື່ອມຕໍ່ກັບ ສະຖານີ 500KV ສສ ຫວຽດນາມ. ດັ່ງນັ້ນ, ໃນຊ່ວງດຳເນີນການ ໂຄງການນີ້ ສິ່ງທີ່ຈະເຮັດໃຫ້ພຸມສັນຖານດັ້ງເດີມ ປ່ຽນໄປ ກໍ່ຄືຈະມີເສົາສາຍສົ່ງໄຟຟ້າ ທີ່ມີຄວາມສູງກວ່າ 50-60 ແມັດ ທີ່ຢາຍກັນຢູ່ຕາມແລວສາຍສົ່ງ. ເຊິ່ງອາດຈະ

ເຮັດໃຫ້ພູມສັນຖານ ໃນການເບິ່ງເຫັນ ມີການປ່ຽນໄປຈາກ ພູມສັນຖານທີ່ມີຢູ່ປະຈຸບັນເລັກໜ້ອຍ, ແຕ່ຜົນກະທົບດັ່ງກ່າວຈະບໍ່ຖືວ່າຮ້າຍແຮງ ເນື່ອງຈາກເສົາໄຟຟ້າແຕ່ລະຕົ້ນ ຈະຢູ່ຫ່າງໄກກັນ ແລະ ລຽງກັນເປັນແລວດຽວຕາມ ແລວສາຍສົ່ງ.

ມາດຕະການຫຼຸດຜ່ອນ:

- ການອະນາໄມຕັດຕົ້ນໄມ້ ແລະ ພືດທີ່ມີຄວາມສູງກວ່າ 3 ແມັດ ອອກຕາມແລວສາຍສົ່ງ ຕ້ອງຕັດແຕ່ ສະເພາະໃນຂອບເຂດແລວສາຍສົ່ງ 70 ແມັດ ເທົ່ານັ້ນ, ບໍ່ໃຫ້ຕັດ ຫຼື ອະນາໄມອອກນອກແລວ, ເພື່ອໃຫ້ມີ ພື້ນທີ່ສີຂຽວກົມກືນກັບ ພູມສັນຖານທຳມະຊາດ ແລະ ເປັນມິດກັບສິ່ງແວດລ້ອມ.

5.3.3 ອຸທົກກະສາດ ແຫຼ່ງນ້ຳ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ

ອີງຕາມແລວສາຍສົ່ງຂອງໂຄງການ ເຫັນວ່າແລວດັ່ງກ່າວແມ່ນມີການຕັດຜ່ານນ້ຳເຊຂະໜານ 1 ຈຸດ, ແລະ ຫ້ວຍ 2 ຈຸດ, ໃນໄລຍະກ່ອນການກໍ່ສ້າງໂຄງການ ແມ່ນມີພຽງກິດຈະກຳການສຳຫຼວດ ແລະ ອອກແບບ, ວາງແລວສາຍສົ່ງ, ເຊິ່ງຈະບໍ່ມີຫຍັງທີ່ຈະກໍ່ໃຫ້ເກີດຜົນກະທົບຕໍ່ກັບດ້ານອຸທົກກະສາດຂອງບັນດາແຫຼ່ງນ້ຳໃນເຂດໂຄງການ.

ມາດຕະການຫຼຸດຜ່ອນ

- ໃນກໍລະນີທີ່ຈະຕັ້ງເສົາແຄມຫ້ວຍ ຫຼື ຕະຫຼິ່ງຫ້ວຍຕ້ອງໃຫ້ພົ້ນຈາກລະດັບນ້ຳສູງສຸດທີ່ເຄີຍຖ້ວມເພື່ອ ຮັບປະກັນຄວາມໝັ້ນຄົງແຂງແຮງ ແລະ ບໍ່ກີດຂວາງທາງໄຫຼຂອງນ້ຳ

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ

ດັ່ງທີ່ໄດ້ກ່າວມາຂ້າງເທິງແລວສາຍສົ່ງຂອງໂຄງການເຫັນວ່າມີການຕັດຜ່ານນ້ຳເຊຂະໜານ 1 ຈຸດ, ແລະ ຫ້ວຍ 2 ຈຸດ. ໃນນີ້ທາງໂຄງການບໍ່ໄດ້ມີການຕັ້ງເສົາສາຍສົ່ງຕາມລຳນ້ຳ ແລະ ລັກສະນະເປັນການປັກເສົາພາດສາຍຂ້າມຫ້ວຍນ້ຳ ບໍ່ ມີການກີດຂວາງລຳນ້ຳ ຫຼື ເຮັດໃຫ້ລຳນ້ຳປ່ຽນແປງທິດທາງການໄຫຼ. ດັ່ງນັ້ນ, ຈຶ່ງບໍ່ມີຜົນກະທົບຕໍ່ດ້ານອຸທົກກະສາດ ຂອງແຫຼ່ງນ້ຳໃນເຂດໂຄງການ.

ແຕ່ເຖິງຢ່າງໃດກໍ່ຕາມກິດຈະກຳໃນໄລຍະການກໍ່ສ້າງເສັ້ນທາງຈະປະກອບດ້ວຍບັນດາກິດຈະກຳຕ່າງໆເປັນຕົ້ນແມ່ນ ການບຸກເບີກທະລຸເສັ້ນທາງເຂົ້າຕົນເສົາ, ຕັດໜ້າດິນ, ການປັບດິນກໍ່ສ້າງຕົນເສົາສາຍສົ່ງໄຟຟ້າ, ການຖາງແລວສາຍສົ່ງ , ການດຶງສາຍສົ່ງ ແລະ ອື່ນໆ ໂດຍສະເພາະການບຸກເບີກກໍ່ສ້າງໃນເຂດພູທີ່ມີຄວາມຄ້ອຍຊັນສູງ ໃນລະດູຝົນອາດ ຈະເຮັດໃຫ້ມີການເຊາະລ້າງຕະກອນດິນລົງສູ່ແຫຼ່ງນ້ຳເຮັດໃຫ້ເກີດການຕື້ນເຂີນໄດ້ເຫຼັກໜ້ອຍ.

ມາດຕະການຫຼຸດຜ່ອນ

- ວາງແຜນການກໍ່ສ້າງໄວ້ໃນຊ່ວງລະດູແລ້ງເພື່ອຫຼຸດຜ່ອນການເຊາະລ້າງຂອງຕະກອນດິນລົງສູ່ແຫຼ່ງນ້ຳ

- ຢູ່ບໍລິເວນເຂດການບຸກເບີກສ້າງຕີນເສົາໄຟທຸກຕົ້ນພາຍລັງສຳເລັດແລ້ວຕ້ອງມີການຖົມຄືນ ແລະ ຢຽບ ໃຫ້ແໜ້ນເພື່ອຫຼຸດການເຊາະລ້າງຂອງຕະກອນດິນໃນຊ່ວງລະດູຝົນ.
- ພາຍຫຼັງກໍ່ສ້າງແລ້ວໃຫ້ມີການປູກພືດ/ຫຍ້າປົກຫຸ້ມດິນບໍລິເວນຕີນເສົາເພື່ອຫຼຸດການເຊາະລ້າງຂອງຕະ ກອນດິນ.
- ກອງດິນ, ຊາຍ, ວັດສະດຸກໍ່ສ້າງຕ້ອງຫ່າງຈາກເຂດທີ່ມີແຫຼ່ງນ້ຳ ເພື່ອບໍ່ໃຫ້ມີການຊະລ້າງລົງສູ່ຫ້ວຍຕ່າງໆ.

3) ໄລຍະດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ

ໃນໄລຍະການດຳເນີນງານ (ໄລຍະສົ່ງໄຟ) ແມ່ນມີພຽງການສົ່ງກະແສໄຟຟ້າທີ່ຜະລິດໄດ້ຈາກໂຄງການພະລັງງານລົມ ຜ່ານສະຖານີຍ່ອຍຂອງໂຄງການ ຫາ ສະຖານີ 500 kV ເມືອງແທງມີ (Thanh My) ປະເທດ ສສ ຫວຽດນາມ ໃນ ນີ້ການຖາງອະນາໄມຕາມແລວສາຍສົ່ງບາງຄັ້ງຄາວ ຈະບໍ່ມີກິດຈະກຳໃດທີ່ຈະກໍ່ໃຫ້ເກີດຜົນກະທົບດ້ານອຸທົກ ກະສາດຂອງແຫຼ່ງນ້ຳໃນເຂດໂຄງການ.

5.3.4 ການເຊາະເຈື່ອນ ແລະ ການຕົກຕະກອນ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ

ໃນໄລຍະກ່ອນການກໍ່ສ້າງໂຄງການນີ້ ກິດຈະກຳຂອງໂຄງການຈະມີພຽງການສຳຫຼວດ, ອອກແບບແລວສາຍສົ່ງເທົ່າ ນັ້ນ. ດັ່ງນັ້ນ, ການຕົກຕະກອນ ແລະ ການເຊາະເຈື່ອນຂອງດິນ ແມ່ນຈະບໍ່ມີຜົນກະທົບເກີດຂຶ້ນ, ເນື່ອງຈາກໃນຊ່ວງ ນີ້ ທາງໂຄງການຍັງບໍ່ມີກິດຈະກຳຫຍັງ ທີ່ຈະເປັນເຫດໃຫ້ມີ ການການຕົກຕະກອນ ແລະ ການເຊາະເຈື່ອນຂອງດິນ.

ມາດຕະການຫຼຸດຜ່ອນ:

ທາງໂຄງການ ບໍ່ມີຄວາມຈຳເປັນ ດຳເນີນມາດຕະການຫຍັງເປັນພິເສດ ເນື່ອງຈາກທາງໂຄງການ ບໍ່ໄດ້ມີກິດຈະກຳ ຫຍັງທີ່ຈະກໍ່ໃຫ້ເກີດຜົນກະທົບຕໍ່ການຕົກຕະກອນ ແລະ ການເຊາະເຈື່ອນ ທີ່ຈະເກີດຂຶ້ນໃນຊ່ວງກ່ອນການກໍ່ສ້າງນີ້.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ

ອີງຕາມແລວສາຍສົ່ງຂອງໂຄງການແມ່ນເປັນການກໍ່ສ້າງແລວໃໝ່ ທັງໝົດ ໄລຍະທາງປະມານ 21 ກິໂລແມັດ. ໂດຍ ສະພາບການນຳໃຊ້ທີ່ດິນ ແລະ ປ່າໄມ້ຕາມແລວສາຍສົ່ງແມ່ນເປັນພື້ນທີ່ປ່າໄມ້ທຳມະຊາດ ແລະ ພື້ນທີ່ດິນນຳໃຊ້ ຂອງປະຊາຊົນ ເຊິ່ງໜ້າດິນຍັງມີພືດປົກຄຸມຢູ່. ດັ່ງນັ້ນ, ອີງໃສ່ກິດຈະກຳຂອງໂຄງການໃນໄລຍະການກໍ່ສ້າງທີ່ຕ້ອງມີ ການເປີດພື້ນທີ່ຜິວໜ້າດິນໂດຍການຕັດຕົ້ນໄມ້ ແລະ ຖາງຫຍ້າ, ພືດທີ່ປົກຫຸ້ມໜ້າດິນ ພ້ອມທັງຕ້ອງມີການບຸກເບີກ ຂຸດຂຸມຕັ້ງເສົາສາຍສົ່ງໄຟຟ້າຕະຫຼອດແລວສາຍສົ່ງ ເຮັດໃຫ້ໜ້າດິນຖືກເປີດ ແລະ ຖ້າຫາກມີຝົນຕົກແຮງກໍ່ຈະເຮັດ ໃຫ້ເກີດການເຊາະເຈື່ອນຂອງດິນໃນພື້ນທີ່ດັ່ງກ່າວໄດ້. ແຕ່ເຖິງຢ່າງໃດກໍ່ຕາມຜົນກະທົບຈະເກີດຂຶ້ນໃນບໍລິເວນຂະ ໜາດນ້ອຍສະເພາະເຂດກໍ່ສ້າງຕີນເສົາສາຍສົ່ງໄຟຟ້າເຂດທີ່ມີຄວາມຄ້ອຍຊັນຫຼາຍເທົ່ານັ້ນ ຈຶ່ງຄາດວ່າຜົນກະທົບຈະ ຢູ່ໃນລະດັບຕ່ຳ.

ມາດຕະການຫຼຸດຜ່ອນ:

- ວາງແຜນໜ້າວຽກກ່ຽວກັບດິນໄວ້ໃນຊ່ວງລະດູແລ້ງເພື່ອຫຼຸດຜ່ອນການເກີດການເຊາະເຈື່ອນເນື່ອງຈາກນ້ຳຝົນ, ຖ້າເຮັດວຽກໃນຊ່ວງລະດູຝົນເວລາມີຝົນຕົກແຮງ, ຕ້ອງມີການພັກເຮັດວຽກ ທີ່ກ່ຽວຂ້ອງກັບວຽກດິນ ໂດຍສະເພາະມື້ທີ່ມີຝົນຕົກແຮງ.
- ຫຼີກລ່ຽງບໍ່ໃຫ້ມີການກໍ່ສ້າງບໍລິເວນແຄມຫ້ວຍນ້ຳພ້ອມກັນເພື່ອຫຼຸດປະລິມານການເຊາະເຈື່ອນຂອງດິນລົງ ສູ່ແຫຼ່ງນ້ຳຕາມເສັ້ນທາງໂຄງການ.
- ຄວບຄຸມບໍ່ໃຫ້ມີການດຸດດິນລົງສູ່ແຫຼ່ງນ້ຳທຳມະຊາດ ຫຼື ພື້ນທີ່ໃກ້ຄຽງ, ພື້ນທີ່ຄ້ອຍຊັນ ເພື່ອບໍ່ໃຫ້ຕະກອນ ດິນລົງສູ່ແຫຼ່ງນ້ຳ.
- ຢູ່ບໍລິເວນເຂດການບຸກເບີກສ້າງຕີນເສົາໄຟທຸກຕົ້ນພາຍຫຼັງສຳເລັດແລ້ວຕ້ອງມີການຖົມຄືນ ແລະ ຢຽບ ໃຫ້ແໜ້ນເພື່ອຫຼຸດການເຊາະລ້າງຂອງຕະກອນດິນໃນຊ່ວງລະດູຝົນ.
- ພາຍຫຼັງກໍ່ສ້າງແລ້ວໃຫ້ມີການປູກພືດ/ຫຍ້າປົກຫຸ້ມດິນບໍລິເວນຕີນເສົາເພື່ອຫຼຸດການເຊາະລ້າງຂອງຕະ ກອນດິນ
- ໃນກໍລະນີທີ່ຈະຕັ້ງເສົາແຄມຫ້ວຍ ຫຼື ຕະຫຼິ່ງຫ້ວຍ ຕ້ອງໃຫ້ພື້ນຈາກລະດັບນ້ຳສູງສຸດ ທີ່ເຄີຍຖ້ວມເພື່ອ ຮັບປະກັນຄວາມໝັ້ນຄົງແຂງແຮງ ແລະ ຮັບປະກັນການເຊາະເຈື່ອນຕາມແຄມຫ້ວຍ.
- ຕ້ອງມີການກໍ່ສ້າງປ້ອງກັນການເຊາະເຈື່ອນຕີນເສົາໄຟຟ້າ ຖ້າທີ່ຕັ້ງຂອງເສົາໄຟທີ່ຕັ້ງຢູ່ເຂດ ທີ່ມີຄວາມຄ້ອຍ ຊັນຫຼາຍ.

3) ໄລຍະດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ

ໃນໄລຍະການດຳເນີນງານ (ໄລຍະສົ່ງໄຟ) ແມ່ນມີພຽງການສົ່ງກະແສໄຟຟ້າທີ່ຜະລິດໄດ້ຈາກສະຖານີ ເຂດບ້ານດາກ ບອງ ສະຖານີຍ່ອຍຂອງໂຄງການ ຫາ ສະຖານີ 500 kV ເມືອງແທງມີ (Thanh My) ປະເທດ ສສ ຫວຽດນາມ ແລະ ການຖາງອະນາໄມຕາມແລວສາຍສົ່ງບາງຄັ້ງຄາວ ຈະບໍ່ມີກິດຈະກຳໃດທີ່ຈະກໍ່ໃຫ້ເກີດຜົນກະທົບດ້ານການ ເກີດການເຊາະເຈື່ອນຂອງດິນໃນເຂດໂຄງການ.

ມາດຕະການຫຼຸດຜ່ອນ:

- ກໍ່ສ້າງກັນເຈື່ອນສຳລັບຈຸດທີ່ມີຄວາມສ່ຽງຕໍ່ການເຊາະເຈື່ອນຂອງດິນ.
- ຕ້ອງມີການເຝົ້າລະວັງ ແລະ ມີການບຳລຸງຮັກສາ ສິ່ງກໍ່ສ້າງຕ່າງໆ ໃຫ້ມີຄວາມໝັ້ນຄົງ ແລະ ຮັບປະກັນຕໍ່ ການໃຊ້ງານຢູ່ສະເໝີ.

5.3.5 ຄຸນນະພາບນ້ຳ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ

ໃນໄລຍະກ່ອນການກໍ່ສ້າງໂຄງການນີ້ ທາງໂຄງການບໍ່ມີກິດຈະກຳຫຍັງ ທີ່ຈະກໍ່ໃຫ້ເກີດຜົນກະທົບ ຕໍ່ຄຸນນະພາບນ້ຳ , ນອກຈາການສຳຫຼວດ ແລະ ການອອກແບບເສົາໄຟ, ທາງເລືອກແລວສາຍສົ່ງເທົ່ານັ້ນ. ດັ່ງນັ້ນ, ທາງໂຄງການບໍ່ມີ ຄວາມຈຳເປັນຫຍັງຕ້ອງດຳເນີນ ມາດຕະການຫຼຸດຜ່ອນ ໃນຊ່ວງກ່ອນການກໍ່ສ້າງຂອງໂຄງການ.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ເຖິງແມ່ນວ່າໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ ອາດຈະບໍ່ມີຜົນກະທົບຮ້າຍແຮງໂດຍກົງ ຕໍ່ຄຸນນະພາບນ້ຳໜ້າດິນ, ແຕ່ກິດຈະກຳການກໍ່ສ້າງເຊັ່ນການບຸກເບີກກໍ່ສ້າງຕີນເສົາໄຟ ຂອງໂຄງການແມ່ນຄາດວ່າຈະມີຜົນກະທົບເກີດຂຶ້ນ ຈາກບັນດາກິດຈະກຳຕ່າງໆຄື:

- ຜົນກະທົບຈາກຕະກອນດິນ: ໃນກິດຈະກຳການກໍ່ສ້າງຕີນເສົາໄຟຟ້າ ຈະມີໜ້າວຽກກ່ຽວກັບດິນເຊັ່ນ: ການ ຕັດດິນ, ຖົມດິນ, ການບົດອັດ ເມື່ອໜ້າດິນຖືກເປີດ, ມີກອງດິນ, ກອງວັດສະດຸກໍ່ສ້າງ ເຮັດໃຫ້ເປັນແຫຼ່ງກຳ ເນີດຕະກອນດິນ ເຊິ່ງອາດຈະສົ່ງຜົນກະທົບຕໍ່ກັບຄຸນນະພາບນ້ຳ ໂດຍສະເພາະໃນລະດູຝົນ ຫາກມີຝົນຕົກ ລົງມາຈະເຮັດໃຫ້ມີການຊະລ້າງລົງສູ່ແຫຼ່ງນ້ຳເຮັດໃຫ້ເກີດນ້ຳຂຸ່ນ ເຖິງຢ່າງໃດກໍ່ຕາມ ຄວາມຂຸ່ນ ຈາກຕະກອນດິນຈະບໍ່ເປັນພິດຕໍ່ແຫຼ່ງນ້ຳ ແຕ່ຄວາມຂຸ່ນທີ່ເພີ່ມຂຶ້ນຂອງນ້ຳຈະເກີດຜົນກະທົບຕໍ່ສິ່ງທີ່ມີ ຊີວິດໃນນ້ຳເມື່ອມີຄວາມຂຸ່ນສູງຜິດປົກກະຕິ ແລະ ຂຸ່ນເປັນເວລາຫຼາຍມື້ ໂດຍສິ່ງຜົນກະທົບຕໍ່ການສ່ອງ ຜ່ານຂອງແສງ ເຊິ່ງມີຜົນຕໍ່ການສັງເຄາະແສງຂອງພືດນ້ຳ ແລະ ເຮັດໃຫ້ສິ່ງມີຊີວິດໃນນ້ຳຫາຍໃຈບໍ່ ສະດວກ.
- ຜົນກະທົບຈາກບ່ອນພັກກຳມະກອນກໍ່ສ້າງ: ນ້ຳເປື້ອນ ແລະ ເສດຂີ້ເຫຍື້ອຈາກບ່ອນພັກກຳມະກອນກໍ່ສ້າງ ທາງຖ້າຫາກບໍ່ມີການຄວບຄຸມ ແລະ ມີການລະບາຍ ຫຼື ຖິ້ມລົງແຫຼ່ງນ້ຳທຳມະຊາດກໍ່ອາດຈະກໍ່ໃຫ້ເກີດ ການປົນເປື້ອນ ແລະ ສິ່ງຜົນກະທົບຕໍ່ການປ່ຽນແປງຄຸນນະພາບນ້ຳໄດ້.
- ຜົນກະທົບຈາກການນຳໃຊ້ກົນຈັກ, ລົດໜັກ ແລະ ການບຳລຸງຮັກສາ, ສ້ອມແປງເຄື່ອງກໍ່ສ້າງ: ໃນການນຳ ໃຊ້ລົດ, ກົນຈັກໃນການກໍ່ສ້າງຕ້ອງມີການບຳລຸງຮັກສາ ແລະ ສ້ອມແປງໂດຍການປ່ຽນນ້ຳມັນເຄື່ອງ, ການ ລ້າງອຸປະກອນຕ່າງໆເປັນຕົ້ນ ເຊິ່ງອາດມີການຕົກເຮ່ຍ ແລະ ຊະລ້າງລົງສູ່ແຫຼ່ງນ້ຳທີ່ຢູ່ໃກ້ ກໍ່ໃຫ້ເກີດການປົນ ເປື້ອນ ແລະ ສິ່ງຜົນກະທົບຕໍ່ການປ່ຽນແປງຄຸນນະພາບນ້ຳໄດ້.

ມາດຕະການຫຼຸດຜ່ອນ:

- ຄວບຄຸມບໍ່ໃຫ້ມີການດຸດດິນບໍລິເວນກໍ່ສ້າງຕີນເສົາລົງສູ່ແຫຼ່ງນ້ຳທຳມະຊາດ ຫຼື ພື້ນທີ່ໃກ້ຄຽງ, ພື້ນທີ່ຄ້ອຍ ຊັນ ເພື່ອບໍ່ໃຫ້ຕະກອນດິນລົງສູ່ແຫຼ່ງນ້ຳ
- ຫຼີກລ່ຽງບໍ່ໃຫ້ມີການກໍ່ສ້າງບໍລິເວນແຄມຫ້ວຍນ້ຳ ເພື່ອຫຼຸດປະລິມານຕະກອນດິນລົງສູ່ແຫຼ່ງນ້ຳຕາມແລວ ສາຍສົ່ງຂອງໂຄງການ

- ກອງດິນ, ຊາຍ, ວັດສະດຸກໍ່ສ້າງຕິນເສົາໄຟຕ້ອງຫ່າງຈາກເຂດທີ່ມີແຫຼ່ງນ້ຳ ເພື່ອບໍ່ໃຫ້ມີການຊະລ້າງລົງສູ່ຫ້ວຍ
- ສະຖານທີ່ສ້ອມແປງເຄື່ອງຈັກ-ອຸປະກອນໃນການກໍ່ສ້າງ ຕ້ອງຢູ່ຫ່າງໄກຈາກແຫຼ່ງນ້ຳ ແລະ ແລວທິດທາງການໄຫຼຂອງຮ່ອງນ້ຳຝົນ ເພື່ອຫຼີກລ່ຽງ ແລະ ຫຼຸດຜ່ອນການໄຫຼລົງ ຂອງນ້ຳປົນເປື້ອນສານເຄມີລົງສູ່ແມ່ນ້ຳ ໄດ້ງ່າຍ.
- ທາງໂຄງການຕ້ອງມີສັນຍາ ການປັບໄໝຕ່ຳກັບຜູ້ທີ່ຮັບເໝົາການກໍ່ສ້າງໂຄງການ, ເພື່ອເປັນຂໍ້ຜູກມັດບໍ່ໃຫ້ຜູ້ຮັບເໝົາກໍ່ສ້າງ ລ້າງລົດ, ເຄື່ອງມື ແລະ ອຸປະກອນການກໍ່ສ້າງຕ່າງໆ ໃສ່ຕາມແຄມແມ່ນ້ຳ ຫຼື ຫ້ວຍຕ່າງໆ
- ກວດກາສະພາບການໃຊ້ງານຂອງອຸປະກອນກໍ່ສ້າງຢູ່ຕະຫຼອດ
- ຄວບຄຸມຢ່າງເຂັ້ມງວດບໍ່ໃຫ້ມີການລະບາຍນ້ຳເປື້ອນ ແລະ ຂີ້ເຫຍື້ອ ຈາກບ່ອນພັກກຳມະກອນລົງສູ່ແຫຼ່ງນ້ຳ
- ບ່ອນພັກກຳມະກອນ ຕ້ອງຈັດໃຫ້ມີຫ້ອງນ້ຳ-ຫ້ອງສ້ວມສຳລັບຄົນງານ ໃຫ້ພຽງພໍ ແລະ ຖືກຫຼັກອະນາໄມ.

3) ໄລຍະດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ

ມາຮອດໄລຍະດຳເນີນງານໂຄງການ ຈະບໍ່ມີກິດຈະກຳອັນໃດທີ່ຈະກໍ່ໃຫ້ເກີດຜົນກະທົບຕໍ່ຄຸນນະພາບຂອງແຫຼ່ງນ້ຳ ແຕ່ເຖິງຢ່າງໃດກໍ່ຕາມ ທາງໂຄງການກໍ່ຕ້ອງເອົາໃຈໃສ່ ຕໍ່ການບຳລຸງຮັກສາໂຄງສ້າງ ຂອງອົງປະກອບຕ່າງໆ ຂອງໂຄງການໄວ້ໃຫ້ດີ, ໂດຍສະເພາະ ບໍລິເວນພື້ນທີ່ຕັ້ງຕິນເສົາໄຟຟ້າ ໃຫ້ມີການປູກຫຍ້າໃສ່ ເພື່ອຮັບປະກັນບໍ່ໃຫ້ມີການເຊາະເຈື່ອນຂອງດິນເກີດຂຶ້ນ ໃນລະດູຝົນ ທີ່ຈະກໍ່ໃຫ້ເກີດນ້ຳເປື້ອນລົງສູ່ແມ່ນນ້ຳ.

ມາດຕະການຫຼຸດຜ່ອນ:

- ພາຍຫຼັງການກໍ່ສ້າງສຳເລັດຕ້ອງມີການປູກຫຍ້າ ຫຼື ຕົ້ນໄມໃສ່ບໍລິເວນທີ່ມີການຕັດໜ້າດິນຕິນເສົາ ເພື່ອຊ່ວຍປ້ອງກັນການເຊາະເຈື່ອນຂອງດິນ.
- ກໍ່ສ້າງກັນເຈື່ອນສຳລັບຈຸດທີ່ມີຄວາມສ່ຽງຕໍ່ການເຊາະເຈື່ອນຂອງດິນ.
- ຕ້ອງມີການເຝົ້າລະວັງ ແລະ ມີການບຳລຸງຮັກສາ ສິ່ງກໍ່ສ້າງຕ່າງໆ ໃຫ້ມີຄວາມໝັ້ນຄົງ ແລະ ຮັບປະກັນຕໍ່ການໃຊ້ງານຢູ່ສະເໝີ.

5.3.6 ຊັບພະຍາກອນແຮ່ທາດ

1) ໄລຍະກ່ອນກໍ່ສ້າງ/ໄລຍະກໍ່ສ້າງ/ໄລຍະດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ

ດັ່ງທີ່ໄດ້ກ່າວມາໃນ ພາກທີ 4 ເຫັນວ່າແຂວງເຊກອງ ເປັນແຂວງທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ເຊິ່ງນອກຈາກຈະມີຄວາມດ້ວຍຊັບພະນາກອນປ່າໄມ້, ດິນ ແລະ ແຫຼ່ງນ້ຳແລ້ວ ຢູ່ພື້ນດິນຍັງມີແຮ່ທາດຫຼາຍຊະນິດ ທີ່ຍັງບໍ່ທັນໄດ້ຂຸດຄົ້ນເຊັ່ນ: ຄຳ, ທອງ, ເຫຼັກ, ຖ່ານຫີນ, ບົກຊິດ ແລະ ອື່ນໆ ເຊິ່ງເປັນອີກໜຶ່ງທ່າແຮງທີ່ສຳຄັນ. ສຳລັບແຮ່ທາດຢູ່ເມືອງດາກຈຶງ ແມ່ນໄດ້ກວມເອົາ 765 ກິໂລແມັດ ກວມເອົາ 28% ຂອງເນື້ອທີ່ທັງໝົດທົ່ວເມືອງ, ທົ່ວເມືອງມີ ແຮ່ຄຳ, ແຮ່ບົກຊິດ ແລະ ແຮ່ເຫຼັກ ເຊິ່ງໄດ້ມີຫຼາຍບໍລິສັດເຂົ້າມາສຳປະທານຂຸດຄົ້ນຫຼາຍບໍລິສັດ. ສ່ວນ

ໃນເຂດພື້ນທີ່ໂຄງການ ອີງຕາມການລົງສຳຫຼວດເກັບກຳຂໍ້ມູນຕົວຈິງແມ່ນເຫັນວ່າ ໂຄງການບໍ່ໄດ້ນອນໃນພື້ນທີ່ທີ່ມີແຮ່ທາດທີ່ສຳຄັນໃດ.

ມາດຕະການຫຼຸດຜ່ອນ:

ເຖິງແມ່ນວ່າໃນພື້ນທີ່ ສຳປະທານການກໍ່ສ້າງ ໂຄງການສາຍສົ່ງດັ່ງກ່າວ ບໍ່ມີຊັບພະຍາກອນແຮ່ທາດ ພໍທີ່ຈະຂຸດຄົ້ນໄດ້, ແຕ່ໂຄງການກໍຕ້ອງມີຄວາມລະມັດລະວັງ ຖ້າກໍລະນີພົບເຫັນແຮ່ທາດ ໃນເຂດໃດໜຶ່ງຂອງຊ່ວງການກໍ່ສ້າງ, ທາງໂຄງການກໍ່ຕ້ອງ ລາຍງານໃຫ້ພາກສ່ວນລັດທີ່ກ່ຽວຂ້ອງ ລົງກວດກາ ແລະ ເກັບກຳຂໍ້ມູນເພີ່ມ ເພື່ອໃຫ້ແນ່ໃຈວ່າ ມີແຮ່ທາດໃນເຂດດັ່ງກ່າວແທ້ບໍ່.

5.3.7 ສຽງ ແລະ ການສັ່ນສະເທືອນ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ໃນໄລຍະກ່ອນການກໍ່ສ້າງໂຄງການນີ້ ກິດຈະກຳຂອງທາງໂຄງການຈະມີພຽງການສຳຫຼວດຂໍ້ມູນ, ການອອກແບບ ແລະ ວາງແຜນການກໍ່ສ້າງ ເຊິ່ງບໍ່ໄດ້ມີການນຳໃຊ້ເຄື່ອງມືທີ່ກໍ່ໃຫ້ເກີດສຽງດັງລົບກວນຊຸມຊົນ. ດັ່ງນັ້ນ, ທາງໂຄງການ ບໍ່ມີຄວາມຈຳເປັນຕ້ອງດຳເນີນມາດຕະການຫຍັງເປັນພິເສດເພື່ອຫຼຸດຜ່ອນຜົນກະທົບດ້ານສຽງນັ້ນ.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຢູ່ໃນໄລຍະການກໍ່ສ້າງໂຄງການນີ້ ອາດຈະມີກິດຈະກຳ ທີ່ພົວພັນກັບການກໍ່ສ້າງ ອີງປະກອບຕ່າງໆ ຂອງໂຄງການ ທີ່ອາດຈະກໍ່ໃຫ້ເກີດຜົນກະທົບດ້ານສຽງ ແລະ ແຮງສັ່ນສະເທືອນຕາມມາ, ແຕ່ຈະບໍ່ຮ້າຍແຮງ ເນື່ອງຈາກການກໍ່ສ້າງ ສາຍສົ່ງໄຟຟ້າດັ່ງກ່າວນີ້ ຈະບໍ່ມີການລະເບີດຫີນເພື່ອບຸກເບີກແລວສາຍສົ່ງ ແລະ ບໍ່ໄດ້ມີການນຳໃຊ້ເຄື່ອງມື ຫຼື ກົນຈັກໜັກຫຼາຍ. ນອກຈາກການນຳໃຊ້ລົດດຸດ, ລົດຈີກ ແລະ ອື່ນໆ ເຂົ້າໃນກິດຈະກຳການຂຸດ, ການດຸດ ເຂດກໍ່ສ້າງຕີນເສົາໄຟຟ້າ ແລະ ການຂົນສົ່ງວັດສະດຸກໍ່ສ້າງຕ່າງໆ ທີ່ຈະເປັນແຫຼ່ງທີ່ມາຂອງສຽງດັງ ແລະ ແຮງສັ່ນສະເທືອນ. ໂດຍພິຈາລະນາຈາກພື້ນທີ່ກໍ່ສ້າງແລວສາຍສົ່ງຂອງໂຄງການແລ້ວແມ່ນເຫັນວ່າເຂດກໍ່ສ້າງຕ່າງໆແມ່ນຢູ່ຫ່າງໄກຈາກເຂດທີ່ຕັ້ງຂອງຊຸມຊົນ ທັງ 5 ບ້ານ. ດັ່ງນັ້ນ, ຈຶ່ງປະເມີນໄດ້ວ່າຜົນກະທົບດັ່ງກ່າວຈະຢູ່ໃນລະດັບຕ່ຳ ແລະ ຜູ້ທີ່ຈະໄດ້ຮັບຜົນກະທົບໂດຍກົງ ແມ່ນມີພຽງກຳມະກອນທີ່ເຮັດວຽກໃນພາກສະໜາມ, ໃນນີ້ສາມາດຫຼຸດຜ່ອນຜົນກະທົບໄດ້ເຊິ່ງທາງໂຄງການ ໂດຍສະເພາະບໍລິສັດ ຜູ້ຮັບເໝົາການກໍ່ສ້າງ ຕ້ອງປະຕິບັດ ແລະ ເອົາໃຈໃສ່ ບາງມາດຕະການຫຼຸດຜ່ອນທີ່ຈຳເປັນດັ່ງລຸ່ມນີ້:

ມາດຕະການຫຼຸດຜ່ອນ:

- ກິດຈະກຳການກໍ່ສ້າງ ທີ່ເປັນອົງປະກອບຕ່າງໆຂອງໂຄງການ, ໂດຍສະເພາະກິດຈະກຳ ທີ່ຈະກໍ່ໃຫ້ເກີດສຽງ ແລະ ແຮງສັ່ນສະເທືອນ ຕ້ອງດຳເນີນໃນເວລາຕອນກາງວັນເທົ່ານັ້ນ ໃນລະຫວ່າງ 07:00 ໂມງເຊົ້າ - 18:00 ໂມງແລງ.

- ຕ້ອງມີການບຳລຸງຮັກສາເຄື່ອງມື ທີ່ນຳໃຊ້ເຂົ້າໃນການກໍ່ສ້າງ ໃຫ້ຢູ່ໃນສະພາບທີ່ດີ ແລະ ໄດ້ມາດຕະຖານ ທີ່ບໍ່ກໍ່ໃຫ້ເກີດສຽງດັງແຮງເກີນໄປ.
- ຄວາມໄວຂອງລົດກໍ່ສ້າງ: ຕ້ອງມີການຈຳກັດ ແລະ ຄວບຄຸມຄວາມໄວລົດບັນທຸກການກໍ່ສ້າງ ໃຫ້ບໍ່ໃຫ້ເກີນ 30 ກມ/ຊມ ສຳລັບລົດເຂົ້າ-ອອກພາຍໃນໂຄງການ, ໂດຍສະເພາະເວລາຂົນສົ່ງ ວັດສະດຸກໍ່ສ້າງ ຜ່ານເຂດບ້ານຕ່າງໆເຂົ້າໄປຫາເຂດຈຸດກໍ່ສ້າງຂອງໂຄງການ.
- ເວລາມີການກໍ່ສ້າງໜັກ: ຕ້ອງພັກກິດຈະກຳການກໍ່ສ້າງໜັກ ທີ່ຈະກໍ່ໃຫ້ເກີດສຽງ ແລະ ແຮງສັ່ນສະເທືອນ ໃນເວລາຄ່ຳຄືນເຊິ່ງເປັນເວລາພັກຜ່ອນຂອງຊາວບ້ານໃກ້ຄຽງ, ນອກຈາກນີ້ການກໍ່ສ້າງໜັກ ຕ້ອງມີການພັກວຽກ ໃນມື້ວັນສິນທາງສາດສະໜາ ໂດຍສະເພາະມື້ຂຶ້ນ ແລະ ແຮມ 15 ຄ່ຳຂອງທຸກໆເດືອນ ຫຼື ວັນສຳຄັນຕ່າງໆຕາມການນັບຖືຂອງທ້ອງຖິ່ນທີ່ຕັ້ງໂຄງການ.

3) ໄລຍະດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ:

ໄລຍະການດຳເນີນງານຂອງໂຄງການ ຈະເປັນໄລຍະທີ່ການກໍ່ສ້າງ ອົງປະກອບຕ່າງໆຂອງໂຄງການ ທີ່ສຳເລັດໝົດແລ້ວ. ດັ່ງນັ້ນ, ໃນຊ່ວງດຳເນີນການ ໂຄງການນີ້ ຈະບໍ່ມີກິດຈະກຳໃດທີ່ຈະກໍ່ໃຫ້ເກີດຜົນກະທົບດ້ານສຽງດັງ.

ມາດຕະການຫຼຸດຜ່ອນ:

ເຖິງຢ່າງໃດກໍ່ຕາມແຮງສັ່ນສະເທືອນຈາກສາຍສົ່ງໄຟຟ້າແຮງສູງ, ໃນຊ່ວງທຳການຜະລິດກະແສໄຟຟ້ານີ້ ແມ່ນຈະມີການໃຊ້ສາຍສົ່ງໄຟຟ້າແຮງສູງ 500 kV, ຢູ່ກ້ອງແລວສາຍສົ່ງ ຈະເກີດມີສຽງສັ່ນສະເທືອນພໍສົມຄວນ. ເພື່ອຫຼຸດຜ່ອນຜົນກະທົບດັ່ງກ່າວ ທາງໂຄງການຕ້ອງມີການອອກແບບນຳໃຊ້ອຸປະກອນການຫຼຸດຜ່ອນ, ນອກຈາກນັ້ນກໍ່ຕ້ອງມີການຕິດປ້າຍແຈ້ງເຕືອນສຽງສັ່ນສະເທືອນໃສ່ແຕ່ລະເສົາໄຟຟ້າແຮງສູງ, ເພື່ອໃຫ້ປະຊາຊົນທ້ອງຖິ່ນມີຄວາມລະມັດລະວັງ ເວລາເຂົ້າເຈົ້າໄປຊອກຢູ່ຫາກິນ.

5.3.8 ຄຸນນະພາບອາກາດ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ

ຢູ່ໃນໄລຍະກ່ອນການກໍ່ສ້າງໂຄງການນີ້ ແມ່ນຈະບໍ່ມີຜົນກະທົບຫຍັງ ເກີດຂຶ້ນຕໍ່ຄຸນນະພາບອາກາດ, ເນື່ອງຈາກທາງໂຄງການ ບໍ່ໄດ້ມີກິດຈະກຳການກໍ່ສ້າງໃດໆເທື່ອ, ດັ່ງນັ້ນ ທາງໂຄງການ ບໍ່ມີຄວາມຈຳເປັນ ຕ້ອງດຳເນີນມາດຕະການຫຼຸດຜ່ອນໃນຊ່ວງນີ້.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຢູ່ໃນຊ່ວງທີ່ມີການກໍ່ສ້າງໂຄງການ ຈະເກີດມີຂີ້ຝຸ່ນ ທີ່ຈະເກີດມາຈາກການບຸກເບີກພື້ນທີ່ກໍ່ສ້າງຕີນເສົາ, ແລວທາງໄປກໍ່ສ້າງຕີນເສົາ, ການຂົນສົ່ງວັດສະດຸ ເພື່ອຮັບໃຊ້ການກໍ່ສ້າງສາຍສົ່ງ ທີ່ຂົນມາຈາກພາຍນອກຜ່ານຕົວເມືອງ ແລະ ບັນດາບ້ານເຂົ້າໄປຫາເຂດກໍ່ສ້າງຕ່າງໆ, ການເຜົາໄໝ້ໃນການນຳໃຊ້ເຄື່ອງກົນຈັກໜັກ ເຂົ້າໃນການກໍ່ສ້າງຈະກໍ່ໃຫ້ເກີດສານຊຸມເຟີໄດອັອກໄຊ SO_2, ກາກບອນໂມໂນໄຊ CO ແລະ ກາກບອນໄດອັອກໄຊ CO_2. ແຕ່ເມື່ອ

ພິຈາລະນາຈາກພື້ນທີ່ກໍ່ສ້າງແລວສາຍສົ່ງຂອງໂຄງການແລ້ວແມ່ນເຫັນວ່າເຂດກໍ່ສ້າງຕ່າງໆແມ່ນຢູ່ຫ່າງໄກຈາກເຂດທີ່ຕັ້ງຂອງຊຸມຊົນ ທັງ 5 ບ້ານພໍສົມຄວນ. ດັ່ງນັ້ນ, ຈຶ່ງປະເມີນໄດ້ວ່າຜົນກະທົບດັ່ງກ່າວຈະຢູ່ໃນລະດັບຕ່ຳ.

ແຕ່ເຖິງຢ່າງໃດກໍ່ຕາມການສູນເສຍພື້ນທີ່ສີຂຽວ ໃນເຂດການກໍ່ສ້າງຕ່າງໆ ຂອງໂຄງການ ໂດຍສະເພາະການຕັດຕົ້ນໄມ້ ແລະ ພືດທີ່ມີຄວາມສູງກວ່າ 3 ແມັດ ອອກຈາກຂອບເຂດແລວສາຍສົ່ງ 70 ແມັດ ທີ່ມີໄລຍະຍາວ 21 ກິໂລແມັດ, ເຊິ່ງເປັນການສູນເສຍພື້ນທີ່ສີຂຽວຫຼາຍພໍສົມຄວນ ແລະ ກໍ່ຈະເປັນສາເຫດໜຶ່ງທີ່ອາດຈະເຮັດໃຫ້ສະພາບອາກາດ ແລະ ຄຸນນະພາບອາກາດປ່ຽນແປງເລັກນ້ອຍໃນບໍລິເວນຂອງໂຄງການ.

ມາດຕະການຫຼຸດຜ່ອນ:

- ການຫຼຸດຜ່ອນຄວາມໄວລົດ: ເພື່ອຫຼຸດຜ່ອນຂີ້ຝຸ່ນ ທີ່ອາດຈະເກີດຂຶ້ນ ຈາກການຂົນສົ່ງ ວັດສະດຸກໍ່ສ້າງ ເຂົ້າໄປຫາພື້ນທີ່ການກໍ່ສ້າງຕ່າງໆ ຂອງໂຄງການ, ດັ່ງນັ້ນ ຕ້ອງມີການຈຳກັດ ແລະ ຄວບຄຸມຄວາມໄວລົດທີ່ເຂົ້າ ອອກ ໃນພື້ນທີ່ຂອງໂຄງການ ບໍ່ໃຫ້ເກີນ 60 ກມ/ຊມ, ໂດຍສະເພາະຜ່ານເຂດບ້ານຕ່າງໆ ຕ້ອງມີການ ຫຼຸດຜ່ອນຄວາມໄວລົງໃຫ້ໄດ້ 30 ກມ/ຊມ.
- ຜ່ານເຂດຊຸມຊົນຕ້ອງມີການຫົດນ້ຳເປັນປະຈຳໃນແຕ່ລະວັນ ຢ່າງໜ້ອຍສອງຄັ້ງຕໍ່ວັນຄື: ຕອນເຊົ້າ ແລະ ຕອນແລງ.
- ການຂົນສົ່ງວັດສະດຸກໍ່ສ້າງໂຄງການຕ້ອງມີຜ້າຄຸມປິດເພື່ອປ້ອງກັນການຕົກເຮ່ຍ ແລະ ຟົ້ງກະຈາຍ
- ການຖອກວັດສະດຸກໍ່ສ້າງເປັນຕົ້ນແມ່ນດິນ, ຊາຍ, ຫີນ ເຂດໃກ້ຊຸມຊົນ ຕ້ອງສັງເກດສະພາບອາກາດ ບໍ່ຖອກໃນເວລາທີ່ມີລົມແຮງເພື່ອປ້ອງກັນການປົວກະຈາຍ
- ມີການກວດກາ ແລະ ບຳລຸງຮັກສາລົດ ແລະ ເຄື່ອງກົນຈັກທີ່ໃຊ້ໃນການກໍ່ສ້າງຢ່າງເປັນປະຈຳເພື່ອຫຼຸດ ປະລິມານມົນລະພິດຈາກການເຮັດວຽກຂອງເຄື່ອງດັ່ງກ່າວ
- ພື້ນທີ່ສີຂຽວ : ການຖາກຖາງ ຫຼື ຕັດຕົ້ນໄມ້ ແລະ ພືດ ອອກຕາມແລວສາຍສົ່ງ ຕ້ອງຕັດແຕ່ສະເພາະໃນ ຂອບເຂດແລວສາຍສົ່ງ 70 ແມັດ ແລະ ພື້ນທີ່ໆ ມີຄວາມຈຳເປັນໃນການກໍ່ສ້າງເທົ່ານັ້ນ, ບໍ່ໃຫ້ຕັດອອກ ນອກແລວ ຫຼື ເຂດກໍ່ສ້າງ ເພື່ອຫຼຸດຜ່ອນ ບໍ່ໃຫ້ສະພາບອາກາດປ່ຽນໄປ.
- ຕ້ອງມີການຝຶກອົບຮົມ ແລະ ຫ້າມ ບໍ່ໃຫ້ພະນັກງານ ແລະ ກຳມະກອນ ຈູດຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ ຕ່າງໆ ທີ່ຈະກໍ່ໃຫ້ເກີດມົນລະພິດທາງອາກາດຕາມມາ.

3) ໄລຍະດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ

ຕະຫຼອດໄລຍະການດຳເນີນງານຂອງໂຄງການຈະຕ້ອງໄດ້ມີການອະນາໄມຕັດຕົ້ນໄມ້ ແລະ ພືດທີ່ສູງກວ່າ 3 ແມັດ ອອກຈາກແລວສາຍສົ່ງ 70 ແມັດ ທີ່ມີໄລຍະຍາວ 21 ກິໂລແມັດ, ເຊິ່ງເປັນການສູນເສຍພື້ນທີ່ສີຂຽວ ແລະ ກໍ່ຈະເປັນສາເຫດໜຶ່ງທີ່ຈະເຮັດໃຫ້ຄຸນນະພາບອາກາດປ່ຽນແປງໃນບໍລິເວນຂອງໂຄງການ ຄືດັ່ງທີ່ໄດ້ກ່າວມາຂ້າງເທິງ.

ມາດຕະການຫຼຸດຜ່ອນ:

- ການອະນາໄມຖາກຖາງ ຫຼື ຕັດຕົ້ນໄມ້ ແລະ ພືດອອກຕາມແລວສາຍສົ່ງ ຕ້ອງຕັດແຕ່ສະເພາະໃນຂອບເຂດ ແລວສາຍສົ່ງ 70 ແມັດ ແລະ ພື້ນທີ່ ທີ່ມີຄວາມຈຳເປັນເທົ່ານັ້ນ, ບໍ່ໃຫ້ຕັດອອກນອກແລວ.

- ຜູ້ພັດທະນາໂຄງການ ຮ່ວມກັບພາກລັດທີ່ກ່ຽວຂ້ອງ ຕ້ອງເອົາໃສ່ໃນການປົກປັກຮັກສາ ສະພາບແວດລ້ອມ ຂອງປ່າໄມ້ ຕາມເຂດແລວສາຍສົ່ງ ແລະ ພື້ນທີ່ໃກ້ຄຽງໃຫ້ມີຄວາມສົມບູນ ເພື່ອຊ່ວຍສະພາບການ ປ່ຽນແປງດິນຟ້າ ອາກາດຂອງທ້ອງຖິ່ນໄດ້ດີ.

5.4 ຜົນກະທົບທາງດ້ານຊີວະພາບ

5.4.1 ປ່າໄມ້

1) ໄລຍະກ່ອນກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຢູ່ໃນໄລຍະກ່ອນການກໍ່ສ້າງ ຈະບໍ່ມີຜົນກະທົບຫຍັງຕໍ່ປ່າໄມ້, ເນື່ອງຈາກໂຄງການ ຍັງບໍ່ທັນໄດ້ເລີ່ມຕົ້ນການກໍ່ສ້າງ ຫຼື ດຳເນີນການໃດໆເທື່ອ ນອກຈາກກິດຈະກຳການສຳຫຼວດ, ເກັບຂໍ້ມູນ ທີ່ຈະບໍ່ກໍ່ໃຫ້ເກີດຜົນກະທົບຕໍ່ກັບປ່າໄມ້ ດັ່ງນັ້ນ, ຢູ່ໃນຊ່ວງກ່ອນການກໍ່ສ້າງນີ້ ທາງໂຄງການ ບໍ່ມີຄວາມຈຳເປັນຫຍັງ ທີ່ຈະດຳເນີນມາດຕະການຫຼຸດຜ່ອນ, ເນື່ອງຈາກບໍ່ມີກິດຈະກຳຫຍັງ ທີ່ຈະກໍ່ໃຫ້ເກີດຜົນກະທົບຮ້າຍແຮງ ທີ່ເກີດຂຶ້ນຢູ່ໃນຊ່ວງນີ້.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລົມ 600 MW ເມືອງດາກຈຶງ ທີ່ມີຄວາມຍາວປະມານ 21 ກມ. ຄວາມຍາວຂອງແລວສາຍສົ່ງດັ່ງກ່າວ ບາງສ່ວນແມ່ນຜ່ານເຂດດິນນຳໃຊ້ຂອງປະຊາຊົນ ໂດຍສະເພາະເຂດ ເມືອງດາກຈຶງ, ແຕ່ກໍ່ມີບາງເຂດ ແມ່ນຜ່ານປ່າໄມ້ທຳມະຊາດເຊິ່ງມີປ່າປະສົມປະມານ 54.31 ຮຕ ແລະ ປ່າເຫຼົ່າ 3.38 ຮຕ. ແຕ່ເຖິງຢ່າງໃດກໍ່ຕາມ ປ່າໄມ້ຈະບໍ່ຖືກກະທົບຫຼາຍ ເນື່ອງຈາກແລວສາຍສົ່ງບາງເຂດ ແມ່ນຜ່ານກາຍ ຄວາມສູງຂອງຕົ້ນໄມ້, ໂດຍສະເພາະສາຍສົ່ງ ລະຫວ່າງພູຫາພູ ແມ່ນຈະບໍ່ມີຄວາມຈຳເປັນ ໃນການຕັດຕົ້ນໄມ້ອອກ ຕາມແລວ.

ມາດຕະການຫຼຸດຜ່ອນ:

- ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອດຳເນີນຕາມຂະບວນການ ໂດຍປະຕິບັດຕາມກົດໝາຍ ວ່າດ້ວຍປ່າໄມ້ ສະບັບປັບປຸງ (2019) ແລະ ກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ 2019
- ປ່າໄມ້ທີ່ຈະຖືກສູນເສຍຈາກເຂດສະຫງວນກ້ອງແລວ ປະມານ 57.6 ຮຕ ເຊິ່ງລວມມີເນື້ອທີ່ປ່າປະສົມ, ແລະ ປ່າເຫຼົ່າ. ທາງໂຄງການຈະໃຫ້ການຊົດເຊີຍ ດ້ວຍວິທີການປູກປ່າທົດແທນ ຕາມຫຼັກການຂອງກົມ ປ່າໄມ້ ຂອງກະຊວງກະສິກຳ ແລະ ປ່າໄມ້ ອາງອອກ.
- ເພື່ອປ້ອງກັນບໍ່ໃຫ້ເນື້ອທີ່ປ່າໄມ້ຖືກກະທົບຫຼາຍ, ທາງໂຄງການຕ້ອງມີການກວດສອບ ກິດຈະກຳການ ກໍ່ສ້າງຂອງຜູ້ຮັບເໝົາໃຫ້ມີຄວາມລະມັດລະວັງໃນການປັບພື້ນທີ່ເພື່ອການກໍ່ສ້າງສາຍສົ່ງ ບໍ່ໃຫ້ບຸກເບີກພື້ນ ທີ່ເກີນຂອບເຂດກໍ່ສ້າງ ແລະ ເຂດສະຫງວນກ້ອງແລວ ໂດຍສະເພາະເຂດພື້ນທີ່ປ່າໄມ້ອ້ອມຂ້າງໂຄງການ.
- ກ່ອນຈະມີການບຸກເບີກພື້ນທີ່ເພື່ອການກໍ່ສ້າງຕ່າງໆ ທາງໂຄງການຕ້ອງມີການປະສານສົມທົບກັບ ພາກສ່ວນລັດທີ່ກ່ຽວຂ້ອງ ຂອງແຂວງ ແລະ ເມືອງລົງໄປກວດສອບ ແລະ ປະເມີນພື້ນທີ່ໆຈະຖືກກະທົບ ຕົວຈິງ ໂດຍສະເພາະເນື້ອທີ່ຂອງປ່າໄມ້ທີ່ຈະຖືກກະທົບ.

- ມີການຝຶກອົບຮົມ ໃຫ້ພະນັກງານ ແລະ ກຳມະກອນ ທີ່ເຂົ້າໄປເຮັດວຽກໃນເຂດກໍ່ສ້າງໂຄງການ ໃຫ້ເຂົ້າໃຈ ເຖິງການອະນຸລັກປ່າໄມ້ ຫ້າມບໍ່ໃຫ້ມີການເຂົ້າໄປນຳໃຊ້ປ່າໄມ້ນອກເຂດໂຄງການ ແລະ ມີການອອກກົດ ລະບຽບຕໍ່ການປະຕິບັດ ຖ້າຜູ້ໃດຝ່າຝືນຕ້ອງມີການປັບໄໝ ແລະ ໃຫ້ອອກຈາກວຽກທັນທີ.
- ທາງໂຄງການຮ່ວມມືກັບພາກລັດລົງຕິດຕາມກິດຈະກຳການກໍ່ສ້າງຂອງຜູ້ຮັບເໝົາຢ່າງເປັນປະຈຳ

3) ໄລຍະດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ:

ພາຍຫຼັງກິດຈະກຳການກໍ່ສ້າງສຳເລັດໃນໄລຍະການກໍ່ສ້າງແລ້ວ ດັ່ງນັ້ນ, ໃນໄລຍະການດຳເນີນງານຈະບໍ່ມີ ກິດຈະກຳ ອັນທີ່ອາດຈະກໍ່ໃຫ້ເກີດຜົນກະທົບຕໍ່ກັບເນື້ອທີ່ປ່າໄມ້ ໃນເຂດໂຄງການ. ແຕ່ເຖິງຢ່າງໃດກໍ່ຕາມໃນຊ່ວງການດຳເນີນ ງານນີ້ ທາງໂຄງການ ຍັງມີຄວາມຈຳເປັນຕ້ອງໄດ້ບຳລຸງຮັກສາ ບໍ່ໃຫ້ຕົ້ນໄມ້ທີ່ຢູ່ກ້ອງແລວສາຍສົ່ງ ສູງເກີນ 3 ມ (ຕາມ ລະບຽບດ້ານເຕັກນິກ ຂອງລັດວິສາຫະກິດໄຟຟ້າລາວວາງອອກ ສຳລັບສາຍສົ່ງ 500 ກວ). ດັ່ງນັ້ນ, ມາດຕະການບຳ ລຸງຮັກສານີ້ ບໍ່ໃຫ້ຕັດຕົ້ນໄມ້ອອກນອກແລວທີ່ໄດ້ກຳນົດໄວ້ 70 ມ, ບໍ່ໃຫ້ຈູດໄມ້ ແລະ ພືດຕ່າງໆ ທີ່ໄດ້ຖາກຖາງ ອອກຕາມແລວ ຈະຕ້ອງປະໃຫ້ມີພື້ນທີ່ສີຂຽວ. ພ້ອມກັນນີ້ ທາງໂຄງການຮ່ວມກັບ ພາກລັດທີ່ກ່ຽວຂ້ອງ, ຮ່ວມກັນ ເຮັດການຟື້ນຟູປ່າໄມ້ ເພື່ອເປັນການທົດແທນ ຕາມເນື້ອທີ່ປ່າໄມ້ ທີ່ຖືກສູນເສຍໃນເຂດແລວສາຍສົ່ງ.

5.4.2 ສັດປ່າ

1) ໄລຍະການກ່ອນກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຢູ່ໃນໄລຍະນີ້ ຈະບໍ່ມີຜົນກະທົບຫຍັງຕໍ່ກັບປ່າໄມ້ ແລະ ສັດປ່າ ເນື່ອງຈາກໂຄງການ ຍັງບໍ່ທັນໄດ້ເລີ່ມຕົ້ນການກໍ່ສ້າງ ຫຼື ດຳເນີນການໃດໆເທື່ອ ນອກຈາກກິດຈະກຳການສຳຫຼວດ ທີ່ຈະບໍ່ກໍ່ໃຫ້ເກີດຜົນກະທົບ ຕໍ່ປ່າໄມ້ ແລະ ສັດປ່າ. ເຖິງຢ່າງໃດກໍ່ຕາມ ຜົນກະທົບຕໍ່ສັດປ່າ ກ່ອນການກໍ່ສ້າງໂຄງການ ແມ່ນມີມາກ່ອນແລ້ວ, ເຊັ່ນວ່າ: ການອອກລ່າສັດ ຂອງປະຊາຊົນທ້ອງຖິ່ນທີ່ມີມາແຕ່ດັ້ງເດີມ, ການຖາກຖາງປ່າເຮັດໄຮ່, ສວນ ທີ່ເປັນທີ່ຢູ່ອາໄສຂອງສັດປ່າ ເພື່ອການ ກະສິກຳຂອງປະຊາຊົນທ້ອງຖິ່ນ ລ້ວນແລ້ວແຕ່ເປັນກິດຈະກຳທີ່ກໍ່ໃຫ້ເກີດຜົນກະທົບທີ່ມີມາແລ້ວກ່ອນກໍ່ສ້າງ ໂຄງການ.

ມາດຕະການຫຼຸດຜ່ອນ:

- ດັ່ງທີ່ກ່າວຂ້າງເທິງ, ອີງຕາມສະພາບຄວາມເປັນຈິງ ໃນເຂດສຶກສາຂອງໂຄງການ, ກ່ອນການກໍ່ສ້າງຂອງ ໂຄງການແມ່ນມີຜົນກະທົບເກີດຂຶ້ນແລ້ວຕໍ່ສັດປ່ານາໆຊະນິດ ເນື່ອງຈາກເຂດພື້ນທີ່ໂຄງການ ມີການນຳໃຊ້ດິນ ແລະ ປ່າໄມ້ ຢ່າງແຜ່ຫຼາຍ ໂດຍສະເພາະການຂະຫຍາຍເນື້ອທີ່ດິນກະສິກຳເຮັດໄຮ່, ປູກກາເຟ ແລະ ພືດທີ່ເປັນ ເສດຖະກິດຕ່າງໆ. ກິດຈະກຳເຫຼົ່ານີ້ ລ້ວນແລ້ວແຕ່ເປັນການຖາກຖາງ - ທຳລາຍ ທີ່ຢູ່ອາໄສຂອງສັດປ່າ ເຮັດ ໃຫ້ຈຳນວນສັດປ່າຫຼຸດລົງ, ນອກຈາກນີ້, ການລ່າສັດ ກໍຍັງມີຢູ່ຕາມທ້ອງຖິ່ນ. ດັ່ງນັ້ນ, ມາດຕະການຫຼຸດຜ່ອນທີ່ ສຳຄັນ ຕ້ອງມີການປະຕິບັດລະບຽບ - ກົດໝາຍ ຢ່າງເຄັ່ງຄັດຕໍ່ການລ່າສັດປ່າ, ຕ້ອງຄວບຄຸມ ການນຳໃຊ້ດິນບໍ່ ໃຫ້ມີການບຸກລຸກປ່າໄມ້ທີ່ເປັນຖິ່ນທີ່ຢູ່ຂອງສັດປ່າ.

- ເຖິງຢ່າງໃດກໍ່ຕາມໃນໄລຍະກ່ອນການກໍ່ສ້າງ ການເຂົ້າໄປຂອງທີມງານສຳຫຼວດ, ເກັບຂໍ້ມູນ ອາດມີການລ່າ ຫຼື ຊື້-ຂາຍສັດປ່າເພື່ອມາເປັນອາຫານ ດັ່ງນັ້ນ ທາງໂຄງການຕ້ອງໄດ້ມີການແຈ້ງ ແລະ ວາງລະບຽບສຳລັບທີມງານສຳຫຼວດຫ້າມບໍ່ໃຫ້ມີການນຳໃຊ້ປ່າໄມ້, ການລ່າ ຫຼື ຊື້-ຂາຍສັດປ່າ, ຖ້າມີການປະຕິບັດຕາມລະບຽບ.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຢູ່ໃນໄລຍະການກໍ່ສ້າງໂຄງການນີ້ ແມ່ນຈະມີກິດຈະກຳຫຼາຍຢ່າງ ທີ່ຈະກໍ່ໃຫ້ເກີດຜົນກະທົບຕໍ່ສັດປ່າ ເທົ່າທີ່ມີຢູ່ພື້ນທີ່ຂອງໂຄງການ ໂດຍທາງກົງ ແລະ ໂດຍທາງອ້ອມ, ເຖິງແມ່ນວ່າ ເຂດກໍ່ສ້າງອົງປະກອບຕ່າງໆຂອງໂຄງການ ຈະບໍ່ໄດ້ນອນຢູ່ເຂດທີ່ຢູ່ອາໄສຫຼັກຂອງສັດປ່າກໍ່ຕາມ ແຕ່ບາງເຂດພື້ນທີ່ຕ່າງໆເຫຼົ່ານັ້ນ ກໍ່ຍັງມີປ່າປ່າໄມ້ ແລະ ພັນພືດ ທີ່ເປັນທີ່ຢູ່ອາໄສຂອງສັດປ່າບາງຈຳພວກ. ກິດຈະກຳການກໍ່ສ້າງຂອງໂຄງການ ທີ່ຈະກໍ່ໃຫ້ເກີດຜົນກະທົບຕໍ່ສັດປ່າ ບາງຈຳພວກ ຈະປະກອບດ້ວຍ:

1) ສຽງດັງຈາກເຄື່ອງກົນຈັກໜັກ ທີ່ນຳໃຊ້ເຂົ້າໃນການກໍ່ສ້າງ, ການຂົນສົ່ງວັດສະດຸການກໍ່ສ້າງຕ່າງໆ, ການຂຸດການດຸດດິນເພື່ອກໍ່ສ້າງຕີນເສົາ ລ້ອມແລ້ວແຕ່ກໍ່ໃຫ້ ເກີດຜົນກະທົບ ແລະ ລົບກວນສັດປ່າ.
2) ໃນຊ່ວງກໍ່ສ້າງຄາດວ່າ ຈະມີພະນັກງານ ແລະ ກຳມະກອນ ເຂົ້າໄປເຮັດວຽກຫຼາຍໃນເຂດກໍ່ສ້າງຕ່າງໆ, ເມື່ອມີການສ້າງແຄ້ມທີ່ພັກຢູ່ຕາມແຄມປ່າ ຍິ່ງຈະເປັນແຮງຈູງໃຈໃຫ້ຄົນງານເຫຼົ່ານັ້ນ ຊອກຫາລ່າສັດປ່າມາເປັນອາຫານໂດຍບໍ່ຄຳນຶງເຖິງການອະນຸລັກ.

ແຕ່ເຖິງຢ່າງໃດກໍ່ຕາມດັ່ງທີ່ໄດ້ສະເໜີຜ່ານມາ ພື້ນທີ່ຂອບເຂດແລວສາຍສົ່ງສ່ວນຫຼາຍແມ່ນເປັນເຂດດິນກະສິກຳ ແລະ ດິນນຳໃຊ້ຂອງປະຊາຊົນ ສ່ວນພື້ນທີ່ປ່າໄມ້ທຳມະຊາດ (ປ່າປະສົມ ແລະ ປ່າເຫຼົ້າ) ທີ່ສະເໜີຂ້າງເທິງກໍ່ເປັນພື້ນທີ່ປ່າຊົມໃຊ້ຂອງປະຊາຊົນ ແລະ ເປັນພື້ນທີ່ໃກ້ຄຽງກັບເສັ້ນທາງຫຼວງທີ່ມີການສັນຈອນໄປມາຂອງລົດຢູ່ຕະຫຼອດ. ເຊິ່ງເຂດພື້ນທີ່ດັ່ງກ່າວໃນໄລຍະຜ່ານມາ ແມ່ນໄດ້ສ້າງຄວາມລົບກວນຕໍ່ຖິ່ນທີ່ຢູ່ອາໄສຂອງສັດປ່າຂະໜາດໃຫຍ່ໃນເມື່ອກ່ອນ. ດັ່ງນັ້ນ, ຜົນກະທົບສ່ວນຫຼາຍໃນປັດຈຸບັນແມ່ນ ອາດເກີດຂຶ້ນກັບແຕ່ສັດນ້ອຍທົ່ວໄປທີ່ອາໄສຕາມເຂດໃກ້ແລວສາຍສົ່ງເຊັ່ນ: ນົກ, ໜູ ແລະ ສັດນ້ອຍອື່ນໆ.

ມາດຕະການຫຼຸດຜ່ອນ:

- ທາງໂຄງການຕ້ອງແນະນຳຜູ້ຮັບເໝົາການກໍ່ສ້າງ ໃຫ້ມີການຄວບຄຸມສຽງ ການນຳໃຊ້ເຄື່ອງກົນຈັກ ແລະ ລົດຂົນສົ່ງຕ່າງໆ, ໂດຍໃຫ້ອີງໃສ່ມາດຕະຖານສິ່ງແວດລ້ອມ ຕ້ອງມີການຄວບຄຸມບໍ່ໃຫ້ສຽງດັງເກີນກ່ວາ 85 ເດຊິບຽວ (dBA) ເພື່ອຫຼຸດຜ່ອນການລົບກວນ ແລະ ແຕກຕື່ນຂອງສັດປ່າ.
- ມີການຝຶກອົບຮົມ ໃຫ້ພະນັກງານ ແລະ ກຳມະກອນ ທີ່ເຂົ້າໄປເຮັດວຽກໃນເຂດກໍ່ສ້າງໂຄງການ ໃຫ້ເຂົ້າໃຈເຖິງການອະນຸລັກສັດປ່າທຸກປະເພດ ບໍ່ໃຫ້ມີການລ່າ ແລະ ຮັບຊື້ສັດປ່າ ມີການອອກກົດລະບຽບຕໍ່ການປະຕິບັດ ຖ້າຜູ້ໃດຝ່າຝືນຕ້ອງມີການປັບໃໝ ແລະ ໃຫ້ອອກຈາກວຽກທັນທີ.
- ອີງຕາມບົດຮຽນການກໍ່ສ້າງ ຂອງໂຄງການອື່ນໆ ທີ່ມີການກໍ່ສ້າງ ແລະ ຂຸດຄົ້ນພື້ນດິນໃນເຂດທຳມະຊາດ ມັກຈະພົບເຫັນສັດເລືອຄານຊະນິດໃຫຍ່ ແລະ ຫາຍາກ ເຊັ່ນວ່າ ງູເຫຼືອມ, ຖ້າກໍລະນີດັ່ງກ່າວຫາກພົບເຫັນໃນພື້ນທີ່ໂຄງການກໍ່ສ້າງໃດໜຶ່ງ ຜູ້ເຮັດການກໍ່ສ້າງຕ້ອງມີການລາຍງານພາກລັດ ຫຼື ວິຊາການທີ່ກ່ຽວຂ້ອງ

ເພື່ອເຂົ້າໄປຍົກຍ້າຍສັດດັ່ງກ່າວອອກໄປອາໄສຢູ່ ປ່າບ່ອນອື່ນທີ່ມີຄວາມປອດໄພ, ບໍ່ໃຫ້ນຳເອົາສັດປ່າ ດັ່ງກ່າວ ທີ່ພົບເຫັນມາເປັນອາຫານ.

- ຕ້ອງມີການຕິດຕາມກວດກາ ຈາກໜ່ວຍງານສິ່ງແວດລ້ອມຂອງໂຄງການ ຮ່ວມກັບພາກສ່ວນລັດທີ່ ກ່ຽວຂ້ອງ ເພື່ອລາຍງານ ແລະ ສົ່ງຂ່າວ ໃຫ້ຜູ້ຮັບເໝົາການກໍ່ສ້າງ ຂອງໂຄງການ ໄດ້ນຳໄປປັບປຸງໜ້າວຽກ ຂອງຕົນເອງ.
- ກິດຈະກຳການກໍ່ສ້າງ, ການຄຸ້ມຄອງ ແລະ ການຕິດຕາມກວດກາ ຂອງທຸກໆພາກສ່ວນ ແມ່ນໃຫ້ຖືເອົາ ລະບຽບກົດໝາຍທີ່ກ່ຽວຂ້ອງ ກັບການຄຸ້ມຄອງສັດປ່າ ທີ່ໄດ້ລະບຸໄວ້ໃນພາກນິຕິກຳ ຂອງບົດລາຍງານ ສະບັບນີ້ ເພື່ອເປັນບ່ອນອີງທີ່ສຳຄັນ ໃນການຈັດຕັ້ງປະຕິບັດ.

3) ໄລຍະດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ:

ພາຍຫຼັງກິດຈະກຳການກໍ່ສ້າງສຳເລັດໃນໄລຍະການກໍ່ສ້າງແລ້ວ ດັ່ງນັ້ນ, ໃນໄລຍະການດຳເນີນງານຈະບໍ່ມີ ກິດຈະກຳອັນທີ່ອາດຈະກໍ່ໃຫ້ເກີດຜົນກະທົບຕໍ່ກັບເນື້ອທີ່ປ່າໄມ້ ແລະ ສັດປ່າ ໃນເຂດໂຄງການ. ແຕ່ເຖິງຢ່າງໃດກໍ່ ຕາມໃນຊ່ວງການດຳເນີນງານນີ້ ທາງໂຄງການ ຍັງມີຄວາມຈຳເປັນຕ້ອງໄດ້ບຳລຸງຮັກສາ ບໍ່ໃຫ້ຕົ້ນໄມ້ທີ່ຢູ່ກ້ອງແລວ ສາຍສົ່ງ ສູງເກີນ 3 ມ (ຕາມລະບຽບດ້ານເຕັກນິກ ຂອງລັດວິສາຫະກິດໄຟຟ້າລາວວາງອອກ ສຳລັບສາຍສົ່ງ 500 ກວ). ດັ່ງນັ້ນ, ທາງໂຄງການຕ້ອງສືບຕໍ່ ຮ່ວມກັບພາກສ່ວນລັດທີ່ກ່ຽວຂ້ອງ ຕ້ອງຖືເອົາການອະນຸລັກ ແລະ ການຄຸ້ມ ສັດປ່າເປັນບຸລິມະສິດ ທີ່ສຳຄັນເຊັ່ນດຽວກັບການປົກປັກຮັກ ສາປ່າໄມ້ໃນເຂດອ້ອມຂ້າງແລວສາຍສົ່ງ.

5.4.3 ສັດນ້ຳ ແລະ ສິ່ງອາໄສໃນນ້ຳ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຢູ່ໃນໄລຍະກ່ອນການກໍ່ສ້າງ ຈະບໍ່ມີຜົນກະທົບຫຍັງຕໍ່ສັດນ້ຳ, ເນື່ອງຈາກໂຄງການ ຍັງບໍ່ທັນໄດ້ເລີ່ມຕົ້ນການກໍ່ສ້າງ ຫຼື ດຳເນີນການໃດໆເທື່ອ ນອກຈາກກິດຈະກຳການສຳຫຼວດ, ເກັບຂໍ້ມູນ ທີ່ຈະບໍ່ກໍ່ໃຫ້ເກີດຜົນກະທົບຕໍ່ກັບສັດນ້ຳ ດັ່ງນັ້ນ, ຢູ່ໃນຊ່ວງກ່ອນການກໍ່ສ້າງນີ້ ທາງໂຄງການ ບໍ່ມີຄວາມຈຳເປັນຫຍັງ ທີ່ຈະດຳເນີນມາດຕະການຫຼຸດຜ່ອນ, ເນື່ອງຈາກບໍ່ມີກິດຈະກຳຫຍັງ ທີ່ຈະກໍ່ໃຫ້ເກີດຜົນກະທົບຮ້າຍແຮງ ທີ່ເກີດຂຶ້ນຢູ່ໃນຊ່ວງນີ້.

2) ໄລຍະກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ເຖິງແມ່ນວ່າການກໍ່ສ້າງສາຍສົ່ງໄຟຟ້າ ຈະບໍ່ສົ່ງຜົນກະທົບໂດຍກົງແຫຼ່ງນ້ຳ, ແຕ່ການກໍ່ສ້າງໂຄງການດັ່ງກ່າວກໍ່ມີ ໂອກາດສ້າງຜົນກະທົບຕໍ່ສັດນ້ຳໄດ້ ເຊັ່ນວ່າ ການກໍ່ສ້າງຕີນເສົາໄຟ, ທາງເຂົ້າຫາເຂດກໍ່ສ້າງຕີນເສົາໄຟ (ຖ້າການກໍ່ສ້າງ ທາງໄປຜ່ານ ຫຼື ຢູ່ໃກ້ແຫຼ່ງນ້ຳ). ດັ່ງນັ້ນ ຢູ່ໃນໄລຍະການກໍ່ສ້າງໂຄງການນີ້ ແຫຼ່ງທີ່ຈະກໍ່ໃຫ້ເກີດຜົນກະທົບ ຕໍ່ພືດນ້ຳ ແລະ ສັດນ້ຳ ແມ່ນມີໂອກາດ, ເຊັ່ນ: ການຕົກຕະກອນ ແລະ ການເຊາະເຈື່ອນ ຈາກການຂຸດດິນ, ດຸດດິນ ແລະ ຖົມ ດິນລົງສູ່ຫ້ວຍນ້ຳ (ຖ້າເຂດການກໍ່ສ້າງຜ່ານນ້ຳຫ້ວຍ ຫຼື ໃກ້ກັບແຫຼ່ງນ້ຳ) ກໍ່ຈະເປັນສາເຫດຫຼັກເຮັດໃຫ້ເກີດຜົນ ກະທົບຕໍ່ ພືດນ້ຳ ແລະ ສັດທີ່ບໍ່ມີກະດູກສັນຫຼັງ. ຄາບນ້ຳມັນ ແລະ ສານປົນເປື້ອນເຄມີຕ່າງໆ ຈາກການນຳໃຊ້ເຄື່ອງ

ຈັກ ແລະ ອຸປະກອນການກໍ່ສ້າງ, ກໍຈະກໍ່ໃຫ້ຜົນກະທົບທັນທີຕໍ່ພືດນ້ຳ ແລະ ສັດນ້ຳທັນທີ. ກິດຈະກຳຕ່າງໆດັ່ງທີ່ກ່າວ ລ້ວນແລ້ວແຕ່ເປັນແຫຼ່ງ ທີ່ຈະກໍ່ໃຫ້ເກີດຜົນກະທົບ ຕໍ່ພືດນ້ຳ ແລະ ສັດນ້ຳ ທີ່ຈະເລີນເຕີບໂຕ ຢູ່ຕາມໜ້ານ້ຳ ແລະ ພື້ນນ້ຳຕາມລະດູການ, ດັ່ງນັ້ນ ການດຳເນີນມາດຕະການຫຼຸດຜ່ອນ ແມ່ນມີຄວາມຈຳເປັນ.

ມາດຕະການຫຼຸດຜ່ອນ:

- ວາງແຜນການກໍ່ສ້າງໄວ້ໃນຊ່ວງລະດູແລ້ງ ສຳລັບໜ້າວຽກທີ່ຈະກໍ່ໃຫ້ເກີດການເຊາະເຈື່ອນຂອງຕະກອນ ດິນລົງສູ່ແຫຼ່ງນ້ຳ.
- ຄວບຄຸມບໍ່ໃຫ້ມີການດຸດດິນຈາກການກໍ່ສ້າງຕີນເສົາໄຟລົງສູ່ແຫຼ່ງນ້ຳທຳມະຊາດ ຫຼື ພື້ນທີ່ໃກ້ຄຽງ, ພື້ນທີ່ ຄ້ອຍຊັນ ເພື່ອບໍ່ໃຫ້ຕະກອນດິນລົງສູ່ແຫຼ່ງນ້ຳ.
- ຫຼີກລ່ຽງບໍ່ໃຫ້ມີການກໍ່ສ້າງບໍລິເວນແຄມຫ້ວຍນ້ຳ ເພື່ອຫຼຸດປະລິມານຕະກອນດິນລົງສູ່ແຫຼ່ງນ້ຳຕາມເຂດ ໂຄງການ.
- ກອງດິນ, ຊາຍ, ວັດສະດຸກໍ່ສ້າງຕ້ອງຫ່າງຈາກເຂດທີ່ມີແຫຼ່ງນ້ຳ ເພື່ອບໍ່ໃຫ້ມີການຊະລ້າງລົງສູ່ຫ້ວຍ.
- ທາງໂຄງການຕ້ອງມີສັນຍາການປັບໄໝກັບຜູ້ຮັບເໝົາການກໍ່ສ້າງ, ເພື່ອເປັນຂໍ້ຜູກມັດບໍ່ໃຫ້ຜູ້ຮັບເໝົາກໍ່ສ້າງ ລ້າງລິດກົນຈັກທຸກປະເພດ ແລະ ອຸປະກອນການກໍ່ສ້າງຕ່າງໆລົງໃສ່ແມ່ນ້ຳ ແລະ ສາຂານ້ຳຫ້ວຍຕ່າງໆ ໃນ ຂອບເຂດພື້ນທີ່ຂອງໂຄງການ.
- ຄວບຄຸມຢ່າງເຂັ້ມງວດບໍ່ໃຫ້ມີການລະບາຍນ້ຳເປື້ອນ ແລະ ຂີ້ເຫຍື້ອ ຈາກບ່ອນພັກກຳມະກອນລົງສູ່ ແຫຼ່ງນ້ຳ.

3) ໄລຍະການດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ:

ພາຍຫຼັງກິດຈະກຳການກໍ່ສ້າງສຳເລັດໃນໄລຍະການກໍ່ສ້າງແລ້ວ ດັ່ງນັ້ນ, ໃນໄລຍະສົ່ງໄຟຈະບໍ່ມີກິດຈະກຳອັນໃດທີ່ ອາດຈະກໍ່ໃຫ້ເກີດຜົນກະທົບດ້ານຄຸນນະພາບຂອງນ້ຳຕ່າງໆທີ່ຈະສົ່ງຜົນກະທົບຕໍ່ສັດນ້ຳ ແລະ ສິ່ງອາໄສໃນນ້ຳໃນ ເຂດໂຄງການ ດັ່ງນັ້ນ, ທາງໂຄງການ ບໍ່ມີຄວາມຈຳເປັນ ດຳເນີນມາດຕະການຫຍັງເປັນພິເສດ ໃນຊ່ວງດຳເນີນ ໂຄງການນີ້.

5.4.4 ພື້ນທີ່ສະຫງວນ - ປ້ອງກັນ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຈາກຜົນການສຶກສາເກັບກຳຂໍ້ມູນນຳພາກສ່ວນທີ່ກ່ຽວຂ້ອງ ແລະ ການເກັບກຳຂໍ້ມູນພາກສະໜາມ ເຫັນວ່າ ໂຄງການ ສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລົມ 600 MW ເມືອງດາກຈຶງ ທີ່ສະເໜີນີ້ ແມ່ນບໍ່ມີພື້ນທີ່ປ່າ ສະຫງວນໃດໆ ຢູ່ໃກ້ຄຽງທີ່ຈະໄດ້ຮັບຜົນກະທົບຈາກການພັດທະນາໂຄງການ. ເຖິງຢ່າງໃດກໍ່ຕາມການພັດທະນາ ໂຄງການດັ່ງກ່າວນີ້ ອີງຕາມການອອກແບບແລວສາຍສົ່ງ ແມ່ນຈະສົ່ງຜົນກະທົບຕໍ່ພື້ນທີ່ ປ່າປ້ອງກັນແຫ່ງຊາດ ຍອດນ້ຳເຊກອງ-ເຊກະໝານ ຕາມແລວຊາຍແດນລາວ-ຫວຽດນາມ ປະມານ 5.64 ກິໂລແມັດ ຈາກເສົາສາຍສົ່ງທີ 36 ຫາ 47. ເຊິ່ງເປັນພື້ນທີ່ປ່າປະສົມທັງໝົດ ຄິດໄລ່ເປັນພື້ນທີ່ຖາວອນຕາມຕີນເສົາສາຍສົ່ງ 1,941 ຕາແມັດ ແລະ ພື້ນທີ່ສະຫງວນກ້ອງແລວ 39.67 ຮຕ.

ມາດຕະການຫຼຸດຜ່ອນ:

- ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອດຳເນີນຕາມຂະບວນການ ໂດຍປະຕິບັດຕາມກົດໝາຍ ວ່າດ້ວຍປ່າໄມ້ ສະບັບປັບປຸງ (2019) ແລະ ກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ 2019
- ວາງລະບຽບຢ່າງເຄັ່ງຄັດ ຫ້າມບໍ່ໃຫ້ນຳມະກອນ ຫຼື ພະນັກງານທຸກຄົນບຸກລຸກພື້ນທີ່ປ່າປ້ອງກັນໃກ້ຄຽງ ເປັນຕົ້ນແມ່ນການຕັດໄມ້ໂດຍບໍ່ໄດ້ຮັບອະນຸຍາດ, ການເຂົ້າໄປລ່າສັດປ່າ ແລະ ການຊື້-ຂາຍສັດປ່າ ຖ້າຜູ້ໃດຝ່າຝືນຕ້ອງມີການປັບໃໝ ແລະ ໃຫ້ອອກຈາກວຽກທັນທີ.

5.5 ການປະເມີນຜົນກະທົບດ້ານເສດຖະກິດ-ສັງຄົມ ແລະ ວັດທະນະທຳ

5.5.1 ການນຳໃຊ້ທີ່ດິນ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງກະທົບ:

ໂຄງການສາຍສົ່ງທີ່ສະເໜີ ມີຄວາມຕ້ອງການ ເນື້ອທີ່ຖາວອນເພື່ອກໍ່ສ້າງຕີນເສົາສາຍສົ່ງທັງໝົດ 47 ເສົາ ເປັນເນື້ອທີ່ 7,884 ຕາແມັດ ແລະ ເນື້ອທີ່ສະຫງວນກ້ອງແລວເບື້ອງລະ 35 ແມັດ ລວມເປັນ 70 ແມັດ ຕະຫຼອດຄວາມຍາວ ຂອງສາຍສົ່ງ 21 ກິໂລແມັດ ຄິດໄລ່ເປັນເນື້ອທີ່ 147.80 ເຮັກຕາ. ເຊິ່ງສະພາບການນຳໃຊ້ທີ່ດິນຢູ່ໃນເຂດແລວສາຍ ສົ່ງສ່ວນຫຼາຍແມ່ນມີທັງພື້ນທີ່ປ່າໄມ້ທຳມະຊາດ ແລະ ພື້ນທີ່ທຳການຜະລິດຂອງປະຊາຊົນ ເຖິງຢ່າງໃດກໍ່ຕາມ ຢູ່ໃນ ໄລຍະກ່ອນການກໍ່ສ້າງໂຄງການນີ້ ຈະບໍ່ມີຜົນກະທົບຫຍັງຕໍ່ການນຳໃຊ້ດິນ ແລະ ປ່າໄມ້ ຂອງປະຊາຊົນທ້ອງຖິ່ນ, ເນື່ອງຈາກໂຄງການ ຍັງບໍ່ທັນມີກິດຈະກຳຫຍັງ ທີ່ຈະກໍ່ໃຫ້ເກີດຜົນກະທົບໃນດ້ານນີ້. ແຕ່ໄດ້ມີການສຳຫຼວດ ຂໍ້ມູນ ການນຳໃຊ້ດິນ ແລະ ປ່າໄມ້ ຂອງປະຊາຊົນ ທີ່ຢູ່ໃນຂອບເຂດພື້ນທີ່ຂອງໂຄງການ ເພື່ອໄຈ້ແຍກຜົນກະທົບທີ່ຄາດວ່າ ຈະເກີດຂຶ້ນໂດຍກົງ ແລະ ທາງອ້ອມ ເພື່ອກະກຽມໃຫ້ແກ່ການທົດແທນຄ່າເສຍຫາຍ.

ມາດຕະການຫຼຸດຜ່ອນ:

ເຖິງແມ່ນວ່າໃນຊ່ວງ ການສຳຫຼວດອອກແບບນີ້ ຈະຍັງບໍ່ທັນມີຜົນກະທົບຕໍ່ການນຳໃຊ້ທີ່ດິນ, ແຕ່ທາງທີມງານຜູ້ເຮັດ ການສຳຫຼວດ ກໍ່ຕ້ອງມີຄວາມລະມັດລະວັງ ໃນການສຳຫຼວດພາກສະໜາມ, ບໍ່ໃຫ້ມີຜົນກະທົບຕໍ່ຈິດໃຈ ຂອງ ປະຊາຊົນຜູ້ທີ່ ຄາດວ່າຈະໄດ້ຮັບຜົນກະທົບ, ຕ້ອງມີການປຶກສາຫາລື ແລະ ມີສ່ວນຮ່ວມນຳກັນລະຫ່ວາງໂຄງການ ກັບພາກລັດ ແລະ ປະຊາຊົນຂອງໝູ່ບ້ານ ທີ່ໄດ້ຮັບຜົນກະທົບ. ເຖິງແມ່ນວ່າ ເຂົາເຈົ້າຈະບໍ່ໄດ້ຮັບຜົນກະທົບໃນການ ຍົກຍ້າຍ ແຕ່ປະຊາຊົນກໍ່ເສຍດິນນຳໃຊ້ ໃນສ່ວນໃດໜຶ່ງໃນເຂດແລວສາຍສົ່ງ.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຢູ່ໃນໄລຍະການກໍ່ສ້າງໂຄງການນີ້ ແມ່ນຈະມີຜົນກະທົບ ຕໍ່ການນຳໃຊ້ດິນທີ່ພື້ນທີ່ທຳການຜະລິດ (ໄຮ່, ສວນ, ນາ), ປ່າໄມ້, ປ່າເຫຼົ່າ ຂອງປະຊາຊົນທ້ອງຖິ່ນ, ເນື່ອງຈາກກິດຈະກຳການກໍ່ສ້າງແລວສາຍສົ່ງ ແມ່ນຕ້ອງ ດຳເນີນການໃຫ້ ແລ້ວ ຢູ່ໃນຊ່ວງຂອງການກໍ່ສ້າງນີ້. ດັ່ງທີ່ກ່າວໄວ້ຂ້າງເທິງໂຄງການສາຍສົ່ງ 500 ກວ ມີຄວາມຕ້ອງການ ເນື້ອທີ່ເພື່ອ ການກໍ່ສ້າງຕີນເສົາສາຍສົ່ງທັງໝົດ 47 ເສົາ ມີ 12 ເສົາມຸມ (ຂະໜາດ 15 ແມັດ x 15 ແມັດ) ແລະ ເສົາຊື່ 35 ເສົາ (ຂະໜາດ 12 ແມັດ x 12 ແມັດ) ລວມເປັນເນື້ອທີ່ 7,884 ຕາແມັດ ແລະ ເນື້ອທີ່ສະຫງວນກ້ອງແລວເບື້ອງລະ 35

ແມັດ ລວມເປັນ 70 ແມັດ ຕະຫຼອດຄວາມຍາວຂອງສາຍສົ່ງ 21 ກິໂລແມັດ ຄິດໄລ່ເປັນເນື້ອທີ່ 147.80 ເຮັກຕາ. ດັ່ງນັ້ນ, ເນື້ອທີ່ດັ່ງກ່າວຈະຖືກຫັນປ່ຽນ ມາເປັນທີ່ດິນເພື່ອພັດທະນາໂຄງການສາຍສົ່ງ.

ຕາຕະລາງ 5-3: ຜົນກະທົບຕໍ່ການນຳໃຊ້ທີ່ດິນ ແລະ ປ່າໄມ້ເຂດຕີນເສົາສາຍສົ່ງໄຟຟ້າ

ລ/ດ	ປະເພດການນຳໃຊ້ທີ່ດິນ		ຈຳນວນເສົາໄຟ	ເນື້ອທີ່ຕີນເສົາ	ເນື້ອທີ່ລວມ(ມ²)
ບ້ານ ດາກຍອງ					
1	ເສົາມູມ	ທົ່ງຫຍ້າ	1	225	225
2		ນາເຮື້ອ	1	225	225
3		ສວນກາເຟ	1	225	225
4		ສວນກາເຟເຮື້ອ	1	225	225
1	ເສົາຊື່	ຄັງລ້ຽງສັດ	1	144	144
2		ທົ່ງຫຍ້າ	1	144	144
3		ສວນກາເຟ	1	144	144
4		ສວນກາເຟເຮື້ອ	1	144	144
5		ນາເຮື້ອ	1	144	144
6		ສວນເຮື້ອ	3	144	432
7		ສວນມັນຕົ້ນ	1	144	144
8		ປ່າໄມ້ປະສົມ	1	144	144
9		ປ່າເຫຼົ້າ	1	144	144
ລວມ			**15**		**2484**
ບ້ານ ງອມດອນ					
1	ເສົາມູມ	ສວນກາເຟເຮື້ອ	1	225	225
2		ດິນປຸກສ້າງ	1	225	225
3		ສວນເຮື້ອ	1	225	225
1	ເສົາຊື່	ສວນກາເຟ	2	144	288
2		ສວນເຮື້ອ	3	144	432
3		ດິນປຸກສ້າງ	1	144	144
4		ປ່າໄມ້ປະສົມ	1	144	144
ລວມ			**10**		**1,683**
ບ້ານ ດາກມອນ					
1	ເສົາມູມ	ດິນປຸກສ້າງ	1	225	225
2		ປ່າໄມ້ປະສົມ	1	225	225

ລ/ດ	ປະເພດການນຳໃຊ້ທີ່ດິນ		ຈຳນວນເສົາໄຟ	ເນື້ອທີ່ຕີນເສົາ	ເນື້ອທີ່ລວມ(ມ²)
1	ເສົາຊຸ່	ສວນກາເຟ	1	144	144
2		ສວນມັນຕົ້ນ	1	144	144
3		ສວນເຮື້ອ	1	144	144
4		ປ່າໄມ້ປະສົມ	1	144	144
5		ປ່າເຫຼົ່າ	1	144	144
ລວມ			**7**		**1,170**
ບ້ານ ຕະອອກນ້ອຍ					
1	ເສົາມຸມ	ສວນກາເຟເຮື້ອ	1	225	225
1	ເສົາຊຸ່	ປ່າໄມ້ປະສົມ	5	144	720
ລວມ			**6**		**945**
ບ້ານ ດາກໂດມ					
1	ເສົາມຸມ	ປ່າປະສົມ	2	225	450
1	ເສົາຊຸ່	ປ່າປະສົມ	8	144	1152
ລວມ			**10**		**1,602**
ລວມທັງໝົດ		**ເສົາມຸມ**	**12**		**2,700**
		ເສົາຊຸ່	**35**		**5,184**
		ລວມ	**47**		**7,884**

ແຫຼ່ງຂໍ້ມູນ: ການເກັບຂໍ້ມູນພາກສະໜາມ ເດືອນພະຈິກ 2021

ຕາຕະລາງ 5-4: ຜົນກະທົບຕໍ່ເນື້ອທີ່ປ່າໄມ້ ແລະ ດິນນຳໃຊ້ຕາມຂອບເຂດແລວສາຍສົ່ງ 70 ແມັດ

ລ/ດ	ປະເພດດິນ (m²)	ບ້ານທີ່ນອນໃນເຂດແລວສາຍສົ່ງ 500 kv					ລວມ
		ດາກບອງ	ງອນດອນ	ດາກມອນ	ດາກຕະອອກນ້ອຍ	ດາກໂດມ	
1	ສວນກາເຟ	90101.44	72285.031	79909.537	–	–	242296.01
2	ສວນກາເຟເຮື້ອ	41353.44	20226.377	15643.301	15705.07	–	92928.19
3	ດິນປຸກສ້າງ	4521.30	20292.38	3022.1502	–	–	27835.83
4	ສວນເຮື້ອ	145648.33	119245.55	57031.894	–	–	321925.78
5	ສວນມັນຕົ້ນ	14418.22	9442.154	7081.09	–	–	30941.47
6	ດິນນາ	29876.93	–	22246.751	–	–	52123.68
7	ດິນນາເຮື້ອ	40111.61	–	–	–	–	40111.61
8	ດິນໄຮ່	–	13927.355	–	–	–	13927.35
9	ດິນໄຮ່ເຮື້ອ	–	1819.833	–	–	–	1819.83
10	ເສັ້ນທາງເດີມ	1005.30	–	4731.85	–	–	5737.15

11	ທົ່ງຫຍ້າ	42687.45	–	–	–	–	42687.45
12	ຄ້ງລ້ຽງສັດ	5636.4036	12420.029	–	–	–	18056.43
13	ສວນກ້ວຍ	–	–	8438.9207	–	–	8438.92
14	ປ່າຊ້າ	2223.62	–	–	–	–	2223.62
15	ປ່າເຫຼົ້າ	18042.75	8358.5917	7441.45	–	–	33842.78
16	ປ່າໄມ້ປະສົມ	19818.29	14313.85	27622.92	178705.27	302662.14	543122.47
ລວມ (m^2)		455445.08	292331.16	233169.86	194410.34	302662.14	1478018.58
ລວມ (Ha)		45.5445	29.2331	23.3170	19.4410	30.2662	147.8019
ໝາຍເຫດ: ເຂດສະຫງວນແລວສາຍສົ່ງ 70 ແມັດ, ຄວາມຍາວ 21.05 ກິໂລແມັດ, ລວມເນື້ອທີ່ທັງໝົດ 147.8019 ເຮັກຕາ, ໃນນັ້ນຜົນກະທົບຖາວອນເຂດຕີນເສົາ 7,884 ຕາແມັດ							

ແຫຼ່ງຂໍ້ມູນ: ການເກັບຂໍ້ມູນພາກສະໜາມ ເດືອນພະຈິກ 2021

ມາດຕະການຫຼຸດຜ່ອນ:

- ສ້າງແຜນການທົດແທນຄ່າເສຍຫາຍແບບລະອຽດ ກຳນົດ ບຸກຄົນ/ຄອບຄົວ, ຜູ້ທີ່ຈະສູນເສຍທີ່ດິນຕ່າງໆ ຂອງເຂົາເຈົ້າ
- ການທົດແທນຄ່າການສູນເສຍໂອກາດ ຕ້ອງພິຈາລະນາ ແລະ ຊຳລະໃຫ້ແກ່ຊາວບ້ານທີ່ໄດ້ຮັບຜົນກະທົບ ອີງຕາມຜົນຂອງການປຶກສາຫາລື ລະຫວ່າງ ຄະນະກຳມະການ, ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍ ຫາຍ ແລະ ສ່ວນບຸກຄົນທີ່ໄດ້ຮັບຜົນກະທົບ ໂດຍການຮ່ວມມືກັບ ອຳນາດການປົກຄອງທ້ອງຖິ່ນ, ການ ກຳນົດລາຄາຫົວໜ່ວຍການທົດແທນຄ່າເສຍຫາຍຂັ້ນສຸດທ້າຍ ຕ້ອງໄດ້ຮັບອະນຸມາດຈາກທ່ານເຈົ້າແຂວງ ໂດຍການສະເໜີຈາກ ຄະນະກຳມະການ ຄຸ້ມຄອງສິ່ງແວດລ້ອມ ແລະ ການທົດແທນຄ່າເສຍຂອງ ໂຄງການ.
- ຈະຕ້ອງສ້າງຊຸດການທົດແທນຄ່າເສຍຫາຍທີ່ເໝາະສົມ ໂດຍການເຮັດຮ່ວມກັບຜູ້ທີ່ມີສ່ວນຮ່ວມທັງໝົດ ຢ່າງໃກ້ສິດ.
- ເຈົ້າຂອງໂຄງການຕ້ອງຈ່າຍຄ່າທົດແທນຄ່າເສຍຫາຍຕໍ່ກັບທີ່ດິນນຳໃຊ້ທີ່ໂຄງການຈະເວນຄືນ ກ່ອນການ ລົບກວນ ຫຼື ນຳໃຊ້ເນື້ອທີ່ດິນ ແລະ ຕ້ອງທົດແທນໃນອັດທີ່ທີ່ຍອມຮັບໄດ້ທັງສອງຝ່າຍ.
- ຊະລໍເວລາການເວນຄືນທີ່ດິນ ຈົນກວ່າຈະເກັບກ່ຽວຜົນລະປູກສຳເລັດ. ໃນກໍລະນີ ການເວນຄືນທີ່ດິນບໍ່ ສາມາດແກ່ຍາວໄດ້, ຕ້ອງໄດ້ຈ່າຍຄ່າທົດແທນຄ່າເສຍຫາຍຕໍ່ຜົນລະປູກ ໃຫ້ສອດຄ່ອງກັບປະລິມານຜົນລະ ປູກທີ່ຄາດຄະເນຈະໄດ້ຮັບ ແລະ ໃນລາຄາທ້ອງຕະຫຼາດ.
- ສ້າງກົນໄກການແກ້ໄຂຄຳຮ້ອງທຸກ ສຳລັບຜູ້ທີ່ໄດ້ຮັບຜົນກະທົບທັງໝົດ.
- ຈັດກິດຈະກຳການສົ່ງເສີມອາຊີບ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງປະຊາຊົນ ແລະ ສະພາບເງື່ອນໄຂ ທາງດ້ານສິ່ງແວດລ້ອມ.
- ບູລິມະສິດທຳອິດຂອງ ການວ່າຈ້າງພະນັກງານຈະຕ້ອງໃຫ້ແກ່ ປະຊາຊົນ ໃນ 5 ບ້ານອ້ອມຂ້າງໂຄງການ ໂດຍສະເພາະ 104 ຄົວເຮືອນທີ່ຈະໄດ້ຮັບຜົນກະທົບຈາກເຂດຕີນເສົາ ແລະ ເຂດກ້ອງແລວສາຍສົ່ງ.
- ຈຳກັດການກໍ່ສ້າງແລວສາຍສົ່ງ ໃນຂອບເຂດພື້ນທີ່ທີ່ໄດ້ຖືກມອບໂອນແລ້ວ.

3) ໄລຍະການດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ:

ພາຍຫຼັງກິດຈະກຳການກໍ່ສ້າງສຳເລັດໃນໄລຍະການກໍ່ສ້າງແລ້ວ ດັ່ງນັ້ນ, ໃນໄລຍະການດຳເນີນງານຈະບໍ່ມີກິດຈະກຳ ອັນທີ່ອາດຈະກໍ່ໃຫ້ເກີດຜົນກະທົບຕໍ່ກັບເນື້ອທີ່ປ່າໄມ້ ແລະ ດິນນຳໃຊ້ ແຕ່ເຖິງຢ່າງໃດກໍ່ຕາມໃນໄລຍະການດຳເນີນ ງານຂອງໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລິມ 600 MW ເມືອງດາກຈຶງ. ແລວສາຍສົ່ງ ດັ່ງກ່າວ ແມ່ນຈະຜ່ານ ດິນນຳໃຊ້ ແລະ ປ່າໄມ້ບາງຈຳນວນ ທີ່ແຕກຕ່າງກັນ (ດັ່ງທີ່ໄດ້ລະບຸໄວ້ຂ້າງເທິງ). ໃນຊ່ວງ ການນຳໃຊ້ນີ້ ທາງໂຄງການ ມີຄວາມຈຳເປັນຕ້ອງໄດ້ບຳລຸງຮັກສາ ບໍ່ໃຫ້ຕົ້ນໄມ້ທີ່ຢູ່ກ້ອງແລວສາຍສົ່ງ ສູງເກີນ 3 ມ (ຕາມລະບຽບດ້ານເຕັກນິກ ຂອງລັດວິສາຫະກິດໄຟຟ້າລາວວາງອອກ ສຳລັບສາຍສົ່ງ 500 ກວ). ມາດຕະການບຳລຸງ ຮັກສານີ້ ບໍ່ໃຫ້ຕັດຕົ້ນໄມ້ອອກນອກແລວທີ່ໄດ້ກຳນົດໄວ້ 70 ມ, ບໍ່ໃຫ້ຈູດໄໝ້ ແລະ ພືດຕ່າງໆ ທີ່ໄດ້ຖາກຖາງອອກ ຕາມແລວ ຈະຕ້ອງປະໃຫ້ມີພື້ນທີ່ສີຂຽວ.

5.5.2 ການປະເມີນຜົນກະທົບດ້ານສັງຄົມ

5.5.2.1 ຊຸມຊົນ ແລະ ປະຊາກອນ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຢູ່ໃນໄລຍະກ່ອນການກໍ່ສ້າງໂຄງການ ຈະບໍ່ມີຜົນກະທົບຫຍັງ ຕໍ່ການປ່ຽນແປງດ້ານຊຸມຊົນ ແລະ ປະຊາກອນຂອງ ທ້ອງຖິ່ນ, ເນື່ອງຈາກໂຄງການ ຍັງບໍ່ທັນມີກິດຈະກຳຫຍັງ ທີ່ຈະກໍ່ໃຫ້ເກີດຜົນກະທົບໃນດ້ານປະຊາກອນ. ໜ້າວຽກ ການສຳຫຼວດ, ອອກແບບແລວສາຍສົ່ງ ແມ່ນມີພຽງທີມງານ ຂອງກຸ່ມເຕັກນິກ ທີ່ເຂົ້າໄປໃນພື້ນທີ່ຂອງໂຄງການ.

ມາດຕະການຫຼຸດຜ່ອນ:

ເຖິງແມ່ນວ່າ ໃນໄລຍະກ່ອນການກໍ່ສ້າງໂຄງການ ຈະບໍ່ມີຜົນກະທົບຫຍັງ ຕໍ່ການເພີ່ມຂຶ້ນຂອງປະຊາກອນ ທ້ອງຖິ່ນ ໃນເຂດຂອງໂຄງການ, ເນື່ອງຈາກການສຳຫຼວດບໍ່ໄດ້ໃຊ້ເວລາຫຼາຍ ແລະ ໃຊ້ເວລາເປັນໄລຍະໃນແຕ່ລະຄັ້ງປະມານ 1-2 ອາທິດເທົ່ານັ້ນ ທີ່ມີຈຳນວນທີມງານປະມານ 10-15 ຄົນ. ແຕ່ທີມງານການສຳຫຼວດ, ເກັບຂໍ້ມູນຕ່າງໆຂອງ ໂຄງການກໍ່ຕ້ອງມີການແຈ້ງຈຳນວນຄົນທີ່ເຂົ້າໄປໃນພື້ນທີ່ໂຄງການແຕ່ລະຄັ້ງໃຫ້ອຳນາດການປົກຄອງ ທ້ອງຖິ່ນ ໄດ້ ຮັບຮູ້ເພື່ອການຄຸ້ມຄອງຄົນເຂົ້າອອກ.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ປະຊາກອນຂອງທັງ 5 ບ້ານໃກ້ຄຽງໂຄງການ ສ່ວນຫຼາຍແມ່ນເຜົ່າຕະຽງ, ແຢະ ແລະ ກະຕູ ເຊິ່ງແຕ່ລະເຜົ່າແມ່ນມີ ວັດທະນະທຳ, ພາສາປາກເວົ້າ ແລະ ຮີດຄອງປະເພນີແຕກຕ່າງກັນເລັກໜ້ອຍ, ເຊິ່ງໃນໄລຍະການກໍ່ສ້າງນີ້ ຖ້າຫາກມີ ການເຂົ້າມາຂອງແຮງງານຕ່າງຖິ່ນ ຫຼື ແຮງງານຈາກຕ່າງປະເທດ ກໍ່ອາດຈະສົ່ງຜົນກະທົບຕໍ່ກັບຊຸມຊົນ ແລະ ປະຊາກອນໄດ້. ນອກຈາກນີ້ ກິດຈະກຳການກໍ່ສ້າງຕ່າງໆອາດຈະກໍ່ໃຫ້ເກີດຄວາມເດືອດຮ້ອນລຳຄານຕໍ່ຄົວເຮືອນ

ແລະ ຊຸມຊົນທີ່ອາໄສໃກ້ຄຽງ ແລະ ສະຖານທີ່ໆມີຄວາມອ່ອນໄຫວດ້ານສິ່ງແວດລ້ອມ ເຊັ່ນ: ສຽງດັງ, ຝຸ່ນລະອອງ ຈາກລົດຂົນສົ່ງອຸປະກອນການກໍ່ສ້າງ ເປັນຕົ້ນ.

ມາດຕະການຫຼຸດຜ່ອນ:

- ປະຕິບັດຕາມມາດຕະການຫຼຸດຜ່ອນຜົນກະທົບດ້ານສຽງ, ຂີ້ຝຸ່ນ ແລະ ດ້ານອື່ນໆ ຢ່າງເຂັ້ມງວດເພື່ອບໍ່ໃຫ້ເກີດຜົນກະທົບຕໍ່ຊຸມຊົນຫຼາຍ.
- ເປີດໂອກາດໃຫ້ປະຊາຊົນ ແລະ ຊຸມຊົນທີ່ອາໄສຢູ່ໃກ້ຄຽງແລວສາຍສົ່ງ ທີ່ໄດ້ຮັບຜົນກະທົບໄດ້ສະແດງ ຄວາມຄິດເຫັນ ແລະ ຂໍ້ສະເໜີຕໍ່ກັບໂຄງການ.
- ເພື່ອຮັບປະກັນທາງດ້ານຄວາມສະຫງົບໃນໄລຍະກໍ່ສ້າງ ຈຸດກໍ່ສ້າງຕ່າງໆຂອງໂຄງການຕ້ອງໄດ້ມີການ ເກັບກຳຈຳນວນກຳມະກອນ ແລະ ແຮງງານທີ່ເຮັດວຽກທັງໝົດ ແລະ ມີການປະສານເພື່ອລາຍງານກ່ຽວກັບ ຂໍ້ມູນດັ່ງກ່າວໃຫ້ກັບອຳນາດການປົກຄອງບ້ານທີ່ຢູ່ໃກ້ຄຽງຊາບ, ໂດຍສະເພາະ ແມ່ນແຮງງານທີ່ອາໄສພັກ ເຊົ່າໃນທີ່ພັກກໍ່ສ້າງເພື່ອໃຫ້ບ້ານສາມາດຕິດຕາມຈຳນວນຄົນທີ່ເຮັດວຽກທັງໝົດໄດ້ ແລະ ມີຄວາມ ສະດວກໃນການປ້ອງກັນຄວາມສະຫງົບ.
- ຄວບຄຸມ ແລະ ວາງລະບຽບບໍ່ໃຫ້ກຳມະກອນກໍ່ສ້າງປະພຶດໃນທາງທີ່ກໍ່ໃຫ້ເກີດຄວາມເດືອດຮ້ອນກັບຊຸມ ຊົນທ້ອງຖິ່ນ. ກໍລະນີມີບັນຫາເກີດຂຶ້ນ ທາງໂຄງການຕ້ອງໃຫ້ຄວາມຮ່ວມມືກັບພາກລັດ ເພື່ອຊ່ວຍກັນແກ້ ໄຂບັນຫານັ້ນ ຕາມລະບຽບກົດໝາຍ ແລະ ຮີດຄອງປະເພນີຂອງທ້ອງຖິ່ນ.
- ພິຈາລະນາຮັບເອົາແຮງງານກຳມະກອນທ້ອງຖິ່ນ, ແຮງງານພາຍໃນ ສຳລັບການກໍ່ສ້າງເພື່ອເປັນການສ້າງ ລາຍໄດ້ໃຫ້ເຂົາເຈົ້າ.
- ເຈົ້າຂອງໂຄງການ ຕ້ອງສ້າງສາຍພົວພັນທີ່ດີກັບ ທ້ອງຖິ່ນ ແລະ ມີການສົ່ງເສີມ ແລະ ມີສ່ວນຮ່ວມ ໃນກິດ ຈະກຳຕ່າງຂອງຊຸມຊົນ ລວມທັງງານບຸນຮີດຄອງເພນີ ແລະ ພິທີການທາງວັດທະນະທຳ.
- ເຈົ້າຂອງໂຄງການ ຕ້ອງເຜີຍແຜ່ຂໍ້ມູນ ຂອງໂຄງການ ແລະ ກິດຈະກຳຕ່າງໆ ທີ່ໄດ້ຈັດຕັ້ງປະຕິບັດ ລວມທັງ ຜົນຂອງການຕິດຕາມກວດກາ ແກ່ຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບ.

3) ໄລຍະການດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ:

ດັ່ງທີ່ກ່າວໄວ້ຂ້າງເທິງ ໃນຊ່ວງການກໍ່ສ້າງຄາດວ່າຈະມີຄົນຈຳນວນໜຶ່ງ ທີ່ມາຈາກຕ່າງຖິ່ນລວມທັງຄົນ ທີ່ມາຈາກທັງ ພາຍໃນ ແລະ ຕ່າງປະເທດ ເພື່ອເຂົ້າມາເຮັດວຽກກໍ່ສ້າງ. ດັ່ງນັ້ນ ພາຍຫຼັງມີການກໍ່ສ້າງທາງສຳເລັດແລ້ວ ຖ້າຄົນຈຳ ນວນນີ້ບໍ່ກັບຄືນໝົດ ຫຼື ທຳມາຫາກິນຢູ່ໃນພື້ນທີ່ໂຄງການຕໍ່ ກໍ່ຈະເຮັດໃຫ້ຈຳນວນປະຊາກອນທ້ອງຖິ່ນເພີ່ມຂຶ້ນ ແລະ ຈະກໍ່ໃຫ້ເກີດຜົນກະທົບຕາມມາເຊັ່ນ: ຕໍ່ການນຳໃຊ້ດິນ ແລະ ປ່າໄມ້ທີ່ມີຢູ່ຢ່າງຈຳກັດ.

ມາດຕະການຫຼຸດຜ່ອນ:

- ທາງໂຄງການຮ່ວມກັບພາກລັດທີ່ກ່ຽວຂ້ອງ ຈະຕ້ອງມີການຕິດຕາມການເພີ່ມຂຶ້ນຂອງປະຊາກອນ ໃນພື້ນ ທີ່ເຂດໂຄງການ, ພາຍຫຼັງກໍ່ສ້າງແລ້ວຕ້ອງໃຫ້ເຂົາເຈົ້າກັບຄືນ ເນື່ອງຈາກຖ້າປະຊາກອນເພີ່ມຂຶ້ນຫຼາຍ ກໍ່ຈະ ເຮັດໃຫ້ການນຳໃຊ້ຊັບພະຍາກອນທຳມະຊາດ ທີ່ມີຢູ່ທ້ອງຖິ່ນບໍ່ພຽງພໍ.

5.5.2.2 ການເວນຄືນທີ່ດິນ ແລະ ຊັບສິນຂອງປະຊາຊົນ

ຜົນກະທົບທີ່ອາດຈະເກີດຂຶ້ນ:

ການເວນທີ່ດິນສຳລັບໂຄງການຈະຕ້ອງໄດ້ດຳເນີນໃຫ້ສຳເລັດໃນໄລຍະກ່ອນການກໍ່ສ້າງ ຫຼື ໄລຍະການກະກຽມການກໍ່ສ້າງໂຄງການ. ໃນໄລຍະນີ້, ດັ່ງທີ່ກ່າວໄວ້ຂ້າງເທິງໂຄງການພະລັງງານລົມ ມີຄວາມຕ້ອງການເນື້ອທີ່ຖາວອນເພື່ອກໍ່ສ້າງຕີນເສົາສາຍສົ່ງທັງໝົດ 47 ເສົາ ເປັນເນື້ອທີ່ 7,884 ຕາແມັດ ແລະ ເນື້ອທີ່ສະຫງວນກ້ອງແລວເບື້ອງລະ 35 ແມັດ ລວມເປັນ 70 ແມັດ ຕະຫຼອດຄວາມຍາວຂອງສາຍສົ່ງ 21 ກິໂລແມັດ ຄິດໄລ່ເປັນເນື້ອທີ່ 147.80 ເຮັກຕາ, ເຊິ່ງຈະສົ່ງຜົນກະທົບຕໍ່ທີ່ດິນກະສິກຳ ຂອງສ່ວນບຸກຄົນ ຢູ່ ໃນ 4 ບ້ານ ຈາກບ້ານທັງໝົດ 5 ບ້ານ.

ຕາຕະລາງ 5-5: ຈຳນວນຄອບຄົວທີ່ຖືກຜົນກະທົບ

ລ/ດ	ເມືອງ	ບ້ານ	ຈຳນວນ ຄອບຄົວ	ຈຳນວນຄອບຄົວທີ່ຖືກຜົນກະທົບ	
				ຖາວອນ(ຕີນເສົາ)	ກະທົບຊົ່ວຄາວ(ກ້ອງແລວ)
1	ດາກຈຶງ	ດາກບອງ	244	10	32
2		ດາກຕະອອກນ້ອຍ	44	1	1
3		ງອນດອນ	99	8	22
4		ດາກມອນ	78	4	26
5		ດາກໂດມ	56	ຖືກແຕ່ດິນລວມບ້ານເຂດປ່າປ້ອງກັນທັງໝົດ	
ລວມ			**521**	**23**	**81**

- ມີຈຳນວນ 104 ຄົວເຮືອນ ໃນ 4 ບ້ານຈາກທັງໝົດ 5 ບ້ານຈະໄດ້ຮັບຜົນກະທົບຍ້ອນການເວນຄືນທີ່ດິນສຳລັບພັດທະນາໂຄງການ ສ່ວນຫຼາຍແມ່ນໄດ້ຮັບຜົນກະທົບຊົ່ວຄາວຈາກເຂດສະຫງວນກ້ອງແລວ, ສ່ວນຜົນກະທົບຖາວອນເຂດຕີນເສົາ ແມ່ນມີພຽງ 23 ຄົວເຮືອນ ຈາກ 104 ຄົວເຮືອນທັງໝົດ. ເຊິ່ງຈະມັນຈະສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ ຂອງປະຊາຊົນ ໂດຍສະເພາະ ແມ່ນຕໍ່ຜູ້ທີ່ອາໄສການກະສິກຳເປັນຕົ້ນຕໍ ຍ້ອນວ່າມັນຈະສົ່ງຜົນກະທົບຕໍ່ການການຄ້ຳປະກັນທາງດ້ານສະບຽງອາຫານ ສຳລັບການດຳລົງຊີວິດຂອງເຂົາເຈົ້າ.
- ການເວນຄືນທີ່ດິນ ສຳລັບພັດທະນາໂຄງການ ສາຍສົ່ງ 500 ກວ ທີ່ສະເໜີນີ້ ຈະຕ້ອງໄດ້ມີການຍັບຍ້າຍ ຖຽງນາ 1 ຫຼັງ, ນອກຈາກສິ່ງປຸກສ້າງແລ້ວ ຍັງມີຜົນຜະລິດເປັນຕົ້ນແມ່ນ ຕົ້ນກາເຟທີ່ຈະໄດ້ຮັບຜົນກະທົບ.

ມາດຕະການຫຼຸດຜ່ອນ:

ມາດຕະການຫຼຸດຜ່ອນຜົນກະທົບ ຈະຕ້ອງໄດ້ທົດແທນຄ່າເສຍຫາຍສຳລັບ ການເວນຄືນທີ່ດິນ ແລະ ຊັບສິນຕ່າງໆ ຂອງປະຊາຊົນມີຄື:

- ສ້າງແຜນການທົດແທນຄ່າເສຍຫາຍແບບລະອຽດ ກຳນົດ ບຸກຄົນ/ຄອບຄົວ, ຜູ້ທີ່ຈະສູນເສຍ ພືດພັນຕ່າງໆ ຂອງເຂົາເຈົ້າ ຍ້ອນການເວນຄືນທີ່ດິນ.
- ການທົດແທນຄ່າການສູນເສຍໂອກາດ ຕ້ອງພິຈາລະນາ ແລະ ຊຳລະໃຫ້ແກ່ຊາວບ້ານທີ່ໄດ້ຮັບຜົນກະທົບ ອີງຕາມຜົນຂອງການປຶກສາຫາລື ລະຫວ່າງ ຄະນະກຳມະການ, ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແລະ ສ່ວນບຸກຄົນທີ່ໄດ້ຮັບຜົນກະທົບ ໂດຍການຮ່ວມມືກັບ ອຳນາດການປົກຄອງທ້ອງຖິ່ນ, ການ

ກຳນົດລາຄາຫົວໜ່ວຍການທົດແທນຄ່າເສຍຫາຍຂັ້ນສຸດທ້າຍ ຕ້ອງໄດ້ຮັບອະນຸມັດຈາກທ່ານເຈົ້າແຂວງ ໂດຍການສະເໜີຈາກ ຄະນະກຳມະການ ຄຸ້ມຄອງສິ່ງແວດລ້ອມ ແລະ ການທົດແທນຄ່າເສຍຂອງ ໂຄງການ.

- ຈະຕ້ອງສ້າງ ຊຸດການທົດແທນຄ່າເສຍຫາຍທີ່ເໝາະສົມ ໂດຍການເຮັດຮ່ວມກັບຜູ້ທີ່ມີສ່ວນຮ່ວມທັງໝົດ ຢ່າງໃກ້ສິດ.
- ເຈົ້າຂອງໂຄງການຕ້ອງຈ່າຍຄ່າທົດແທນຄ່າເສຍຫາຍຕໍ່ກັບທີ່ດິນນຳໃຊ້ທີ່ໂຄງການຈະເວນຄືນ ກ່ອນການ ລົບກວນ ຫຼື ນຳໃຊ້ເນື້ອທີ່ດິນ ແລະ ຕ້ອງທົດແທນໃນອັດທີ່ທີ່ຍອມຮັບໄດ້ທັງສອງຝ່າຍ.
- ຊະລໍເວລາການເວນຄືນທີ່ດິນ ຈົນກວ່າຈະເກັບກ່ຽວຜົນລະປູກສຳເລັດ. ໃນກໍລະນີ ການເວນຄືນທີ່ດິນບໍ່ ສາມາດແກ່ຍາວໄດ້, ຕ້ອງໄດ້ຈ່າຍຄ່າທົດແທນຄ່າເສຍຫາຍຕໍ່ຜົນລະປູກ ໃຫ້ສອດຄ່ອງກັບປະລິມານຜົນລະ ປູກທີ່ຄາດຄະເນຈະໄດ້ຮັບ ແລະ ໃນລາຄາທ້ອງຕະຫຼາດ.
- ສ້າງກົນໄກການແກ້ໄຂຄຳຮ້ອງທຸກ ສຳລັບຜູ້ທີ່ໄດ້ຮັບຜົນກະທົບທັງໝົດ.
- ຈັດກິດຈະກຳການສົ່ງເສີມອາຊີບ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງປະຊາຊົນ ແລະ ສະພາບເງື່ອນໄຂ ທາງດ້ານສິ່ງແວດລ້ອມ.
- ບູລິມະສິດທຳອິດຂອງ ການວ່າຈ້າງພະນັກງານຈະຕ້ອງໃຫ້ແກ່ ປະຊາຊົນ ໃນ 5 ບ້ານອ້ອມຂ້າງໂຄງການ ໂດຍສະເພາະແມ່ນ 104 ຄົວເຮືອນທີ່ໄດ້ຮັບຜົນກະທົບຈາກໂຄງການ.

5.5.2.3 ຊົນເຜົ່າ ແລະ ສາສະໜາ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ດັ່ງທີ່ໄດ້ກ່າວມາບັນດາໝູ່ບ້ານໃນເຂດແລວສາຍສົ່ງທັງ 5 ບ້ານ ແມ່ນປະກອບດ້ວຍຊົນເຜົ່າທີ່ຄືກັນ ແລະ ຕ່າງກັນ, ອີງ ຕາມຂໍ້ມູນທີ່ໄດ້ຈາກການສຳຫຼວດ-ສອບຖາມແຕ່ລະຄົວເຮືອຢູ່ແຕ່ລະບ້ານໃຫ້ຮູ້ວ່າ ໃນເຂດ 5 ບ້ານ ແມ່ນປະກອບ ບັນດາຊົນເຜົ່າຄື ຊົນເຜົ່າຕຣຽງ ກວມເອົາ 73.7%, ຊົນເຜົ່າແຢະ ກວມເອົາ 16.12 %, ເຜົ່າລາວລຸ່ມ ກວມເອົາ 6.53 % ແລະ ຊົນເຜົ່າກະຕູ ກວມເອົາ 3.65 %, ເຊິ່ງແຕ່ລະເຜົ່າລ້ວນແລ້ວແຕ່ມີຮີດຄອງປະເພນີ, ການນຸ່ງຖື, ພາສາປາກ ເວົ້າ ແລະ ການເຊື່ອຖືສາສະໜາທີ່ແຕກຕ່າງກັນ ໂດຍສ່ວນໃຫຍ່ແລ້ວບ້ານໃນເຂດໂຄງການແມ່ນ ມີການນັບຖືສາສະ ໜາພຸດ ແລະ ນັບຖືຜີ.

ຢູ່ໃນໄລຍະກ່ອນການກໍ່ສ້າງໂຄງການນີ້ ໂຄງການຈະບໍ່ກໍ່ໃກ້ເກີດ ຜົນກະທົບຫຍັງ ຕໍ່ຊົນເຜົ່າ ແລະ ຄວາມເຊື່ອຖືທາງ ສາສະໜາຂອງທ້ອງຖິ່ນ, ເນື່ອງຈາກກິດຈະກຳ ການສຳຫຼວດ, ອອກແບບ, ເກັບຂໍ້ມູນ ຂອງໂຄງການບໍ່ໄດ້ ກ່ຽວຂ້ອງ ແລະ ບໍ່ມີຜົນກະທົບຕໍ່ຊົນເຜົ່າຂອງທ້ອງຖິ່ນ.

ອີງຕາມຂໍ້ມູນການສຳຫຼວດພາກສະໜາມ ໃນຊ່ວງເດືອນກັນຍາ 2020 ທີ່ຜ່ານມາ ເຫັນວ່າ ໃນການອອກແບບກຳນົດ ແລວສາຍສົ່ງຂອງໂຄງການ ເຫັນວ່າໃນຊ່ວງເສົາສາຍສົ່ງທີ່ 12 ຫາ 13 ແມ່ນມີຂອບເຂດສະຫງວນກອງແລວໄປຜ່ານ ເຂດປ່າຊ້າຂອງບ້ານດາກບອງ.

ມາດຕະການຫຼຸດຜ່ອນ:

- ເຖິງແມ່ນວ່າກິດຈະກຳ ການສຳຫຼວດອອກແບບ ຂອງໂຄງການບໍ່ໄດ້ ກ່ຽວຂ້ອງ ແລະ ບໍ່ມີຜົນກະທົບຮ້າຍແຮງຕໍ່ຊົນເຜົ່າຂອງທ້ອງຖິ່ນກໍຕາມ, ແຕ່ການເດີນສຳຫຼວດ ແລະ ການເກັບຂໍ້ມູນ ຂອງທີມງານການສຳຫຼວດ ແລະ ອອກແບບຂອງໂຄງການ ກໍຕ້ອງນັບຖືຮີດຄອງປະເພນີ ຂອງຊົນເຜົ່າທ້ອງຖິ່ນ, ບໍ່ຄວນເຮັດໃນສິ່ງທີ່ຈະຜິດຮີດຄອງປະເພນີຂອງເຂົາເຈົ້າ
- ການອອກແບບແລວສາຍສົ່ງໃນຊ່ວງເສົາສາຍສົ່ງທີ່ 12 ຫາ 13 ທີ່ກ່າວຂ້າງເທິງ ຖ້າສາມາດຫຼີກລ່ຽງໄດ້ແມ່ນ ໃຫ້ມີການຍ້າຍອອກຈາກເຂດປ່າຊ້າ
- ກໍລະນີທີ່ບໍ່ສາມາດຍ້າຍໄດ້ແມ່ນ ໃຫ້ທາງໂຄງການຮ່ວມກັບຄະນະກຳມະການເຮັດວຽກຢ່າງໃກ້ສິດກັບ ບັນດາອຳນາດການປົກຄອງ, ເຖົ້າແກ່ແມ່ບ້ານ ແລະ ເຈົ້າກົກເຈົ້າເຫຼົ່າບ້ານທີ່ຖືກກະທົບດັ່ງກ່າວ ເພື່ອຫາທາງອອກຮ່ວມກັນ ເຊິ່ງອາດຈະຕ້ອງມີການຄອບ ຫຼື ປ່ຽນແປງຊິດເຊີຍຕາມຮີດຄອງ ແລະ ການນັບຖືຂອງທ້ອງຖິ່ນ.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ໄລຍະການກໍ່ສ້າງໂຄງການນີ້ ຄາດວ່າຈະມີຄົນ ທີ່ເປັນຊົນເຜົ່າມາຈາກທ້ອງຖິ່ນອື່ນ ແລະ ຈະມີທັງຄົນຕ່າງປະເທດ ທີ່ຈະເຂົ້າມາເຮັດວຽກກໍ່ສ້າງ. ດັ່ງນັ້ນ ໃນຊ່ວງນີ້ແມ່ນຈະມີຫຼາກຫຼາຍຊົນເຜົ່າ ເຂົ້າມາພັກເຊົາ ແລະ ຜ່ານກາຍ ບັນດາໝູ່ບ້ານທັງ 5 ບ້ານ. ດັ່ງນັ້ນ, ການທີ່ມີຊົນເຜົ່າອື່ນ ຈາກຕ່າງຖິ່ນເຂົ້າມາປະປົນ ມັກຈະກໍ່ໃຫ້ເກີດ ຄວາມບໍ່ລະມັດລະວັງ ໃນການເຊື່ອຖືທາງດ້ານຮີດຄອງປະເພນີ ແລະ ຄວາມເຊື່ອຖືຂອງຊົນເຜົ່າທ້ອງຖິ່ນ.

ມາດຕະການຫຼຸດຜ່ອນ:

- ເຈົ້າຂອງໂຄງການ ຕ້ອງສ້າງສາຍພົວພັນທີ່ດີກັບ ທ້ອງຖິ່ນ ແລະ ມີການສົ່ງເສີມ ແລະ ມີສ່ວນຮ່ວມ ໃນກິດຈະກຳຕ່າງຂອງຊຸມຊົນ ລວມທັງງານບຸນຮີດຄອງເພນີ ແລະ ພິທີການທາງວັດທະນະທຳ.
- ການທີ່ມີຊົນເຜົ່າອື່ນ ຈາກຕ່າງຖິ່ນເຂົ້າມາປະປົນ ມັກຈະກໍ່ໃຫ້ເກີດ ຄວາມບໍ່ລະມັດລະວັງ ໃນການເຊື່ອຖືທາງດ້ານຮີດຄອງປະເພນີ ແລະ ຄວາມເຊື່ອຖືຂອງຊົນເຜົ່າທ້ອງຖິ່ນ. ດັ່ງນັ້ນ ທາງໂຄງການ ຕ້ອງມີການປະສານສົມທົບ ແລະ ແຈ້ງບອກກັບອຳນາດການປົກຄອງທ້ອງຖິ່ນ ໃຫ້ເຂົາເຈົ້າຮັບຮູ້ ວ່າມີຊົນເຜົ່າ ຫຼື ຄົນຕ່າງຊາດໃດແດ່ ເຂົ້າມາເຮັດວຽກ ເພື່ອສະດວກຕໍ່ການຄຸ້ມຄອງ ແລະ ການໃຫ້ກຽດນັບຖື ເຊິ່ງກັນ ແລະ ກັນລະຫວ່າງຊົນເຜົ່າ.
- ພະນັກງານ ແລະ ກຳມະກອນຂອງໂຄງການ ຕ້ອງຮັບຮູ້ວັດທະນາທຳຂອງທ້ອງຖິ່ນ, ຮີດຄອງປະເພນີ ແລະ ທຳນຽມການປະຕິບັດ.

3) ໄລຍະດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ:

ພາຍຫຼັງກິດຈະກຳການກໍ່ສ້າງ ສຳເລັດທັງໝົດໃນໄລຍະການກໍ່ສ້າງ. ໃນໄລຍະການສົ່ງໄຟນີ້ຄາດວ່າບັນດາແຮງງານກຳມະກອນທີ່ເປັນຊົນເຜົ່າມາຈາກທ້ອງຖິ່ນອື່ນ ແລະ ຄົນຕ່າງປະເທດ ທີ່ຈະເຂົ້າມາເຮັດວຽກກໍ່ສ້າງ ກໍ່ຈະກັບຄືນຖິ່ນ

ຖານເດີມຂອງເຂົາເຈົ້າ ດັ່ງນັ້ນ, ຈະບໍ່ມີຄວາມສ່ຽງຜົນກະທົບອັນໃດດ້ານຊົນເຜົ່າ ແລະ ການນັບຖືສາສະໜາທ້ອງຖິ່ນຕໍ່ໄປ.

ມາດຕະການຫຼຸດຜ່ອນ:

ຖ້າກໍລະນີມີຊົນເຜົ່າອື່ນ ຫຼື ມີຄົນຕ່າງປະເທດ ເຂົ້າມາແຕ່ງງານ ຫຼື ມາຢູ່ກັບຄົນທ້ອງຖິ່ນ ກັບຊົນເຜົ່າທ້ອງຖິ່ນ, ທາງໂຄງການ ກໍ່ຕ້ອງໃຫ້ຄວາມຮ່ວມມືກັບທ້ອງຖິ່ນ ໃຫ້ມີການແຕ່ງງານ ຫຼື ມາຢູ່ທີ່ຖືກຕ້ອງຕາມກົດໝາຍຂອງລາວ ແລະ ທີ່ສຳຄັນ ຕ້ອງນັບຖືຮີດຄອງປະເພນີຂອງຊົນເຜົ່າປະຈຳທ້ອງຖິ່ນ.

5.5.2.4 ການສຶກສາ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ສະພາບການສຶກສາຢູ່ 5 ບ້ານເຂດແລວສາຍສົ່ງ ເຫັນວ່າແຕ່ລະບ້ານແມ່ນ ມີສະພາບທາງດ້ານການສຶກສາ ຂະຫຍາຍຕົວພໍສົມຄວນ, ແຕ່ລະບ້ານມີໂຮງຮຽນປະຖົມ ແລະ ບາງບ້ານມີຮອດຊັ້ນມັດທະຍົມ, ຢູ່ໃນໄລຍະກ່ອນການກໍ່ສ້າງສາຍສົ່ງໄຟຟ້ານີ້ ໂຄງການຈະບໍ່ກໍ່ໃຫ້ເກີດຜົນກະທົບຫຍັງ ຕໍ່ການສຶກສາຂອງທ້ອງຖິ່ນ, ເນື່ອງຈາກກິດຈະກຳການສຳຫຼວດ, ເກັບຂໍ້ມູນຂອງໂຄງການບໍ່ໄດ້ກ່ຽວຂ້ອງກັບການເຂົ້າຮຽນຂອງນັກຮຽນ.

ມາດຕະການຫຼຸດຜ່ອນ:

ທາງໂຄງການບໍ່ມີຄວາມຈຳເປັນ ຕ້ອງໃຊ້ມາດຕະການຫຼຸດຜ່ອນຫຍັງຢູ່ໃນໄລຍະກ່ອນການກໍ່ສ້າງ, ເນື່ອງຈາກໂຄງການຈະບໍ່ກໍ່ໃຫ້ເກີດ ຜົນກະທົບຫຍັງ ຕໍ່ການສຶກສາຂອງທ້ອງຖິ່ນ.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ໃນໄລຍະທີ່ມີການກໍ່ສ້າງໂຄງການ ອາດຈະມີຝຸ່ນລະອອງ, ສຽງດັງ ທີ່ຈະເກີດຈາກກິດຈະກຳການກໍ່ສ້າງ ອາດສົ່ງຜົນກະທົບລົບກວນຕໍ່ເດັກນັກນ້ອຍນັກຮຽນຢູ່ຕາມໂຮງຮຽນຂອງທັງ 5 ບ້ານ. ໂດຍສະເພາະການຂົນສົ່ງວັດສະດຸຂອງໂຄງການທີ່ຜ່ານບ້ານຕ່າງໆທີ່ມີໂຮງຮຽນ ຖ້າບໍ່ມີການລະມັດລະວັງອາດຈະກໍ່ໃຫ້ເກີດອຸບັດເຫດກັບເດັກນ້ອຍໄດ້. ດັ່ງນັ້ນ ທາງໂຄງການໂດຍສະເພາະຜູ້ຮັບເໝົາກໍ່ສ້າງ ຈະຕ້ອງໄດ້ປະຕິບັດບາງມາດຕະການຫຼຸດຜ່ອນ ທີ່ອາດຈະສົ່ງຜົນກະທົບຕາມມາ, ໂດຍສະເພາະຕໍ່ສຸຂະພາບ ແລະ ຄວາມປອດໄພ ຂອງລູກຫຼານທີ່ໄປເຂົ້າໂຮງຮຽນໃນແຕ່ລະວັນ.

ມາດຕະການຫຼຸດຜ່ອນ:

- ຜູ້ຮັບເໝົາການກໍ່ສ້າງຂອງໂຄງການ ຕ້ອງມີຄວາມລະມັດລະວັງ ໃນການຂົນສົ່ງວັດສະດຸກໍ່ສ້າງຕ່າງໆ ທີ່ຜ່ານແຕ່ລະບ້ານໃນເຂດຂອງໂຄງການ, ເນື່ອງຈາກແຕ່ລະບ້ານເຫຼົ່ານັ້ນ ມັກຈະມີໂຮງຮຽນຕັ້ງຢູ່ແຄມທາງ.
- ຕ້ອງໄດ້ລະມັດລະວັງ ຕໍ່ຄວາມປອດໄພທາງຖະໜົນ, ລົດຂົນສົ່ງຜ່ານໝູ່ບ້ານ ຕ້ອງກຳນົດເວລາບໍ່ໃຫ້ເກີນ 30 ກມ/ຊົ່ວໂມງ.
- ມີການກວດກາສະພາບອຸປະກອນກໍ່ສ້າງຢ່າງສະໝ່ຳສະເໝີ ເພື່ອຫຼຸດມົນລະພິດຈາກການເຜົາໄໝ້ນ້ຳມັນເຄື່ອງຈັກ ແລະ ສຽງດັງຈາກເຄື່ອງຈັກລົບກວນການຮຽນຂອງເດັກນ້ອຍ.

- ຕ້ອງມີການຫົດນ້ຳຕາມເສັ້ນທາງຂົນສົ່ງໂດຍສະເພາະເຂດຊຸມຊົນຢ່າງເປັນປະຈຳ ໂດຍສະເພາະໃນຊ່ວງແລ້ງເພື່ອຫຼຸດຜ່ອນປະລິມານການຟົ້ງກະຈາຍຂອງຝຸ່ນລະອອງ ຢ່າງໜ້ອຍ 2 ຄັ້ງຕໍ່ວັນ.

3) ໄລຍະການດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ:

ເມື່ອການກໍ່ສ້າງສຳເລັດ ໃນໄລຍະການດຳເນີນໂຄງການຈະບໍ່ມີກິດຈະກຳອັນໃດທີ່ຈະສົ່ງຜົນກະທົບດ້ານການສຶກສາຂອງເດັກນ້ອຍ, ແຕ່ເຖິງຢ່າງໃດ ທາງຜູ້ພັດທະນາໂຄງການກໍຕ້ອງຊ່ວຍເຫຼືອປັບປຸງ ແລະ ຍົກລະດັບດ້ານການສຶກສາໃຫ້ກັບຊຸມຊົນ.

5.5.2.5 ຄອບຄົວທຸກຍາກ ແລະ ກຸ່ມຄວາມສ່ຽງ

1) ຕະຫຼອດໄລຍະການດຳເນີນໂຄງການ

ຄວາມເປັນໄປໄດ້ຂອງຜົນກະທົບ:

ເຂດພື້ນທີ່ໂຄງການເປີເຊັນຄວາມທຸກຍາກແມ່ນເຫັນວ່າຍັງມີບ້ານທີ່ຍັງມີຈຳນວນຄອບຄົວທຸກຍາກ ຈາກການໃຫ້ຂໍ້ມູນຂອງອຳນາດການປົກຄອງບ້ານທັງ 5 ບ້ານ ແມ່ນເຫັນວ່າມີປະມານ 58 ຄອບຄົວ ທີ່ຍັງທຸກຍາກ. ເຊິ່ງຄອບຄົວທຸກຍາກດັ່ງກ່າວເກືອບທັງໝົດ ແມ່ນອາໄສການກະສິກຳເປັນຫຼັກ ເຊິ່ງຜົນຜະລິດຂອງເຂົາເຈົ້າ ແມ່ນບໍ່ກຸ້ມກິນຕະຫຼອດປີ, ສາເຫດມາຈາກກຳລັງແຮງງານໃນການຜະລິດໃນຄອບຄົວບໍ່ມີ, ແມ່ຍິງ, ຜູ້ເຖົ້າ, ຄົນປ່ຽວພອຍ ເປັນຫົວໜ້າຄອບຄົວ ແລະ ອີກບັນຫາໜຶ່ງເຊິ່ງເປັນບັນຫາທີ່ສຳຄັນກໍ່ຄື ການຊອກຫາວຽກເຮັດງານທຳແມ່ນມີໜ້ອຍ. ດັ່ງນັ້ນ, ການເຂົ້າມາພັດທະນາໂຄງການກໍ່ອາດຈະເປັນໂອກາດໃນການຊ່ວຍພັດທະນາຊຸມຊົນໄດ້.

ມາດຕະການຫຼຸດຜ່ອນ:

- ໃຫ້ບູລິມະສິດທຳອິດຂອງ ການວ່າຈ້າງພະນັກງານ ແກ່ ຄອບຄົວທຸກຍາກ ໃນ 5 ບ້ານອ້ອມຂ້າງໂຄງການ.
- ຈັດກິດຈະກຳການສົ່ງເສີມອາຊີບ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງປະຊາຊົນ ແລະ ສະພາບເງື່ອນໄຂທາງດ້ານສິ່ງແວດລ້ອມ.
- ປະກອບສ່ວນຊ່ວຍເຫຼືອເປັນພິເສດຕໍ່ຄອບຄົວທຸກຍາກ ໃນຕ່ລະບ້ານ.

5.5.2.6 ສະຖານະບົດບາດຍິງ-ຊາຍ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ໃນໄລຍະກ່ອນການກໍ່ສ້າງນີ້ ໂຄງການຈະບໍ່ກໍ່ໃຫ້ເກີດຜົນກະທົບຫຍັງ ຕໍ່ບົດບາດຍິງຊາຍຂອງທ້ອງຖິ່ນ, ເນື່ອງຈາກກິດຈະກຳໃນການສຳຫຼວດ, ເກັບຂໍ້ມູນ ຂອງໂຄງການບໍ່ໄດ້ ກ່ຽວຂ້ອງ ແລະ ບໍ່ມີຜົນກະທົບຕໍ່ບົດບາດຍິງຊາຍຂອງທ້ອງຖິ່ນ.

ມາດຕະການຫຼຸດຜ່ອນ:

ເຖິງແມ່ນວ່າໃນຊ່ວງນີ້ ຈະບໍ່ມີຜົນກະທົບຫຍັງ ຕໍ່ບົດບາດຍິງຊາຍຂອງທ້ອງຖິ່ນ, ແຕ່ກິດຈະກຳການສຳຫຼວດເກັບຂໍ້ມູນ ທີ່ມີຄວາມຈຳເປັນ ຕ້ອງໄດ້ໃຊ້ເວລາເດີນສຳຫຼວດ, ເກັບຂໍ້ມູນຫຼາຍຄັ້ງ. ດັ່ງນັ້ນ ທຸກໆການເຄື່ອນໄຫວດັ່ງກ່າວ ທາງທີມງານສຳຫຼວດ, ເກັບຂໍ້ມູນ ຕ້ອງຮັບປະກັນບໍ່ກໍ່ໃຫ້ເກີດຜົນກະຕໍ່ບົດບາດຂອງຍິງ-ຊາຍ.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ດັ່ງທີ່ກ່າວຂ້າງເທິງໃນຊ່ວງໄລຍະການກໍ່ສ້າງນີ້ ຄາດວ່າຈະມີຄົນຈາກນອກຈາກທ້ອງຖິ່ນອື່ນ ຫຼື ຄົນຕ່າງປະເທດ ເຂົ້າມາເຮັດວຽກການກໍ່ສ້າງ ຈຳນວນໃດໜຶ່ງ (ລວມທັງກຳມະກອນ ແລະ ພະນັກງານທຸກລະດັບ), ແຮງງານເຫຼົ່ານີ້ນຄາດວ່າສ່ວນຫຼາຍຈະເປັນເພດຊາຍ ແລະ ມີໂອກາດທີ່ແຮງງານເຫຼົ່ານີ້ນຈະໄປຜ່ານ ແລະ ເຂົ້າໄປບ້ານໃນເຂດລຽບຕາມແລວສາຍສົ່ງ. ດັ່ງນັ້ນ ຕ້ອງຄຳນຶງເຖິງບັນຫາທາງເພດ ເຊິ່ງຈະກໍ່ໃຫ້ເກີດຜົນກະທົບຕໍ່ບົດບາດຂອງແມ່ຍິງ ແລະ ເດັກນ້ອຍທ້ອງຖິ່ນໂດຍກົງ.

ມາດຕະການຫຼຸດຜ່ອນ:

- ທາງໂຄງການຮ່ວມກັບພາກລັດທີ່ກ່ຽວຂ້ອງ ຕ້ອງມີການສຶກສາອົບຮົມ ໃຫ້ພະນັກງານກຳມະກອນ ທີ່ເຂົ້າມາເຮັດວຽກໃຫ້ໂຄງການ ໄດ້ເຂົ້າໃຈເຖິງຮີດຄອງປະເພນີຂອງທ້ອງຖິ່ນ, ຖ້າຜູ້ໃດລ່ວງລະເມີດທາງເພດ ທີ່ມີຜົນກະທົບຕໍ່ບົດບາດຍິງ-ຊາຍ ຕ້ອງມີການປັບໄໝສູງ, ໂດຍອີງໃສ່ກົດໝາຍ ແລະ ການປັບໄໝຕາມປະເພນີທ້ອງຖິ່ນ ທີ່ເຂົາເຈົ້າເຄີຍປະຕິບັດກັນມາແຕ່ດັ້ງເດີມ.
- ຕ້ອງມີການຝຶກອົບຮົມ ໃຫ້ພະນັກງານ ແລະ ກຳມະກອນ ທີ່ເຂົ້າມາເຮັດວຽກກໍ່ສ້າງ ເຂົ້າໃຈເຖິງຜົນຮ້າຍຂອງໂລກຕິດຕໍ່ທາງເພດ.
- ທາງໂຄງການ ໂດຍສະເພາະຜູ້ຮັບເໝົາການກໍ່ສ້າງ ຕ້ອງບໍ່ນຳໃຊ້ແຮງງານ ທີ່ເປັນເດັກນ້ອຍເຂົ້າມາເຮັດວຽກກໍ່ສ້າງ ແລະ ວຽກຮັບໃຊ້ທີ່ພັກ, ຕະຫຼອດເຖິງວຽກ ການບໍລິການຕ່າງໆ ຕາມເຂດແຄ້ມການກໍ່ສ້າງຂອງໂຄງການ.
- ທາງໂຄງການ ແລະ ຜູ້ຮັບເໝົາການກໍ່ສ້າງຕ້ອງນຳນິດລະບຽບໃຫ້ແກ່ພະນັກງານ ແລະ ກຳມະກອນເພື່ອຫຼີກເວັ້ນທຸກກໍລະນີ ທີ່ກ່ຽວຂ້ອງກັບການຄ້າມະນຸດ.

3) ໄລຍະການດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ:

ພາຍຫຼັງກົດຈະກຳການກໍ່ສ້າງໂຄງການສຳເລັດທັງໝົດໃນໄລຍະການກໍ່ສ້າງ. ໃນໄລຍະການດຳເນີນງານນີ້ຄາດວ່າບັນດາແຮງງານກຳມະກອນທີ່ເປັນຊົນເຜົ່າມາຈາກທ້ອງຖິ່ນອື່ນ ແລະ ຄົນຕ່າງປະເທດ ທີ່ຈະເຂົ້າມາເຮັດວຽກກໍ່ສ້າງ ກໍ່ຈະກັບຄືນຖິ່ນຖານເດີມຂອງເຂົາເຈົ້າ. ດັ່ງນັ້ນ, ຈະບໍ່ມີຄວາມສ່ຽງຜົນກະທົບອັນໃດດ້ານບົດບາດຍິງ-ຊາຍ ແລະ ເດັກນ້ອຍ.

5.5.3 ການປະເມີນຜົນກະທົບດ້ານສຸຂະພາບ

5.5.3.1 ດ້ານສາທາລະນະສຸກເຂດພື້ນທີ່ໂຄງການ

1) ໄລຍະກ່ອນການກໍ່ສ້າງ/ກໍ່ສ້າງ/ດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ:

ສະພາບທາງດ້ານສາທາລະນະສຸກ ຂອງທັງ 5 ບ້ານ ແມ່ນມີລັກສະນະຄ້າຍຄືກັນ ອີງຕາມການເກັບກຳຂໍ້ມູນນຳອຳນາດການປົກຄອງບ້ານຂອງແຕ່ລະບ້ານ ແມ່ນເຫັນວ່າ ມີພຽງບ້ານດາກມອນ ທີ່ມີສຸກສາລາປະຈຳບ້ານ, ສ່ວນບ້ານ

ອື່ນແມ່ນບໍ່ມີສຸກສາລາ ເວລາເຈັບເປັນແມ່ນອາໄສ ໄປຮັກສາຢູ່ສຸກສາລາທີ່ຢູ່ໃກ້ ແລະ ໄປຮັກສາຢູ່ໂຮງໝໍເມືອງ ທີ່ອີງຕາມໄລຍະທາງຂອງແຕ່ລະບ້ານ.

ໂຄງການກໍ່ສ້າງສາຍສົ່ງນີ້ ຈະບໍ່ສົ່ງຜົນກະທົບຕໍ່ ສາທາລະນະສຸກທ້ອງຖິ່ນ, ເນື່ອງຈາກການກໍ່ສ້າງແລວສາຍສົ່ງ ຈະບໍ່ຖືກເຂດທີ່ຕັ້ງ ຂອງໂຮງໝໍ ຫຼື ສຸກສາລາທ້ອງຖິ່ນ. ເຖິງຢ່າງໃດກໍ່ຕາມ ການກໍ່ສ້າງຂອງໂຄງການ ແມ່ນມີຄວາມຈຳເປັນ ໂຮງໝໍ ຫຼື ສຸກສາລາທີ່ຢູ່ໃກ້ ຕາມເຂດທີ່ມີການກໍ່ສ້າງ ເພື່ອເຂົ້າປິ່ນປົວເວລາເຈັບເປັນ ຫຼື ມີເຫດສຸກເສີນ. ເນື່ອງຈາກການກໍ່ສ້າງ ແມ່ນມີຄວາມຈຳເປັນ ຕ້ອງໃຊ້ແຮງງານພໍສົມຄວນ ຈາກທ້ອງຖິ່ນ ແລະ ຈາກຕ່າງຖິ່ນ.

ມາດຕະການຫຼຸດຜ່ອນ:

ທາງໂຄງການຕ້ອງ ຮັບປະກັນຄວາມປອດໄພ ໃຫ້ແກ່ຄົນງານທຸກຄົນ ທີ່ເຂົ້າມາເຮັດວຽກໃຫ້ແກ່ໂຄງ ການກໍ່ສ້າງສາຍສົ່ງດັ່ງກ່າວ, ຕ້ອງໃຫ້ມີສະຫວັດດີການ ແລະ ການປະກັນໄພດ້ານສຸຂະພາບ, ຕ້ອງມີການປະສານສົມທົບກັບໂຮງໝໍ ຫຼື ສຸກສາລາແຕ່ລະທ້ອງຖິ່ນ ເພື່ອຮັບໃຊ້ການປິ່ນປົວໃຫ້ທັນເວລາ. ພ້ອມກັນນີ້ທາງໂຄງການກໍຕ້ອງ ຮັບປະກັນຄວາມປອດໄພ ຂອງປະຊາຊົນທ້ອງຖິ່ນ ທີ່ອາດຈະໄດ້ຮັບຜົນກະທົບ ຈາກກິດຈະກຳການກໍ່ສ້າງຂອງໂຄງການ. ທາງໂຄງການ ກໍຕ້ອງໄດ້ໃຫ້ການສະໜັບສະໜູນ ທາງດ້ານວັດຖຸປັດໄຈ ໃຫ້ແກ່ໂຮງໝໍ ຫຼື ສຸກສາລາ ທີ່ຢູ່ໃນເຂດພື້ນທີ່ ຂອງໂຄງການ ຕາມຄວາມສາມາດທີ່ເຫັນວ່າມີຄວາມເໝາະສົມ.

5.5.3.2 ສຸຂະພາບ ແລະ ຄວາມປອດໄພ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຢູ່ໃນໄລຍະກ່ອນການກໍ່ສ້າງໂຄງການນີ້ ຈະບໍ່ມີກິດຈະກຳຫຍັງ ທີ່ຈະກໍ່ໃຫ້ເກີດຜົນກະທົບຮ້າຍແຮງຕໍ່ ສຸຂະພາບ ແລະ ຄວາມປອດໄພ ຂອງສະພາບແວດລ້ອມ ແລະ ສັງຄົມອ້ອມຂ້າງຂອງໂຄງການ, ນອກຈາກກິດຈະກຳ ການສຳຫຼວດ, ເກັບຂໍ້ມູນ ຂອງນັກວິຊາການດ້ານເຕັກນິກ ແລະ ວິຊາການດ້ານສິ່ງແວດລ້ອມ ທີ່ເປັນວຽກບໍ່ໜັກ ແລະ ຍັງບໍ່ມີຄວາມສ່ຽງທີ່ຈະກໍ່ໃຫ້ເກີດຜົນກະທົບຕໍ່ສຸຂະພາບ ແລະ ຄວາມປອດໄພ.

ມາດຕະການຫຼຸດຜ່ອນ:

ເຖິງຢ່າງໃດກໍ່ຕາມ ທາງທີມງານດັ່ງກ່າວ ກໍ່ຕ້ອງມີຄວາມລະມັດລະວັງ ໃນການສຳຫຼວດພາກສະໜາມ, ຮັບປະກັນຄວາມປອດໄພ ແລະ ອັນຕະລາຍທີ່ອາດຈະເກີດຂຶ້ນ, ຕ້ອງມີການແຈ້ງ ແລະ ສະເໜີເອົາປະຊາຊົນທ້ອງຖິ່ນ ເຂົ້າມາຮ່ວມ ແລະ ເປັນຜູ້ນຳທາງ ໃນການເດີນສຳຫຼວດ ເນື່ອງຈາກຄົນທ້ອງຖິ່ນ ຈະຮູ້ສະພາບແວດລ້ອມໄດ້ດີກ່ວາ.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຜົນກະທົບດ້ານສຸຂະພາບ ແລະ ຄວາມປອດໄພ ໃນຊ່ວງການກໍ່ສ້າງຂອງໂຄງການນີ້ ແມ່ນມີຄວາມສຳຄັນ ແລະ ມີຄວາມສ່ຽງທີ່ຈະເກີດຂຶ້ນຫຼາຍ, ນອກຈາກຈະມີຜົນກະທົບ ອັນສືບເນື່ອງມາຈາກ ຂີ້ຝຸ່ນ, ສຽງດັງແລ້ວ ຄວາມສ່ຽງຕໍ່ສຸຂະພາບ - ຄວາມປອດໄພ ຈາກການເຮັດວຽກທີ່ສູງເປັນຕົ້ນແມ່ນການຂຶ້ນສາມເສົາໄຟ ແລະ ການເຮັກວຽກໜັກກໍ່ຕ້ອງໄດ້ເອົາໃຈໃສ່, ໂດຍສະເພາະຕໍ່ຄົນງານ ຜູ້ທີ່ເຮັດການກໍ່ສ້າງໂດຍກົງ ແມ່ນມີຄວາມສ່ຽງຫຼາຍ. ດັ່ງນັ້ນ ຜູ້

ພັດທະນາໂຄງການຮ່ວມກັບຜູ້ຮັບເໝົາການກໍ່ສ້າງ ຕ້ອງຫາມາດຕະການຫຼຸດຜ່ອນ ທີ່ເໝາະສົມເພື່ອເຮັດໃຫ້ຄວາມສ່ຽງນັ້ນຫຼຸດລົງ.

ມາດຕະການຫຼຸດຜ່ອນ:

- ຈັດກຽມອຸປະກອນປ້ອງກັນ ອັນຕະລາຍສ່ວນບຸກຄົນ ໃຫ້ແກ່ພະນັກງານ ແລະ ກຳມະກອນ ຕາມສະພາບແວດລ້ອມຂອງການເຮັດວຽກ, ໃສ່ຊຸດເຮັດວຽກໃຫ້ຮັດກຸມ ແລະ ຄ່ອງແຄ້ວ, ໃສ່ເກີບປ້ອງກັນໄຟ, ໃສ່ໜ້າກາກປ້ອງກັນຂີ້ຝຸ່ນ, ໃສ່ອຸປະກອນອັດ ຫຼື ປົກຫູເພື່ອປ້ອງກັນສຽງດັງ ແລະ, ໃສ່ໝວກກັນກະທົບ, ໃສ່ແວ່ນຕາປ້ອງກັນການຟົ້ງກະຈາຍ ຂອງເສດຂີ້ຫີນ ແລະ ດິນເປັນຕົ້ນ.
- ຫາກການດຳເນີນການກໍ່ສ້າງໂຄງການ ສົ່ງຜົນກະທົບຕໍ່ຄວາມປອດໄພທາງຊີວິດ ແລະ ຊັບສິນຂອງປະຊາຊົນທີ່ຢູ່ບໍລິເວນໃກ້ຄຽງກັບໂຄງການ, ທາງໂຄງການກໍ່ຕ້ອງທຳການຊົດເຊີຍ ຄ່າເສຍຫາຍຕາມຄວາມເໝາະສົມ ແລະ ຕາມລະບຽບການຂອງລັດ ເພື່ອເປັນທຳໃຫ້ແກ່ປະຊາຊົນ ທີ່ໄດ້ຮັບຄວາມເດືອດຮ້ອນ ແລະ ບໍ່ໃຫ້ມີຜົນກະທົບຕໍ່ດ້ານຈິດໃຈຂອງເຂົາເຈົ້າ.
- ຈັດໃຫ້ມີນ້ຳດື່ມ, ນ້ຳໃຊ້ ແລະ ຫ້ອງນ້ຳ ທີ່ຖືກຫຼັກອະນາໄມຢ່າງພຽງພໍ ຕາມສະຖານທີ່ເຮັດວຽກຕ່າງໆ ທີ່ເປັນອົງປະກອບບ່ອນກໍ່ສ້າງຂອງໂຄງການ. ບໍລິສັດຮັບເໝົາຂອງໂຄງການ ຕ້ອງໃຊ້ມາດຕະການເຄັ່ງຄັດບໍ່ໃຫ້ກຳມະກອນ ສ້າງອິດຖ່າຍຢູ່ໃກ້ແຄມແຫຼ່ງນ້ຳ ແລະ ບໍ່ໃຫ້ລົງໄປຖ່າຍໃສ່ແມ່ນ້ຳຢ່າງເດັດຂາດ.
- ຝຶກອົບຮົມການເຮັດວຽກ ແລະ ການນຳໃຊ້ເຄື່ອງມືອຸປະກອນ ຢ່າງສະໝ່ຳສະເໝີໃຫ້ແກ່ກຳມະກອນ ເພື່ອປ້ອງກັນອຸປະຕິເຫດໂດຍການຝຶກອົບຮົມ ກ່ອນການປະຕິບັດໜ້າວຽກທຸກຄັ້ງ, ໂດຍສະເພາະວຽກໜັກ ແລະ ມີຄວາມສ່ຽງຕໍ່ຄວາມປອດໄພ.
- ກະກຽມອຸປະກອນ ໃນການປະຖົມພະຍາບານຂັ້ນເບື້ອງຕົ້ນ, ພ້ອມທັງກຽມລົດ ສຳລັບນຳສົ່ງຄົນເຈັບສົ່ງໂຮງໝໍ ຫຼື ສຸກສາລາ ທີ່ຢູ່ໃກ້ທີ່ສຸດ ກໍລະນີກຳມະກອນເກີດອຸປະຕິເຫດ.
- ຈັດໃຫ້ມີຫົວໜ້າຄວບຄຸມງານ ແລະ ກວດສອບເຄື່ອງມືອຸປະກອນການເຮັດວຽກໃຫ້ມີຄວາມ ພ້ອມຢູ່ໃນສະພາບການເຮັດວຽກ ແລະ ຮັບປະກັນຄວາມປອດໄພສູງ.
- ປຸກຈິດສຳນຶກໃຫ້ແກ່ພະນັກງານ ແລະ ກຳມະກອນ, ໃສ່ໃຈເລື່ອງຂອງຄວາມປອດໄພໃນການເຮັດວຽກ ໂດຍການໃສ່ອຸປະກອນປ້ອງກັນ ອັນຕະລາຍສ່ວນບຸກຄົນ ທຸກຄັ້ງໃນຂະນະເຮັດວຽກ.
- ຈັດສະພາບແວດລ້ອມ ບ່ອນພັກຂອງກຳມະກອນ ໃຫ້ຖືກຫຼັກສຸຂະອະນາໄມ ເຊັ່ນ: ຈັດວາງບ່ອນຮອງຮັບຂີ້ເຫຍື້ອຕາມບໍລິເວນແຄ້ມທີ່ພັກ ໃຫ້ມີຄວາມເໝາະສົມ ແລະ ຖືກຫຼັກການດ້ານສິ່ງແວດລ້ອມ.
- ການບອກເຕືອນພະນັກງານຂັບລົດ ທີ່ໃຊ້ເສັ້ນທາງເຂົ້າ-ອອກໂຄງການ ແລະ ເພື່ອຄວາມລະມັດລະວັງເມື່ອຂັບລົດຜ່ານບັນດາໝູ່ບ້ານ ທີ່ຢູ່ແຄມເສັ້ນທາງ, ຮັບປະກັນສຸຂະພາບ ແລະ ຄວາມປອດໄພ ຂອງປະຊາຊົນທີ່ອາໄສຢູ່ໃກ້ເຂດໂຄງການ ທີ່ມີການນຳໃຊ້ເສັ້ນທາງຮ່ວມກັນ.
- ອົບຮົມພະນັກງານຂັບລົດຂົນສົ່ງເຄື່ອງກໍ່ສ້າງຕ່າງໆ ໃຫ້ປະຕິບັດຕາມກົດຈາລະຈອນຢ່າງເຄັ່ງຄັດ, ຖ້າມີອຸປະຕິເຫດເກີດຂຶ້ນຕ້ອງຮັບຜິດຊອບ.
- ສົ່ງເສີມໃຫ້ມີກິດຈະກຳ ຮັກສາຄວາມສະອາດ ແລະ ຄວາມປອດໄພໃນການເຮັດວຽກ ຢ່າງມີຫຼັກການ.
- ທາງໂຄງການ ຕ້ອງມີນະໂຍບາຍ ປະກັນສຸຂະພາບ ແລະ ຄວາມປອດໄພ ໃຫ້ພະນັກງານ ແລະ ກຳມະກອນ ຕາມລະບຽບການ ຂອງທາງກະຊວງແຮງງານ ແລະ ສະຫວັດດີການສັງຄົມວ່າງອອກ.

3) ໄລຍະດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ:

ພາຍຫຼັງການກໍ່ສ້າງສຳເລັດ ມາຮອດໄລຍະການດຳເນີນງານຂອງໂຄງການ ກໍ່ຄືໄລຍະສົ່ງໄຟທີ່ຜະລິດໄດ້ ເຊິ່ງມັນອາດມີຄວາມສ່ຽງເປັນໄປໄດ້ ທີ່ຈະເກີດມີໄຟຟ້າຮົ່ວຕາມແລວສາຍສົ່ງ ແລະ ອາດກໍ່ໃຫ້ເກີດອັນຕະລາຍແກ່ ປະຊາຊົນ.

ມາດຕະການຫຼຸດຜ່ອນ:

- ທາງໂຄງການຄວນຕ້ອງຕິດຕັ້ງລະບົບຕັດໄຟອັດຕະໂນມັດໃສ່ໃນລະບົບສາຍສົ່ງ ຖ້າຫາກມີໄຟຮົ່ວ/ໄຟຟ້າເກີນໃນລະບົບ, ກໍ່ໃຫ້ລະບົບຕັດໄຟໂດຍອັດຕະໂນມັດ. ແລະ ຄວນມີແຜນການບຳລຸງຮັກສາສາຍສົ່ງຢ່າງເປັນປະຈຳ.
- ມີການຕິດປ້າຍເຕືອນອັນຕະລາຍຕາມເຂດແລວສາຍສົ່ງ
- ອີກວິທີການໜຶ່ງທີ່ຊ່ວຍຫຼຸດຜ່ອນຄວາມສ່ຽງຈາກໄຟຟ້າຊ໊ອດ ແມ່ນການໂຄສະນາປະຊາສຳພັນເຖິງອັນຕະລາຍ ແກ່ປະຊາຊົນທ້ອງຖິ່ນ ເພື່ອໃຫ້ປະຊາຊົນ ບໍ່ຄວນເຂົ້າໃກ້ເສົາໄຟແຮງສູງ ແລະ ຕິດປ້າຍເຕືອນໃສ່ຕາມເສົາ ເພື່ອໃຫ້ປະຊາຊົນໄດ້ລະວັງອັນຕະລາຍ.
- ພາຍຫຼັງການກໍ່ສ້າງປັບປຸງເສັ້ນທາງສຳເລັດ ຕ້ອງມີການຕິດຕັ້ງປ້າຍເຕືອນຕ່າງໆ ໂດຍສະເພາະເຂດຊຸມຊົນຕິດຕາມແຄມທາງ
- ຕ້ອງມີປ້າຍກຳນົດຄວາມໄວຂອງການສັນຈອນ, ເຂດໝູ່ບ້ານ, ເຂດໂຮງຮຽນ, ປ້າຍເຕືອນເຂດສັດລ້ຽງ ແລະ ປ້າຍເຕືອນອື່ນໆ

5.5.4 ການປະເມີນທາງດ້ານເສດຖະກິດ

5.5.4.1 ການຈ້າງງານ ແລະ ລາຍໄດ້ຂອງຄົວເຮືອນ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ໃນໄລຍະກ່ອນການກໍ່ສ້າງ ການຈ້າງງານຂອງໂຄງການ ຍັງບໍ່ທັນມີຫຍັງພໍທີ່ຈະເປັນລາຍໄດ້ ໃຫ້ແກ່ປະຊາຊົນທ້ອງຖິ່ນ, ນອກຈາກວຽກສຳຫຼວດ, ເກັບຂໍ້ມູນໃນພາກສະໜາມ ທີ່ມີຄວາມຈຳເປັນຈະຕ້ອງໄດ້ເຊີນເອົາ ພະນັກງານທ້ອງຖິ່ນ ແລະ ຊາວບ້ານ ເຂົ້າຮ່ວມໃນການສຳຫຼວດ ແລະ ມີການຈ່າຍຄ່າແຮງງານ ໃນການເຂົ້າຮ່ວມວຽກງານເດີນສຳຫຼວດເສັ້ນທາງ ໃນແຕ່ລະຄັ້ງເທົ່ານັ້ນ.

ມາດຕະການຫຼຸດຜ່ອນ:

ທາງໂຄງການ ບໍ່ມີຄວາມຈຳເປັນ ຕ້ອງໃຊ້ມາດຕະການຫຼຸດຜ່ອນຫຍັງ, ເນື່ອງຈາກໃນຊ່ວງກ່ອນການກໍ່ສ້າງເສັ້ນທາງນີ້ ບໍ່ໄດ້ມີຫຍັງທີ່ຈະກໍ່ ໃຫ້ເກີດຜົນກະທົບດ້ານລົບຕໍ່ການຈ້າງງານ ຂອງປະຊາຊົນທ້ອງຖິ່ນ.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ໃນຊ່ວງການກໍ່ສ້າງນີ້ ໜ້າວຽກການກໍ່ສ້າງຕ່າງໆ ແມ່ນມີຄວາມຕ້ອງການ ແຮງງານ ແລະ ກຳມະກອນ ເປັນຈຳນວນຫຼາຍຕຳແໜ່ງ ເປັນຕົ້ນແມ່ນການຖາງແລວໄຟ, ແລວທາງ. ດັ່ງນັ້ນ ເພື່ອເປັນການສົ່ງເສີມແຮງງານທ້ອງຖິ່ນ ແລະ ເພື່ອເຮັດໃຫ້ ໂຄງການເສັ້ນທາງດັ່ງກ່າວ ໄປຄຽງຄູ່ກັບການພັດທະນາທ້ອງຖິ່ນ, ທາງໂຄງການ ຈະຕ້ອງໃຫ້ ບຸລິມະສິດ ຕໍ່ແຮງງານທ້ອງຖິ່ນ. ຖ້າຄົນທ້ອງຖິ່ນ ບໍ່ມີໂອກາດເຮັດວຽກນຳໂຄງການ, ຜົນກະທົບດ້ານລົບຕໍ່ຄວາມຮູ້ສຶກ ຂອງ ແຮງງານທ້ອງຖິ່ນກໍ່ຈະເກີດຂຶ້ນໄດ້.

ມາດຕະການຫຼຸດຜ່ອນ:

- ອີງຕາມລະບຽບ ວ່າດ້ວຍການຈ້າງງານຂອງໂຄງການພັດທະນາ ຕໍ່ປະຊາຊົນທ້ອງຖິ່ນ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ທາງໂຄງການໂດຍສະເພາະຜູ້ຮັບເໝົາກໍ່ສ້າງ ຮ່ວມກັບພາກລັດທີ່ກ່ຽວຂ້ອງ ຕ້ອງມີນະໂຍບາຍ ຮັບເອົາແຮງງານທ້ອງຖິ່ນ, ຜູ້ທີ່ມີຈຸດປະສົງຢາກເຂົ້າມາເຮັດວຽກກໍ່ສ້າງສາຍສົ່ງ ເພື່ອໃຫ້ ເຂົາເຈົ້າມີລາຍໄດ້ຄົວເຮືອນເພີ່ມຂຶ້ນ.
- ຖ້າຄົນງານທ້ອງຖິ່ນ ບໍ່ມີຄວາມສາມາດ ຫຼື ບໍ່ມີຄວາມສຳນານງານພໍ ທີ່ຈະເຮັດວຽກໃຫ້ໂຄງການ, ແຕ່ຖ້າ ເຂົາເຈົ້າຢາກເຮັດ ທາງໂຄງການ ກໍ່ຕ້ອງຮັບ ແລະ ຝຶກອາຊີບໃຫ້ເຂົາເຈົ້າ, ມີການໃຫ້ຄ່າຈ້າງ ແລະ ໃຫ້ ສະຫວັດດີການ ແກ່ຄົນງານທ້ອງຖິ່ນ ຢ່າງເໝາະສົມ.

3) ໄລຍະການດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ:

ກິດຈະກຳໃນໄລຍະການດຳເນີນງານຂອງໂຄງການ ກໍ່ຍັງຈະມີການອະນາໄມຖາງແລວໄຟປະຈຳ 6 ເດືອນ ຫຼື 1 ປີ ເຊິ່ງ ສາມາດນຳໃຊ້ແຮງງານຊາວບ້ານທ້ອງຖິ່ນ ເພື່ອໃຫ້ເຂົາເຈົ້າມີລາຍຮັບເຂົ້າຄົວເຮືອນໄດ້.

5.5.4.2 ທຸລະກິດທ້ອງຖິ່ນ

1) ຕະຫຼອດໄລຍະການດຳເນີນໂຄງການ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຈະມີຫຼາຍໆກິດຈະກຳທີ່ອາດຈະສົ່ງຜົນກະທົບຕໍ່ກັບທຸລະກິດທ້ອງຖິ່ນ ຂອງປະຊາຊົນ ເປັນຕົ້ນແມ່ນ ຜົນກະທົບ ຈາກບັນຫາຝຸ່ນລະອອງຈາກການບຸກເບີກ ແລະ ຂົນສົ່ງວັດສະດຸໃນການກໍ່ສ້າງ ແຕ່ກໍ່ອາດມີຜົນກະທົບດ້ານບວກເຊິ່ງ ອາດຈະເພີ່ມລາຍໄດ້ໃຫ້ແກ່ທຸລະກິດທ້ອງຖິ່ນຂອງປະຊາຊົນ ເພາະຈະມີແຮງງານຈາກຕ່າງຖິ່ນ ເຂົ້າມາເຮັດວຽກຈຶ່ງ ເຮັດໃຫ້ມີການຊື້ຂາຍເພີ່ມຂຶ້ນ ແລະ ຈະເຮັດໃຫ້ທຸລະກິດທ້ອງຖິ່ນຂອງປະຊາຊົນເຂດນີ້ມີການຂະຫຍາຍຕົວ.

ມາດຕະການຫຼຸດຜ່ອນ:

- ປະຕິບັດຕາມມາດຕະການຫຼຸດຜ່ອນຜົນກະທົບຂີ້ຝຸ່ນ, ຄວາມປອດໄພ ແລະ ດ້ານອື່ນໆ ຢ່າງເຂັ້ມງວດເພື່ອ ບໍ່ໃຫ້ເກີດຜົນກະທົບຕໍ່ທຸລະກິດການບໍລິການຊຸມຊົນຫຼາຍ.

- ຕ້ອງມີການຈຳກັດ ແລະ ຄວບຄຸມຄວາມໄວ, ນ້ຳໜັກ ຂອງລົດ ໂດຍສະເພາະຜ່ານເຂດສະຖານທີ່ໆມີ ຄວາມອ່ອນໄຫວ ເຊັ່ນ: ໂຮງໝໍ, ໂຮງຮຽນ ແລະ ວັດ ເປັນຕົ້ນ.

5.5.4.3 ກິດຈະກຳການຜະລິດ

1) ໄລຍະກ່ອນການກໍ່ສ້າງ/ກໍ່ສ້າງ/ດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ:

ສຳລັບກິດຈະກຳການຜະລິດຂອງປະຊາຊົນຂອງທັງ 5 ບ້ານ ໃນເຂດພື້ນທີ່ໂຄງການ ສ່ວນຫຼາຍປະຊາຊົນ ແມ່ນເຮັດ ການກະສິກຳ ປູກກາເຟ, ປູກມັນຕົ້ນ ແລະ ປູກເຂົ້າ ເປັນຫຼັກ ທີ່ມີເງື່ອນໄຂທາງດ້ານພື້ນທີ່, ທີ່ເໝາະສົມແກ່ການ ປູກຝັງຈຶ່ງເປັນພາກສ່ວນໜຶ່ງທີ່ສຳຄັນຕໍ່ການພັດທະນາທາງດ້ານເສດຖະກິດ - ສັງຄົມ ເພື່ອຕອບສະໜອງຄວາມ ຕ້ອງການ ແລະ ການທຳມາຫາກິນຂອງປະຊາຊົນ, ນອກຈາກການປູກຝັງແລ້ວ ລ້ຽງສັດກໍ່ເປັນອີກກິດຈະກຳໜຶ່ງທີ່ສຳ ຄັນຂອງປະຊາຊົນໃນເຂດທ້ອງຖິ່ນ ເຊິ່ງມີທັງສັດນ້ອຍ ແລະ ສັດໃຫຍ່ເຊັ່ນ: ງົວ, ຄວາຍ, ໝູ ແລະ ສັດປີກຕ່າງໆ. ດັ່ງທີ່ໄດ້ກ່າວຂ້າງເທິງ ອີງຕາມການກຳນົດແລວສາຍສົ່ງ ຂອງໂຄງການແມ່ນເຫັນວ່າ ຂອບເຂດແລວສາຍສົ່ງຂອງ ໂຄງການ ທີ່ສະເໜີມານີ້ແມ່ນຜ່ານເຂດປ່າໄມ້ທຳມະຊາດ ແລະ ຜ່ານເຂດດິນນຳໃຊ້ຂອງປະຊາຊົນເປັນສ່ວນຫຼາຍ ເຊິ່ງເນື້ອທີ່ດິນດັ່ງກ່າວ ໄດ້ມີການປູກພືດຕ່າງໆເຊັ່ນ ກາເຟ, ມັນຕົ້ນ ແລະ ອື່ນໆ.

ມາດຕະການຫຼຸດຜ່ອນ:

- ວາງແຜນການກໍ່ສ້າງຈຸດທີ່ຈະມີຜົນກະທົບຕໍ່ເນື້ອທີ່ກະສິກຳໄວ້ພາຍຫຼັງລະດູເກັບກ່ຽວຜົນຜະລິດແລ້ວເພື່ອ ບໍ່ໃຫ້ມີຜົນກະທົບຕໍ່ຜົນຜະລິດຂອງປະຊາຊົນ
- ປະຕິບັດຕາມດຳລັດ ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນຈາກ ໂຄງການພັດທະນາ ສະບັບເລກທີ 84/ລບ, 2016.
- ຂໍ້ຕົກລົງວ່າດ້ວຍການທົດແທນ ຜົນເສຍຫາຍຂອງປະຊາຊົນ ຈາກໂຄງການພັດທະນາຂອງແຂວງ ແລະ ເອກະສານທີ່ກ່ຽວຂ້ອງຕ່າງໆ.

5.5.5 ການປະເມີນຜົນກະທົບຕໍ່ສິ່ງອຳນວຍຄວາມສະດວກໂຄງລ່າງພື້ນຖານ

1) ໄລຍະກ່ອນການກໍ່ສ້າງ/ໄລຍະການກໍ່ສ້າງ/ດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ:

ພື້ນຖານໂຄງລ່າງແລະສິ່ງອຳນວຍຄວາມສະດວກຕ່າງໆ ແມ່ນມີຄວາມຈຳເປັນ ສຳລັບການພັດທະນາເສດຖະກິດ-ສັງຄົມໃນຕົວເມືອງ ແລະ ຊົນນະບົດ. ຜົນກະທົບຕົ້ນຕໍທີ່ຈະເກີດຂຶ້ນ ຕໍ່ກັບພື້ນຖານໂຄງລ່າງຂອງຊຸມຊົນ ໃນໄລຍະ ກະກຽມກໍ່ສ້າງ ແລະ ໄລຍະກໍ່ສ້າງແມ່ນ ການເພີ່ມຂຶ້ນຂອງຈຳນວນລົດຂົນສົ່ງວັດສະດຸຢູ່ຕາມເສັ້ນທາງເຊິ່ງ ຈະເປັນ ຜົນເຮັດໃຫ້ເສັ້ນທາງທີ່ລົດບັນທຸກວັດສະດຸແລ່ນຜ່ານໄດ້ຮັບການເສຍຫາຍ ຫຼື ເປ່ເພ ແລະ ເປ່ເປື້ອນ.

ມາດຕະການຫຼຸດຜ່ອນ:

- ຕ້ອງບັນທຸກບໍ່ໃຫ້ເກີນນ້ຳໜັກທີ່ກົມຂົວທາງໄດ້ກຳນົດໄວ້ສຳລັບລົດບັນທຸກແຕ່ລະປະເພດ.

- ກຳນົດຄວາມໄວ ບໍ່ໃຫ້ເກີນ 30 ກມ/ຊົ່ວໂມງ ເຂດຊຸມຊົນ.
- ປະສານງານກັບອົງການຈັດຕັ້ງທ້ອງຖິ່ນ ເພື່ອຊ່ວຍໃນການຕິດຕາມກວດການ້ຳໜັກ ແລະ ຄວາມໄວຂອງ ລົດ.
- ສ້ອມແປງເສັ້ນທາງ ຖ້າວ່າມັນເປ່ເພ ແລະ ມີການປະກອບສ່ວນໃສ່ກອງທຶນບູລະນະສ້ອມແປງເສັ້ນທາງ ຂອງທ້ອງຖິ່ນ.

5.5.6 ແຫຼ່ງນ້ຳ, ການນຳໃຊ້ ແລະ ການສະໜອງ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ໄລຍະກ່ອນການກໍ່ສ້າງໂຄງການນີ້ ເປັນໄລຍະການສຳຫຼວດ, ເກັບຂໍ້ມູນ, ຍັງບໍ່ມີກິດຈະກຳການກໍ່ສ້າງຫຍັງເທື່ອ. ດັ່ງນັ້ນການສຳຫຼວດ-ເກັບຂໍ້ມູນ ຂອງໂຄງການຈະບໍ່ມີຜົນກະທົບຕໍ່ ການນຳໃຊ້ນ້ຳຂອງປະຊາຊົນ ໃນເຂດໂຄງການ.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ກິດຈະກຳການກໍ່ສ້າງອົງປະກອບຕ່າງໆ ຂອງໂຄງການເປັນຕົ້ນແມ່ນການກໍ່ສ້າງເຂດຕີນເສົາໄຟ ແມ່ນມີຄວາມຈຳເປັນ ຕ້ອງໄດ້ນຳໃຊ້ລົດຈັກ, ຂຸດປັບລະດັບເພື່ອການກໍ່ສ້າງ ແລະ ການນຳໃຊ້ເຄື່ອງມືອຸປະກອນຕ່າງໆເຂົ້າໃນການກໍ່ສ້າງ ເຊິ່ງມີຄວາມເປັນໄປໄດ້ ທີ່ຈະກໍ່ໃຫ້ເກີດຜົນກະທົບ ຕໍ່ຄຸນນະພາບນ້ຳ ຂອງນ້ຳຫ້ວຍຕ່າງໆ ທີ່ຢູ່ພາຍໃນພື້ນທີ່ຂອງ ໂຄງການ (ຖ້າຫາກໂຄງການ ມີການກໍ່ສ້າງໃກ້ຫ້ວຍນ້ຳ). ດັ່ງນັ້ນ ທາງໂຄງການໂດຍສະເພາະຜູ້ຮັບເໝົາ ການກໍ່ສ້າງ ຕ້ອງເອົາໃຈໃສ່ ກ່ຽວກັບມາດຕະການຫຼຸດຜ່ອນ ແລະ ຫາວິທີປ້ອງກັນ, ເນື່ອງຈາກຄຸນນະພາບນ້ຳ ແມ່ນມີຄວາມສຳ ຄັນຫຼາຍ ສຳລັບປະໂຫຍດການນຳໃຊ້ຂອງທ້ອງຖິ່ນ, ມີຄວາມສຳຄັນຕໍ່ປາ ແລະ ສິ່ງອາໄສໃນນ້ຳ.

ບັນດານ້ຳເປື້ອນທີ່ຈະກໍ່ໃຫ້ເກີດ ຜົນກະທົບປະກອບດ້ວຍ: ການຕົກຕະກອນຈະພາໃຫ້ເກີດນ້ຳຂຸ່ນ ເນື່ອງຈາກການ ຂຸດດິນ, ດຸດດິນ ການຖົມດິນເພື່ອການກໍ່ສ້າງຕີນເສົາ. ຖ້າມີການກໍ່ສ້າງ ໃນລະດູຝົນກໍ່ອາດຈະເກີດມີຄາບນ້ຳມັນ ຈາກການນຳໃຊ້ເຄື່ອງມືອຸປະກອນການກໍ່ສ້າງຕ່າງໆ ໄຫຼລົງສູ່ແຫຼ່ງນ້ຳ, ຄາບຝຸ່ນຊີມັງຈາກເຂດກໍ່ສ້າງຕີນເສົາ. ນອກຈາກນີ້ບັນຫານ້ຳເປື້ອນຕ່າງໆ ສາມາດເກີດຂຶ້ນໄດ້ຈາກທີ່ຢູ່ອາໄສ ແລະ ຈາກການນຳໃຊ້ຕ່າງໆ ຂອງພະນັກງານ ແລະ ຄົນງານທີ່ເຂົ້າມາເຮັດວຽກ ໃຫ້ການກໍ່ສ້າງໂຄງການເປັນຈຳນວນຫຼາຍ ທີ່ສາມາດຄວບຄຸມໄດ້ຍາກ.

ມາດຕະການຫຼຸດຜ່ອນ:

- ວາງແຜນການກໍ່ສ້າງໄວ້ໃນຊ່ວງລະດູແລ້ງສຳລັບໜ້າວຽກທີ່ຈະກໍ່ໃຫ້ເກີດການເຊາະເຈື່ອນຂອງຕະກອນດິນ ລົງສູ່ແຫຼ່ງນ້ຳ.
- ຄວບຄຸມບໍ່ໃຫ້ມີການດຸດດິນຈາກການກໍ່ສ້າງຕີນເສົາໄຟລົງສູ່ແຫຼ່ງນ້ຳທຳມະຊາດ ຫຼື ພື້ນທີ່ໃກ້ຄຽງ, ເພື່ອບໍ່ ໃຫ້ຕະກອນດິນລົງສູ່ແຫຼ່ງນ້ຳ.
- ຫຼີກລ່ຽງບໍ່ໃຫ້ມີການກໍ່ສ້າງບໍລິເວນແຄມຫ້ວຍນ້ຳພ້ອມກັນເພື່ອຫຼຸດປະລິມານຕະກອນດິນລົງສູ່ແຫຼ່ງນ້ຳ ຕາມເຂດໂຄງການ.
- ກອງດິນ, ຊາຍ, ວັດສະດຸກໍ່ສ້າງຕ້ອງຫ່າງຈາກເຂດທີ່ມີແຫຼ່ງນ້ຳ ເພື່ອບໍ່ໃຫ້ມີການຊະລ້າງລົງສູ່ຫ້ວຍ.

- ທາງໂຄງການຕ້ອງມີສັນຍາການປັບໄໝກັບຜູ້ຮັບເໝົາການກໍ່ສ້າງ, ເພື່ອເປັນຂໍ້ຜູກມັດບໍ່ໃຫ້ຜູ້ຮັບເໝົາກໍ່ສ້າງ ລ້າງລິດກົນຈັກທຸກປະເພດ ແລະ ອຸປະກອນການກໍ່ສ້າງຕ່າງໆລົງໃສ່ແມ່ນ້ຳ ແລະ ສາຂານ້ຳຫ້ວຍຕ່າງໆ ໃນ ຂອບເຂດພື້ນທີ່ຂອງໂຄງການ.
- ການນຳໃຊ້ນ້ຳເພື່ອການກໍ່ສ້າງ: ຖ້າໂຄງການມີຄວາມຈຳເປັນ ທີ່ຈະດູດເອົານ້ຳຫ້ວຍ ໃນເຂດຂອງໂຄງການ ເພື່ອມາຮັບໃຊ້ເຂົ້າໃນການກໍ່ສ້າງ ກໍ່ຕ້ອງໄດ້ແຈ້ງໃຫ້ປະຊາຊົນທ້ອງຖິ່ນ ແລະ ປະສານງານກັບພາກລັດຂັ້ນ ເມືອງ ເພື່ອລົງໄປກວດເບິ່ງຈຸດທີ່ຈະດູດເອົານ້ຳ ວ່າມັນມີຄວາມເໝາະສົມແລ້ວບໍ່.
- ຄວບຄຸມຢ່າງເຂັ້ມງວດບໍ່ໃຫ້ມີການລະບາຍນ້ຳເປື້ອນ ແລະ ຂີ້ເຫຍື້ອ ຈາກບ່ອນພັກກຳມະກອນລົງສູ່ ແຫຼ່ງນ້ຳ.
- ເພື່ອຫຼຸດຜ່ອນຜົນກະທົບຕໍ່ການນຳໃຊ້ນ້ຳຂອງທັງ 5 ບ້ານ, ທາງໂຄງການຕ້ອງໄດ້ພິຈາລະນາຊ່ວຍປັບປຸງ ລະບົບນ້ຳໃຊ້ໃຫ້ກັບທັງ 5 ບ້ານ ກ່ອນດຳເນີນການກໍ່ສ້າງ.

3) ໄລຍະດຳເນີນໂຄງການ

ຄວາມເປັນໄປໄດ້ຂອງຜົນກະທົບ:

ມາຮອດໄລຍະດຳເນີນງານໂຄງການແລ້ວ ຈະບໍ່ມີຜົນກະທົບຕໍ່ການນຳໃຊ້ນ້ຳ ທີ່ຈະເຮັດໃຫ້ນ້ຳເປື້ອນລົງສູ່ແຫຼ່ງນ້ຳ ຖ້າ ຫາກໂຄງການ ໄດ້ມີການກໍ່ສ້າງ ແລະ ຕິດຕັ້ງອີງປະກອບຕ່າງໆຂອງໂຄງການ ໃຫ້ມີຄວາມໝັ້ນຄົງ ແລະ ໄດ້ ມາດຕະຖານທີ່ດີ, ດັ່ງນັ້ນ ຜົນກະທົບໂດຍກົງ ຕໍ່ຄຸນນະພາບນ້ຳສຳລັບການນຳໃຊ້ແມ່ນບໍ່ມີ.

5.5.7 ແຫຼ່ງພະລັງງານ, ການນຳໃຊ້ ແລະ ການສະໜອງ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ໃນໄລຍະກ່ອນການກໍ່ສ້າງໂຄງການ ທີ່ມີການສຶກສາ-ສຳຫຼວດ ແລະ ເກັບຂໍ້ມູນຂອງໂຄງການ ແມ່ນບໍ່ມີຫຍັງກະທົບ ຕໍ່ກັບການນຳໃຊ້ພະລັງງານໄຟຟ້າ ໃນຂອບເຂດຂອງໂຄງການ, ດັ່ງນັ້ນ ທາງໂຄງການບໍ່ມີຄວາມຈຳເປັນຫຍັງ ຕ້ອງມີ ມາດຕະການຫຼຸດຜ່ອນ ໃນຊ່ວງກ່ອນການກໍ່ສ້າງນີ້.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ໄລຍະການກໍ່ສ້າງໂຄງການນີ້ ກໍ່ບໍ່ຕ່າງຫຍັງກັບຊ່ວງກ່ອນການກໍ່ສ້າງ ກໍ່ຄືໂຄງການບໍ່ສົ່ງຜົນກະທົບຫຍັງຕໍ່ກັບການນຳ ໃຊ້ພະລັງງານໄຟຟ້າ ໃນເຂດທ້ອງຖິ່ນ. ເນື່ອງຈາກກິດຈະກຳການກໍ່ສ້າງຕ່າງໆແມ່ນບໍ່ມີຄວາມຈຳເປັນໃນການນຳໃຊ້ ພະລັງງານຈຳນວນຫຼາຍ ໃນການກໍ່ສ້າງທີ່ອາດຈະສົ່ງຜົນກະທົບຕໍ່ການນຳໃຊ້ຂອງປະຊາຊົນທ້ອງຖິ່ນ.

ມາດຕະການຫຼຸດຜ່ອນ:

ທາງໂຄງການບໍ່ຈຳເປັນ ຕ້ອງມີມາດຕະການຫຼຸດຜ່ອນຫຍັງ ຢູ່ໃນຊ່ວງນີ້.

3) ໄລຍະດຳເນີນໂຄງການ

ຄວາມເປັນໄປໄດ້ຂອງຜົນກະທົບ:

ໃນໄລຍະດຳເນີນໂຄງການນີ້ ແມ່ນຈະສົ່ງຜົນດີ ຕໍ່ການນຳໃຊ້ ແລະ ການສະໜອງພະລັງງານໃນເຂດທ້ອງຖິ່ນເພີ່ມຂຶ້ນ, ເນື່ອງຈາກໂຄງການຈະມີການນຳສົ່ງກະແສໄຟຟ້າທີ່ຜະລິດໄດ້ຈາກພະລັງງານລົມ 600 MW ທີ່ສາມາດເພື່ອເຊື່ອມຕໍ່ກະແສໄຟຟ້າທີ່ຜະລິດໄດ້ຈາກໂຄງການພະລັງງານລົມເຂົ້າສູ່ລະບົບຕາຂ່າຍໄຟຟ້າແຫ່ງຊາດ ແລະ ສົ່ງອອກຂາຍຕາມອີງໃສ່ສັນຍາຮັບຊື້ໄຟຈາກ ສສ ຫວຽດນາມ

5.5.8 ການຈັດການຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ

1) ໄລຍະກ່ອນການກໍ່ສ້າງໂຄງການ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຜ່ານການເກັບຂໍ້ມູນ ກໍ່ຄືຢູ່ຕາມຕົວເມືອງຕ່າງໆ ທົ່ວປະເທດຂອງລາວເຮົາ, ຄືຍັງບໍ່ທັນມີການກຳຈັດ ຂີ້ເຫຍື້ອຢ່າງຖືກວິທີ, ຍັງຂາດແຄນລົດເກັບຂີ້ເຫຍື້ອ, ບໍ່ມີບ່ອນຝັງຂີ້ເຫຍື້ອທີ່ໄດ້ມາດຕະຖານ ແລະ ບໍ່ມີການຝັງຢ່າງຖືກຕ້ອງເໝາະສົມ. ການກຳຈັດຂີ້ເຫຍື້ອ ແຕ່ລະຄົວເຮືອນຍັງໃຊ້ວິທີການຈູດ ແບບບໍ່ມີການຄັດແຍກ, ຄືມີການຈູດໂຮມກັນ ລະຫວ່າງສິ່ງເສດເຫຼືອອັນຕະລາຍ (ຖົງຢາງພາລະສະຕິກ) ແລະ ສິ່ງເສດເຫຼືອທົ່ວໄປ.

ມາດຕະການຫຼຸດຜ່ອນ:

ຢູ່ໃນໄລຍະກ່ອນ ການກໍ່ສ້າງໂຄງການນີ້ ທາງໂຄງການບໍ່ມີ ຄວາມຈຳເປັນຫຍັງ ຕ້ອງດຳເນີນມາດຕະການຫຼຸດຜ່ອນ, ເນື່ອງຈາກກິດຈະກຳການສຳຫຼວດອອກແບບທຳມະດາ ຈະບໍ່ກໍ່ໃຫ້ເກີດຂີ້ເຫຍື້ອ ແລະ ສິ່ງເສດເຫຼືອເປັນຈຳນວນຫຼາຍ. ແຕ່ການອອກແບບໂຄງການ ໄດ້ຄຳນຶງເຖິງການກຳຈັດທີ່ຖືກວິທີ ເພື່ອຮອງຮັບຊ່ວງຂອງການກໍ່ສ້າງ ແລະ ຊ່ວງດຳເນີນການຜະລິດ ທີ່ຄາດວ່າຈະມີຂີ້ເຫຍື້ອເກີດຂຶ້ນ.

2) ໄລຍະການກໍ່ສ້າງໂຄງການ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຢູ່ໃນໄລຍະການກໍ່ສ້າງໂຄງການນີ້ ຄາດວ່າຈະມີຂີ້ເຫຍື້ອ ແລະ ສິ່ງເສດເຫຼືອຫຼາຍພໍສົມຄວນ ເຊັ່ນວ່າ: ສິ່ງເສດເຫຼືອຈາກກິດຈະກຳການກໍ່ສ້າງທົ່ວໄປ (ຖົງປູນ, ເສດຫີນ-ຊາຍທີ່ເຫຼືອຈາກການກໍ່ສ້າງຕີນເສົາໄຟ...), ສິ່ງເສດເຫຼືອທີ່ເປັນອັນຕະລາຍ ຈາກວັດສະດຸທີ່ປົນຈຸນ້ຳມັນຂອງເຄື່ອງມືກໍ່ສ້າງ, ແລະ ສິ່ງເສດເຫຼືອຕ່າງໆ ຈາກການນຳໃຊ້ຊີວິດປະຈຳວັນ ຂອງພະນັກງານ ແລະ ກຳມະກອນທີ່ເຂົ້າມາເຮັດວຽກກໍ່ສ້າງສາຍສົ່ງ, ນອກຈາກນີ້ກໍ່ຍັງມີເສດຕົ້ນໄມ້ ແລະ ພືດທີ່ຈະຖາງອອກຈາກຂອບເຂດແລວສາຍສົ່ງ. ດັ່ງນັ້ນ ຈຶ່ງມີຄວາມຈຳເປັນຈະຕ້ອງມີການກຳຈັດ ແລະ ມີບ່ອນຖິ້ມຂີ້ເຫຍື້ອ ແລະ ສິ່ງເສດເຫຼືອເຫຼົ່ານັ້ນຢ່າງຖືກວິທີ.

ມາດຕະການຫຼຸດຜ່ອນ:

ເພື່ອຫຼຸດຜ່ອນຜົນກະທົບ ຕໍ່ຂີ້ເຫຍື້ອ ແລະ ສິ່ງເສດເຫຼືອຕ່າງໆ ທີ່ຄາດວ່າຈະເກີດຂຶ້ນ ໃນຊ່ວງຂອງການກໍ່ສ້າງຂອງໂຄງການນີ້, ທາງເຈົ້າຂອງໂຄງການ ໂດຍສະເພາະບໍລິສັດຮັບເໝົາການກໍ່ສ້າງ ຕ້ອງເອົາໃຈໃສ່ຕໍ່ ບາງມາດຕະການຫຼຸດຜ່ອນທີ່ມີຄວາມຈຳເປັນດັ່ງລຸ່ມນີ້:

- ເຈົ້າຂອງໂຄງການ ຫຼື ບໍລິສັດຮັບເໝົາການກໍ່ສ້າງ ຕ້ອງມີການປະສານສົມທົບກັບ ອພບ ຂອງເມືອງ ເພື່ອກຳນົດເຂດ ທີ່ຈະນຳເອົາຂີ້ເຫຍື້ອ ແລະ ສິ່ງເສດເຫຼືອຕ່າງໆ ໄປຖິ້ມ, ຖ້າສະໜາມຂີ້ເຫຍື້ອຂອງເມືອງ ທີ່ມີຢູ່ປະຈຸບັນບໍ່ໄດ້ມາດຕະຖານ ກໍ່ຕ້ອງຮ່ວມກັນປັບປຸງ ໃຫ້ເປັນສະໜາມຝັງຖິ້ມຂີ້ເຫຍື້ອທີ່ໄດ້ມາດຕະຖານ ແລະ ສາມາດບຳບັດຂີ້ເຫຍື້ອຕ່າງໆໄດ້ແທ້.
- ຂີ້ເຫຍື້ອຕ້ອງມີການແຍກ ແລະ ນຳໄປຖິ້ມໃນພື້ນທີ່ຕ່າງກັນ, ຂີ້ເຫຍື້ອປະເພດອັນຕະລາຍ ຕ້ອງມີວິທີຝັງຖິ້ມຢ່າງຖືກວິທີ, ຂຸມຝັງຂີ້ເຫຍື້ອປະເພດນີ້ກໍ່ຕ້ອງຫ່າງໄກຈາກແມ່ນ້ຳ ແລະ ນ້ຳຫ້ວຍທີ່ເປັນສາຂາ ເພື່ອຫຼີກລຽງຜົນກະທົບທີ່ຈະໄຫຼລົງສູ່ແມ່ນ້ຳ.
- ການຈູດຂີ້ເຫຍື່ອ ກໍ່ບໍ່ໃຫ້ມີການຈູດຊະຊາຍ ທີ່ຈະກໍ່ໃຫ້ເກີດ ແລະ ປ່ອຍ CO_2, CO ແລະ SO_2 ເກີນມາດຕະຖານສິ່ງແວດລ້ອມ, ແຕ່ຖ້າມີຄວາມຈຳເປັນຈູດ ກໍ່ຕ້ອງມີການຄັດແຍກ ໂດຍສະເພາະຂີ້ເຫຍື້ອທີ່ປົນເປື້ອນສານເຄມີ ເຊັ່ນວ່າ: ສາຍໄຟ ຫຼື ພະລາສະຕິກຕ່າງໆ ແມ່ນບໍ່ຄວນນຳໄປຈູດຢ່າງເດັດຂາດ.
- ຜູ້ພັດທະນາໂຄງການ ຮ່ວມກັບທີ່ປຶກສາດ້ານສິ່ງແວດລ້ອມ ແລະ ພາກລັດທີ່ກ່ຽວຂ້ອງ ຕ້ອງມີການຝຶກອົບຮົມ ໃຫ້ພະນັກງານ ແລະ ກຳມະກອນເຂົ້າໃຈ ເຖິງຜົນຮ້າຍຂອງຂີ້ເຫຍື້ອ, ແລະ ໃຫ້ເຂົ້າໃຈເຖິງວິທີການກຳຈັດ, ຖ້າຜູ້ໃດຝ່າຝືນ ກໍ່ຕ້ອງມີການປັບໄໝ ຫຼື ໃຫ້ອອກຈາກວຽກ.

3) ໄລຍະການດຳເນີນງານ

ຄວາມເປັນໄປໄດ້ຂອງຜົນກະທົບ:

ພາຍຫຼັງກິດຈະກຳການກໍ່ສ້າງແລວສາຍສົ່ງສຳເລັດ ແລະ ມີການສົ່ງໄຟຟ້າແລ້ວ ຈະບໍ່ມີກິດຈະກຳໃດທີ່ຈະກໍ່ໃຫ້ເກີດຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ. ດັ່ງນັ້ນ, ທາງໂຄງການບໍ່ຈຳເປັນຕ້ອງໄດ້ດຳເນີນມາດຕະການຫຼຸດຜ່ອນຫຍັງເປັນພິເສດ.

5.5.9 ລະເບີດບໍ່ທັນແຕກ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຜ່ານການລົງເກັບຂໍ້ມູນພາກສະໜາມ ສຳລັບໂຄງການແລວສາຍສົ່ງ 500 KV ຂອງໂຄງການພະລັງງານລົມ 600MW ເມືອງດາກຈຶງ ທີ່ສະເໜີນີ້ ກໍ່ໄດ້ມີການສຳພາດ ແລະ ສອບຖາມ ອຳນາດການປົກຄອງ ແລະ ປະຊາຊົນທ້ອງຖິ່ນກ່ຽວກັບລະເບີດທີ່ຍັງຕົກຄ້າງ ເຫັນວ່າຜ່ານມາເຂດດັ່ງກ່າວແມ່ນເຄີຍພົບເຫັນຕາມເຂດພື້ນທີ່ກະສິກຳ ແລະ ປ່າໄມ້ ເຊິ່ງກໍ່ມີອົງການເກັບກູ້ລະເບີດທ້ອງຖິ່ນ ເຂົ້າມາສຳຫຼວດຢູ່ເປັນປະຈຳ.

ລະເບີດທີ່ຍັງບໍ່ທັນແຕກ ແລະ ຍັງຕົກຄ້າງຢູ່ຕາມແຫ່ງຕ່າງໆ ອາດຈະລວມຢູ່ຕາມເຂດໂຄງການ, ບັນຫານີ້ແມ່ນມີຄວາມສຳຄັນຫຼາຍ ຕໍ່ໂຄງການພັດທະນາດັ່ງກ່າວ ແລະ ເພື່ອຄວາມປອດໄພໃນການກໍ່ສ້າງ ແລະ ກ່ອນຈະລົງມືກໍ່ສ້າງ ທາງໂຄງການກໍ່ຕ້ອງມີການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ຂອງຫ້ອງການເກັບກູ້ລະເບີດທ້ອງຖິ່ນ ເພື່ອດຳເນີນການສຳຫຼວດຄືນ ແລະ ຖ້າພົບເຫັນຕ້ອງເກັບກູ້ອອກເພື່ອຄວາມປອດໄພ, ໂດຍສະເພາະເຂດທີ່ຈະມີການກໍ່ສ້າງຕ່າງໆ.

ມາດຕະການຫຼຸດຜ່ອນ:

- ກ່ອນຈະລົງມືສຳຫຼວດດ້ານຕ່າງໆ ໂຄງການກໍ່ຕ້ອງມີການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ຂອງ ຫ້ອງການເກັບກູ້ລະເບີດທ້ອງຖິ່ນ ເພື່ອດຳເນີນການສຳຫຼວດ ແລະ ເກັບກູ້ອອກເພື່ອຄວາມປອດໄພ.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ໄລຍະການກໍ່ສ້າງໂຄງການນີ້ ຈະມີກິດຈະກຳການອະນາໄມຕັດໄມ້ ຫຼື ພືດ ທີ່ມີຄວາມສູງ ອອກຈາກແລວ, ເຊິ່ງອາດ ຈະມີການຈູດການເຜົາ, ລວມທັງວຽກງານການກໍ່ສ້າງຕີນເສົາ ທີ່ເປັນອົງປະກອບຂອງໂຄງການ, ຖ້າບໍ່ມີການສຳຫຼວດ ຄືນ ແລະ ເກັບກູ້ລະເບີດທີ່ຄາດວ່າຈະຕົກຄ້າງອອກ ກໍ່ອາດຈະກໍ່ໃຫ້ເກີດຜົນກະທົບຂຶ້ນໄດ້ໃນຊ່ວງນີ້.

ມາດຕະການຫຼຸດຜ່ອນ:

ເຖິງຢ່າງໃດກໍຕາມ, ເພື່ອຄວາມປອດໄພຂອງການກໍ່ສ້າງໂຄງການ ດັ່ງທີ່ກ່າວໄວ້ຂ້າງເທິງ ກ່ອນທີ່ຈະເລີ່ມຕົ້ນກໍ່ສ້າງ, ທາງໂຄງການຄວນເຊີນເອົາ ພາກສ່ວນທີ່ກ່ຽວຂ້ອງທາງພາກລັດລົງສຳຫຼວດພື້ນທີ່ອີກເທື່ອໜຶ່ງ, ໂດຍສະເພາະເຂດ ແລວສາຍສົ່ງ ແລະ ເຂດທີ່ຈະມີການກໍ່ສ້າງຕີນເສົາ. ເມື່ອເວລາມີການກໍ່ສ້າງ ຫາກພົບເຫັນເສດລະເບີດທີ່ຕົກຄ້າງ, ທາງໂຄງການກໍ່ຕ້ອງແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ລົງໄປກວດກາ ແລະ ເກັບກູ້ອອກທັນທີ.

3) ໄລຍະດຳເນີນໂຄງການ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຖ້າມີການສຳຫຼວດ ແລະ ເກັບກູ້ ໃນຊ່ວງກ່ອນການກໍ່ສ້າງ ແລະ ຊ່ວງການກໍ່ສ້າງທີ່ຜ່ານມາແລ້ວ, ຕໍ່ມາໃນຊ່ວງດຳ ເນີນໂຄງການ ກໍ່ຈະບໍ່ມີຜົນກະທົບດ້ານນີ້ເກີດຂຶ້ນ.

5.5.10 ສະຖານທີ່ທາງປະຫວັດສາດ ແລະ ວັດທະນະທຳ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ຢູ່ບັນດາໝູ່ບ້ານໃນເຂດໂຄງການ ສ່ວນຫຼາຍແມ່ນມີຊົນເຜົ່າຕຣຽງ, ເຜົ່າແຢະ, ເຜົ່າກະຕູ ແລະ ຊົນເຜົ່າລາວ ເຊິ່ງສ່ວນ ຫຼາຍແມ່ນນັບຖືຜີ ແລະ ຮອງລົງມາແມ່ນນັບຖືສາສະໜາພຸດ ມາແຕ່ດັ້ງເດີມ. ເຖິງຢ່າງໃດກໍ່ຕາມໃນໝູ່ບ້ານດັ່ງກ່າວ ບໍ່ໄດ້ມີວັດຖຸບູຮານທີ່ເກົ່າແກ່ຫຍັງ, ມີພຽງແຕ່ປ່າຊ້າ ປະຈຳໝູ່ບ້ານເທົ່ານັ້ນ. ຢູ່ໃນໄລຍະກ່ອນການກໍ່ສ້າງໂຄງການນີ້ ຈະບໍ່ກໍ່ໃຫ້ເກີດຜົນກະທົບຫຍັງ ດ້ານສະຖານທີ່ສຳຄັນທາງດ້ານວັດທະນະທຳ ແລະ ດ້ານປະຫວັດສາດ, ເນື່ອງຈາກ ກິດຈະກຳ ການສຳຫຼວດ, ອອກແບບ, ເກັບຂໍ້ມູນ ຂອງໂຄງການບໍ່ໄດ້ກ່ຽວຂ້ອງ ແລະ ບໍ່ມີຜົນກະທົບຕໍ່ສະຖານທີ່ ດັ່ງກ່າວ.

ແຕ່ເຖິງຢ່າງໃດກໍ່ຕາມ ອີງຕາມຂໍ້ມູນການສຳຫຼວດພາກສະໜາມ ໃນຊ່ວງເດືອນກັນຍາ 2020 ທີ່ຜ່ານມາ ເຫັນວ່າ ໃນການອອກແບບກຳນົດແລວສາຍສົ່ງຂອງໂຄງການ ເຫັນວ່າໃນຊ່ວງເສົາສາຍສົ່ງທີ່ 12 ຫາ 13 ແມ່ນມີຂອບເຂດ ສະຫງວນກອງແລວໄປຜ່ານເຂດປ່າຊ້າຂອງບ້ານດາກບອງ.

ມາດຕະການຫຼຸດຜ່ອນ:

- ເຖິງແມ່ນວ່າກິດຈະກຳ ການສຳຫຼວດອອກແບບ ຂອງໂຄງການບໍ່ໄດ້ ກ່ຽວຂ້ອງ ແລະ ບໍ່ມີຜົນກະທົບຮ້າຍແຮງຕໍ່ ຊົນເຜົ່າຂອງທ້ອງຖິ່ນກໍ່ຕາມ, ແຕ່ການເດີນສຳຫຼວດ ແລະ ການເກັບຂໍ້ມູນ ຂອງທີມງານການສຳຫຼວດ ແລະ ອອກແບບຂອງໂຄງການ ກໍ່ຕ້ອງນັບຖືຮີດຄອງປະເພນີ ຂອງຊົນເຜົ່າທ້ອງຖິ່ນ, ບໍ່ຄວນເຮັດໃນສິ່ງທີ່ ຈະຜິດຮີດຄອງປະເພນີຂອງເຂົາເຈົ້າ
- ການອອກແບບແລວສາຍສົ່ງໃນຊ່ວງເສົາສາຍສົ່ງທີ່ 12 ຫາ 13 ທີ່ກ່າວຂ້າງເທິງ ຖ້າສາມາດຫຼີກລ່ຽງໄດ້ແມ່ນ ໃຫ້ມີການຍ້າຍອອກຈາກເຂດປ່າຊ້າ
- ກໍລະນີທີ່ບໍ່ສາມາດຍ້າຍໄດ້ແມ່ນ ໃຫ້ທາງໂຄງການຮ່ວມກັບຄະນະກຳມະການເຮັດວຽກຢ່າງໃກ້ຊິດກັບ ບັນດາອຳນາດການປົກຄອງ, ເຖົ້າແກ່ແມວໂຮມ ແລະ ເຈົ້າກົກເຈົ້າເຫຼົ່າບ້ານທີ່ຖືກກະທົບດັ່ງກ່າວເພື່ອຫາ ທາງອອກຮ່ວມກັນ ເຊິ່ງອາດຈະຕ້ອງມີການຄອບ ຫຼື ປ່ຽນແປງຊິດເຊີຍຕາມຮີດຄອງ ແລະ ການນັບຖືຂອງ ທ້ອງຖິ່ນ.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ໃນຊ່ວງການກໍ່ສ້າງໂຄງການນີ້ ແມ່ນຈະມີກິດຈະກຳ ການກໍ່ສ້າງຫຼາຍຢ່າງ ຢູ່ຕາມເຂດກໍ່ສ້າງແລວສາຍສົ່ງທີ່ເປັນອົງ ປະກອບຂອງໂຄງການ, ເຊິ່ງກິດຈະກຳການກໍ່ສ້າງອາດຈະກໍ່ໃຫ້ມີສຽງດັງ ຈາກການແລ່ນລົດຂົນສົ່ງ ແລະ ເກີດມີ ຂີ້ຝຸ່ນ, ສິ່ງເສດເຫຼືອ ແລະ ການລົບກວນອື່ນໆ. ດັ່ງນັ້ນ, ເຖິງແມ່ນວ່າໂຄງການຈະບໍ່ມີຜົນກະທົບໂດຍກົງຕໍ່ ວັດຖຸບູຮານ ຂອງປະຊາຊົນທ້ອງຖິ່ນ, ແຕ່ສິ່ງລົບກວນຕ່າງໆດັ່ງທີ່ກ່າວຂ້າງເທິງ ກໍ່ອາດຈະສ້າງຜົນກະທົບໂດຍທາງ ອ້ອມຕໍ່ຂະນົບທຳນຽມຮີດຄອງປະເພນີ ແລະ ຄວາມເຊື່ອຖືຂອງທ້ອງຖິ່ນ.

ມາດຕະການຫຼຸດຜ່ອນ:

- ໂຄງການຕ້ອງຢຸດເຮັດວຽກໜັກ ໃນມື້ວັນສິນຂຶ້ນ 15 ຄ່ຳ ແລະ ແຮມ 15 ຄ່ຳ ແລະ ວັນສຳຄັນ ຂອງສາສະ ໜາອື່ນທີ່ປະຊາຊົນທ້ອງຖິ່ນນັບຖື. ໂຄງການຕ້ອງມີການປຶກສາຫາລື ກັບປະຊາຊົນທ້ອງຖິ່ນ, ມີການຄອບ-ການລາຕາມຄວາມເຊື່ອກ່ອນທີ່ຈະມີການກໍ່ສ້າງ.
- ນອກຈາກນີ້, ອີງຕາມການເກັບຂໍ້ມູນພາກສະໜາມເຫັນວ່າຂອບເຂດແລວສາຍສົ່ງ ຢູ່ຈຸດບ້ານດາກບອງ ແມ່ນຜ່ານເຂດປ່າຊ້າຂອງບ້ານ ດັ່ງນັ້ນ, ໃນກິດຈະກຳການກໍ່ສ້າງຕ້ອງໄດ້ມີຄວາມລະມັດລະວັງເປັນພິເສດ ຫຼື ຖ້າທາງບ້ານຢາກສະເໜີໃຫ້ມີການປັບປ່ຽນຈຸດດັ່ງກ່າວ ກໍຄວນພິຈາລະນາໃໝ່ ເພື່ອບໍ່ໃຫ້ສິ່ງຜົນກະທົບ ຕໍ່ຈິດໃຈ, ຮີດຄອງປະເພນີ ແລະ ຄວາມເຊື່ອຖືຂອງທ້ອງຖິ່ນ.
- ເຈົ້າຂອງໂຄງການ ຕ້ອງສ້າງສາຍພົວພັນທີ່ດີກັບ ທ້ອງຖິ່ນ ແລະ ມີການສົ່ງເສີມ ແລະ ມີສ່ວນຮ່ວມ ໃນກິດ ຈະກຳຕ່າງຂອງຊຸມຊົນ ລວມທັງງານບຸນຮີດຄອງເພນີ ແລະ ພິທີການທາງວັດທະນະທຳ.

3) ໄລຍະດຳເນີນໂຄງການ

ຄວາມເປັນໄປໄດ້ຂອງຜົນກະທົບ:

ມາຮອດໄລຍະດຳເນີນງານໂຄງການ (ໄລຍະສົ່ງໄຟ) ໂຄງການຈະບໍ່ມີກິດຈະກຳກໍ່ສ້າງອັນໃດເພີ່ມເຕີມທີ່ອາດຈະກໍ່ໃຫ້ເກີດການລົບກວນ ຫຼື ກໍ່ໃຫ້ເກີດຜົນກະທົບດ້ານສະຖານທີ່ສຳຄັນ ທາງດ້ານວັດທະນະທຳ ແລະ ຄວາມເຊື່ອຖືຂອງທ້ອງຖິ່ນ.

5.5.11 ທັດສະນີຍາພາບ

1) ໄລຍະກ່ອນການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ:

ກິດຈະກຳກ່ອນການກໍ່ສ້າງໂຄງການ ແມ່ນການສຳຫຼວດ ແລະ ອອກແບບໂຄງການ, ອີງຕາມກິດຈະກຳເຫຼົ່ານີ້ໃນຊ່ວງນີ້ ແມ່ນບໍ່ມີຫຍັງທີ່ຈະກໍ່ໃຫ້ເກີດຜົນກະທົບຕໍ່ ທັດສະນີຍະພາບ-ພູມສັນຖານ ແລະ ການທ່ອງທ່ຽວໃນເຂດໂຄງການ , ເນື່ອງຈາກຍັງບໍ່ທັນມີການ ບຸກເບີກ ຫຼື ກໍ່ສ້າງຫຍັງເທື່ອ. ເຖິງຢ່າງໃດກໍ່ຕາມ ອີງຕາມຂໍ້ມູນພາກສະໜາມ ສັງເກດເຫັນໄດ້ວ່າ ພື້ນທີ່ສ່ວນໃຫຍ່ຢູ່ເຂດອ້ອມຂ້າງເຂດໂຄງການດັ່ງກ່າວນີ້ ແມ່ນເປັນພື້ນທີ່ປ່າໄມ້, ພື້ນທີ່ປູກກາເຟ ແລະ ພືດກະສິກຳຂອງປະຊາຊົນຢູ່ກ່ອນແລ້ວ. ດັ່ງນັ້ນ ທັດສະນີຍະພາບ ພູມສັນຖານໃນເຂດອ້ອມຂ້າງ ພື້ນທີ່ຂອງໂຄງການ ແມ່ນໄດ້ຮັບຜົນກະທົບມາກ່ອນແລ້ວ.

ມາດຕະການຫຼຸດຜ່ອນ:

ໂຄງການບໍ່ມີຄວາມຈຳເປັນຫຍັງ ຕ້ອງດຳເນີນມາດຕະການຫຼຸດຜ່ອນ ເນື່ອງຈາກໄລຍະກ່ອນການກໍ່ສ້າງ ແມ່ນບໍ່ມີກິດຈະກຳຫຍັງທີ່ຈະກໍ່ໃຫ້ເກີດຜົນກະທົບຕໍ່ທັດສະນີຍະພາບ-ພູມສັນຖານ. ແຕ່ເຖິງຢ່າງໃດກໍ່ຕາມ ການອອກແບບຂອງໂຄງການ ກໍ່ໄດ້ຄຳນຶງເຖິງຜົນກະທົບດ້ານພູມສັນຖານເປັນສຳຄັນ.

2) ໄລຍະການກໍ່ສ້າງ

ຄວາມເປັນໄປໄດ້ຂອງຜົນກະທົບ

ກິດຈະກຳຂອງໂຄງການໃນໄລຍະການກໍ່ສ້າງນີ້ ແມ່ນມີຄວາມຈຳເປັນຕ້ອງໄດ້ຂຸດ ແລະ ດຸດດິນ ອອກຈາກພື້ນທີ່ໆຈະມີການກໍ່ສ້າງຕີນເສົາໄຟຟ້າ ແລະ ກິດຈະກຳການດຶງສາຍໄຟຕາມແລວແລວສາຍສົ່ງໄຟຟ້າ 500 kV ຂອງໂຄງການທີ່ມີຄວາມຍາວປະມານ 68 ກິໂລແມັດ ເຊິ່ງໃນການສຶກສານີ້ແມ່ນຈະກວມເອົາສະເພາະຊ່ວງທີ່ຢູ່ຝັ່ງຊາຍແດນຂອງ ສປປ ລາວ ເຊິ່ງມີຄວາມຍາວທັງໝົດປະມານ 21 ກິໂລແມັດ, ແມ່ນມີຄວາມຈຳເປັນຕ້ອງໄດ້ຕັດຕົ້ນໄມ້ອອກເປັນບາງຊ່ວງ ຕາມແລວສາຍສົ່ງ. ນອກນີ້ການວາງ ຫຼື ກອງວັດສະດຸອຸປະກອນສຳລັບການກໍ່ສ້າງບໍ່ເປັນລະບຽບ ແລະ ອື່ນໆ ຈາກກິດຈະກຳການກໍ່ສ້າງດັ່ງກ່າວ ຈະເຮັດໃຫ້ພູມສັນຖານທັດສະນີຍະພາບທ້ອງຖິ່ນ ໃນປັດຈຸບັນປ່ຽນໄປຈາກເດີມ ດ້ວຍການປ່ຽນແທນສິ່ງແວດລ້ອມໃໝ່ ຂອງການກໍ່ສ້າງສາຍສົ່ງໄຟຟ້າ.

ມາດຕະການຫຼຸດຜ່ອນ:

- ການຖາກຖາງ ຫຼື ຕັດຕົ້ນໄມ້ອອກ ຕາມແລວສາຍສົ່ງ ຕ້ອງຕັດແຕ່ສະເພາະໃນຂອບເຂດແລວສາຍສົ່ງ 70 ແມັດ ແລະ ພື້ນທີ່ໆ ມີຄວາມຈຳເປັນໃນການກໍ່ສ້າງເທົ່ານັ້ນ, ບໍ່ຄວນຕັດອອກນອກແລວ ຫຼື ເຂດກໍ່ສ້າງ ເພື່ອ

ຫຼຸດຜ່ອນ ບໍ່ໃຫ້ພຸມສັນຖານທັດສະນີຍະພາບ ທີ່ເປັນທຳມະຊາດສີຂຽວ ທີ່ມີມາກ່ອນແລ້ວປ່ຽນໄປຈາກເດີມ ຫຼາຍ.

	ງອນດອນ	GD04		GD04-2	2.ຊີ້ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	9,951		ດິນສວນ	ດິນສວນ	ສວນກາເຟ	9,951	ມ2
	ງອນດອນ	GD04		GD04-3	2.ຊີ້ວຄາວ	4. ແລວສາຍສົ່ງ 500	500 KV	2.ຜົນຜະລິດ				ກາເຟ	ກາເຟກາຕີມໍ	500	ຕົ້ນ
5	ງອນດອນ	GD05	ທ ຮວງສອນ + ນ ສອນສະຫວັນ	GD05-1	2.ຊີ້ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	8,774	2,000	ສວນເຮືອ	ສວນເຮືອ	ສວນກາເຟ (ເຮືອ)	8,774	ມ2
6	ງອນດອນ	GD06	ທ ເພັງຈັນ + ນ ໄຊມາລາ	GD06-1	2.ຊີ້ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	15,625	10,000	ສວນເຮືອ	ສວນເຮືອ	ສວນກາເຟ (ເຮືອ)	15,625	ມ2
	ງອນດອນ	GD06		GD06-2	2.ຊີ້ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	1,820		ດິນໄຮ່	ດິນໄຮ່	ດິນໄຮ່	1,820	ມ2
	ງອນດອນ	GD06		GD06-3	2.ຊີ້ວຄາວ	4. ແລວສາຍສົ່ງ 500	500 KV	2.ຜົນຜະລິດ				ກາເຟ	ກາເຟກາຕີມໍ	1,600	ຕົ້ນ
7	ງອນດອນ	GD07	ທ ສັນຄຳ + ນ ແກ້ວສາຄອນ	GD07-1	2.ຊີ້ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	1,538	10,000	ສວນເຮືອ	ສວນເຮືອ	ສວນເຮືອ	1,538	ມ2
	ງອນດອນ	GD07		GD07-2	2.ຊີ້ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	2,521		ສວນເຮືອ	ສວນເຮືອ	ສວນເຮືອ	2,521	ມ2
8	ງອນດອນ	GD08	ທ ບຸນສອນ + ນ ຖາວອນ	GD08-1	2.ຊີ້ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	6,508	3,000	ສວນເຮືອ	ສວນເຮືອ	ສວນເຮືອ	6,508	ມ2
9	ງອນດອນ	GD09	ທ ເສືອ ສິງຄາວເພັດ + ນ ໂອ່ຍ	GD09-1	2.ຊີ້ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	1,698	22,000	ສວນເຮືອ	ສວນເຮືອ	ສວນເຮືອ	1,698	ມ2
10	ງອນດອນ	GD10	ນ ແຫວນ	GD10-1	2.ຊີ້ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	3,817	10,000	ສວນເຮືອ	ສວນເຮືອ	ສວນເຮືອ	3,817	ມ2
11	ງອນດອນ	GD11	ທ ອົມໄຊ	GD11-1	2.ຊີ້ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	3,116	10,000	ສວນເຮືອ	ສວນເຮືອ	ສວນເຮືອ	3,116	ມ2

ລ/ດ	ບ້ານ	ລະຫັດ	ຊື່	ລາຍການສູນເສຍ	ຮູບແບບຜົນກະທົບ	ໄດ້ຮັບຜົນກະທົບຈາກ	ຈຸດທີ່ໄດ້ຮັບຜົນກະທົບ	ປະເພດຜົນກະທົບ	ເນື້ອທີ່ດິນທີ່ຖືກກະທົບ	ເນື້ອທີ່ດິນທັງໝົດ (ມ2)	ປະເພດດິນ Land Type	ຊັບສິ່ງ	ປະເພດຊັບສິ່ງ	ຈຳນວນຜົນກະທົບ	ຫົວໜ່ວຍ
12	ງອນດອນ	GD12	ທ ເພງຄຳ + ບ ໄລວັນ	GD12-1	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	6,237	10,000	ດິນສວນ	ດິນສວນ	ສວນກາເຟ	6,237	ມ2
	ງອນດອນ	GD12		GD12-2	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	2.ພືນຜະລິດ				ກາເຟ	ກາເຟກາຕີມ້	2,000	ຕົ້ນ
13	ງອນດອນ	GD13	ທ ເຮືອງຄຳ + ບ ສີດາມອນ	GD13-1	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	5,730	10,000	ດິນສວນ	ດິນສວນ	ສວນກາເຟ	5,730	ມ2
	ງອນດອນ	GD13		GD13-2	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	2.ພືນຜະລິດ				ກາເຟ	ກາເຟກາຕີມ້	1,500	ຕົ້ນ
14	ງອນດອນ	GD14	ທ ຊອມ + ບ ພອນນີ	GD14-1	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	11,315	15,000	ສວນເຣື້ອ	ສວນເຣື້ອ	ສວນເຣື້ອ	11,315	ມ2
	ງອນດອນ	GD14		GD14-2	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	9,887	12,000	ດິນໄຮ່	ດິນໄຮ່	ດິນໄຮ່	9,887	ມ2
15	ງອນດອນ	GD15	ທ ສີງອັນ (ທິດສະຫວັນ) + ບ ວຽງ	GD15-1	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	512	6,000	ສວນເຣື້ອ	ສວນເຣື້ອ	ສວນເຣື້ອ	512	ມ2
16	ງອນດອນ	GD16	ທ ສອນ + ບ ຍົມມາລາ	GD16-1	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	4,855	7,000	ປ່າໄມ້ປະສົມ	ປ່າໄມ້ປະສົມ	ປ່າໄມ້ປະສົມ	4,855	ມ2
17	ງອນດອນ	GD17	ທ ບໍ່ລິພູນ + ບ ວຽງມະນີ	GD17-1	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	793	8,000	ສວນເຣື້ອ	ສວນເຣື້ອ	ສວນເຣື້ອ	793	ມ2
18	ງອນດອນ	GD18	ທ ແປ້ສະວິງ + ບ ວັດມະນີ	GD18-1	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	7,760	12,000	ດິນສວນ	ດິນສວນ	ສວນກາເຟ	7,760	ມ2
	ງອນດອນ	GD18		GD18-2	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	2.ພືນຜະລິດ				ກາເຟ	ກາເຟກາຕີມ້	2,100	ຕົ້ນ
19	ງອນດອນ	GD19	ທ ສັນຄຳ + ບ ແກ້ວສາຄອນ	GD19-1	1.ຖາວອນ	3. ເສົາສາຍສົ່ງ 500	500 KV T21	1.ດິນ	144	15,000	ສວນເຣື້ອ	ສວນເຣື້ອ	ສວນເຣື້ອ	144	ມ2
	ງອນດອນ	GD19		GD19-2	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	12,308		ສວນເຣື້ອ	ສວນເຣື້ອ	ສວນເຣື້ອ	12,308	ມ2
20	ງອນດອນ	GD20	ທ ອຸດທິດາ + ບ ບາດມະນີ	GD20-1	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	4,040	3,500	ດິນໄຮ່	ດິນໄຮ່	ດິນໄຮ່	4,040	ມ2
	ງອນດອນ	GD20		GD20-3	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	7,767	7,000	ສວນເຣື້ອ	ສວນເຣື້ອ	ສວນເຣື້ອ	7,767	ມ2
	ງອນດອນ	GD20		GD20-4	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	3.ສິ່ງປຸກສ້າງ				ຖຽງນາ	ຖຽງນາ	24	ມ2
21	ງອນດອນ	GD21	ທ ກົວັນ + ບ ພູສີງຄຳ	GD21-1	1.ຖາວອນ	3. ເສົາສາຍສົ່ງ 500	500 KV T23	1.ດິນ	225	15,000	ສວນເຣື້ອ	ສວນເຣື້ອ	ສວນເຣື້ອ	225	ມ2
	ງອນດອນ	GD21		GD21-2	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	18,730		ສວນເຣື້ອ	ສວນເຣື້ອ	ສວນເຣື້ອ	18,730	ມ2
22	ງອນດອນ	GD22	ທ ແສງຈັນໄຊ + ບ ອອມ	GD22-1	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	2,399	10,000	ສວນເຣື້ອ	ສວນເຣື້ອ	ສວນເຣື້ອ	2,399	ມ2
23	ງອນດອນ	GD23	ທ ບຸນມີໄຊ + ບ ດາສຸກ	GD23-1	1.ຖາວອນ	3. ເສົາສາຍສົ່ງ 500	500 KV T22	1.ດິນ	144	10,000	ສວນເຣື້ອ	ສວນເຣື້ອ	ສວນເຣື້ອ	144	ມ2
	ງອນດອນ	GD23		GD23-2	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	21,209		ສວນເຣື້ອ	ສວນເຣື້ອ	ສວນເຣື້ອ	21,209	ມ2
	ງອນດອນ	GD23		GD23-3	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	2,487		ສວນເຣື້ອ	ສວນເຣື້ອ	ສວນເຣື້ອ	2,487	ມ2
24	ງອນດອນ	GD24	ທ ພັດທະນາ + ບ ສົມຄິດ	GD24-1	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	4,538	3,000	ດິນສວນ	ດິນສວນ	ສວນມັນຕົ້ນ	4,538	ມ2
	ງອນດອນ	GD24		GD24-2	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	3,259	5,000	ສວນເຣື້ອ	ສວນເຣື້ອ	ສວນກາເຟ (ເຣື້ອ)	3,259	ມ2
	ງອນດອນ	GD24		GD24-3	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	2.ພືນຜະລິດ				ກາເຟ	ກາເຟກາຕີມ້	500	ຕົ້ນ
25	ງອນດອນ	GD25	ທ ກົງໃຈ (ດິນ ປາສ ເມືອງດາກຈຶ	GD25-1	1.ຖາວອນ	3. ເສົາສາຍສົ່ງ 500	500 KV T17	1.ດິນ	144	60,000	ດິນປຸກສ້າງ	ດິນປຸກສ້າງ	ດິນປຸກສ້າງ	144	ມ2
	ງອນດອນ	GD25		GD25-2	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	20,148		ດິນປຸກສ້າງ	ດິນປຸກສ້າງ	ດິນປຸກສ້າງ	20,148	ມ2
26	ງອນດອນ	GD26	ທ ວິໄລສັກ + ບ ວິງແກ້ວ	GD26-1	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	5,730	20,000	ສວນເຣື້ອ	ສວນເຣື້ອ	ສວນເຣື້ອ	5,730	ມ2
27	ງອນດອນ	GD27	ທ ວິງເພັດ + ບ ມອນໄລວົງ	GD27-1	1.ຖາວອນ	3. ເສົາສາຍສົ່ງ 500	500 KV T19	1.ດິນ	144	10,000	ສວນເຣື້ອ	ສວນເຣື້ອ	ສວນເຣື້ອ	144	ມ2
	ງອນດອນ	GD27		GD27-2	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	8,498		ສວນເຣື້ອ	ດິນສວນ	ສວນເຣື້ອ	8,498	ມ2
	ງອນດອນ	GD27		GD27-3	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	2,925		ສວນເຣື້ອ	ສວນເຣື້ອ	ສວນເຣື້ອ	2,925	ມ2
28	ງອນດອນ	GD28	ພໍກົມສະຫວັນ	GD28-1	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	2,464	10,000	ສວນເຣື້ອ	ດິນສວນ	ສວນກາເຟ (ເຣື້ອ)	2,464	ມ2
	ງອນດອນ	GD28		GD28-3	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	2.ພືນຜະລິດ				ກາເຟ	ກາເຟກາຕີມ້	400	ຕົ້ນ
29	ງອນດອນ	GD29	ທ ພົມຈັນ + ບ ວຽງນາຄຳ	GD29-1	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	2,565		ດິນສວນ	ດິນສວນ	ສວນກາເຟ	2,565	ມ2
	ງອນດອນ	GD29		GD29-2	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	2.ພືນຜະລິດ				ກາເຟ	ກາເຟກາຕີມ້	300	ຕົ້ນ
30	ງອນດອນ	GD30	ທ ສອນໄວ + ບ ເຮືອງຄຳ	GD30-1	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	8,190	10,000	ສວນເຣື້ອ	ສວນເຣື້ອ	ສວນເຣື້ອ	8,190	ມ2
31	ງອນດອນ		ບໍລິສັດ ທິນໄທເຊີນ		2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	3,626		ດິນສວນ	ດິນສວນ	ດິນສວນປູກຫຍ້າ	3,626	ມ2
1	ດາກຕະເອອກນ້ອຍ	DTON01	ທ ວິລາຄຳ + ບ ເທົ່ນສະຫວັນ	DTON01-1	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	8,307	40,000	ສວນເຣື້ອ	ສວນເຣື້ອ	ສວນກາເຟ (ເຣື້ອ)	8,307	ມ2
	ດາກຕະເອອກນ້ອຍ	DTON01		DTON01-2	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	2.ພືນຜະລິດ				ກາເຟ	ກາເຟກາຕີມ້	2,000	ຕົ້ນ
2	ດາກຕະເອອກນ້ອຍ	DTON02	ທ ທຸ + ບ ຢຽມມະນີ	DTON02-1	1.ຖາວອນ	3. ເສົາສາຍສົ່ງ 500	500 KV T32	1.ດິນ	225	10,000	ສວນເຣື້ອ	ສວນເຣື້ອ	ສວນກາເຟ (ເຣື້ອ)	225	ມ2
	ດາກຕະເອອກນ້ອຍ	DTON02		DTON02-2	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	1.ດິນ	7,173		ສວນເຣື້ອ	ສວນເຣື້ອ	ສວນກາເຟ (ເຣື້ອ)	7,173	ມ2
	ດາກຕະເອອກນ້ອຍ	DTON02		DTON02-3	2.ຊົ່ວຄາວ	4. ແລວສາຍສົ່ງ 500	500 KV	2.ພືນຜະລິດ				ກາເຟ	ກາເຟກາຕີມ້	1,500	ຕົ້ນ

ພາກທີ 6 ແຜນການຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມ

6.1 ເນື້ອໃນແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ

ເພື່ອໃຫ້ສອດຄ່ອງກັບ ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 21/ລບ 2019. ດັ່ງນັ້ນ ການຄຸ້ມຄອງສິ່ງແວດລ້ອມ ກໍ່ເປັນພາກໜຶ່ງທີ່ສຳຄັນຂອງຂະບວນການປະເມີນຜົນກະທົບດັ່ງກ່າວ, ແຜນການຄຸ້ມຄອງ, ຕິດຕາມກວດກາສິ່ງແວດລ້ອມ (ຜຄຕສ) ສຳລັບໂຄງການທີ່ສະເໜີນີ້ແມ່ນຈະໄດ້ເນັ້ນໃສ່ຜົນກະທົບທີ່ສຳຄັນ ທີ່ເຊື່ອຄາດວ່າຈະເກີດຂຶ້ນກັບໂຄງການ, ໂດຍສະເພາະຊ່ວງການບຸກເບີກ ແລະ ຊ່ວງດຳເນີນງານຂອງໂຄງການ. ຜົນ ກະທົບທີ່ສຳຄັນເຫຼົ່ານັ້ນຈະປະກອບດ້ວຍສິ່ງແວດລ້ອມດ້ານກາຍຍະພາບ, ຊີວະພາບ, ຄຸນຄ່າການນຳໃຊ້ປະໂຫຍດ ຂອງປະຊາຊົນ ແລະ ດ້ານເສດຖະກິດສັງຄົມ - ວັດທະນາທຳ ທີ່ຢູ່ພາຍໃນ ແລະ ອ້ອມຂ້າງພື້ນທີ່ຂອງໂຄງການ.

ຈຸດປະສົງຂອງແຜນການຄຸ້ມຄອງ ຕິດຕາມກວດກາສິ່ງແວດລ້ອມ ແມ່ນຈະນຳໃຊ້ເປັນບົດແນະນຳສຳລັບການອ້າງ ແຜນວຽກໃນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ສຳລັບໂຄງການ ໂດຍມີ ມາດຕະການ ແລະ ຈຸດປະສົງຕົ້ນຕໍດັ່ງນີ້:

- ສະໜອງເຕັກນິກວິຊາການ ແຜນວຽກສຳລັບການຈັດຕັ້ງປະຕິບັດການປ້ອງກັນ ແລະ ມາດຕະການ ຫຼຸດຜ່ອນ ກ່ຽວກັບຜົນກະທົບທາງກົງ ແລະ ທາງອ້ອມ, ໃນໄລຍະການກໍ່ສ້າງ ແລະ ໄລຍະດຳເນີນໂຄງການ.
- ເພື່ອຕິດຕາມກວດກາ ແຜນວຽກສຳລັບການຈັດຕັ້ງປະຕິບັດການປ້ອງກັນ ແລະ ມາດຕະການຫຼຸດຜ່ອນ ກ່ຽວກັບຜົນກະທົບທາງກົງ ແລະ ທາງອ້ອມຕະຫຼອດການດຳເນີນງານຂອງໂຄງການ.

ແຜນການຄຸ້ມຄອງ ຕິດຕາມກວດກາສິ່ງແວດລ້ອມ ຍັງຕ້ອງນຳໃຊ້ເພື່ອປະເມີນການຈັດຕັ້ງໂດຍລວມຂອງໂຄງການ ໃນການຈັດຕັ້ງປະຕິບັດ ແຜນວຽກການປ້ອງກັນ ແລະ ມາດຕະການຫຼຸດຜ່ອນ ກ່ຽວກັບຜົນກະທົບທາງກົງ ແລະ ທາງອ້ອມ ລວມທັງການຕິດຕາມກວດກາທີ່ມີຄວາມເຊື່ອຖືໄດ້ມີຫຼັກຖານ ແລະ ວິທີການທາງດ້ານວິທະຍາສາດ, ມາດຕະຖານສິ່ງແວດລ້ອມແຫ່ງຊາດ ທີ່ກ່ຽວຂ້ອງກັບການຕິດຕາມກວດກາສິ່ງແວດລ້ອມ. ນອກຈາກນັ້ນ, ແຜນ ຄຸ້ມຄອງຕິດຕາມກວດກາ ຍັງໄດ້ມີການສະເໜີລາຍລະອຽດ ຂອງບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງໃນການຈັດຕັ້ງ ປະຕິບັດແຜນການຫຼຸດຜ່ອນຜົນກະທົບຢ່າງມີປະສິດທິພາບ, ງົບປະມານໃນການຕິດຕາມສິ່ງແວດລ້ອມ, ລາຍການ ເຄື່ອງໃຊ້ທີ່ຈຳເປັນສຳລັບພັດທະນາບຸກຄະລາກອນ ແລະ ຄວາມຊ່ຽວຊານດ້ານວິຊາການ ແມ່ນໄດ້ລວມຢູ່ໃນ ແຜນການຄຸ້ມຄອງຕິດຕາມກວດກາ, ພ້ອມກັນນັ້ນກໍ່ຍັງມີການຝຶກອົບຮົມ, ກິດຈະກຳສ້າງຄວາມສາມາດອື່ນໆອີກ.

ເພື່ອໃຫ້ງ່າຍຕໍ່ການທົບທວນຂອງພາກສ່ວນທີ່ກ່ຽວຂ້ອງ, ທາງບໍລິສັດທີ່ປຶກສາໄດ້ແຍກບົດລາຍງານແຜນການຄຸ້ມ ຄອງ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ສຳລັບໂຄງການສາຍສົ່ງໄຟຟ້າ 500 KV ຂອງ ໂຄງການພະລັງງານລົມ 600 MW ເມືອງດາກຈຶງ ແຂວງ ເຊກອງ ທີ່ສະເໜີນີ້ ອອກເປັນບົດຕ່າງຫາກ. ເຊິ່ງລາຍ ລະອຽດຕ່າງໆຂອງການຄຸ້ມຄອງ ແລະ ຕິດຕາມກວດກາ ແມ່ນຈະໄດ້ອະທິບາຍໃນບົດ ຜຄຕສ ທີ່ແຍກອອກນັ້ນ.

ພາກທີ 7 ການປຶກສາຫາລື ແລະ ມີສ່ວນຮ່ວມ

7.1 ພາກສະເໜີ

ເພື່ອໃຫ້ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດຈາກ ໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລິມ 600 MW ເມືອງດາກຈຶງ ແຂວງ ເຊກອງ ໂດຍບໍລິສັດ ອິມແພັກ ເອັນເນີຈີ ເອເຊີຍ ດີວີລັບເມັ້ນ ຈຳກັດ ເປັນໄປຕາມຂະບວນການ ແລະ ຖືກຕ້ອງ, ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງເປັນຕົ້ນ ແມ່ນ ດຳລັດ ວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 21/ລບ ລົງວັນທີ 31 ມັງກອນ 2019, ນອກນີ້ກໍ່ຍັງມີ ບົດແນະນຳ ວ່າດ້ວຍການມີສ່ວນຮ່ວມຂອງມວນຊົນ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການລົງທຶນ ເລກທີ 707/ກຊສ (ນະຄອນຫຼວງວຽງຈັນ, ວັນທີ 5 ກຸມພາ 2013) ເຊິ່ງກຳນົດໃຫ້ມີການປຶກສາຫາລື ແລະ ມີສ່ວນຮ່ວມຂອງມວນຊົນໃນຂະບວນການສຶກສາດັ່ງກ່າວ ເພື່ອເຜີຍແຜ່ຂໍ້ມູນໂຄງການ ແລະ ການປຶກສາຫາລືກັບຊຸມຊົນເຂດອ້ອມຂ້າງໂຄງການ ກໍ່ຄືບັນດາບ້ານທີ່ຢູ່ລຽບຕາມ ເຂດແລວສາຍສົ່ງ ແລະ ເຂດເສັ້ນທາງ, ພາກສ່ວນທີ່ກ່ຽວຂ້ອງ, ເພື່ອເປີດໂອກາດໃຫ້ປະຊາຊົນ ແລະ ທຸກພາກສ່ວນໄດ້ມີສ່ວນຮ່ວມໃນການຕັດສິນບັນຫາກ່ຽວກັບໂຄງການລົງທຶນລວມທັງການແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ພ້ອມທັງຜົນປະໂຫຍດທີ່ຈະໄດ້ຮັບຈາກໂຄງການຢ່າງເປັນທຳ.

ການປຶກສາຫາລື ແລະ ມີສ່ວນຮ່ວມ ແມ່ນເປັນການເຜີຍແຜ່ຂໍ້ມູນໂຄງການ, ການປະກອບຄວາມເຫັນ, ການສະເໜີແນະ, ການແລກປ່ຽນຂໍ້ຄິດເຫັນເຊິ່ງກັນ ແລະ ກັນ. ສະຫຼຸບລວມແລ້ວ ການປຶກສາຫາລື ແລະ ການມີສ່ວນຮ່ວມ ແມ່ນມີຜົນດີຕໍ່ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການ, ເຮັດໃຫ້ຜູ້ສຶກສາຜົນກະທົບສາມາດນຳເອົາການປຶກສາຫາລື ແລະ ຂໍ້ສະເໜີແນະຕ່າງໆ ເພື່ອໄປປະກອບ, ປັບປຸງບົດລາຍງານ ໃຫ້ມີຄວາມສົມບູນຂຶ້ນ ແລະ ສອດຄ່ອງກັບບົດແນະນຳຂອງກະຊວງທີ່ວ່າງອອກ. ເພື່ອເປັນການນຳເອົາບົດລາຍງານນັ້ນໃຫ້ມີຄວາມສາມາດນຳໄປຈັດຕັ້ງປະຕິບັດໄດ້ ໃນໄລຍະການດຳເນີນຂອງໂຄງການ ໃຫ້ມີຜົນສຳເລັດ ແລະ ໃຫ້ມີຄວາມຖືກຕ້ອງ, ເພື່ອເປັນການຊ່ວຍໃຫ້ໂຄງການມີຜົນກະທົບໜ້ອຍລົງ ແລະ ໄດ້ຮັບຜົນປະໂຫຍດຫຼາຍຂຶ້ນ.

7.2 ຈຸດປະສົງຂອງການມີສ່ວນຮ່ວມຂອງມວນຊົນ

ຈຸດປະສົງຂອງມີສ່ວນຮ່ວມກັບມວນຊົນ ແມ່ນເພື່ອຮັບປະກັນຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການ. ເພື່ອໃຫ້ມວນຊົນ ຫຼື ຜູ້ທີ່ມີສ່ວນກ່ຽວຂ້ອງໄດ້ຮັບຊາບກ່ຽວກັບຂໍ້ມູນຂອງໂຄງການ ຜົນກະທົບທີ່ອາດຈະເກີດຂຶ້ນ ແລະ ມາດຕະການຫຼຸດຜ່ອນຜົນກະທົບທີ່ໄດ້ນຳສະເໜີ ທັງນີ້ ກໍເພື່ອໃຫ້ເຂົາເຈົ້າ ມີຄວາມເຂົ້າໃຈ, ພ້ອມທັງ ຮັບຮູ້ທັດສະນະຄະຕິ, ມີຄວາມຄິດເຫັນ ຂອງເຂົາເຈົ້າຕໍ່ກັບໂຄງການ ແລະ ເພື່ອໄດ້ຮັບຟັງຄຳແນະນຳ ຈາກເຂົາເຈົ້າ ເພື່ອມາປັບປຸງ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ພ້ອມທັງ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ. ດັ່ງນັ້ນ, ຈຶ່ງໄດ້ມີການດຳເນີນງານການປຶກສາຫາລືກັບມວນຊົນ ໃນ ບປຜສ ເພື່ອໃຫ້ປະສົມຜົນສຳເລັດດັ່ງຕໍ່ໄປນີ້:

- ✓ ແຈ້ງໃຫ້ຜູ້ທີ່ມີສ່ວນຮ່ວມຕ່າງໆ ຮັບຊາບກ່ຽວກັບໂຄງການ ແລະ ຜົນກະທົບທີ່ອາດຈະເກີດຂຶ້ນຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;

- ✓ ລະດົມເອົາແນວຄວາມຄິດ ແລະ ຂໍ້ກັງວົນຕ່າງໆ ຂອງພວກເຂົາເຈົ້າ ແລະ ພິຈາລະນາຂໍ້ມູນ ແລະ ທັດສະນະ ຂອງຊຸມຊົນ ເພື່ອປັບປຸງ ແລະ ເອົາເຂົ້າໃນ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ການ ຕັດສິນໃຈ;
- ✓ ໄດ້ຮັບຄວາມຮູ້, ພູມປັນຍາ ແລະ ປະເພນີຂອງທ້ອງຖິ່ນ ທີ່ອາດຈະມີປະໂຫຍດ ສຳລັບການປະເມີນຜົນ ກະທົບ ແລະ ການອອກແບບມາດຕະການຫຼຸດຜ່ອນຜົນກະທົບ;
- ✓ ຊ່ວຍອຳນວຍຄວາມສະດວກໃນການການພິຈາລະນາທາງເລືອກ, ມາດຕະຖານຫຼຸດຜ່ອນຜົນກະທົບ ແລະ ຄວາມສົມດຸນ;
- ✓ ຮັບປະກັນວ່າບໍ່ໄດ້ເບິ່ງຂ້າມຜົນກະທົບທີ່ສຳຄັນ ແລະ ຜົນປະໂຫຍດໄດ້ຮັບການຂະຫຍາຍໃຫ້ຫຼາຍຂຶ້ນ;
- ✓ ຫຼຸດຜ່ອນຂໍ້ຂັດແຍ່ງ ໂດຍຜ່ານການກຳນົດບັນຫາຖືກຖຽງກັນຕັ້ງແຕ່ເບື້ອງຕົ້ນ;
- ✓ ໃຫ້ໂອກາດແກ່ມວນຊົນເພື່ອໃຫ້ມີອິດທິພົນຕໍ່ການອອກແບບໂຄງການໃນລັກສະນະທາງບວກ (ໂດຍການ ສ້າງຄວາມຮູ້ສຶກ ການເປັນເຈົ້າຂອງຂໍ້ສະເໜີ);
- ✓ ປັບປຸງຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບໃນການຕັດສິນໃຈ; ແລະ
- ✓ ເພີ່ມຄວາມເຊື່ອໝັ້ນໃນຂະບວນການ ບປຜສ ໃຫ້ມວນຊົນ.

7.3 ຂໍ້ກຳນົດ ຂອງ ສປປ ລາວ

ຂໍ້ກຳນົດຂອງ ສປປ ລາວ ກ່ຽວກັບ ການປຶກສາຫາລື ແລະ ການເຜີຍແຜ່ຂໍ້ມູນຂ່າວສານ ລວມມີ ຢ່າງນ້ອຍສຸດ, ໄດ້ ກຳນົດໄວ້ໃນພາກ III ຂອງດຳລັດ ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ເລກທີ 21/ລບ, ລົງວັນທີ 31 ມັງກອນ 2019. ມາດຕາ 36, 37, 38 ແລະ 39 ຂອງ ໝວດທີ 4 ໄດ້ກຳນົດຂະບວນການມີສ່ວນຮ່ວມຂອງ ມວນຊົນ ທີ່ຈະຕ້ອງໄດ້ປະຕິບັດໃນໄລຍະການກະກຽມ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ການໃຫ້ລາຍລະອຽດ ກ່ຽວກັບສິດ ແລະ ໜ້າທີ່ ຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ທີ່ມີ ສ່ວນຮ່ວມ, ແລະ ຂະບວນການໃນການມີສ່ວນຮ່ວມ. ເຊິ່ງຜູ້ທົບທວນ ແລະ ຜູ້ທີ່ມີສ່ວນຮ່ວມສາມາດກວດກາ ຂອບເຂດຂອງມວນຊົນທີ່ໄດ້ເຂົ້າຮ່ວມ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ຄວາມຄິດເຫັນ ແລະ ຄຸນຄ່າຂອງເຂົາເຈົ້າ ໄດ້ຮັບການແກ້ໄຂຢ່າງພຽງພໍ ຫຼື ບໍ່.

ຄຳແນະນຳ ກ່ຽວກັບ ຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການ ແລະ ກິດຈະກຳລົງທຶນຕ່າງໆ ໄດ້ກຳນົດວ່າ ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ມີສ່ວນຮ່ວມອື່ນໆ ທີ່ ກ່ຽວຂ້ອງກັບ ການຮ່າງ ແລະ ການທົບທວນ ບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ລວມທັງການໄດ້ຮັບຂໍ້ມູນຂ່າວສານ, ການຮ່ວມມື ແລະ ການໃຫ້ຂໍ້ມູນຂ່າວສານ, ການມີສ່ວນຮ່ວມ ໃນການ ກວດກາພາກສະໜາມ ແລະ ການມີສ່ວນຮ່ວມໃນກິດຈະກຳການຕິດຕາມກວດກາ.

ຄຳແນະນຳ ກ່ຽວກັບການມີສ່ວນຮ່ວມຂອງມວນຊົນ, ກຊສ ປີ 2013 ໃຫ້ຂໍ້ມູນຂ່າວສານກ່ຽວກັບ, ການເຜີຍແຜ່, ການມີສ່ວນຮ່ວມ ແລະ ກິດຈະກຳການປຶກສາຫາລື ທີ່ຕ້ອງໄດ້ດຳເນີນໃນໄລຍະ ຂະບວນການ ປະເມີນຜົນກະທົບຕໍ່ ສິ່ງແວດລ້ອມ ແລະ ສັງຄົມ.

ມາດຕາ 12 ແລະ 13 ຂອງ ດຳລັດວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ຈັດສັນຍົກຍ້າຍປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການ ພັດທະນາ ເລກທີ 84/ລບ, ເດືອນ ເມສາ ປີ 2016 ຂອງ ສປປ ລາວ ໄດ້ອະທິບາຍ ຂໍ້ກຳນົດເພີ່ມເຕີມ ສຳລັບໂຄງການທີ່ມີການຈັດສັນຍົກຍ້າຍ ແລະ ທົດແທນຄ່າເສຍຫາຍ.

7.4 ຂັ້ນຕອນ ແລະ ວິທີການ

ການມີສ່ວນຮ່ວມຂອງສັງຄົມ ແມ່ນຂະບວນການປຶກສາຫາລື, ການສະໜອງຂໍ້ມູນຂ່າວສານ ແລະ ຮັບຄຳຄິດເຫັນຂອງທຸກພາສ່ວນຂອງສັງຄົມ. ເຊິ່ງການມີສ່ວນຮ່ວມຂອງສັງຄົມ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ມີສາມໄລຍະຄື:

- ການກະກຽມ ແລະ ວາງແຜນໂຄງການ;
- ການກໍ່ສ້າງ ແລະ ດຳເນີນໂຄງການ;
- ການສິ້ນສຸດໂຄງການ.

ເຖິງຢ່າງໃດກໍດີ, ສຳລັບໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລົມ 600 MW ເມືອງດາກຈຶງ ນີ້, ໃນຂະນະນີ້ ຍັງບໍ່ມີແຜນການທີ່ຈະປິດໂຄງການ ຫຼື ສິ້ນສຸດໂຄງການ ເພາະເປັນເປັນໂຄງການພັດທະນາແບບຍືນຍົງ, ສະນັ້ນ ຈະບໍ່ໄດ້ກ່າວເຖິງການມີສ່ວນຮ່ວມໃນໄລຍະການສິ້ນສຸດໂຄງການ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ, ອົງການປົກຄອງທ້ອງຖິ່ນ ແລະ ເຈົ້າຂອງໂຄງການ ມີຄວາມຮັບຜິດຊອບຮ່ວມກັນໃນການຮັບປະກັນ ແລະ ສ້າງເງື່ອນໄຂໃຫ້ທຸກພາກສ່ວນໃນສັງຄົມມີສ່ວນຮ່ວມ ໃນວຽກງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

7.4.1 ການມີສ່ວນຮ່ວມຂອງສັງຄົມ ໃນໄລຍະກະກຽມ ແລະ ວາງແຜນໂຄງການ

ໃນໄລຍະການກະກຽມ ປິດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ:

- ເຈົ້າຂອງໂຄງການ ເຜີຍແຜ່ແຜນການມີສ່ວນຮ່ວມຂອງສັງຄົມ ພ້ອມທັງເກັບກຳຂໍ້ມູນພື້ນຖານ ໃນເຂດໂຄງການ ແລະ ເຂດໃກ້ຄຽງໂຄງການ ເປັນຕົ້ນຂໍ້ມູນສະຖິຕິກ່ຽວກັບພົນລະເມືອງ, ເສດຖະກິດ-ສັງຄົມ, ສະພາບສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ.
- ເຈົ້າຂອງໂຄງການສົມທົບກັບ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຜີຍແຜ່ຂໍ້ມູນໃຫ້ແກ່ປະຊາຊົນ ໃນເຂດໂຄງການ ແລະ ເຂດໃຫ້ຄຽງໂຄງການ ແລະ ຜູ້ມີສ່ວນຮ່ວມອື່ນ ກ່ຽວກັບການພັດທະນາໂຄງການ, ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຈາກໂຄງການ ແລະ ກິດຈະກຳຕ່າງໆ ໂດຍການຈັດກອງປະຊຸມເຜີຍແຜ່ຂັ້ນຕ່າງໆ ແລະ ຮູບການອື່ນໆ ທັງເປັນພາສາລາວ ແລະ ພາສາຊົນເຜົ່າ ໃນກໍລະນີມີຄວາມຈຳເປັນ.

ໄລຍະການທົບທວນປິດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ:

- ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສົມທົບກັບເຈົ້າຂອງໂຄງການ ຈັດກອງປະຊຸມ ຂັ້ນເມືອງ, ຂັ້ນວິຊາການ, ລົງກວດກາພາກສະໜາມ ແລະ ຂັ້ນແຂວງ/ສູນກາງ ເພື່ອປຶກສາຫາລື ຜ່ານປິດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ເຊິ່ງປະກອບມີ ຜູ້ເຂົ້າຮ່ວມຄືປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກ

ໂຄງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ, ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ, ຂະແໜງການຮັບຜິດຊອບໂຄງການ ການລົງທຶນ, ຂະແໜງການອື່ນໆ ທີ່ກ່ຽວຂ້ອງຂັ້ນສູນ ກາງ, ທ້ອງຖິ່ນ ແລະ ຜູ້ມີສ່ວນຮ່ວມອື່ນໆ ໂດຍອີງໃສ່ຈຸດພິເສດ ຂອງກອງປະຊຸມແຕ່ລະຂັ້ນ.

7.4.2 ການມີສ່ວນຮ່ວມຂອງສັງຄົມ ໃນໄລຍະກໍ່ສ້າງ ແລະ ດຳເນີນໂຄງການ

- ແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອແຈ້ງໃຫ້ຜູ້ທີ່ຢູ່ໃນເຂດໂຄງການ ແລະ ເຂດໃກ້ ຄຽງໂຄງການເປັນແຕ່ໄລຍະ ກ່ຽວກັບການດຳເນີນກິດຈະການຂອງໂຄງການ ທີ່ອາດຈະສົ່ງຜົນກະທົບຕໍ່ ສິ່ງແວດລ້ອມ ເປັນຕົ້ນແມ່ນ ການເປີດໜ້າດິນ, ການຂົນສົ່ງ, ການນຳໃຊ້ ແລະ ການເກັບຮັກສາວັດຖຸ ແລະ ສານເຄມີ ອັນຕະລາຍ ແລະ ອື່ນໆ.
- ແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເຜີຍແຜ່ບັນຕາເອກະສານກ່ຽວຂ້ອງກັບສິ່ງແວດ ລ້ອມ ແລະ ສັງຄົມ ເປັນຕົ້ນ ບົດລາຍງານການສຶກສາຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ, ແຜນການ ຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ, ບົດລາຍງານ ການຈັດຕັ້ງປະຕິບັດ ວຽກງານສິ່ງແວດລ້ອມ ຂອງໂຄງການໂດຍຜ່ານທາງ ໜັງສືພິມ, ໂທລະພາບ, ໂທລະໂຄ່ງ, ວິທະຍຸ, ເວັບໄຊສ ຫຼື ສື່ສິ່ງພິມອື່ນໆ.
- ຜູ້ໄດ້ຮັບຜົນກະທົບ ແລະ ຜູ້ທີ່ມີສ່ວນຮ່ວມອື່ນໆ ສາມາດປະກອບຄຳຄິດຄຳເຫັນ ກ່ຽວກັບການຈັດຕັ້ງ ປະຕິບັດໂຄງການ ໂດຍຜ່ານທາງໂທລະສັບສາຍດ່ວນ, ທາງເອເລັກໂຕຣນິກ, ສິ່ງຄຳເຫັນ, ຄຳຮ້ອງທຸກ ຢ່າງ ເປັນລາຍລັກອັກສອນ ໃຫ້ເຈົ້າຂອງໂຄງການ ຫຼື ອົງການຈັດຕັ້ງລັດທີ່ກ່ຽວຂອງ ຫຼື ຮູບການອື່ນ.

7.4.3 ວິທີການ ແລະ ແນວທາງ

1) ກອງປະຊຸມມວນຊົນ

ວິທີການຕົ້ນຕໍທີ່ໄດ້ນຳໃຊ້ ໃນການປຶກສາຫາລືມວນຊົນ ແມ່ນການປະຊຸມມວນຊົນ, ເປັນວິທີການທີ່ມີປະສິດທິຜົນ ທີ່ສຸດ ໃນການປະສົມຜົນສຳເລັດ ຂອງການເຜີຍແຜ່ຂໍ້ມູນຂ່າວສານ ເພື່ອລະດົມຄວາມຄິດເຫັນ ແລະ ການມີສ່ວນ ຮ່ວມຂອງເຂົາໃນໃນອານາຄົດ.

ນອກຈາກ ນີ້ວິທີການປະຊຸມກັບມວນຊົນ ຍັງປະກອບດ້ວຍ ການດຳເນີນການ ສຳຫຼວດຄົວເຮືອນ ແລະ ໄດ້ນຳໃຊ້ ການສຳພາດແບບ ໜ້າຕໍ່ໜ້າ ໃນການເກັບກັບຂໍ້ມູນເສດຖະກິດ ແລະ ສັງຄົມ ຂອງຊຸມຊົນໃນເຂດພື້ນທີ່ສຶກສາ.

ທັງສອງວິທີການນີ້ຍັງເຮັດໜ້າທີ່ເປັນ ສອງຈຸດປະສົງຄື ການແຈ້ງການກ່ຽວກັບຂໍ້ມູນການພັດທະນາໂຄງການໃຫ້ ຊາບ ແລະ ການຊອກຫາທັດສະນະມຸມມອງ, ຄຳເຫັນ ແລະ ຂໍ້ກັງວົນຕ່າງໆ ຂອງສັງຄົມ ຕໍ່ກັບໂຄງການພັດທະນາທີ່ ໄດ້ນຳສະເໜີ.

2) ກຸ່ມສົນທະນາສະເພາະ

ການສົນທະນາກຸ່ມສະເພາະ ເປັນວິທີການທີ່ດີ ເພື່ອເຕົ້າໂຮມປະຊາຊົນເຂົ້າຮ່ວມນຳກັນ ຈາກກຸ່ມຄົນທີ່ມີພື້ນຖານ ຫຼື ປະສົມການຄ້າຍຄືກັນ ເພື່ອສົນທະນາ ຫົວຂໍ້ສະເພາະທີ່ສົນໃຈ. ກຸ່ມຂອງການມີສ່ວນຮ່ວມແມ່ນໄດ້ຮັບຄຳແນະນຳ ໂດຍຜູ້ຊ່ວຍດຳເນີນການປະຊຸມ ໂດຍນຳສະເໜີ ຫົວຂໍ້ ທີ່ຈະສົນທະນາ ແລະ ຊ່ວຍກຸ່ມ ໃຫ້ມີສ່ວນຮ່ວມໃນການ ສົນທະນາ ທີ່ມີຊີວິດຊີວາ ແລະ ເປັນທຳມະຊາດ ໃນກຸ່ມຂອງເຂົາເຈົ້າເອງ. ນອກຈາກນີ້ການສົນທະນາກຸ່ມສະເພາະ ໄດ້ຈັດຂຶ້ນສຳລັບ ກຸ່ມສະເພາະ ເຊັ່ນ: ກຸ່ມຊົນເຜົ່າ, ແມ່ຍິງ, ກຸ່ມຄົວເຮືອນດ້ອຍໂອກາດ ແລະ ອື່ນໆ.

3) ການເຜີຍແຜ່

ຂໍ້ມູນຂ່າວສານຂອງໂຄງການ ໄດ້ເຜີຍແຜ່ໃຫ້ແກ່ ກອງປະຊຸມຕ່າງ ຂອງຜູ້ທີ່ມີສ່ວນຮ່ວມ ໂດຍນຳໃຊ້ຫຼາຍປະເພດ ລວມທັງ ເອກະສານແຈກຢາຍໃນກອງປະຊຸມ.

4) ການນຳໃຊ້ວິທີການທີ່ເໝາະສົມ

ເນື່ອງຈາກຜູ້ທີ່ມີສ່ວນໄດ້ສ່ວນເສຍ ລວມທັງຜູ້ມີສ່ວນຮ່ວມຈາກທຸກພາກສ່ວນ ແມ່ນມີລະດັບຄວາມຮູ້ ແລະ ຄວາມເຂົ້າໃຈທີ່ແຕກຕ່າງກັນ, ບາງກຸ່ມຄົນຢູ່ເຂດຊົນນະບົດ ຜູ້ທີ່ຈະໄດ້ຮັບຜົນກະທົບໂດຍກົງ ບໍ່ຮູ້ອ່ານໜັງສືກໍມີ, ຫຼື ພະນັກງານບາງພາກສ່ວນ ກໍຍັງບໍ່ເຂົ້າໃຈພາສາຕ່າງປະເທດ. ດັ່ງນັ້ນ ການສື່ສານໃນການປຶກສາຫາລື ຕ້ອງມີຄວາມ ລະມັດລະວັງ ແລະ ຕ້ອງໃຊ້ວິທີທີ່ເໝາະສົມກັບທຸກພາກສ່ວນ:

- ການນຳສະເໜີຕ້ອງໃຊ້ເຄື່ອງປະຈັກຕາ ລວມທັງການໃຊ້ຮູບພາບ ແລະ ແຜ່ນໂປສະເຕີ (posters) ຕ່າງໆ ເພື່ອໃຫ້ ປະຊາຊົນທ້ອງຖິ່ນໄດ້ເຂົ້າໃຈ.
- ຂຽນ ແລະໃຊ້ພາສາລາວ ໃນການສື່ສານກັບທຸກພາກສ່ວນ, ຄຳສັບໃດທີ່ເປັນສັບເຕັກນິກ ທີ່ກ່ຽວຂ້ອງກັບ ໂຄງການ ກໍຕ້ອງມີການແປ-ທຽບໃສ່ສັບທ້ອງຖິ່ນພໍໃຫ້ເຂົ້າໃຈ.
- ອະທິບາຍຜົນຂອງການວິໄຈ ທີ່ເປັນຄວາມຮູ້ທາງວິຊາການ, ເຊິ່ງເປັນເລື່ອງທີ່ຍາກສຳລັບ ຄົນທົ່ວໄປໂດຍ ສະເພາະປະຊາຊົນທ້ອງຖິ່ນ ຜູ້ທີ່ບໍ່ເຄີຍຮູ້ບໍ່ເຄີຍຮຽນ, ໃຫ້ເຂົາເຈົ້າພໍເຂົ້າໃຈ ເພື່ອໃຫ້ເຂົາເຈົ້າຮູ້ຈັກວິທີປ້ອງ ກັນ ດ້ວຍຕົວເຂົາເຈົ້າເອງ ເຊັ່ນ: ມີການອະທິບາຍຜົນຂອງການວິໄຈ ທາງດ້ານເຄມີ ແລະ ຊີວະ, ອະທິບາຍ ແຫຼ່ງທີ່ຈະກໍ່ໃຫ້ເກີດຜົນກະທົບ ແລະ ວິທີການປ້ອງກັນເບື້ອງຕົ້ນ.
- ການຈັດເປັນກຸ່ມນ້ອຍສົນທະນາ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ຜູ້ທີ່ບໍ່ມັກປາກ-ບໍ່ມັກຖາມ ແລະ ບໍ່ກ້າມີຄວາມເຫັນ, ເພື່ອໃຫ້ເຂົາເຈົ້າໄດ້ເຂົ້າໃຈ ແລະ ມີສ່ວນຮ່ວມໃນສິ່ງທີ່ເຂົາເຈົ້າຮູ້.
- ນຳໃຊ້ວິທີການອື່ນໆທີ່ງ່າຍດາຍ ແລະ ເຂົ້າໃຈໄດ້ງ່າຍຕໍ່ການປຶກສາຫາລື ແລະ ການມີສ່ວນຮ່ວມ.

7.5 ການກຳນົດຜູ້ມີສ່ວນຮ່ວມ ແລະ ກຸ່ມຄົນຜູ້ໄດ້ຮັບຜົນກະທົບ

ອີງຕາມການພິຈາລະນາເຖິງຂອບເຂດໂຄງການ ແລະ ກອບໜ້າວຽກທາງດ້ານກົດໝາຍ ແລະ ອີງ ການຈັດຕັ້ງຕ່າງໆ ສຳລັບການຄຸ້ມຄອງຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ສາມາດນຳໃຊ້ໄດ້ສຳລັບໂຄງການ, ຜູ້ທີ່ມີສ່ວນ ກ່ຽວຂ້ອງກັບໂຄງການສາມາດ ກຳນົດ ແລະ ຈັດອອກເປັນ ສີ່ປະເພດຄື:

1) ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ

ຜູ້ທີ່ມີສ່ວນຮ່ວມຂອງໂຄງການໃນປະເພດນີ້ ແມ່ນຊາວບ້ານ ຢູ່ໃນບັນດາບ້ານທີ່ໄດ້ຮັບຜົນກະທົບໂດຍກົງ ຫຼື ທາງ ອ້ອມ ຍ້ອນການກໍ່ສ້າງ ແລະ ດຳເນີນໂຄງການ. ຜູ້ທີ່ໄດ້ຮັບຜົນກະທົບນີ້ປະກອບດ້ວຍ ເຈົ້າຂອງດິນ ທີ່ຖືກຄອງການ ເວນຄືນທີ່ດິນ ເຊິ່ງອາໄສຢູ່ ພາຍໃນບ້ານເຂດໂຄງການ ແລະ ບ້ານອື່ນໆ ໃນ ຂອບເຂດສຶກສາໂຄງການ.

2) ອົງການຈັດຕັ້ງພາກລັດຖະບານ

ຜູ້ທີ່ມີສ່ວນຮ່ວມໂດຍກົງຈາກອົງການຈັດຕັ້ງລັດ ສຳລັບໂຄງການນີ້ ແມ່ນຕົວແທນຂອງອົງການຈັດຕັ້ງ ຜູ້ທີ່ມີໜ້າທີ່ ຮັບຜິດຊອບໂດຍກົງ ສຳລັບ ການປົກຄອງທ້ອງຖິ່ນ ແລະ ການຄຸ້ມຄອງສິ່ງແວດລ້ອມ ລະດັບສູນກາງ, ແຂວງ, ເມືອງ ແລະ ບ້ານທ້ອງຖິ່ນ.

ສຳລັບໂຄງການນີ້, ຫ້ອງການສຳຄັນທີ່ກ່ຽວຂ້ອງໃນລະດັບແຂວງ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ພຊສ), ສ່ວນລະດັບສູນກາງແມ່ນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ). ຫ້ອງການ ສຳຄັນທີ່ກ່ຽວຂ້ອງໃນລະດັບເມືອງ ແລະ ແຂວງມີຄື:

- ອົງການຈັດຕັ້ງການປົກຄອງຂັ້ນແຂວງ, ເມືອງ ແລະ ບ້ານ
- ພະແນກ ຊັບພະຍາກອນ ແລະ ສິ່ງແວດລ້ອມ ແຂວງ
- ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ

3) ກະຊວງຕ່າງທີ່ກ່ຽວຂ້ອງ

ກະຊວງຕ່າງໆ ທີ່ມີຄວາມຮັບຜິດຊອບໃນການພັດທະນາຂະແໜງການນີ້ ມີຄື:

- ກະຊວງພະລັງງານ ແລະ ບໍ່ແຮ່
- ກະຊວງແຜນການ ແລະ ການລົງທຶນ
- ກະຊວງອື່ນໆທີ່ກ່ຽວຂ້ອງ

4) ອົງການຈັດຕັ້ງທາງດ້ານສັງຄົມອື່ນໆ

- ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ;
- ແນວລາວສ້າງຊາດ;
- ສະຫະພັນແມ່ຍິງລາວ;
- ຊາວໜຸ່ມປະຊາຊົນປະຕິວັດລາວ;
- ແລະ ອື່ນໆທີ່ກ່ຽວຂ້ອງ.

7.6 ຜົນຂອງການຈັດກອງປະຊຸມປຶກສາຫາລື

7.6.1 ການເຜີຍແຜ່ຂໍ້ມູນ ແລະ ປຶກສາຫາລືຂັ້ນບ້ານ

ສຳລັບການປຶກສາຫາລືກັບປະຊາຊົນທ້ອງຖິ່ນໃນເຂດໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລົມ 600 MW ເມືອງດາກຈຶງ ແຂວງ ເຊກອງ ໂດຍບໍລິສັດ ອິມແພັກ ເອັນເນີຈີ ເອເຊີຍ ດີວີລົບເມັ້ນ ຈຳກັດ ແມ່ນໄດ້ມີ ການສຶກສາຢູ່ໃນຂອບເຂດຂອງ 5 ບ້ານທີ່ຢູ່ອ້ອມຂ້າງທີ່ຕັ້ງໂຄງການ, ໃນການປຶກສາຫາລື ແລະ ການເຜີຍແຜ່ຂໍ້ມູນ ໃຫ້ກັບບັນດາບ້ານທີ່ຢູ່ໃນເຂດອ້ອມຂ້າງຂອງໂຄງການ ຈຶ່ງໄດ້ເລີ່ມຂຶ້ນໃນວັນທີ 15-24 ກັນຍາ 2020 ທີ່ຜ່ານມາ, ໂດຍອີງໃສ່ສະພາບຄວາມເປັນຈິງຂອງບ້ານໃນເຂດພື້ນທີ່ໂຄງການ, ການດຳລົງຊີວິດຂອງປະຊາຊົນໃນແຕ່ລະມື້, ດັ່ງນັ້ນທາງທີມງານກໍ່ໄດ້ມີການສຳພາດເກັບກຳຂໍ້ມູນດ້ານເສດຖະກິດ-ສັງຄົມ ນຳປະຊາຊົນທົ່ວໄປ ແລະ ການຈັດຕັ້ງ ຂອງບ້ານມາເຂົ້າຮ່ວມການເຜີຍແຜ່ຂໍ້ມູນ ແລະ ປຶກສາຫາລື, ເຊິ່ງກອງປະຊຸມໄດ້ຈັດຢູ່ ຫ້ອງການບ້ານຂອງແຕ່ລະ ບ້ານ ຜູ້ເຂົ້າຮ່ວມໃນການປຶກສາຫາລືແມ່ນປະກອບດ້ວຍ: ຄະນະບ້ານ, ເຖົ້າແກ່ແນວໂຮມ, ຊາວໜຸ່ມ, ແມ່ຍິງຂອງ ແຕ່ລະບ້ານ, ນອກນີ້ກໍ່ຍັງມີ ຕາງໜ້າຈາກ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກ ກະສິກຳ ແລະ ປ່າໄມ້, ພ້ອມດ້ວຍ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການກະສິກຳ ແລະ ປ່າໄມ້ ຂອງເມືອງດາກຈຶງ ແລະ ບໍລິສັດ ທີ່ປຶກສາ ທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການ.

ໃນການປຶກສາຫາລື ໄດ້ເຜີຍແຜ່ຂໍ້ມູນລາຍລະອຽດຂອງໂຄງການໃຫ້ປະຊາຊົນໃນໝູ່ບ້ານໄດ້ຮັບຮູ້, ເຊິ່ງໄດ້ມີການອະທິບາຍຈຸດທີ່ຕັ້ງ, ຂອບເຂດຂອງໂຄງການ, ຜົນປະໂຫຍດຂອງໂຄງການ ແລະ ຜົນກະທົບທີ່ຄາດວ່າຈະເກີດຂຶ້ນ ເປັນຕົ້ນ. ພາຍຫຼັງການເຜີຍແຜ່ຂໍ້ມູນແລ້ວ, ທາງທີມງານບໍລິສັດທີ່ປຶກສາທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການ ກໍ່ໄດ້ເປີດໂອກາດ ໃຫ້ຜູ້ເຂົ້າຮ່ວມທຸກພາກສ່ວນ ໄດ້ປະກອບຄວາມຄິດຄວາມເຫັນ ແລະ ມີການສຳພາດເກັບກຳຂໍ້ມູນດ້ານເສດຖະກິດສັງຄົມ ແລະ ສິ່ງແວດລ້ອມລວມ, ຈຳນວນປະຊາກອນ, ຊົນເຜົ່າ, ແບບແຜນການດຳລົງຊີວິດ, ການນຳໃຊ້ທີ່ດິນ ແລະ ປ່າໄມ້ ຂອງບ້ານຕ່າງໆໃນເຂດໂຄງການ. ເຊິ່ງຜ່ານການປຶກສາຫາລື ສາມາດສະຫຼຸບຄວາມຄິດເຫັນ ແລະ ຂໍ້ສະເໜີທີ່ສຳຄັນຕ່າງໆ ຂອງປະຊາຊົນທີ່ເຂົ້າຮ່ວມໄດ້ດັ່ງນີ້:

ຕາຕະລາງ 7-1: ຄວາມຄິດເຫັນ ແລະ ຂໍ້ສະເໜີຂອງແຕ່ລະບ້ານ

ລ/ດ	ເມືອງ	ບ້ານ	ຄຳຄິດເຫັນ ແລະ ຂໍ້ສະເໜີ
1	ດາກຈຶງ	ດາກບອງ	▪ ທາງອົງການຈັດຕັ້ງບ້ານ ພ້ອມດ້ວຍປະຊາຊົນ ແມ່ນມີຄວາມເຫັນດີ ແລະ ສະໜັບສະໜຸນຕໍ່ໂຄງການ. ▪ ກ່ອນຈະດຳເນີນໂຄງການຕ້ອງໄດ້ຊົດເຊີຍໃຫ້ກັບປະຊາຊົນຜູ້ໄດ້ຮັບຜົນກະທົບ. ▪ ຕ້ອງເສຍຄ່າບູລະນະໃຫ້ບ້ານເປັນເງິນສົດ. ▪ ບ່ອນໃດທີ່ປະຊາຊົນຢາກໃຫ້ຫຼີກເວັ້ນ ຖ້າເປັນໄປໄດ້ແມ່ນຢາກໃຫ້ຫຼີກເວັ້ນຕອນດິນນັ້ນໃຫ້ກັບປະຊາຊົນ.
2		ດາກຕະອອກນ້ອຍ	▪ ທາງຄະນະບ້ານ ແລະ ປະຊາຊົນແມ່ນມີຄວາມເຫັນດີຕໍ່ກັບໂຄງການ. ▪ ໃຫ້ເສຍພັນທະຄ່າຕົ້ນໄມ້ທີ່ຖືກຕັດຕາມແລວສາຍສົ່ງ ໃຫ້ກັບບ້ານ. ▪ ໃຫ້ທາງໂຄງການສ້ອມແປງເສັ້ນທາງເຂົ້າຫາບ້ານ ແລະ ເຂດທຳການຜະລິດຂອງປະຊາຊົນ. ▪ ໃຫ້ທາງໂຄງການຊ່ວຍສ້າງຫ້ອງການບ້ານໃຫ້ແກ່ບ້ານ. ▪ ໃຫ້ໂຄງການຊ່ວຍກໍ່ສ້າງວົດຊຶມໃຫ້ກັບປະຊາຊົນ 44 ຄອບຄົວ.
3		ງອນດອນ	▪ ກ່ອນການດຳເນີນໂຄງການ ຕ້ອງໃຫ້ທີມງານປະສານສົມທົບການຫ້ອງການທີ່ກ່ຽວຂ້ອງຢ່າງລະອຽດ ແລະ ກວດຄືນຕົວຈິງຂອງຜົນເສຍຫາຍກ່ຽວກັບຕອນດິນທີ່ຖືກຜົນກະທົບ ພ້ອມກຳນົດເປັນມູນຄ່າ ພ້ອມຈ່າຍເງິນຄ່າຊົດເຊີຍຜົນກະທົບໃຫ້ກັບປະຊາຊົນ ກ່ອນການດຳເນີນໂຄງການ. ▪ ຊົດເຊີຍຄ່າບູລະນະໃຫ້ກັບອຳນາດການປົກຄອງບ້ານເປັນຈຳນວນເງິນ 50,000,000 ກີບ ເພື່ອເຮັດຫ້ອງການບ້ານ.
4		ດາກມອນ	▪ ໃຫ້ທາງໂຄງການເສຍພັນທະເປັນເງິນ 50,000,000 ກີບ ໃຫ້ກັບບ້ານ. ▪ ໃຫ້ແປງຮີດຄອງປະເພນີໃຫ້ບ້ານ ຄວາຍ 1 ໂຕ ເປັນເງິນ 10,000,00 ກີບ. ▪ ສ້ອມແປງອາຄານລວມບ້ານ, ຕໍ່ເຕີມ ໂຮງຮຽນປະຖົມສົມບູນສອງຫ້ອງ ແລະ ເສົາໄຟຟ້າເຂົ້າບ້ານ.

5		ດາກໂດມ	▪ ຊຸກຍູ້ຄ່າຮີດຄອງ ຕໍ່ກັບສິ່ງທີ່ຖືກຜົນກະທົບໃຫ້ກັບປະຊາຊົນ. ▪ ສະເໜີໄຟຟ້າເຂົ້າຫາບ້ານ. ▪ ຄ່າຊົດເຊີຍທີ່ດິນທີ່ຖືກຜົນກະທົບຂອງພໍ່ແມ່ປະຊາຊົນ ຕ້ອງໃຫ້ຖືກຕາມເນື້ອທີ່ດິນ. ▪ ສະເໜີເສັ້ນທາງຢາງເຂົ້າຫາບ້ານ ຄວາມຍາວ 4 ກິໂລແມັດ ▪ ຊ່ວຍເຫຼືອຊົນລະປະທານ, ສຸສາລາ ແລະ ຫ້ອງການບ້ານ ເພື່ອໃຫ້ມີຫ້ອງປະຊຸມ.

ຮູບທີ 7-1: ການປຶກສາຫາລືຂັ້ນບ້ານ ກັນຍາ 2020

7.6.2 ກອງປະຊຸມປຶກສາຫາລືຂັ້ນເມືອງ ແລະ ຂັ້ນວິຊາການ

ຫຼັງຈາກທີ່ທາງໂຄງການໄດ້ຮັບ ໜັງສືຢັ້ງຢືນຂອບເຂດໜ້າວຽກ ສຳລັບໂຄງການກໍ່ສ້າງສາຍສົ່ງ ສະບັບເລກທີ 227/ກຊສ.ກສອ ລົງວັນທີ 19 ພຶດສະພາ 2020 ສະນັ້ນ, ທາງໂຄງການ ຮ່ວມກັບ ບໍລິສັດທີ່ປຶກສາສິ່ງແວດລ້ອມ ໂຄງການ ກໍ່ໄດ້ມີການລົງຈັດຕັ້ງປະຕິບັດ ການເຜີຍແຜ່ໂຄງການ, ການປຶກສາຫາລືຂັ້ນບ້ານ ແລະ ສຳຫຼວດພື້ນທີ່ໂຄງການ ໃນລະຫວ່າງ ວັນທີ 15 - 24 ກັນຍາ 2020 ທີ່ຜ່ານມາ. ພາຍຫຼັງທີ່ຈັດຕັ້ງປະຕິບັດ ການຈັດກອງປະຊຸມຂັ້ນບ້ານແລ້ວ, ທາງໂຄງການກໍ່ໄດ້ນຳເອົາຂໍ້ມູນຕ່າງໆທີ່ໄດ້ຈາກ ການສຳຫຼວດພາກສະໜາມຕົວຈິງ, ພາກສ່ວນຂໍ້ມູນລວມບ້ານ ແລະ ພາກສ່ວນຂໍ້ມູນມືສອງ ທີ່ໄດ້ຈາກບັນດາ ຫ້ອງການຕ່າງໆພາຍໃນເມືອງທີ່ກ່ຽວຂ້ອງ ມາຂຽນ

ເປັນບົດລາຍງານ ບປຜສ, ຜຄຕສ ແລະ ບົດສັງລວມຫຍໍ້ ເພື່ອກຽມນຳສົ່ງເຂົ້າ ກົມສິ່ງແວດລ້ອມ (ກຊສ), ພິຈາລະນາໃນການຂໍຈັດກອງປະຊຸມຜ່ານບົດລາຍງານສະບັບຮ່າງໃຫ້, ເມື່ອທາງ ກສລ ໄດ້ທົບທວນ ບົດລາຍງານທັງ ໝົດເປັນທີ່ຮຽບຮ້ອຍ, ກໍ່ໄດ້ມີຄຳເຫັນດີໃຫ້ທາງໂຄງການຈັດ ກອງປະຊຸມປຶກສາຫາລືຂັ້ນເມືອງ ແລະ ຂັ້ນວິຊາການ ຂຶ້ນໃນຄັ້ງ ວັນທີ 11 ກຸມພາ 2021 ເພື່ອຜ່ານ ບົດລາຍງານ ບປຜສ, ຜຄຕສ ແລະ ບົດສັງລວມຫຍໍ້ ຂອງ ໂຄງການ ສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລົມ, ເມືອງດາກຈຶງ ຂອງ ບໍລິສັດ ອິມເພັກ ເອັນເນີຈີ ເອເຊຍ ພັດທະນາ ຈຳກັດ ຢູ່ທີ່ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງເຊກອງ.

ຈຸດປະສົງຂອງ ກອງປະຊຸມປຶກສາຫາລື ຂັ້ນເມືອງ ແລະ ຂັ້ນວິຊາການ ທີ່ກ່າວນີ້ ແມ່ນຈັດຂຶ້ນເພື່ອສ້າງ ຄວາມເຂົ້າໃຈໃຫ້ຂະແໜງການທີ່ກ່ຽວຂ້ອງ ຂັ້ນທ້ອງຖິ່ນ ແລະ ປະຊາຊົນ ທີ່ຄາດວ່າຈະໄດ້ຮັບຜົນກະທົບຈາກ ໂຄງການ, ເຊິ່ງການມີສ່ວນຮ່ວມໃນຂະບວນການສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ກໍ່ເພື່ອ ໃຫ້ບັນດາຜູ້ເຂົ້າຮ່ວມທຸກຂະແໜງການໄດ້ປຶກສາຫາລື ແລະ ປະກອບຄຳເຫັນຕໍ່ເນື້ອໃນບົດດັ່ງກ່າວ ໃຫ້ມີຄວາມຄົບ ຖ້ວນ ແລະ ແທດເໝາະກັບສະພາບຕົວຈິງ. ການຈັດກອງປະຊຸມປຶກສາຫາລືຄັ້ງນີ້ ແມ່ນໄດ້ຮັບກຽດຈາກການເປັນ ປະທານຂອງ ທ່ານ ໄຊຍະເວດ ວິໄຊ ຫົວໜ້າກົມສິ່ງແວດລ້ອມ ແລະ ທ່ານ ເພັດດາວົງ ບຸນມີສະຫວັດ ຮອງຫົວໜ້າ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງເຊກອງ, ໂດຍມີຜູ້ຕາງໜ້າຈາກຂະແໜງການທີ່ ກ່ຽວຂ້ອງ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ຕາງໜ້າຈາກ ອຳນາດການປົກຄອງບ້ານ ແລະ ປະຊາຊົນຂອງ ບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ. ນອກນັ້ນ, ກໍ່ມີພາກສ່ວນ ບໍລິສັດເຈົ້າຂອງໂຄງການ ແລະ ບໍລິສັດທີ່ປຶກສາ ດ້ານສິ່ງແວດລ້ອມ ເຂົ້າຮ່ວມລວມກັນທັງໝົດ ຈຳນວນ 50 ທ່ານ.

ກອງປະຊຸມແມ່ນໄດ້ເຜີຍແຜ່ເນື້ອໃນໂດຍຫຍໍ້ກ່ຽວກັບ ບົດແນະນຳການມີສ່ວນຮ່ວມຂອງມວນຊົນ ໃນ ຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການລົງທຶນ ແລະ ກິດຈະກຳຕ່າງໆ, ສະພາບລວມ, ແຜນ ການຈັດຕັ້ງປະຕິບັດໂຄງການ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມຂອງໂຄງການ. ຫຼັງຈາກໄດ້ຮັບຟັງຂໍ້ມູນຕ່າງໆຄົບຖ້ວນແລ້ວ, ບັນດາຜູ້ເຂົ້າຮ່ວມກອງ ປະຊຸມທຸກໆທ່ານກໍ່ໄດ້ປະກອບຄຳຄິດຄຳເຫັນຕໍ່ການນຳສະເໜີຂອງໂຄງການ, ທີ່ສາມາດສັງລວມໄດ້ດັ່ງນີ້:

1. ໂຄງການນີ້ ຈະມີຜົນກະທົບຕໍ່ໂຄງການອື່ນທີ່ນອນໃນເຂດພື້ນທີ່ດຽວກັນບໍ່? ເນື່ອງຈາກວ່າຫຼາຍໂຄງການຢູ່ ເຂດນັ້ນໄດ້ຮັບການອະນຸມັດຜ່ານມາແລ້ວ ແມ່ນໃຫ້ກວດຄືນຕື່ມ;
2. ໃຫ້ສຶກສາທົບກັບໂຄງການອື່ນ ທີ່ມີແຜນສ້າງແລວສາຍສົ່ງໄປຫວຽດນາມຄ້າຍຄືກັນ ແລະ ສາມາດນຳໃຊ້ຮ່ວມ ກັນໄດ້ບໍ່, ເພື່ອບໍ່ໃຫ້ມີການລົງທຶນ ແລະ ບໍ່ໃຫ້ມີຜົນກະທົບເພີ່ມເຕີມອີກ;
3. ສຳລັບງົບປະມານ ໃນການປະກອບສ່ວນພັດທະນາຊຸມຊົນ 50.000 ໂດລາ ແມ່ນໃຫ້ມີການຈັດສັນໃຫ້ແຕ່ ລະບ້ານລະອຽດ ເນື່ອງຈາກວ່າແຕ່ລະບ້ານມີຈຸດປະສົງການນຳໃຊ້ຕ່າງກັນ ແລະ ຈະມີວິທີການສ້າງແຜນນຳ ໃຊ້ແນວໃດ ແລະ ກຳນົດຈະຊ່ວຍຈັກປີ;
4. ບົດວິພາກເສດຖະກິດ ເບື້ອງຕົ້ນຂອງໂຄງການແມ່ນ ກົມນະໂຍບາຍ ແລະ ແຜນພະລັງງານ ໄດ້ຮັບຮອງແລ້ວ ສຳລັບບົດສຸດທ້າຍແມ່ນເປັນໜ້າທີ່ຂອງສະຖາບັນພະລັງງານທົດແທນ;
5. ທາງໂຄງການໄດ້ຮັບອະນຸຍາດກ່ຽວກັບຈຸດທີ່ຕັ້ງຕົ້ນເສົາ ກັບ ເຂດຫຼັກໝາຍຊາຍແດນ ລາວ-ຫວຽດນາມ ແລ້ວບໍ່? ຖ້າຍັງໃຫ້ສຶກສາທົບກັບພາກສ່ວນກ່ຽວຂ້ອງເພື່ອຂໍການຢັ້ງຢືນ;

6. ໃຫ້ສົມທົບກັບບ້ານໃນການປົວແປງຮີດຄອງປະເພນີຂອງປະຊາຊົນໃຫ້ຖືກຕ້ອງ ແລະ ສອດຄ່ອງກັບຮີດຄອງຂອງບ້ານ;
7. ສະເໜີໃຫ້ສົມທົບ ແລະ ເຜີຍແຜ່ໃຫ້ປະຊາຊົນຮັບຊາບ ແລະ ມີຄວາມເປັນເອກະພາບ ກ່ຽວກັບການກຳນົດຄ່າທົດແທນຄ່າເສຍຫາຍຕໍ່ທີ່ດິນທຳການຜະລິດຂອງປະຊາຊົນ;
8. ໃຫ້ສົມທົບກັບຂະແໜງກະສິກຳ ແລະ ປ່າໄມ້ ແລະ ຂະແໜງທີ່ດິນ ລົງສຳຫຼວດເນື້ອທີ່ດິນ ທີ່ຈະໄດ້ຮັບຜົນກະທົບຊົ່ວຄາວ ແລະ ຖາວອນ ເທົ່າໃດ? ໂດຍໃຫ້ໄດ້ຮັບການຢັ້ງຢືນເປັນທາງການ ແລະ ໃຫ້ກຳນົດລະອຽດຜົນກະທົບຊົ່ວຄາວພາຍຫຼັງສຳເລັດການກໍ່ສ້າງແລ້ວ ຈະມີວິທີການຟື້ນຟູແນວໃດ ແລະ ຈະບໍ່ມີຜົນກະທົບຄືນມາອີກບໍ່ໃນເວລາມີການສ້ອມແປງບຳລຸງຮັກສາແລວສາຍສົ່ງ;
9. ສະເໜີໃຫ້ເພີ່ມຂໍ້ມູນຜົນກະທົບຕໍ່ການຍະພາບເຂົ້າໃນບົດຕື່ມ ໂດຍສະເພາະບັນດາສາຍນ້ຳໃນເຂດໂຄງການ ແລະ ຕັດຂໍ້ມູນທີ່ບໍ່ກ່ຽວຂ້ອງກັບໂຄງການອອກ ຖ້າລະບຸໃນໂຄງການພະລັງງານລົມແລ້ວ ໂຄງການສາຍສົ່ງກໍບໍ່ຈຳເປັນໃສ່;
10. ກ່ອນການກໍ່ສ້າງ ສະເໜີໃຫ້ສ້າງແຜນຄຸ້ມຄອງສິ່ງແວດລ້ອມ ສຳລັບການກໍ່ສ້າງເຂົ້າຫາຕີນເສົາ ແລະ ການສ້າງແຄ້ມພັກກຳມະກອນ ເປັນສະບັບຕ່າງຫາກ ພາຍຫຼັງສາມາດກຳນົດໄດ້ເສັ້ນທາງເຂົ້າຫາເສົາແຕ່ລະຕົ້ນ ແລະ ຈຸດຕັ້ງແຄ້ມພັກ ເພື່ອສົ່ງໃຫ້ ພຊສ ແຂວງ ເພື່ອພິຈາລະນາຮັບຮອງ;
11. ສຳລັບງົບປະມານຄຸ້ມຄອງສິ່ງແວດລ້ອມ, ງົບປະມານພັດທະນາສັງຄົມ ໃຫ້ແຍກຈາກກັນ ເປັນຂອງແຕ່ລະພາກສ່ວນຕ່າງຫາກ;
12. ສະເໜີໃຫ້ເຈົ້າຂອງໂຄງການ ສົມທົບກັບ ກະຊວງການຕ່າງປະເທດ ຫຼື ຂະແໜງການທີ່ກ່ຽວຂ້ອງກັບບັນຫາຊາຍແດນທີ່ສາຍສົ່ງຈະຜ່ານ ໃຫ້ມີການຢັ້ງຢືນເປັນທາງການ;
13. ໃຫ້ມີການຢັ້ງຢືນຈາກຄະນະກຳມະການຂັ້ນແຂວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຢັ້ງຢືນການກຳນົດລາຄາຫົວໜ່ວຍທົດແທນຄ່າເສຍຫາຍຕໍ່ຊັບສິນຂອງປະຊາຊົນ ແລະ ໃຫ້ມີການກຳນົດວິທີການຈະຈັດຕັ້ງປະຕິບັດວຽກງານດັ່ງກ່າວລະອຽດຂຶ້ນຕື່ມເຂົ້າໃນ ແຜນຄຸ້ມຄອງສິ່ງແວດລ້ອມ.

ສຸດທ້າຍ ທ່ານປະທານກອງປະຊຸມໄດ້ມີຄຳເຫັນສະຫຼຸບຕໍ່ກອງປະຊຸມດັ່ງນີ້: ບົດປະເມີນຜົນກະທົບຕໍ່ສິ່ງແວດ ລ້ອມແບບລະອຽດ ຂອງໂຄງການກໍ່ສ້າງສາຍສົ່ງ ແມ່ນມີເນື້ອໃນລະອຽດ ແລະ ຄົບຖ້ວນເປັນສ່ວນໃຫຍ່, ໂຄງການດັ່ງກ່າວເປັນໂຄງການທີ່ບໍ່ສະຫຼັບຊັບຊ້ອນ, ແຕ່ເຖິງແນວໃດກໍ່ຕາມ ເຈົ້າຂອງໂຄງການ ກໍ່ຕ້ອງໄດ້ສືບຕໍ່ປັບປຸງຕາມຄຳເຫັນຂອງ ກົມສິ່ງແວດລ້ອມ ຕື່ມ ເຊິ່ງທາງກົມຈະສັງລວມຄຳຄິດເຫັນຈາກການທົບທວນ ແລະ ຄຳເຫັນຂອງບັນດາຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ, ຂັ້ນແຂວງ ນຳສົ່ງບົດປະກອບຄຳເຫັນຢ່າງເປັນທາງການໃຫ້ເຈົ້າຂອງໂຄງການອີກເທື່ອໜຶ່ງ.

ຮູບທີ 7-2: ການສຳຫຼວດພາກສະໜາມເຂດທີ່ຈະວາງແຜນກໍ່ສ້າງ ສະຖານີສາຍສົ່ງ ແລະ ເຂດຈຸດຕັ້ງເສົາສາຍສົ່ງ

ຮູບທີ 7-3: ກອງປະຊຸມປຶກສາຫາລື ຂັ້ນເມືອງ ແລະ ຂັ້ນວິຊາການ ເພື່ອຜ່ານບົດລາຍງານຂອງ ໂຄງການສາຍສົ່ງ 500 KV

ຜ່ານການຄົ້ນຄວ້າ, ທົບທວນ ແລະ ຜ່ານກອງປະຊຸມປຶກສາຫາລືຂັ້ນຂັ້ນວິຊາການ ທາງກົມສິ່ງແວດລ້ອມ ກໍ່ໄດ້ມີ ບົດ ປະກອບຄຳເຫັນ ສະບັບເລກທີ 407-1/ກຊສ.ກສລ ລົງວັນທີ 26 ກຸມພາ 2021 ສະເໜີຕໍ່ຜູ້ພັດທະນາ ໂຄງການປັບປຸງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມ ເພີ່ມເຕີມດັ່ງນີ້: (ລາຍລະອຽດບົດປະກອບຄຳເຫັນ ຕິດຂັດໃນເອກະສານຊ້ອນທ້າຍ)

I. ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ

1. ພາກທີ I: ສະພາບລວມ
   - ໜ້າ 1-1ໃຫ້ກຳນົດກ່ຽວກັບຄວາມຄືບໜ້າຂອງຂະບວນການລົງທຶນ ແຕ່ເຊັນ MOU ໃນປີ 2011 ແລະ PDA ໃນເດືອນສິງຫາ 2015 ຂອງໂຄງການຮອດປັດຈຸບັນ;
   - ໃຫ້ປັບປຸງແຜນທີ 3-1 ໜ້າ 3-3 ໃຫ້ເປັນມາດຕາສ່ວນ 1:50.000 ພ້ອມທັງພິມໃສ່ເຈ້ຍຂະໜາດ A3
   - ການພິຈາລະນາ ທາງເລືອກແລວສາຍສົ່ງຂອງໂຄງການ ແມ່ນພິຈາລະນາ ພຽງແຕ່ຄວາມສະດວກໃນ ການເຂົ້າເຖິງ ແລະ ການຕິດຕັ້ງເສົາ, ສະນັ້ນ ໃຫ້ສຶກສາ ແລະ ວິເຄາະ ຜົນກະທົບທາງບວກ ແລະ ທາງ ລົບ ຕໍ່ສິ່ງແວດລ້ອມ, ເສດຖະກິດ-ສັງຄົມ.
2. ພາກທີ III: ລາຍລະອຽດໂຄງການ
   - ຂໍ້ 3.4 ໃຫ້ສ້າງເປັນຕາຕະລາງສະແດງ ໃຫ້ເຫັນກິດຈະກຳຂອງໂຄງການໃນແຕ່ລະໄລຍະ, ເວລາໃນ ການຈັດຕັ້ງປະຕິບັດ;
   - ໃຫ້ກຳນົດລາຍລະອຽດຕື່ມອີງປະກອບຂອງໂຄງການອື່ນໆ ເຊັ່ນ: ເຂດເກັບມ້ຽນວັດສະດຸຊົ່ວຄາວ, ເຂດແຄ້ມພັກກຳມະກອນ, ເສັ້ນທາງຂົນສົ່ງ ແລະ ເສັ້ນທາງເຂົ້າຫາເຂດກໍ່ສ້າງ;

3. ພາກທີ IV: ສະພາບແວດລ້ອມຂອງໂຄງການ
   - ພາກທີ 4: ການເກັບຂໍ້ມູນດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການ ຄວນກຳນົດພຽງລາຍລະອຽດທີ່ກ່ຽວຂ້ອງກັບ ຜົນກະທົບທີ່ອາດຈະເກີດຂຶ້ນຈາກໂຄງການ ເຊັ່ນ: ສະພາບປ່າໄມ້, ເນື້ອທີ່ດິນ, ການຕັກຕະກອນ ແລະ ການຂົນສົ່ງ, ເສັ້ນທາງເຂົ້າຫາເຂດກໍ່ສ້າງ ແລະ ອື່ນໆ. ສະນັ້ນ, ໃຫ້ຕັດຂໍ້ມູນທີ່ບໍ່ກ່ຽວຂ້ອງກັບພື້ນທີ່ໂຄງການອອກ ແລະ ຕັດການອະທິບາຍຄຳສັບທີ່ເປັນນິຍາມ ຫຼື ທິດສະດີທົ່ວໄປເຊັ່ນ: ການອະທິບາຍ ປ່າສະຫງວນແມ່ນຫຍັງ..., ການກຳນົດຂໍ້ມູນປ່າໄມ້ຢູ່ເຂດກັ້ງຫັນລົມ, ຜົນການວິເຄາະກາດອາຍພິດຂອງອາກາດ ທາດ NOx, Sox..., ສະພາບສາຍນ້ຳໃນເມືອງດາກຈຶງ, ການວິເຄາະຂໍ້ມູນສະພາບນ້ຳ ທີ່ສາຍສົ່ງບໍ່ໄດ້ໄປຜ່ານ ແລະ ອື່ນໆ. (ຖ້າຈະເອົາຂໍ້ມູນພື້ນຖານ ກໍ່ຄວນລະບຸຂໍ້ມູນທີ່ມີຈຸດສາຍສົ່ງຜ່ານ ຫຼື ຈຸດທີ່ຕິດກັບເສົາໃຫ້ແຄມນ້ຳ);
   - ໜ້າ 4-25 ຂໍ້ 4.4.2 ໃຫ້ປະສານສົບທົບກັບຂະແໜງການປ່າໄມ້ ແລະ ທີ່ດິນ ຂອງແຂວງ ເພື່ອລົງເກັບກຳຂໍ້ມູນ ຜົນກະທົບຕໍ່ເນື້ອທີ່ດິນປ່າໄມ້ຂອງປ່າສະຫງວນຍອດນ້ຳເຊຂະໝານ ແລະ ລົງສຳຫຼວດເນື້ອທີ່ດິນທີ່ຈະໄດ້ຮັບຜົນກະທົບຊົ່ວຄາວ ແລະ ຖາວອນ ມີເທົ່າໃດ ໂດຍໄດ້ຮັບການຢັ້ງຢືນເປັນທາງການຈາກຂະແໜງການທີ່ກ່ຽວຂ້ອງດັ່ງກ່າວ ພ້ອມທັງໃຫ້ກຳນົດລະອຽດຜົນກະທົບຊົ່ວຄາວມີຄືແນວໃດ ແລະ ພາຍຫຼັງສຳເລັດການກໍ່ສ້າງແລ້ວມີວິທີຟື້ນຟູແນວໃດ ແລະ ຈະບໍ່ມີຜົນກະທົບຄືນມາອີກບໍ່ ໃນເວລາສ້ອມແປງບຳລຸງຮັກສາສາຍແລວສາຍສົ່ງ;
4. ພາກທີ V: ການປະເມີນຜົນກະທົບ ແລະ ມາດຕະການແກ້ໄຂ
   - ໃຫ້ສະຫຼຸບ ແລະ ກຳນົດຕາຕະລາງການສະແດງຜົນຂອງການໃຫ້ຄະແນນ ຈາກການປະເມີນຜົນກະທົບຕາມບົດແນະນຳການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ (ຕິດຄັດມາພ້ອມນີ້) ພ້ອມທັງຊີ້ແຈງເຫດຜົນ ແລະ ອະທິບາຍຕໍ່ຜົນກະທົບທີ່ຮ້າຍແຮງ ແລະ ມາດຕະການຫຼຸດຜ່ອນ;
   - ໃຫ້ສ້າງຕາຕະລາງກຳນົດກິດຈະກຳ, ຜົນກະທົບ, ລະດັບຜົນກະທົບ, ມາດຕະການແກ້ໄຂ ແລະ ໄລຍະເວລາເປັນເອກະສານຕິດຄັດທ້າຍພາ V ຕື່ມ;
   - ໃຫ້ຍ້າຍແຜນທີ່ໜ້າຕັດຂອງແລວສາຍສົ່ງ ຢູ່ເອກະສານຄັດຕິດ 5 ກຳນົດເຂົ້າໃນພາກປະເມີນຜົນກະທົບ, ພ້ອມທັງກຳນົດລາຍລະອຽດຂອງຊັບສິນ, ເນື້ອທີ່ດິນ, ເຈົ້າຂອງດິນ, ເນື້ອທີ່ປ່າໄມ້, ສິ່ງປູກສ້າງ ທີ່ໄດ້ຮັບຜົນກະທົບຢູ່ກ້ອງແລວ ແລະ ຕີນເສົາ.

II. ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ
   - ຕາຕະລາງ 4 ແລະ ຕາຕະລາງ 5 ໜ້າ 3-49 ຫາ 3-51 ໃຫ[illegible]ແຍກງົບປະມານຕິດຕາມກວດກາຂອງໂຄງການ ສະເພາະສາຍສົ່ງໄຟຟ້າ ອອກຈາກໂຮງານໄຟຟ້າພະລັງງານລົມ;
   - ໃຫ້ກຳນົດງົບປະມານ ການທົດແທນຄ່າເສຍຫາຍເບື້ອງຕົ້ນ ສະເພາະໂຄງການສາຍສົ່ງ ໂດຍໃຫ້ອີງໃສ່ຂໍ້ຕົກລົງຫົວໜ່ວຍລາຄາທົດແທນຄ່າເສຍຫາຍ ທີ່ແຂວງໄດ້ຮັບຮອງແລ້ວ;
   - ໃຫ້ແຍກ ງົບປະມານຕິດຕາມກວດກາ ສະເພາະໂຄງການສາຍສົ່ງ ໂດຍປະສານສົມທົບກັບ ກົມສິ່ງແວດລ້ອມ ເພື່ອກຳນົດລາຍລະອຽດຂອງໜ້າວຽກ ແລະ ງົບປະມານໃຫ້ເໝາະສົມ;
   - ໃຫ້ກຳນົດລາຍລະອຽດ ກ່ຽວກັບ ງົບປະມານ ສຳລັບ ແຜນການທົດແທນຄ່າເສຍຫາຍ ແລະ ປົວແປງຈິດໃຈ ຂອງປະຊາຊາຊົນ ຕາມຣິດຄອງປະເພນີ ຕໍ່ກັບ ຜົນກະທົບປ່າຊ້າ ໂດຍສົບທົບກັບອຳນາດການປົກຄອງບ້ານໃນການຈັດຕັ້ງປະຕິບັດ;

- ໃຫ້ປັບປຸງຕາຕະລາງສັງລວມ ໜ້າວຽກ, ມາດຕະການແກ້ໄຂ, ໄລຍະເວລາ ແລະ ງົບປະມານ ໃນ ການຈັດຕັ້ງປະຕິບັດໂຄງການໃຫ້ລະອຽດ.
- ໃຫ້ສ້າງຕາຕະລາງສັງລວມ ໜ້າວຽກ, ມາດຕະການແກ້ໄຂ, ໄລຍະເວລາ ແລະ ງົບປະມານ ໃນການ ຕິດຕາມກວດກາສິ່ງແວດລ້ອມໃຫ້ລະອຽດ.

III. ຄຳເຫັນທົ່ວໄປ:

1. ໃຫ້ລວມເອົາແຜນທຶດແທນຄ່າເສຍຫາຍເຂົ້າກັບແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ;
2. ໃຫ້ໂຄງການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຂໍການຢັ້ງຢືນຄວາມຖືກຕ້ອງ ກ່ຽວກັບ ຈຸດທີ່ຕັ້ງຕີນເສົາສຸດທ້າຍ ທີ່ໃກ້ກັບເຂດຫຼັກໝາຍຊາຍແດນລາວ-ຫວຽດນາມ;
3. ກ່ອນການກໍ່ສ້າງ ສະເໜີໃຫ້ສ້າງແຜນຄຸ້ມຄອງສິ່ງແວດລ້ອມສຳລັບການສ້າງທາງເຂົ້າຫາຕີນເສົາ ແລະ ສ້າງແຄັມພັກກຳມະກອນ, ເສັ້ນທາງເຂົ້າຫາເຂດກໍ່ສ້າງ ເປັນສະບັບຕ່າງຫາກ ພາຍຫຼັງສາມາດກຳນົດໄດ້ ເສັ້ນທາງເຂົ້າຫາເສົາແຕ່ລະຕົ້ນ ແລະ ຈຸດແຄັມພັກ ເພື່ອສົ່ງໃຫ້ ພຊສ ແຂວງພິຈາລະນາຮັບຮອງ;
4. ໃຫ້ໂຄງການສຶກສາຂໍ້ມູນເພີ່ມເຕີມ ກ່ຽວກັບ ຜົນກະທົບຕໍ່ໂຄງການອື່ນທີ່ນອນໃນຂອບເຂດພື້ນທີ່ ດຽວກັນ ເນື່ອງຈາກມີຫຼາຍໂຄງການເຂດນັ້ນໄດ້ຮັບອະນຸມັດຜ່ານມາແລ້ວ ໂດຍໃຫ້ກວດຄືນຕື່ມ;
5. ໃຫ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຕື່ມ ກ່ຽວກັບ ແລວສາຍສົ່ງອອກສູ່ຫວຽດນາມ ເພາະເຫັນວ່າ ມີ ຫຼາຍໂຄງການຜະລິດໄຟຟ້າໃກ້ຄຽງ ກໍ່ສົ່ງອອກຫວຽດນາມເຊັ່ນດຽວກັນ ເຊິ່ງສາມາດນຳໃຊ້ຮ່ວມກັນ ຫຼື ກຳນົດແລວດຽວກັນໄດ້ ເພື່ອຫຼີກລ່ຽງຜົນກະທົບ;
6. ໃຫ້ປະສານສົມທົບກັບອຳນາດການປົກຄອງແຂວງ ແລະ ເມືອງດາກຈຶງ ສຶກສາທາງເລືອກແລວສາຍ ສົ່ງໃໝ່ເພື່ອຫຼີກລ່ຽງເຂດຂະຫຍາຍຕົວເມືອງດາກຈຶງ ແລະ ເຂດປ່າຊ້າປະຊາຊົນ.

7.6.3 ກອງປະຊຸມປຶກສາຫາລືຂັ້ນແຂວງ/ສູນກາງ

ຈະໄດ້ນຳສະເໜີເນື້ອໃນຂອງກອງປະຊຸມປຶກສາຫາລືຂັ້ນແຂວງ/ສູນກາງ ເຂົ້າໃນບົດລາຍງານດັ່ງກ່າວນີ້ ພາຍຫຼັງທີ່ມີ ການຈັດຕັ້ງປະຕິບັດ.

7.7 ການເປີດເຜີຍຂໍ້ມູນ

ການເປີດເຜີຍຂໍ້ມູນ ແມ່ນການນຳສະເໜີຂໍ້ມູນຂ່າວສານກ່ຽວກັບບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບ ລະອຽດ ແລະ ແຜນຄຸ້ມຄອງຕິດຕາມກວດກາສິ່ງແວດລ້ອມ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນ ຮັບຊາບ ເຖິງຜົນທີ່ເກີດຂຶ້ນ ຫຼື ອາດຈະເກີດຂຶ້ນຕໍ່ສິ່ງແວດລ້ອມທາງກົງ ຫຼື ທາງອ້ອມ ຈາກໂຄງການທີ່ສະເໜີ.

- ເຈົ້າຂອງໂຄງການສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຜີຍແຜ່ຂໍ້ມູນ ໃຫ້ແກ່ປະຊາຊົນ ໃນເຂດໂຄງການ ແລະ ເຂດໃຫ້ຄຽງໂຄງການ ແລະ ຜູ້ມີສ່ວນຮ່ວມອື່ນ ກ່ຽວກັບການ ພັດທະນາໂຄງການ, ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຈາກໂຄງການ ແລະ ກິດ ຈະກຳຕ່າງໆ ລວມທັງ ບປຜສ, ຜຄຕສ ໂດຍການຈັດກອງປະຊຸມເຜີຍແຜ່ຂັ້ນຕ່າງໆ ແລະ ຮູບການອື່ນໆ (ເວັບໄຊ, ສິ່ງພິມ, ໂທລະພາບ...) ທັງເປັນພາສາລາວ ແລະ ພາສາຊົນເຜົ່າ ໃນກໍລະນີມີຄວາມຈຳເປັນ;

7.8 ກົນໄກການຮ້ອງທຸກ ແລະ ການແກ້ໄຂຂໍ້ຮ້ອງທຸກ

ໂຄງການຕ້ອງມີຄະນະກຳມະການໄກ່ເກ່ຍ ແລະ ແກ່ໄຂຂໍ້ຮ້ອງທຸກ ຂັ້ນ ບ້ານ, ເມືອງ ແລະ ແຂວງ ເພື່ອເຮັດໜ້າທີ່ແກ້ໄຂຄວາມກັງວົນ ແລະ ໄກ່ເກ່ຍຂໍ້ຂ້ອງໃຈ, ຂໍ້ຮ້ອງທຸກຕ່າງໆ ຂອງຜູ້ໄດ້ຮັບຜົນກະທົບ. ກົນໄກການຮ້ອງທຸກ ແລະ ການແກ້ໄຂຂໍ້ຮ້ອງທຸກ ແມ່ນສັງລວມໃນຕາຕະລາງ ລຸ່ມນີ້.

ການດຳເນີນກິດຈະກຳຂອງໂຄງການອາດຈະສົ່ງຜົນກະທົບດ້ານສິ່ງແວດລ້ອມ ຕໍ່ພະນັກງານຂອງໂຄງການ ແລະ ບຸກຄົນພາຍນອກທີ່ກ່ຽວຂ້ອງ ເຊິ່ງລວມທັງປະຊາຊົນທີ່ຢູ່ໃກ້ຄຽງ. ດັ່ງນັ້ນ, ກໍລະນີທີ່ໂຄງການໄດ້ຮັບຄຳຮ້ອງທຸກ ຈະດຳເນີນການພິຈາລະນາກວດສອບສາເຫດເບື້ອງຕົ້ນພາຍໃນ 3 ວັນ (ຂໍ້ຮ້ອງທຸກທົ່ວໄປ) ແຕ່ຖ້າເປັນເລື່ອງສຸກເສີນ ຈະພິຈາລະນາໃນທັນທີ. ຫາກກວດສອບແລ້ວ ພົບວ່າຜົນກະທົບເກີດຈາກການດຳເນີນການຂອງໂຄງການຕົວຈິງ ໂຄງການຈະປະຊຸມເພື່ອກຳນົດແນວທາງແກ້ໄຂ ແລະ ປ້ອງກັນພາຍໃນ 7 ວັນ ກ່ອນສົ່ງແຜນງານໃຫ້ຝ່າຍບໍລິຫານໃຫ້ຄວາມເຫັນ ແລະ ອະນຸມັດ ເພື່ອໃຫ້ຜູ້ຮັບຜິດຊອບດຳເນີນການແກ້ໄຂໃນທັນທີ ແລະ ເມື່ອໂຄງການ ໄດ້ດຳເນີນການແກ້ໄຂແລ້ວຈະແຈ້ງໃຫ້ຜູ້ຮ້ອງທຸກຮັບຮູ້ ເພື່ອກວດສອບຜົນຕໍ່ໄປ.



ຮູບທີ 7-4: ແຜນອາດຂະບວນການໄກ່ເກ່ຍ ແລະ ແກ້ໄຂຂໍ້ຮ້ອງທຸກ

ພາກທີ 8 ສະຫຼຸບ ແລະ ຄຳແນະນຳ

8.1 ສະຫຼຸບ

ລັດຖະບານແຫ່ງ ສປປ ລາວ ໄດ້ວາງນະໂຍບາຍດ້ານພະລັງງານ, ການສົ່ງເສີມຂີດຄວາມສາມາດໃນການສະໜອງ ແລະ ຄວາມໝັ້ນຄົງທາງດ້ານພະລັງງານ ເພື່ອແນ່ໃສ່ເຮັດໃຫ້ເສດຖະກິດ ແລະ ສັງຄົມ ຂອງປະເທດມີການ ຂະຫຍາຍຕົວຢ່າງໄວວາ ແລະ ໝັ້ນຄົງ, ການສົ່ງອອກກະແສໄຟຟ້າ ແລະ ປັບປຸງເງື່ອນໄຂການດຳລົງຊີວິດຂອງ ປະຊາຊົນລາວ ໃຫ້ມີຊີວິດການເປັນຢູ່ທີ່ດີຂຶ້ນ. ໃນໄລຍະທີ່ຜ່ານມາ ລັດຖະບານແຫ່ງ ສປປ ລາວ ໄດ້ມີນະໂຍບາຍ ເພື່ອສົ່ງເສີມໃຫ້ມີການລົງທຶນ ໃນໂຄງການຜະລິດໄຟຟ້າຕ່າງໆ ໂດຍນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ແລະ ລາຍບຸກຄົນ ເພື່ອເຮັດໃຫ້ການພັດທະນາດ້ານທ່າແຮງກ່ຽວກັບພະລັງງານໃນປະເທດລາວ ໃຫ້ເກີດຜົນປະໂຫຍດສູງ ສຸດ ໂດຍສະເພາະກໍ່ແມ່ນໃນຂະແໜງການພະລັງງານ.

ໂຄງການຜະລິດກະແສໄຟຟ້າຈາກພະລັງງານລົມ 600 ເມກາວັດ ຢູ່ເມືອງດາກຈຶງ, ແຂວງເຊກອງ ກໍ່ແມ່ນໂຄງການ ໜຶ່ງທີ່ຈະເປັນທ່າແຮງສຳຄັນໃນການສະໜອງພະລັງງານໄຟຟ້າໃນເຂດພາກໃຕ້ຂອງ ສປປ ລາວ, ກໍ່ຄືແຂວງເຊກອງ, ອັດຕະປື ແລະ ໂດຍສະເພາະແມ່ນເປັນທ່າແຮງທີ່ສຳຄັນທີ່ຈະສະໜອງກະແສໄຟຟ້າໃຫ້ກັບ ສສ ຫວຽດນາມ ຕາມ ສັນຍາຊື້ຂາຍໄຟຟ້າລະຫວ່າງ ລັດຖະບານ ສປປ ລາວ ແລະ ລັດຖະບານ ສສ ຫວຽດນາມ. ດັ່ງນັ້ນ, ເພື່ອເຊື່ອມຕໍ່ ກະແສໄຟຟ້າທີ່ຜະລິດໄດ້ຈາກໂຄງການພະລັງງານລົມເຂົ້າສູ່ລະບົບຕາຂ່າຍໄຟຟ້າແຫ່ງຊາດ ໃນນີ້ໂດຍອີງໃສ່ສັນຍາ ຮັບຊື້ໄຟຈາກ ສສ ຫວຽດນາມ ແລະ ອີງໃສ່ຈຸດພິເສດທີ່ຕັ້ງຂອງໂຄງການພະລັງງານລົມ ທີ່ຕັ້ງຢູ່ເມືອງດາກຈຶ່ງທີ່ມີ ຊາຍແດນຕິດກັບ ສສ ຫວຽດນາມ. ດັ່ງນັ້ນ, ທາງໂຄງການຈຶ່ງມີຄວາມຈຳເປັນຈະຕ້ອງກໍ່ສ້າງສາຍສົ່ງໄຟຟ້າຂະໜາດ 500 ກວ ຈາກສະຖານີຍ່ອຍຂອງໂຄງການຜະລິດໄຟຟ້າຈາກພະລັງງານລົມເມືອງດາກຈຶງ ສົ່ງອອກໄປເຊື່ອມຕໍ່ກັບ ສະຖານີໄຟຟ້າ 500 ກວ ຂອງ ສສ ຫວຽດນາມ (ສະຖານີ Thanh My) ໂດຍມີຄວາມຍາວຂອງແລວສາຍສົ່ງ ທັງ ໝົດປະມານ 66 ກິໂລແມັດ. ເຊິ່ງໃນການສຶກສານີ້ແມ່ນຈະກວມເອົາສະເພາະຊ່ວງທີ່ຢູ່ຝັ່ງຊາຍແດນຂອງ ສປປ ລາວ ເຊິ່ງມີຄວາມຍາວທັງໝົດປະມານ 21 ກິໂລແມັດ.

ໂຄງການກໍ່ສ້າງສາຍສົ່ງໄຟຟ້າ 500 ກວ ທີ່ສະເໜີ ແມ່ນນອນຢູ່ໃນຂອບເຂດຄຸ້ມຄອງຂອງ 5 ບ້ານ ທີ່ຂຶ້ນກັບເມືອງ ດາກຈຶງ, ແຂວງເຊກອງ ຄື: ບ້ານດາກບອງ, ບ້ານງອນດອນ, ບ້ານດາກມອນ, ບ້ານດາກຕະອອກນ້ອຍ ແລະ ບ້ານ ດາກໂດມ. ເຊິ່ງແລວສາຍສົ່ງຈະຖືກສ້າງຈາກເຂດສະຖານີ 115/500 ກວ ຂອງໂຄງການພະລັງງານລົມ ຢູ່ເຂດບ້ານ ດາກບອງ ແລ້ວດຶງຂະໜານກັບທາງຫຼວງແຫ່ງຊາດເລກທີ 16B ມາຂ້າມທາງຢູ່ເຂດບ້ານດາກບອງ ມາຫາບ້ານງອນ ດອນ ແລະ ຂະໜານໄປຕາມເສັ້ນທາງຫຼວງແຫ່ງຊາດເລກທີ 16B ໄປຫາບ້ານດາກມອນ, ບ້ານດາກຕະອອກນ້ອຍ ບ້ານດາກໂດມ ແລະ ໄປເຊື່ອມຕໍ່ໃສ່ສາຍສົ່ງເບື້ອງ ສສ ຫວຽດນາມຢູ່ບໍລິເວັນເຂດດ່ານສາກົນດາກຕະອອກ. ໂດຍ ໜ້າວຽກຂອງໂຄງການແມ່ນຈະປະກອບດ້ວຍບັນດາກິດຈະກຳຕ່າງໆຄື: ການບຸກເບີກແລວເພື່ອດຶງສາຍສົ່ງ (ກວ້າງ 70 ແມັດ), ການຂຸດເຈາະດິນເພື່ອວາງຕີນເສົາ, ການປະກອບຕິດຕັ້ງເສົາໄຟ, ການດຶງສາຍໄຟ ແລະ ການກໍ່ສ້າງອີງ ປະກອບອື່ນໆ.

ຜົນຂອງການສຶກສາບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ຂອງໂຄງການສາຍສົ່ງ 500 KV ຂອງ ໂຄງການພະລັງງານລົມ 600 MW ເມືອງດາກຈຶງ, ໃນດ້ານສິ່ງແວດລ້ອມ ການດຳເນີນງານຂອງໂຄງການກໍ່ສ້າງສາຍ ສົ່ງທີ່ສະເໜີນີ້ແມ່ນຈະບໍ່ກໍ່ໃຫ້ເກີດຜົນກະທົບຮ້າຍແຮງຕໍ່ກັບດ້ານສິ່ງແວດລ້ອມ, ແຕ່ເຖິງຢ່າງໃດກໍ່ຕາມອາດຈະມີ

ພຽງຜົນກະທົບເຫຼັກໜ້ອຍ ແລະ ຊົ່ວຄາວຈາກກິດຈະກຳຕ່າງໆໃນໄລຍະການກໍ່ສ້າງ ຂອງໂຄງການເຊັ່ນ: ຝຸ່ນລະອອງ , ສຽງນັ່ນຈາກກິດຈະກຳການກໍ່ສ້າງ, ການສູນເສຍເນື້ອທີ່ປ່າໄມ້, ດິນນຳໃຊ້ໃນຂອບເຂດແລວສະຫງວນສາຍສົ່ງ 70 ແມັດ ເປັນຕົ້ນ. ແຕ່ເມື່ອພິຈາລະນາຈາກພື້ນທີ່ກໍ່ສ້າງແລວສາຍສົ່ງຂອງໂຄງການແລ້ວແມ່ນເຫັນວ່າເຂດກໍ່ສ້າງຕ່າງໆ ແມ່ນຢູ່ຫ່າງໄກຈາກເຂດທີ່ຕັ້ງຂອງຊຸມຊົນ ທັງ 5 ບ້ານ ແລະ ບັນດາຜົນກະທົບທີ່ອາດຈະເກີດຂຶ້ນແມ່ນສາມາດປ້ອງກັນ ແລະ ຫຼຸດຜ່ອນໄດ້ໂດຍການປະຕິບັດຢ່າງເຂັ້ມງວດຕາມມາດຕະການທີ່ໄດ້ກຳນົດໄວ້ໃນ ພາກທີ 5 ຂອງບົດລາຍງານສະບັບນີ້. ພ້ອມກັນນັ້ນທາງໂຄງການຍັງໄດ້ວາງແຜນ ແລະ ງົບປະມານສຳລັບຄຸ້ມຄອງ ແລະ ຕິດຕາມກວດກາ ດ້ານສິ່ງແວດລ້ອມ-ສັງຄົມ ສຳລັບການດຳເນີນໂຄງການຕະຫຼອດໄລຍະການກໍ່ສ້າງ ແລະ ດຳເນີນງານຂອງໂຄງການ.

ໃນດ້ານສັງຄົມ ຜົນກະທົບທີ່ສຳຄັນຂອງໂຄງການນີ້ ແມ່ນຜົນກະທົບຕໍ່ການນຳໃຊ້ທີ່ດິນສ່ວນບຸກຄົນທີ່ຈະໄດ້ຮັບຈາກເຂດກໍ່ສ້າງຕີນເສົາແບບຖາວອນ ແລະ ເຂດສະຫງວນແລວສາຍສົ່ງ 70 ແມັດ. ເຊິ່ງມີຈຳນວນ 104 ຄົວເຮືອນ ໃນ 4 ບ້ານຈາກທັງໝົດ 5 ບ້ານຈະໄດ້ຮັບຜົນກະທົບຍ້ອນການເວນຄືນທີ່ດິນສຳລັບພັດທະນາໂຄງການ ສ່ວນຫຼາຍແມ່ນໄດ້ຮັບຜົນກະທົບຊົ່ວຄາວຈາກເຂດສະຫງວນກ້ອງແລວ, ສ່ວນຜົນກະທົບຖາວອນເຂດຕີນເສົາ ແມ່ນມີພຽງ 20 ຄົວເຮືອນ ຈາກ 104 ຄົວເຮືອນທັງໝົດ. ນອກຈາກນີ້ການເວນຄືນທີ່ດິນ ສຳລັບພັດທະນາໂຄງການ ສາຍສົ່ງ 500 ກວ ທີ່ສະເໜີນີ້ ຈະຕ້ອງໄດ້ມີການ ຍັບຍ້າຍ ຖຽງນາ 1 ຫຼັງ, ນອກຈາກສິ່ງປຸກສ້າງແລ້ວ ຍັງມີຜົນຜະລິດເປັນຕົ້ນແມ່ນ ຕົ້ນກາເຟທີ່ຈະໄດ້ຮັບຜົນກະທົບ ເຊິ່ງມີທັງໝົດ 104 ຄົວເຮືອນ ໃນ 4 ບ້ານ ຈາກ 5 ບ້ານທັງໝົດ. ເຊິ່ງສ່ວນໃຫ່ຍ ແມ່ນສວນກາເຟ ເປັນສ່ວນໃຫຍ່, ໂດຍໄດ້ມີການການປະເມີນມູນຄ່າການຊົດເຊີຍໄວ້ໃນແຜນການທົດແທນຄ່າເສຍຫາຍຂອງໂຄງການ (ແຕ່ເຖິງຢ່າງໃດກໍ່ຕາມ, ວິທີການທີ່ຈະໄດ້ນຳໃຊ້ຕົວຈິງໃນການປະເມີນມູນຄ່າການທົດແທນຄ່າເສຍຫາຍສຳລັບໂຄງການນີ້ ຈະຕ້ອງຂຶ້ນກັບຄະນະກຳມະການທົດແທນຄ່າເສຍຫາຍແຂວງ ເປັນຜູ້ຕົກລົງຮັບຮອງ ໂດຍຜ່ານການປຶກສາ ຫາລື ກັບອຳນາດການປົກຄອງທ້ອງຖິ່ນຕ່າງໆ ແລະ ບ້ານ ທີ່ກ່ຽວຂ້ອງ ພ້ອມດ້ວຍປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ແລະ ຈະຕ້ອງໄດ້ສ້າງເປັນຂໍ້ຕົກລົງການທົດແທນຄ່າເສຍຫາຍສະບັບສຸດທ້າຍ ກ່ອນທີ່ຈະເລີ່ມການກໍ່ສ້າງໂຄງການ. ມູນຄ່າຕົວຈິງສຳລັບການທົດແທນຄ່າເສຍຫາຍແມ່ນຈະມີຄວາມແຕກຕ່າງກັນໃນແຕ່ລະສະຖານທີ່ ຫຼື ດິນແຕ່ລະຕອນ ແລະ ແຕ່ລະເມືອງ).

ບັນດາຜົນກະທົບທີ່ສະເໜີມານີ້ແມ່ນສາມາດປ້ອງກັນ ແລະ ຫຼຸດຜ່ອນໄດ້ໂດຍການປະຕິບັດຢ່າງເຂັ້ມງວດຕາມມາດຕະການທີ່ໄດ້ກຳນົດໄວ້ໃນ ພາກທີ 5 ແລະ ບົດລາຍງານແຜນຄຸ້ມຄອງຕິດຕາມສິ່ງແວດລ້ອມ, ພ້ອມກັນນັ້ນທາງໂຄງການຍັງໄດ້ວາງແຜນໃນການຕິດຕາມກວດກາດ້ານສິ່ງແວດລ້ອມ-ສັງຄົມສຳລັບການດຳເນີນໂຄງການຕະຫຼອດໄລຍະການກໍ່ສ້າງ ແລະ ການດຳເນີນງານ ແລະ ຈະສະໜອງງົບປະມານສຳລັບການຕິດຕາມສິ່ງແວດລ້ອມສຳລັບພາກສ່ວນທີ່ກ່ຽວຂ້ອງ.

ຈາກການປະເມີນຂໍ້ມູນທັງໝົດ ສາມາດສະຫຼຸບໄດ້ວ່າໂຄງການແມ່ນສິ່ງຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ເລັກໜ້ອຍ ເມື່ອທຽບໃສ່ກັບຜົນໄດ້ຮັບທາງບວກທີ່ຕາມມາ ກໍ່ຄືໂຄງການດັ່ງກ່າວແມ່ນຈະສິ່ງຜົນດີຕໍ່ການພັດທະນາສ້າງສາ ດ້ານເສດຖະກິດ-ສັງຄົມໃຫ້ປະເທດຊາດ ດັ່ງທີ່ສະເໜີໃນຂ້າງເທິງນີ້.

8.2 ຄຳແນະນຳ

ເພື່ອຮັບປະກັນໃຫ້ໂຄງການສາຍສົ່ງໄຟຟ້າ 500 KV ຂອງໂຄງການພະລັງງານລົມ 600 MW ເມືອງດາກຈຶງ ແຂວງເຊກອງ ໂດຍບໍລິສັດ ອິມແພັກ ເອັນເນີຈີ ເອເຊີຍ ດີວີລົບເມັ້ນ ຈຳກັດ ທີ່ສະເໜີນີ້ ບັນລຸຕາມເປົ້າໝາຍສິ່ງແວດລ້ອມທີ່ກົດໝາຍ ສປປ ລາວ ໄດ້ກຳນົດໄວ້ ທາງຜູ້ພັດທະນາໂຄງການ ຕ້ອງເອົາໃຈໃສ່ ຈັດຕັ້ງປະຕິບັດ ດັ່ງນີ້:

- ✓ ໃນການອອກແບບກຳນົດແລວສາຍສົ່ງຂອງໂຄງການ ເຫັນວ່າໃນຊ່ວງເສົາສາຍສົ່ງທີ່ 12 ຫາ 13 ແມ່ນມີ ຂອບເຂດສະຫງວນກອງແລວໄປຜ່ານເຂດປ່າຊ້າຂອງບ້ານດາກບອງ. ດັ່ງນັ້ນ, ຖ້າສາມາດຫຼີກລ່ຽງໄດ້ແມ່ນ ໃຫ້ມີການຍ້າຍອອກຈາກເຂດປ່າຊ້າ, ກໍລະນີທີ່ບໍ່ສາມາດຍ້າຍໄດ້ແມ່ນ ໃຫ້ທາງໂຄງການຮ່ວມກັບຄະນະ ກຳມະການເຮັດວຽກຢ່າງໃກ້ສິດກັບບັນດາອຳນາດການປົກຄອງ, ເຖົ້າແກ່ແນວໂຮມ ແລະ ເຈົ້າກົກເຈົ້າເຫຼົ່າ ບ້ານທີ່ຖືກກະທົບດັ່ງກ່າວເພື່ອຫາທາງອອກຮ່ວມກັນ ເຊິ່ງອາດຈະຕ້ອງມີການຄອບ ຫຼື ປົວແປງຊົດເຊີຍ ຕາມຮີດຄອງ ແລະ ການນັບຖືຂອງທ້ອງຖິ່ນ.
- ✓ ເອົາໃຈໃສ່ປະຕິບັດຢ່າງເຂັ້ມງວດຕໍ່ກັບບັນດາມາດຕະການຫຼຸດຜ່ອນຜົນກະທົບ ທີ່ໄດ້ມີການກຳນົດໄວ້ໃນ ບປຜສ, ສະເໜີໃຫ້ທາງໂຄງການນຳເອົາບັນດາມາດຕະການຫຼຸດຜ່ອນຜົນກະທົບທີ່ເຫັນວ່າສຳຄັນ ແລະ ຈຳ ເປັນກຳນົດເຂົ້າໃນສັນຍາຂອງບໍລິສັດຮັບເໝົາຍ່ອຍໃນການກໍ່ສ້າງໂຄງການ,
- ✓ ໂຄງການເອົາໃຈໃສ່ພິເສດກ່ຽວກັບບັນຫາຝຸ່ນລະອອງໃນໄລຍະການກໍ່ສ້າງ ຕ້ອງມີການຫົດນ້ຳຢ່າງເປັນປະ ຈຳ ເພື່ອບໍ່ໃຫ້ສິ່ງຜົນກະທົບຕໍ່ຊຸມຊົນອ້ອມຂ້າງ ແລະ ຜູ້ທີ່ສັນຈອນໄປມາຕາມເສັ້ນທາງ,
- ✓ ໃນໄລຍະການກໍ່ສ້າງ ໂຄງການຈະມີການສະໜອງອຸປະກອນຕ່າງໆໃຫ້ແກ່ພະນັກງານ ແລະ ກຳມະກອນທີ່ ເຮັດວຽກນຳໂຄງການ ເຊັ່ນ: ອຸປະກອນປ້ອງກັນສຽງ, ອຸປະກອນທີ່ໃຊ້ໃນການກໍ່ສ້າງ ແລະ ອຸປະກອນທີ່ໃຊ້ ໃນການເກັບມ້ຽນຂີ້ເຫຍື້ອເປັນຕົ້ນ,
- ✓ ຮັບປະກັນ ໃຫ້ມີງົບປະມານ ຢ່າງພຽງພໍ ເພື່ອຈັດຕັ້ງປະຕິບັດ ມາດຕະການປ້ອງກັນ, ຄຸ້ມຄອງ ແລະ ຫຼຸດຜ່ອນ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ອາດຈະເກີດຂຶ້ນ ໃນໄລຍະກໍ່ສ້າງ ແລະ ໄລຍະດຳເນີນງານ,
- ✓ ເພື່ອຮັບປະກັນທາງດ້ານຄວາມສະຫງົບໃນໄລຍະກໍ່ສ້າງ ໂຄງການຕ້ອງໄດ້ມີການເກັບກຳຈຳນວນກຳມະ ກອນ ແລະ ແຮງງານທີ່ເຮັດວຽກທັງໝົດ ແລະ ມີການປະສານເພື່ອລາຍງານກ່ຽວກັບຂໍ້ມູນດັ່ງກ່າວໃຫ້ ກັບອຳນາດການປົກຄອງບ້ານທີ່ຢູ່ໃກ້ຄຽງຊາບ, ໂດຍສະເພາະ ແມ່ນແຮງງານທີ່ອາໄສພັກເຊົາໃນທີ່ພັກກໍ່ ສ້າງເພື່ອໃຫ້ບ້ານສາມາດຕິດຕາມຈຳນວນຄົນທີ່ເຮັດວຽກທັງໝົດໄດ້ ແລະ ມີຄວາມສະດວກໃນການປ້ອງ ກັນຄວາມສະຫງົບ ແລະ ຮັບປະກັນໃຫ້ມີການ ປະຊາສຳພັນ ແລະ ສື່ສານ ກັບອຳນາດການປົກຄອງບ້ານ ກ່ຽວກັບ ແຜນການດຳເນີນງານ ແລະ ກິດຈະກຳໂຄງການ ໃນແຕ່ໄລຍະ,
- ✓ ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ກັບພາກລັດ ໃນການຕິດຕາມກວດກາ ການຈັດຕັ້ງ ປະຕິບັດວຽກງານການຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງ ໂຄງການ ໃນແຕ່ໄລຍະ ແລະ ຕ້ອງໄດ້ປະສານສົມທົບຢ່າງໃກ້ສິດ ກັບອຳນາດການປົກຄອງທ້ອງຖິ່ນ ເປັນຕົ້ນແມ່ນ ແຂວງເຊກອງ ກໍ່ຄືເມືອງດາກຈຶງ ລວມທັງອຳນາດການປົກຄອງບ້ານ ທີ່ຢູ່ໄກ້ກັບເຂດ ໂຄງການ,

- ✓ ປະກອບສ່ວນ, ເຂົ້າຮ່ວມກິດຈະກຳ ຫຼື ປະເພນີຂອງຊຸມຊົນ ເພື່ອສ້າງຄວາມຜູກພັນທີ່ດີກັບຊຸມຊົນອ້ອມ ຮອບພື້ນທີ່ໂຄງການ, ສ້າງກົນໄກການແກ້ໄຂການຮ້ອງທຸກ ເພື່ອໃຫ້ປະຊາຊົນໄດ້ເຂົ້າເຖິງຖ້າວ່າການຈັດຕັ້ງ ປະຕິບັດ ບໍ່ເປັນໄປຕາມແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ.